ສາທາລະນະລັດປະຊາທິປະໄຕປະຊາຊົນລາວ
ສັນຕິພາບເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

# ບົດສະຫຼຸບການຈັດຕັ້ງປະຕິບັດ ແຜນພັດທະນາຂະແໜງການ ສຶກສາ, ວິທະຍາສາດ ແລະ ກິລາ ປະຈຳສົກຮຽນ 2024-2025 ແລະ ແຜນພັດທະນາຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ ປະຈຳສົກຮຽນ 2025-2026

ສິງຫາ 2025

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ກະຊວງສຶກສາທິການ ແລະ ກິລາ**

# ບົດສະຫຼຸບການຈັດຕັ້ງປະຕິບັດ ແຜນພັດທະນາຂະແໜງການ ສຶກສາ, ວິທະຍາສາດ ແລະ ກິລາ ປະຈຳສົກຮຽນ 2024-2025 ແລະ ແຜນພັດທະນາຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ ປະຈຳສົກຮຽນ 2025-2026

**ສິງຫາ 2025**

# ສາລະບານ


ສາລະບານ ........................................................ i

ສາລະບານຕາຕະລາງ ........................................................ iv

ສາລະບານຮູບພາບ........................................................ v

ຄຳນຳ........................................................ vi

ຄຳຂອບໃຈ ........................................................ vii

ພາກທີ I ຜົນສຳເລັດຂອງການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ປະຈຳສົກຮຽນ 2024-2025........................................................ 1

I. ສະພາບ ແລະ ເງື່ອນໄຂໃນການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ສົກຮຽນ 2024-2025........................................................ 1

1. ຜົນສຳເລັດ........................................................ 2
2. ຈຸດອ່ອນ ແລະ ຂໍ້ຄົງຄ້າງ ........................................................ 6
3. ສາເຫດທີ່ພາໃຫ້ເກີດມີຈຸດອ່ອນ ແລະ ຂໍ້ຄົງຄ້າງ ........................................................ 8
4. ບົດຮຽນທີ່ຖອດຖອນໄດ້ ........................................................ 9

II. ທິດທາງແຜນການສຳລັບສົກຮຽນ 2025-2026 ........................................................ 9

1. ທິດທາງລວມ ........................................................ 9
2. ຄາດໝາຍຫຼັກ........................................................ 10
3. ວຽກງານຈຸດສຸມ ........................................................ 10
4. ສະຖິຕິ ແລະ ຂໍ້ມູນດ້ານການສຶກສາສາຍສາມັນສຶກສາ ລະຫວ່າງສົກຮຽນ 2023-2024 ແລະ 2024-2025 ........................................................ 14
5. ແຜນງົບປະມານຂອງຂະແໜງການສຶກສາ ແລະ ກິລາ........................................................ 15

ພາກທີ II ແຜນພັດທະນາຂອງຂະແໜງການຍ່ອຍ ........................................................ 16

I. ຂະແໜງການຍ່ອຍການສຶກສາກ່ອນໄວຮຽນ ........................................................ 17

1. ສະພາບລວມ ........................................................ 17
2. ຜົນສຳເລັດພົ້ນເດັ່ນໄດ້ຮັບລະດັບສູງ ........................................................ 18
3. ບັນຫາ ແລະ ສິ່ງທ້າທາຍ ........................................................ 21
4. ບູລິມະສິດສຳລັບສົກຮຽນ 2025-2026........................................................ 22

II. ຂະແໜງການຍ່ອຍປະຖົມສຶກສາ........................................................ 26

1. ສະພາບລວມ ........................................................ 26
2. ຜົນສຳເລັດພົ້ນເດັ່ນໄດ້ຮັບສະດັບສູງ ........................................................ 28
3. ບັນຫາ ແລະ ສິ່ງທ້າທາຍ ........................................................ 30
4. ບູລິມະສິດສຳລັບສົກຮຽນ 2025-2026........................................................ 30

III. ຂະແໜງການຍ່ອຍມັດທະຍົມສຶກສາຕອນຕົ້ນ........................................................ 35

1. ສະພາບລວມ ........................................................ 35
2. ຜົນສຳເລັດພົ້ນເດັ່ນໄດ້ຮັບລະດັບສູງ ........................................................ 37

3. ບັນຫາ ແລະ ສິ່ງທ້າທາຍ ........................................................................................ 38
4. ບຸລິມະສິດສໍາລັບສົກຮຽນ 2025-2026 ................................................................. 39
**IV. ຂະແໜງການຍ່ອຍມັດທະຍົມສຶກສາຕອນປາຍ ..................................................... 44**
1. ສະພາບລວມ ........................................................................................................ 44
2. ຜົນສໍາເລັດພົ້ນເດັ່ນບລະດັບສູງ ............................................................................ 46
3. ບັນຫາ ແລະ ສິ່ງທ້າທາຍ ........................................................................................ 48
4. ບຸລິມະສິດສໍາລັບສົກຮຽນ 2025-2026 ................................................................. 48
**V. ຂະແໜງການຍ່ອຍການສຶກສານອກໂຮງຮຽນ ....................................................... 54**
1. ສະພາບລວມ ........................................................................................................ 54
2. ຜົນສໍາເລັດພົ້ນເດັ່ນບລະດັບສູງ ............................................................................ 54
3. ບັນຫາ ແລະ ສິ່ງທ້າທາຍ ........................................................................................ 56
4. ບຸລິມະສິດສໍາລັບສົກຮຽນ 2025-2026 ................................................................. 57
**VI. ຂະແໜງການຍ່ອຍການສຶກສາຄູ ........................................................................ 60**
1. ສະພາບລວມ ........................................................................................................ 60
2. ຜົນສໍາເລັດພົ້ນເດັ່ນບລະດັບສູງ ............................................................................ 61
3. ບັນຫາ ແລະ ສິ່ງທ້າທາຍ ........................................................................................ 65
4. ບຸລິມະສິດສໍາລັບສົກຮຽນ 2025-2026 ................................................................. 65
**VII. ຂະແໜງການຍ່ອຍອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ..................................... 72**
1. ສະພາບລວມ ........................................................................................................ 72
2. ຜົນສໍາເລັດພົ້ນເດັ່ນບລະດັບສູງ ............................................................................ 74
3. ບັນຫາ ແລະ ສິ່ງທ້າທາຍ ........................................................................................ 76
4. ບຸລິມະສິດສໍາລັບສົກຮຽນ 2025-2026 ................................................................. 76
**XIII. ຂະແໜງການຍ່ອຍການສຶກສາຊັ້ນສູງ ................................................................ 80**
1. ສະພາບລວມ ........................................................................................................ 80
2. ຜົນສໍາເລັດພົ້ນເດັ່ນບລະດັບສູງ ............................................................................ 81
3. ບັນຫາ ແລະ ສິ່ງທ້າທາຍ ........................................................................................ 84
4. ບຸລິມະສິດສໍາລັບສົກຮຽນ 2025-2026 ................................................................. 85
**IX. ຂະແໜງການຍ່ອຍວິທະຍາສາດ ........................................................................ 89**
1. ວຽກງານຫ້ອງການສະພາວິທະຍາສາດແຫ່ງຊາດ ..................................................... 89
2. ວຽກງານກົມຄຸ້ມຄອງວິທະຍາສາດ ......................................................................... 92
3. ວຽກງານສະຖາບັນຄົ້ນຄວ້າວິທະຍາສາດ ແລະ ນະວັດຕະກໍາ ....................................... 94
**X. ຂະແໜງການຍ່ອຍກິລາ-ກາຍຍະກໍາ .................................................................... 96**
1. ວຽກງານກິລາ-ກາຍຍະກໍາມວນຊົນ, ພະລະ ແລະ ສິລະປະສຶກສາ .............................. 96
2. ວຽກງານກິລາລະດັບສູງ ....................................................................................... 101
**XI. ຂະແໜງການຍ່ອຍບໍລິຫານ ແລະ ຄຸ້ມຄອງ ........................................................ 107**
1. ສະພາບລວມ ...................................................................................................... 107
2. ຜົນສໍາເລັດພົ້ນເດັ່ນບລະດັບສູງ .......................................................................... 107
3. ບັນຫາ ແລະ ສິ່ງທ້າທາຍ ...................................................................................... 112

4. ບຸລິມະສິດສຳລັບສົກຮຽນ 2025-2026 ........ 112

**ພາກທີ III: ການເງິນຂອງຂະແໜງການສຶກສາ ແລະ ກິລາ ........ 118**

**I. ສະພາບການເງິນຂອງຂະແໜງການສຶກສາ ແລະ ກິລາ ........ 118**

**II. ຄວາມຕ້ອງການດ້ານການເງິນສຳລັບປີ 2026 ........ 119**

**ພາກທີ IV: ກົນໄກການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ປະເມີນຜົນ ........ 120**

**I. ມາດຕະການໃນການຈັດຕັ້ງປະຕິບັດ ........ 120**

**II. ການຕິດຕາມ ແລະ ປະເມີນ ........ 120**

**ມະຕິກອງປະຊຸມຜູ້ບໍລິຫານການສຶກສາ, ວິທະຍາສາດ ແລະ ກິລາ ປະຈຳສົກຮຽນ 2024-2025ວັນທີ 11-12 ສິງຫາ 2025 ........ 121**

# ສາລະບານຕາຕະລາງ


ຕາຕະລາງທີ 1: ຈຳນວນຫ້ອງຮຽນ, ໂຮງຮຽນ, ຄູສອນ ແລະ ນັກຮຽນ (ທັງພາກລັດ ແລະ ເອກະຊົນ) ............14
ຕາຕະລາງທີ 2: ຈຳນວນຫ້ອງຮຽນ, ໂຮງຮຽນ, ຄູສອນ ແລະ ນັກຮຽນ (ສະເພາະພາກລັດ)............................14
ຕາຕະລາງທີ 3: ຈຳນວນຫ້ອງຮຽນ, ໂຮງຮຽນ, ຄູສອນ ແລະ ນັກຮຽນ (ສະເພາະພາກເອກະຊົນ)...................14
ຕາຕະລາງທີ 4: ອັດຕາເຂົ້າຮຽນໃນຊັ້ນຕ່າງໆ ໃນທົ່ວປະເທດ..............................................................15
ຕາຕະລາງທີ 5: ສົມທຽບຂໍ້ມູນຈຳນວນຫ້ອງຮຽນ, ໂຮງຮຽນ, ຄູສອນ ແລະ ນັກຮຽນ..................................17
ຕາຕະລາງທີ 6: ສົມທຽບການປ່ຽນແປງຈຳນວນຫ້ອງຮຽນ, ໂຮງຮຽນ, ຄູສອນ ແລະ ນັກຮຽນ (ລັດ)..............17
ຕາຕະລາງທີ 7: ສົມທຽບການປ່ຽນແປງຈຳນວນຫ້ອງຮຽນ, ໂຮງຮຽນ, ຄູສອນ ແລະ ນັກຮຽນ (ເອກະຊົນ) ......18
ຕາຕະລາງທີ 8: ສົມທຽບອັດຕາເຂົ້າຮຽນ ລະຫວ່າງ 2 ສົກຮຽນ ທົ່ວປະເທດ ແລະ 40 ເມືອງບຸລິມະສິດຂອງຂະ ແ ໜງການສຶກສາ..........18
ຕາຕະລາງທີ 9: ຈຳນວນໂຮງຮຽນ, ຫ້ອງຮຽນ, ຄູສອນ ແລະ ນັກຮຽນ ສົມທຽບ 2 ສົກຮຽນ 2023-2024 ແລະ 2024-2025 ທົ່ວປະເທດ..........26
ຕາຕະລາງທີ 10: ອັດຕາເຂົ້າຮຽນໃນຊັ້ນປະຖົມສຶກສາສົມທຽບ 2 ສົກຮຽນ 2023-2024 ແລະ 2024-2025 (ແຍກຕາມເພດ) ..........26
ຕາຕະລາງທີ 11: ອັດຕາປະລະ, ອັດຕາຄ້າງຫ້ອງ ແລະ ອັດຕາການເລື່ອນຂັ້ນ-ເລື່ອນຊັ້ນ ສົມທຽບ 2 ສົກຮຽນ 2023-2024 ແລະ 2024-2025 ໃນທົ່ວປະເທດ ..........27
ຕາຕະລາງທີ 12: ຈຳນວນຫ້ອງຮຽນ, ໂຮງຮຽນ, ຄູສອນ ແລະ ນັກຮຽນ ໃນຊັ້ນມັດທະຍົມສຶກສາຕອນຕົ້ນ (ທົ່ວປະເທດ) ..........35
ຕາຕະລາງທີ 13: ອັດຕາເຂົ້າຮຽນໃນຊັ້ນມັດທະຍົມສຶກສາຕອນຕົ້ນທົ່ວປະເທດ..........................................36
ຕາຕະລາງທີ 14: ອັດຕາເລື່ອນຂັ້ນ, ອັດຕາຄ້າງຫ້ອງ ແລະ ອັດຕາປະລະໃນຊັ້ນມັດທະຍົມສຶກສາຕອນຕົ້ນ ........36
ຕາຕະລາງທີ 15: ຈຳນວນໂຮງຮຽນ, ຫ້ອງຮຽນ, ຄູສອນ ແລະ ນັກຮຽນ ໃນຊັ້ນມັດທະຍົມສຶກສາຕອນປາຍ .....44
ຕາຕະລາງທີ 16: ອັດຕາເຂົ້າຮຽນລວມ, ອັດຕາເຂົ້າຮຽນສຸດທິ ແລະ ອັດຕາເຂົ້າຮຽນລວມໃໝ່ ໃນຊັ້ນມັດທະຍົມສຶກສາຕອນປາຍ ..........44
ຕາຕະລາງທີ 17: ອັດຕາເລື່ອນຂັ້ນ, ອັດຕາຄ້າງຫ້ອງ, ອັດຕາປະລະ ແລະ ອັດຕາລອດເຫຼືອ ໃນຊັ້ນມັດທະຍົມສຶກສາຕອນປາຍ..........45
ຕາຕະລາງທີ 18: ຈຳນວນນັກຮຽນຂອງສະຖານອາຊີວະສຶກສາພາກລັດ ແຍກຕາມຂົງເຂດອາຊີບ ....................73
ຕາຕະລາງທີ 19: ຈຳນວນນັກຮຽນຂອງສະຖານອາຊີວະສຶກສາພາກເອກະຊົນ ແຍກຕາມຂົງເຂດອາຊີບ ............73
ຕາຕະລາງທີ 20: ຕົວຊີ້ບອກການສຶກສາຊັ້ນສູງ (ເບິ່ງແຜນ 2021-2025 ແລະ ບົດປະເມີນກາງສະໄໝ) ...........80
ຕາຕະລາງທີ 21: ສົມທຽບງົບປະມານແຕ່ລະພາກງົບປະມານ ປີ 2025 ..................................................118
ຕາຕະລາງທີ 22: ແຜນຄາດຄະເນງົບປະມານງົບປະມານ ປີ 2026.........................................................119

# ສາລະບານຮູບພາບ

ຮູບທີ 1: ປຽບທຽບອັດຕາປະລະໃນຊັ້ນປະຖົມສຶກສາ ໃນສົກຮຽນ 2023-2024 ແລະ 2024-2025 .............27
ຮູບທີ 2: ແຜນວາດປຽບທຽບອັດຕາປະລະຊັ້ນມັດທະຍົມສຶກສາຕອນຕົ້ນ ສົກຮຽນ 2023-2024 ແລະ ສົກຮຽນ 2024-2025 ແຍກຕາມແຂວງ..........................................................................................36
ຮູບທີ 3: ແຜນວາດປຽບທຽບອັດຕາປະລະຊັ້ນມັດທະຍົມສຶກສາຕອນປາຍ ສົກຮຽນ 2023-2024 ແລະ ສົກຮຽນ 2024-2025 ແຍກຕາມແຂວງ..........................................................................................45

# ຄຳນຳ

ສົກຮຽນ 2024-2025 ເປັນສົກຮຽນສຸດທ້າຍຂອງການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX (2021-2025), ເຖິງວ່າຈະມີຜົນກະທົບຂອງວິກິດການທາງດ້ານເສດຖະກິດ, ການພັດທະນາການສຶກສາ, ວິທະຍາສາດ ແລະ ກິລາ ກໍໄດ້ມີການປັບປຸງດີຂຶ້ນທຽບໃສ່ປີຜ່ານມາ. ທັງນີ້, ກໍຍ້ອນຄວາມເອົາໃຈໃສ່ ຂອງຜູ້ບໍລິຫານການສຶກສາທຸກຂັ້ນ ແຕ່ຂັ້ນສູນກາງຮອດທ້ອງຖິ່ນ. ພ້ອມດຽວກັນ ກະຊວງສຶກສາທິການ ແລະ ກິລາ ກໍໄດ້ສືບຕໍ່ສຸມທຸກຊັບພະຍາກອນທີ່ມີຈຳກັດ ເຂົ້າໃນການສົ່ງເສີມການເຂົ້າຮຽນໃນທຸກຊັ້ນທຸກສາຍ, ລະດົມນັກຮຽນທີ່ປະລະ ແລະ ມີແນວໂນ້ມທີ່ຈະປະລະການຮຽນໃຫ້ມາສືບຕໍ່ຮຽນ, ພ້ອມທັງໄດ້ສຸມງົບປະມານເຂົ້າໃນການຝຶກອົບຮົມຄູສອນ ແລະ ສະໜອງອຸປະກອນຮັບໃຊ້ການສິດສອນ ເພື່ອແນໃສ່ການປັບປຸງຄຸນນະພາບການສຶກສາໃນທຸກຊັ້ນທຸກສາຍ.

ເຖິງແນວໃດກໍຕາມ, ການພັດທະນາວຽກງານສຶກສາ, ວິທະຍາສາດ ແລະ ກິລາ ໃນສົກຮຽນ 2024-2025 ຜ່ານມານີ້ ກໍຍັງປະເຊີນໜ້າກັບສິ່ງທ້າທາຍຫຼາຍຢ່າງ ເປັນຕົ້ນແມ່ນ ***ການເຂົ້າຮຽນຫຼຸດລົງໃນທຸກຊັ້ນທຸກສາຍ, ການປະລະການຮຽນຂອງນັກຮຽນເພີ່ມຂຶ້ນ; ຄຸນນະພາບ ຫຼື ຜົນການຮຽນຂອງນັກຮຽນ ເມື່ອທຽບໃສ່ມາດຕະຖານຂອງຫຼັກສູດ ແລະ ປະສິດທິພາບໃນການນຳໃຊ້ຊັບພະຍາກອນ ຍັງບໍ່ສູງເທົ່າທີ່ຄວນ.*** ເຊິ່ງປັດໄຈ ແລະ ສາຍເຫດທີ່ກໍ່ໃຫ້ເກີດບັນຫາເຫຼົ່ານີ້ ແມ່ນສະສົມມາຈາກສະພາບການລະບາດຂອງພະຍາດໂຄວິດ-19 ແລະ ສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ, ການເງິນ ແລະ ຍ້ອນປັດໄຈພາຍໃນ ແລະ ພາຍນອກຕ່າງໆ ເຊັ່ນ: ***ປັດໄຈດ້ານພູມສາດ ແລະ ສະຖານການສຶກສາ; ປັດໄຈຜູ້ບໍລິຫານການສຶກສາ, ຄູສອນ ແລະ ນັກຮຽນ; ປັດໄຈທາງເສດຖະກິດ-ສັງຄົມ ແລະ ປັດໄຈການສະໜອງ/ປັດໄຈນຳເຂົ້າ.***

ດັ່ງນັ້ນ, ເພື່ອຜ່ານຜ່າກັບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຕ່າງໆເຫຼົ່ານີ້, ກະຊວງສຶກສາທິການ ແລະ ກິລາ ຈະຕ້ອງໄດ້ຮ່ວມມືກັບບັນດາກະຊວງ ແລະ ຂະແໜງການຕ່າງໆ ຢູ່ຂັ້ນສູນກາງ, ລວມທັງຮ່ວມມືກັບພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ແລະ ອົງການປົກຄອງຂັ້ນທ້ອງຖິ່ນ, ລວມທັງຄູ່ຮ່ວມພັດທະນາ ແລະ ຜູ້ໃຫ້ທຶນຕ່າງໆ ເພື່ອຊອກຫາວິທີແກ້ໄຂທີ່ເປັນໄປໄດ້ ແລະ ເໝາະສົມເພື່ອປັບປຸງ ແລະ ແກ້ໄຂບັນຫາຕ່າງໆ ທີ່ກ່າວມານັ້ນ.

ເພື່ອເປັນທິດທາງໃນການຈັດຕັ້ງປະຕິບັດ ວິທີການແກ້ໄຂບັນຫາຕ່າງໆນັ້ນ, ໃນກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ທີ່ຈັດຂຶ້ນໃນເດືອນສິງຫາ 2025 ນີ້, ບັນດາຜູ້ບໍລິຫານການສຶກສາ ແລະ ກິລາ ກໍໄດ້ກຳນົດວຽກຈຸດສຸມຕ່າງໆ ອອກມາເປັນມະຕິຂອງກອງປະຊຸມ ເພື່ອໃຫ້ບັນດາຜູ້ບໍລິຫານການສຶກສາ ແລະ ກິລາ ນຳໄປເຜີຍແຜ່ໃຫ້ບັນດາຄູອາຈານ ແລະ ພະນັກງານທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ, ພ້ອມທັງນຳໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໃຫ້ເກີດຜົນສູງສຸດ, ຊຶ່ງມະຕິດັ່ງກ່າວ ໄດ້ບັນຈຸໄວ້ໃນຕອນທ້າຍຂອງເອກະສານສະບັບນີ້.

ດັ່ງນັ້ນ, ໃນນາມການນຳຂອງກະຊວງສຶກສາທິການ ແລະ ກິລາ ຂ້າພະເຈົ້າຈຶ່ງຮຽກຮ້ອງໃຫ້ບັນດາຜູ້ບໍລິຫານການສຶກສາ, ວິທະຍາສາດ ແລະ ກິລາ ທຸກລະດັບ ແຕ່ສູນກາງຮອດທ້ອງຖິ່ນ ລວມທັງຜູ້ອຳນວຍການໂຮງຮຽນ ແລະ ຄູສອນທຸກຂັ້ນ, ທຸກຊັ້ນ, ທຸກສາຍໃນທົ່ວປະເທດ ຈົ່ງນຳເອົາບັນດາຈຸດປະສົງ, ຄາດໝາຍ ແລະ ວຽກຈຸດສຸມ ລວມທັງມະຕິຂອງກອງປະຊຸມ ທີ່ກຳນົດໃນເອກະສານແຜນການສະບັບນີ້ ເປັນບ່ອນອີງໃນການຄົ້ນຄວ້າ ແລະ ຜັນຂະຫຍາຍອອກເປັນແຜນກິດຈະກຳລະອຽດ ເພື່ອໄປຈັດຕັ້ງປະຕິບັດໃນຂັ້ນຂອງຕົນ ໃຫ້ປາກົດຜົນເປັນຈິງຕາມພາລະບົດບາດຂອງໃຜລາວ. ພ້ອມນັ້ນ, ກໍໃຫ້ເອົາໃຈໃສ່ຕິດຕາມ, ກວດກາ, ປະເມີນຜົນ ແລະ ສະຫຼຸບລາຍງານຄວາມຄືບໜ້າໃຫ້ກະຊວງສຶກສາທິການ ແລະ ກິລາ ຊາບເປັນປົກກະຕິໃນແຕ່ລະໄລຍະ.

ລັດຖະມົນຕີ

ທອງສະລິດ ມັງໜໍ່ເມກ

# ຄຳຂອບໃຈ

ກົມແຜນການ, ກະຊວງສຶກສາທິການ ແລະ ກິລາ ໃນນາມຄະນະຮັບຜິດຊອບເນື້ອໃນຂອງບົດສະຫຼຸບຜົນການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ປະຈຳສົກຮຽນ 2024-2025 ແລະ ຮັບຜິດຊອບສ້າງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ປະຈຳສົກຮຽນ 2025-2026, ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນເປັນຢ່າງຍິ່ງ ຕໍ່ບັນດາກົມ, ສູນ, ສະຖາບັນ, ຫ້ອງການ, ພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ/ແຂວງ, ສະຖານການສຶກສາຕ່າງໆ ຕະຫຼອດເຖິງບຸກຄົນທີ່ໄດ້ສະໜອງຂໍ້ມູນ ແລະ ປະກອບຄຳຄິດຄຳເຫັນທີ່ມີຄຸນຄ່າເຂົ້າໃນເນື້ອໃນຂອງເອກະສານສະບັບນີ້.

ພິເສດ, ຂໍສະແດງຄວາມຮູ້ບຸນຄຸນຕໍ່ຄະນະນຳກະຊວງສຶກສາທິການ ແລະ ກິລາ ແລະ ຜູ້ແທນກອງປະຊຸມ ຜູ້ບໍລິຫານການສຶກສາ ແລະ ກິລາ ທຸກທ່ານ ທີ່ໄດ້ປະກອບຄຳຄິດເຫັນ, ໃຫ້ຂໍ້ສະເໜີ ແລະ ຄຳແນະນຳ ທີ່ມີຄວາມໝາຍທັງເປັນປະໂຫຍດຕໍ່ເນື້ອໃນບົດສະຫຼຸບ ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ສະບັບນີ້.

**ກົມແຜນການ**

# ພາກທີ I
# ຜົນສໍາເລັດຂອງການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ປະຈໍາສົກຮຽນ 2024-2025

## I. ສະພາບ ແລະ ເງື່ອນໄຂໃນການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ສົກຮຽນ 2024-2025

ການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ ໃນສົກຮຽນ 2024-2025 ແມ່ນເປັນປີມ້ອນທ້າຍຂອງການຈັດຕັ້ງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງ IX (2021-2025) ແລະ ເປັນໄລຍະທີ່ການພັດທະນາການສຶກສາຍັງສືບຕໍ່ໄດ້ຮັບຜົນກະທົບຈາກສະພາບຂໍ້ຫຍຸ້ງຍາກທາງດ້ານເສດຖະກິດ, ການເງິນ ແລະ ບັນຫາທາງສັງຄົມອື່ນໆ ສົມທົບກັບການສະໜອງໂກຕາລັດຖະກອນຖູໃໝ່ຂອງລັດຖະບານທີ່ມີຈໍາກັດ ອັນໄດ້ສົ່ງຜົນກະທົບທາງລົບຕໍ່ການເຂົ້າຮຽນຂອງນັກຮຽນ ແລະ ການປະລະການຮຽນຂອງນັກຮຽນໃນທຸກລະດັບ.

ພາຍໃຕ້ການນໍາພາຊີ້ນໍາຂອງຄະນະນໍາກະຊວງສຶກສາທິການ ແລະ ກິລາ, ຄວາມເອົາໃຈໃສ່ ແລະ ເປັນເຈົ້າການຂອງຜູ້ບໍລິຫານການສຶກສາ, ວິທະຍາສາດ ແລະ ກິລາ ທຸກຂັ້ນ ນັບແຕ່ສູນກາງຮອດທ້ອງຖິ່ນ ແລະ ການປະສານງານກັບທຸກພາກສ່ວນ ລວມທັງກັບບັນດາຄູ່ຮ່ວມພັດທະນາຕ່າງໆ, ກະຊວງສຶກສາທິການ ແລະ ກິລາ ກໍ່ໄດ້ສຸມທຸກຄວາມພະຍາຍາມເຂົ້າໃນການສົ່ງເສີມການເຂົ້າເຖິງການສຶກສາຢ່າງເທົ່າທຽມ ຜ່ານການປັບປຸງພື້ນຖານໂຄງລ່າງຂອງສະຖານການສຶກສາຕ່າງໆ, ການສະໜອງອາຫານທ່ຽງໃນໂຮງຮຽນໃຫ້ແກ່ນັກຮຽນໃນຊັ້ນການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ, ເພີ່ມການສະໜອງເງິນອຸດໜູນເບ້ຍລ້ຽງນັກຮຽນ, ນັກສຶກສາ ທຸກຊັ້ນທຸກສາຍ ແລະ ໄດ້ເອົາໃຈໃສ່ແກ້ໄຂບັນຫາການປະລະການຮຽນ ແລະ ການປັບປຸງຄຸນນະພາບການຮຽນການສອນໃນທຸກລະດັບ. ນອກຈາກນີ້, ຍັງໄດ້ສົ່ງເສີມການຄົ້ນຄວ້າວິທະຍາສາດ ແລະ ນະວັດຕະກໍາ, ພ້ອມທັງໄດ້ປັບປຸງຄຸນນະພາບ ໃນການຄັດເລືອກຫົວຂໍ້ຄົ້ນຄວ້າ ແລະ ຜົນການຄົ້ນຄວ້າວິທະຍາສາດ, ນະວັດຕະກໍາ. ສໍາລັບວຽກງານກິລາ-ກາຍຍະກໍາ ກໍໄດ້ສົ່ງເສີມການອອກກໍາລັງກາຍຂອງທົ່ວປວງຊົນລາວ ລວມທັງເຮັດໜ້າທີ່ສົ່ງເສີມກິລາອາຊີບ.

ສໍາລັບງົບປະມານທີ່ຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ ໄດ້ຮັບອະນຸມັດໃນປີ 2025 ແມ່ນເພີ່ມຂຶ້ນ ຈາກ 1,51% ໃນປີ 2024 ເປັນ 1,65% ເມື່ອທຽບໃສ່ GDP ແລະ ເພີ່ມຈາກ 9,78% ເປັນ 10,69% ທຽບໃສ່ລາຍຈ່າຍຂອງລັດຖະບານ. ເຖິງວ່າສ່ວນແບ່ງງົບປະມານໄດ້ຮັບເພີ່ມຂຶ້ນເພື່ອທຽບໃສ່ປີຜ່ານມາ, ແຕ່ງົບປະມານສ່ວນໃຫຍ່ ກໍຍັງແມ່ນງົບປະມານພາກເງິນເດືອນ ແລະ ເງິນອຸດໜູນຕ່າງໆ, ສ່ວນງົບປະມານບໍລິຫານປົກກະຕິ, ງົບປະມານພາກດັດສົມສົ່ງເສີມ ຊຶ່ງເປັນງົບປະມານສໍາລັບການປັບປຸງຄຸນນະພາບການສຶກສາ ແລະ ງົບປະມານພາກລົງທຶນ ແມ່ນກວມເອົາພຽງແຕ່ 4-5% ທຽບໃສ່ລາຍຈ່າຍຂອງລັດຖະບານໃນພາກດຽວກັນ.

ສະນັ້ນ, ຜ່ານການຈັດຕັ້ງປະຕິບັດບັນດາວຽກຈຸດສຸມຕ່າງໆ ສາມາດຕີລາຄາເຖິງຜົນສໍາເລັດ ແລະ ສິ່ງທ້າທາຍໄດ້ດັ່ງນີ້:

1. **ຜົນສຳເລັດ**

ຂະແໜງສຶກສາທິການ ແລະ ກິລາໄດ້ສືບຕໍ່ເອົາໃຈໃສ່ປະຕິບັດຕາມທິດຊີ້ນຳຂອງລັດຖະບານ ໂດຍສະເພາະແມ່ນໄດ້ຮ່ວມມືກັບຂະແໜງການທີ່ກ່ຽວຂ້ອງ, ອົງການປົກຄອງຂັ້ນທ້ອງຖິ່ນ, ຊຸມຊົນ ແລະ ພໍ່ແມ່ຜູ້ປົກຄອງໃນການສົ່ງເສີມໃຫ້ເດັກໄດ້ເຂົ້າຮຽນ, ການປັບປຸງໂຄງລ່າງພື້ນຖານ, ການສະໜອງອຸປະກອນການຮຽນ-ການສອນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ພ້ອມທັງໄດ້ຈັດຕັ້ງປະຕິບັດຫຼາຍມາດຕະການເພື່ອປັບປຸງຄຸນນະພາບການສຶກສາ ເພື່ອໃຫ້ບັນລຸໄດ້ບັນດາຄາດໝາຍຕ່າງໆໃນມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2024 ແລະ ທິດທາງແຜນການ ແລະ ແຜນລົງທຶນຂອງລັດ ປະຈຳປີ 2025 ເລກທີ 153/ສພຊ, ລົງວັນທີ 12 ທັນວາ 2024. ບັນດາຜົນສຳເລັດທີ່ພົ້ນເດັ່ນໃນແຕ່ລະຂະແໜງການຍ່ອຍມີດັ່ງນີ້:

1) **ການສຶກສາກ່ອນໄວຮຽນ:** ການຈັດຕັ້ງປະຕິບັດວຽກງານການສຶກສາກ່ອນໄວຮຽນມີທ່າອ່ຽງດີຂຶ້ນ ເຊິ່ງສະແດງອອກຜ່ານ ອັດຕາເຂົ້າຮຽນຂອງເດັກ 3-5 ປີ ໄດ້ເພີ່ມຂຶ້ນຈາກ 62.0% ມາເປັນ 64.4% ແລະ ອັດຕາເຂົ້າຮຽນຂອງເດັກ 5 ປີ ເພີ່ມຈາກ 82.9% ມາເປັນ 84.7%, ພ້ອມທັງມີຄວາມສະເໝີພາບລະຫວ່າງຍິງ-ຊາຍໃນລະດັບດີ ທັງໃນລະດັບຊາດ ແລະ ໃນເມືອງທີ່ດ້ອຍໂອກາດ, ເຊິ່ງໃນນັ້ນ ການປະກອບສ່ວນຂອງພາກເອກະຊົນແມ່ນມີບົດບາດສຳຄັນ ຊຶ່ງເຫັນໄດ້ຈາກ ສັດສ່ວນນັກຮຽນເອກະຊົນທຽບໃສ່ນັກຮຽນທັງໝົດ ແມ່ນເພີ່ມຂຶ້ນຈາກ 27.51% ມາເປັນ 28.74%. ເພື່ອເພີ່ມການເຂົ້າຮຽນ ໄດ້ສຸມໃສ່ພິເສດໃນການຂະຫຍາຍການກຽມຄວາມພ້ອມ 1 ປີ ກ່ອນເຂົ້າຮຽນຊັ້ນປະຖົມ ດ້ວຍຮູບແບບການຮ່ວມມືກັບຊຸມຊົນ ໃນ 40 ເມືອງດ້ອຍໂອກາດທາງການສຶກສາ ເຊັ່ນ: ຈັດຕັ້ງປະຕິບັດກຸ່ມຮຽນຜ່ານການຫຼິ້ນ, ການກຽມຄວາມພ້ອມ 10 ອາທິດ ແລະອື່ນໆ. ຄຽງຄູ່ກັນນັ້ນ, ກໍ່ໄດ້ມີການພັດທະນາມາດຕະຖານຄຸນນະພາບຂັ້ນພື້ນຖານຊັ້ນອະນຸບານສຶກສາ, ສະໜອງສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມ ເຊັ່ນ: ວິດຖ່າຍ, ອ່າງ/ຮາງລ້າງມື ແລະ ລະບົບນ້ຳໃຊ້ໃນສະຖານການສຶກສາກ່ອນໄວຮຽນ, ສຳເລັດການສ້າງ ແລະ ເຜີຍແຜ່ດຳລັດວ່າດ້ວຍການສຶກສາກ່ອນໄວຮຽນ ແລະ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະຖານການສຶກສາກ່ອນໄວຮຽນ ໃຫ້ຜູ້ບໍລິຫານການສຶກສາ, ວິຊາການ ລະດັບສູນກາງ, ແຂວງ, ເມືອງ ແລະ ຜູ້ອຳນວຍການໂຮງຮຽນອະນຸບານ ແລະ ໂຮງຮຽນປະຖົມ ທັງພາກລັດ ແລະ ເອກະຊົນ.
2) **ການສຶກສາຊັ້ນປະຖົມ:** ການສຶກສາຊັ້ນປະຖົມສຶກສາໄດ້ຮັບການປັບປຸງທັງດ້ານປະລິມານ ແລະ ຄຸນນະພາບ ຊຶ່ງໃນສົກຮຽນຜ່ານມາ ໄດ້ສຸມໃສ່ການຊຸກຍູ້ ແລະ ສົ່ງເສີມໃຫ້ເດັກໃນເກນອາຍຸເຂົ້າຮຽນ ໄດ້ເຂົ້າເຖິງການສຶກສາຊັ້ນປະຖົມຫຼາຍຂຶ້ນ, ໄດ້ຍົກລະດັບ ແລະ ຝຶກອົບຮົມໃຫ້ແກ່ຜູ້ອຳນວຍການໂຮງຮຽນ ແລະ ຄູສອນ ໃນຫົວຂໍ້ຕ່າງໆ ເປັນຈຳນວນຫຼວງຫຼາຍ, ລວມທັງໄດ້ມີການສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານນິເທດ ທັງພາຍນອກ ແລະ ພາຍໃນ ໃຫ້ແກ່ຄູສອນພາຍໃນໂຮງຮຽນ ແລະ ກຸ່ມໂຮງຮຽນ. ເພື່ອສະໜັບສະໜູນ ແລະ ຊ່ວຍເຫຼືອເດັກນ້ອຍທີ່ບໍ່ຢູ່ໃນກຸ່ມພາສາລາວ-ໄຕ ຊຶ່ງເປັນກຸ່ມທີ່ມີຄວາມຫຍຸ້ງຍາກໃນການເວົ້າພາສາລາວ, ກະຊວງສຶກສາທິການ ແລະ ກິລາ ພາຍໃຕ້ການຊ່ວຍເຫຼືອຂອງຄູ່ຮ່ວມພັດທະນາ ໄດ້ຈັດຕັ້ງປະຕິບັດໂຄງການການເວົ້າພາສາລາວຢູ່ໃນໂຮງຮຽນທີ່ມີຈຳນວນເດັກນ້ອຍຈາກກຸ່ມປະຊາກອນດັ່ງກ່າວ. ໄດ້ສະໜອງເບ້ຍລ້ຽງໃຫ້ແກ່ນັກຮຽນຜູ້ທີ່ທຸກຍາກ, ດ້ອຍໂອກາດທາງການສຶກສາ ລວມທັງສົ່ງເສີມ ຄະນະພັດທະນາການສຶກສາຂັ້ນບ້ານໃຫ້ມີສ່ວນຮ່ວມໃນການພັດທະນາການສຶກສາຫຼາຍຂຶ້ນ ໃນການຊຸກຍູ້ລູກຫຼານໃນເກນອາຍຸເຂົ້າຮຽນ ແລະ ລະດົມນັກຮຽນຜູ້ທີ່ປະລະໃຫ້ກັບຄືນມາຮຽນ ແລະ ຮຽນຈົນຈົບຊັ້ນປະຖົມ. ນອກຈາກນີ້, ຍັງໄດ້ປະສານງານກັບ ກະຊວງປ້ອງກັນປະເທດ ໃນການຈັດຝຶກອົບຮົມວິຊາຄູໃຫ້ແກ່ກອງກຳລັງທະຫານຊາຍແດນ ເພື່ອໄປສິດສອນຢູ່ໂຮງຮຽນໃນເຂດຊາຍແດນທີ່ຂາດເຂີນຄູ. ວຽກງານນ້ຳ ແລະ ສຸຂະອະນາໄມໃນໂຮງຮຽນ ກໍໄດ້ຮັບການເອົາໃຈໃສ່ຈາກພາກລັດ ແລະ ຄູ່ຮ່ວມພັດທະນາ ເຮັດໃຫ້ມີຫຼາຍໂຮງຮຽນໄດ້ມີນຳໃຊ້ຫຼາຍຂຶ້ນ. ຈາກຜົນ

ສຳເລັດຂອງການຈັດຕັ້ງປະຕິບັດກິດຈະກຳຕ່າງໆນັ້ນ ຈຶ່ງເຮັດໃຫ້ ອັດຕາເຂົ້າຮຽນໃໝ່ສຸດທິຂັ້ນ ປ.1 ເພີ່ມຂຶ້ນ ຈາກ 99.1% ມາເປັນ 99.3% ແລະ ອັດຕາປະລະການຮຽນຂອງນັກຮຽນ ໄດ້ຫຼຸດລົງ ຈາກ 4.7% ເປັນ 4.5%.

3) **ການສຶກສາຊັ້ນມັດທະຍົມ:** ກະຊວງສຶກສາທິການ ແລະ ກິລາ ໂດຍສົມທົບກັບ ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ, ຊຸມຊົນ ແລະ ຄູ່ຮ່ວມພັດທະນາ ໄດ້ສືບຕໍ່ເອົາໃຈໃສ່ ພັດທະນາການສຶກສາຊັ້ນມັດທະຍົມ, ສ້າງເງື່ອນໄຂ, ໂອກາດ, ຊຸກຍູ້ ແລະ ສົ່ງເສີມເດັກທຸກຄົນ ທີ່ຈົບຊັ້ນປະຖົມໃຫ້ໄດ້ເຂົ້າຮຽນຕໍ່ໃນຊັ້ນມັດທະຍົມ ເພື່ອໃຫ້ນັກຮຽນມີຄວາມຮູ້, ທັກສະ ເພື່ອກຽມພ້ອມສືບຕໍ່ຮຽນໃນສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ໂດຍການສະໜອງພື້ນຖານໂຄງລ່າງ, ອຸປະກອນການຮຽນການສິດສອນ, ສະໜອງເບ້ຍລ້ຽງໃຫ້ແກ່ເດັກນັກຮຽນຜູ້ທີ່ທຸກຍາກ ແລະ ສ້າງຄວາມເຂັ້ມແຂງວິທີການສອນ ລວມທັງສົ່ງເສີມຄວາມຮູ້ທາງທັກສະຊີວິດ ແລະ ສົ່ງເສີມສຸຂະພາບໃນໂຮງຮຽນ. ຜ່ານການຈັດຕັ້ງປະຕິບັດຕົວຈິງ ເຮັດໃຫ້ອັດຕາການເລື່ອນຊັ້ນຂອງນັກຮຽນຈົບ ປ.5 ຂຶ້ນ ມ.1 ເພີ່ມຂຶ້ນ ຈາກ 84.9% ຂຶ້ນເປັນ 85.6%. ແນວໃດກໍຕາມ ເຖິງວ່າຈະມີຜົນສຳເລັດໃນການຈັດຕັ້ງປະຕິບັດກິດຈະກຳຫຼາຍໆ ຢ່າງ, ແຕ່ເຫັນວ່າຕົວຊີ້ບອກຂອງການສຶກສາຊັ້ນມັດທະຍົມທັງຕອນຕົ້ນ ແລະ ຕອນປາຍ ແມ່ນມີລັກສະນະທົດຖອຍ.

4) **ການສຶກສານອກໂຮງຮຽນ:** ໄດ້ດຳເນີນການຮຽນ-ການສອນ ແລະ ຝຶກອົບຮົມວິຊາຊີບຂັ້ນພື້ນຖານຕາມໂຄງການຫຼັກສູດ ແລະ ລະບຽບການທີ່ກຳນົດໄວ້ ເພື່ອເພີ່ມອັດຕາການຮູ້ໜັງສືຂອງປະຊາກອນກຸ່ມເປົ້າໝາຍ, ມີການບຳລຸງຍົກລະດັບການສຶກສາຊັ້ນປະຖົມສຶກສາ ແລະ ມັດທະຍົມຕອນຕົ້ນໃຫ້ກັບໄວໜຸ່ມ ແລະ ຜູ້ໃຫ່ຍກຸ່ມເປົ້າໝາຍ ເພື່ອໃຫ້ຈົບການສຶກສາຂັ້ນພື້ນຖານ, ພ້ອມດຽວກັນນັ້ນ ກໍໄດ້ສອນບຳລຸງ ແລະ ຍົກລະດັບການສຶກສາຊັ້ນມັດທະຍົມຕອນປາຍ ໃຫ້ແກ່ຜູ້ທີ່ມີເງື່ອນໄຂ, ພ້ອມທັງສະໜອງການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ຄວບຄູ່ກັບການບຳລຸງຍົກລະດັບການສຶກສາ ເພື່ອເປັນການສ້າງອາຊີບພື້ນຖານໃນສາຂາວິຊາຊີບຕ່າງໆ, ພັດທະນາທັກສະສີມືແຮງງານ ແລະ ປະກອບອາຊີບໃນຊຸມຊົນ-ສັງຄົມ ແລະ ໄດ້ເຜີຍແຜ່ ແລະ ຈັດຕັ້ງຜັນຂະຫຍາຍດຳລັດວ່າດ້ວຍການຮຽນຮູ້ຕະຫຼອດຊີວິດ.

5) **ການສຶກສາຄູ:** ໃນສົກຮຽນ 2024-2025, ຕົວເລກແຜນຮັບທັງໝົດ ຈຳນວນ 3,790 ຕົວເລກ ໃນນັ້ນ ມີຕົວເລກພະນັກງານຍົກລະດັບຕໍ່ເນື່ອງ ຈຳນວນ 1,810 ຕົວເລກ (ຈັດຕັ້ງປະຕິບັດໃນໄລຍະພັກສິ້ນປີຮຽນ) ແລະ ນັກຮຽນຈຳນວນ 1,980 ຕົວເລກ ເຊິ່ງສາມາດຈັດຕັ້ງປະຕິບັດໄດ້ຈຳນວນ 463 ຄົນ, ຍິງ 286 ຄົນ ເຊິ່ງຖ້າທຽບໃສ່ແຜນຮັບນັກຮຽນ (ຕາມ 1,980 ຄົນ) ແມ່ນປະຕິບັດໄດ້ພຽງ 23.4%. ໃນການພັດທະນາວຽກງານການພັດທະນາວິຊາຊີບຄູ ແມ່ນໄດ້ສຸມໃສ່ການສ້າງຄວາມເຂັ້ມແຂງໃຫ້ຄູໃນສາຍສ້າງຄູ, ການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ ໂດຍສະເພາະ ແມ່ນໄດ້ຝຶກອົບຮົມຄູຊັ້ນປະຖົມສຶກສາ ໃນການນຳໃຊ້ຫຼັກສູດສະບັບປັບປຸງໃໝ່. ໂດຍສະເລ່ຍຄູປະຈຳການໃນແຕ່ລະຊັ້ນການສຶກສາ ໄດ້ຮັບການຝຶກອົບຮົມໃນຫົວຂໍ້ຕ່າງໆ ຫຼາຍກວ່າ 20% ຂອງຈຳນວນຄູສອນທັງໝົດ. ຄຽງຄູ່ກັບການຝຶກອົບຮົມຄູປະຈຳການ, ບັນດາວິທະຍາໄລຄູ ຍັງໄດ້ເຮັດໜ້າທີ່ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ເຮັດວຽກສຶກສານິເທດ ຊັ້ນປະຖົມສຶກສາ ແລະ ຊັ້ນມັດທະຍົມສຶກສາໃນທົ່ວປະເທດ.

6) **ຂະແໜງການຍ່ອຍອາຊີວະສຶກສາ:** ໃນສົກຮຽນ 2024-2025 ມີນັກຮຽນ-ນັກສຶກສາເຂົ້າໃໝ່ 9,487 ຄົນ[1] (ເປັນຍິງປະມານ 40%) ແລະ ນັກຮຽນ-ນັກສຶກສາ ທັງໝົດ 19,885 ຄົນ (ເປັນຍິງ 36.4%) ທຽບໃສ່ສົກຮຽນ 2023-2024 ແມ່ນເພີ່ມຂຶ້ນ 1,532 ຄົນ. ໃນການພັດທະນາວຽກງານວິຊາສະເພາະ, ໄດ້ປັບປຸງການເຂົ້າຮຽນ ແລະ ຄຸນນະພາບຂອງການສຶກສາສາຍອາຊີວະສຶກສາ ໂດຍໄດ້ປັບປຸງພື້ນຖານໂຄງລ່າງ ແລະ ສະໜອງສິ່ງອຳນວຍຄວາມສະດວກຕ່າງໆ, ພ້ອມທັງສະໜອງອຸປະກອນຮັບໃຊ້ການຮຽນການສອນຕ່າງໆ, ໄດ້ກໍ່ສ້າງ ແລະ

---

[1] ຂໍ້ມູນຈາກບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ, ວິທະຍາສາດ ແລະ ກິລາ ປະຈຳປີ 2024 ແລະ ແຜນ 2025

ສ້ອມແປງອາຄານຮຽນ, ໂຮງຝຶກງານ ຢູ່ສະຖານອາຊີວະສຶກສາ 13 ແຫ່ງ; ສ້າງຫ້ອງໃຫ້ຄຳປຶກສາ ແລະ ຄຸ້ມຄອງການຮຽນທາງໄກ ຢູ່ສະຖານອາຊີວະສຶກສາ 14 ແຫ່ງ ພ້ອມທັງສະໜອງຊຸດອຸປະກອນເຕັກນິກ; ສະໜອງອຸປະກອນຫ້ອງຮຽນທັນສະໄໝ (Smart classroom) ໃຫ້ແກ່ສະຖານອາຊີວະສຶກສາ 5 ແຫ່ງ; ສະໜອງອຸປະກອນເຕັກນິກ ສຳລັບການຮຽນການສອນ ໃຫ້ແກ່ 26 ສະຖານອາຊີວະສຶກສາ; ປັບປຸງ ແລະ ພັດທະນາຫຼັກສູດອາຊີວະສຶກສາ ທັງໝົດ 40 ຫຼັກສູດ ໃນຈຳນວນ 12 ສາຂາອາຊີບ; ປັບປຸງ ແລະ ພັດທະນາຫຼັກສູດຄູອາຊີວະສຶກສາ ລະດັບປະລິນຍາຕີ ຈຳນວນ 28 ສາຂາອາຊີບ; ພັດທະນາເຄື່ອງມື ການປະເມີນຄວາມເພິ່ງພໍໃຈຂອງຜູ້ຮຽນ, ຜູ້ໃຊ້ແຮງງານ, ຄູທີ່ໄດ້ຮັບການຝຶກອົບຮົມ ແລະ ການຕິດຕາມນັກສຶກສາຮຽນຈົບ; ໄດ້ຈັດຕັ້ງປະຕິບັດການຮຽນການສອນ ຮູບແບບອາຊີວະສຶກສາແບບຄວບຄູ່ ໃນ 16 ສະຖານອາຊີວະສຶກສາ; ຈັດການຮຽນການສອນ ແບບເນັ້ນສະມັດຖະພາບ ລະດັບຊັ້ນກາງ ແລະ ຊັ້ນສູງ ໃນ 113 ສາຂາອາຊີບ ລວມມີ 402 ຫຼັກສູດ.

7) **ການສຶກສາຊັ້ນສູງ:** ໃນສົກສຶກສາ 2024-2025 ມີນັກສຶກສາໃນສະຖານການສຶກສາຊັ້ນສູງ ລວມທັງໝົດ 38,841 ຄົນ (ຍິງ 52%), ທຽບກັບປີທີ່ຜ່ານມາ ມີຈຳນວນຫຼຸດລົງ 9,037 ຄົນ ຫຼື 19%. ສະເພາະນັກສຶກສາມາລົງທະບຽນເຂົ້າຮຽນ ປີທີ 1 ມີທັງໝົດ 10,797 ຄົນ (ຍິງ 47%), ທຽບກັບປີຜ່ານມາ ເພີ່ມຂຶ້ນ 991 ຄົນ ຫຼື 12%. ສ່ວນນັກສຶກສາທີ່ຮຽນຈົບທັງໝົດ ໃນປີ 2024 (ສົກສຶກສາ 2023-2024) ມີ 10,816 ຄົນ (ຍິງ 53%). ໄດ້ສືບຕໍ່ນະໂຍບາຍໃຫ້ທຶນການສຶກສາ ແກ່ນັກຮຽນເກັ່ງ, ຜູ້ດ້ອຍໂອກາດ ແລະ ຊົນເຜົ່າໃນລະດັບອະນຸປະລິນຍາ ແລະ ປະລິນຍາຕີ ເຂົ້າຮຽນໃນມະຫາວິທະຍາໄລ 04 ແຫ່ງ ທີ່ຂຶ້ນກັບ ກະຊວງສຶກສາທິການ ແລະ ກິລາ, ໄດ້ຊຸກຍູ້ໃຫ້ສະຖານການສຶກສາຊັ້ນສູງເອົາໃຈໃສ່ຄົ້ນຄວ້າວິທີການແກ້ໄຂບັນຫາການຫຼຸດລົງຂອງນັກສຶກສາທີ່ສະໝັກເຂົ້າຮຽນໃນແຕ່ລະປີ, ມີຫຼັກສູດສ້າງໃໝ່ ຈຳນວນ 28 ຫຼັກສູດ (ລະດັບປະລິນຍາຕີ ຈຳນວນ 06 ຫຼັກສູດ, ຊ່ຽວຊານຂັ້ນ II ຈຳນວນ 04 ຫຼັກສູດ, ຊ່ຽວຊານຂັ້ນ I ຈຳນວນ 01 ຫຼັກສູດ ແລະ ລົງເລິກຂະແໜງວິຊາ ຈຳນວນ 01 ຫຼັກສູດ) ແລະ ຫຼັກສູດທີ່ໄດ້ຮັບການປັບປຸງ ຈຳນວນ 14 ຫຼັກສູດ (ລະດັບປະລິນຍາຕີ ຈຳນວນ 06 ຫຼັກສູດ, ຕໍ່ເນື່ອງລະດັບປະລິນຍາຕີ ຈຳນວນ 03 ຫຼັກສູດ, ລະດັບປະລິນຍາໂທ ຈຳນວນ 04 ຫຼັກສູດ, ຊ່ຽວຊານຂັ້ນ I ຈຳນວນ 01 ຫຼັກສູດ).

8) **ວຽກງານຄົ້ນຄວ້າວິທະຍາສາດ:** ວຽກງານວິທະຍາສາດກໍເປັນຂະແໜງການຍ່ອຍໜຶ່ງ ທີ່ເຮັດໜ້າທີ່ສົ່ງເສີມການຄົ້ນຄວ້າວິທະຍາສາດໃນປີ 2024 ຈຳນວນ 37 ຫົວຂໍ້, ສຳເລັດການຮ່າງຍຸດທະສາດ ແລະ ແຜນພັດທະນາວິທະຍາສາດ ເຕັກໂນໂລຊີ ແລະ ນະວັດຕະກຳ ແຫ່ງຊາດ 2026-2040, ໄດ້ເຜີຍແຜ່ຜົນງານການຄົ້ນຄ້ວາ ຂໍ້ມູນວິທະຍາສາດ ແລະ ນະວັດຕະກຳ ຢູ່ຂັ້ນທ້ອງຖິ່ນ; ໄດ້ຄົ້ນຄວ້າຜະລິດຕະພັນສະບູ (ສະບູແຫຼວ 3 ສູດ, ສະບູກ້ອນ 5 ສູດ), ນໍ້າຢາລ້າງຈານ 4 ສູດ ແລະ ສາມາດສ້າງຜະລິດຕະພັນຕົວແບບໄດ້ ຈຳນວນ 200 ຢ່າງ ເຊັ່ນ: ທູບ ແລະ ສະເປໄລ່ຍຸງ; ຈັດກິດຈະກຳປູກຈິດສຳນຶກວິທະຍາສາດຂັ້ນພື້ນຖານໃຫ້ນັກຮຽນຊັ້ນມັດທະຍົມ ຕອນຕົ້ນ ແລະ ຕອນປາຍເມືອງໄຊທານີ.

9) **ວຽກງານກິລາ-ກາຍຍະກຳ:** ໄດ້ສຳເລັດການສ້າງ ແລະ ປັບປຸງນິຕິກຳ ຈຳນວນໜຶ່ງ ເປັນຕົ້ນ ຂໍ້ຕົກລົງ ວ່າດ້ວຍການຈັດການແຂ່ງຂັນກິລາຄົນພິການ, ຂໍ້ຕົກລົງ ວ່າດ້ວຍການສ້າງເມືອງ ເທດສະບານ, ນະຄອນຕົວແບບດ້ານກິລາ-ກາຍຍະກຳມວນຊົນ, ປຶ້ມຄູ່ມືກະຕິກາ 14 ປະເພດກິລາ ແລະ ອື່ນໆ. ໄດ້ສຳເລັດການຈັດ ແລະ ເຂົ້າຮ່ວມການແຂ່ງຂັນກິລາໃນຫຼາຍລະດັບ ເຊັ່ນ: ສຳເລັດການຈັດງານມະຫາກຳກິລານັກຮຽນມັດທະຍົມສຶກສາທົ່ວປະເທດ ຄັ້ງທີ VII ທີ່ ແຂວງສາລະວັນ; ສຳເລັດເຂົ້າຮ່ວມການແຂ່ງຂັນກິລານັກຮຽນອາຊຽນ ຄັ້ງທີ XIII; ສຳເລັດເຂົ້າຮ່ວມງານແຂ່ງຂັນກິລາພາຣາແລມປິກເກມ ຄັ້ງທີ XVII ທີ່ ນະຄອນຫຼວງປາຣີ, ປະເທດຝຣັ່ງ ວັນທີ 28 ສິງຫາ ຫາ 8 ກັນຍາ 2024. ນອກນັ້ນ, ຍັງໄດ້ສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລາກອນກິລາ, ຈັດຕັ້ງປະຕິບັດວຽກງານການຈັດການຮຽນການສອນວິຊາສິລະປະສຶກສາ ແລະ ວຽກງານສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ. ໄດ້ສ້າງບັນດານິຕິກຳທີ່ ກ່ຽວຂ້ອງ, ລວມທັງແຜນ ຍຸດທະສາດແຕ່ນີ້ຮອດປີ 2035 ແລະ

ວິໄສທັດຮອດປີ 2050; ໄດ້ສ້າງຕັ້ງ ແລະ ປັບປຸງຄະນະບໍລິຫານງານສະຫະພັນຄືນໃໝ່ ຕາມວາລະຂອງການເຄື່ອນໄຫວ; ການຈັດການແຂ່ງຂັນພາຍໃນປະເທດ ເຊິ່ງລວມໃນລະດັບປະເທດ ແລະ ສາກົນ ທັງໝົດ 14 ຄັ້ງ, ເຂົ້າຮ່ວມແຂ່ງຂັນກິລາໃນລະດັບ ອະນຸພາກພື້ນ, ພາກພື້ນ ແລະ ສາກົນ ໄດ້ຮັບຫຼຽນໃນການແຂ່ງຂັ້ນກິລາເພາະກາຍຊິງແຊ້ມໂລກ ຄັ້ງທີ 15 (2 ຫຼຽນຄໍາ, 2 ຫຼຽນເງິນ ແລະ 1 ຫຼຽນທອງ), ແຂ່ງຂັນກິລາຈູຈິດຊູ Chonburi Jujitsu Open 2024 ແລະ The Rookie Jujitsu Championship 2024 (6 ຫຼຽນຄໍາ, 3 ຫຼຽນເງິນ ແລະ 1 ຫຼຽນທອງ), ກິລາຈູຈິດຊູຊິງແຊ້ມເຍົາວະຊົນອາຊຽນ ຄັ້ງທີ 2 (2 ຫຼຽນທອງ), ກິລາກະຕໍ້ the 2025 China-ASEAN Sepaktakraw Tournament (4 ຫຼຽນທອງ), ກິລາກາລາເຕໂດ ແຂ່ງຂັນຊິງແຊ້ມອາຊຽນ ຄັ້ງທີ 12 (2 ຫຼຽນທອງ.); ນອກນັ້ນ, ກໍໄດ້ມີການພັດທະນາບຸກຄະລາກອນກິລາ ຢູ່ພາຍໃນ ແລະ ຕ່າງປະເທດ ຜ່ານການເຂົ້າຮ່ວມກອງປະຊຸມໃຫຍ່ຂອງບັນດາ ສະຫະພັນກິລາ, ກອງປະຊຸມສໍາມະນາ ສ້າງຄວາມເຂັ້ມແຂງ ແລະ ຄວາມສາມາດນັກກິລາ ເປັນຕົ້ນ.

10) **ການບໍລິຫານ ແລະ ຄຸ້ມຄອງການສຶກສາ:** ກະຊວງສຶກສາທິການ ແລະ ກິລາ ໄດ້ຖືເອົາວຽກງານການເມືອງແນວຄິດ, ວຽກງານບໍລິຫານ ແລະ ຄຸ້ມຄອງ ຂອງຜູ້ບໍລິຫານການສຶກສາໃນແຕ່ລະຂັ້ນເປັນບັນຫາສໍາຄັນ ໂດຍໄດ້ຈັດສົ່ງຜູ້ບໍລິຫານການສຶກສາຈໍານວນໜຶ່ງໄປຮຽນທິດສະດີການເມືອງໃນລະດັບຕ່າງໆທັງພາຍໃນ ແລະ ຕ່າງປະເທດ, ໄດ້ສ້າງຄວາມເຂັ້ມແຂງວຽກງານບໍລິຫານ ແລະ ວິຊາສະເພາະໃຫ້ຜູ້ບໍລິຫານ ແລະ ພະນັກງານວິຊາການໃນຫົວຂໍ້ຕ່າງໆ ຈໍານວນໜຶ່ງ. ກະຊວງສຶກສາທິການ ແລະ ກິລາ ໄດ້ຖືເອົາການໄປຮ່ວມກອງປະຊຸມ ແລະ ສໍາມະນາຢູ່ທັງພາຍໃນ ແລະ ຕ່າງປະເທດ ເປັນກົນໄກໃນການສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ບໍລິຫານ ແລະ ພະນັກງານວິຊາການ. ຄຽງຄູ່ກັບການສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ບໍລິຫານ ແລະ ບຸກຄະລາກອນທາງການສຶກສາ, ວິທະຍາສາດ ແລະ ກິລາແລ້ວ, ກະຊວງສຶກສາທິການ ແລະ ກິລາ ຍັງໄດ້ເອົາໃຈໃສ່ສ້າງ ແລະ ປັບປຸງບັນດາກົດໝາຍ ແລະ ນິຕິກໍາຈໍານວນໜຶ່ງ, ທີ່ພົ້ນເດັ່ນແມ່ນ ສໍາເລັດ ແລະ ຮັບຮອງກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ) ໃນທ້າຍປີ 2024, ໄດ້ສໍາເລັດການຜ່ານກົດໝາຍສາມັນສຶກສາ ໃນກອງປະຊຸມສະພາແຫ່ງຊາດ ສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ໄດ້ຮັບອະນຸມັດ ແລະ ຮັບຮອງດໍາລັດວ່າດ້ວຍການທົດແທນຄູຈາກລັດຖະບານ. ນອກຈາກນັ້ນ ກໍໄດ້ມີປັບປັບຄູ່ມື, ຄໍາແນະນໍາ ແລະ ນິຕິກໍາຈໍານວນໜຶ່ງທີ່ກ່ຽວຂ້ອງກັບວຽກງານການເງິນ, ວຽກງານການຄຸ້ມຄອງໂຮງຮຽນ ແລະ ອື່ນໆ. ໄດ້ປັບປຸງລະບົບເກັບກໍາຂໍ້ມູນດ້ານການສຶກສາ, ວິທະຍາສາດ ແລະ ກິລາ ເພື່ອໃຫ້ສາມາດລາຍງານຜ່ານລະບົບ LESMIS; ໄດ້ມີການຍາດແຍ່ງການຮ່ວມມື ແລະ ການຊ່ວຍເຫຼືອຈາກ ບັນດາຄູ່ຮ່ວມພັດທະນາ ເພື່ອຈັດຕັ້ງປະຕິບັດໂຄງການ ເປັນຕົ້ນໂຄງການຊ່ວຍເຫຼືອຈາກອົງການຮ່ວມມືສາກົນເພື່ອການສຶກສາ ພາຍໃຕ້ກອງທຶນຫັນປ່ຽນການສຶກສາ ຫຼື STG, ກອງທຶນສ້າງຄວາມເຂັ້ມແຂງໃຫ້ລະບົບການສຶກສາ ຫຼື SCG, ງົບປະມານເພີ່ມເຕີມສໍາລັບໂຄງການກອງທຶນຮ່ວມມືສາກົນເພື່ອການສຶກສາໄລຍະສາມ: "ໂຄງການຮຽນຮູ້ ແລະ ຄວາມເທົ່າທຽມ" (GPEIII: LEAP) 2027-2029, ກອງທຶນຮ່ວມມືສາກົນເພື່ອການສຶກສາ ສໍາລັບການຮັບມືກັບການປ່ຽນແປງຂອງສະພາບດິນຟ້າອາກາດໃນລະບົບການສຶກສາ ແລະ ອື່ນໆ.

**ຍ້ອນຜົນສໍາເລັດຂອງການຈັດຕັ້ງປະຕິບັດບັນດາວຽກຈຸດສຸມຕ່າງໆ ຈຶ່ງເຮັດໃຫ້ຂະແໜງການສຶກສາ ແລະ ກິລາ ສາມາດບັນລຸໄດ້ 12 ຄາດໝາຍ ໃນຈໍານວນ 16 ຄາດໝາຍ ທີ່ກໍານົດໃນມະຕິສະພາແຫ່ງຊາດສະບັບເລກທີ 153/ສພຊ, ລົງວັນທີ 12 ທັນວາ 2024 ດັ່ງນີ້:**

1) ອັດຕາເຂົ້າຮຽນຂອງເດັກ 5 ປີ ເພີ່ມຈາກ 83.8% ເປັນ 84.7% (ຄາດໝາຍແມ່ນ 83%);
2) ອັດຕານັກຮຽນເຂົ້າໃໝ່ ປ.1 ທຽບໃສ່ເດັກ 6 ປີ (ອັດຕາເຂົ້າຮຽນໃໝ່ສຸດທິ) ເພີ່ມຈາກ 99.1% ເປັນ 99.3% (ຄາດໝາຍ 98%);
3) ອັດຕາປະລະ ຂັ້ນ ປ.1 ຫຼຸດລົງຈາກ 6% ເປັນ 5.9% (ຄາດໝາຍ 6%);
4) ອັດຕາເລື່ອນຊັ້ນ ປ.5 ຂຶ້ນ ມ.1 ເພີ່ມຈາກ 84.9% ເປັນ 85.6% (ຄາດໝາຍ 85%);

5) ດັດສະນີຄວາມສະເໝີພາບຍິງ-ຊາຍ ອັດຕາເລື່ອນຊັ້ນ ປ.5 ຂຶ້ນ ມ.1 ບັນລຸ 0.99 (ຄາດໝາຍ ລະຫວ່າງ 0.97-1.03);
6) ອັດຕາປະລະ ຊັ້ນມັດທະຍົມຕອນຕົ້ນ ປະຕິບັດໄດ້ເທົ່າເດີມ 12.4% (ຄາດໝາຍ 13%);
7) ປະຊາກອນໜຸ່ມ ແລະ ຜູ້ປະລະການຮຽນ ທີ່ໄດ້ບຳລຸງຜ່ານການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບ ຈຳນວນ 30,093 ຄົນ (ຄາດໝາຍ 25,000 ຄົນ);
8) ຄູຊັ້ນປະຖົມ ແລະ ມັດທະຍົມສຶກສາ ໃຫ້ໄດ້ຮັບການຝຶກອົບຮົມ ສະເລ່ຍບັນລຸໄດ້ 22.67% ຂອງຈຳນວນຄູສອນທັງໝົດ (ຄາດໝາຍບໍ່ໃຫ້ຫຼຸດ 10% ຂອງຈຳນວນຄູທັງໝົດ);
9) ນັກຮຽນທີ່ຈົບຊັ້ນມັດທະຍົມຕອນຕົ້ນ ໄດ້ເຂົ້າຮຽນຕໍ່ໃນສາຍ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ ບັນລຸໄດ້ 5.7% (ຄາດໝາຍ 3%);
10) ນັກສຶກສາທີ່ສະໝັກເຂົ້າຮຽນ ຢູ່ສະຖາບານການສຶກສາຊັ້ນສູງ ໄດ້ເຂົ້າຮຽນໃນສາຍວິທະຍາສາດທຳມະຊາດ, ເຕັກໂນໂລຊີ, ວິສະວະກຳ ແລະ ຄະນິດສາດ ຈຳນວນ 3,147 ຄົນ (ຄາດໝາຍ 2,500 ຄົນ);
11) ໄດ້ຊຸກຍູ້ ແລະ ສົ່ງເສີມການຄົ້ນຄວ້າວິທະຍາສາດ ຈຳນວນ 37 ຫົວຂໍ້;
12) ມອນຊົນທຸກເພດທຸກໄວ ເຂົ້າຮ່ວມການຫັດກາຍຍະບໍລິຫານ, ການອອກກຳລັງກາຍ ແລະ ການຫຼິ້ນກິລາກາຍຍະກຳ ປະຕິບັດໄດ້ 50%.

## 2. ຈຸດອ່ອນ ແລະ ຂໍ້ຄົງຄ້າງ

ເຖິງແມ່ນວ່າ ລັດຖະບານ ກໍຄືຜູ້ບໍລິຫານການສຶກສາແຕ່ລະຂັ້ນ ໄດ້ສົມທົບກັບອົງການປົກຄອງຂັ້ນຕ່າງໆ ລວມທັງຄູ່ຮ່ວມພັດທະນາ ສຸມຊັບພະຍາກອນທີ່ມີຢ່າງຈຳກັດເຂົ້າໃນການພັດທະນາ ແລະ ປັບປຸງວຽກງານສຶກສາ. ຜ່ານການຈັດຕັ້ງປະຕິບັດໃນສົກຮຽນ 2024-2025 ນີ້, ສັງເກດເຫັນວ່າ ຍັງມີຫຼາຍຢ່າງທີ່ເປັນສິ່ງທ້າທາຍ ແລະ ເປັນຂໍ້ຄົງຄ້າງ, ຊຶ່ງລາຍລະອຽດຂໍ້ຄົງຄ້າງໃນສົກຮຽນຜ່ານມາ ແມ່ນໄດ້ສະແດງອອກໃນຂະແໜງການຍ່ອຍຕ່າງໆ ດັ່ງນີ້:

1) **ການສຶກສາກ່ອນໄວຮຽນ:** ເຖິງວ່າການພັດທະນາການສຶກສາກ່ອນໄວຮຽນໂດຍລວມ ຈະຢູ່ໃນທ່າອ່ຽງທີ່ດີ, ແຕ່ການຂະຫຍາຍຕົວນັ້ນ ສ່ວນໃຫຍ່ແມ່ນຢູ່ໃນຕົວເມືອງ, ການປະສານງານ ແລະ ສົ່ງເສີມ ຜູ້ປົກຄອງ ແລະ ຊຸມຊົນ ປະກອບສ່ວນເຂົ້າໃນການພັດທະນາເດັກ ຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນ, ການສະໜອງສິ່ງອຳນວຍຄວາມສະດວກ ດ້ານສຸຂາພິບານ-ສຸຂະອະນາໄມ, ເຄື່ອງຫຼິ້ນ ແລະ ເຄື່ອງໃຊ້ໃນຫ້ອງຮຽນ ແລະ ນອກຫ້ອງຮຽນ ຍັງບໍ່ທັນທົ່ວເຖິງ ແລະ ພຽງພໍ;
2) **ການສຶກສາຊັ້ນປະຖົມ:** ການປະລະການຮຽນຂອງນັກຮຽນຍັງມີສູງຢູ່ບາງທ້ອງຖິ່ນ, ນັກຮຽນຍັງມີຜົນການຮຽນຕໍ່າ, ມີຫຼາຍໂຮງຮຽນຈັດການຮຽນການສອນຫ້ອງຄວບເພີ່ມຂຶ້ນ ຍ້ອນບັນຫາຂາດແຄນຄູ, ຄູສອນຈຳນວນໜຶ່ງທີ່ໄດ້ຮັບການຝຶກອົບຮົມວິທີການສອນຫຼັກສູດໃໝ່ແຕ່ຍັງສອນຮູບແບບເກົ່າ ແລະ ຜູ້ອຳນວຍການໂຮງຮຽນຈຳນວນໜຶ່ງຍັງບໍ່ເອົາໃຈໃສ່ປະຕິບັດໜ້າທີ່ຂອງຕົນໃນການບໍລິຫານເທົ່າທີ່ຄວນ ຍ້ອນວ່າຜູ້ອຳນວຍການສ່ວນຫຼາຍຍັງປະຕິບັດໜ້າທີ່ເປັນຄູສອນປະຈຳ. ຂອບເຂດການຈັດຕັ້ງປະຕິບັດໂຄງການສົ່ງເສີມອາຫານທ່ຽງໃນໂຮງຮຽນ ຍັງບໍ່ທັນທົ່ວເຖິງ ແລະ ການປະກອບສ່ວນຕໍ່ກັບວຽກງານອາຫານທ່ຽງໃນໂຮງຮຽນຍັງມີຈຳກັດ, ນັກຮຽນພິການ ທີ່ຢູ່ເຂດຫ່າງໄກສອກຫຼີກ ສ່ວນຫຼາຍ ຍັງບໍ່ໄດ້ເຂົ້າເຖິງການສຶກສາ. ຄູສອນຈຳນວນຫຼວງຫຼາຍຍັງຂາດຄວາມຮູ້ດ້ານເນື້ອໃນ ແລະ ວິທີການສອນຫຼັກສູດໃໝ່; ຜູ້ອຳນວຍການໂຮງຮຽນ ແລະ ຄູສອນ ຍັງບໍ່ເອົາໃຈໃສ່ປະຕິບັດໜ້າທີ່ຂອງຕົນ;
3) **ຊັ້ນມັດທະຍົມສຶກສາ:** ເນື່ອງຈາກໄດ້ຮັບຜົນກະທົບຈາກສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ ແລະ ການເງິນ ພາຍໃນປະເທດ ລວມທັງບັນຫາການຂາດເຂີນຄູ ຈຶ່ງເຮັດໃຫ້ໃນສົກຮຽນ 2024-2025 ຈຳນວນຫ້ອງຮຽນ ແລະ ນັກຮຽນຫຼຸດລົງ ເມື່ອທຽບໃສ່ສົກຮຽນຜ່ານມາ. ອັດຕາເຂົ້າຮຽນລວມຊັ້ນມັດທະຍົມສຶກສາຕອນຕົ້ນຫຼຸດລົງຈາກ 73.6% ມາເປັນ 72.50%, ອັດຕາປະລະການຮຽນຂອງນັກຮຽນຊັ້ນມັດທະຍົມຕອນ

ສຶກສາຕົ້ນເພີ່ມຂຶ້ນ ຈາກ 12.4% ຂຶ້ນເປັນ 12.5%, ອັດຕາເຂົ້າຮຽນລວມຊັ້ນມັດທະຍົມສຶກສາຕອນປາຍ ສະເລ່ຍທົ່ວປະເທດ ຫຼຸດລົງຈາກ 41.0% ມາເປັນ 38.4%;

4) **ການສຶກສານອກໂຮງຮຽນ:** ຄຸນນະພາບການຮຽນການສອນໃນການສຶກສານອກໂຮງຮຽນຍັງຕໍ່າ; ການເກັບກໍາຂໍ້ມູນ ແລະ ການຕິດຕາມປະເມີນຜົນການຮຽນຍັງບໍ່ເປັນລະບົບ, ການສະໜອງການສຶກສານອກໂຮງຮຽນ ຍັງບໍ່ທັນເຂົ້າເຖິງກຸ່ມເປົ້າໝາຍໄດ້ຢ່າງທົ່ວເຖິງ;

5) **ການສຶກສາຄູ:** ການເຂົ້າຮຽນຄູຫຼຸດລົງ; ການເກັບກໍາຂໍ້ມູນຄູ ຍັງບໍ່ທັນເປັນລະບົບ ແລະ ຄົບຖ້ວນ; ຍັງບໍ່ມີລະບົບການຕິດຕາມ ແລະ ປະເມີນຜົນການຮຽນຂອງນັກສຶກສາຄູ; ມາດຕະຖານດ້ານການສອນຂອງຄູຊັ້ນປະຖົມສຶກສາ ຍັງບໍ່ທັນຖືກນໍາໃຊ້ເຂົ້າໃນການປະເມີນຄູ; ລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດຢ່າງທົ່ວເຖິງ ແລະ ເປັນລະບົບທີ່ເປັນເອກະພາບໃນທົ່ວປະເທດ;

6) **ການສຶກສາສາຍອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ:** ການເຂົ້າຮຽນໃນສາຍອາຊີວະສຶກສາ ເຖິງວ່າໃນປີນີ້ມີທ່າອ່ຽງເພີ່ມຂຶ້ນເລັກໜ້ອຍ ແຕ່ກໍຍັງຖືວ່າໜ້ອຍ ເມື່ອທຽບໃສ່ໃນເມື່ອກ່ອນ. ການແນະແນວຍັງບໍ່ກວ້າງຂວາງ ແລະ ບໍ່ທັນເຂົ້າເຖິງແຕ່ລະກຸ່ມເປົ້າໝາຍ; ການຮ່ວມມືກັບສະຖານປະກອບການ ຍັງມີລັກສະນະກະແຈກກະຈາຍ, ບໍ່ລວມສູນ ແລະ ບໍ່ໄດ້ຈັດຕັ້ງປະຕິບັດໃຫ້ເປັນຮູບປະທໍາເທົ່າທີ່ຄວນ. ອຸປະກອນຮັບໃຊ້ການຮຽນການສອນທີ່ໄດ້ມາດຕະຖານ ແລະ ທັນສະໄໝ ຍັງບໍ່ພຽງພໍ ຕໍ່ການປ່ຽນແປງທາງດ້ານເຕັກໂນໂລຊີໃນໄລຍະໃໝ່;

7) **ການສຶກສາຊັ້ນສູງ:** ຫຼັກສູດການສິດສອນຈໍານວນໜຶ່ງ ຍັງບໍ່ທັນສອດຄ່ອງກັບການປ່ຽນແປງທາງດ້ານເສດຖະກິດ-ສັງຄົມໃນໄລຍະໃໝ່; ຜົນການຄົ້ນຄວ້າວິທະຍາສາດ ທີ່ດໍາເນີນຢູ່ມະຫາວິທະຍາໄລ ສ່ວນໃຫຍ່ຍັງເປັນການຄົ້ນຄວ້າ ເພື່ອຊອກຫາບັນຫາ ແຕ່ຍັງບໍ່ທັນນໍາໄປສູ່ການແກ້ໄຂບັນຫາ, ຍັງບໍ່ສາມາດນໍາໄປສູ່ການສ້າງນະວັດຕະກໍາໃໝ່ເພື່ອແກ້ໄຂບັນຫາເສດຖະກິດ-ສັງຄົມ; ຍັງຂາດກົນໄກການບໍລິຫານ-ຄຸ້ມຄອງທີ່ດີ ທີ່ຈະສົ່ງເສີມໃຫ້ເກີດການຮຽນການສອນທີ່ມີຄຸນນະພາບ. ລະບົບການຝຶກງານຂອງນັກສຶກສາ ບາງສາຂາວິຊາຍັງບໍ່ທັນມີເຄື່ອງມື ຫຼື ນິຕິກໍາໃນການຕິດຕາມນັກສຶກສາລົງຝຶກງານ ແລະ ບາງສາຂາວິຊາຍັງບໍ່ໄດ້ລົງເລິກວິຊາສະເພາະທີ່ຮຽນມາ;

8) **ວຽກງານວິທະຍາສາດ:** ການຄົ້ນຄວ້າວິທະຍາສາດ ຍັງບໍ່ທັນໄດ້ເນັ້ນໃສ່ການຄົ້ນຄວ້າຫົວຂໍ້ທີ່ເປັນບູລິມະສິດໃນການພັດທະນາເສດຖະກິດ-ສັງຄົມ ແລະ ຜົນການຄົ້ນຄວ້າທີ່ຜ່ານມາ ຍັງບໍ່ໄດ້ຖືກເຜີຍແຜ່ ແລະ ນໍາໃຊ້ເຂົ້າໃນການພັດທະນາ ນະວັດຕະກໍາໃໝ່ຕ່າງໆ;

9) **ວຽກງານກິລາ-ກາຍຍະກໍາ:** ການຊຸກຍູ້ໃນການສ້າງສວນສາທາລະນະ ສໍາລັບອອກກໍາລັງກາຍເພື່ອສຸຂະພາບ, ສະຖານທີ່ຫຼິ້ນກິລາ, ການຈັດການແຂ່ງຂັນ ແລະ ການຈັດການຮຽນການສອນ ໃນຂັ້ນບ້ານ, ເມືອງແຂວງ/ນະຄອນຫຼວງ ຍັງບໍ່ທັນໄດ້ດີ; ການຊຸກຍູ້ກິລາກາຍຍະກໍາໃນໂຮງຮຽນຍັງບໍ່ທັນເປັນຂະບວນການທີ່ກວ້າງຂວາງແຂງແຮງ, ການນໍາໃຊ້ວິທະຍາສາດການກິລາເຂົ້າໃນການພັດທະນານັກກິລາຍັງເຮັດບໍ່ໄດ້ດີເທົ່າທີ່ຄວນ ຍ້ອນປັດໄຈຫຼາຍດ້ານ ໂດຍສະເພາະແມ່ນການຕອບສະໜອງເຄື່ອງມືທີ່ທັນສະໄໝ ໃນການນໍາໃຊ້ຍັງບໍ່ພຽງພໍ; ຍັງຂາດໜ່ວຍງານການຄຸ້ມຄອງ ແລະ ນໍາໃຊ້ສະໜາມກິລາລະດັບຊາດ ແລະ ບຸກຄະລາກອນຮັບຜິດຊອບສະເພາະ;

10) **ການບໍລິຫານ ແລະ ຄຸ້ມຄອງ:** ຄວາມເປັນເຈົ້າການໃນການຈັດຕັ້ງປະຕິບັດໜ້າທີ່ຂອງຜູ້ບໍລິຫານ ແລະ ພະນັກງານຈໍານວນໜຶ່ງຍັງບໍ່ສູງ, ການຈັດຕັ້ງປະຕິບັດບັນດານິຕິກໍາທີ່ສ້າງຂຶ້ນມາ ຍັງບໍ່ເປັນຮູບປະທໍາ. ການປະສານງານກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງໃນການປັບປຸງ ແລະ ພັດທະນາລະບົບການສຶກສາ ຍັງບໍ່ໜັກແໜ້ນ. ຜູ້ບໍລິຫານການ ສຶກສາສ່ວນໃຫຍ່ຍັງບໍ່ໄດ້ຮັບການຝຶກອົບຮົມດ້ານການບໍລິຫານ ແລະ ຄຸ້ມຄອງການສຶກສາ.

## 3. ສາເຫດທີ່ພາໃຫ້ເກີດມີຈຸດອ່ອນ ແລະ ຂໍ້ຄົງຄ້າງ

ຈາກບັນຫາທີ່ກ່າວມາຂ້າງເທິງນັ້ນ, ຂະແໜງການສຶກສາ ແລະ ກິລາ ຂອງພວກເຮົາ ກໍໄດ້ສຸມທຸກຄວາມພະຍາຍາມໃນການແກ້ໄຂ, ແຕ່ການແກ້ໄຂນັ້ນ ກໍຍັງບໍ່ສາມາດແກ້ໄຂໄດ້ຢ່າງຂາດຕົວທັງໝົດ ເນື່ອງມາຈາກສາເຫດຕ່າງໆ ຊຶ່ງມີທັງສາເຫດໃນຕົວ ແລະ ນອກຕົວ ບາງຈຸດດັ່ງນີ້:

### 3.1. ສາເຫດໃນຕົວ:

1) ຄວາມເອົາໃຈໃສ່ ແລະ ຄວາມເປັນເຈົ້າການໃນການປະຕິບັດໜ້າທີ່ຂອງພະນັກງານ, ຄູສອນ ແລະ ພະນັກງານບໍລິຫານຈຳນວນໜຶ່ງ ໃນແຕ່ລະຂັ້ນ ຍັງບໍ່ສູງ;
2) ຜູ້ອຳນວຍການໂຮງຮຽນ ຍັງບໍ່ທັນເຮັດໜ້າທີ່ຂອງຕົນໄດ້ດີເທົ່າທີ່ຄວນ ອັນເນື່ອງມາຈາກ ຂາດການຝຶກອົບຮົມ ແລະ ອຳນວຍການໂຮງຮຽນຈຳນວນໜຶ່ງ ແມ່ນເຮັດໜ້າທີ່ສິດສອນເປັນຫຼັກ ຍ້ອນຂາດແຄນຄູ;
3) ການລົງຊຸກຍູ້ຕິດຕາມ ແລະ ສະໜັບສະໜູນການຮຽນການສອນ ຂອງຜູ້ບໍລິຫານການສຶກສາ ແຕ່ລະຂັ້ນ ລວມທັງ ຄະນະພັດທະນາການສຶກສາຂັ້ນບ້ານ ຍັງບໍ່ທັນເຮັດໄດ້ປົກກະຕິ ອັນເນື່ອງມາຈາກຂາດປັດໄຈອຳນວຍຄວາມສະດວກ;
4) ການປະສານງານລະຫວ່າງໂຮງຮຽນ ແລະ ຊຸມຊົນ ຫຼື ພໍ່ແມ່ນັກຮຽນຍັງບໍ່ໄດ້ດີ ແລະ ບໍ່ເປັນລະບົບຕໍ່ເນື່ອງ ເຮັດໃຫ້ບໍ່ສາມາດຕິດຕາມບັນຫາຂອງນັກຮຽນໄດ້.

### 3.2. ສາຍເຫດນອກຕົວ

1) ຄວາມຫຍຸ້ງຍາກທາງດ້ານເສດຖະກິດ ເຮັດໃຫ້ນັກຮຽນ, ລວມທັງຄູສອນ ຕ້ອງອອກຮຽນໄປຊອກວຽກເຮັດງານທຳທັງພາຍໃນ ແລະ ຕ່າງປະເທດ ເພື່ອຫາລ້ຽງຄອບຄົວ;
2) ບັນຫາປະກົດການຫຍໍ້ທໍ້ໃນສັງຄົມ: ຢາເສບຕິດ, ສານກະຕຸ້ນ, ຄວາມຕ້ອງການຂອງຕະຫຼາດແຮງງານທີ່ມີສີມືຕໍ່າ ເປັນສ່ວນໜຶ່ງທີ່ເຮັດໃຫ້ນັກຮຽນປະລະການຮຽນ;
3) ຄວາມຕ້ອງການດ້ານການສຶກສາຫຼຸດລົງ ຍ້ອນຊາວໜຸ່ມ ແລະ ຜູ້ປົກຄອງເຂົ້າໃຈວ່າ ການເຂົ້າຮຽນແມ່ນເສຍໂອກາດໃນການຫາເງິນເພື່ອສ້າງລາຍໄດ້ໃຫ້ແກ່ຄອບຄົວ;
4) ຄວາມຫຍຸ້ງຍາກດ້ານພູມສັນຖານ: ມີບາງເຂດ ໂຮງຮຽນຢູ່ໄກບ້ານ ເສັ້ນທາງຄົມມະນາຄົມຫຍຸ້ງຍາກ ເຮັດໃຫ້ການໄປຮຽນມີຄວາມຫຍຸ້ງຍາກ, ໂຮງຮຽນມັດທະຍົມບໍ່ມີຫໍພັກພຽງພໍ, ນັກຮຽນອາຍຸຍັງນ້ອຍບໍ່ສາມາດທຽວໄປຮຽນເອງໄດ້, ການດຳລົງຖິ່ນຖານກະແຈກກະຈາຍ, ນັກຮຽນຍ້າຍຖິ່ນຖານຕາມພໍ່ແມ່ຜູ້ປົກຄອງເພື່ອເຮັດການຜະລິດ;
5) ການສະໜອງໂກຕາຄູ ບໍ່ພຽງພໍກັບຄວາມຕ້ອງການໃນການຂະຫຍາຍການສະໜອງການສຶກສາ ເຮັດໃຫ້ມີຫຼາຍໂຮງຮຽນຈຳເປັນຕ້ອງສອນຫ້ອງຄວບ;
6) ການສະໜອງງົບປະມານໃຫ້ແກ່ຂະແໜງການສຶກສາ ແລະ ກິລາ ຍັງມີຈຳກັດ; ການນຳໃຊ້ງົບປະມານຈຳນວນໜຶ່ງຍັງບໍ່ໄດ້ຮັບປະສິດທິຜົນເທົ່າທີ່ຄວນ, ຂາດຄວາມປະຢັດມັດທະຍັດ ຕາມນະໂຍບາຍຂອງລັດຖະບານ.
7) ຄວາມຕື່ນຕົວ ແລະ ການມີສ່ວນຮ່ວມຂອງສັງຄົມ, ຊຸມຊົນ ແລະ ພໍ່ແມ່ຜູ້ປົກຄອງນັກຮຽນ ໃນການພັດທະນາການສຶກສາ ຍັງບໍ່ທັນສູງ.

**ຍ້ອນບັນຫາ, ສິ່ງທ້າທາຍ ແລະ ສາເຫດ ທີ່ກ່າວມາຂ້າງເທິງນັ້ນ ຈຶ່ງເຮັດໃຫ້ມີ 4 ຄາດໝາຍ ທີ່ກຳນົດໃນມະຕິສະພາແຫ່ງຊາດ ບໍ່ສາມາດບັນລຸໄດ້ຕາມແຜນ, ຊຶ່ງມີລາຍລະອຽດດັ່ງນີ້:**

1) ອັດຕາເຂົ້າຮຽນໃໝ່ລວມ ປ.5 ໄດ້ 95.5% ຊຶ່ງຫຼຸດຄາດໝາຍ 1.5% (ຄາດໝາຍ 97%);
2) ອັດຕາປະລະການຮຽນຂອງນັກຮຽນຊັ້ນປະຖົມແມ່ນ 4.6% ເກີນຄາດໝາຍ 2.6% (ຄາດໝາຍ 2%);
3) ອັດຕາຈົບຊັ້ນປະຖົມສຶກສາບັນລຸພຽງແຕ່ 93.3% ຊຶ່ງຫຼຸດຄາດໝາຍ 0.7% (ຄາດໝາຍ 94%);
4) ອັດຕາເຂົ້າຮຽນໃໝ່ລວມຂັ້ນ ມ.4 ບັນລຸພຽງແຕ່ 61.4% ຊຶ່ງຫຼຸດຄາດໝາຍ 2.6% (ຄາດໝາຍ 64%).

### 4. ບົດຮຽນທີ່ຖອດຖອນໄດ້

1) ການຮ່ວມມື ແລະ ປະສານງານກັບຂະແໜງການທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ, ຊຸມຊົນ ແລະ ພໍ່ແມ່ຜູ້ປົກຄອງນັກຮຽນ ຈະຊ່ວຍໃຫ້ອັດຕາການເຂົ້າຮຽນເພີ່ມຂຶ້ນ ແລະ ການປະລະຫຼຸດລົງ;
2) ການສົ່ງເສີມພາກເອກະຊົນລົງທຶນເຂົ້າໃນຂະແໜງການສຶກສາຢ່າງມີຈຸດສຸມ ໂດຍມີນະໂຍບາຍ ແລະ ນິຕິກຳທີ່ຈະແຈ້ງ ເໝາະສົມ ຈະຊ່ວຍເຮັດໃຫ້ການສຶກສາມີການພັດທະນາທີ່ດີຂຶ້ນ, ລວມທັງຈະຊ່ວຍຫຼຸດຜ່ອນຄ່າໃຊ້ຈ່າຍຂອງລັດຖະບານ;
3) ການຮ່ວມມືກັບພາກທຸລະກິດ ແລະ ຂະແໜງການທີ່ກ່ຽວຂ້ອງເພື່ອການພັດທະນາທັກສະສີມືໃຫ້ສອດຄ່ອງກັບຄວາມຕ້ອງການ ແລະ ການສະໜອງຂໍ້ມູນຂ່າວສານໃນການຈ້າງງານ ຈະມີຜົນກະທົບໂດຍກົງຕໍ່ການເພີ່ມອັດຕາເຂົ້າຮຽນ ໃນສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ;
4) ການຝຶກອົບຮົມຄູປະຈຳການໃນຊັ້ນປະຖົມສຶກສາໃຫ້ພຽງພໍ ໂດຍນຳໃຊ້ວິທີການທີ່ເໝາະສົມ ແລະ ຝຶກອົບຮົມຢ່າງທົ່ວເຖິງ ຈະຊ່ວຍປັບປຸງຜົນການຮຽນຂອງນັກຮຽນ;
5) ການຄຸ້ມຄອງບໍລິຫານໂຮງຮຽນ, ການຕິດຕາມ ຊຸກຍູ້ ແລະ ປະເມີນການສອນຂອງຄູທີ່ເຂັ້ມແຂງຂອງຜູ້ອຳນວຍການໂຮງຮຽນ ແລະ ຜູ້ເຮັດວຽກງານສຶກສານິເທດ ຈະເຮັດໃຫ້ຜົນການຮຽນຂອງນັກຮຽນດີຂຶ້ນ;
6) ເຖິງວ່າຈຳນວນຫ້ອງຄວບກວມອັດຕາສ່ວນທີ່ສູງ, ແຕ່ຖ້າພວກເຮົາຄັດຈ້ອນເນື້ອໃນຂອງບົດສອນສຳລັບຫ້ອງຄວບໃຫ້ສັ້ນລົງ ແລະ ໃຫ້ການຝຶກອົບຮົມຄູທີ່ພຽງພໍຈະຊ່ວຍປັບປຸງຄຸນນະພາບການສອນຫ້ອງຄວບໃຫ້ດີຂຶ້ນ;
7) ເຖິງວ່າຈຳນວນຄູສອນໄດ້ຫຼຸດລົງ, ແຕ່ຖ້າຫາກມີການສັບຊ້ອນ ແລະ ນຳໃຊ້ໃຫ້ຖືກກັບນິຕິກຳທີ່ກຳນົດ ກໍຈະຊ່ວຍແກ້ໄຂບັນຫາການຂາດແຄນຄູໃນບາງຂົງເຂດ;
8) ການເຕົ້າໂຮມໂຮງຮຽນທີ່ມີນັກຮຽນຈຳນວນໜ້ອຍ ແລະ ໂຮງຮຽນທີ່ຂາດເຂີນຄູ ເຂົ້າກັບໂຮງຮຽນທີ່ໃກ້ຄຽງຈະຊ່ວຍແກ້ໄຂບັນຫາການຂາດແຄນຄູ ແລະ ຈະຊ່ວຍໃຫ້ໂຮງຮຽນມີຄວາມເຂັ້ມແຂງຂຶ້ນ;
9) ການຈັດສັນງົບປະມານເຂົ້າໃນວຽກງານທີ່ເປັນບຸລິມະສິດ ຈະເພີ່ມປະສິດທິພາບ ໃນການໃຊ້ຈ່າຍງົບປະມານທີ່ມີຈຳກັດ.

## II. ທິດທາງແຜນການສຳລັບສົກຮຽນ 2025-2026

### 1. ທິດທາງລວມ

1) ສືບຕໍ່ສົ່ງເສີມໃຫ້ເດັກໄດ້ຮັບການເບິ່ງແຍງລ້ຽງດູ, ມີສຸຂະພາບ ແລະ ໂພຊະນາການທີ່ດີ ແລະ ພັດທະນາການຕາມກຸ່ມອາຍຸພ້ອມທັງມີທັກສະພາສາ, ຄວາມປະພຶດ, ຄຸນສົມບັດ ແລະ ຄວາມພ້ອມເພື່ອເຂົ້າຮຽນ ປ.1;
2) ສືບຕໍ່ຮັບປະກັນການສຶກສາຂັ້ນພື້ນຖານໃຫ້ມີຄຸນນະພາບສູງຂຶ້ນ ໂດຍສຸມໃສ່ປັບປຸງ ແລະ ພັດທະນາການຮຽນຮູ້ຂັ້ນພື້ນຖານ ເພື່ອເຮັດໃຫ້ສັດສ່ວນເດັກນ້ອຍທີ່ຮຽນຈົບແຕ່ລະຂັ້ນຮຽນມີຄວາມຮູ້ ຕາມມາດຕະຖານຂອງຫຼັກສູດຫຼາຍຂຶ້ນ, ພ້ອມທັງກະກຽມປັບປຸງລະບົບການສຶກສາສາຍສາມັນຈາກ 5-4-3 ເປັນ 6-3-3;
3) ສືບຕໍ່ຊຸກຍູ້, ສົ່ງເສີມ ການເຂົ້າຮຽນໃນທຸກຊັ້ນທຸກສາຍ, ພ້ອມທັງສຸມໃສ່ແກ້ໄຂບັນຫາການປະລະການຮຽນໃນແຕ່ລະຂັ້ນ, ແຕ່ລະຊັ້ນຮຽນ;
4) ສືບຕໍ່ສຸມໃສ່ການສ້າງກຳລັງແຮງງານທີ່ມີຄຸນນະພາບ ພ້ອມທັງປັບປຸງວິທີການສະໜອງການສຶກສາດ້ວຍຫຼາກຫຼາຍຮູບແບບ;
5) ສືບຕໍ່ສົ່ງເສີມການຄົ້ນຄວ້າວິທະຍາສາດ ແລະ ສ້າງ ນະວັດຕະກຳໃໝ່ໆ ເພື່ອຮັບໃຊ້ການພັດທະນາເສດຖະກິດ-ສັງຄົມ;
6) ສືບຕໍ່ສົ່ງເສີມການອອກກຳລັງກາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ກິລາອາຊີບ;

7) ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການບໍລິຫານ-ຄຸ້ມຄອງການສຶກສາ ໂດຍສະເພາະແມ່ນການແກ້ໄຂບັນຫາຂາດແຄນຄູ, ປັບປຸງປະສິດທິພາບ ແລະ ປະສິດທິຜົນໃນການຄຸ້ມຄອງ ແລະ ນໍາໃຊ້ຊັບພະຍາກອນທີ່ມີຈໍາກັດ

## 2. ຄາດໝາຍຫຼັກ

1) ອັດຕາການເຂົ້າຮຽນຂອງເດັກ 5 ປີ ໃນຊັ້ນການສຶກສາກ່ອນໄວຮຽນ ໃຫ້ບັນລຸໄດ້ 85.8%;
2) ອັດຕາເຂົ້າໃໝ່ສຸດທິຂັ້ນ ປ.1 ໃນຊັ້ນປະຖົມສຶກສາ ໃຫ້ບັນລຸໄດ້ 99.4%;
3) ອັດຕາປະລະຂອງນັກຮຽນຊັ້ນປະຖົມສຶກສາ ບໍ່ໃຫ້ເກີນ 4%;
4) ອັດຕາເລື່ອນຊັ້ນຂອງນັກຮຽນຈົບ ປ 5 ຂຶ້ນ ມ 1 ໃຫ້ບັນລຸໄດ້ 89.5%;
5) ອັດຕາເຂົ້າຮຽນລວມ ຊັ້ນມັດທະຍົມຕອນຕົ້ນ ໃຫ້ບັນລຸໄດ້ 72.9%;
6) ອັດຕາປະລະຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນ ບໍ່ໃຫ້ເກີນ 11.7%;
7) ຄູປະຈໍາການ ແລະ ຜູ້ເຮັດວຽກສຶກສານິເທດ ໃນຊັ້ນການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ ໄດ້ຮັບການພັດທະນາວິຊາຊີບແບບຕໍ່ເນື່ອງ ສະເລ່ຍ 20% ຕໍ່ປີ ສໍາລັບຄູປະຈໍາການ ແລະ 10% ສໍາລັບຜູ້ເຮັດວຽກສຶກສານິເທດ;
8) ປະຊາກອນໜຸ່ມ ແລະ ຜູ້ປະລະການຮຽນ ໃຫ້ໄດ້ບໍາລຸງຜ່ານການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບ (ກສນ) ບໍ່ໃຫ້ຫຼຸດ 30,000 ຄົນ ໃນແຕ່ລະປີ;
9) ຈໍານວນນັກສຶກສາທີ່ຈົບອາຊີວະສຶກສາ ແລະ ອົບຮົມວິຊາຊີບ ຕາມຫຼັກສູດທາງການ ບໍ່ໃຫ້ຫຼຸດ 10,000 ຄົນໃນແຕ່ລະປີ (ທັງໝົດ 50,000 ຄົນ ພາຍໃນປີ 2030);
10) ຫຼັກສູດການຮຽນ-ການສອນ ທີ່ເປັນຫຼັກສູດສາກົນ ໃນຊັ້ນການສຶກສາຊັ້ນສູງ ມີຈໍານວນເພີ່ມຂຶ້ນເພື່ອເຊື່ອມໂຍງກັບພາກພື້ນ ແລະ ສາກົນໃຫ້ບັນລຸ 10 (ເພີ່ມຂຶ້ນ 2);
11) ຈໍານວນຫົວຂໍ້ຄົ້ນຄວ້າວິທະຍາສາດທີ່ນໍາໃຊ້ເງິນກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ຕາມ 24 ຂົງເຂດບູລິມະສິດເພື່ອຮັບໃຊ້ ແຜນພັດທະນາເສດຖະກິດ-ສັງຄົມ 2026-2030 ໃຫ້ໄດ້ຢ່າງໜ້ອຍ 45 ຫົວຂໍ້ໃນແຕ່ລະປີ;
12) ຈໍານວນກໍາມະການຕັດສິນໃນລະດັບອາຊຽນ, ອາຊີ ແລະ ລະດັບສາກົນ ໃຫ້ບັນລຸ 6 ຄົນໃນແຕ່ລະປີ;
13) ອັດຕາມວນຊົນທຸກເພດ, ທຸກໄວ ເຂົ້າຮ່ວມຫັດກາຍຍະບໍລິຫານ, ອອກກໍາລັງກາຍ ແລະ ຫຼິ້ນກິລາ-ກາຍຍະກໍາ ຢ່າງສະໝໍ່າສະເໝີ ໃຫ້ບັນລຸ 5% ຕໍ່ປີ ຂອງປະຊາກອນທົ່ວປະເທດທີ່ມີເກນອາຍຸ 3 ປີຂຶ້ນໄປ.

## 3. ວຽກງານຈຸດສຸມ

### 1) ການສຶກສາກ່ອນໄວຮຽນ:

- ສືບຕໍ່ຂະຫຍາຍການສຶກສາກ່ອນໄວຮຽນໃຫ້ກວ້າງຂວາງ ໂດຍສະເພາະການກຽມຄວາມພ້ອມ 1 ປີ ກ່ອນເຂົ້າຮຽນຊັ້ນປະຖົມ, ພ້ອມທັງເອົາໃຈໃສ່ສະໜອງອຸປະກອນຮັບໃຊ້ການຫຼິ້ນ ແລະ ການຈັດກິດຈະກໍາຂອງເດັກ;
- ຜັນຂະຫຍາຍການຈັດຕັ້ງປະຕິບັດມາດຕະຖານຂັ້ນພື້ນຖານສໍາລັບການສຶກສາກ່ອນໄວຮຽນ;
- ສ້າງນິຕິກໍາເພີ່ມເຕີມ ເພື່ອເປັນບ່ອນອີງໃນການສົ່ງເສີມບຸກຄົນ, ນິຕິບຸກຄົນ ທັງພາກລັດ ແລະ ພາກເອກະຊົນໃຫ້ມີສ່ວນຮ່ວມໃນການສະໜອງການສຶກສາກ່ອນໄວຮຽນໃຫ້ກວ້າງຂວາງ;

### 2) ການສຶກສາຊັ້ນປະຖົມສຶກສາ:

- ເກັບກໍາຂໍ້ມູນກ່ຽວກັບໂຮງຮຽນທີ່ມີຈໍານວນນັກຮຽນໜ້ອຍ ແລະ ຈໍານວນໂຮງຮຽນທີ່ຂາດເຂີນຄູ ເພື່ອສ້າງແຜນທີ່ການສຶກສາຄືນໃໝ່ ເພື່ອເປັນແນວທາງໃນການໂຮມໂຮງຮຽນດັ່ງກ່າວ ເຂົ້າກັບໂຮງຮຽນທີ່ໃກ້ຄຽງແນໃສ່ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການບໍລິຫານ ແລະ ຄຸ້ມຄອງການຮຽນການສອນ;

- ແກ້ໄຂບັນຫາການປະລະການຮຽນຂອງນັກຮຽນ ດ້ວຍການສ້າງໂຄງການນຳນ້ອງກັບຄືນສູ່ໂຮງຮຽນ ໂດຍມອບໝາຍໃຫ້ ອຳນວຍການໂຮງຮຽນແຕ່ລະແຫ່ງເກັບກຳລາຍລະອຽດຂອງນັກຮຽນທີ່ປະລະການຮຽນ ເພື່ອນຳກັບຄືນສູ່ໂຮງຮຽນ, ໃຫ້ການຊ່ວຍເຫຼືອດ້ານການຮຽນ ຫຼື ສິ່ງຕໍ່ໃຫ້ ການສຶກສານອກໂຮງຮຽນ ເພື່ອສະໜອງການສຶກສາແບບຍືດຢຸ່ນ ໃຫ້ແກ່ພວກກ່ຽວ;
- ກະກຽມຄວາມພ້ອມໃນການຫັນປ່ຽນລະບົບການສຶກສາສາຍສາມັນຈາກ 5+4+3 ເປັນ 6+3+3;
- ສືບຕໍ່ສຸມໃສ່ປັບປຸງຄຸນນະພາບການສິດສອນ ໂດຍສະເພາະໃນການສຶກສາຂັ້ນພື້ນຖານ ຜ່ານການສ້າງຄວາມເຂັ້ມແຂງໃຫ້ແກ່ຄູສອນ, ນິເທດການສິດສອນ, ການປັບປຸງຄູ່ມືຮັບໃຊ້ການສິດສອນ ແລະ ການສະໜອງສື່ການຮຽນ-ການສອນ ທີ່ມີຄຸນນະພາບ ລວມທັງການສຶກສາຮຽນຮ່ວມ;
- ຂະຫຍາຍການຈັດຕັ້ງປະຕິບັດ ມາດຕະຖານຄຸນນະພາບຂັ້ນພື້ນຖານ (ມຄພ) ສຳລັບ ຊັ້ນປະຖົມສຶກສາ ໃຫ້ເປັນເຄື່ອງມືໃນການປະເມີນການຮຽນຂອງນັກຮຽນປະຈຳປີ;
- ປັບປຸງວິທີການສິດສອນໃນຊັ້ນປະຖົມຂັ້ນຕົ້ນ ໂດຍເນັ້ນໃສ່ການສອນທັກສະການເວົ້າ, ການອ່ານ, ການຂຽນພາສາລາວ ແລະ ທັກສະການຄິດໄລ່ເລກຂັ້ນພື້ນຖານ; ຫັນເອົາການສິດສອນວິຊາອື່ນໆ ເປັນກິດຈະກຳນອກຫ້ອງຮຽນ ແລະ ການຮຽນຮູ້ຜ່ານການປະຕິບັດຕົວຈິງ;
- ສືບຕໍ່ສົ່ງເສີມວຽກງານນ້ຳ, ສຸຂະອະນາໄມ, ສຸຂະພາບໂພຊະນາການ, ສະພາບແວດລ້ອມໃນໂຮງຮຽນ ລວມທັງວຽກງານໄພພິບັດຕ່າງໆ;
- ສືບຕໍ່ສົ່ງເສີມ ແລະ ສະໜອງອາຫານທ່ຽງ ສຳລັບນັກຮຽນຜູ້ທຸກຍາກ, ດ້ອຍໂອກາດ, ຜູ້ພິການ ແລະ ເຂດຫ່າງໄກສອກຫຼີກທຸລະກັນດານ ຢ່າງມີຈຸດສຸມ, ພ້ອມທັງ ເຜີຍແຜ່ການສຶກສາຮຽນຮ່ວມໃຫ້ກວ້າງຂວາງ;

3) **ການສຶກສາຊັ້ນມັດທະຍົມສຶກສາ:**

- ປັບປຸງນິຕິກຳໃນການຄຸ້ມຄອງບໍລິຫານໂຮງຮຽນມັດທະຍົມ ລວມທັງໂຮງຮຽນກິນນອນຊົນເຜົ່າ,
- ແກ້ໄຂບັນຫາການປະລະການຮຽນຂອງນັກຮຽນ ດ້ວຍການສ້າງໂຄງການນຳນ້ອງກັບຄືນສູ່ໂຮງຮຽນ ໂດຍມອບໝາຍໃຫ້ ອຳນວຍການໂຮງຮຽນແຕ່ລະແຫ່ງເກັບກຳລາຍລະອຽດຂອງນັກຮຽນທີ່ປະລະການຮຽນ ເພື່ອນຳກັບຄືນສູ່ໂຮງຮຽນ, ໃຫ້ການຊ່ວຍເຫຼືອດ້ານການຮຽນ ຫຼື ສົ່ງຕໍ່ໃຫ້ ການສຶກສານອກໂຮງຮຽນ ເພື່ອສະໜອງການບຳລຸງ ແລະ ຍົກລະດັບໃຫ້ພວກກ່ຽວ;
- ຝຶກອົບຮົມ ແລະ ຍົກລະດັບໃຫ້ແກ່ຄູສອນດ້ານຄວາມຮູ້ລາຍວິຊາ, ທັກສະການສອນ, ການນຳໃຊ້ເຄື່ອງທົດລອງວິທະຍາສາດ, ທັດສະນະຄະຕິ ແລະ ຈັນຍາບັນຂອງຄູ ລວມທັງ ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານນິເທດພາຍໃນ;
- ສ້າງຂີດຄວາມສາມາດໃຫ້ແກ່ອຳນວຍການໂຮງຮຽນໃນການຄຸ້ມຄອງໂຮງຮຽນ ແລະ ຄຸ້ມຄອງການຮຽນການສອນ ເພື່ອພັດທະນາໂຮງຮຽນຕົວແບບຄຸນນະພາບຂັ້ນຕາແສງ ແລະ ຂັ້ນເມືອງ/ນະຄອນ;
- ສືບຕໍ່ຈັດການຮຽນການສອນຫຼັກສູດສາມັນວິຊາຊີບໃຫ້ແກ່ໂຮງຮຽນຊົນເຜົ່າ ແລະ ໂຮງຮຽນສາມັນທີ່ມີເງື່ອນໄຂໃຫ້ກວ້າງຂວາງຢ່າງມີຈຸດສຸມ ໃນຮູບແບບຄູ່ຂະໜານ ແລະ ແບບພັກສິ້ນປີຮຽນ;
- ສືບຕໍ່ການຄົ້ນຄວ້າ, ວິໄຈ ສຶກສາຄວາມເປັນໄປໄດ້ກະແສການເຂົ້າຮຽນຕໍ່ໃນຊັ້ນມັດທະຍົມສຶກສາຕອນປາຍ ແລະ ວິຊາຊີບ.

4) **ການສຶກສານອກໂຮງຮຽນ:**

- ສືບຕໍ່ຈັດການຮຽນການສອນໃຫ້ແກ່ຊາວໜຸ່ມ ແລະ ຜູ້ໃຫຍ່ໃນກຸ່ມເປົ້າໝາຍ, ລວມທັງຜູ້ທີ່ປະລະການຮຽນຈາກສາຍສາມັນສຶກສາດ້ວຍຫຼາຍຊ່ອງທາງ (ຮຽນເປັນໂມໂດນ, ຮຽນດ້ວຍຕົນເອງ, ຮຽນແບບທາງໄກ, ແບບເຊິ່ງໜ້າເຕັມເວລາ ແລະ ບໍ່ເຕັມເວລາ ລວມທັງການນຳໃຊ້ດີຈີຕອນເຂົ້າໃນການຈັດການຮຽນການສອນໃຫ້ຫຼາກຫຼາຍ);

- ສືບຕໍ່ສະໜອງການຝຶກອົບຮົມວິຊາຊີບຂັ້ນພື້ນຖານໃຫ້ແກ່ຊາວໜຸ່ມໃນຫົວຂໍ້ຕ່າງໆ ຕາມຄວາມຕ້ອງການ ແລະ ທ່າແຮງຂອງແຕ່ລະທ້ອງຖິ່ນ ຕິດພັນກັບການສ້າງເປັນຜະລິດຕະພັນຂອງທ້ອງຖິ່ນ;
- ສືບຕໍ່ປະສານງານ ແລະ ຮ່ວມມືກັບບັນດາຜູ້ໃຫ້ທຶນ ແລະ ຂະແໜງການທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດແຜນງານຮຽນຮູ້ຕະຫຼອດຊີວິດໃຫ້ເປັນຮູບປະທຳ ລວມທັງໂຄງການລິເລີ່ມການສ້າງເມືອງແຫ່ງການຮຽນຮູ້ ແລະ ສູນການຮຽນຮູ້ຂອງຊຸມຊົນໃຫ້ເຂັ້ມແຂງ;

5) **ການສຶກສາຄູ:**

- ນຳໃຊ້ ICT ແລະ AI ເຂົ້າໃນການກໍ່ສ້າງ, ພັດທະນາ ແລະ ຝຶກອົບຮົມຄູປະຈຳການ ເພື່ອໃຫ້ຄູສາມາດນຳໃຊ້ເທັກໂນໂລຊີດັ່ງກ່າວ ເຂົ້າຊ່ວຍໃນການສິດສອນ;
- ເອົາໃຈໃສ່ກໍ່ສ້າງ, ຍົກລະດັບ ແລະ ຝຶກອົບຮົມຄູສອນໃຫ້ໄດ້ມາດຕະຖານ;
- ສ້າງຄວາມເຂັ້ມແຂງໃຫ້ແກ່ໂຮງຮຽນສາທິດ ເພື່ອໃຫ້ໂຮງຮຽນສາທິດກາຍເປັນໂຮງຮຽນຕົວແບບດ້ານການສິດສອນ;
- ກຳນົດມາດຕະການ ແລະ ຮູບແບບວິທີການທີ່ຫຼາກຫຼາຍເໝາະສົມໃນການລະດົມຂົນຂວາຍດຶງດູດເອົານັກຮຽນມາຮຽນ ແລະ ພະນັກງານມາຮຽນຄູຕາມແຜນຄວາມຕ້ອງແຕ່ລະປີ.
- ເກັບກຳຂໍ້ມູນຄູສອນທີ່ບໍ່ໄດ້ຜ່ານວິຊາຄູ, ຄົ້ນຄວ້ານິຕິກຳ ແລະ ພັດທະນາຫຼັກສູດຝຶກອົບຮົມວິຊາຄູ ສຳລັບຄູທີ່ບໍ່ໄດ້ຜ່ານການຮຽນວິຊາຄູ;
- ກຳນົດແນວທາງ, ກົນໄກ, ຮູບແບບ ແລະ ວິທີການຈັດຕັ້ງປະຕິບັດການພັດທະນາວິຊາຊີບຄູແບບຕໍ່ເນື່ອງໃຫ້ເປັນລະບົບ.

6) **ການສຶກສາສາຍອາຊີວະສຶກສາ:**

- ສືບຕໍ່ຄົ້ນຄວ້າ ຮູບແບບ ແລະ ວິທີການ ໃນການດຶງດູດນັກຮຽນເຂົ້າຮຽນໃນ ດ້ວຍຫຼາກຫຼາຍຮູບແບບ, ຫຼາຍທາງເລືອກ ແລະ ຫຼາຍລະດັບ ທີ່ຮັບປະກັນຄຸນນະພາບຕາມມາດຕະຖານຂອງຫຼັກສູດ;
- ເຜີຍແຜ່ຫຼັກສູດທີ່ປັບປຸງໃໝ່ ເຂົ້າໃນການຮຽນການສອນແຕ່ລະສາຂາອາຊີບໃຫ້ມີຜົນສຳເລັດກົງກັບຄວາມຕ້ອງການຂອງສັງຄົມ;
- ສ້າງໃໝ່ ແລະ ປັບປຸງ ຫຼື ດັດປັບຫຼັກສູດທີ່ມີຢູ່ໃຫ້ຕອບສະໜອງໄດ້ຄວາມຕ້ອງການສີມືແຮງງານໃນໄລຍະໃໝ່ ເພື່ອດຶງດູດໃຫ້ນັກຮຽນສົນໃຈເຂົ້າຮຽນຫຼາຍຂຶ້ນ;
- ເອົາໃຈໃສ່ເຮັດການແນະແນວໃຫ້ກວ້າງຂວາງ ແລະ ເຂົ້າເຖິງເປົ້າໝາຍ;
- ຈັດຝຶກອົບຮົມ ວິຊາຊີບ ຂັ້ນພື້ນຖານ ລະດັບ 1 ໃນສາຂາຕ່າງໆ ທີ່ໄດ້ປະເມີນຄວາມຕ້ອງການການຝຶກອົບຮົມໃຫ້ແກ່ໄວໜຸ່ມຜູ້ດ້ອຍໂອກາດ ແລະ ຜູ້ປະລະການຮຽນ ໂດຍການສະໜັບສະໜູນຈາກຄູ່ຮ່ວມພັດທະນາ.

7) **ການສຶກສາຊັ້ນສູງ:**

- ສືບຕໍ່ຄົ້ນຄວ້າ ຮູບແບບ ແລະ ວິທີການ ໃນການດຶງດູດນັກຮຽນເຂົ້າຮຽນໃນ ດ້ວຍຫຼາກຫຼາຍຮູບແບບ, ຫຼາຍທາງເລືອກ ແລະ ຫຼາຍລະດັບ ທີ່ຮັບປະກັນຄຸນນະພາບຕາມມາດຕະຖານຂອງຫຼັກສູດ;
- ປັບປຸງ ຫຼື ດັດປັບຫຼັກສູດທີ່ນັກຮຽນບໍ່ສົນໃຈຮຽນ ໃຫ້ສອດຄ່ອງກັບຄວາມຕ້ອງການໃນການພັດທະນາໃນໄລຍະໃໝ່ ເພື່ອດຶງດູດໃຫ້ນັກຮຽນສົນໃຈເຂົ້າຮຽນຫຼາຍຂຶ້ນ;
- ເອົາໃຈໃສ່ເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບຫຼັກສູດການຮຽນການສອນທີ່ມີໃນມະຫາວິທະຍາໄລ ເພື່ອໃຫ້ນັກຮຽນທີ່ຈົບມັດທະຍົມຕອນປາຍໄດ້ຮັບຮູ້ຢ່າງທົ່ວເຖິງ;
- ສືບຕໍ່ຂະຫຍາຍຫຼັກສູດປະລິນຍາໂທ, ປະລິນຍາເອກຕາມທ່າແຮງຂອງມະຫາວິທະຍາໄລ, ລວມທັງຂະຫຍາຍການຮ່ວມມືກັບສະຖາບັນການສຶກສາໃນພາກພື້ນ ແລະ ສາກົນເພື່ອພັດທະນາຫຼັກສູດນາໆຊາດຕາມຄວາມສາມາດຂອງມະຫາວິທະຍາໄລ;

- ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ຄູອາຈານ ແລະ ນັກຄົ້ນຄວ້າຂອງມະຫາວິທະຍາໄລ ໄດ້ເຮັດການຄົ້ນຄວ້າ ແລະ ບໍລິການດ້ານວິຊາການໃຫ້ແກ່ສັງຄົມໃຫ້ຫຼາຍຂຶ້ນ ເພື່ອສ້າງລາຍຮັບໃຫ້ແກ່ມະຫາວິທະຍາໄລ;

**8) ວຽກງານວິທະຍາສາດ:**

- ກະກຽມສະເຫຼີມສະຫຼອງວັນວິທະຍາສາດແຫ່ງຊາດ ຕິດພັນກັບ ການສະເຫຼີມສະຫຼອງ ວັນສະຖາປະນາ ສປປ ລາວ ຄົບຮອບ 50 ປີ;
- ສຸມໃສ່ການຄົ້ນຄວ້າວິທະຍາສາດ ໃນຫົວຂໍ້ທີ່ເປັນທ່າແຮງໃນການພັດທະນານະວັດຕະກຳ ເພື່ອຮັບໃຊ້ການພັດທະນາເສດຖະກິດ-ສັງຄົມ ໃນໄລຍະໃໝ່;

**9) ວຽກງານກິລາ-ກາຍຍະກຳ:**

- ສືບຕໍ່ຈັດຕັ້ງປະຕິບັດໂຄງການປັບປຸງສະໜາມກິລາເຈົ້າອານຸວົງໃຫ້ສຳເລັດ;
- ກະກຽມຈັດງານມະຫາກຳກິລາຄົນພິການແຫ່ງຊາດ ຄັ້ງທີ 4 ປີ 2025; ກະກຽມເຂົ້າຮ່ວມງານມະຫາກຳກິລາຊີເກມ ຄັ້ງທີ 33 ທີ່ຣາຊອານາຈັກໄທ ແລະ ກະກຽມຈັດການແຂ່ງຂັນງານມະຫະກຳກິລາແຫ່ງຊາດ ຄັ້ງທີ 12 ທີ່ນະຄອນຫຼວງວຽງຈັນເປັນເຈົ້າພາບ;
- ສ້າງໂຄງການຄົ້ນຫາເດັກຜູ້ທີ່ມີພອນສະຫວັນທາງດ້ານກິລາ ເພື່ອນຳມາກໍ່ສ້າງ ແລະ ສ້າງເງື່ອນໄຂໃຫ້ພວກກ່ຽວໄດ້ນຳໃຊ້ຄວາມສາມາດບົ່ມຊ້ອນທີ່ມີໄດ້ຢ່າງເຕັມສ່ວນ;
- ສືບຕໍ່ສົ່ງເສີມການອອກກຳລັງກາຍເພື່ອສຸຂະພາບໃຫ້ກວ້າງຂວາງ;

**10) ວຽກງານບໍລິຫານ ແລະ ຄຸ້ມຄອງ:**

- ສ້າງຂີດຄວາມສາມາດ ແລະ ຍົກລະດັບໃຫ້ຜູ້ບໍລິຫານການສຶກສາ, ວິທະຍາສາດ ແລະ ກິລາ ທຸກຂັ້ນ ໃນຫົວຂໍ້ຕ່າງໆເຊັ່ນ: ທິດສະດີການເມືອງ, ການບໍລິຫານ ແລະ ຄຸ້ມຄອງ, ພາວະຜູ້ນຳ, ການນຳໃຊ້ ເທັກໂນໂລຊີ ທີ່ທັນສະໄໝ ລວມທັງ AI ເຂົ້າໃນການບໍລິຫານ ແລະ ຄຸ້ມຄອງວຽກງານທີ່ຕົນຮັບຜິດຊອບ;
- ສືບຕໍ່ປັບປຸງລະບົບການຄຸ້ມຄອງຂໍ້ມູນຂ່າວສານ, ການວາງແຜນ, ການເງິນ ແລະ ການຕິດຕາມ - ປະເມີນຜົນ;
- ຈັດສັນງົບປະມານໃສ່ໜ້າວຽກທີ່ເປັນບູລິມະສິດ ກິດຈະກຳ ຕົ້ນຕໍ, ຈຳເປັນ ແລະ ຮີບດ່ວນ ໃຫ້ບັນລຸຄາດໝາຍ ຕົວຊີ້ວັດ ທີ່ໄດ້ກຳນົດໄວ້ໃນແຜນພັດທະນາການສຶກສາ, ວິທະຍາສາດ ແລະ ກິລາ ຢ່າງມີຈຸດສຸມໂດຍສະເພາະການແກ້ໄຂບັນຫາການປະລະການຮຽນ ແລະ ການປັບປຸງຄຸນນະພາບການສຶກສາ, ນຳສະເໜີ ຄະນະລັດຖະບານ ພິຈາລະນາຂໍອະນຸມັດ ເພີ່ມເງິນອຸດໜູນ ເບ້ຍລ້ຽງນັກຮຽນ ນັກສຶກສາ ທຸກຂັ້ນ ທຸກສາຍ ແລະ ປັບປຸງເພີ່ມອັດຕາການຄິດໄລ່ເງິນອາຫານທ່ຽງໃນໂຮງຮຽນ ຕາມແຜນງົບປະມານທີ່ໄດ້ຮັບການຈັດສັນຕົວເລກຈາກ ກະຊວງການເງິນ.
- ປັບປຸງກົງຈັກການຈັດຕັ້ງຂອງກະຊວງ ແລະ ທ້ອງຖິ່ນ ເພື່ອໃຫ້ສອດຄ່ອງກັບກົງຈັກຂອງລັດຖະບານ, ພ້ອມທັງເອົາໃຈໃສ່ສ້າງບຸກຄະລາກອນໃຫ້ມີຄວາມຊຳນານງານສະເພາະດ້ານ ຕາມພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງແຕ່ລະຕຳແໜ່ງງານ;
- ປັບປຸງນິຕິກຳຕ່າງໆ ທີ່ເຫັນວ່າບໍ່ສອດຄ່ອງ ແລະ ເປັນສິ່ງກີດຂວາງໃນການພັດທະນາການສຶກສາ, ວິທະຍາສາດ ແລະ ກິລາ ໃນໄລຍະໃໝ່, ລວມທັງນິຕິກຳ ໃນການບັນຈຸ, ສັບຊ້ອນ ແລະ ຄຸ້ມຄອງຄູສອນ;
- ເພີ່ມທະວີການໂຄສະນາວຽກງານສຶກສາ, ວິທະຍາສາດ ແລະ ກິລາ, ການຈັດຕັ້ງປະຕິບັດກົດໝາຍການສຶກສາ (ສະບັບປັບປຸງ), ກົດໝາຍວ່າດ້ວຍສາມັນສຶກສາ ແລະ ນິຕິກຳຕ່າງໆ ໃຫ້ມີຫຼາຍຮູບຫຼາຍສີ ໃຫ້ທົ່ວເຖິງທຸກກຸ່ມເປົ້າໝາຍ ລວມທັງການປັບປຸງ ແລະ ນຳໃຊ້ເວບໄຊຂອງກະຊວງສຶກສາທິການ ແລະ ກິລາ
- ເຊື່ອມສານວຽກງານປ້ອງກັນ ແລະ ຮັບມືກັບຄວາມສ່ຽງຈາກໄພພິບັດ, ການປ່ຽນແປງດິນຟ້າອາກາດ, ວຽກງານຄວາມສະເໝີພາບຍິງ-ຊາຍ ແລະ ວຽກງານ ແມ່ ແລະ ເດັກ ໃນຂະແໜງສຶກສາ, ວິທະຍາສາດ ແລະ ກິລາ;

## 4. ສະຖິຕິ ແລະ ຂໍ້ມູນດ້ານການສຶກສາສາຍສາມັນສຶກສາ ລະຫວ່າງສົກຮຽນ 2023-2024 ແລະ 2024-2025

### ຕາຕະລາງທີ 1: ຈຳນວນຫ້ອງຮຽນ, ໂຮງຮຽນ, ຄູສອນ ແລະ ນັກຮຽນ (ທັງພາກລັດ ແລະ ເອກະຊົນ)

| ລ/ດ | | 2023-2024 | | | | 2024-2025 | | | | ສົມທຽບ 2 ສົກຮຽນ (ລະຫວ່າງ 2024-2025 ແລະ 2023-2024) | | | |
|---|---|---|---|---|---|---|---|---|---|---|---|---|---|
| | | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ | ຈຳນວນ ຫ້ອງຮຽນ | ຈຳນວນ ໂຮງຮຽນ | ຈຳນວນຄູ ສອນ | ຈຳນວນ ນັກຮຽນ |
| 1 | ລ້ຽງເດັກ | 1,081 | - | - | 17,051 | 1,139 | | | 18,229 | 58 | - | - | 1,178 |
| 2 | ອະນຸບານ | 7,461 | 3,424 | 11,231 | 185,329 | 7,510 | 3,389 | 13,273 | 188,497 | 49 | -35 | 2,042 | 3,168 |
| 3 | ກຸ່ມຮຽນຜ່ານການຫຼິ້ນ | - | - | - | 5,502 | | | | 5,788 | - | - | - | 286 |
| 5 | ກຽມປະຖົມ | 1,919 | - | 1,967 | 39,360 | 1,821 | | 1,887 | 37,537 | -98 | | -80 | -1,823 |
| 6 | ປະຖົມສຶກສາ | 30,222 | 8,674 | 31,199 | 740,084 | 29,915 | 8,635 | 30,654 | 739,554 | -307 | -39 | -545 | -530 |
| 7 | ມັດທະຍົມຕອນຕົ້ນ | 12,210 | 978 | | 380,177 | 12,119 | 1,000 | | 378,457 | -91 | 22 | | -1,720 |
| 8 | ມັດທະຍົມຕອນປາຍ | 5,046 | 32 | 33,352 | 155,147 | 4,743 | 30 | 32,276 | 144,050 | -303 | -2 | -1,076 | -11,097 |
| 9 | ມັດທະຍົມສົມບູນ | - | 842 | | | | 831 | | | | -11 | | |

ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ແລະ ກິລາ

### ຕາຕະລາງທີ 2: ຈຳນວນຫ້ອງຮຽນ, ໂຮງຮຽນ, ຄູສອນ ແລະ ນັກຮຽນ (ສະເພາະພາກລັດ)

| ລ/ດ | | 2023-2024 | | | | 2024-2025 | | | | ສົມທຽບ 2 ສົກຮຽນ (ລະຫວ່າງ 2024-2025 ແລະ 2023-2024) | | | |
|---|---|---|---|---|---|---|---|---|---|---|---|---|---|
| | | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ | ຈຳນວນ ຫ້ອງຮຽນ | ຈຳນວນ ໂຮງຮຽນ | ຈຳນວນຄູ ສອນ | ຈຳນວນ ນັກຮຽນ |
| 1 | ລ້ຽງເດັກ | 333 | | | 5,035 | 326 | | | 4,750 | -7 | | | -285 |
| 2 | ອະນຸບານ | 5,240 | 2,811 | 6,544 | 132,323 | 5,124 | 2,754 | 4,493 | 130,288 | -116 | -57 | -2,051 | -2,035 |
| 3 | ກຸ່ມຮຽນຜ່ານການຫຼິ້ນ | | | | 5,502 | | | | 5,788 | | | | 286 |
| 4 | ກຸ່ມພັດທະນາເດັກໃນຊຸມຊົນ | | | | | | | | | | | | |
| 5 | ກຽມປະຖົມ | 1,914 | | 1,958 | 39,144 | 1,815 | | 1,877 | 37,395 | -99 | | -81 | -1,749 |
| 6 | ປະຖົມສຶກສາ | 27,504 | 8,284 | 28,003 | 666,667 | 26,973 | 8,208 | 27,207 | 658,521 | -531 | -76 | -796.00 | -8,146 |
| 7 | ມັດທະຍົມຕອນຕົ້ນ | 11,358 | 916 | | 356,605 | 11,197 | 925 | | 350,940 | -161 | 9 | | -5,665 |
| 8 | ມັດທະຍົມຕອນປາຍ | 4,702 | 32 | 31,355 | 146,322 | 4,377 | 30 | 30,109 | 134,155 | -325 | -2 | -1,246 | -12,167 |
| 9 | ມັດທະຍົມສົມບູນ | | 764 | | | | 753 | | | | -11 | | |

ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ແລະ ກິລາ

### ຕາຕະລາງທີ 3: ຈຳນວນຫ້ອງຮຽນ, ໂຮງຮຽນ, ຄູສອນ ແລະ ນັກຮຽນ (ສະເພາະພາກເອກະຊົນ)

| ລ/ດ | | 2023-2024 | | | | 2024-2025 | | | | ສົມທຽບ 2 ສົກຮຽນ (ລະຫວ່າງ 2024-2025 ແລະ 2023-2024) | | | |
|---|---|---|---|---|---|---|---|---|---|---|---|---|---|
| | | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ | ຈຳນວນ ຫ້ອງຮຽນ | ຈຳນວນ ໂຮງຮຽນ | ຈຳນວນຄູ ສອນ | ຈຳນວນ ນັກຮຽນ |
| 1 | ລ້ຽງເດັກ | 748 | | | 12,016 | 813 | | | 13,197 | 65 | - | - | 1,181 |
| 2 | ອະນຸບານ | 2,221 | 613 | 4,687 | 53,006 | 2,386 | 635 | 4,994 | 58,492 | 165 | 16 | 454 | 5,335 |
| 3 | ກຸ່ມຮຽນຜ່ານການຫຼິ້ນ | | | | | | | | | - | - | - | - |
| 4 | ກຸ່ມພັດທະນາເດັກໃນຊຸມຊົນ | | | | | | | | | | | | |
| 5 | ກຽມປະຖົມ | 5 | | 9 | 216 | 6 | | 10 | 204 | 1 | | 1 | -12.00 |
| 6 | ປະຖົມສຶກສາ | 2,718 | 390 | 3,196 | 73,417 | 2,942 | 427 | 3,447 | 81,033 | 224 | 37 | 251 | 7,616 |
| 7 | ມັດທະຍົມຕອນຕົ້ນ | 852 | 62 | | 23,572 | 922 | 75 | | 27,517 | 70 | 13 | | 3,945 |
| 8 | ມັດທະຍົມຕອນປາຍ | 344 | - | 1,997 | 8,825 | 366 | - | 2,167 | 9,895 | 22 | - | 170 | 1,070 |
| 9 | ມັດທະຍົມສົມບູນ | | 78 | | | | 78 | | | | 9 | | - |

ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ແລະ ກິລາ

ຕາຕະລາງທີ 4: ອັດຕາເຂົ້າຮຽນໃນຊັ້ນຕ່າງໆ ໃນທົ່ວປະເທດ

| ອັດຕາເຂົ້າຮຽນໃນແຕ່ລະຊັ້ນການສຶກສາ | ສົກຮຽນ 2023-2024 | | | ສົກຮຽນ 2024-2025 | | | ການປ່ຽນແປງທຽບໃສ່ ສົກຮຽນ 2023-2024 | | |
|---|---|---|---|---|---|---|---|---|---|
| | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ |
| ອັດຕາເຂົ້າຮຽນ ກຸ່ມ ອາຍຸ 3 - 5 ປີ (%) | 63.4 | 63.9 | 63.0 | 64.4 | 64.6 | 64.2 | 0.96 | 0.71 | 1.20 |
| ອັດຕາເຂົ້າຮຽນ ກຸ່ມ ອາຍຸ 5 ປີ (%) | 83.8 | 84.1 | 83.4 | 84.7 | 84.6 | 84.8 | 0.92 | 0.48 | 1.36 |
| ອັດຕາເຂົ້າຮຽນໃໝ່ສຸດທິຊັ້ນປະຖົມສຶກສາ (%) | 99.1 | 98.8 | 99.3 | 99.3 | 99.0 | 99.5 | 0.22 | 0.16 | 0.19 |
| ອັດຕາເຂົ້າຮຽນສຸດທິຊັ້ນປະຖົມສຶກສາ (%) | 98.4 | 98.1 | 98.6 | 98.4 | 98.1 | 98.6 | 0.01 | -0.05 | -0.02 |
| ອັດຕາເຂົ້າຮຽນໃໝ່ລວມຊັ້ນປະຖົມສຶກສາ (%) | 108.4 | 107.3 | 109.6 | 95.5 | 95.5 | 95.4 | -12.94 | -11.77 | -14.17 |
| ອັດຕາເຂົ້າຮຽນລວມຊັ້ນປະຖົມສຶກສາ (%) | 103.0 | 102.1 | 103.8 | 102.2 | 101.4 | 102.9 | -0.80 | -0.74 | -0.93 |
| ອັດຕາເລື່ອນຊັ້ນ ຈາກ ປ. 5 ຂຶ້ນ ມ.1 ທຽບໃສ່ນັກຮຽນຕົ້ນປີ (%) | 84.8 | 84.5 | 85.0 | 85.6 | 85.3 | 85.9 | 0.85 | 0.79 | 0.91 |
| ອັດຕາເຂົ້າຮຽນລວມມັດທະຍົມຕອນຕົ້ນ (%) | 73.6 | 73.2 | 73.9 | 72.5 | 72.4 | 72.6 | -1.06 | -0.83 | -1.28 |
| ອັດຕາເຂົ້າຮຽນໃໝ່ລວມ ມ.4 (%) | 63.9 | 63.3 | 64.5 | 61.4 | 61.3 | 61.5 | -2.49 | -1.96 | -3.00 |
| ອັດຕາເລື່ອນຊັ້ນ ຈາກ ມ.4 ຂຶ້ນ ມ.5 ທຽບໃສ່ນັກຮຽນຕົ້ນປີ (%)* | 63.1 | 61.8 | 64.3 | 70.5 | 69.3 | 71.7 | 7.44 | 7.54 | 7.39 |
| ອັດຕາເຂົ້າຮຽນລວມມັດທະຍົມຕອນປາຍ (%) | 41.0 | 39.6 | 42.2 | 38.4 | 37.4 | 39.3 | -2.55 | -2.23 | -2.94 |
| ອັດຕາເຂົ້າຮຽນລວມຊັ້ນມັດທະຍົມ (%) | 59.8 | 59.0 | 60.5 | 58.2 | 57.7 | 58.6 | -1.60 | -1.30 | -1.90 |
| ອັດຕາເຂົ້າຮຽນໃໝ່ລວມ ມ.7 (%) | 38.0 | 36.9 | 39.1 | 34.4 | 33.4 | 35.4 | -3.61 | -3.47 | -3.72 |

* ທຽບໃສ່ນັກຮຽນຕົ້ນປີ

ແຫຼ່ງຂໍ້ມູນ: ຈາກສູນສະຖິຕິສຶກສາ ແລະ ກິລາ

## 5. ແຜນງົບປະມານຂອງກະຊວງການສຶກສາ ແລະ ກິລາ

ໃນປີ 2025 ກະຊວງການສຶກສາ ແລະ ກິລາ ໄດ້ຮັບແຜນງົບປະມານແຫ່ງລັດເບື້ອງຕົ້ນທັງໝົດ ຈຳນວນ 6,025,280.84 ລ້ານກີບ, ເທົ່າກັບ 10.40% ທຽບໃສ່ແຜນລາຍຈ່າຍທັງໝົດຂອງລັດຖະບານ ແລະ ເທົ່າກັບ 1.61% ຂອງລວມຍອດຜະລິດຕະພັນແຫ່ງຊາດ (GDP), ໃນນີ້ງົບປະມານປົກກະຕິ ມີທັງໝົດ 4,682,880.30 ລ້ານກີບ ແລະ ສະເພາະງົບປະມານລົງທຶນທັງໝົດ: 1,342,400.54 ລ້ານກີບ, ໃນນີ້ມີເງິນລົງທຶນພາຍໃນ: 193,989.89 ລ້ານກີບ ແລະ ລົງທຶນຕ່າງປະເທດ: 1,148,430.65 ລ້ານກີບ.

## ພາກທີ II
## ແຜນພັດທະນາຂອງຂະແໜງການຍ່ອຍ

# I. ຂະແໜງການຍ່ອຍການສຶກສາກ່ອນໄວຮຽນ

## 1. ສະພາບລວມ

ໃນສົກຮຽນ 2024-2025 ມີໂຮງລ້ຽງເດັກ ແລະ ໂຮງຮຽນອະນຸບານ ຈຳນວນ 3,389 ແຫ່ງ, ໃນນັ້ນ ພາກລັດ 2,754 ແຫ່ງ, ພາກເອກະຊົນ 635 ແຫ່ງ, ສົມທຽບໃນສົກຮຽນ 2023-2024 ແມ່ນຫຼຸດລົງເຖິງ 35 ແຫ່ງ, ຈຳນວນຫ້ອງຮຽນອະນຸບານເພີ່ມຂຶ້ນ 49 ຫ້ອງ, ຈຳນວນຫ້ອງລ້ຽງເດັກ ເພີ່ມຂຶ້ນ 58 ຫ້ອງ ແຕ່ເຫັນວ່າຈຳນວນຫ້ອງກຽມປະຖົມແມ່ນຫຼຸດລົງເຖິງ 98 ຫ້ອງ. ໃນນັ້ນເຫັນວ່າ ພາກລັດ ຈຳນວນຫ້ອງຮຽນອະນຸບານ ຫຼຸດລົງເຖິງ 116 ຫ້ອງ, ຫ້ອງກຽມປະຖົມຫຼຸດລົງ 99 ຫ້ອງ ແລະ ຫ້ອງລ້ຽງເດັກຫຼຸດລົງ 7 ຫ້ອງ. ແຕ່ໃນຂະນະດຽວກັນ ການຂະຫຍາຍການເຂົ້າຮຽນໃນພາກເອກະຊົນ ແມ່ນເພີ່ມຂຶ້ນ ໂດຍສະເພາະຈຳນວນຫ້ອງຮຽນລ້ຽງເດັກ ເພີ່ມຂຶ້ນເຖິງ 65 ຫ້ອງ, ຈຳນວນຫ້ອງຮຽນອະນຸບານເພີ່ມຂຶ້ນ 165 ຫ້ອງ ແລະ ຫ້ອງກຽມປະຖົມເພີ່ມຂຶ້ນ 1 ຫ້ອງ (ປະຈຸບັນມີພຽງ 6 ຫ້ອງ) ອັນສິ່ງຜົນໃຫ້ຈຳນວນນັກຮຽນໃນຊັ້ນການສຶກສາກ່ອນໄວຮຽນ ໄດ້ເພີ່ມຈາກ 247.242 ມາເປັນ 250.113[2] (ໃນນີ້ ສັດສ່ວນນັກຮຽນເອກະຊົນທຽບໃສ່ນັກຮຽນທັງໝົດ ແມ່ນເພີ່ມຂຶ້ນຈາກ 27.51% ມາເປັນ 28.74%), ອັດຕາເຂົ້າຮຽນສະເລ່ຍທົ່ວປະເທດຂອງເດັກ 0-2 ປີ ເພີ່ມຈາກ 5,4 % ເປັນ 5,7 %, ອັດຕາເຂົ້າຮຽນ 3-4 ປີ ແມ່ນເພີ່ມຈາກ 52,4% ເປັນ 53,8%, ອັດຕາເຂົ້າຮຽນ 3-5 ປີ ກໍເພີ່ມຈາກ 63,4% ມາເປັນ 64,4% ແລະ ອັດຕາເຂົ້າຮຽນຂອງເດັກອາຍຸ 5 ປີ ເພີ່ມຈາກ 83,8% ມາເປັນ 84,7%.

**ຕາຕະລາງທີ 5: ສົມທຽບຂໍ້ມູນຈຳນວນຫ້ອງຮຽນ, ໂຮງຮຽນ, ຄູສອນ ແລະ ນັກຮຽນ**

**(ພາກລັດ ແລະ ພາກເອກະຊົນ)**

| | ສົກຮຽນ 2023-2024 | | | | ສົກຮຽນ 2024-2025 | | | | ສົມທຽບ 2 ສົກຮຽນ | | | |
|---|---|---|---|---|---|---|---|---|---|---|---|---|
| | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ |
| ລ້ຽງເດັກ | 1.081 | | | 17.051 | 1.139 | | | 17.947 | 58 | | | 896 |
| ອະນຸບານ | 7.461 | 2.646 | 11.222 | 185.329 | 7.51 | 2.59 | 11.386 | 188.779 | 49 | -56 | 164 | 3.45 |
| ກຸ່ມຮຽນຜ່ານການຫຼິ້ນ | | | | 5.502 | | | | 5.788 | | | | 286 |
| ກຸ່ມພັດທະນາເດັກໃນຊຸມຊົນ | 245 | | 490 | 5,002 | 245 | | 490 | 5.352 | 0 | | 0 | 350 |
| ກຽມປະຖົມ | 1.919 | | 1.967 | 39.36 | 1.821 | | 1.887 | 37.599 | -98 | | -80 | -1.761 |

ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ແລະ ກິລາ ແລະ ກົມການສຶກສາກ່ອນໄວຮຽນ (ສຳລັບຈຳນວນເດັກໃນກຸ່ມພັດທະນາເດັກໃນຊຸມຊົນແມ່ນຈາກກົມການສຶກສາກ່ອນໄວຮຽນ ແມ່ນບໍ່ໄດ້ຄິດໄລ່ເຂົ້າໃນອັດຕາການເຂົ້າຮຽນ ເນື່ອງຈາກຂໍ້ມູນດັ່ງກ່າວຍັງບໍ່ທັນໄດ້ເກັບໃນຮ່າງສະຖິຕິສຶກສາ ແລະ ກິລາ ປະຈຳສົກຮຽນເທື່ອ)

**ຕາຕະລາງທີ 6: ສົມທຽບການປ່ຽນແປງຈຳນວນຫ້ອງຮຽນ, ໂຮງຮຽນ, ຄູສອນ ແລະ ນັກຮຽນ (ລັດ)**

| | ສົກຮຽນ 2023-2024 | | | | ສົກຮຽນ 2024-2025 | | | | ສົມທຽບ 2 ສົກຮຽນ | | | |
|---|---|---|---|---|---|---|---|---|---|---|---|---|
| | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ |
| ລ້ຽງເດັກ | 333 | | | 5.035 | 326 | | | 4.75 | -7 | | | -285 |
| ອະນຸບານ | 5.24 | 2.517 | 6.544 | 132.323 | 5.124 | 2.476 | 6.402 | 130.288 | -116 | -41 | -142 | -2.035 |
| ກຸ່ມຮຽນຜ່ານການຫຼິ້ນ | | | | 5.502 | | | | 5.788 | | | | 286 |
| ກຸ່ມພັດທະນາເດັກໃນຊຸມຊົນ | 245 | | 490 | 5.002 | 245 | | 490 | 5.484 | 0 | | 0 | 482 |
| ກຽມປະຖົມ | 1.914 | | 1.958 | 39.144 | 1.815 | | 1.877 | 37.395 | -99 | | -81 | -17.49 |

ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ແລະ ກິລາ

[2] ຕົວເລກ 250,113 ບໍ່ໄດ້ນັບກຸ່ມພັດທະນາເດັກໃນຊຸມຊົນ

ຕາຕະລາງທີ 7: **ສົມທຽບການປ່ຽນແປງຈຳນວນຫ້ອງຮຽນ, ໂຮງຮຽນ, ຄູສອນ ແລະ ນັກຮຽນ (ເອກະຊົນ)**

| | ສົກຮຽນ 2023-2024 | | | | ສົກຮຽນ 2024-2025 | | | | ສົມທຽບ 2 ສົກຮຽນ | | | |
|---|---|---|---|---|---|---|---|---|---|---|---|---|
| | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ |
| ລ້ຽງເດັກ | 784 | | | 12.016 | 813 | | | 13.197 | 65 | | | 1.181 |
| ອະນຸບານ | 2.221 | 129 | 4.878 | 53.006 | 2.386 | 134 | 4.984 | 58.491 | 165 | 5 | 306 | 5.485 |
| ກຸ່ມຮຽນຜ່ານການຫຼິ້ນ | | | | 0 | | | | 0 | | | | 0 |
| ກຸ່ມພັດທະນາເດັກໃນຊຸມຊົນ | | | | | | | | | | | | |
| ກຽມປະຖົມ | 5 | | 9 | 216 | 6 | | | 204 | 1 | | 1 | -12 |

ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ແລະ ກິລາ

ຕາຕະລາງທີ 8: **ສົມທຽບອັດຕາເຂົ້າຮຽນ ລະຫວ່າງ 2 ສົກຮຽນ ທົ່ວປະເທດ ແລະ 40 ເມືອງບຸລິມະສິດຂອງຂະແໜງການສຶກສາ**

| ອັດຕາເຂົ້າຮຽນ | **ສົກຮຽນ 2023-2024** | | **ສົກຮຽນ 2024-2025** | | **ການປ່ຽນແປງ ທຽບໃສ່ສົກຮຽນ** | |
|---|---|---|---|---|---|---|
| | ທົ່ວປະເທດ | 40 ເມືອງ | ທົ່ວປະເທດ | 40 ເມືອງ | ທົ່ວປະເທດ | 40 ເມືອງ |
| ອັດຕາເຂົ້າຮຽນ ກຸ່ມ ອາຍຸ 0-2 ປີ (%) | 5,4 | 1,4 | 5,7 | 1,5 | 0,31 | 0,08 |
| ອັດຕາເຂົ້າຮຽນ ກຸ່ມ ອາຍຸ 3-4 ປີ (%) | 52,4 | 36,4 | 53,8 | 37,3 | 1,39 | 0,86 |
| ອັດຕາເຂົ້າຮຽນ ກຸ່ມ ອາຍຸ 3-5 ປີ (%) | 63,4 | 49,3 | 64,4 | 50,1 | 0,97 | 0,88 |
| ອັດຕາເຂົ້າຮຽນ ກຸ່ມ ອາຍຸ 5 ປີ (%) | 83,8 | 73,1 | 84,7 | 74,9 | 0,93 | 1,81 |

ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ແລະ ກິລາ

## 2. ຜົນສຳເລັດຜົນໄດ້ຮັບລະດັບສູງ

### 2.1. ຈຳນວນນັກຮຽນທີ່ຮຽນຈົບຈາກຂັ້ນການສຶກສາກ່ອນໄວຮຽນທີ່ມີຄວາມພ້ອມດ້ານການຮຽນ ໂດຍສະເພາະທັກສະການຮຽນຮູ້ດ້ານພາສາ ແລະ ທັກສະການຄິດໄລ່ເລກພື້ນຖານເພີ່ມຂຶ້ນ ໂດຍສຸມໃສ່ເປັນພິເສດຕໍ່ຜູ້ດ້ອຍໂອກາດ ແລະ ຮັບປະກັນຄວາມສະເໝີພາບລະຫວ່າງ ຍິງ-ຊາຍ.

ໃນສົກຮຽນ 2024-2025 ໄດ້ສືບຕໍ່ເອົາໃຈໃສ່ໃນການພັດທະນາການສຶກສາກ່ອນໄວຮຽນ ໃຫ້ເດັກມີຄວາມພ້ອມດ້ານການຮຽນດ້ວຍຫຼາຍຮູບແບບ ໂດຍສະເພາະແມ່ນທັກສະການຮຽນຮູ້ດ້ານພາສາ ແລະ ທັກສະການຄິດໄລ່ເລກພື້ນຖານເພີ່ມຂຶ້ນ ຄຽງຄູ່ກັບການສະໜອງສື່ການຮຽນການສອນ, ພັດທະນາຫຼັກສູດ ແລະ ນະວັດຕະກຳການສອນ ຊຶ່ງສິ່ງເຫຼົ່ານີ້ໄດ້ເຮັດໃຫ້ນັກກຮຽນມີຄວາມພ້ອມດ້ານການຮຽນເພີ່ມຂຶ້ນເປັນຕົ້ນແມ່ນ:

1) ສຳເລັດການພັດທະນາຄູ່ມືການຈັດກິດຈະກຳການຮຽນການສອນ ໃຫ້ຜູ້ດູແລເດັກ ແລະ ປັບປຸງຄູ່ມືຕິດຕາມ, ຊຸກຍູ້ແລະຊ່ວຍເຫຼືອ ການຈັດຕັ້ງປະຕິບັດກຸ່ມພັດທະນາເດັກໃນຊຸມຊົນ ອາຍຸ 3-4 ປີ ແລະ ພັດທະນາຕົ້ນສະບັບສື່ການຮຽນການສອນ ຈຳນວນ 16 ຊຸດ;
2) ສຳເລັດການພັດທະນາຄູ່ມືການສ້າງຄວາມເຂັ້ມແຂງວຽກງານການສຶກສານິເທດການສຶກສາກ່ອນໄວຮຽນ ໄດ້ 2 ໂມດູນ;
3) ສຳເລັດການພັດທະນາ, ຈັດພິມ ແລະ ແຈກຢາຍ ຄູ່ມືຝຶກການຈັດຕັ້ງປະຕິບັດກອດກາຄວາມບົກພ່ອງໜ້າທີ່ການ ແລະ ເຄື່ອງມືລົງຕິດຕາມຊຸກຍູ້ ຂັ້ນແຂວງ, ຂັ້ນເມືອງ ແລະ ຊຸມຊົນ ກ່ຽວກັບການຈັດຕັ້ງປະຕິບັດກອດກາຄວາມບົກພ່ອງໜ້າທີ່ການຂອງເດັກອາຍຸ 3-5 ປີ ຈຳນວນ 5,000 ຫົວ;

4) ສຳເລັດການປຸກສ້າງຫ້ອງຮຽນອະນຸບານ ຈຳນວນ 4 ຫ້ອງ, ຫ້ອງຄົວ 2 ຫ້ອງ ແລະ ຫ້ອງນໍ້າ ຈຳນວນ 8 ຫ້ອງ;
5) ສຳເລັດການຈັດພິມ ແລະ ແຈກຢາຍປຶ້ມຮຽນຊັ້ນອະນຸບານສຶກສາ ຈຳນວນ 10,476 ຫົວ, ປຶ້ມຕິດຕາມພັດທະນາການ 4,140 ຫົວ, ປຶ້ມຕິດຕາມຜົນງານສິລະປະສ້າງສັນປະຈຳເດືອນ 4,140 ຫົວ, ປຶ້ມຮຽກຊື່ ແລະ ຕິດຕາມພັດທະນາການ 2,052 ຫົວ ແລະ ຫ້ອງກຽມປະຖົມ 495 ຊຸດ, ຖົງເປ້ ຈຳນວນ 1,600 ໜ່ວຍ (ພ້ອມທັງອຸປະກອນການຮຽນ ແລະ ເຄື່ອງໃຊ້ໃນການຮັກສາອະນາໄມພື້ນຖານ) ໃຫ້ນັກຮຽນຊັ້ນອະນຸບານ, ຫ້ອງກຽມ ແລະ ປ1, ປ2 ເພື່ອແຈກຢາຍໃຫ້ບັນດາແຂວງທີ່ໄດ້ຮັບຜົນກະທົບຈາກໄພພິບັດ ແລະ ບັນດາແຂວງໃນຂອບເຂດທົ່ວປະເທດ;
6) ສະໜອງຫີບອຸປະກອນ (ການຮຽນ ການສອນ) ໃຫ້ຄູສອນ ການສອນຄວບອາຍຸເດັກ 3-5 ປີ ຈຳນວນ 255 ຫີບ ໃນ 22 ເມືອງ ຂອງ 10 ແຂວງ ແລະ ວິທະຍາໄລຄູ ຈຳນວນ 8 ຫີບ/ 8 ແຫ່ງ;
7) ສຳເລັດການຈັດພິມ ແລະ ແຈກຢາຍປຶ້ມເລື່ອງ 16 ເລື່ອງຈຳນວນ 25,792 ຫົວ; ຈັດຊື້ປຶ້ມເລື່ອງ 8 ເລື່ອງ ຈຳນວນ 2,000 ຫົວ ແລະ ປຶ້ມບົດສອນການກຽມຄວາມພ້ອມດ້ານການອ່ານສຳລັບເດັກອາຍຸ 5 ປີ ຈຳນວນ 1,760 ຫົວ;
8) ສືບຕໍ່ຮ່ວມມືທາງດ້ານວິຊາການ ໃນການຈັດຕັ້ງປະຕິບັດແຜນງານຮັກລູກໃຫ້ໃສ່ໃຈ ຮ່ວມກັບສູນກາງສະຫະພັນແມ່ຍິງລາວ ໃນ 9 ເມືອງ ຂອງ 6 ແຂວງ;
9) ລົງຕິດຕາມ, ຊຸກຍູ້ ແລະ ຊ່ວຍເຫຼືອກ່ຽວກັບຫ້ອງກຽມປະຖົມ ແລະ ກຸ່ມຮຽນຜ່ານການຫຼິ້ນ ຈຳນວນ 16 ແຫ່ງ ໃນ 8 ເມືອງ ຂອງ 4 ແຂວງ ແລະ ລົງຕິດຕິດ, ຊຸກຍູ້ ແລະ ຊ່ວຍເຫຼືອການຈັດຕັ້ງປະຕິບັດກຸ່ມພັດທະນາເດັກໃນຊຸມຊົນ ຈຳນວນ 40 ບ້ານ ໃນ 12 ແຂວງ 20 ເມືອງ.

**2.2 ຈຳນວນຄູ ແລະ ຜູ້ອຳນວຍການໂຮງຮຽນ ໃນສະຖານການສຶກສາກ່ອນໄວຮຽນທີ່ມີຄວາມຮູ້ຄວາມສາມາດສອດຄ່ອງກັບມາດຕະຖານການສິດສອນທີ່ໄດ້ກຳນົດຜ່ານມາເພີ່ມຂຶ້ນ ໂດຍໃຫ້ມີການປະເມີນຜົນການປະຕິບັດໜ້າທີ່ຂອງເຂົາເຈົ້າຢ່າງເປັນປົກກະຕິ**

ໃນສົກຮຽນ 2024-2025 ຂະແໜງການຍ່ອຍການສຶກສາກ່ອນໄວຮຽນ ໄດ້ສືບຕໍ່ສ້າງຄວາມເຂັ້ມແຂງທາງດ້ານວິຊາການໃນການບໍລິຫານຄຸ້ມຄອງ ແລະ ການຈັດການຮຽນການສອນ ໃຫ້ກັບຜູ້ດູແລເດັກ, ຄູສອນ, ຜູ້ອຳນວຍການໂຮງຮຽນ, ວິຊາການຂັ້ນເມືອງ ແລະ ຂັ້ນແຂວງ ໂດຍການຮ່ວມມືກັບບັນດາຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນຕ່າງໆ ລວມທັງອົງການປົກຄອງຂັ້ນທ້ອງຖິ່ນ ເພື່ອປັບປຸງຄຸນນະພາບການສຶກສາກ່ອນໄວຮຽນໃຫ້ດີຂຶ້ນ.

1) ສຳເລັດການປັບປຸງເນື້ອໃນຫຼັກສູດການບໍລິຫານຄຸ້ມຄອງການສຶກສາໃຫ້ແກ່ຜູ້ບໍລິຫານການສຶກສາກ່ອນໄວຮຽນ ແລະ ຝຶກອົບຮົມໃຫ້ຜູ້ອຳນວຍການໂຮງຮຽນອະນຸບານ ຈຳນວນ 40 ຄົນ ໃນ 40 ເມືອງ ທີ່ຕິດພັນກັບວຽກງານ 3 ສ້າງ ແລະ ຜູ້ອຳນວຍການໂຮງຮຽນອະນຸບານພາກເອກະຊົນ ຈຳນວນ 72 ຄົນ;
2) ຄູສອນສາຍສ້າງຄູອະນຸບານ ໃນວິທະຍາໄລຄູ 8 ແຫ່ງ ໄດ້ຮັບການຝຶກອົບຮົມ ກ່ຽວກັບການຮຽນການສອນຄວບອາຍຸເດັກ 3-5 ປີ ຈຳນວນ 64 ຄົນ, ຜູ້ອຳນວຍການໂຮງຮຽນ ຈຳນວນ 251 ຄົນ ແລະ ຄູສອນຫ້ອງຄວບ ໄດ້ຮັບການຝຶກອົບຮົມເຂັ້ມ ຈຳນວນ 267 ຄົນ;
3) ສຳເລັດການຝຶກອົບຮົມກ່ຽວກັບການນຳໃຊ້ປຶ້ມບົດສອນການກຽມຄວາມພ້ອມດ້ານການອ່ານສຳລັບເດັກອາຍຸ 5 ປີ ສະບັບປັບປຸງ ໃຫ້ຂັ້ນເມືອງ, ຄູສອນ ແລະ ຜູ້ອຳນວຍການ ຈຳນວນ 2,112 ຄົນ ໃນ 60 ເມືອງຂອງ 18 ແຂວງ;
4) ສຳເລັດການຝຶກອົບຮົມກ່ຽວກັບການຈັດການຮຽນການສອນ ກຸ່ມພັດທະນາເດັກໃນຊຸມຊົນ ອາຍຸ 3-4 ປີໃຫ້ຜູ້ດູແລເດັກ ຈຳນວນ 490 ຄົນ ໃນ 245 ກຸ່ມ 19 ເມືອງ 12 ແຂວງເປົ້າໝາຍ;
5) ສຳເລັດການແນະນຳການນຳໃຊ້ຄູ່ມືການຈັດກິດຈະກຳການຮຽນ ການສອນ ໃຫ້ຜູ້ດູແລເດັກ ແລະ ຄູ່ມືຕິດຕາມ, ຊຸກຍູ້ ແລະ ຊ່ວຍເຫຼືອ ການຈັດຕັ້ງປະຕິບັດກຸ່ມພັດທະນາເດັກໃນຊຸມຊົນ ອາຍຸ 3-4 ປີ ຈຳນວນ 164 ຄົນ ໃນ 29 ເມືອງ ຂອງ 12 ແຂວງ;

6) ສໍາເລັດການຝຶກອົບຮົມ ກ່ຽວກັບການນໍາໃຊ້ປຶ້ມກິດຈະກໍາການຮຽນການສອນຜ່ານການຫຼິ້ນ ໃຫ້ຄູຝຶກຂັ້ນສູນກາງ ຈໍານວນ 33 ຄົນ;
7) ສໍາເລັດການຝຶກອົບຮົມການນໍາໃຊ້ເຄື່ອງມືເອເລັກໂຕຣນິກເພື່ອເຂົ້າເບິ່ງວິດີໂອການຈັດການຮຽນການສອນແບບປະສົມປະສານ 13 ວິດີໂອ ແລະ ສື່ການຮຽນການສອນສໍາລັບກ່ອນໄວຮຽນໃນສື່ອອນລາຍຕ່າງໆ (ຄັງປັນຍາລາວ, ຢູທູບ, ຕິກຕ໊ອກ) ໃຫ້ວິຊາການຂັ້ນແຂວງ, ຜູ້ອໍານວຍການ ແລະ ຄູສອນຫ້ອງກຽມປະຖົມ ໃນ 5 ແຂວງ: ແຂວງວຽງຈັນ, ສະຫວັນນະເຂດ, ສາລະວັນ, ອັດຕະປື ແລະ ຊຽງຂວາງ;
8) ສໍາເລັດການທົດລອງຈັດຕັ້ງປະຕິບັດກິດຈະກໍາການອ່ານປຶ້ມຮ່ວມກັບລູກຢູ່ເຮືອນ ໃນໂຮງຮຽນເປົ້າໝາຍການກຽມຄວາມພ້ອມດ້ານການອ່ານສໍາລັບເດັກອາຍຸ 5 ປີ ທີ່ແຂວງບໍລິຄໍາໄຊ;
9) ສໍາເລັດການແນະນໍາ ຄູ່ມື ການສ້າງຄວາມເຂັ້ມແຂງວຽກງານການສຶກສານິເທດ ຊັ້ນການສຶກສາກ່ອນໄວຮຽນໂມດູນ 1 ມີຜູ້ເຂົ້າຮ່ວມທັງໝົດ 322 ຄົນ, ຍິງ 301 ຄົນ;
10) ສໍາເລັດຝຶກອົບຮົມການນໍາໃຊ້ປຶ້ມຕິດຕາມການປິ່ນປົວ ຟື້ນຟູໜ້າທີ່ການຂອງເດັກ ອາຍຸ 3-5 ປີ ໃຫ້ແພດໂຮງໝໍນ້ອຍ ແລະ ອາສາສະໝັກສາທາລະນະສຸກຂັ້ນບ້ານ (ອສສບ) ຈໍານວນ 281 ຄົນ ພ້ອມທັງລົງກັ່ນຕອງຄວາມບົກຜ່ອງໜ້າທີ່ການຂອງເດັກ ອາຍຸ 3-5 ປີ ໃນ 86 ບ້ານ ໃນ 3 ເມືອງ ຂອງ 3 ແຂວງ ມີເດັກທັງໝົດ ຈໍານວນ 3,973 ຄົນ ໃນນັ້ນພົບເດັກທີ່ມີຄວາມບົກຜ່ອງໜ້າທີ່ການ ຈໍານວນ 54 ຄົນ;
11) ສໍາເລັດການຄົ້ນຄວ້າ ແລະ ປະເມີນຄູທີ່ສະເໜີຕໍາແໜ່ງວິຊາການຄູ ຊັ້ນການສຶກສາກ່ອນໄວຮຽນ ຈໍານວນ 16 ຄົນ ໃນ 2 ແຂວງ;
12) ລົງຕິດຕາມ, ຊຸກຍູ້ ແລະ ຊ່ວຍເຫຼືອຄູປະສົບການ ຊັ້ນການສຶກສາກ່ອນໄວຮຽນ ຈໍານວນ 9 ຄົນ ໃນ 3 ເມືອງ ຂອງ 3 ແຂວງ; ລົງຊຸກຍູ້, ຊ່ວຍເຫຼືອ ແນະນໍາການປະຕິບັດໜ້າທີ່ຂອງຜູ້ອໍານວຍການໂຮງຮຽນອະນຸບານທີ່ໄດ້ຜ່ານການຝຶກອົບຮົມ ການບໍລິຫານຄຸ້ມຄອງການສຶກສາ ຈໍານວນ 40 ໂຮງຮຽນ ໃນ 40 ເມືອງ ທີ່ຕິດພັນກັບວຽກງານ 3 ສ້າງ; ສໍາເລັດການລົງຕິດຕາມ ນິເທດການສຶກສາກ່ອນໄວຮຽນ ໂມດູນ 1 ຈໍານວນ 36 ໂຮງຮຽນ ໃນ 18 ເມືອງ ຂອງ 9 ແຂວງ;
13) ສໍາເລັດການລົງຕິດຕາມຊຸກຍູ້ ເດັກທີ່ກວດພົບວ່າມີຄວາມບົກຜ່ອງທາງດ້ານໜ້າທີ່ການ ຈໍານວນ 28 ຄົນ ເພື່ອຊຸກຍູ້ຂັ້ນແຂວງ, ຂັ້ນເມືອງ ແລະ ຊຸມຊົນໃຫ້ນໍາເດັກໄປປິ່ນປົວ ແລະ ສົ່ງເຂົ້າຮຽນໃນສະຖານການສຶກສາກ່ອນໄວຮຽນ ໃນ 26 ບ້ານ ໃນ 3 ແຂວງ 3 ເມືອງ;

**2.3 ສະຖານການສຶກສາກ່ອນໄວຮຽນທຸກແຫ່ງ ມີຊັບພະຍາກອນທາງດ້ານການເງິນ ແລະ ຊັບພະຍາກອນມະນຸດພຽງພໍ ເພື່ອໃຫ້ສາມາດເຮັດວຽກໄດ້ຢ່າງມີປະສິດທິຜົນ, ພ້ອມທັງຂີດຄວາມສາມາດໃນການຄຸ້ມຄອງໂຮງຮຽນ ແລະ ການສະໜັບສະໜູນຂອງຄະນະພັດທະນາການສຶກສາຂັ້ນບ້ານມີຄວາມເຂັ້ມແຂງຂຶ້ນ ເພື່ອໃຫ້ສອດຄ່ອງກັບມາດຕະຖານຄຸນນະພາບຂັ້ນພື້ນຖານ ຊັ້ນອະນຸບານສຶກສາ ແລະ ຊ່ວຍໃຫ້ຜົນການຮຽນຂອງນັກຮຽນປັບປຸງດີຂຶ້ນ**

ເພື່ອໃຫ້ບັນລຸຜົນໄດ້ຮັບລະດັບສູງດັ່ງກ່າວ ໂດຍສະເພາະແມ່ນວຽກງານທີ່ຕິດພັນກັບການພັດທະນານິຕິກໍາ ແລະ ການປະກັນຄຸນນະພາບຂອງການສຶກສາກ່ອນໄວຮຽນ, ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບ ບັນດາຄູ່ຮ່ວມພັດທະນາ ໄດ້ດໍາເນີນບັນດາກິດຈະກໍາຕ່າງໆ ດັ່ງນີ້:

1) ສໍາເລັດການເຜີຍແຜ່ດໍາລັດວ່າດ້ວຍການສຶກສາກ່ອນໄວຮຽນ ແລະ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະຖານການສຶກສາກ່ອນໄວຮຽນ ໃຫ້ຜູ້ບໍລິຫານການສຶກສາ, ວິຊາການ ລະດັບສູນກາງ, ແຂວງ, ເມືອງ ແລະ ຜູ້ອໍານວຍການໂຮງຮຽນອະນຸບານ ແລະ ໂຮງຮຽນປະຖົມ ທັງພາກລັດ ແລະ ເອກະຊົນ ດ້ວຍຮູບແບບເຊິ່ງໜ້າ ແລະ ອອນລາຍ ໃນຂອບເຂດທົ່ວປະເທດ ລວມທັງໝົດ ຈໍານວນ 1,322 ຄົນ ພ້ອມທັງຈັດພິມ ແລະ ແຈກຢາຍດໍາລັດວ່າດ້ວຍການສຶກສາກ່ອນໄວຮຽນ ຈໍານວນ 6,000 ຫົວ;

2) ສຳເລັດການປັບປຸງ ແລະ ຮຽບຮຽງຄູ່ມືແນະນຳການສະໜີຂໍສ້າງຕັ້ງ ແລະ ຕໍ່ໃບອະນຸຍາດ ດຳເນີນກິດຈະກຳການຮຽນການສອນ ຂອງສະຖານການສຶກສາກ່ອນໄວຮຽນ ພາກເອກະຊົນ (ສະບັບຮ່າງ);
3) ສຳເລັດການຄົ້ນຄວ້າ ແລະ ຂໍອະນຸຍາດສ້າງຕັ້ງໂຮງລ້ຽງເດັກ ແລະ ໂຮງຮຽນອະນຸບານນານາຊາດ ຈຳນວນ 4 ແຫ່ງ, ຕໍ່ໃບອະນຸຍາດດຳເນີນກິດຈະການ ຈຳນວນ 4 ແຫ່ງ ແລະ ດຳເນີນການປ່ຽນຊື່ຜູ້ອຳນວຍການໂຮງຮຽນອະນຸບານນານາຊາດ ວຽງຈັນ (VIS);
4) ສຳເລັດການສ້າງຖານເກັບກຳຂໍ້ມູນ ສະຖານການສຶກສາກ່ອນໄວຮຽນ ພາກເອກະຊົນ;
5) ສຳເລັດການປັບປຸງມາດຕະຖານຄຸນນະພາບຂັ້ນພື້ນຖານ ຊັ້ນອະນຸບານສຶກສາ ແລະ ຄູ່ມືຝຶກອົບຮົມຄູຝຶກຂັ້ນແຂວງ, ຂັ້ນເມືອງ ແລະ ຄູ່ມືພັດທະນາໂຮງຮຽນຕາມມາດຕະຖານຄູນນະພາບຂັ້ນພື້ນຖານ ຊັ້ນອະນຸບານສຶກສາ;
6) ສຳເລັດການຝຶກອົບຮົມກ່ຽວກັບການພັດທະນາໂຮງຮຽນ ຕາມມາດຕະຖານຄູນນະພາບຂັ້ນພື້ນຖານ (ມຄພ) ຊັ້ນອະນຸບານສຶກສາໃຫ້ວິຊາການຂັ້ນແຂວງ ແລະ ຂັ້ນເມືອງ ຈຳນວນ 181 ຄົນ ໃນ 13 ເມືອງ 5 ແຂວງເປົ້າໝາຍ ແລະ ເມືອງທີ່ບໍ່ແມ່ນເປົ້າໝາຍການສະໜັບສະໜູນຂອງອົງການອຸຍນິເຊັບ ຈຳນວນ 53 ຄົນ ໃນ 16 ເມືອງ 5 ແຂວງ;
7) ສຳເລັດການຝຶກອົບຮົມກ່ຽວກັບການພັດທະນາໂຮງຮຽນ ຕາມມາດຕະຖານຄຸນນະພາບຂັ້ນພື້ນຖານ ຊັ້ນອະນຸບານສຶກສາໃຫ້ຜູ້ອຳນວຍການໂຮງຮຽນ, ຄູອະນຸບານ, ຄູຫ້ອງກຽມປະຖົມ, ຜູ້ດູແລເດັກ ແລະ ຂັ້ນໂຮງຮຽນ (ໂມດູນ 1) ຈຳນວນ 1,060 ຄົນ ໃນ 13 ເມືອງ ຂອງ 5 ແຂວງ ແລະ ຝຶກອົບຮົມຄູຝຶກຂັ້ນແຂວງ, ຂັ້ນເມືອງກ່ຽວກັບການການເຊື່ອມສານວຽກງານການປັບປຸງຄຸນນະພາບຕາມມາດຕະຖານການສຶກສາຂັ້ນພື້ນຖານເຂົ້າໃນແຜນພັດທະນາການສຶກສາຂອງເມືອງ/ນະຄອນ (ໂມດູນ 2) ຈຳນວນ 241 ຄົນ ໃນ 13 ເມືອງ ຂອງ 5 ແຂວງ;
8) ສຳເລັດການສະໜອງເງິນອຸດໜູນ ປະຈຳປີ 2025 ໃຫ້ຜູ້ດູແລເດັກ ຈຳນວນ 490 ຄົນ ແລະ ເງິນຊື້ອຸປະກອນການຮຽນການສອນ ປະຈຳປີ 4,800,000 ກີບ/ກຸ່ມ ພ້ອມທັງສະໜອງເງິນລົງຕິດຕາມການຈັດຕັ້ງປະຕິບັດການຮຽນການສອນກຸ່ມພັດທະນາເດັກໃນຊຸມຊົນ ຈຳນວນ 245 ກຸ່ມ ໃນ 29 ເມືອງ ຂອງ 12 ແຂວງ.

## 3. ບັນຫາ ແລະ ສິ່ງທ້າທາຍ

ໃນສົກຮຽນ 2024-2025 ເຫັນວ່າ ຍັງມີຫຼາຍບັນຫາ ແລະ ສິ່ງທ້າທາຍ ໃນການຈັດຕັ້ງປະຕິບັດວຽກງານການສຶກສາກ່ອນໄວຮຽນ, ມີດັ່ງນີ້:

1) ຫ້ອງຮຽນອະນຸບານພາກລັດ ຈຳນວນ 116 ຫ້ອງ ໄດ້ປິດການຮຽນການສອນ ເຮັດໃຫ້ຈຳນວນຫ້ອງຮຽນອະນຸບານຫຼຸດລົງ, ຫ້ອງກຽມປະຖົມໄດ້ຫຼຸດລົງ 99 ຫ້ອງ ເນື່ອງຈາກວ່າຄູສອນບໍ່ພຽງພໍ ແລະ ຄູອາສາສະໝັກລາອອກຈຳນວນຫຼາຍ;
2) ຜູ້ອຳນວຍການໃນສະຖານການສຶກສາກ່ອນໄວຮຽນ ທັງພາກລັດ ແລະ ເອກະຊົນ ຈຳນວນໜຶ່ງບໍ່ໄດ້ຮັບການຝຶກອົບຮົມກ່ຽວກັບການບໍລິຫານຄຸ້ມຄອງໂຮງຮຽນ;
3) ຜູ້ປົກຄອງ ແລະ ຊຸມຊົນ ຈຳນວນໜຶ່ງຍັງບໍ່ທັນເຂົ້າໃຈ ແລະ ຍັງບໍ່ທັນເຫັນໄດ້ຄວາມສຳຄັນຂອງວຽກງານການສຶກສາກ່ອນໄວຮຽນ ເຊິ່ງເຮັດໃຫ້ການປະກອບສ່ວນຂອງຊຸມຊົນ ຍັງບໍ່ທັນເຮັດໄດ້ດີ ເທົ່າທີ່ຄວນ;
4) ການສະໜອງສິ່ງອຳນວຍຄວາມສະດວກ ດ້ານສຸຂາພິບານ ແລະ ສຸຂະອະນາໄມ, ເຄື່ອງຫຼິ້ນ ແລະ ເຄື່ອງໃຊ້ໃນຫ້ອງຮຽນ ແລະ ນອກຫ້ອງຮຽນ ຍັງບໍ່ທົ່ວເຖິງ;
5) ຄູສອນໃນສະຖານການສຶກສາກ່ອນໄວຮຽນສ່ວນຫຼາຍຍັງບໍ່ໄດ້ຮັບການຝຶກອົບຮົມກ່ຽວກັບການນຳໃຊ້ຄູ່ມືແຜນຈັດປະສົບການຊັ້ນອະນຸບານ ແລະ ຫ້ອງກຽມປະຖົມທີ່ໄດ້ຮັບການປັບປຸງໃໝ່;
6) ພະນັກງານຂັ້ນເມືອງ, ຂັ້ນແຂວງ ຈຳນວນໜຶ່ງຍັງບໍ່ເຂົ້າໃຈກ່ຽວກັບການການເຊື່ອມສານວຽກງານການປັບປຸງຄຸນນະພາບ ຕາມມາດຕະຖານຄຸນນະພາບຂັ້ນພື້ນຖານເຂົ້າໃນແຜນພັດທະນາການສຶກສາຂອງເມືອງ/ນະຄອນ ເພາະຍັງເປັນວຽກໃໝ່ ແລະ ຜູ້ອຳນວຍການໂຮງຮຽນປະຖົມທີ່ມີຫ້ອງກຽມປະຖົມ ຫຼື ກຸ່ມຮຽນຜ່ານການຫຼິ້ນຂຶ້ນກັບ ບໍ່ມີຄວາມເຂົ້າໃຈ ແລະ ປະສົບການກ່ຽວກັບການສຶກສາກ່ອນໄວຮຽນເທົ່າທີ່ຄວນ

ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວພົບຄວາມຫຍຸ້ງຍາກ ແລະ ບໍ່ຮູ້ວິທີນໍາພາການປະເມີນ, ເກັບກໍາຂໍ້ມູນ ມາດຕະຖານຄຸນນະພາບຂັ້ນພື້ນຖານ ພາກທີ 3: ການກຽມຄວາມພ້ອມຂອງເດັກ.

## 4. ບຸລິມະສິດສໍາລັບສົກຮຽນ 2025-2026

### 4.1. ຈຸດປະສົງ

1) ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ, ກຸ່ມໂຮງຮຽນ ແລະ ໂຮງຮຽນ ເພື່ອປັບປຸງຄຸນນະພາບ, ປະສິດທິພາບ, ປະສິດທິຜົນ ແລະ ມີຄວາມຮັບຜິດຊອບຂອງເຂົາເຈົ້າ ໂດຍຜ່ານການສ້າງຄວາມສອດຄ່ອງຄືນໃໝ່ ໃນໜ້າທີ່, ພາລະບົດບາດ ແລະ ຄວາມຮັບຜິດຊອບ; ກໍານົດໜ້າວຽກ ແລະ ຕໍາແໜ່ງງານໃຫ້ຊັດເຈນ; ສ້າງລະບົບການຈັດສັນຊັບພະຍາກອນມະນຸດ ແລະ ການເງິນໃຫ້ສອດຄ່ອງກັບຄວາມຕ້ອງການຕົວຈິງ;
2) ເພື່ອເສີມຂະຫຍາຍຜົນການຮຽນຮູ້ ແລະ ຫຼຸດຜ່ອນຄວາມແຕກໂຕນ ໂດຍຜ່ານການຄຸ້ມຄອງຊັບພະຍາກອນຢ່າງມີປະສິດທິພາບ ແລະ ປະສິດທິຜົນ ໂດຍເລັ່ງໃສ່ການປັບປຸງຜົນການຮຽນໃຫ້ດີຂຶ້ນໂດຍສະເພາະໃນ 40 ເມືອງບຸລິມະສິດທີ່ດ້ອຍໂອກາດຕາມທີ່ກະຊວງສຶກສາທິການ ແລະ ກິລາ ໄດ້ກໍານົດ;
3) ເພື່ອໃຫ້ເດັກໄດ້ຮັບການເບິ່ງແຍງລ້ຽງດູ, ມີສຸຂະພາບ ແລະ ໂພຊະນາການທີ່ດີ ແລະ ພັດທະນາການຕາມກຸ່ມອາຍຸ ພ້ອມທັງມີທັກສະພາສາລາວ, ຄວາມປະພຶດ, ຄຸນສົມບັດ ແລະ ຄວາມພ້ອມເພື່ອເຂົ້າຮຽນ ປ.1;
4) ເພື່ອສ້າງ ແລະ ປັບປຸງພື້ນຖານໂຄງລ່າງຂອງສະຖານການສຶກສາກ່ອນໄວຮຽນ, ພ້ອມທັງສະໜອງສື່ອຸປະກອນການຮຽນ-ການສອນ ແລະ ເຄື່ອງຫຼິ້ນ ເພື່ອອໍານວຍຄວາມສະດວກໃຫ້ແກ່ການສຶກສາກ່ອນໄວຮຽນ.

### 4.2. ຄາດໝາຍ

1) ອັດຕາເຂົ້າຮຽນຂອງເດັກອາຍຸ 0-2 ປີ ໃຫ້ບັນລຸສູງກວ່າ 5.7%;
2) ອັດຕາເຂົ້າຮຽນຂອງເດັກອາຍຸ 3-5 ປີ ໃຫ້ບັນລຸສູງກວ່າ 65%;
3) ອັດຕາເຂົ້າຮຽນຂອງນັກຮຽນອາຍຸ 5 ປີ ໃຫ້ບັນລຸ 85.8%;
4) ດັດຊະນີຄວາມສະເໝີພາບຍິງ-ຊາຍ ໃນການເຂົ້າຮຽນຂອງນັກຮຽນອາຍຸ 5 ປີ ລະຫວ່າງ 0,97 ແລະ 1,03;
5) ອັດຕາເຂົ້າຮຽນຂອງນັກຮຽນອາຍຸ 5 ປີ ໃນ 45 ເມືອງດ້ອຍໂອກາດ (ໃໝ່) ໃຫ້ບັນລຸສູງກວ່າ 76%.

### 4.3. ການເຂົ້າເຖິງ ແລະ ເທົ່າທຽມ

#### 4.3.1. ຕົວຊີ້ບອກ

1) ອັດຕາເຂົ້າຮຽນຂອງນັກຮຽນ 5 ປີ ໃຫ້ບັນລຸ 85.8%;
2) ຫ້ອງຮຽນກຸ່ມພັດທະນາເດັກໃນຊຸມຊົນ ໄດ້ຮັບການສ້ອມແປງ ຈໍານວນ 172 ຫ້ອງ;
3) ຫ້ອງກຽມປະຖົມ ຈໍານວນ 16 ຫ້ອງ/ແຫ່ງ ໄດ້ຮັບການສ້ອມແປງ;
4) ມີໜ່ວຍສິດສອນເຄື່ອນທີ່ສໍາລັບເດັກກ່ອນໄວຮຽນໃນເຂດຈຸດສຸມໃນເມືອງຊົນນະບົດຈໍານວນ 60 ແຫ່ງ;

#### 4.3.2. ຍຸດທະສາດ

**ຍຸດທະສາດ 1:** ຂະຫຍາຍແຜນງານການກຽມຄວາມພ້ອມ 1 ປີ ກ່ອນເຂົ້າຮຽນຊັ້ນປະຖົມທີ່ຄໍານຶງເຖິງຄວາມສະເໝີພາບທາງເພດ, ເຜົ່າ ແລະ ເດັກພິການ

**ວຽກຈຸດສຸມ:**

1) ຈັດຕັ້ງປະຕິບັດການກຽມຄວາມພ້ອມກ່ອນເຂົ້າຮຽນຊັ້ນປະຖົມ ດ້ວຍ 5 ຮູບແບບ:
   - ຫ້ອງກຽມປະຖົມ;

- ກຸ່ມຮຽນຜ່ານການຫຼິ້ນ;
- ການກຽມຄວາມພ້ອມໃນໄລຍະພັກແລ້ງ 10 ອາທິດ ໄປເຂດຫ່າງໄກສອກຫຼີກ;
- ການສອນຄວບອາຍຸ 3-5 ປີ;
- ກຸ່ມພັດທະເດັກໃນຊຸມຊົນ ອາຍຸ 3-4 ປີ.

**ຍຸດທະສາດ 2:** ສະໜອງການປຸກສ້າງ ແລະ ສ້ອມແປງ ສະຖານການສຶກສາກ່ອນໄວຮຽນ ຢູ່ເຂດຈຸດສຸມ ໃນເມືອງຊົນນະບົດ ໃຫ້ມີຄວາມປອດໄພຮອບດ້ານສໍາລັບເດັກທຸກຄົນ

**ວຽກຈຸດສຸມ:**

1) ປຸກສ້າງຫ້ອງຮຽນ, ຫ້ອງນໍ້າ ແລະ ສ້ອມແປງຫ້ອງຮຽນ ສໍາລັບກຸ່ມພັດທະນາເດັກໃນຊຸມຊົນ ອາຍ3-4 ປີ;
2) ສ້ອມແປງຫ້ອງກຽມປະຖົມ ແລະ ອາຄານສະຖານການສຶກສາກ່ອນໄວຮຽນຂອງລັດ;

**ຍຸດທະສາດ 3:** ທົດລອງການຈັດຕັ້ງປະຕິບັດໜ່ວຍການສອນເຄື່ອນທີ່ ສໍາລັບການສຶກສາກ່ອນໄວຮຽນ ໃນເຂດຈຸດສຸມ ໃນເມືອງຊົນນະບົດ

**ວຽກຈຸດສຸມ:**

1) ສ້າງຄູ່ມືແນະນໍາການຈັດຕັ້ງປະຕິບັດກ່ຽວກັບການສອນແບບເຄື່ອນທີ່;
2) ຈັດຕັ້ງປະຕິບັດໜ່ວຍສິດສອນເຄື່ອນທີ່ສໍາລັບການສຶກສາກ່ອນໄວຮຽນ ໃນເຂດຈຸດສຸມເມືອງຊົນນະບົດ.

### 4.4. ຄຸນນະພາບ ແລະ ການຮຽນຮູ້

#### 4.4.1. ຕົວຊີ້ບອກ

1) ເປີເຊັນຄູສອນປະຈໍາການຊັ້ນການສຶກສາກ່ອນໄວຮຽນ ໄດ້ຮັບການຝຶກອົບຮົມ ສູງກວ່າ 15%;
2) ຜູ້ບໍລິຫານ, ຄູສອນ ແລະ ຜູ້ດູແລເດັກຮັບການເຝິກອົບຮົມກ່ຽວກັບການກຽມ ຄວາມພ້ອມໃຫ້ເດັກກ່ອນເຂົ້າຮຽນ ປ.1 ດ້ວຍຫຼາຍຮູບແບບ;
3) ເດັກອາຍຸ 3-5 ປີ ຈໍານວນ 2,700 ຄົນ ໄດ້ກວດກາຄວາມບົກຜ່ອງໜ້າທີ່ການ.

#### 4.4.2. ຍຸດທະສາດ

**ຍຸດທະສາດ 1:** ປັບປຸງຄຸນນະພາບການກຽມຄວາມພ້ອມດ້ານການຮຽນ ສໍາລັບເດັກອາຍຸ 3-5 ປີ

**ວຽກຈຸດສຸມ:**

1) ທົບທວນ ແລະ ປັບປຸງ ບັນດາເອກະສານປະກອບການຮຽນການສອນ ສໍາລັບ ຫ້ອງກຽມປະຖົມ, ກຸ່ມຮຽນ ຜ່ານການຫຼິ້ນ ແລະ ການກຽມຄວາມພ້ອມໃນໄລຍະພັກແລ້ງ 10 ອາທິດ;
2) ຝຶກອົບຮົມການຈັດຕັ້ງປະຕິບັດຫ້ອງກຽມປະຖົມ, ການສອນຄວບອາຍຸເດັກ 3-5 ປີ, ກຸ່ມຮຽນຜ່ານການຫຼິ້ນ, ການກຽມຄວາມພ້ອມໃນໄລຍະພັກແລ້ງ 10 ອາທິດ ແລະ ໜ່ວຍສິດສອນເຄື່ອນທີ່ສໍາລັບການສຶກສາກ່ອນໄວຮຽນ;
3) ສົ່ງເສີມການມີສ່ວນຮ່ວມຂອງພໍ່ແມ່ຜູ້ປົກຄອງເດັກ ໃນການສົ່ງເສີມການພັດທະນາ ແລະ ການຮຽນຮູ້ຂອງເດັກ ໂດຍຜ່ານແຜນງານຮັກລູກໃຫ້ໃສ່ໃຈ.

**ຍຸດທະສາດ 2:** ສົ່ງເສີມການພັດທະນາວິຊາຊີບຄູແບບຕໍ່ເນື່ອງສໍາລັບການສຶກສາກ່ອນໄວຮຽນ

**ວຽກຈຸດສຸມ:**

1) ຄົ້ນຄວ້າ ແລະ ປະເມີນຄູທີ່ສະເໜີຂໍຕໍາແໜ່ງວິຊາການຄູ ສໍາລັບການສຶກສາກ່ອນໄວຮຽນ;

2) ຕິດຕາມ, ຊຸກຍູ້ ແລະ ຊ່ວຍເຫຼືອໃນການ ຈັດຕັ້ງປະຕິບັດວຽກງານຕຳແໜ່ງວິຊາການຄູ ສຳລັບການສຶກສາກ່ອນໄວຮຽນ.

**ຍຸດທະສາດ 3:** ປະເມີນມາດຕະຖານຄຸນນະພາບຂັ້ນພື້ນຖານ (ມຄພ) ສຳລັບການສຶກສາກ່ອນໄວຮຽນເພື່ອໃຫ້ການພັດທະນາການສຶກສາຂັ້ນເມືອງເຮັດໜ້າທີ່ຫຼຸດຜ່ອນຄວາມແຕກໂຕນພາຍໃນເມືອງ

**ວຽກຈຸດສຸມ:**

1) ສ້າງຄວາມເຂັ້ມແຂງ ໃຫ້ແກ່ຂັ້ນແຂວງ, ຂັ້ນເມືອງ ແລະ ສະຖານການສຶກສາ ກ່ອນໄວຮຽນ ເພື່ອດຳເນີນການປະເມີນຕົນເອງ ແລະ ສ້າງແຜນພັດທະນາໂຮງຮຽນ ຕາມ ມາດຕະຖານຄຸນນະພາບຂັ້ນພື້ນຖານ;
2) ສ້າງກົນໄກ ການສອດແຊກ ແລະ ຕິດຕາມ ອັດຕາ ມາດຕະຖານຄຸນນະພາບຂັ້ນພື້ນຖານ ຊັ້ນອະນຸບານສຶກສາ ເຂົ້າໃນແຜນພັດທະນາການສຶກສາຂອງຂັ້ນແຂວງ ແລະ ຂັ້ນເມືອງ;

**ຍຸດທະສາດ 4:** ສົ່ງເສີມການຈັດຕັ້ງປະຕິບັດວຽກງານສຸຂະພາບ, ອະນາໄມ ແລະ ໂພຊະນາການ ໃນສະຖານການສຶກສາກ່ອນໄວຮຽນ

**ວຽກຈຸດສຸມ:**

1) ຈັດຕັ້ງປະຕິບັດວຽກງານກວດກາຄວາມບົກຜ່ອງໜ້າທີ່ການຂອງ ເດັກອາຍຸ 3-5 ປີ;
2) ພັດທະນາຄູ່ມືແນະນຳການນຳໃຊ້ແຜນການລ້ຽງດູ ແລະ ສຶກສາອົບຮົມເດັກ.

**ຍຸດທະສາດ 5:** ປັບປຸງຄຸນນະພາບການລ້ຽງດູ ແລະ ສຶກສາອົບຮົມເດັກ ໃນໂຮງລ້ຽງເດັກ

**ວຽກຈຸດສຸມ:**

1) ພັດທະນາຄູ່ມືແນະນຳການນຳໃຊ້ແຜນການລ້ຽງດູ ແລະ ສຶກສາອົບຮົມເດັກ;

**ຍຸດທະສາດ 6:** ສົ່ງເສີມການຝຶກອົບຮົມ ແລະ ຍົກລະດັບຄູ ແລະ ບຸກຄະລາກອນ ຈັດກອງປະຊຸມແນະນຳຄູ່ມື ຜູ້ເຮັດວຽກສຶກສານິເທດ ການສຶກສາກ່ອນໄວຮຽນ ໂມດູນ 2 ໃຫ້ແກ່ຄູຝຶກຂັ້ນສູນກາງ, ແຂວງ ແລະ ວິທະຍາໄລຄູ (ແຜນຂອງຂະແໜງການຍ່ອຍການສຶກສາຄູ)

**ຍຸດທະສາດ 7:** ສົ່ງເສີມການຝຶກອົບຮົມ ແລະ ຍົກລະດັບຄູ ແລະ ບຸກຄະລາກອນ ການຝຶກອົບຮົມຄູປະຈຳການ ກ່ຽວກັບ ການນຳໃຊ້ຫຼັກສູດ ການສຶກສາກ່ອນໄວຮຽນ (ແຜນຂອງຂະແໜງການຍ່ອຍການສຶກສາຄູ)

### 4.5. ບໍລິຫານ ແລະ ຄຸ້ມຄອງ

#### 4.5.1. ຕົວຊີ້ບອກ

1) ບັນດານິຕິກຳ, ລະບຽບການ, ມາດຕະຖານການສອນ, ລະບົບການຕິດຕາມ ແລະ ປະເມີນຜົນ ທີ່ກ່ຽວຂ້ອງກັບ ວຽກງານການສຶກສາກ່ອນໄວຮຽນໄດ້ຮັບ ການທົບທວນ ແລະ ປັບປຸງ ໃຫ້ແທດເໝາະກັບສະພາບການຈັດຕັ້ງປະຕິບັດຕົວຈິງ ຫຼາຍຂຶ້ນ;
2) ຜູ້ອຳນວຍການໂຮງຮຽນອະນຸບານໄດ້ຮັບການຝຶກອົບຮົມກ່ຽວກັບການບໍລິຫານຄຸ້ມຄອງໂຮງຮຽນຢ່າງຮອບດ້ານ.

#### 4.5.2. ຍຸດທະສາດ

**ຍຸດທະສາດ 1:** ສົ່ງເສີມບຸກຄົນ, ນິຕິບຸກຄົນ, ອົງການ ຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃນການພັດທະນາວຽກງານການສຶກສາກ່ອນໄວຮຽນ ໂດຍຮັບປະກັນການເຂົ້າເຖິງຂອງທຸກຄົນ

**ວຽກຈຸດສຸມ:**

1) ປັບປຸງ ແລະ ພັດທະນານິຕິກຳທີ່ກ່ຽວຂ້ອງ ໃນການຄຸ້ມຄອງວຽກງານການສຶກສາກ່ອນໄວຮຽນ ແລະ ການລົງທຶນຂອງພາກເອກະຊົນເຂົ້າໃນການພັດທະນາການສຶກສາກ່ອນໄວຮຽນໂດຍຄຳນຶງເຖິງຄວາມສະເໝີພາບທາງເພດ ແລະ ເຜົ່າ;
2) ຝຶກອົບຮົມການຄຸ້ມຄອງສະຖານການສຶກສາກ່ອນໄວຮຽນ ທັງພາກລັດ ແລະ ເອກະຊົນ;
3) ໂຄສະນາ ແລະ ເຜີຍແຜ່ ວຽກງານການສຶກສາກ່ອນໄວຮຽນ ດ້ວຍຫຼາຍຮູບແບບ;

**ຍຸດທະສາດ 2:** ສ້າງ ແລະ ພັດທະນາລະບົບການກວດກາ, ຕິດຕາມ ແລະ ປະເມີນຜົນ ວຽກງານການສຶກສາກ່ອນໄວຮຽນຕິດຕາມ, ຊຸກຍູ້ ແລະ ຊ່ວຍເຫຼືອ ກ່ຽວກັບການຈັດຕັ້ງປະຕິບັດວຽກງານການສຶກສາກ່ອນໄວຮຽນ

# II. ຂະແໜງການຍ່ອຍປະຖົມສຶກສາ

## 1. ສະພາບລວມ

ການສຶກສາຊັ້ນປະຖົມເປັນຂະແໜງການໜຶ່ງທີ່ສຳຄັນທີ່ສຸດເຊິ່ງເປັນການກຽມຄວາມພ້ອມສໍາລັບເດັກ ເພື່ອໃຫ້ມີທັກສະການຮຽນຮູ້ຂັ້ນພື້ນຖານ ໃນການສືບຕໍ່ຮຽນໃນຊັ້ນປະຖົມສຶກສາ. ໃນສົກຮຽນ 2024-2025 ກະຊວງສຶກສາທິການ ແລະ ກິລາ ໄດ້ປະສານສົມທົບກັບພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ເອົາໃຈໃສ່ວຽກພົວພັນກັບຊຸມຊົນ ແລະ ຄູ່ຮ່ວມພັດທະນາຕ່າງໆ ເພື່ອຊຸກຍູ້ ແລະ ສົ່ງເສີມໃຫ້ເດັກໃນເກນອາຍຸໄດ້ເຂົ້າເຖິງການສຶກສາຊັ້ນປະຖົມ. ນອກຈາກນີ້ຜູ້ອຳນວຍການ ແລະ ຄູສອນແມ່ນມີທັກສະການຮຽນການສອນເພີ່ມຂຶ້ນ ແລະ ມີຄວາມຮັບຜິດຊອບໃນການປະຕິບັດໜ້າທີ່, ນອກຈາກນີ້ຄະນະພັດທະນາການສຶກສາຂັ້ນບ້ານຍັງມີສ່ວນຮ່ວມໃນການພັດທະນາການສຶກສາຫຼາຍຂຶ້ນ ແລະ ທາງກະຊວງປ້ອງກັນປະເທດກໍ່ຍັງມີສ່ວນຮ່ວມໃນການສຶກສາໃນເຂດຊາຍແດນທີ່ຂາດເຂີນຄູ. ວຽກງານນໍ້າ ແລະ ສຸຂະອະນາໄມໃນໂຮງຮຽນເຫັນວ່າໂຮງຮຽນຫຼາຍແຫ່ງໄດ້ຮັບການປັບປຸງ ແລະ ນັກຮຽນໄດ້ນໍາໃຊ້ຫຼາຍຂຶ້ນ.

**ຕາຕະລາງທີ 9: ຈຳນວນໂຮງຮຽນ, ຫ້ອງຮຽນ, ຄູສອນ ແລະ ນັກຮຽນ ສົມທຽບ 2 ສົກຮຽນ 2023-2024 ແລະ 2024-2025 ທົ່ວປະເທດ**

| ຊັ້ນປະຖົມສຶກສາ | 2023-2024 | | | | 2024-2025 | | | | ສົມທຽບ 2 ສົກຮຽນ | | | |
|---|---|---|---|---|---|---|---|---|---|---|---|---|
| | ໂຮງຮຽນ | ຫ້ອງຮຽນ | ຄູສອນ | ນັກຮຽນ | ໂຮງຮຽນ | ຫ້ອງຮຽນ | ຄູສອນ | ນັກຮຽນ | ໂຮງຮຽນ | ຫ້ອງຮຽນ | ຄູສອນ | ນັກຮຽນ |
| ພາກລັດ | 8,284 | 27,540 | 28,003 | 666,667 | 8,208 | 26,973 | 27,207 | 658,521 | -76 | -567 | -796 | -8,146 |
| ພາກເອກະຊົນ | 390 | 2,718 | 3,196 | 73,417 | 427 | 2,942 | 3,457 | 81,033 | 37 | 224 | 261 | 7,616 |
| ລັດ ແລະ ເອກະຊົນ | 8,674 | 30,258 | 31,199 | 740,084 | 8,635 | 29,915 | 30,664 | 739,554 | -39 | -343 | -535 | -530 |

ແຫຼ່ງຂໍ້ມູນ:ສູນສະຖິຕິການສຶກສາແລະກິລາ

**ຕາຕະລາງທີ 10: ອັດຕາເຂົ້າຮຽນໃນຊັ້ນປະຖົມສຶກສາສົມທຽບ 2 ສົກຮຽນ 2023-2024 ແລະ 2024-2025 (ແຍກຕາມເພດ)**

| ຊັ້ນປະຖົມສຶກສາ | 2023-2024 | | | 2024-2025 | | | ສົມທຽບ 2 ສົກຮຽນ | | |
|---|---|---|---|---|---|---|---|---|---|
| | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ |
| ອັດຕາເຂົ້າໃໝ່ລວມຊັ້ນປະຖົມສຶກສາ (%) | 108.4 | 107.3 | 109.6 | 107.8 | 107 | 108.6 | -0.6 | -0.3 | -1 |
| ອັດຕາເຂົ້າໃໝ່ສຸດທິຊັ້ນປະຖົມສຶກສາ (%) | 99.1 | 98.8 | 99.3 | 99.3 | 99 | 99.5 | 0.2 | 0.2 | 0.2 |
| ອັດຕາເຂົ້າຮຽນລວມຊັ້ນປະຖົມສຶກສາ (%) | 103 | 102.1 | 103.8 | 102.2 | 101.4 | 102.9 | -0.8 | -0.7 | -0.9 |
| ອັດຕາເຂົ້າຮຽນສຸດທິ ຊັ້ນປະຖົມສຶກສາ (%) | 98.4 | 98.1 | 98.6 | 98.4 | 98.1 | 98.6 | 0 | 0 | 0 |

ແຫຼ່ງຂໍ້ມູນ:ສູນສະຖິຕິການສຶກສາແລະກິລາ

ຕາຕະລາງທີ 11: **ອັດຕາປະລະ, ອັດຕາຄ້າງຫ້ອງ ແລະ ອັດຕາການເລື່ອນຊັ້ນ-ເລື່ອນຊັ້ນ ສົມທຽບ 2 ສົກຮຽນ 2023-2024 ແລະ 2024-2025 ໃນທົ່ວປະເທດ**

| ຊັ້ນປະຖົມສຶກສາ | 2023-2024 | | | 2024-2025 | | | ສົມທຽບ 2 ສົກຮຽນ | | |
|---|---|---|---|---|---|---|---|---|---|
| | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ |
| ອັດຕາເລື່ອນຊັ້ນ-ຈົບຊັ້ນປະຖົມສຶກສາ | 93.1 | 93.9 | 92 | 93.3 | 94.3 | 92.3 | 0.2 | 0.4 | 0.3 |
| ອັດຕາຄ້າງຫ້ອງຊັ້ນປະຖົມສຶກສາ | 2.4 | 1.8 | 2.9 | 2.2 | 1.7 | 2.7 | -0.2 | -0.1 | -0.2 |
| ອັດຕາປະລະຊັ້ນປະຖົມສຶກສາ | 4.7 | 4.3 | 5.1 | 4.5 | 4 | 5 | -0.2 | -0.3 | -0.1 |

ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ແລະ ກິລາ

**ຮູບທີ 1: ປຽບທຽບອັດຕາປະລະໃນຊັ້ນປະຖົມສຶກສາ ໃນສົກຮຽນ 2023-2024 ແລະ 2024-2025**

**(ແຍກຕາມແຂວງ)**




ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ແລະ ກິລາ

ຮູບສະແດງຂ້າງເທິງ ສະແດງໃຫ້ເຫັນເຖິງຄວາມແຕກຕ່າງຂອງອັດຕາການປະລະການຮຽນໃນແຕ່ລະແຂວງ, ຊຶ່ງເຫັນໄດ້ວ່າ ມີຈຳນວນ 11 ແຂວງທີ່ອັດຕາປະລະມີທ່າອ່ຽງຫຼຸດລົງ ເຊິ່ງມີ ແຂວງ ຫຼວງນ້ຳທາ, ອຸດົມໄຊ, ບໍ່ແກ້ວ, ຫົວພັນ, ໄຊຍະບູລີ, ຊຽງຂວາງ, ບໍລິຄຳໄຊ, ຄຳມ່ວນ, ສະຫັວນນະເຂດ, ສາລະວັນ ແລະ ອັດຕະປື ເຖິງວ່າເປີເຊັນຈະຫຼຸດລົງກໍ່ຕາມເຫັນວ່າອັດຕາປະລະຍັງເປັນຕົວເລກທີ່ສູງຫຼາຍ ໃນຄະນະດຽວກັນນີ້ຍັງມີຈຳນວນ 6 ແຂວງທີ່ອັດຕາປະລະຊັ້ນປະຖົມສຶກສາເພີ່ມຂຶ້ນ ເຊັ່ນ: ນະຄອນຫຼວງວຽງຈັນ, ຜົ້ງສາລີ, ຫຼວງພະບາງ, ວຽງຈັນ, ເຊກອງ ແລະ ໄຊສົມບູນ ເພີ່ມຫຼາຍທີ່ສຸດແມ່ນຢູ່ແຂວງ ໄຊສົມບູນ ຈາກ 4,8 % ເປັນ 7 %.

2. **ຜົນສຳເລັດຜົນໄດ້ຮັບສະດັບສູງ**

**2.1 ຈຳນວນນັກຮຽນທີ່ຮຽນຈົບຈາກຊັ້ນປະຖົມສຶກສາ ທີ່ມີຄວາມພ້ອມດ້ານການຮຽນ ໂດຍສະ ເພາະທັກສະການຮຽນຮູ້ດ້ານພາສາ ແລະ ທັກສະການຄິດໄລ່ເລກພື້ນຖານເພີ່ມຂຶ້ນ ໂດຍສຸມໃສ່ເປັນພິເສດຕໍ່ຜູ້ດ້ອຍໂອກາດ ແລະ ຮັບປະກັນຄວາມສະເໝີພາບລະຫວ່າງຍິງ-ຊາຍ.**

1) ຄູສອນ ຊັ້ນປະຖົມສຶກສາໃນຂອບເຂດທົ່ວປະເທດໄດ້ຮັບການຝຶກອົບຮົມວິທີການນຳໃຊ້ຫຼັກສູດໃໝ່ພ້ອມທັງນຳໃຊ້ເຂົ້າໃນການຮຽນການສອນຊັ້ນປະຖົມໃນຂອບເຂດທົ່ວປະເທດ;
2) ສ້າງຄວາມຄວາມເຂັ້ມແຂງໃຫ້ຄູສອນຄະນິດສາດຂັ້ນປະຖົມສຶກສາ;
3) ພະນັກງານກະຊວງປ້ອງກັນປະເທດໄດ້ຮັບການຝຶກອົບຮົມວິຊາຄູເພື່ອສອນຊ່ວຍໂຮງຮຽນທີ່ຂາດຄູໃນເຂດຊາຍແດນ;
4) ຜູ້ອຳນວຍການ ແລະ ຄູສອນໄດ້ຮັບການຝຶກອົບຮົມເຂັ້ມວິຊາພາສາລາວ ແລະ ຄະນິດສາດຂັ້ນ ປ.1-ປ.3;
5) ສຳເລັດການສອບເສັງຈົບຊັ້ນປະຖົມສຶກສາ ປ.5 ທົ່ວປະເທດ ແລະ ສຳເລັດການສອບເສັງນັກຮຽນເກັ່ງຊັ້ນປະຖົມສຶກສາ ປ.5;
6) ສະໜອງເບ້ຍລ້ຽງໃຫ້ນັກຮຽນທີ່ທຸກຍາກ ແລະ ດ້ອຍໂອກາດຊັ້ນປະຖົມສຶກສາ ຈຳນວນ 1,000 ຄົນ.

**2.2 ຈຳນວນຄູ ແລະ ຜູ້ອຳນວຍການໂຮງຮຽນປະຖົມສຶກສາ ທີ່ມີຄວາມຮູ້ຄວາມສາມາດສອດຄ່ອງກັບມາດຕະຖານການສິດສອນທີ່ໄດ້ກຳນົດຜ່ານມາເພີ່ມຂຶ້ນ ໂດຍໃຫ້ມີການປະເມີນຜົນ ການປະຕິບັດໜ້າທີ່ຂອງເຂົາເຈົ້າຢ່າງເປັນປົກກະຕິ**

1) ເກັບຂໍ້ມູນການຈັດຕັ້ງ ແລະ ເຄື່ອນໄຫວຂອງກຸ່ມໂຮງຮຽນປະຖົມ ໃນ 40 ເມືອງສາມສ້າງ; ສຳເລັດກອງປະຊຸມວິເຄາະຂໍ້ມູນ ການຈັດຕັ້ງປະຕິບັດ ແລະ ເຄື່ອນໄຫວຂອງກຸ່ມໂຮງຮຽນປະຖົມສຶກສາ;
2) ສຳເລັດ ການສ້າງຂໍ້ຕົກລົງ ແລະ ຄູ່ມື ແນະນຳ ການຄັດເລືອກໂຮງຮຽນສາມັນຕົວແບບ; ສຳເລັດການປັບປຸງຂໍ້ຕົກລົງ ແລະ ຄູ່ມືການຈັດຕັ້ງປະຕິບັດ ແລະ ເຄື່ອນໄຫວຂອງກຸ່ມໂຮງຮຽນປະຖົມສຶກສາ;
3) ສຳເລັດການສ້າງເຄື່ອງມື ຕິດຕາມ, ເກັບຂໍ້ມູນ ການຈັດຕັ້ງ ແລະ ເຄື່ອນໄຫວຂອງກຸ່ມໂຮງຮຽນປະຖົມ; ສຳເລັດການກວດກາ ແລະ ປະເມີນຄູທີ່ຂໍຕຳແໜ່ງວິຊາການຄູຈຳນວນ 8 ທ່ານ ຍິງ 6 ທ່ານ ແລະ ຜ່ານເກນການປະເມີນ ແລະ ໄດ້ຮັບຕຳແໜ່ງວິຊາການຄູ ຈຳນວນ 6 ທ່ານ ຍິງ 6 ທ່ານ;
4) ສຳເລັດຝຶກອົບຮົມກ່ຽວກັບວິທີການສອນສອດແຊກຄວາມຮູ້ພະຍາດວໍ້ ແລະ ການກິນຢາຂ້າແມ່ທ້ອງ ໃຫ້ແກ່ຜູ້ຮັບຜິດຊອບວຽກງານກັນພະຍາດ ແລະ ສົ່ງເສີມສຸຂະພາບໃນໂຮງຮຽນ ຂັ້ນແຂວງ, ຂັ້ນເມືອງ ແລະ ຜູ້ອຳນວຍການໂຮງຮຽນປະຖົມສຶກສາ ແຂວງຜົ້ງສາລີ, ຫຼວງນໍ້າທາ, ຊຽງຂວາງ ແລະ ຫຼວງພະບາງ;
5) ສຳເລັດການລົງຕິດຕາມຊ່ວຍເຫຼືອຄູ ກ່ຽວກັບການປະເມີນເພື່ອປັບປຸງການຮຽນການສອນໃນ 5 ແຂວງ ໄດ້ທົດລອງ ນະຄອນຫຼວງວຽງຈັນ, ແຂວງຫຼວງພະບາງ, ຊຽງຂວາງ, ຄຳມ່ວນ ແລະ ສະຫວັນນະເຂດ;
6) ສຳເລັດການຈັດກອງປະຊຸມກວດແກ້ ຮ່າງຄຳແນະນຳ ການປຸງແຕ່ງອາຫານທ່ຽງ ສຳລັບສະຖານການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ;
7) ສຳເລັດການຕິດຕາມຊຸກຍູ້ ແລະ ປະເມີນຜົນການນຳໃຊ້ຫຼັກສູດການຮຽນ-ການສອນຂອງຜູ້ອຳນວຍການ, ຄູສອນ ແລະ ນັກຮຽນ ຢູ່ໂຮງຮຽນສຶກສາຄົນພິການ ແຂວງຫຼວງພະບາງ ແລະ ນະຄອຫຼວງວຽງຈັນ;
8) ສຳເລັດການລົງຕິດຕາມ,ການຄຸ້ມຄອງ-ບໍລິຫານໂຮງຮຽນສາມັນກິນນອນຊົນເຜົ່າຢູ່ແຂວງບໍລິຄຳໄຊ, ແຂວງຄຳມ່ວນ ແລະ ແຂວງສະຫວັນນະເຂດ;
9) ສຳເລັດການລົງຊຸກຍູ້ ແລະ ຊ່ວຍເຫຼືອ ໂຮງຮຽນເປົ້າໝາຍທີ່ຈະສ້າງເປັນໂຮງຮຽນ ຕົວແບບຂອງວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນປະຖົມສຶກສາ ເມືອງນາກາຍ ແຂວງຄຳມ່ວນ ພາຍໃຕ້ທຶນສະໜັບສະໜູນຂອງບໍລິສັດໄຟຟ້ານໍ້າເທີນ 2;

10) ສຳເລັດການລົງຕິດຕາມ, ຊຸກຍູ້ ແລະ ຊ່ວຍເຫຼືອ ການຈັດຕັ້ງປະຕິບັດວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ ໂຄງການ ກອງທຶນຮ່ວມມືສາກົນໄລຍະສາມ GPE III ທີ່ ແຂວງ ຜົ້ງສາລີ, ບໍ່ແກ້ວ, ຫຼວງນ້ຳທາ, ຫຼວງພະບາງ, ອຸດົມໄຊ, ໄຊຍະບູລີ, ຫົວພັນ, ຊຽງຂວາງ; ບໍລິຄຳໄຊ ແລະ ສະຫວັນນະເຂດ;

11) ສຳເລັດລົງຕິດຕາມການຈັດຕັ້ງປະຕິບັດໂຄງການສົ່ງເສີມການເຂົ້າເຖິງການສຶກສາຮຽນຮ່ວມ ສຳລັບເດັກທີ່ມີຄວາມບົກພ່ອງທາງດ້ານສະຕິປັນຍາທີ່ແຂວງຈຳປາສັກ.

**2.3 ໂຮງຮຽນປະຖົມສຶກສາທຸກແຫ່ງມີຊັບພະຍາກອນທາງດ້ານການເງິນ ແລະ ຊັບພະຍາກອນມະນຸດພຽງພໍ ເພື່ອໃຫ້ສາມາດເຮັດວຽກໄດ້ຢ່າງມີປະສິດທິຜົນ, ພ້ອມທັງຂີດຄວາມສາມາດໃນການຄຸ້ມຄອງໂຮງຮຽນ ແລະ ການສະໜັບສະໜູນຂອງຄະນະພັດທະນາການສຶກສາຂັ້ນບ້ານມີຄວາມເຂັ້ມແຂງຂຶ້ນ ເພື່ອໃຫ້ສອດຄ່ອງກັບມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາ ແລະ ຊ່ວຍໃຫ້ຜົນການຮຽນຂອງນັກຮຽນປັບປຸງດີຂຶ້ນ**

1) ສຳເລັດຝຶກອົບຮົມ ການບໍລິຫານຄຸ້ມຄອງທີ່ເນັ້ນໂຮງຮຽນເປັນຫຼັກ ໃຫ້ຜູ້ອຳນວຍການ, ຄູ ແລະ ຄພສບ ໃນ 14 ໂຮງຮຽນ ເປົ້າໝາຍທົດລອງ; ສຳເລັດຝຶກອົບຮົມວຽກງານພັດທະນາການສຶກສາຂັ້ນບ້ານ ໃຫ້ ຄພສບ ຈຳນວນ 54 ບ້ານ ໃນເມືອງສາມສ້າງຂອງ 14 ແຂວງ (ຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ, ຫົວພັນ, ຊຽງຂວາງ, ໄຊຍະບູລີ, ຫຼວງພະບາງ, ບໍ່ແກ້ວ, ນະຄອນຫຼວງ, ວຽງຈັນ, ບໍລິຄຳໄຊ, ໄຊສົມບູນ, ຄຳມ່ວນ, ສະຫວັນນະເຂດ);
2) ສຳເລັດລົງຕິດຕາມ, ຊຸກຍູ້ ຊ່ວຍເຫຼືອ ການຈັດຕັ້ງປະຕິບັດ ວຽກງານ ບໍລິຫານຄຸ້ມຄອງທີ່ເນັ້ນໂຮງຮຽນເປັນຫຼັກ ໃນ 14 ໂຮງຮຽນ ເປົ້າໝາຍທົດລອງ; ສຳເລັດການລົງປະເມີນຜູ້ອຳນວຍການໂຮງຮຽນ ໃນການຈັດຕັ້ງປະຕິບັດວຽກງານບໍລິຫານຄຸ້ມຄອງທີ່ເນັ້ນໂຮງຮຽນເປັນຫຼັກ ໃນ 14 ໂຮງຮຽນເປົ້າໝາຍທົດລອງ;
3) ສຳເລັດບົດວິເຄາະຂໍ້ມູນການຈັດຕັ້ງປະຕິບັດ ການບໍລິຫານຄຸ້ມຄອງທີ່ເນັ້ນໂຮງຮຽນເປັນຫຼັກ ໃນ 14 ໂຮງຮຽນເປົ້າໝາຍທົດລອງຂອງ 14 ເມືອງ ໃນ 7 ແຂວງ; ສຳເລັດກອງປະຊຸມຖອດຖອນບົດຮຽນ ວຽກງານການບໍລິຫານຄຸ້ມຄອງທີ່ເນັ້ນໂຮງຮຽນເປັນຫຼັກ ໃນ 7 ແຂວງ 14 ເມືອງ ເປົ້າໝາຍທົດລອງ;
4) ສຳເລັດການຈັດກອງປະຊຸມ ຄັດເລືອກຕົວຊີ້ບອກຂອງ ການປະເມີນ 3 ດາວ ຊັ້ນປະຖົມສຶກສາ ເຂົ້າໃນລະບົບ LESMIS;
5) ສຳເລັດການຈັດກອງປະຊຸມຖອນຖອດບົດຮຽນວຽກນ້ຳ ແລະ ສຸຂະອານາໄມໃນໂຮງຮຽນໂດຍນຳໃຊ້ຮູບແບບສາມດາວ;
6) ສຳເລັດການຈັດຝຶກອົບຮົມຄູຝຶກ ວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ ພາຍໃຕ້ທຶນສະໜັບສະໜູນຂອງລັດຖະບານເຢຍລະມັນ ຜ່ານຮູບແບບສົ່ງເສີມການຜະລິດກະສິກຳຂອງຊຸມຊົນ ໃຫ້ຄະນະຮັບຜິດຊອບຂັ້ນແຂວງ ແລະ ຂັ້ນເມືອງໃນແຂວງສາລະວັນ, ເຊກອງ ແລະ ແຂວງອັດຕະປື ພ້ອມທັງລົງຕິດຕາມສະໜັບສະໜູນວິຊາການ ໃຫ້ຄູຝຶກຂັ້ນແຂວງ ແລະ ເມືອງ ໃນການເຝິກອົບຮົມໃຫ້ຄະນະຮັບຜິດຊອບຂັ້ນບ້ານ/ໂຮງຮຽນ ໃນເມືອງ ເລົ່າງາມ ແລະ ເມືອງສະໜ້ອຍ ແຂວງສາລາວັນ, ເມືອງດາກຈຶງ, ເມືອງກະລຶມ ແລະ ທ່າແຕງ ແຂວງເຊກອງ, ເມືອງ ສາມັກຄີໄຊ, ເມືອງຊານໄຊ ແລະ ເມືອງພູວົງ ແຂວງອັດຕະປື;
7) ສຳເລັດກອງປະຊຸມຄະນະຮັບຜິດຊອບວິຊາການ ແລະ ການປະສານງານໂຄງການອາຫານທ່ຽງໃນໂຮງຮຽນທີ່ກະຊວງສຶກສາທິການ ແລະ ກິລາຮັບຜິດຊອບ ເພື່ອສະຫຼຸບ, ຖອດຖອນບົດຮຽນ ທາງດ້ານວິຊາການ ແລະ ຄົ້ນຄວ້າພິຈາລະນາ ແຜນກິດຈະກຳໂຄງການ 2025;
8) ສຳເລັດກອງປະຊຸມພັດທະນາຄູ່ມືແນະນຳການຄຸ້ມຄອງ ໂຄງການອາຫານທ່ຽງໃນໂຮງຮຽນປະຖົມສຶກສາ ທີ່ເມືອງນາກາຍ ແຂວງຄຳມ່ວນ;
9) ສຳເລັດການຈັດກອງະຊຸມພັດທະນາຄຳແນະນຳ ກ່ຽວກັບການຄຸ້ມຄອງງົບປະມານ ໂຄງການສົ່ງເສີມອາຫານທ່ຽງໃນໂຮງຮຽນປະຖົມສຶກສາ ເມືອງນາກາຍ ແຂວງຄຳມ່ວນ ພາຍໃຕ້ທຶນສະໜັບສະໜູນຂອງບໍລິສັດໄຟຟ້ານ້ຳເທີນ 2;

10) ສຳເລັດການຖອດຖອນບົດຮຽນ ວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ ທົ່ວປະເທດ ປະຈຳປີ 2024.

### 3. ບັນຫາ ແລະ ສິ່ງທ້າທາຍ

1) ຜູ້ບໍລິຫານຂັ້ນແຂວງ, ຂັ້ນເມືອງຍັງທັນໄດ້ລົງຕິດຕາມຊຸກຍູ້ຊ່ວຍເຫຼືອໂຮງຮຽນຢ່າງທົ່ວເຖິງໃນການປະຕິບັດວຽກງານນໍ້າ ແລະ ສຸຂະອະນາໄມ;
2) ນຳສົ່ງປຶ້ມແບບຮຽນ ແລະ ຄູ່ມື ໃຫ້ແກ່ໂຮງຮຽນແມ່ນຍັງບໍ່ໄປຕາມແຜນການເປີດສົກຮຽນ ເຮັດໃຫ້ການຮຽນການສອນຂອງໂຮງຮຽນເຂດຫ່າງໄກບໍ່ໄດ້ຮັບປຶ້ມ ຍ້ອນການຈັດສົ່ງຮອດແຕ່ຂັ້ນເມືອງ;
3) ຄູທີ່ໄດ້ຮັບການຝຶກອົບຮົມນຳໃຊ້ຫຼັກສູດໃໝ່ແຕ່ບໍ່ໄດ້ນຳໃຊ້ເຂົ້າໃນການຮຽນການສອນຕົວຈິງ ແລະ ຄູຈຳນວນຫຼາຍຍັງບໍ່ທັນໄດ້ຮັບການຝຶກອົບຮົມກ່ຽວກັບການປະເມີນເພື່ອປັບປຸງການຮຽນ;
4) ຍັງມີນັກຮຽນປະຖົມຈຳນວນໜຶ່ງປະລະການຮຽນ ໄປນຳພໍ່ແມ່ທີ່ຍ້າຍຖິ່ນຖານໄປຕາມການຜະລິດ, ໄປອອກແຮງງານ ທັງພາຍໃນ ແລະ ຕ່າງປະເທດ;
5) ການຈັດການຮຽນການສອນຫ້ອງຄວບ ແລະ ຄວບຫຼາຍຂັ້ນຮຽນຍັງມີທ່າອ່ຽງເພີ່ມຂຶ້ນຫຼາຍທັງໃນເມືອງ ແລະ ນອກຕົວເມືອງ;
6) ໂຮງຮຽນຈຳນວນໜຶ່ງບໍ່ໄດ້ຈັດການຮຽນການສອນພາສາອັງກິດຍ້ອນຄວາມຮູ້ພື້ນຖານພາສາອັງກິດຂອງຄູຍັງຕໍ່າ.

### 4. ບູລິມະສິດສຳລັບສົກຮຽນ 2025-2026

#### 4.1. ຈຸດປະສົງ

1) ເພື່ອສົ່ງເສີມການເຂົ້າເຖິງການສຶກສາ ແລະ ຮຽນຈົນຈົບການສຶກສາຊັ້ນປະຖົມ ທີ່ມີຄຸນນະພາບ ແລະ ເທົ່າທຽມກັນ, ພ້ອມທັງຜົນການຮຽນຂອງນັກຮຽນ ໄດ້ຮັບການປັບປຸງ ແລະ ເທົ່າທຽມກັນຫຼາຍຂຶ້ນ;
2) ເພື່ອປັບປຸງຜົນການຮຽນຂອງນັກຮຽນປະຖົມໃຫ້ດີຂຶ້ນ ແລະ ຫຼຸດຜ່ອນຄວາມແຕກໂຕນກັນ;
3) ເພື່ອສົ່ງການຈັດຕັ້ງປະຕິບັດການປະເມີນເພື່ອປັບປຸງຜົນການຮຽນ ແລະ ການເລື່ອນຂັ້ນ, ເລື່ອນຊັ້ນແບບຕໍ່ເນື່ອງໃຫ້ມີຄຸນນະພາບ ແລະ ສືບຕໍ່ຮຽນຊັ້ນມັດທະຍົມສຶກສາຕອນຕົ້ນ.

#### 4.2. ຄາດໝາຍ

1) ອັດຕາເຂົ້າຮຽນໃໝ່ສຸດທິ ຂັ້ນ ປ.1 ໃຫ້ບັນລຸໄດ້ 99.4% ຂຶ້ນໄປ;
2) ອັດຕາປະລະການຮຽນຂອງນັກຮຽນ ປ. 1 ບໍ່ໃຫ້ເກີນ 5.3%;
3) ອັດຕາປະລະການຮຽນຂອງນັກຮຽນຊັ້ນປະຖົມ ບໍ່ໃຫ້ເກີນ 4%;
4) ອັດຕາຈົບຊັ້ນປະຖົມສຸດທິ ຕາມກະແສນັກຮຽນ ໃຫ້ບັນລຸໄດ້ສູງກວ່າ 73.3%;
5) ອັດຕາຈົບຊັ້ນປະຖົມສຸດທິ ຕາມກະແສນັກຮຽນ ໃນ 45 ເມືອງບູລິມະສິດຂອງຂະແໜງການສຶກສາ ໃຫ້ບັນລຸໄດ້ສູງກວ່າ 55%.

#### 4.3. ການເຂົ້າເຖິງ ແລະ ເທົ່າທຽມ

##### 4.3.1. ຕົວຊີ້ບອກ:

1) ອັດຕາເຂົ້າຮຽນໃໝ່ສຸດທິ ໃນ 45 ເມືອງບູລິມະສິດຂອງຂະແໜງການສຶກສາ ໃຫ້ບັນລຸໄດ້ 97.7%;
2) ອັດຕາເຂົ້າຮຽນລວມຊັ້ນປະຖົມ ໃຫ້ບັນລຸໄດ້ 101.9%;
3) ດັດຊະນີຄວາມສະເໝີພາບຍິງ-ຊາຍ ໃນການເຂົ້າຮຽນລວມຊັ້ນປະຖົມ ໃຫ້ບັນລຸໄດ້ລະຫວ່າງ 0.97-1.03;
4) ອັດຕາປະລະການຮຽນຊັ້ນປະຖົມ ໃນ 45 ເມືອງບູລິມະສິດຂອງຂະແໜງການສຶກສາ ບໍ່ໃຫ້ເກີນ 7%;
5) ອັດຕາຄ້າງຫ້ອງຊັ້ນປະຖົມ ໃນ 45 ເມືອງບູລິມະສິດຂອງຂະແໜງການສຶກສາ ບໍ່ໃຫ້ເກີນ 4%;
6) ເປີເຊັນໂຮງຮຽນປະຖົມທີ່ມີນໍ້າໃຊ້ ແລະ ວິດຖ່າຍ ໃຫ້ບັນລຸໄດ້ 77%

#### 4.3.2. ຍຸດທະສາດ

**ຍຸດທະສາດ 1:** ສົ່ງເສີມການເຂົ້າຮຽນຊັ້ນປະຖົມສຶກສາທຸກຄົນໃນເກນອາຍຸເຂົ້າຮຽນຢ່າງເທົ່າທຽມກັນ

**ວຽກຈຸດສຸມ:**

1) ສ້າງ ແລະ ປັບປຸງ ນິຕິກຳ ກ່ຽວກັບການຄຸ້ມຄອງໂຮງຮຽນ, ການສຶກສາຮຽນຮ່ວມ, ອາຫານທ່ຽງໃນໂຮງຮຽນ;
2) ປັບປຸງນິຕິກຳຊ່ວຍຫຼຸດຜ່ອນລາຍຈ່າຍຄອບຄົວທີ່ຕິດພັນກັບການເຂົ້າຮຽນ;
3) ການສະໜອງສິ່ງອຳນວຍຄວາມສະດວກໃນການເຂົ້າຮຽນ ລວມທັງການສຶກສາຮຽນຮ່ວມ;
4) ສະໜອງອຸປະກອນ (ປຶ້ມແບບຮຽນ, ປຶ້ມຂຽນ, ກະດານດຳ, ພາຫານະ, ອຸປະກອນໄອຊີທີ, ຖົງປຶ້ມ, ປຶ້ມນິທານ, ປຶ້ມອ່ານເສີມ);
5) ສະໜອງອຸປະກອນຊ່ວຍເຫຼືອສຳລັບນັກຮຽນພິການ.

**ຍຸດທະສາດ 2:** ສະໜອງສິ່ງຈູງໃຈໃຫ້ນັກຮຽນ ໃນເຂດຫ່າງໄກສອກຫຼີກ ເພື່ອຫຼຸດຜ່ອນອັດຕາການຄ້າງຫ້ອງ ແລະ ການປະລະການຮຽນ

**ວຽກຈຸດສຸມ:**

1) ສົ່ງເສີມອາຫານທ່ຽງໃນໂຮງຮຽນໃຫ້ຖືກຫຼັກໂພຊະນາການ;
2) ການສະໜອງເບ້ຍລ້ຽງໃຫ້ແກ່ນັກຮຽນ ທີ່ດ້ອຍໂອກາດ ລວມທັງນັກຮຽນພິການ;
3) ຕິດຕາມການມາຮຽນຂອງນັກຮຽນທີ່ໄດ້ຮັບເບັ້ຍລ້ຽງ ແລະ ອາຫານທ່ຽງ;
4) ສ້າງລະບົບຕິດຕາມນັກຮຽນທີ່ມີຄວາມສ່ຽງທີ່ຈະອອກໂຮງຮຽນ.

**ຍຸດທະສາດ 3:** ສົ່ງເສີມສະພາບແວດລ້ອມພາຍໃນໂຮງຮຽນທີ່ປອດໄພ

**ວຽກຈຸດສຸມ:**

1) ປັບປຸງນິຕິກຳການພັດທະນາໂຮງຮຽນໃຫ້ເປັນໂຮງຮຽນສີຂຽວ;
2) ພັດທະນາໂຮງຮຽນໃຫ້ເປັນໂຮງຮຽນສີຂຽວ;
3) ປົກປ້ອງການໃຊ້ຄວາມຮຸນແຮງຕໍ່ເດັກ, ເດັກພິການໃນໂຮງຮຽນ

**ຍຸດທະສາດ 4:** ສົ່ງເສີມການມີສ່ວນຮ່ວມຂອງ ຄະນະພັດທະນາການສຶກສາຂັ້ນບ້ານ ແລະ ຊຸມຊົນໃນພັດທະນາໂຮງຮຽນ

**ວຽກຈຸດສຸມ:**

1) ສ້າງຄວາມເຂັ້ມແຂງໃຫ້ແກ່ ຄະນະພັດທະນາການສຶກສາຂັ້ນບ້ານ;
2) ປຸກລະດົມຂົນຂວາຍຊຸມຊົນໃນການເຂົ້າເຖິງການສຶກສາ;
3) ຕິດຕາມຊ່ວຍເຫຼືອການປະຕິບັດໜ້າທີ່ຂອງຄະນະພັດທະນາການສຶກສາຂັ້ນບ້ານ.

**ຍຸດທະສາດ 5:** ສົ່ງເສີມສຸຂະພາບ, ສຸຂະອະນາໄມ ແລະ ໂພຊະ ນະການ ໃນໂຮງຮຽນ

**ວຽກຈຸດສຸມ:**

1) ສ້າງຄວາມເຂັ້ມແຂງໃຫ້ແກ່ ຜູ້ບໍລິຫານການສຶກສາ ຂັ້ນເມືອງ, ຂັ້ນແຂວງ ໃນການສົ່ງເສີມສຸຂະພາບ, ສຸຂະອະນາໄມ ແລະ ໂພຊະນະການ ລວມທັງອາຫານທ່ຽງໃນໂຮງຮຽນ;
2) ສົ່ງເສີມທັກສະຄວາມຮູ້ໃຫ້ແກ່ນັກຮຽນກ່ຽວກັບເພດສຶກສາ, ບົດບາດຍິງ-ຊາຍ, ລະເບີດບໍ່ທັນແຕກ, ການໃຊ້ຄວາມຮຸນແຮງ, ການສຶກສາຮຽນຮ່ວມ ແລະ ການປ້ອງກັນສິ່ງເສບຕິດໃນໂຮງຮຽນ;
3) ຕິດຕາມການປະເມີນວຽກງານສຸຂະພາບດີໃນໂຮງຮຽນ ຕາມຮູບແບບ 3 ດາວ;

**ຍຸດທະສາດ 6:** ສົ່ງເສີມວຽກງານການຮຽນຮູ້ຕະຫຼອດຊີວິດໃນຊັ້ນປະຖົມສຶກສາ

**ວຽກຈຸດສຸມ:**

1) ສົ່ງເສີມການການຮຽນການສອນ ການຮຽນຮູ້ຕະຫຼອດຊີວິດ ທຸກຮູບແບບ;
2) ການເຊື່ອມສານການສຶກສາທັງໃນ ແລະ ນອກໂຮງຮຽນຢ່າງເປັນລະບົບ;
3) ສົ່ງເສີມການການຮຽນການສອນ ການຮຽນຮູ້ຕະຫຼອດຊີວິດ ທຸກຮູບແບບ;
4) ການເຊື່ອມສານການສຶກສາທັງໃນ ແລະ ນອກໂຮງຮຽນຢ່າງເປັນລະບົບ;
5) ສ້າງຄວາມເຂັ້ມແຂງໃຫ້ແກ່ຄູສອນນອກໂຮງຮຽນ.

## 4.4. ຄຸນນະພາບ ແລະ ຄວາມສອດຄ່ອງ

### 4.4.1. ຕົວຊີ້ບອກ

1) ເປີເຊັນຄູສອນຊັ້ນປະຖົມສຶກສາ ທີ່ໄດ້ຮັບການພັດທະນາວິຊາຊີບແບບຕໍ່ເນື່ອງ ໃຫ້ບັນລຸໄດ້ 20% ຕໍ່ປີ;
2) ອັດຕາຄ້າງຫ້ອງຊັ້ນປະຖົມສຶກສາ
    - ທົ່ວປະເທດ 2%
    - 45 ເມືອງເປົ້າໝາຍ (ໃໝ່) 4%
3) ອັດຕາເລື່ອນຂັ້ນຊັ້ນປະຖົມສຶກສາ
    - ທົ່ວປະເທດ 94%
    - 45 ເມືອງເປົ້າໝາຍ (ໃໝ່) 89%

### 4.4.2. ຍຸດທະສາດ

**ຍຸດທະສາດ 1:** ພັດທະນາລະບົບຄຸ້ມຄອງວິຊາຊີບຄູແບບຕໍ່ເນື່ອງ ຊັ້ນປະຖົມສຶກສາ

**ວຽກຈຸດສຸມ:**

1) ຊຸກຍູ້, ສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງໃຫ້ຄູໄດ້ໄປຍົກລະດັບ;
2) ສ້າງຄວາມເຂັ້ມແຂງໃຫ້ຄູກ່ຽວກັບຄວາມຮູ້ ແລະ ເຕັກນິກການສິດສອນ;
3) ສ້າງຄວາມເຂັ້ມແຂງໃຫ້ຄູກ່ຽວກັບວິທີການສອນຫ້ອງຄວບ (ຈັດຕັ້ງຕັ້ງປະຕິບັດໂດຍກົມສ້າງຄູ);
4) ສ້າງຄວາມເຂັ້ມແຂງໃຫ້ແກ່ຄູສອນການສຶກສາຮຽນຮ່ວມ;
5) ສ້າງຄວາມເຂັ້ມແຂງໃຫ້ແກ່ກຸ່ມໂຮງຮຽນ, ຜູ້ອໍານວຍການ, ຄູປະຈໍາການ, ແລະ ຜູ້ເຮັດວຽກສຶກສານິເທດ ລວມທັງການສຶກສາຮຽນຮ່ວມ;
6) ຕິດຕາມຊຸກຍູ້ຊ່ວຍເຫຼືອ ແລະ ປະເມີນການປະຕິບັດໜ້າທີ່ ຂອງຜູ້ເຮັດວຽກສຶກສານິເທດ, ນິເທດກຸ່ມໂຮງຮຽນ, ຜູ້ອໍານວຍການ, ຄູປະຈໍາການ, ຄູທີ່ໄດ້ຮັບຕໍາແໜ່ງວິຊາການຄູ ລວມທັງການສຶກສາຮຽນຮ່ວມ ແລະ ຕິດຕາມ ຊຸກຍູ້ ຊ່ວຍເຫຼືອຄູສອນຫ້ອງຄວບ.

**ຍຸດທະສາດ 2:** ປັບປຸງການປະເມີນຜົນເພື່ອ ສອດຄ່ອງກັບຫຼັກສູດຊັ້ນປະຖົມສຶກສາ

**ວຽກຈຸດສຸມ:**

1) ສ້າງມາດຕະຖານການອອກຫົວບົດການສອບເສັງ ແລະ ຕິດຕາມການສອບເສັງນັກຮຽນເກັ່ງ ແລະ ຈົບຊັ້ນ ປ.5;
2) ທົບທວນນະໂຍບາຍການເລື່ອນຂັ້ນແບບຕໍ່ເນື່ອງເພື່ອໃຫ້ສອດຄ່ອງກັບຫຼັກສູດຊັ້ນປະຖົມສະບັບປັບປຸງໃໝ່;
3) ສືບຈັດຕັ້ງປະຕິບັດຄູ່ມືການປະເມີນຜົນເພື່ອປັບປຸງການຮຽນການສອນ (Formative Assessment);
4) ຈັດຕັ້ງປະຕິບັດຄູ່ມືການປະເມີນຕົນເອງຂອງໂຮງຮຽນຕາມມັດຕະຖານຄຸນນະພາບຂັ້ນພື້ນຖານ (ມຄພ) ໂດຍເນັ້ນໃສ່ ພາກທີ 3: ການຮຽນຮູ້ ເພື່ອຕິດຕາມຜົນການຮຽນຂອງນັກຮຽນ;

5) ການປະເມີນຜົນສຳເລັດການຮຽນຂອງນັກຮຽນ ສຳລັບຂັ້ນ ປ.3 (ພາສາລາວ ແລະ ຄະນິດສາດ) ໃນ 40 ເມືອງ;
6) ການປະເມີນຜົນສຳເລັດການຮຽນຊັ້ນປະຖົມສຶກສາໃນຂົງເຂດພາກພື້ນຕາເວັນອອກສ່ຽງໃຕ້ (SEA-PLM) ແລະ ທົດລອງການປະເມີນຜົນແບບວິນິດໄສ.

**ຍຸດທະສາດ 3:** ປັບປຸງຄຸນນະພາບການຮຽນ-ການສອນ

**ວຽກຈຸດສຸມ:**

1) ສ້າງ ແລະ ສະໜອງສື່ການຮຽນການສອນເພີ່ມ ສຳລັບ ເດັກນ້ອຍທີ່ບໍ່ຢູ່ໃນກຸ່ມພາສາລາວ-ໄຕ ແລະ ສະໜອງສື່ການຮຽນ-ການສອນ ໃຫ້ຄູ ແລະ ນັກຮຽນ;
2) ສົ່ງເສີມການຮຽນການສອນພາສາຕ່າງປະເທດ ແລະ ສົ່ງເສີມການນຳໃຊ້ການຮຽນຮູ້ດ້ານດິຈິຕອນ ພ້ອມທັງນຳໃຊ້ ICT ເຂົ້າໃນ ການຮຽນການສອນ, ການທົດລອງນຳໃຊ້ ICT ເຂົ້າໃນການຮຽນການສອນໃນໂຮງຮຽນເປົ້າໝາຍ ລວມທັງ ການສຶກສາຮຽນຮ່ວມ;
3) ສ້າງປຶ້ມແບບຮຽນ ແລະ ຄູ່ມືຄູ ຫັນເປັນດິຈິຕອນ ແລະ ປັບຍາປະດິດ ແລະ ພັດທະນາຫຼັກສູດ, ປຶ້ມແບບຮຽນ ແລະ ຄູ່ມືຄູ ຊັ້ນປະຖົມສຶກສາ ຈາກລະບົບ 5 4 3 ເປັນ 6 3 3 ແລະ ປັບປຸງຫຼັກສູດຊັ້ນປະຖົມສຶກສາສຳລັບນັກຮຽນພິການຫູ-ປາກ;
4) ສົ່ງເສີມການຮຽນການສອນດ້ານວິທະຍາສາດ ແລະ ການແຂ່ງຂັນນັກຮຽນເກັ່ງ;
5) ຕິດຕາມການຈັດຕັ້ງປະຕິບັດຫຼັກສູດຊັ້ນປະຖົມສຶກສາ.

**ຍຸດທະສາດ 4:** ປັບປຸງການບຳລຸງນັກຮຽນທີ່ມີຜົນການຮຽນຕ່ຳ

**ວຽກຈຸດສຸມ:**

1) ສ້າງຄວາມເຂັ້ມແຂງໃຫ້ແກ່ຄູ ກ່ຽວກັບ ການບຳລຸງນັກຮຽນທີ່ມີຜົນການຮຽນຕ່ຳ;
2) ສ້າງຄວາມເຂັ້ມແຂງໃຫ້ແກ່ຄູສອນພາສາລາວ ໃຫ້ນັກຮຽນທີ່ບໍ່ຢູ່ໃນກຸ່ມພາສາລາວໄຕ;
3) ຕິດຕາມການຈັດຕັ້ງການບຳລຸງນັກຮຽນທີ່ມີຜົນການຮຽນຕ່ຳ

## 4.5. ບໍລິຫານ ແລະ ຄຸ້ມຄອງ

### 4.5.1. ຕົວຊີ້ບອກ:

1) ນິຕິກຳໃນການຄຸ້ມຄອງໂຮງຮຽນປະຖົມ ໄດ້ຮັບການພັດທະນາ;
2) ມີລະບົບຕິດຕາມ ຄວາມສ່ຽງໄພພິບັດ

### 4.5.2 ຍຸດທະສາດ

**ຍຸດທະສາດ 1:** ຍົກສູງປະສິດທິພາບລະບົບການຄຸ້ມຄອງໂຮງຮຽນປະຖົມ

**ວຽກຈຸດສຸມ:**

1) ປັບປຸງນິຕິກຳໃນການບໍລິຫານຄຸ້ມຄອງໂຮງຮຽນປະຖົມ ແລະ ການນຳໃຊ້ICT ເຂົ້າໃນການຄຸ້ມຄອງໂຮງຮຽນ;
2) ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ບໍລິຫານແຕ່ລະຂັ້ນໃນການບໍລິຫານຄຸ້ມຄອງ ໂຮງຮຽນປະຖົມ;
3) ສະໜອງອຸປະກອນ ICT ໃຫ້ແກ່ໂຮງຮຽນປະຖົມ;
4) ຕິດຕາມຜົນໄດ້ຮັບໃນການບໍລິຫານຄຸ້ມຄອງໂຮງຮຽນ ແລະ ການນຳໃຊ້ເງິນໂຮງຮຽນ ລວມທັງເງິນອາຫານທ່ຽງໃນໂຮງຮຽນ.

**ຍຸດທະສາດ 2:** ບັນຈູ, ສັບຊ້ອນ ແລະ ຈັດສັນຄູ ຊັ້ນປະຖົມສຶກສາ

**ວຽກຈຸດສຸມ:**

1) ເຜີຍແຜ່ແຜນຄວາມຕ້ອງການຄູ ແລະ ແຜນກໍ່ສ້າງຄູ, ການທົດແທນຄູການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ;
2) ສືບຕໍ່ຈັດຕັ້ງປະຕິບັດ ຄໍາແນະນໍາ ກ່ຽວກັບ ການບັນຈຸ, ສັບຊ້ອນ ແລະ ຈັດສັນຄູ ຊັ້ນການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ ຂອງ ຂະແໜງການສຶກສາ.

**ຍຸດທະສາດ 3:** ການຄຸ້ມຄອງຄວາມສ່ຽງຕໍ່ໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດໃນຂະແໜງການສຶກສາ

**ວຽກຈຸດສຸມ:**

1) ສ້າງຄວາມເຂັ້ມແຂງໃຫ້ແກ່ ຜູ້ບໍລິຫານການສຶກສາ ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ແລະ ໂຮງຮຽນ ໃນການປ້ອງກັນໄພພິບັດ ໃນຂະແໜງການສຶກສາ;
2) ພັດທະນາລະບົບ ໃນການຕິດຕາມ ຄວາມສ່ຽງໄພພິບັດ ທີ່ອາດຈະເກີດຂຶ້ນໃນຂະແໜງການສຶກສາ.

**ຍຸດທະສາດ 4:** ສົ່ງເສີມການສ້າງຕັ້ງໂຮງຮຽນຕົວແບບ ແລະ ກຸ່ມໂຮງຮຽນປະຖົມຕົວແບບ, ໂຮງຮຽນຕົວແບບດ້ານການສຶກສາຮຽນຮ່ວມ ແລະ ໂຮງຮຽນຕົວແບບດອາ ຫານທ່ຽງໃນໂຮງຮຽນ

**ວຽກຈຸດສຸມ:**

1) ສົ່ງເສີມການພັດທະນາໂຮງຮຽນຕົວແບບ;
2) ສົ່ງເສີມການພັດທະນາ ກຸ່ມໂຮງຮຽນປະຖົມຕົວແບບ;
3) ສົ່ງເສີມການພັດທະນາໂຮງຮຽນຕົວແບບດ້ານການສຶກສາຮຽນຮ່ວມ;
4) ສົ່ງເສີມການພັດທະນາໂຮງຮຽນຕົວແບບອາຫານທ່ຽງໃນໂຮງຮຽນ

# III. ຂະແໜງການຍ່ອຍມັດທະຍົມສຶກສາຕອນຕົ້ນ

## 1. ສະພາບລວມ

ໃນສົກຮຽນ 2024-2025 ກະຊວງສຶກສາທິການ ແລະ ກິລາໄດ້ສືບຕໍ່ເອົາໃຈໃສ່ໃນການພັດທະນາການສຶກສາຊັ້ນມັດທະຍົມສຶກສາຕອນຕົ້ນ ຊຶ່ງແມ່ນການສຶກສາພາກບັງຄັບ ໃນການສ້າງໃຫ້ຜູ້ຮຽນມີຄວາມຮູ້, ມີຄວາມສາມາດ, ມີທັກສະ ເພື່ອສືບຕໍ່ໃນການເຂົ້າຮຽນຕໍ່ຊັ້ນມັດທະຍົມສຶກສາຕອນປາຍ ແລະ ຮຽນຕໍ່ໃນສາຍວິຊາຊີບ ໂດຍການຮ່ວມກັບຊຸມຊົນ, ຄູ່ຮ່ວມພັດທະນາ, ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງວຽງຈັນ, ຫ້ອງການສຶກສາທິການແລະ ກິລາເມືອງ/ນະຄອນ ສຸມໃສ່ຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ປະຈຳສົກຮຽນ ກໍຄືແຜນພັດທະນາຂະແໜງການສຶກສາ 5 ປີ ຄັ້ງທີ IX (2021-2025) ໃຫ້ບັນລຸຕາມຄາດໝາຍ ໂດຍການສ້າງເງື່ອນໄຂ, ໂອກາດ, ຊຸກຍູ້ ແລະ ສົ່ງເສີມເດັກທຸກຄົນໃຫ້ໄດ້ເຂົ້າເຖິງ ແລະ ຮຽນຈົບຊັ້ນມັດທະຍົມສຶກສາຕາມແຜນ ໂດຍການສະໜອງພື້ນຖານໂຄ່ງລ່າງ, ອຸປະກອນການຮຽນການສອນ, ສະໜອງເບ້ຍລ້ຽງ ແລະ ສ້າງຄວາມເຂັ້ມວິທີການສອນລວມທັງສົ່ງເສີມຄວາມຮູ້ທາງທັກສະຊີວິດ ແລະ ສົ່ງເສີມສຸຂະພາບໃນໂຮງຮຽນ.

ຜ່ານການຈັດຕັ້ງປະຕິບັດຕົວຈິງ ເຫັນວ່າລັດຖະບານກໍຄືຄູ່ຮ່ວມພັດທະນາໄດ້ສຸມໃສ່ການຊຸກຍູ້, ຕິດຕາມຊ່ວຍເຫຼືອທາງດ້ານວິຊາການ, ການສ້າງພື້ນຖານໂຄງລ່າງ, ສະໜອງສິ່ງອຳນວຍຄວາມສະດວກຕ່າງໆ ໄດ້ເຮັດໃຫ້ຕົວຊີ້ບອກບາງດ້ານມີຜົນສຳເລັດດີຂຶ້ນເຊັ່ນ: ອັດຕາການເລື່ອນຊັ້ນຈົບ ປ.5 ຂຶ້ນ ມ.1 ເພີ່ມຂຶ້ນ ຈາກ 84,9% ຂຶ້ນເປັນ 85,6% ແຕ່ເນື່ອງຈາກໄດ້ຮັບຜົນກະທົບຈາກສະພາບການປ່ຽນແປງຂອງພາກພື້ນ ແລະ ສາກົນ ແລະ ສະພາບເສດຖະກິດພາຍໃນປະເທດ ລວມທັງບັນຫາການຂາດເຂີນຄູ ໃນສົກຮຽນ 2024-2025 ຈຳນວນຫ້ອງຮຽນ ແລະ ນັກຮຽນຫຼຸດລົງ ເມື່ອທຽບໃສ່ສົກຮຽນຜ່ານມາຄື ຈຳນວນຫ້ອງຮຽນຫຼຸດລົງ 161 ຫ້ອງ, ຈຳນວນນັກຮຽນຫຼຸດລົງ 5.665 ຄົນ, ຈຳນວນຄູໃນພາກລັດຫຼຸດລົງ 1,246 ຄົນ ຈາກ 31,355 ຄົນ ມາເປັນ 30,109 ຄົນ (ສຳລັບຄູພາກເອກະຊົນເພີ່ມຂຶ້ນ 170 ຄົນ), ອັດຕາປະລະການຮຽນຂອງນັກຮຽນຊັ້ນມັດທະຍົມຕອນສຶກສາຕົ້ນເພີ່ມຂຶ້ນ ຈາກ 12.4% ຂຶ້ນເປັນ 12.5% ເນື່ອງຈາກມີອັດຕາການປະລະຂອງນັກຮຽນເພີ່ມຂຶ້ນເຮັດໃຫ້ ອັດຕາເຂົ້າຮຽນລວມຊັ້ນມັດທະຍົມສຶກສາຕອນຕົ້ນຫຼຸດລົງຈາກ 73.6% ມາເປັນ 72.50%.

ຕາຕະລາງລຸ່ມນີ້ ສະແດງໃຫ້ເຫັນບາງອັດຕາໃນຊັ້ນມັດທະຍົມສຶກສາຕອນຕົ້ນ ໃນສົກຮຽນ 2023-2024 ແລະ 2024-2025 ທີ່ມີການເພີ່ມ ແລະ ຫຼຸດລົງ.

**ຕາຕະລາງທີ 12: ຈຳນວນຫ້ອງຮຽນ, ໂຮງຮຽນ, ຄູສອນ ແລະ ນັກຮຽນ ໃນຊັ້ນມັດທະຍົມສຶກສາຕອນຕົ້ນ (ທົ່ວປະເທດ)**

| ມັດທະຍົມຕອນຕົ້ນ | 2023-2024 | | | | 2024-2025 | | | | ສົມທຽບ 2 ສົກຮຽນ | | | |
|---|---|---|---|---|---|---|---|---|---|---|---|---|
| | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ |
| ພາກລັດ | 11,358 | 916 | 31,355 | 356,605 | 11,197 | 925 | 30,109 | 350,940 | -161 | 9 | -1,246 | -5,665 |
| ພາກເອກະຊົນ | 852 | 62 | 1,997 | 23,572 | 922 | 75 | 2,167 | 27,517 | 70 | 13 | 170 | 3,945 |
| ລັດ ແລະ ເອກະຊົນ | 12,210 | 978 | 31,712 | 380,177 | 12,119 | 1,000 | 32,276 | 378,457 | -91 | 22 | 564 | -1,720 |

ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ແລະ ກິລາ (EMIS Form)

### ຕາຕະລາງທີ 13: ອັດຕາເຂົ້າຮຽນໃນຊັ້ນມັດທະຍົມສຶກສາຕອນຕົ້ນທົ່ວປະເທດ

| ມັດທະຍົມຕອນຕົ້ນ | 2023-2024 | | | 2024-2025 | | | ສົມທຽບ 2 ສົກຮຽນ | | |
|---|---|---|---|---|---|---|---|---|---|
| | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ |
| ອັດຕາເລື່ອນຊັ້ນຈາກ ປ.5 ຂຶ້ນ ມ.1 (%) | 84.9 | 84.7 | 85.1 | 85.6 | 86.9 | 85.9 | 0.7 | 2.2 | 0.8 |
| ອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕົ້ນ (%) | 73.6 | 73.2 | 73.9 | 72.5 | 72.4 | 72.6 | -1.1 | -0.8 | -1.3 |
| ອັດຕາເຂົ້າຮຽນສຸດທິຊັ້ນມັດທະຍົມຕົ້ນ (%) | 68 | 68.8 | 67.2 | 68.1 | 68.9 | 67.3 | 0.1 | 0.1 | 0.1 |
| ອັດຕາເຂົ້າຮຽນລວມໃໝ່ ມ.4 (%) | 63.9 | 63.3 | 64.5 | 61.4 | 61.3 | 61.5 | -2.5 | -2 | -3 |

ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ແລະ ກິລາ (EMIS Form)

### ຕາຕະລາງທີ 14: ອັດຕາເລື່ອນຊັ້ນ, ອັດຕາຄ້າງຫ້ອງ ແລະ ອັດຕາປະລະໃນຊັ້ນມັດທະຍົມສຶກສາຕອນຕົ້ນ

| ມັດທະຍົມຕອນຕົ້ນ | 2023-2024 | | | 2024-2025 | | | ສົມທຽບ 2 ສົກຮຽນ | | |
|---|---|---|---|---|---|---|---|---|---|
| | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ |
| ອັດຕາເລື່ອນຊັ້ນ-ຈົບຊັ້ນມັດທະຍົມ | 86.6 | 87.1 | 86.1 | 86.4 | 86.9 | 85.9 | -0.2 | -0.2 | -0.2 |
| ອັດຕາຄ້າງຫ້ອງຊັ້ນມັດທະຍົມ | 1.0 | 0.6 | 1.4 | 1.1 | 0.7 | 1.4 | 0.1 | 0.1 | 0 |
| ອັດຕາປະລະຊັ້ນມັດທະຍົມ | 12.4 | 12.3 | 12.5 | 12.5 | 12.4 | 12.7 | 0.1 | 0.1 | 0.2 |

ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ແລະ ກິລາ (EMIS Form)

### ຮູບທີ 2: ແຜນວາດປຽບທຽບອັດຕາປະລະຊັ້ນມັດທະຍົມສຶກສາຕອນຕົ້ນ ສົກຮຽນ 2023-2024 ແລະ ສົກຮຽນ 2024-2025 ແຍກຕາມແຂວງ




ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ແລະ ກິລາ (EMIS Form)

ຕາມແຜນວາດສະແດງໃຫ້ເຫັນວ່າ ອັດຕາປະລະຂອງນັກຮຽນຊັ້ນມັດທະຍົມສຶກສາຕອນຕົ້ນ ຫຼຸດລົງ ມີ 8 ແຂວງ ເຊັ່ນ: ແຂວງຫົວພັນ, ໄຊຍະບູລີ, ຊຽງຂວາງ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ເຊກອງ ແລະ ແຂວງອັດຕະປື, ຊຶ່ງແຂວງອັດຕະປື ເປັນແຂວງທີ່ມີອັດຕາປະລະຫຼຸດລົງຕ່ຳກວ່າໝູ່ ປະມານ ແລະ ຫຼຸດລົງປ 2.7%. ສ່ວນ10 ແຂວງທີ່ເຫຼືອແມ່ນຍັງມີອັດຕາປະລະເພີ່ມຂຶ້ນ, ໃນນັ້ນ ແຂວງຜົ້ງສາລີ ເປັນແຂວງທີ່ມີອັດຕາປະລະເພີ່ມຂຶ້ນສູງກວ່າໝູ່ ແລະ ເພີ່ມຂຶ້ນ 2.3%.

## 2. ຜົນສຳເລັດຜົນໄດ້ຮັບລະດັບສູງ

### 2.1. ຈຳນວນນັກຮຽນທີ່ຈົບຈາກມັດທະຍົມສຶກສາຕອນຕົ້ນເພີ່ມຂຶ້ນ ລວມທັງມີຜົນໄດ້ຮັບດ້ານການຮຽນຮູ້ທີ່ດີຂຶ້ນ ໂດຍສະເພາະທັກສະສັດຕະວັດທີ 21, ໂດຍສຸມໃສ່ເປັນພິເສດ ຕໍ່ຜູ້ດ້ອຍໂອກາດ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ

1) ສຳເລັດແຈກຢາຍອຸປະກອນການສິດສອນໃໝ່ ໃຫ້ທົ່ວເຖິງ:
   - ຈັດພິມປຶ້ມຄູ່ມືຄູຂັ້ນ ມ.3 ສະບັບປັບປຸງ 4 ວິຊາ ບຸລິມະສິດ: ວິຊາພາສາລາວ, ຄະນິດສາດ, ວິທະຍາສາດ , ພາສາອັງກິດ ເພື່ອແຈກຢາຍໃຫ້ຄູຂັ້ນ ມ.3 ທົ່ວປະເທດ ທີ່ສອນ 4 ວິຊາດັ່ງກ່າວ ຈັດພິມຈຳນວນ 36,380 ຫົວ;
   - ສະໜອງຄູ່ມືຄູສະບັບປັບປຸງ 4 ວິຊາ ບຸລິມະສິດ: ວິຊາພາສາລາວ, ຄະນິດສາດ, ວິທະຍາສາດ, ພາສາອັງກິດ ທົ່ວປະເທດ.
2) ສຳເລັດຂໍ້ຕົກລົງວ່າດ້ວຍການສອບເສັງຈົບຊັ້ນມັດທະຍົມສຶກສາ;
3) ສຳເລັດພັດທະນາຂໍ້ສອບເສັງ ແລະ ຈັດຕັ້ງການສອບເສັງແຂ່ງຂັນນັກຮຽນເກັ່ງລະດັບຊາດມີນັກຮຽນເກັ່ງເຂົ້າຮ່ວມທັງໝົດ ຈຳນວນ 72 ຄົນ,ຍິງ 43 ຄົນ ສາມາດຍາດໄດ້ລາງວັນທີ 1,2,3 ໄດ້ຈຳນວນ 11 ຄົນ, ຍິງ 8 ຄົນ; ລາງວັນຊົມເຊີຍ 14 ຄົນ, ຍິງ 9 ຄົນ;
4) ສຳເລັດການນຳພານັກຮຽນເກັ່ງຊັ້ນມັດທະຍົມ ໄປທັດສະນະສຶກສາ ທີ່ ປະເທດເບລາລຸດ ຈຳນວນ 1 ຄັ້ງ;
5) ສຳເລັດການສອບເສັງຈົບຊັ້ນມັດທະຍົມສຶກສາຕອນຕົ້ນເອກະພາບທົ່ວປະເທດ;
6) ສຳເລັດການຖອດຖອນບົດຮຽນວຽກສາມັນສຶກສາ ໃນ18 ແຂວງ;
7) ສຳເລັດການສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານສົ່ງເສີມສຸຂະພາບ ແລະ ໂພຊະນາການໃນໂຮງຮຽນ ເປັນຕົ້ນ:
   - ສຳເລັດຝຶກອົບຮົມກ່ຽວກັບວິທີການສອນສອດແຊກຄວາມຮູ້ພະຍາດວໍ້ ແລະ ການກິນຢາຂ້າແມ່ທ້ອງ ໃຫ້ແກ່ຜູ້ຮັບຜິດຊອບວຽກງານກັນພະຍາດ ແລະ ສົ່ງເສີມສຸຂະພາບໃນໂຮງຮຽນ ຂັ້ນແຂວງ, ຂັ້ນເມືອງ ແລະ ຜູ້ອຳນວຍການໂຮງຮຽນປະຖົມສຶກສາ ແລະ ມັດທະຍົມສຶກສາຕອນຕົ້ນຜົ້ງສາລີ, ຫຼວງນໍ້າທາ, ຊຽງຂວາງ ແລະ ຫຼວງພະບາງ;
   - ສຳເລັດການ ຝຶກອົບຮົມການສອດແຊກຄວາມຮູ້ຄວາມຮູ້ເພດສຶກສາເຂົ້າໃນການສອນໃຫ້ແກ່ຄູສອນໃນໂຮງຮຽນມັດທະຍົມ ເມືອງຈຳປາສັກ, ແຂວງຈຳສັກ ຈຳນວນ 64 ຄົນ, ຍິງ 24 ຄົນ.
8) ສຳເລັດປຸກສ້າງຫ້ອງຮຽນຢູ່ເມືອງ ສິງ, ແຂວງ ຫຼວງນໍ້າທາ 1 ແຫ່ງ; ປຸກສ້າງຫ້ອງຮຽນຢູ່ເມືອງ ນໍ້າບາກ, ແຂວງ ຫຼວງພະບາງ 3 ແຫ່ງ; ປຸກສ້າງຫ້ອງຮຽນຢູ່ເມືອງ ຕະໂອ້ຍ, ແຂວງ ສາລະວັນ 3 ແຫ່ງ;
9) ປຸກສ້າງຫໍພັກຄູ 12 ຫຼັງ/40 ຫ້ອງ, ຫໍພັກນັກຮຽນແຍກຍິງ-ຊາຍ 11 ແຫ່ງ/22ຫຼັງ ແລະ ຫ້ອງນໍ້າຫໍພັກນັກຮຽນແຍກຍິງຊາຍ 11 ແຫ່ງ/18ຫຼັງ, 66 ຫ້ອງ ຢູ່ ເມືອງນໍ້າບາກ, ແຂວງ ຫຼວງພະບາງ; ເມືອງ ຕະໂອ້ຍ, ແຂວງ ສາລະວັນ; ເມືອງ ດາກຈຶງ, ແຂວງ ເຊກອງ;
10) ຝຶກອົບຮົມຄູສອນຫ້ອງສອງພາສາຝຣັ່ງໃນ 04 ແຂວງຄື: ຫຼວງພະບາງ, ສະຫວັນນະເຂດ, ຈຳປາສັກ ແລະ ນະຄອນຫຼວງວຽງຈັນ;
11) ສະໜອງເບ້ຍລ້ຽງໃຫ້ນັກຮຽນທີ່ທຸກຍາກ ແລະ ດ້ອຍໂອກາດ ຂັ້ນ ມ.1 ຈຳນວນ 1,000 ຄົນ ໃນ 40 ເມືອງສາມສ້າງ ດ້ວຍງົບປະມານຂອງລັດຖະບານ ແລະ ພາຍໃຕ້ໂຄງການການສຶກສາເພື່ອການຈ້າງງານ ໃນ 12 ເມືອງ, 8 ແຂວງເປົ້າໝາຍຂອງໂຄງການ (ແຂວງຫຼວງນໍ້າທາ, ອຸດົມໄຊ, ຫົວພັນ, ຫຼວງພະບາງ, ວຽງຈັນ , ບໍລິຄຳໄຊ, ສາລະວັນ ແລະ ເຊກອງ) ຮຽນຂັ້ນ ມ.4 ຈຳນວນ 2,545 ຄົນ ແລະ ຄັດເລືອກເປົ້າໝາຍໃນການສະໜອງ ຈຳນວນ 4,019 ຄົນ, ຍິງ 2,157 ຄົນ. ແລະ ຈາກອົງການອຸຍນີເຊັບ ຈຳນວນ 1,000 ຄົນ.

**2.2. ຈຳນວນຄູ ແລະ ຜູ້ອຳນວຍການໂຮງຮຽນ ທີ່ມີຄວາມຮູ້ຄວາມສາມາດສອດຄ່ອງກັບມາດຕະຖານການສິດສອນ ທີ່ໄດ້ກຳນົດຜ່ານມາເພີ່ມຂຶ້ນ ໂດຍໃຫ້ມີການປະເມີນຜົນການປະຕິບັດໜ້າ ທີ່ຂອງເຂົາເຈົ້າຢ່າງເປັນປົກກະຕິ**

1) ສຳເລັດການຝຶກອົບຮົມຄູສອນພາສາຝຣັ່ງ ໃນແຂວງເປົ້າໝາຍ(ນະຄອນຫຼວງວຽງຈັນ, ຫຼວງພະບາງ, ສະຫວັນນະເຂດ, ຈຳປາສັກ) ຈຳນວນ 171 ຄົນ, ຍິງ 87 ຄົນ;
2) ສຳເລັດການຝຶກອົບຮົມເຕັກນິກວິທີການສອນແບບໃໝ່ ໃຫ້ຄູສອນພາສາອັງກິດຊັ້ນມັດທະຍົມສຶກສາ ແຂວງວຽງຈັນ ແລະ ແຂວງ ຫົວພັນ ຈຳນວນ 125 ຄົນ, ຍິງ 71 ຄົນ;
3) ສຳເລັດການສ້າງຄວາມເຂັ້ມແຂງໃນການພັດທະນາກຸ່ມໂຮງຮຽນມັດທະຍົມ ໃນ 20 ກຸ່ມ ໃນ 8 ແຂວງ ເປົ້າໝາຍຂອງໂຄງການ EESDP ຈຳນວນ 135 ຄົນ, ຍິງ 36 ຄົນ;
4) ສຳເລັດການສະໜອງເງິນບໍລິຫານ ແລະ ການເຄື່ອນໄຫວກຸ່ມໂຮງຮຽນ ທີ່ສະໜອງໂດຍ ໂຄງການການສຶກສາເພື່ອການຈ້າງງານຈຳນວນ (EESDP) ຈຳນວນ 6 ແຂວງ: ແຂວງ ວຽງຈັນ, ຫຼວງນ້ຳທາ, ອຸດົມໄຊ, ຫົວພັນ, ສາລະວັນ ແລະ ແຂວງ ເຊກອງ;
5) ລົງຕິດຕາມ ຊຸກຍູ້ວຽກກຸ່ມໂຮງຮຽນມັດທະຍົມ ແລະ ການສະໜອງເບ້ຍລ້ຽງ ພາຍໃຕ້ໂຄງການ ( 8 ແຂວງ, 20 ເມືອງ). ນະຄອນຫຼວງວຽງຈັນ.

**2.3. ໂຮງຮຽນທຸກແຫ່ງມີຊັບພະຍາກອນທາງດ້ານການເງິນ ແລະ ຊັບພະຍາກອນມະນຸດພຽງພໍ ເພື່ອໃຫ້ສາມາດເຮັດວຽກໄດ້ຢ່າງມີປະສິດທິຜົນ, ພ້ອມທັງຂີດຄວາມສາມາດໃນການຄຸ້ມຄອງໂຮງຮຽນ**

1) ສຳເລັດການສ້າງກົດໝາຍສາມັນສຶກສາ;
2) ສຳເລັດຄຳສັ່ງແນະນຳການປະຕິບັດຫຼັກສູດ ປະຈຳສົກຮຽນ 2024-2025;
3) ສຳເລັດຂໍ້ຕົກລົງການຈັດຕັ້ງ ແລະ ການເຄື່ອນໄຫວຂອງໂຮງຮຽນສາມັນ ສະບັບເລກທີ 6614/ສສກ, ລົງວັນທີ 12 ກັນຍາ 2024.

**3. ບັນຫາ ແລະ ສິ່ງທ້າທາຍ**

1) ຍັງມີນັກຮຽນຊັ້ນມັດທະຍົມສຶກສາຕອນຕົ້ນຈຳນວນໜຶ່ງປະລະການຮຽນ ໄປນຳພໍ່ແມ່ທີ່ຍ້າຍຖິ່ນຖານໄປຕາມການຜະລິດ, ໄປອອກແຮງງານ ທັງພາຍໃນ ແລະ ຕ່າງປະເທດ;
2) ນັກຮຽນຊັ້ນມັດທະຍົມສຶກສາຕອນຕົ້ນຈຳນວນໜຶ່ງເລີ່ມມີການພົວພັນກັບສິ່ງເສບຕິດ, ຢາເສບຕິດ, ຢາສູບໄຟຟ້າ ແລະ ສານກະຕຸ້ນຕ່າງໆ;
3) ຜູ້ບໍລິຫານການສຶກສາແຕ່ລະຂັ້ນ ລົງຊຸກຍູ້, ຕິດຕາມ ແລະ ສະໜັບສະໜູນການປະຕິບັດໜ້າທີ່ຂອງຜູ້ບໍລິຫານໂຮງຮຽນ ແລະ ຄູສອນ ຍັງບໍ່ທັນເປັນປົກກະຕິ ແລະ ທົ່ວເຖິງ;
4) ວຽກງານກຸ່ມໂຮງຮຽນມັດທະຍົມ ຍັງບໍ່ທັນໄດ້ຈັດຕັ້ງປະຕິບັດ ແລະ ການເຄື່ອນໄຫວຢ່າງເຕັມສ່ວນຕາມພາລະບົດບາດ;
5) ສະພາບແວດລ້ອມຂອງສະຖານການສຶກສາຈຳນວນໜຶ່ງຍັງບໍ່ທັນເປັນທີ່ດຶງດູດໃຫ້ແກ່ການຮຽນຂອງນັກຮຽນຂາດເຂີນດ້ານອຸປະກອນການຮຽນການສອນ ໂດຍສະເພາະປື້ມແບບຮຽນ;
6) ການສະໜອງເບ້ຍລ້ຽງໃຫ້ແກ່ນັກຮຽນທີ່ທຸກຍາກດ້ອຍໂອກາດ ຍັງມີຫຼາຍແຂວງ ບໍ່ໄດ້ສືບຕໍ່ສະໜອງໃຫ້ແກ່ນັກຮຽນ ຮຽນຈົນຈົບຊັ້ນມັດທະຍົມສຶກສາຕອນຕົ້ນ;
7) ຄວາມຕື່ນຕົວ ແລະ ການມີສ່ວນຮ່ວມຂອງສັງຄົມ, ຊຸມຊົນ ແລະ ພໍ່ແມ່ຜູ້ປົກຄອງນັກຮຽນ ໃນການພັດທະນາການສຶກສາ ຍັງບໍ່ທັນສູງ;
8) ໂຮງຮຽນຈຳນວນໜຶ່ງຍັງບໍ່ໄດ້ຈັດການຮຽນການສອນຄົບທຸກວິຊາຕາມຫຼັກສູດຊັ້ນມັດທະຍົມສຶກສາຕອນຕົ້ນ.

## 4. ບຸລິມະສິດສໍາລັບສົກຮຽນ 2025-2026

### 4.1. ຈຸດປະສົງ

1) ເພື່ອສົ່ງເສີມການເຂົ້າເຖິງ ແລະ ຮຽນຈົບການສຶກສາຊັ້ນມັດທະຍົມຕອນຕົ້ນ ຢ່າງມີຄຸນນະພາບ ແລະ ເທົ່າທຽມກັນ;
2) ເພື່ອຊ່ວຍເພີ່ມອັດຕາເຂົ້າຮຽນໃນຊັ້ນມັດທະຍົມສຶກສາຕອນຕົ້ນ ໂດຍການສະໜອງສິ່ງຈູງໃຈເຊັ່ນ: ເບ້ຍລ້ຽງ ແລະ ອາຫານທ່ຽງໃນໂຮງຮຽນ ເພື່ອເປັນການສະໜັບສະໜູນນັກຮຽນ;
3) ເພື່ອປັບປຸງຜົນການຮຽນ ແລະ ຫຼຸດຜ່ອນຄວາມແຕກໂຕນໃນການພັດທະນາການສຶກສາ ໂດຍຜ່ານການຄຸ້ມຄອງຊັບພະຍາກອນທີ່ມີປະສິດທິພາບ ແລະ ປະສິດທິຜົນ ໂດຍສະເພາະໃນ 45 ເມືອງດ້ອຍໂອກາດຕາມການກຳນົດຂອງກະຊວງສຶກສາທິການ ແລະ ກິລາ.

### 4.2. ຄາດໝາຍ

1) ອັດຕາເລື່ອນຊັ້ນຂອງນັກຮຽນຈົບ ປ.5 ຂຶ້ນ ມ.1 ໃຫ້ບັນລຸໄດ້ 89.5%;
2) ອັດຕາເຂົ້າຮຽນລວມ ມັດທະຍົມສຶກສາຕອນຕົ້ນ ໃຫ້ບັນລຸໄດ້ 72.9%;
3) ອັດຕາຈົບຊັ້ນມັດທະຍົມສຸດທິ ຕາມກະແສນັກຮຽນ ໃຫ້ບັນລຸໄດ້ 38.6%;
4) ອັດຕາປະລະໃນຊັ້ນມັດທະຍົມສຶກສາຕອນຕົ້ນ ບໍ່ໃຫ້ເກີນ 11.7%;
5) ອັດຕາຈົບຊັ້ນມັດທະຍົມສຸດທິ ຕາມກະແສນັກຮຽນ ໃນ 45 ເມືອງ ດ້ອຍໂອກາດ ຂອງກະຊວງສຶກສາທິການ ແລະ ກິລາ ໃຫ້ບັນລຸໄດ້ສູງກວ່າ 20%.

### 4.3. ການເຂົ້າເຖິງ ແລະ ເທົ່າທຽມ

#### 4.3.1. ຕົວຊີ້ບອກ ແລະ ຄາດໝາຍ

1) ອັດຕາເລື່ອນຊັ້ນຂອງນັກຮຽນຈົບ ປ.5 ຂຶ້ນ ມ.1:
   - ລະດັບຊາດ 89.5%
   - 45 ເມືອງ 79.4%
2) ອັດຕາເຂົ້າຮຽນລວມ ມ. ຕົ້ນ
   - ລະດັບຊາດ 72.9%
   - 45 ເມືອງ 53%
3) ດັດຊະນີຄວາມສະເໝີພາບ ຍິງ-ຊາຍ ໃນການເລື່ອນຊັ້ນຂອງນັກຮຽນ ຈົບ ປ.5 ຂຶ້ນ ມ.1: ໃຫ້ບັນລຸໄດ້ ລະຫວ່າງ 0.97 ຫາ 1.03
4) ເປີເຊັນໂຮງຮຽນ ທີ່ມີນໍ້າໃຊ້ ແລະ ວິດຖ່າຍ ໃຫ້ໄດ້ 83.8%

#### 4.3.2. ຍຸດທະສາດ

**ຍຸດທະສາດ 1:** ທົບທວນ ນິຕິກຳ ກ່ຽວກັບການຊຸກຍູ້, ສົ່ງເສີມການເຂົ້າຮຽນຂອງນັກຮຽນທຸກຄົນທີ່ຮຽນຈົບ ປ.5 ເຂົ້າຮຽນຕໍ່ຊັ້ນມັດທະຍົມສຶກສາຕອນຕົ້ນຢ່າງມີຄຸນນະພາບ

**ວຽກຈຸດສຸມ:**

1) ປັບປຸງນິຕິກຳໃຫ້ສອດຄ່ອງກັບການບໍລິຫານໂຮງຮຽນ;
2) ສ້າງ/ປັບປຸງ ນິຕິກຳ ເພື່ອຊ່ວຍຫຼຸດຜ່ອນລາຍຈ່າຍຂອງຄອບຄົວ ໃນໂຮງຮຽນມັດທະຍົມສຶກສາຕອນຕົ້ນທີ່ຊ່ວຍຫຼຸດຜ່ອນລາຍຈ່າຍຂອງຄອບຄົວ ແລະ ເງື່ອນໄຂການເຂົ້າເຖິງ ທີ່ຕິດພັນກັບການເຂົ້າຮຽນ;

3) ສ້າງມາດຕະຖານຄຸນນະພາບຂັ້ນພື້ນຖານສຳລັບຊັ້ນມັດທະຍົມສຶກສາຕອນຕົ້ນ;
4) ສະໜອງສິ່ງອຳນວຍຄວາມສະດວກໃນການເຂົ້າຮຽນ ລວມທັງການຮຽນຮ່ວມ.

**ຍຸດທະສາດ 2:** ສະໜອງສິ່ງຈູງໃຈໃຫ້ນັກຮຽນ ໃນເຂດຫ່າງໄກສອກຫຼີກ ເພື່ອຫຼຸດຜ່ອນອັດຕາການຄ້າງຫ້ອງ ແລະ ການປະລະການຮຽນ

**ວຽກຈຸດສຸມ:**

1) ສະໜອງເງິນເບ້ຍລ້ຽງໃຫ້ແກ່ນັກຮຽນທຸກຍາກ, ດ້ອຍໂອກາດ;
2) ສ້າງສິ່ງຈູງໃຈໃນການສົ່ງເສີມໃຫ້ນັກຮຽນ ທີ່ມີຜົນການຮຽນດີ;
3) ສະໜອງອາຫານທ່ຽງໃນໂຮງຮຽນມັດທະຍົມຕອນຕົ້ນທີ່ມີອັດຕາຈົບຊັ້ນຕໍ່າກວ່າ 35%;
4) ຕິດຕາມການສະໜອງເບ້ຍລ້ຽງ ແລະ ອາຫານທ່ຽງ.

**ຍຸດທະສາດ 3:** ສະໜອງສິ່ງອຳນວຍຄວາມສະດວກໃນການຮຽນການສອນພ້ອມທັງ ພັດທະນາ ແລະ ປັບປຸງສະພາບແວດລ້ອມທີ່ປອດໄພ ສຳລັບນັກຮຽນທຸກຄົນ ລວມທັງການສຶກສາຮຽນຮ່ວມ

**ວຽກຈຸດສຸມ:**

1) ປັບປຸງ ພື້ນຖານໂຄງລ່າງ, ສະພາບແວດລ້ອມ ແລະ ສິ່ງອຳນວຍຄວາມສະດວກ ໃຫ້ໄດ້ຕາມມາດຕະຖານຄຸນນະພາບຂັ້ນພື້ນຖານຊັ້ນມັດທະຍົມສຶກສາຕອນຕົ້ນ;
2) ສະໜອງອຸປະກອນການຮຽນການສອນ (ປຶ້ມແບບຮຽນ, ປຶ້ມຂຽນ, ກະດານດຳ, ອຸປະກອນໄອຊີທີ, ປຶ້ມນິທານ, ປຶ້ມອ່ານເສີມ ແລະ ອື່ນໆ) ແລະ ອຸປະກອນຊ່ວຍເຫຼືອສຳລັບນັກຮຽນພິການ;
3) ສະໜອງນໍ້າສະອາດ, ຫ້ອງນໍ້າ (ແຍກ ຍິງ-ຊາຍ) ແລະ ໄຟຟ້າ ໃນໂຮງຮຽນ ແລະ ປັບປຸງສະພາບແວດລ້ອມພາຍໃນໂຮງຮຽນ.

**ຍຸດທະສາດ 4:** ສົ່ງເສີມການມີສ່ວນຮ່ວມຂອງ ສະມາຄົມພໍ່ແມ່ນັກຮຽນ, ຄະນະພັດທະນາການສຶກສາຂັ້ນບ້ານ ແລະ ຊຸມຊົນໃນການພັດທະນາໂຮງຮຽນ

**ວຽກຈຸດສຸມ:**

1) ສ້າງ, ປັບປຸງ ແລະ ເຜີຍແຜ່ ນິຕິກຳ ກ່ຽວກັບການມີສ່ວນຮ່ວມຂອງ ຊຸມຊົນ ແລະ ສັງຄົມ ຕໍ່ການສ້າງແຜນພັດທະນາໂຮງຮຽນ ແລະ ປະກອບສ່ວນໃນການຈັດຕັ້ງປະຕິບັດ;
2) ສ້າງຄວາມເຂັ້ມແຂງໃຫ້ແກ່ ສະມາຄົມພໍ່ແມ່ນັກຮຽນ, ຄະນະພັດທະນາການສຶກສາຂັ້ນບ້ານ ແລະ ຊຸມຊົນ;
3) ປຸກລະດົມຂົນຂວາຍຊຸມຊົນໃຫ້ຊຸກຍູ້ສົ່ງເສີມລູກຫຼານໃຫ້ເຂົ້າຮຽນ ແລະ ຮຽນຈົນຈົບຊັ້ນມັດທະຍົມສຶກສາຕອນຕົ້ນ;
4) ຕິດຕາມ ຊຸກຍູ້ຊ່ວຍເຫຼືອການປະຕິບັດໜ້າທີ່ຂອງສະມາຄົມພໍ່ແມ່ນັກຮຽນ, ຄະນະພັດທະນາການສຶກສາຂັ້ນບ້ານ ແລະ ຊຸມຊົນ.

**ຍຸດທະສາດ 5:** ສົ່ງເສີມວຽກງານສຸຂະອະນາໄມ, ເພດສຶກສາ ແລະ ໂພຊະນາການໃນໂຮງຮຽນ

**ວຽກຈຸດສຸມ:**

1) ສ້າງ, ປັບປຸງ ແລະ ເຜີຍແຜ່ ນິຕິກຳ ກ່ຽວກັບວຽກງານສົ່ງເສີມສຸຂະພາບໃນໂຮງຮຽນ;
2) ສົ່ງເສີມທັກສະ, ຄວາມຮູ້ແກ່ນັກຮຽນກ່ຽວກັບ ເພດສຶກສາ, ບົດບາດ ຍິງ-ຊາຍ ລະເບີດບໍ່ທັນແຕກ, ການໃຊ້ຄວາມຮຸນແຮງ ແລະ ການສຶກສາຮຽນຮ່ວມ;
3) ສົ່ງເສີມ ວຽກງານດ້ານສຸຂະອະນາໄມ, ສຸຂະພາບ ແລະ ໂພຊະນາການໃນໂຮງຮຽນ;

4) ສ້າງຄວາມເຂັ້ມແຂງໃຫ້ໂຮງຮຽນ ເພື່ອໃຫ້ໂຮງຮຽນປອດສິ່ງເສບຕິດ ສ້າງ, ປັບປຸງ ແລະ ເຜີຍແຜ່ ນິຕິກຳ ກ່ຽວກັບວຽກງານສົ່ງເສີມສຸຂະພາບໃນໂຮງຮຽນ.

**ຍຸດທະສາດ 6:** ສົ່ງເສີມການຮຽນຮູ້ຕະຫຼອດຊີວິດໃນຊັ້ນມັດທະຍົມສຶກສາຕອນຕົ້ນ

**ວຽກຈຸດສຸມ:**

1) ສົ່ງເສີມການຮຽນການສອນ ການຮຽນຮູ້ຕະຫຼອດຊີວິດ ທຸກຮູບແບບ;
2) ການເຊື່ອມສານການສຶກສາທັງໃນ ແລະ ນອກໂຮງຮຽນຢ່າງເປັນລະບົບ;
3) ສ້າງຄວາມເຂັ້ມແຂງໃຫ້ແກ່ຄູສອນນອກໂຮງຮຽນ;

## 4.4. ຄຸນນະພາບ ແລະ ຄວາມສອດຄ່ອງ

### 4.4.1. ຕົວຊີ້ບອກ

1) ອັດຕາຄ້າງຫ້ອງ ຊັ້ນ ມ.ຕົ້ນ
   - ລະດັບຊາດ 0.9%
   - 45 ເມືອງ 1.2%
2) ອັດຕາເລື່ອນຊັ້ນ ຊັ້ນ ມ.ຕົ້ນ
   - ລະດັບຊາດ 87.4%
   - 45 ເມືອງ 82%
3) ອັດຕາປະລະການຮຽນ ຊັ້ນ ມ.ຕົ້ນ
   - ລະດັບຊາດ 11.7%
   - 45 ເມືອງ 16.8%

### 4.4.2. ຍຸດທະສາດ

**ຍຸດທະສາດ ທີ** 1: ສົ່ງເສີມການພັດທະນາ ວິຊາຊີບແບບຕໍ່ເນື່ອງ

**ວຽກຈຸດສຸມ:**

1) ສ້າງຄວາມເຂັ້ມແຂງໃຫ້ແກ່ກຸ່ມໂຮງຮຽນ, ຜູ້ອຳນວຍການ, ຄູປະຈຳການ ແລະ ຜູ້ເຮັດວຽກສຶກສານິເທດ ລວມທັງການສຶກສາຮຽນຮ່ວມ;
2) ຕິດຕາມ ຊຸກຍູ້ຊ່ວຍເຫຼືອ ແລະ ປະເມີນ ການປະຕິບັດໜ້າທີ່ຜູ້ເຮັດວຽກສຶກສານິເທດ, ນິເທດກຸ່ມໂຮງຮຽນ, ຜູ້ອຳນວຍການໂຮງຮຽນ ແລະ ຄູປະຈຳການ ລວມທັງການສຶກສາຮຽນຮ່ວມ;
3) ຊຸກຍູ້ ແລະ ສົ່ງເສີມ ຄູທີ່ໄດ້ຮັບຕຳແໜ່ງວິຊາການ ແລະ ການນິເທດພາຍໃນ

**ຍຸດທະສາດ ທີ 2**: ປັບປຸງຄຸນນະພາບການຮຽນ ການສອນ ແລະ ການຮຽນຮູ້ດ້ານວິທະຍາສາດ, ດ້ານດິຈິຕອນ, ນຳໃຊ້ ICT ໃນໂຮງຮຽນ

**ວຽກຈຸດສຸມ:**

1) ສ້າງຄວາມເຂັ້ມແຂງ ກ່ຽວກັບ ການປະເມີນຜົນການຮຽນໃນຫ້ອງຮຽນ;
2) ຊຸກຍູ້ ສົ່ງເສີມການສອນບຳລຸງໃຫ້ນັກຮຽນທີ່ມີຜົນການຮຽນຕໍ່າ;
3) ສອບເສັງ ແລະ ພັດທະນາຂໍ້ສອບເສັງ ຈົບຊັ້ນມັດທະຍົມສຶກສາຕອນຕົ້ນ;
4) ສອບເສັງ ນັກຮຽນເກັ່ງລະດັບຊາດຊັ້ນມັດທະຍົມສຶກສາຕອນຕົ້ນ;
5) ສົ່ງເສີມ ແລະ ຕິດຕາມ, ຊຸກຍູ້ຊ່ວຍເຫຼືອ ການຮຽນການສອນພາສາຕ່າງປະເທດ;

6) ສົ່ງເສີມການນຳໃຊ້ການຮຽນຮູ້ດ້ານດິຈິຕອນ ພ້ອມທັງນຳໃຊ້ ICT ເຂົ້າໃນ ການຮຽນ ການສອນ;
7) ທົບທວນການຄົ້ນຄວ້າ ແລະ ວິໄຈ ກ່ຽວກັບ ການປະຕິຮູບລະບົບການສຶກສາຈາກ 5+4+3 ມາ ເປັນ 6+3+3;
8) ສືບຕໍ່ປັບປຸງຫຼັກສູດຊັ້ນມັດທະຍົມສຶກສາ;
9) ສົ່ງເສີມການຮຽນ ການສອນດ້ານວິທະຍາສາດ;
10) ຕິດຕາມ ການປະຕິບັດຫຼັກສູດ ແລະ ປະເມີນຜົນການຮຽນຂອງນັກຮຽນ.

**ຍຸດທະສາດ ທີ 3:** ການພັດທະນາ ກຸ່ມໂຮງຮຽນມັດທະຍົມ ແລະ ກຸ່ມໂຮງຮຽນຕົວແບບ ໃຫ້ມີຄຸນນະພາບ ແລະ ປະສິດທິຜົນ

**ວຽກຈຸດສຸມ:**

1) ປັບປຸງ ນິຕິກຳ ໃນການຈັດຕັ້ງປະຕິບັດກຸ່ມໂຮງຮຽນມັດທະຍົມ;
2) ສ້າງຄວາມເຂັ້ມແຂງ ໃຫ້ແກ່ກຸ່ມໂຮງຮຽນມັດທະຍົມ;
3) ຕິດຕາມ, ຊຸກຍູ້ຊ່ວຍເຫຼືອການຈັດຕັ້ງປະຕິບັດກຸ່ມໂຮງຮຽນມັດທະຍົມ;
4) ສົ່ງເສີມການພັດທະນາໂຮງຮຽນຕົວແບບ ແລະ ກຸ່ມໂຮງຮຽນຕົວແບບ.

**ຍຸດທະສາດ 4:** ການສະໜອງອຸປະກອນການຮຽນການສອນ ແລະ ຫ້ອງທົດລອງວິທະຍາສາດ, ຫ້ອງຮຽນໄອຊີທີ, ຫ້ອງຮຽນພາສາຕ່າງປະເທດ, ຫ້ອງຝຶກປະຕິບັດ, ຫ້ອງສະໝຸດໃຫ້ພຽງພໍ

**ວຽກຈຸດສຸມ:**

1) ສະໜອງ ປຶ້ມແບບຮຽນ, ຄູ່ມືຄູ, ປຶ້ມອ່ານເສີມ, ສື່, ອຸປະກອນການຮຽນການສອນ;
2) ສະໜອງ ຫ້ອງທົດລອງວິທະຍາສາດ, ຫ້ອງຮຽນໄອຊີທີ, ຫ້ອງຮຽນພາສາຕ່າງປະເທດ, ຫ້ອງຝຶກປະຕິບັດ ແລະ ຫ້ອງສະໝຸດ.

### 4.5. ບໍລິຫານ ແລະ ຄຸ້ມຄອງ

#### 4.5.1. ຕົວຊີ້ບອກ

1) ນິຕິກຳ ໃນການຄຸ້ມຄອງໂຮງຮຽນສາມັນໄດ້ຮັບການພັດທະນາ;
2) ມີລະບົບໃນການຕິດຕາມຄວາມສ່ຽງໄພພິບັດ.

#### 4.5.2. ຍຸດທະສາດ

**ຍຸດທະສາດ 1:** ຍົກສູງປະສິດທິພາບໃຫ້ແກ່ລະບົບການບໍລິຫານຄຸ້ມຄອງໂຮງຮຽນມັດທະຍົມສຶກສາຕອນຕົ້ນ

**ວຽກຈຸດສຸມ:**

1) ປັບປຸງນິຕິກຳ ການບໍລິຫານຄຸ້ມຄອງ ໂຮງຮຽນມັດທະຍົມຕອນຕົ້ນ ແລະ ການນຳໃຊ້ ICT ເຂົ້າໃນການຄຸ້ມຄອງໂຮງຮຽນ;
2) ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ບໍລິຫານແຕ່ລະຂັ້ນໃນການບໍລິຫານຄຸ້ມຄອງໂຮງຮຽນ;
3) ສະໜອງ ອຸປະກອນ ICT ໃຫ້ແກ່ໂຮງຮຽນມັດທະຍົມຕອນຕົ້ນ;
4) ຕິດຕາມຜົນຮັບໃນການບໍລິຫານຄຸ້ມຄອງໂຮງຮຽນ ແລະ ການນຳໃຊ້ເງິນບໍລິຫານໂຮງຮຽນ

**ຍຸດທະສາດ ທີ 2:** ການບັນຈຸ, ສັບຊ້ອນ ແລະ ຈັດສັນຄູຊັ້ນມັດທະຍົມສຶກສາຕອນຕົ້ນ

**ວຽກຈຸດສຸມ:**

1) ເຜີຍແຜ່ ແຜນຄວາມຕ້ອງການຄູ, ການທົດແທນຄູ ແລະ ແຜນກໍ່ສ້າງຄູ ການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ;

2) ສືບຕໍ່ຈັດຕັ້ງປະຕິບັດ ຄໍາແນະນໍາ ກ່ຽວກັບ ການບັນຈຸ, ສັບຊ້ອນ ແລະ ຈັດສັນຄູ ຊັ້ນການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ ຂອງ ຂະແໜງການສຶກສາ.

**ຍຸດທະສາດທີ 3:** ການຄຸ້ມຄອງຄວາມສ່ຽງຕໍ່ໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ ໃນຂະແໜງການສຶກສາ

**ວຽກຈຸດສຸມ:**

1) ສ້າງຄວາມເຂັ້ມແຂງໃຫ້ແກ່ ຜູ້ບໍລິຫານການສຶກສາ ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ແລະ ໂຮງຮຽນ ໃນການປ້ອງກັນໄພພິບັດ ໃນຂະແໜງການສຶກສາ;
2) ພັດທະນາລະບົບ ໃນການຕິດຕາມ ຄວາມສ່ຽງໄພພິບັດ ທີ່ອາດຈະເກີດຂຶ້ນໃນຂະແໜງການສຶກສາ.

## IV. ຂະແໜງການຍ່ອຍມັດທະຍົມສຶກສາຕອນປາຍ

### 1. ສະພາບລວມ

ໃນສົກຮຽນ 2024-2025 ຊັ້ນມັດທະຍົມສຶກສາຕອນປາຍ ມີນັກຮຽນທັງໝົດ 144,050 ຄົນ ເມື່ອທຽບໃສ່ສົກຜ່ານມາ ເຫັນວ່າຈຳນວນນັກຮຽນຫຼຸດລົງ 11,097 ຄົນ, ຈຳນວນຫ້ອງຮຽນຫຼຸດລົງຈາກ 5,046 ຫ້ອງ ມາເປັນ 4,743 ຫ້ອງ, ຫຼຸດລົງ 303 ຫ້ອງ. ອັດຕາເຂົ້າຮຽນລວມຊັ້ນມັດທະຍົມສຶກສາຕອນປາຍສະເລ່ຍທົ່ວປະເທດ ຫຼຸດລົງຈາກ 41.0% ມາເປັນ 38.4%.

ການສຶກສາຊັ້ນມັດທະຍົມສຶກສາຕອນປາຍ ບໍ່ແມ່ນການສຶກສາພາກບັງຄັບ, ແຕ່ຄວາມຕ້ອງການໃນການສ້າງຊັບພະຍາກອນມະນຸດໃຫ້ມີຄວາມຮູ້ພື້ນຖານທາງດ້ານວິທະຍາສາດ ແລະ ສັງຄົມ ລວມທັງການສ້າງທັກສະວິຊາຊີບຂັ້ນພື້ນຖານໃຫ້ແກ່ນັກຮຽນຊັ້ນມັດທະຍົມສຶກສາຕອນປາຍເປັນສິ່ງທີ່ຈຳເປັນ. ດັ່ງນັ້ນ, ໃນສົກປີ 2024-2025 ກະຊວງສຶກສາທິການ ແລະ ກິລາໄດ້ຂະຫຍາຍ ແລະ ສະໜອງຫຼັກສູດສາມັນວິຊາຊີບ ແລະ ຈັດການຮຽນການສອນວິຊາຊີບຢູ່ບັນດາໂຮງຮຽນສາມັນກິນນອນຊົນເຜົ່າ ແລະ ໂຮງຮຽນມັດທະຍົມທີ່ໃກ້ຄຽງກັບ ໂຮງຮຽນເຕັກນິກວິຊາຊີບ ແລະ ວິທະຍາໄລເຕັກນິກວິຊາຊີບ ທຸກແຫ່ງໃນຂອບເຂດທົ່ວປະເທດ.

ຕາຕະລາງທີ 15: **ຈຳນວນໂຮງຮຽນ, ຫ້ອງຮຽນ, ຄູສອນ ແລະ ນັກຮຽນ ໃນຊັ້ນມັດທະຍົມສຶກສາຕອນປາຍ**

| ມັດທະຍົມຕອນປາຍ | 2023-2024 | | | | 2024-2025 | | | | ສົມທຽບ 2 ສົກຮຽນ | | | |
|---|---|---|---|---|---|---|---|---|---|---|---|---|
| | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ |
| ພາກລັດ | 4,702 | 764 | 27,086 | 146,322 | 4,377 | 753 | 26,429 | 134,155 | -325 | -11 | -657 | -12,167 |
| ພາກເອກະຊົນ | 344 | 78 | 11,915 | 8,825 | 366 | 78 | 11,578 | 9,895 | 22 | 0 | -337 | 1,070 |
| ລັດ ແລະ ເອກະຊົນ | 5,046 | 842 | 15,171 | 155,147 | 4,743 | 831 | 14,851 | 144,050 | -303 | -11 | -320 | -11,097 |

ແຫຼ່ງຂໍ້ມູນ: ສູນສະຖິຕິຂ່າວສານການສຶກສາ ແລະ ກິລາ

ຕາຕະລາງທີ 16: **ອັດຕາເຂົ້າຮຽນລວມ, ອັດຕາເຂົ້າຮຽນສຸດທິ ແລະ ອັດຕາເຂົ້າຮຽນລວມໃໝ່ ໃນຊັ້ນມັດທະຍົມສຶກສາຕອນປາຍ**

| ມັດທະຍົມຕອນປາຍ | 2023-2024 | | | 2024-2025 | | | ສົມທຽບ 2 ສົກຮຽນ | | |
|---|---|---|---|---|---|---|---|---|---|
| | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ |
| ອັດຕາເຂົ້າຮຽນລວມຊັ້ນ ມ.ປາຍ (%) | 41.0 | 39.6 | 42.2 | 38.4 | 37.4 | 39.3 | -2.6 | -2.2 | -2.9 |
| ອັດຕາເຂົ້າຮຽນສຸດທິຊັ້ນ ມ.ປາຍ (%) | 35.4 | 35.2 | 35.7 | 34.3 | 34.1 | 34.4 | -1.1 | -1.1 | -1.3 |
| ອັດຕາເຂົ້າຮຽນລວມໃໝ່ ມ.7 (%) | 38.0 | 36.9 | 39.1 | 34.4 | 33.4 | 35.4 | -3.6 | -3.5 | -3.7 |

ແຫຼ່ງຂໍ້ມູນ: ສູນສະຖິຕິຂ່າວສານການສຶກສາ ແລະ ກິລາ

### ຕາຕະລາງທີ 17: ອັດຕາເລື່ອນຊັ້ນ, ອັດຕາຄ້າງຫ້ອງ, ອັດຕາປະລະ ແລະ ອັດຕາລອດເຫຼືອ ໃນຊັ້ນມັດທະຍົມສຶກສາຕອນປາຍ

| ມັດທະຍົມຕອນປາຍ | 2023-2024 | | | 2024-2025 | | | ສົມທຽບ 2 ສົກຮຽນ | | |
|---|---|---|---|---|---|---|---|---|---|
| | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ |
| ອັດຕາເລື່ອນຊັ້ນ-ຈົບຊັ້ນ ມ.ປາຍ (%) | 85.7 | 86.1 | 85.3 | 85.9 | 86.7 | 85.1 | 0.2 | 0.6 | -0.2 |
| ອັດຕາຄ້າງຫ້ອງຊັ້ນ ມ.ປາຍ (%) | 0.5 | 0.3 | 0.7 | 0.6 | 0.4 | 0.8 | 0.1 | 0.1 | 0.1 |
| ອັດຕາປະລະຊັ້ນ ມ.ປາຍ (%) | 13.8 | 13.6 | 13.9 | 13.5 | 12.8 | 14.1 | -0.3 | -0.8 | 0.2 |
| ອັດຕາລອດເຫຼືອຊັ້ນ ມ.ປາຍ (%) | 64.4 | 64.9 | 64 | 65.1 | 66.6 | 63.7 | 0.7 | 1.7 | -0.3 |

ແຫຼ່ງຂໍ້ມູນ: ສູນສະຖິຕິຂ່າວສານການສຶກສາ ແລະ ກິລາ

ຈາກຕາຕະລາງຂ້າງເທິງສະແດງໃຫ້ເຮົາເຫັນວ່າ ເມື່ອທຽບໃສ່ສົກຮຽນຜ່ານມາການສຶກສາຊັ້ນມັດທະຍົມຕອນປາຍໄດ້ພົບກັບຄວາມຫຍຸ້ງຍາກຫຼາຍປະການ ໂດຍສະເພາະແມ່ນການເຂົ້າຮຽນທີ່ຫຼຸດລົງຫຼາຍເຮັດໃຫ້ອັດຕາເຂົ້າຮຽນຊັ້ນມັດທະຍົມສຶກສາຕອນປາຍບັນລຸ 38.4% ຫຼຸດລົງ 2.6% ເມື່ອທຽບໃສ່ສົກຮຽນຜ່ານມາ. ໃນຂະນະດຽວກັນການປະລະການຮຽນໃນຊັ້ນມັດທະຍົມສຶກສາຕອນປາຍກໍຍັງເປັນສິ່ງທີ່ທ້າທາຍ, ເຊິ່ງສະແດງໃຫ້ເຫັນໃນພາບວາດຂ້າງລຸ່ມນີ້ ໄດ້ສະແດງໃຫ້ເຫັນເຖິງການປະລະການຮຽນໃນສົກຮຽນ 2023-2024 ແລະ ສົກຮຽນ2024-2025 ໃນ 17 ແຂວງ/ນະຄອນຫຼວງວຽງຈັນ. ເຫັນວ່າອັດຕາປະລະຍັງມີການເພີ່ມຂຶ້ນຢ່າງໜ້າເປັນຫ່ວງ ເຊິ່ງໃນນັ້ນອັດຕາປະລະການຮຽນຂອງແຂວງເຊກອງຍັງສູງເຖິງ 20.1%.

### ຮູບທີ 3: ແຜນວາດປຽບທຽບອັດຕາປະລະຊັ້ນມັດທະຍົມສຶກສາຕອນປາຍ ສົກຮຽນ 2023-2024 ແລະ ສົກຮຽນ 2024-2025 ແຍກຕາມແຂວງ




ແຫຼ່ງຂໍ້ມູນ: ສູນສະຖິຕິຂ່າວສານການສຶກສາ ແລະ ກິລາ

2. **ຜົນສຳເລັດຜົນໄດ້ຮັບລະດັບສູງ**

2.1. **ຈຳນວນນັກຮຽນທີ່ຈົບຊັ້ນມັດທະຍົມຕອນປາຍ ມີຜົນໄດ້ຮັບດ້ານການຮຽນຮູ້ທີ່ດີຂຶ້ນ,ໂດຍສະ ເພາະທັກສະຊີວິດ, ທັກສະດ້ານໄອຊີທີ ແລະ ທັກສະດ້ານວິຊາຊີບຂັ້ນພື້ນຖານ, ໂດຍສຸມໃສ່ເປັນພິເສດຕໍ່ຜູ້ດ້ອຍໂອກາດ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ**

1) ໄດ້ສະໜອງ ແລະ ປັບປຸງພື້ນຖານໂຄງລ່າງໂດຍສຳເລັດການປຸກສ້າງໂຮງຮຽນມັດທະຍົມສຶກສາ 17 ແຫ່ງ, ຫ້ອງນ້ຳແຍກ ຍິງ-ຊາຍ 17 ແຫ່ງ, ຫໍພັກນັກຮຽນໄດ້ 8 ແຫ່ງ ແລະ ຫໍພັກຄູ 11 ຢູ່ໃນ 8 ແຂວງ, 12 ເມືອງເປົ້າໝາຍຂອງໂຄງການ EESDP;ໃນແຂວງເປົ້າໝາຍຂອງໂຄງການ (EESDP);
2) ລົບລ້າງຄ່າຮຽນສຳລັບນັກຮຽນທີ່ມີແນວໂນ້ມທີ່ຈະອອກຮຽນຍ້ອນຄອບຄົວທຸກຍາກ; (ບໍ່ທັນມີນິຕິກຳສຳລັບຊັ້ນມັດທະຍົມສຶກສາຕອນປາຍ);
3) ສຶກສາຄວາມເປັນໄປໄດ້ໃນການຂະຫຍາຍມັດທະຍົມສົມບູນ ແລະ ມັດທະຍົມຕອນປາຍ ເພື່ອຮັບປະກັນຄຸນນະພາບ ແລະ ປະສິດທິພາບໃນການບໍລິການ;
4) ພັດທະນາເຄື່ອງມືປະເມີນຜົນສຳລັບວິທະຍາສາດທຳມະຊາດ, ພາສາລາວ ແລະ ຄະນິດສາດ ທີ່ເໝາະສົມສຳລັບນັກຮຽນ ມ.6, ມີຄູ່ມືການປະເມີນຜົນໃນຫ້ອງຮຽນ ສຳລັບ 6 ວິຊາຮຽນໃນຊັ້ນມັດທະຍົມສຶກສາ ວິຊາ: ພາສາລາວ-ວັນນະຄະດີ, ຄະນິດສາດ, ຟີກຊິກສາດ, ເຄມີສາດ, ຊີວະວິທະຍາ ແລະ ພາສາອັງກິດ;
5) ເກັບກຳຂໍ້ມູນກ່ຽວກັບໂຮງຮຽນທີ່ປະຕິບັດໄດ້ດີ ແລະ ບໍ່ໄດ້ດີ (ຢູ່ເຂດຫ່າງໄກສອກຫຼີກ, ຊົນເຜົ່າ) ເພື່ອຕິດຕາມ ແລະ ໃຫ້ການສະໜັບສະໜູນຢ່າງໜ້ອຍປີລະຄັ້ງ; (ບໍ່ມີຂໍ້ມູນ);
6) ຈັດຕັ້ງການສອບເສັງນັກຮຽນເກັ່ງ ແລະ ຕິດຕາມການສອບເສັງຈົບຊັ້ນມັດທະຍົມຕອນປາຍ ມ.7 ທົ່ວປະເທດ; ສຳເລັດກອງປະຊຸມພັດທະນາຂໍ້ສອບເສັງນັກຮຽນເກັ່ງຊັ້ນມັດທະຍັມສຶກສາຕອນປາຍ ມ.4 ແລະ ມ.7;
7) ສຳເລັດການພັດທະນາຂໍ້ສອບເສັງນັກຮຽນເກັ່ງຊັ້ນມັດທະຍົມສຶກສາຕອນປາຍ ມ.7; ສຳເລັດລົງຕິດຕາມ, ຊີ້ນຳການຈັດຕັ້ງປະຕິບັດການສອບເສັງຈົບຊັ້ນມັດທະຍົມສຶກສາຕອນປາຍ ມ.7 ສົກ ຮຽນ 2024-2025 ເອກະພາບທົ່ວປະເທດ; ສຳເລັດກອງປະຊຸມຖອດຖອນບົດຮຽນການສອບເສັງຈົບຊັ້ນສາຍສາມັນເອກະພາບທົ່ວປະເທດ;
8) ສຳເລັດການຈັດຕັ້ງການສອບເສັງແຂ່ງຂັນນັກຮຽນເກັ່ງຊັ້ນມັດທະຍົມສຶກສາ ມ.7 ລະດັບຊາດ ສົກຮຽນ 2024-2025 ມີຜົນດັ່ງນີ້: ມີນັກຮຽນເກັ່ງເຂົ້າຮ່ວມທັງໝົດໃນ 4 ວິຊາສອບເສັງ: ວິຊາ ພາສາລາວ-ວັນນະຄະດີ, ຄະນິດສາດ, ຟີຊິກສາດ ແລະ ເຄມີສາດ ລວມທັງໝົດ: 144 ຄົນ ຍິງ 70 ຄົນ, ນັກຮຽນທີ່ສອບເສັງໄດ້ຫຼຽນລາງວັນເກັ່ງລະດັບຊາດ ອັນດັບທີ 1, 2 ແລະ 3 ລວມມີ: 16 ຄົນ ຍິງ 8 ຄົນ ແລະ ໄດ້ລາງວັນຊົມເຊີຍ 4 ຄົນ ຍິງ 2 ຄົນ;
9) ການເກັບກຳຂໍ້ມູນກ່ຽວກັບນັກຮຽນຈາກຄອບຄົວທຸກຍາກ; ສ້າງແຜນສຳລັບສະໜອງທຶນການສຶກສາທີ່ເປັນບູລິມະສິດໃຫ້ແກ່ນັກຮຽນຈາກ 40 ເມືອງບູລິມະສິດ; ສະໜອງທຶນການສຶກສາໃຫ້ນັກຮຽນທີ່ມາຈາກ 40 ຕົວເມືອງບູລິມະສິດ; ນຳໃຊ້ກົນໄກຂອງໜ່ວຍງານວິຊາການຂະແໜງການສຶກສາ ເພື່ອສົ່ງເສີມໃຫ້ຄູ່ຮ່ວມພັດທະນາສຸມໃສ່ການຊ່ວຍເຫຼືອດ້ານວິຊາການກໍຄືດ້ານການເງິນໃຫ້ແກ່ 40 ເມືອງທີ່ດ້ອຍໂອກາດ;
10) ສ້າງຄວາມເຂັ້ມແຂງໃຫ້ແກ່ຄູສຶກສານິເທດຂັ້ນເມືອງ ໃຫ້ໄດ້ເຄື່ອນໄຫວຢູ່າງເປັນປົກກະຕິ; ສ້າງແຜນຄວາມຕ້ອງການຄູສຶກສານິເທດໃຫ້ພຽງພໍ; ສະໜອງສິ່ງອຳນວຍຄວາມສະດວກໃນການປະຕິບັດວຽກງານນິເທດສຶກສາ; ສ້າງຄວາມເຂັ້ມແຂງໃຫ້ແກ່ຄູສຶກສານິເທດ ພາຍໃນກຸ່ມໂຮງຮຽນ;
11) ຂະຫຍາຍຫຼັກສູດສາມັນວິຊາຊີບຢູ່ບັນດາໂຮງຮຽນສາມັນກິນນອນຊົນເຜົ່າບ່ອນທີ່ມີເງື່ອນໄຂ ແລະ ສອດຄ່ອງກັບຄວາມຕ້ອງການຂອງແຕ່ລະເຂດ;
12) ສຳເລັດການຂະຫຍາຍຫຼັກສູດສາມັນວິຊາຊີບ ແລະ ເປີດການຮຽນການສອນຫ້ອງຮຽນສາມັນວິຊາຊີບຢູ່ບັນດາໂຮງຮຽນສາມັນກິນນອນຊົນເຜົ່າ 18 ແຂວງທົ່ວປະເທດ; ສືບຕໍ່ຈັດຕັ້ງປະຕິບັດການຮຽນການສອນ

ສາມັນວິຊາຊີບ 2 ຮູບແບບ ໃນນັ້ນຮູບແບບຄູ່ຂະໜານປະຕິບັດຢູ່ 3 ແຂວງຄື: ແຂວງວຽງຈັນ, ຫຼວງພະບາງ ແລະ ບໍລິຄໍາໄຊ; ສະໜອງງົບປະມານໃຫ້ທຸກໆແຂວງທີ່ມີຄວາມພ້ອມເປີດການຮຽນການສອນວິຊາຊີບລະດັບຕົ້ນ C1 ໃຫ້ແກ່ນັກຮຽນຊັ້ນມັດທະຍົມສຶກສາໃນໄລຍະພັກສິ້ນປີຮຽນ (ເດືອນ ມິຖຸນາ ເຖິງ ເດືອນ ສິງຫາ);

13) ສໍາເລັດລົງຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດການແນະນໍາການພັດທະນາເສັ້ນທາງໄປສູ່ອາຊີບ 6 ແຂວງ;
14) ພັດທະນາ ແລະ ປັບປຸງ ຫຼັກສູດສາມັນວິາຊີບ ຕາມຄວາມຕ້ອງການເພື່ອຂະຫຍາຍຫ້ອງຮຽນສາມັນວິຊາຊີບໃນແຕ່ລະທ້ອງຖິ່ນ ແລະ ແຂວງ; ປັບປຸງຫຼັກສູດ ແລະ ແບບຮຽນສາມັນວິຊາຊີບ ພ້ອມທັງຮັບຮອງ ແລະ ປະກາດໃຊ້ 5 ສາຂາອາຊີບຄື: ເສີມສວຍ, ສ້ອມແປງເຄື່ອງໃຊ້ໄຟຟ້າ, ສ້ອມແປງເຄື່ອງເຢັນ, ແປຮູບຜະລິດຕະພັນກະສິກໍາຂັ້ນພື້ນຖານ ແລະ ສ້ອມແປງລົດຈັກໄຟຟ້າ ລະດັບ C3;
15) ຝຶກອົບຮົມໃຫ້ແກ່ຄູສອນຫ້ອງຮຽນສາມັນວິຊາຊີບ ແລະ ຕິດຕາມການສິດສອນຂອງຄູ; ສໍາເລັດການຝຶກອົບຮົມເຂັ້ມໃຫ້ແກ່ຄູຝຶກຂັ້ນສູນກາງ ກ່ຽວກັບ ເຕັກນິກໃນການນໍາໃຊ້ຄູ່ມືການແນະນໍາການພັດທະນາເສັນທາງສູ່ອາຊີບ (ສະບັບປັບປຸງ) ປີ 2024;
16) ສໍາເລັດຈັດພິມປື້ມຄູ່ມືການແນະການພັດທະນາເສັ້ນທາງໄປສູ່ອາຊີບ (ສະບັບປັບປຸງ) ປີ 2024 ຈໍານວນ 1,100 ຫົວ;
17) ສໍາເລັດການຝຶກອົບຮົມເຂັ້ມໃຫ້ແກ່ຂັ້ນແຂວງ, ເມືອງ ແລະ ໂຮງຮຽນມັດທະຍົມສຶກສາ ກ່ຽວກັບການແນະນໍາການພັດທະນາເສັ້ນທາງໄປສູ່ອາຊີບ (ສະບັບປັບປຸງ) 18 ແຂວງ ທົ່ວປະເທດ;
18) ສໍາເລັດການສ້າງຄວາມເຂັ້ມແຂງໃຫ້ແກ່ໜ່ວຍງານຮັບຜິດຊອບວຽກງານແນະນໍາເສັ້ນທາງສູ່ອາຊີບໃນວຽກງານຕິດຕາມ, ປະສານງານກັບສະຖານອາຊີວະສຶກສາ, ມະຫາວິທະຍາໄລ ແລະ ອົງການຈັດຕັງມະຫາຊົນໂດຍນໍາໃຊ້ ICT ເພື່ອສະໜັບສະໜູນວຽກງານແນະນໍາເສັ້ນທາງສູ່ອາຊີບ;
19) ສໍາເລັດການຝຶກອົບຮົມ ກ່ຽວກັບ ເຕັກນິກການຈັດການຮຽນການສອນ 15 ໂມດູນ ໃຫ້ແກ່ຜູ້ບໍລິຫານ ແລະ ຄູຊັ້ນມັດທະຍົມສຶກສາ ໃນກຸ່ມໂຮງຮຽນເມືອງ ໜອງບົກ ແຂວງ ຄໍາມ່ວນ;
20) ຕິດຕາມ, ກວດກາ ແລະ ປະເມີນ ໂຮງຮຽນທີ່ປະຕິບັດຫຼັກສູດສາມັນວິຊາຊີບ;
21) ສໍາເລັດກອງປະຊຸມຖອດຖອນບົດຮຽນການຈັດຕັ້ງປະຕິບັດການພັດທະນາເສັ້ນທາງໄປສູ່ອາຊີບປະຈໍາປີ 2024; ສໍາເລັດກອງປະຊຸມຖອດຖອນບົດຮຽນປະຈໍາປີ 2024 ກ່ຽວກັບການຈັດການຮຽນການສອນສາມັນວິຊາຊີບໃນຂອບເຂດທົ່ວປະເທດ;
22) ໄດ້ເປີດການຮຽນການສອນຫ້ອງຮຽນວິຊາຊີບຢູ່ໂຮງຮຽນກິນນອນຊົນເຜົ່າ ແລະ ໂຮງຮຽນມັດທະຍົມທີ່ໃກ້ຄຽງກັບໂຮງຮຽນ/ວິທະຍາໄລເຕັກນິກວິຊາຊີບ ໃນຂອບເຂດທົ່ວປະເທດ;
23) ສະໜອງປື້ມຄູ່ມືການຈັດຕັ້ງປະຕິບັດສາມັນວິຊາຊີບ, ຫຼັກສູດສາມັນວິຊາຊີບ, ປື້ມແບບຮຽນ ມ.5-ມ.7 ແລະ ປື້ມອ່ານເສີມ, ສັບພະນຸກົມລາວ, ປະຫວັດສາດລາວ, ວັດທະນະທໍາລາວ, ປື້ມເລື່ອງວັນນະຄະດີລາວ ໃຫ້ແກ່ໂຮງຮຽນມັດທະຍົມວິຊາຊີບຕົວແບບມິດຕະພາບລາວ-ຫວຽດນາມ ເມືອງ ໜອງບົກ ແຂວງ ຄໍາມ່ວນ.

**2.2. ຈໍານວນຄູສອນ ແລະ ຜູ້ອໍານວຍການໂຮງຮຽນທີ່ມີຄວາມຮູ້ຄວາມສາມາດເພີ່ມຂຶ້ນເພື່ອຕອບສະໜອງ ໄດ້ກັບມາດຕະຖານການສິດສອນ ພ້ອມທັງຖືກນໍາໃຊ້ເພື່ອເປັນບ່ອນອີງໃນການພັດ ທະນາວິຊາຊີບຂອງພວກເຂົາພ້ອມດ້ວຍມີການປະເມີນຜົນຢ່າງ ເປັນປົກກະຕິ.**

1) ສໍາເລັດການລົງກວດກາ, ປະເມີນຄູທີ່ສະເໜີຂໍຕໍາແໜ່ງວິຊາການຄູຈໍານວນ 25 ຄົນ ຍິງ 13 ຄົນ ແລະ ໄດ້ຜ່ານເກນການປະເມີນ ແລະ ໄດ້ຮັບຕໍາແໜ່ງວິຊາການຄູ ຈໍານວນ 17 ຄົນ ຍິງ 9 ຄົນ;

2) ສຳເລັດຝຶກອົບຮົມກ່ຽວກັບການນຳໃຊ້ເຄື່ອງທົດລອງວິທະຍາສາດໃຫ້ແກ່ໂຮງຮຽນມັດທະຍົມ 2 ແຫ່ງທີ່ໄດ້ຮັບເຄື່ອງທົດລອງໃນປີ 2024, ນອກນີ້ຍັງສຳເລັດການຝຶກອົບຮົມເຂັ້ມການນຳໃຊ້ເຄື່ອງທົດລອງວິທະຍາສາດໃຫ້ແກ່ໂຮງຮຽນມັດທະຍົມວິຊາຊີບຕົວແບບມິດຕະພາບລາວ-ຫວຽດນາມ ເມືອງ ໜອງບົກ ແຂວງ ຄຳມ່ວນ;

**2.3. ໂຮງຮຽນທຸກແຫ່ງມີຊັບພະຍາກອນທາງດ້ານການເງິນ ແລະ ຊັບພະຍາກອນມະນຸດພຽງພໍ ເພື່ອເຮັດວຽກຢ່າງມີປະສິດທິຜົນ ຄຽງຄູ່ກັບຄວາມສາມາດໃນການບໍລິຫາໂຮງຮຽນ ເພື່ອປັບ ປຸງຜົນການຮຽນ ຄຸນນະພາບ ແລະ ຈຳນວນນັກຮຽນທີ່ຈົບຈາກການສຶກສາຂັ້ນພື້ນຖານ ແລະ ຜູ້ທີ່ຈົບການສຶກສາຫຼັງຂັ້ນພື້ນຖານທີ່ເຂົ້າສູ່ຕະຫຼາດແຮງງານທັງພາຍໃນ ແລະ ຕ່າງ ປະເທດ ສອດຄ່ອງກັບຄວາມຕ້ອງການຂອງແຜນພັດທະນເສດຖະກິດ-ສັງຄົມຄັ້ງທີ IX ແລະ ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ**

1) ສຳເລັດການປຶກສາຫາລືດ້ານວິຊາການໃນການແຍກສາຍຮຽນໃນຊັ້ນມັດທະຍົມສຶກສາຕອນປາຍອອກເປັນສອງສາຍ ສາຍວິທະຍາສາດສັງຄົມ ແລະ ສາຍວິທະຍາສາດທຳມະຊາດ;
2) ສຳເລັດຝຶກອົບຮົມ ກ່ຽວກັບ ຄູ່ມື ການກວດບົດສອບເສັງຈົບຊັ້ນ ມ.7 ດ້ວຍເຄື່ອງຈັກ ໃຫ້ແກ່ພະນັກງານຂັ້ນສູນກາງ ແລະ ຂັ້ນແຂວງ 18 ແຂວງ ທົ່ວປະເທດ ພ້ອມທັງສະໜອງເຄື່ອງຈັກໃຫ້ແຂວງ 35 ເຄື່ອງ;
3) ສະໜອງພື້ນຖານໂຄງລ່າງ ແລະ ອຸປະກອນທີ່ຈຳເປັນໃຫ້ແກ່ໂຮງຮຽນຕົວແບບ;
4) ສະໜອງເຄື່ອງທົດລອງວິທະຍາສາດໃຫ້ແກ່ໂຮງຮຽນມັດທະຍົມ 2 ແຫ່ງຄື: ໂຮງຮຽນມັດທະຍົມສົມບູນປາກຊ່ອງ ເມືອງ ສອງຄອນ ແລະ ໂຮງຮຽນມັດທະຍົມສົມບູນປາກກະດິງ ເມືອງ ປາກກະດິງ;
5) ສະໜອງເຄື່ອງຄອມພິວເຕີຕັ້ງໂຕະ ແລະ ເຄື່ອງສາຍໂປຣເຈັກເຕີໃຫ້ໂຮງຮຽນມັດທະຍົມສົມບູນ 2 ແຫ່ງຄື: ມສ ນາຄ່ອນ ເມືອງ ໝອກ ແຂວງຊຽງຂວາງ ແລະ ມສ ຄອນສາຍ ເມືອງ ວາປີ ແຂວງ ສາລະວັນ.

**3. ບັນຫາ ແລະ ສິ່ງທ້າທາຍ**

1) ອັດຕາການເຂົ້າຮຽນຂອງນັກຮຽນຊັ້ນມັດທະຍົມຕອນປາຍ ມີທ່າອ່ຽງຫຼຸດລົງ ທຽບໃສ່ປີຜ່ານມາ;
2) ອັດຕາເຂົ້າຮຽນລວມໃນຊັ້ນມັດທະຍົມຕອນປາຍຍັງຕ່ຳ, ອັດຕາປະລະສູງຖ້າທຽບໃສ່ຫຼາຍສົກຮຽນ ຜ່ານມາເນື່ອງຈາກຄອບຄົວທຸກຍາກ, ໄປອອກແຮງງານນຳພໍ່ແມ່ ທັງພາຍໃນ ແລະ ຕ່າງປະເທດ;
3) ນັກຮຽນມັດທະຍົມສຶກສາ ຕອນປາຍທີ່ຮຽນຈົບ ມ.7 ຈຳນວນຫຼາຍບໍ່ໄດ້ສືບຕໍ່ຮຽນໃນສາຍວິຊາຊີບ ເນື່ອງຈາກ ສະພາບເສດຖະກິດສັງຄົມມີຄວາມຫຍຸ້ງຍາກ;
4) ຜົນການຮຽນຂອງນັກຮຽນສ່ວນໃຫຍ່ຍັງຕ່ຳກວ່າມາດຕະຖານທີ່ກຳນົດໄວ້ໃນຫຼັກສູດ;
5) ພື້ນຖານໂຄງລ່າງຂອງໂຮງຮຽນມັດທະຍົມສຶກສາຕອນປາຍ ແລະ ມັດທະຍົມສຶກສາສົມບູນ ຈຳນວນໜຶ່ງບໍ່ໄດ້ມາດຕະຖານ, ເປ່ເພ ແລະ ຊຸດໂຊມ;
6) ໂຮງຮຽນຫຼາຍແຫ່ງຍັງຂາດອຸປະກອນຮັບໃຊ້ການຮຽນການສອນ ໂດຍສະເພາະ ວິຊາວິທະຍາສາດທຳມະຊາດ ແລະ ໄອຊີທີ (ຫ້ອງທົດລອງ, ອຸປະກອນເຄື່ອງທົດລອງ ແລະ ຄອມພິວເຕີ) ບໍ່ທັນພຽງພໍ ກັບຄວາມຕ້ອງການ;
7) ການເລືອກນັກຮຽນເຂົ້າຮຽນຕໍ່ຊັ້ນມັດທະຍົມສຶກສາຕອນປາຍ ແລະ ແຍກສາຍຮຽນ ບໍ່ທັນຈັດຕັ້ງປະຕິບັດໄດ້ຍ້ອນບໍ່ທັນມີ ນິຕິກຳ ແລະ ງົບປະມານຮອງຮັບ;

**4. ບູລິມະສິດສຳລັບສົກຮຽນ 2025-2026**

**4.1. ຈຸດປະສົງ**

ເພື່ອສົ່ງເສີມການເຂົ້າຮຽນ ແລະ ຮຽນຈົນຈົບການສຶກສາຊັ້ນມັດທະຍົມຕອນປາຍຢ່າງມີຄຸນນະພາບ ແລະ ເທົ່າທຽມກັນ ພ້ອມທັງຜົນການຮຽນຂອງນັກຮຽນ ໄດ້ຮັບການປັບປຸງດີຂຶ້ນ ແລະ ສືບຕໍ່ຮຽນອາຊີວະສຶກສາ ຫຼື ການສຶກສາຊັ້ນສູງ.

### 4.2. ຄາດໝາຍ

1) ອັດຕາເລື່ອນຊັ້ນຈາກນັກຮຽນຈົບ ມ.4 ຂຶ້ນ ມ.5 ທົ່ວປະເທດ: 73.2%
2) ອັດຕາເຂົ້າຮຽນລວມຊັ້ນ ມ. ປາຍ ທົ່ວປະເທດ: 36.3%
3) ອັດຕາປະລະການຮຽນໃນຊັ້ນ ມ.ປາຍ ທົ່ວປະເທດ: 12.8%.

### 4.3. ການເຂົ້າເຖິງ ແລະ ເທົ່າທຽມ

#### 4.3.1. ຕົວຊີ້ບອກ ແລະ ຄາດໝາຍ

1) ອັດຕາເລື່ອນຊັ້ນນັກຮຽນຈົບ ຈາກ ມ.4 ຂຶ້ນ ມ.5:
   - ທົ່ວປະເທດ: 73.2%
   - 45 ເມືອງເປົ້າໝາຍ (ໃໝ່): 59.9%
2) ອັດຕາເຂົ້າຮຽນລວມ ມັດທະຍົມຕອນປາຍ
   - ທົ່ວປະເທດ: 36.3%
   - 45 ເມືອງເປົ້າໝາຍ (ໃໝ່): 18.8%
3) ດັດຊະນີຄວາມສະເໝີພາບ ຍິງ-ຊາຍ ໃນການເລື່ອນຊັ້ນຂອງນັກຮຽນ ຈົບມ.4 ຂຶ້ນ ມ.5: ໃຫ້ບັນລຸໄດ້ ລະຫວ່າງ 0.97 ຫາ 1.03

**ຍຸດທະສາດ 1:** ເພີ່ມອັດຕາການເຂົ້າຮຽນ ຊັ້ນມັດທະຍົມຕອນປາຍໃຫ້ຫຼາຍຂຶ້ນ

**ວຽກຈຸດສຸມ:**

1) ສະໜອງທຶນການສຶກສາທັງພາຍໃນ ແລະ ຕ່າງປະເທດ ໃຫ້ແກ່ນັກຮຽນເກັ່ງລະດັບຊາດ, ຂັ້ນແຂວງ ແລະ ໃບປະກາສະນິຍະບັດແດງ.

**ຍຸດທະສາດ 2:** ສົ່ງເສີມ ການເຂົ້າຮຽນສາມັນວິຊາຊີບ ຢ່າງເທົ່າທຽມ

**ວຽກຈຸດສຸມ:**

1) ຂະຫຍາຍການຈັດຕັ້ງການຮຽນ-ການສອນສາມັນວິຊາຊີບ ຢູ່ ບັນດາໂຮງຮຽນສາມັນກິນນອນຊົນເຜົ່າ ແລະ ໂຮງຮຽນມັດທະຍົມບ່ອນທີ່ມີເງື່ອນໄຂ;
2) ສົ່ງເສີມການແນະນຳເສັ້ນທາງໄປສູ່ອາຊີບ ໃນຊັ້ນມັດທະຍົມສຶກສາ;
3) ສຶກສາ ແລະ ຄົ້ນຄວ້າແຜນຄວາມຕ້ອງການຮຽນວິຊາຊີບຂອງນັກຮຽນທີ່ຮຽນໂຮງຮຽນສາມັນກິນນອນຊົນເຜົ່າ;
4) ຕິດຕາມ ແລະ ປະເມີນຜົນການຈັດການຮຽນການສອນສາມັນວິຊາຊີບ.

**ຍຸດທະສາດ 3:** ພັດທະນາ ແລະ ປັບປຸງ ສະພາບແວດລ້ອມຂອງທັງໃນແລະ ນອກໂຮງຮຽນໃຫ້ມີຄວາມປອດໄພ ສຳລັບນັກຮຽນທຸກຄົນ ລວມທັງການສຶກສາຮຽນຮ່ວມ

**ວຽກຈຸດສຸມ:**

1) ສະໜອງ ປື້ມແບບຮຽນ, ຄູ່ມືຄູ, ອຸປະກອນ ແລະ ສື່ການຮຽນການສອນ (ປື້ມອ່ານເສີມ, ປຶ້ມຂຽນ, ກະດານດຳ, ອຸປະກອນກິລາ ແລະ ອື່ນໆ) ໃຫ້ແກ່ ໂຮງຮຽນສົມບູນ ແລະ ມັດທະຍົມຕອນປາຍ ບ່ອນທີ່ມີຄວາມຕ້ອງການ;

2) ສະໜອງ ອຸປະກອນໄອຊີທີ, ຄອມພິວເຕີ, ເຄື່ອງທົດລອງ, ຫ້ອງທົດລອງວິທະຍາສາດ, ຫ້ອງສະໝຸດ, ຫ້ອງຮຽນໄອຊີທີ, ຫ້ອງຮຽນພາສາຕ່າງປະເທດ, ຫ້ອງຝຶກປະຕິບັດ ແລະ ອື່ນໆ ລວມທັງ ການສຶກສາຮຽນຮ່ວມ;
3) ສ້າງລະບົບຄຸ້ມຄອງການຮຽນການສອນ ແບບເອເລັກໂຕຣນິກ;
4) ສົ່ງເສີມ ການນຳໃຊ້ ແພຼດຟອມການຮຽນການສອນ "ຄັງປັນຍາລາວ";
5) ສະໜອງນ້ຳສະອາດ, ສິ່ງອຳນວຍຄວາມສະດວກ, ອາຄານຮຽນ, ຫໍພັກນັກຮຽນ (ແຍກ ຍິງ-ຊາຍ), ຫ້ອງນ້ຳ (ແຍກ ຍິງ-ຊາຍ), ວິດຖ່າຍທີ່ປອດໄພ (ແຍກ ຍິງ-ຊາຍ), ໃຫ້ແກ່ໂຮງຮຽນ ນັບທັງນັກຮຽນໃນເຂດຫ່າງໄກສອກຫຼີກ;
6) ສະໜອງອຸປະກອນຊ່ວຍເຫຼືອ ສຳລັບນັກຮຽນພິການ;
7) ຕິດຕາມ ການສະໜອງສິ່ງອຳນວຍຄວາມສະດວກ ໃຫ້ແກ່ໂຮງຮຽນ ລວມທັງການສຶກສາຮຽນຮ່ວມ.

### 4.4. ຄຸນນະພາບ ແລະ ຄວາມສອດຄ່ອງ

#### 4.4.1. ຕົວຊີ້ບອກ

1) ອັດຕາຄ້າງຫ້ອງ ຊັ້ນ ມ.ປາຍ
   - ລະດັບຊາດ 0.6%
   - 45 ເມືອງ 0.7%
2) ອັດຕາເລື່ອນຂັ້ນ ຊັ້ນ ມ.ປາຍ
   - ລະດັບຊາດ 86.6%
   - 45 ເມືອງ 81.9%
3) ອັດຕາປະລະການຮຽນ ຊັ້ນ ມ.ປາຍ
   - ລະດັບຊາດ 12.8%
   - 45 ເມືອງ 17.3%

**ຍຸດທະສາດ 1:** ພັດທະນາວິຊາຊີບຄູແບບຕໍ່ເນື່ອງ ແລະ ຮັບປະກັນໃຫ້ ສະຖານການສຶກສາ ທີ່ມີຄຸນນະພາບ ຊັ້ນມັດທະຍົມຕອນປາຍ

**ວຽກຈຸດສຸມ:**

1) ຊຸກຍູ້, ສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງໃຫ້ຄູໄດ້ໄປຍົກລະດັບ;
2) ສ້າງຄວາມເຂັ້ມແຂງໃຫ້ແກ່ກຸ່ມໂຮງຮຽນ, ຜູ້ອຳນວຍການ, ຄູປະຈຳການ ແລະ ຜູ້ເຮັດວຽກສຶກສານິເທດ ລວມທັງການສຶກສາຮຽນຮ່ວມ;
3) ຊຸກຍູ້ ແລະ ສົ່ງເສີມ ຄູທີ່ໄດ້ຮັບຕຳແໜ່ງວິຊາການ;
4) ຕິດຕາມ, ຊຸກຍູ້, ຊ່ວຍເຫຼືອ ແລະ ປະເມີນຄູປະຈຳການ, ຄູທີ່ໄດ້ຮັບຕຳແໜ່ງວິຊາການ ແລະ ຜູ້ເຮັດວຽກສຶກສານິເທດ.

**ຍຸດທະສາດ 2:** ຄົ້ນຄວ້າ ແລະ ວິໄຈ ໃນການແຍກສາຍຮຽນ ໃນຊັ້ນມັດທະຍົມຕອນປາຍ

**ວຽກຈຸດສຸມ:**

1) ຄົ້ນຄວ້າ ແລະ ວິໄຈ ກ່ຽວກັບ ການແຍກສາຍຮຽນ ໃນຊັ້ນມັດທະຍົມສຶກສາຕອນປາຍ (ວິທະຍາສາດ ທຳມະຊາດ, ວິທະຍາສາດ ສັງຄົມ ແລະ ສາຍທົ່ວໄປ);
2) ທົດລອງ ການຈັດຕັ້ງປະຕິບັດການແຍກສາຍຮຽນ ໃນໂຮງຮຽນມັດທະຍົມ ສຶກສາສົມບູນ ຫຼື ມັດທະຍົມສຶກສາຕອນປາຍ ທີ່ມີເງື່ອນໄຂ;

3) ປະເມີນຜົນຂອງການທົດລອງການຈັດຕັ້ງປະຕິບັດການແຍກສາຍຮຽນໃນຊັ້ນມັດທະຍົມສຶກສາຕອນປາຍ;
4) ຂະຫຍາຍການຈັດຕັ້ງປະຕິບັດການແຍກສາຍຮຽນ ໃນໂຮງຮຽນມັດທະຍົມ ສຶກສາສົມບູນ ຫຼື ມັດທະຍົມສຶກສາຕອນປາຍ.

**ຍຸດທະສາດ 3:** ຮັບປະກັນຜົນການຮຽນຂອງນັກຮຽນສໍາລັບ ນັກຮຽນທຸກຄົນ ລວມທັງການສຶກສາຮຽນຮ່ວມໄດ້ຮັບການປັບປຸງດີຂຶ້ນ ຢ່າງມີຄຸນນະພາບ

**ວຽກຈຸດສຸມ:**

1) ທົບທວນ ຫຼັກສູດມັດທະຍົມຕອນປາຍ ແລະ ຫຼັກສູດສາມັນວິຊາຊີບ ໃຫ້ສອດຄ່ອງກັບ ຄວາມຕ້ອງການຂອງແຕ່ລະທ້ອງຖິ່ນ;
2) ສ້າງຄວາມເຂັ້ມແຂງ ໃຫ້ແກ່ ຄູມັດທະຍົມ ກ່ຽວກັບ ການນໍາໃຊ້ເຄື່ອງທົດລອງ ວິທະຍາສາດ;
3) ສ້າງຄວາມເຂັ້ມແຂງ ໃນການນິເທດພາຍໃນ, ການຈັດການສອນຫ້ອງຮຽນສາມັນວິຊາຊີບ ແລະ ການປະເມີນເພື່ອປັບປຸງການຮຽນການສອນ;
4) ຕິດຕາມ, ຊ່ວຍເຫຼືອ ແລະ ປະເມີນ ຜູ້ເຮັດວຽກສຶກສານິເທດ, ຄູທີ່ໄດ້ຮັບການຝຶກອົບຮົມການນໍາໃຊ້ເຄື່ອງທົດລອງວິທະຍາສາດ ຊັ້ນມັດທະຍົມ.

**ຍຸດທະສາດ 4:** ສົ່ງເສີມການຮຽນ STEM, ການຮຽນຮູ້ດ້ານດິຈິຕອນ ແລະ ນໍາໃຊ້ ICT ເຂົ້າໃນການຮຽນການສອນ ແລະ ການບໍລິຫານຄຸ້ມຄອງ

**ວຽກຈຸດສຸມ:**

1) ສົ່ງເສີມ ການຮຽນການສອນ STEM;
2) ສົ່ງເສີມ ການສຶກສາຮຽນຮ່ວມ;
3) ສົ່ງເສີມ ການຮຽນການສອນ ພາສາຕ່າງປະເທດ;
4) ສົ່ງເສີມ ການນໍາໃຊ້ ICT (ດິຈິຕອນ ແລະ ປັນຍາປະດິດ) ເຂົ້າໃນການຮຽນການສອນ ແລະ ການບໍລິຫານ-ຄຸ້ມຄອງ ໂຮງຮຽນມັດທະຍົມ;
5) ຕິດຕາມ ແລະ ປະເມີນຜົນ ການຮຽນການສອນ STEM, ການສຶກສາຮຽນຮ່ວມ, ການນໍາໃຊ້ ICT ແລະ ພາສາຕ່າງປະເທດ.

**ຍຸດທະສາດ 5:** ສ້າງເງື່ອນໄຂໃຫ້ໂຮງຮຽນມັດທະຍົມ ກາຍເປັນໂຮງຮຽນຕົວແບບ

**ວຽກຈຸດສຸມ:**

1) ປັບປຸງ ແລະ ພັດທະນາ ນິຕິກໍາ ແລະ ກໍານົດ ມາດຕະຖານໃນການສ້າງເປັນໂຮງຮຽນຕົວແບບ ແລະ ກຸ່ມໂຮງຮຽນສາມັນຕົວແບບ;
2) ສ້າງຄວາມເຂັ້ມແຂງໃຫ້ແກ່ໂຮງຮຽນ ເພື່ອພັດທະນາໂຮງຮຽນສາມັນ ໃຫ້ກາຍເປັນໂຮງຮຽນສາມັນຕົວແບບ;
3) ສ້າງຄວາມເຂັ້ມແຂງໃຫ້ແກ່ກຸ່ມໂຮງຮຽນມັດທະຍົມ ເພື່ອພັດທະນາກຸ່ມໂຮງຮຽນມັດທະຍົມໃຫ້ກາຍເປັນກຸ່ມໂຮງຮຽນມັດທະຍົມຕົວແບບ;
4) ສະໜອງພື້ນຖານໂຄງລ່າງ ແລະ ອຸປະກອນ ທີ່ຈໍາເປັນ ໃຫ້ແກ່ໂຮງຮຽນມັດທະຍົມ ກາຍເປັນໂຮງຮຽນຕົວແບບ;
5) ຕິດຕາມ, ກວດກາ, ປະເມີນຜົນ ໂຮງຮຽນຕົວແບບ ແລະ ກຸ່ມໂຮງຮຽນມັດທະຍົມ.

**ຍຸດທະສາດ 6:** ຕິດຕາມ, ກວດກາ, ປະເມີນຜົນ ແລະ ປະກັນຄຸນນະພາບ ການຮຽນການສອນ ໃນຊັ້ນມັດທະຍົມສຶກສາຕອນປາຍ

**ວຽກຈຸດສຸມ:**

1) ພັດທະນາຂໍ້ສອບເສັງຈົບຊັ້ນມັດທະຍົມສຶກສາ;
2) ສົ່ງເສີມ ການສອບເສັງແຂ່ງຂັນນັກຮຽນເກັ່ງລະດັບຊາດ ແລະ ຕິດຕາມ ການສອບເສັງຈົບຊັ້ນມັດທະຍົມສຶກສາຕອນປາຍ (ມ.7);
3) ຕິດຕາມ, ກວດກາ, ປະເມີນຜົນ ແລະ ປະກັນຄຸນນະພາບ ການປະຕິບັດຫຼັກສູດ, ຫຼັກສູດສາມັນວິຊາຊີບ ໂຮງຮຽນມັດທະຍົມສຶກສາ.

## 4.5. ບໍລິຫານ ແລະ ຄຸ້ມຄອງ

### 4.5.1. ຕົວຊີ້ບອກ

1) ນິຕິກຳໃນການຄຸ້ມຄອງໂຮງຮຽນສາມັນໄດ້ຮັບການປັບປຸງດີຂຶ້ນ;
2) ລະບົບໃນການຕິດຕາມຄວາມສ່ຽງໄພພິບັດໄດ້ຮັບການປັບປຸງດີຂຶ້ນ.

**ຍຸດທະສາດ 1:** ປັບປຸງ ບັນດານິຕິກຳໃນການຄຸ້ມຄອງໂຮງຮຽນມັດທະຍົມຕອນປາຍ

**ວຽກຈຸດສຸມ**

1) ສ້າງ ແລະ ພັດທະນາ ນິຕິກຳ ໃນການຄຸ້ມຄອງໂຮງຮຽນສາມັນ;
2) ສ້າງຄວາມເຂັ້ມແຂງ ໃຫ້ແກ່ ຜູ້ບໍລິຫານໂຮງຮຽນ, ຄູສອນ, ການນິເທດພາຍໃນ, ການຈັດການສອນ ຫ້ອງຮຽນສາມັນວິຊາຊີບ ແລະ ການປະເມີນຜົນ ເພື່ອປັບປຸງການຮຽນການສອນ.

**ຍຸດທະສາດ 2:** ກຳນົດ ນະໂຍບາຍ ໃນການ ບັນຈຸ, ສັບຊ້ອນ ແລະ ຈັດສັນ ຄູ ຊັ້ນມັດທະຍົມສຶກສາ

**ວຽກຈຸດສຸມ:**

1) ສ້າງ ແລະ ພັດທະນາ ນິຕິກຳ ໃຫ້ສອດຄ່ອງກັບຄວາມຕ້ອງການຄູ ໃນລະດັບໂຮງຮຽນຕາມຄວາມຕ້ອງການ ໃນລະດັບໂຮງຮຽນ ເພື່ອຫຼຸດຜ່ອນຄວາມແຕກໂຕນ;
2) ສ້າງ ແລະ ພັດທະນາ ນິຕິກຳ ກ່ຽວກັບ ຕຳແໜ່ງວິຊາການຄູ;
3) ສະໜອງຄູຕາມຄວາມຕ້ອງການ ຕາມລາຍວິຊາທີ່ຈັດການຮຽນການສອນ ໃນຊັ້ນມັດທະຍົມສຶກສາ.

**ຍຸດທະສາດ 3:** ພັດທະນາຜູ້ບໍລິຫານໃຫ້ມີຄຸນນະພາບ

**ວຽກຈຸດສຸມ:**

1) ສ້າງຄວາມເຂັ້ມແຂງໃຫ້ແກ່ ຜູ້ບໍລິຫານໂຮງຮຽນ ກ່ຽວກັບ ບໍລິຫານ ແລະ ຄຸ້ມຄອງ ແລະ ການເປັນຜູ້ນຳດ້ານການສິດສອນ;
2) ຕິດຕາມ, ຊຸກຍູ້, ຊ່ວຍເຫຼືອ ແລະ ປະເມີນ ຜູ້ບໍລິຫານໂຮງຮຽນ.

**ຍຸດທະສາດ 4:** ສົ່ງເສີມ ການມີສ່ວນຮ່ວມຂອງຊຸມຊົນ ຕໍ່ວຽກງານການສຶກສາ

**ວຽກຈຸດສຸມ*:***

1) ພັດທະນາ ນິຕິກຳ ທີ່ສົ່ງເສີມໃຫ້ນັກຮຽນທີ່ຈົບ ຊັ້ນມັດທະຍົມສຶກສາຕອນຕົ້ນ ໄປຕໍ່ຊັ້ນມັດທະຍົມສຶກສາຕອນປາຍ ໂດຍເນັ້ນໃສ່ຫຼຸດຜ່ອນຄ່າໃຊ້ຈ່າຍຂອງຄອບຄົວ;
2) ສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຄົມພໍ່ແມ່ນັກຮຽນ ເພື່ອຊຸກຍູ້ລູກຫຼານເຂົ້າຮຽນ ແລະ ຮຽນຈົບມັດທະຍົມສຶກສາຕອນປາຍ ແລະ ເຂົ້າຮຽນຕໍ່ວິຊາຊີບ, ວິຊາສະເພາະ ຢູ່ ສະຖາບັນການສຶກສາແຫ່ງຕ່າງໆ;

3) ສົ່ງເສີມ ນິຕິບຸກຄົນລົງທຶນໃສ່ການພັດທະນາການສຶກສາຊັ້ນມັດທະຍົມສຶກສາ.

**ຍຸດທະສາດ 5:** ຄຸ້ມຄອງຄວາມສ່ຽງຕໍ່ໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ ໃນຂະແໜງການສຶກສາ

**ວຽກຈຸດສຸມ***:*

1) ສ້າງຄວາມເຂັ້ມແຂງໃຫ້ແກ່ ຜູ້ບໍລິຫານການສຶກສາ ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ໃນການປ້ອງກັນໄພພິບັດ ໃນຂະແໜງການສຶກສາ;
2) ສ້າງຄວາມເຂັ້ມແຂງ ໃຫ້ແກ່ ຂັ້ນໂຮງຮຽນ ໃນການປ້ອງກັນໄພພິບັດໃນຂະແໜງການສຶກສາ;
3) ພັດທະນາລະບົບ ໃນການຕິດຕາມ ຄວາມສ່ຽງໄພພິບັດ ທີ່ອາດຈະເກີດຂຶ້ນໃນຂະແໜງການສຶກສາ;
4) ຕິດຕາມ ຄວາມສ່ຽງໄພພິບັດ ທີ່ອາດຈະເກີດຂຶ້ນໃນຂະແໜງການສຶກສາ.

# V. ຂະແໜງການຍ່ອຍການສຶກສານອກໂຮງຮຽນ

## 1. ສະພາບລວມ

ໂດຍປະຕິບັດຕາມ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ X (2026-2030) ວຽກງານການສຶກສານອກໂຮງຮຽນ ກໍໄດ້ຈັດຕັ້ງປະຕິບັດຄຽງຄູ່ກັບ ການພັດທະນາການສຶກສາຂອງຂະແໜງການອື່ນ ເພື່ອຮັບປະກັນໃຫ້ປະຊາຊົນລາວບັນດາເຜົ່າ ໄດ້ເຂົ້າເຖິງການສຶກສາຢ່າງທົ່ວເຖິງ, ເທົ່າທຽມ ແລະ ມີຄຸນນະພາບ. ໃນສົກປີ 2023-2024 ການຈັດຕັ້ງປະຕິບັດແຜນພັດທະນາການສຶກສານອກໂຮງຮຽນ ປະຕິບັດຕາມແຜນການປະຈໍາສົກປີທີ່ວາງໄວ້. ໂດຍສະ ເພາະການຂະຫຍາຍໂອກາດ ແລະ ສົ່ງເສີມ ໃຫ້ປະຊາກອນກຸ່ມເປົ້າໝາຍໃນເກນເຂົ້າຮຽນ (ອາຍຸ 6-14 ປີ, 15-24 ປີ, 15-40 ປີ ແລະ ສໍາລັບ ມຕ ບໍາລຸງ 15-35 ປີ) ທີ່ດ້ອຍໂອກາດ, ພາດໂອກາດ ທາງການສຶກສາ ໂດຍບໍ່ຈໍາແນກ ເພດ, ເຜົ່າ, ຖານະທາງເສດຖະກິດ, ສະພາບຄວາມພິການ ເພື່ອໃຫ້ໄດ້ເຂົ້າເຖິງການສຶກສາ ຢ່າງເທົ່າທຽມ ແລະ ມີຄຸນນະພາບ. ໂດຍການຈັດຕັ້ງການຮຽນ-ການສອນ ຕາມໂຄງການຫຼັກສູດການລົບລ້າງຄວາມບໍ່ຮູ້ໜັງສື, ການບໍາລຸງຍົກລະດັບການສຶກສາຊັ້ນປະຖົມ, ຊັ້ນມັດທະຍົມຕອນຕົ້ນ ແລະ ຊັ້ນມັດທະຍົມຕອນປາຍ ເພື່ອສົ່ງເສີມການຮຽນຮູ້ຂັ້ນພື້ນຖານ ແລະ ສ້າງໂອກາດໃຫ້ແກ່ປະຊາກອນກຸ່ມເປົ້າໝາຍດັ່ງກ່າວ ໄດ້ຮຽນຈົບການສຶກສາຂັ້ນພື້ນຖານ ຫຼື ສືບຕໍ່ຮຽນໃນສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ. ພ້ອມກັນນັ້ນ, ຍັງໄດ້ສ້າງເງື່ອນໄຂ ແລະ ແຮງຈູງໃຈໃຫ້ແກ່ກຸ່ມເປົ້າໝາຍໄດ້ເຂົ້າຮຽນຫຼາຍຂຶ້ນ ດ້ວຍການສະໜອງການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ຄວບຄູ່ກັບການບໍາລຸງຍົກລະດັບການສຶກສາ ເພື່ອເປັນການສ້າງ ແລະ ພັດທະ ນາທັກສະອາຊີບ, ສີມືແຮງງານ ແລະ ປັບປຸງຄຸນນະພາບຊີວິດ ຂອງເຂົາເຈົ້າໃຫ້ດີຂຶ້ນ.

ຄຽງຄູ່ກັບການຂະຫຍາຍໂອກາດ ແລະ ການສົ່ງເສີມການເຂົ້າເຖິງການສຶກສາແລ້ວກົມການສຶກສານອກໂຮງຮຽນ ຍັງໄດ້ເອົາໃຈໃສ່ຕໍ່ການປັບປຸງທາງດ້ານຄຸນນະພາບການສຶກສານອກໂຮງຮຽນ; ໂດຍຖືເອົາການກວດກາ, ຕິດຕາມ ແລະ ປະເມີນຜົນ ເປັນວຽກງານບຸລິມະສິດ ໂດຍໄດ້ສ້າງລະບຽບການ, ມາດຕະຖານ ແລະ ເຄື່ອງມືທີ່ຊ່ວຍໃນການກວດກາ, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານການສຶກສານອກໂຮງຮຽນ ເພື່ອເຮັດໃຫ້ວຽກງານ ດັ່ງກ່າວສາມາດບັນລຸຕາມຄາດໝາຍ ແລະ ແຜນການທີ່ວາງໄວ້ ຢ່າງມີປະສິດທິພາບ. ປະຊາກອນກຸ່ມເປົ້າໝາຍທີ່ໄດ້ເຂົ້າຮຽນ ຜ່ານຮູບແບບການສຶກສານອກໂຮງຮຽນ ຈໍານວນ 30,093 ຄົນ; ຍິງ 14,040 ຄົນ; ທຽບໃສ່ຕົວເລກຄາດໝາຍ ໃນສົກປີ 2024-2025 ຈໍານວນ 31,000 ຄົນ ປະຕິບັດໄດ້ 93.76% (ຕາມການຄາດໝາຍຂອງກົມໄດ້ກໍານົດໄວ້ໃນເບື້ອງຕົ້ນ), ຖ້າທຽບໃສ່ຈໍານວນຈົບໃນສົກຮຽນ 2023-2024 ມີຜູ້ຮຽນຈົບຈໍານວນ 34,068 ຄົນ ຫຼຸດລົງ 3,068 ຄົນ; ສໍາເລັດການປັບປຸງລະບົບສະຖິຕິຖານຂໍ້ມູນການສຶກສານອກໂຮງຮຽນເຂົ້າລະບົບສະຖິຕິຖານຂໍ້ມູນສຶກສາ ແລະ ເຊື່ອມໂຍງເຂົ້າກັບລະບົບສະຖິຕິຖານຂໍ້ມູນສຶກສາ ແລະ ກິລາ.

## 2. ຜົນສໍາເລັດຜົນໄດ້ຮັບລະດັບສູງ

### 2.1. ຈໍານວນນັກຮຽນທີ່ຈົບຈາກແຜນງານການສຶກສານອກໂຮງຮຽນເພີ່ມຂຶ້ນ, ໂດຍມີຜົນການຮຽນຮູ້ທີ່ດີຂຶ້ນ, ໂດຍສະເພາະແມ່ນທັກສະການຮູ້ໜັງສື ແລະ ທັກສະການຄິດໄລ່ເລກ ໂດຍມີຈຸດສຸມພິເສດກ່ຽວກັບຜູ້ດ້ອຍໂອກາດ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ.

- **ວຽກງານການສຶກສາຕໍ່ເນື່ອງ:**

ສົກຮຽນ 2024-2025 ໄດ້ສະໜອງ ແລະ ຂະຫຍາຍໂອກາດທາງການສຶກສາ ໃຫ້ເຂົ້າເຖິງກຸ່ມເປົ້າໝາຍຜູ້ທີ່ບໍ່ຮູ້ໜັງສື, ຜູ້ທີ່ປະລະຈາກໂຮງຮຽນ (ສາຍສາມັນສຶກສາ), ຜູ້ທີ່ບໍ່ມີໂອກາດຮຽນຮູ້ໜັງສື ແລະ ຜູ້ທີ່ສົນໃຈໄດ້ເຂົ້າຮຽນຫຼາຍຂຶ້ນ; ໂດຍຜ່ານຫຼັກສູດການຮຽນ-ການສອນ ລົບລ້າງຄວາມບໍ່ຮູ້ໜັງສື ແລະ ບໍາລຸງຍົກລະດັບການສຶກສາຊັ້ນຕ່າງໆ ເຊິ່ງມີລາຍລະອຽດລຸ່ມນີ້:

1) ປະຊາກອນກຸ່ມເປົ້າໝາຍໄວເດັກ ອາຍຸ 6-14 ປີ ໄດ້ເຂົ້າຮຽນຊັ້ນປະຖົມບຳລຸງ ຈຳນວນ 959, ຍິງ 450 ທຽບໃສ່ຕົວເລກຄາດໝາຍ 2,000 ຄົນ ປະຕິບັດໄດ້ 47.95 %;
2) ປະຊາກອນກຸ່ມເປົ້າໝາຍໄວໜຸ່ມ ແລະ ຜູ້ໃຫຍ່ ອາຍຸ 15-40 ປີ ເຂົ້າຮຽນລົບລ້າງຄວາມບໍ່ຮູ້ໜັງສື 1,156 ຄົນ, ຍິງ 519 ຄົນ, ທຽບໃສ່ຕົວເລກຄາດໝາຍ 2,500 ຄົນ, ປະຕິບັດໄດ້ 46.24 %;
3) ປະຊາກອນກຸ່ມເປົ້າໝາຍໄວໜຸ່ມ ແລະ ຜູ້ໃຫຍ່ ອາຍຸ 15-40 ປີ ເຂົ້າຮຽນຊັ້ນປະຖົມບຳລຸງ 4,347 ຄົນ, ຍິງ 2,198 ຄົນ ທຽບໃສ່ຕົວເລກຄາດໝາຍ 6,000 ຄົນ, ປະຕິບັດໄດ້ 72 %;
4) ປະຊາກອນກຸ່ມເປົ້າໝາຍໄວໜຸ່ມ ແລະ ຜູ້ໃຫຍ່ ອາຍຸ 15-35 ປີ ໄດ້ເຂົ້າຮຽນຊັ້ນມັດທະຍົມຕອນ ຕົ້ນ ບຳລຸງ ຈຳນວນ 18,310 ຄົນ, ຍິງ 9,189 ທຽບໃສ່ຕົວເລກຄາດໝາຍ 15,000 ຄົນ ປະຕິບັດໄດ້ 122,06%;
5) ປະຊາກອນກຸ່ມເປົ້າໝາຍໄດ້ເຂົ້າຮຽນຊັ້ນມັດທະຍົມຕອນປາຍບຳລຸງ 1,280 ຄົນ, ຍິງ 413 ຄົນ, ທຽບໃສ່ຕົວເລກຄາດໝາຍ ຈຳນວນ 2,500 ຄົນ, ປະຕິບັດໄດ້ 51.20 %
6) ຜູ້ຮຽນ ຊັ້ນ ມ.5 ຈຳນວນ 234 ຍິງ 70 ຄົນ;
7) ຜູ້ຮຽນ ຊັ້ນ ມ.6 ຈຳນວນ 201 ຄົນ, ຍິງ 56 ຄົນ;
8) ຜູ້ຮຽນ ຊັ້ນ ມ.7 ຈຳນວນ 845 ຍິງ 284 ຄົນ.

- **ວຽກງານການສົ່ງເສີມວິຊາຊີບຂັ້ນພື້ນຖານ:**

ການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ແມ່ນໄດ້ດຳເນີນຄວບຄູ່ກັບການຈັດຕັ້ງການຮຽນ-ການສອນ ບຳລຸງຍົກລະດັບການສຶກສາຊັ້ນປະຖົມ, ມັດທະຍົມຕອນຕົ້ນ ແລະ ໄດ້ຈັດຕັ້ງຝຶກອົບຮົມສະເພາະໃຫ້ກັບກຸ່ມເປົ້າໝາຍທີ່ສົນໃຈ ພາຍໃຕ້ຮ່ວມມືກັບຄູ່ຮ່ວມພັດທະນາ ເພື່ອສົ່ງເສີມທັກສະວິຊາຊີບຂັ້ນພື້ນຖານ ນຳໄປສູ່ການປະກອບອາຊີບ, ສ້າງວຽກເຮັດງານທຳ, ພັດທະນາທັກສະສີມືໃຫ້ຊຳນິຊຳນານ ແລະ ຕອບສະໜອງຕາມສະພາບການນຂອງຕະຫຼາດແຮງງານ. ເຊິ່ງໃນສົກຮຽນນີ້ມີຜູ້ເຂົ້າຝຶກອົບຮົມວິຊາຊີບຂັ້ນພື້ນຖານ ຈຳນວນ 3,015 ຄົນ, ຍິງ 1,271 ຄົນ ທຽບໃສ່ຕົວເລກຄາດໝາຍ 3,000 ຄົນ ປະຕິບັດໄດ້ 100.5% ລື່ນຄາດໝາຍ 0.5% ໃນນີ້ມີສາຂາວິຊາຊີບຄື: ສາຂາປູກຝັງ-ລ້ຽງສັດ, ຕັດຫຍິບ, ປຸງແຕ່ງອາຫານ, ເສີມສວຍ, ການບໍລິການ ແລະ ໂຮງແຮມ ແລະ ຊ່າງໄມ້.

## 2.2. ອັດຕາການຮູ້ໜັງສືໃນກຸ່ມຜູ້ໃຫຍ່ ແລະ ໄວໜຸ່ມເພີ່ມຂຶ້ນ ພ້ອມທັງຫຼຸດຜ່ອນຄວາມແຕກໂຕນກັນລະຫວ່າງເພດ, ເຜົ່າ, ຖານະດ້ານເສດຖະກິດ ແລະ ທີ່ຕັ້ງພູມສັນຖານ

1) ສຳເລັດການສ້າງຫຼັກສູດ ປຶ້ມຮຽນເສີມຊັ້ນມັດທະຍົມສຶກສາຕອນປາຍບຳລຸງ ( ທັກສະທາງດ້ານສັງຄົມ , ທັກສະຊີວິດ ແລະ ທັກສະດິຈິຕອນ);
2) ສຳເລັດການພັດທະນາອີດີແອັບ (ED-App) ເຂົ້າໃນການຮຽນ-ການສອນສຳລັບຊັ້ນມັດທະຍົມຕອນປາຍບຳລຸງ;
3) ສຳເລັດການເກັບກຳຂໍ້ມູນຄືນ ກຸ່ມເປົ້າໝາຍ 15-35 ປີ ທີ່ຍັງບໍ່ຈົບຊັ້ນມັດທະຍົມຕອນຕົ້ນ ທີ່ຕົກລົ່ນເພື່ອຈັດຕັ້ງການຮຽນ-ການສອນ ເພື່ອກະກຽມປະກາດຈົບຊັ້ນມັດທະຍົມຕອນຕົ້ນບຳລຸງໃນທົ່ວປະເທດ;
4) ສຳເລັດການສ້າງຂໍ້ຕົກລົງວ່າດ້ວຍການສ້າງສູນຮຽນຮູ້ຊຸມຊົນຕົວແບບ ແລະ ຖືກອະນຸມັດນຳໃຊ້ຢ່າງເປັນທາງການ;

## 2.3. ຄຸນນະພາບ ແລະ ຈຳນວນນັກຮຽນທີ່ອອກຈາກລະບົບກ່ອນຈົບການສຶກສາຂັ້ນພື້ນຖານ ແລະ ຜູ້ທີ່ຈົບການສຶກສາຫຼັງຂັ້ນພື້ນຖານທີ່ເຂົ້າສູ່ຕະຫຼາດແຮງງານທັງພາຍໃນ ແລະ ຕ່າງປະເທດ ສອດຄ່ອງກັບຄວາມຕ້ອງການຂອງແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ IX ເພື່ອຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ

1) ສຳເລັດການສ້າງຄວາມເຂັ້ມແຂງທາງດ້ານທັກສະການສິດສອນຜູ້ໃຫ່ຍ ແລະ ວິທີການສິດສອນໃຫ້ແກ່ຄູສອນອາສາສະໝັກຊັ້ນປະຖົມບຳລຸງ;
2) ສຳເລັດການສ້າງຄູຝຶກວິຊາຊີບຂັ້ນພື້ນຖານໃນຫົວຂໍ້ ການເປັນຜູ້ປະກອບການໃນການສົ່ງເສີມເສດຖະກິດຂະໜາດນ້ອຍ;
3) ສຳເລັດການສ້າງຄວາມເຂັ້ມແຂງດ້ານການບໍລິຫານໃຫ້ແກ່ຜູ້ບໍລິຫານສູນການຮຽນຮຽນຮູ້ຊຸມຊົນຕົວແບບ;
4) ສຳເລັດການສ້າງຄວາມເຂັ້ມແຂງທາງດ້ານການວິເຄາະ ແລະ ວິໄຈຂອງເຄື່ອງມືການຕິດຕາມ ແລະ ປະເມີນຜົນຂອງວຽກງານການສຶກສານອກໂຮງຮຽນໃຫ້ແກ່ພະນັກງານ.

**2.4. ຂະແໜງການສຶກສາ ໄດ້ມີການຈັດຕັ້ງ, ຄຸ້ມຄອງ, ຈັດສັນຊັບພະຍາກອນ, ຕິດຕາມ ແລະ ປະເມີນຜົນຢູ່ແຕ່ລະຂັ້ນຢ່າງເໝາະສົມ ເພື່ອປັບປຸງການປະຕິບັດໜ້າທີ່ຂອງຂະແໜງການໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ.**

1) ຈັດສັນ ແລະ ສະໜອງງົບປະມານ ໃຫ້ຄູອາສາສະໝັກທີ່ສິດສອນຕາມຫຼັກສູດລຶບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຍົກລະດັບການສຶກສາ ຊັ້ນປະຖົມ ແລະ ມັດທະຍົມຕອນຕົ້ນ ຈຳນວນ 6,988 ຄົນ;
2) ສະໜອງງົບປະມານຮັບໃຊ້ວຽກງານການສຶກສານອກໂຮງຮຽນ ລວມມູນຄ່າ 350,000,000 ກີບ;
3) ສະໜອງງົບປະມານສອບເສັງ ປະຈຳສົກປີ 2024-2025 ລວມມູນຄ່າ 300,000,000 ກີບ;
4) ສະໜອງອຸປະກອນຮັບໃຊ້ສຳລັບການຝຶກອົບຮົມວິຊາຊີບຂັ້ນພື້ນຖານໃນສາຂາຕ່າງໆລວມມູນຄ່າ 200,000,000 ກີບ;
5) ສະໜອງປຶ້ມບັນທຶກການຮຽນ-ການສອນ ຊັ້ນປະຖົມ, ມັດທະຍົມຕອນຕົ້ນ-ຕອນປາຍບຳລຸງ ແລະ ໃບປະກາດສະນີຍະບັດ ຊັ້ນປະຖົມ-ມັດທະຍົມບຳລຸງ ລວມມູນຄ່າ 260,395,000 ກີບ.

**3. ບັນຫາ ແລະ ສິ່ງທ້າທາຍ**

1) ປະຊາກອນຈຳນວນໜຶ່ງແມ່ນພາດໂອກາດເຂົ້າຮຽນ, ກຶກໜັງສືຄືນ, ປະລະການຮຽນຊັ້ນປະຖົມ ແລະ ຊັ້ນມັດທະຍົມ;
2) ຄວາມຮັບຮູ້, ຄວາມເຂົ້າໃຈ ແລະ ຄວາມເອົາໃຈໃສ່ຂອງຜູ້ບໍລິຫານການສຶກສາຂັ້ນຕ່າງໆ ຍັງບໍ່ທັນເລິກເຊິ່ງເທົ່າທີ່ຄວນ ແລະ ມີການຍົກຍ້າຍ, ຊັບປ່ຽນ ໜ້າທີ່ຮັບຜິດຊອບຂອງບຸກຄະລາກອນ;
3) ການໂຄສະນາ, ເຜີຍແຜ່ວຽກງານການສຶກສານອກໂຮງຮຽນ ບໍ່ທັນກວ້າງຂວາງ ແລະ ບໍ່ຕໍ່ເນື່ອງ;
4) ຜູ້ປົກຄອງ ແລະ ອຳນາດການປົກຄອງທ້ອງຖິ່ນສ່ວນຫຼາຍຍັງບໍ່ທັນເຂົ້າໃຈຕໍ່ວຽກງານການສຶກສານອກໂຮງຮຽນ;
5) ການຈັດຕັ້ງການຮຽນການສອນ ບຳລຸງຍົກລະດັບການສຶກສາ ຍັງບໍ່ໄດ້ຈັດຕັ້ງປະຕິບັດຢ່າງທົ່ວເຖິງ, ບໍ່ຫຼາກຫຼາຍຮູບແບບ ແລະ ການປະຕິບັດລະບຽບການຍັງບໍ່ທັນຮັດກຸມເທົ່າທີ່ຄວນ;
6) ຜູ້ປະລະ ແລະ ຜູ້ທີ່ບໍ່ໄດ້ເຂົາຮຽນໃນສາຍສາມັນມີຈຳນວນຫຼາຍໂດຍສະເພາະຊັ້ນມັດທະຍົມຕອນຕົ້ນ ແລະ ຕອນປາຍ ແຕ່ເຂົ້າຮຽນໃນສາຍການສຶກສານອກໂຮງຮຽນມີໜ້ອຍ ຜ່ານການເກັບກຳຂໍ້ມູນ ແລະ ລາຍງານຈາກພະແນກສຶກສາທິການ ແລະ ກິລາແຂວງ ພົບວ່າມີແຕ່ລາຍຊືໃນສຳມະໂນຄົວ ແຕ່ໂຕຈິງແມ່ນໜີໄປເຮັດວຽກຢູ່ປະເທດເພື່ອບ້ານ ຫຼື ຍົກຍ້າຍໄປເຮັດວຍກຢູ່ຕ່າງແຂວງ;
7) ສື່ການຮຽນການສອນ, ອຸປະກອນ, ອາຄານຮຽນ, ສະຖານທີ່ສຳລັບການຈັດການຮຽນການສອນ ບໍ່ພຽງພໍ ແລະ ສະພາບແວດລ້ອມບໍ່ເອື້ອຍອຳນວຍ;
8) ການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ຍັງບໍ່ໄດ້ຈັດຕັ້ງປະຕິບັດຢ່າງທົ່ວເຖິງ, ບໍ່ຫຼາກຫຼາຍສາຂາວິຊາຕາມຄວາມຕ້ອງການ ແລະ ບໍ່ທັນສອດຄ່ອງກັບສະພາບເງື່ອນໄຂຂອງທ້ອງຖິ່ນຂອງກຸ່ມເປົ້າໝາຍ;
9) ງົບປະມານ, ອຸປະກອນ, ສິ່ງອຳນວຍຄວາມສະດວກ ແລະ ຊັບພະຍາກອນ ທີ່ຮັບໃຊ້ໃນການຈັດຝຶກອົບຮົມວິຊາຊີບຂັ້ນພື້ນຖານ ມີຈຳກັດ;

10) ຜູ້ບໍລິຫານ ແລະ ບຸກຄະລາກອນ ຂອງສະຖານການສຶກສານອກໂຮງຮຽນ ຈຳນວນຫຼາຍ ຍັງບໍ່ໄດ້ຮັບການຝຶກອົບຮົມ;
11) ການກວດກາ, ຕິດຕາມ ແລະ ປະເມີນຜົນ ຂອງຜູ້ບໍລິຫານການສຶກສາຂັ້ນຕ່າງໆ ບໍ່ໄດ້ດຳເນີນໄປຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ;

## 4. ບູລິມະສິດສຳລັບສົກຮຽນ 2025-2026

### 4.1. ຈຸດປະສົງ

1) ເພື່ອເພີ່ມອັດຕາການຮູ້ໜັງສື ຂອງປະຊາຊົນລາວບັນດາເຜົ່າ ແລະ ສົ່ງເສີມໃຫ້ກຸ່ມເປົ້າໝາຍໄດ້ສືບຕໍ່ຮຽນຈົບການສຶກສາຂັ້ນພື້ນຖານ ແລະ ສົ່ງເສີມການຮຽນຮູ້ຕະຫຼອດຊີວິດ ສຳລັບທຸກຄົນ;
2) ເພື່ອຫຼຸດຜ່ອນຄວາມແຕກໂຕນດ້ານການເຂົ້າເຖິງການສຶກສາ ແລະ ຜົນການຮຽນ ຂອງປະຊາກອນກຸ່ມເປົ້າໝາຍການສຶກສານອກໂຮງຮຽນ ທັງໃນເຂດຕົວເມືອງ ແລະ ຊົນນະບົດ;
3) ເພື່ອສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນການສຶກສານອກໂຮງຮຽນ ໃນດ້ານທັກສະການບໍລິຫານ-ຄຸ້ມຄອງ, ການວາງແຜນ;
4) ເພື່ອສົ່ງເສີມ ແລະ ພັດທະນາ ສູນການສຶກສານອກໂຮງຮຽນ ໃຫ້ກາຍເປັນສູນແຫ່ງການຮຽນຮູ້;
5) ເພື່ອພັດທະນາຮູບແບບການຮຽນ-ການສອນແບບໃໝ່ ທີ່ເໝາະສົມ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ ໃນປະຈຸບັນ;
6) ເພື່ອສົ່ງເສີມການຝຶກອົບຮົມວິຊາຊີບທີ່ຫຼາກຫຼາຍຮູບແບບ ແລະ ການສ້າງທັກສະອາຊີບ ທີ່ກວມເອົາທັກສະສີມືແຮງງານ ແລະ ທັກສະຊີວິດ ໂດຍພັດທະນາໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ.

### 4.2. ຄາດໝາຍ

1) ຄາດໝາຍຈຳນວນຜູ້ທີ່ຮຽນໃນການສຶກສານອກໂຮງຮຽນ ທັງໝົດ 30,000 ຄົນ.
   - ສົ່ງເສີມໃຫ້ປະຊາກອນກຸ່ມເປົ້າໝາຍໄວເດັກ ອາຍຸ 6-14 ປີ ໄດ້ຮຽນຈົບຊັ້ນປະຖົມບຳລຸງ ໃຫ້ໄດ້ 1,500 ຄົນ;
   - ສົ່ງເສີມໃຫ້ປະຊາກອນກຸ່ມເປົ້າໝາຍໄວໜຸ່ມ ແລະ ຜູ້ໃຫຍ່ ອາຍຸ 15-40 ປີ ໄດ້ຮຽນຈົບລຶບລ້າງຄວາມບໍ່ຮູ້ໜັງສື ໃຫ້ໄດ້ 2,500 ຄົນ;
   - ສົ່ງເສີມໃຫ້ປະຊາກອນກຸ່ມເປົ້າໝາຍໄວໜຸ່ມ ແລະ ຜູ້ໃຫຍ່ ອາຍຸ 15-40 ປີ ໄດ້ຮຽນຈົບຊັ້ນປະຖົມບຳລຸງ ໃຫ້ໄດ້ 5,500 ຄົນ;
   - ສົ່ງເສີມໃຫ້ປະຊາກອນກຸ່ມເປົ້າໝາຍໄວໜຸ່ມ ແລະ ຜູ້ໃຫຍ່ ອາຍຸ 15-35 ປີ ໄດ້ຮຽນຈົບຊັ້ນມັດທະຍົມຕອນຕົ້ນບຳລຸງ ໃຫ້ໄດ້ 16,000 ຄົນ;
   - ຂະຫຍາຍໂອກາດໃຫ້ປະຊາກອນກຸ່ມເປົ້າໝາຍຕ່າງໆ ທີ່ຮຽນບໍ່ຈົບຊັ້ນມັດທະຍົມສຶກສາຕອນປາຍ (ສາຍສາມັນ) ໃຫ້ໄດ້ຮຽນຈົບຊັ້ນມັດທະຍົມຕອນປາຍບຳລຸງ ໃຫ້ໄດ້ 1,500 ຄົນ;
   - ສົ່ງເສີມການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ແລະ ການສ້າງທັກສະອາຊີບ ທີ່ມີຫຼາກຫຼາຍຮູບແບບ ແລະ ຫຼາຍສາຂາວິຊາ ໃຫ້ກັບປະຊາກອນກຸ່ມເປົ້າໝາຍທີ່ສົນໃຈ ໃຫ້ໄດ້ 3,000 ຄົນ.
   - ຝຶກອົບຮົມການເກັບກຳ ແລະ ປ້ອນຂໍ້ມູນສະຖິຕິຜູ້ຮຽນ ເຂົ້າໃນລະບົບເກັບກຳຂໍ້ມູນຂອງສູນສະຖິຕິ ສຶກສາ ແລະ ກິລາ ເຂົ້າໃນລະບົບ LESMIS ໃຫ້ໄດ້ເມືອງ ລະ 2 ທ່ານ.

### 4.3. ການເຂົ້າເຖິງ ແລະ ເທົ່າທຽມ

1) ສະໜອງການສຶກສາແກ່ເດັກນ້ອຍກຸ່ມເປົ້າໝາຍໃນເກນເຂົ້າຮຽນ ອາຍຸ 6-14 ປີ ທີ່ດ້ອຍໂອກາດທາງການສຶກສາ ໃຫ້ໄດ້ຮຽນຈົບບຳລຸງຍົກລະດັບການສຶກສາຊັ້ນປະຖົມ;
2) ສະໜອງການສຶກສາໃຫ້ປະຊາກອນໃນເກນອາຍຸ 15-40 ປີ ທີ່ພາດໂອກາດການສຶກສາ ໃຫ້ໄດ້ຮັບການບຳລຸງຍົກລະດັບການສຶກສາ ຢ່າງທົ່ວເຖິງ, ເທົ່າທຽມ ແລະ ມີຄຸນນະພາບ;

3) ຂະຫຍາຍໂອກາດໃຫ້ແມ່ຍິງ ຊົນເຜົ່າ ແລະ ຜູ້ພິການ ໄດ້ເຂົ້າເຖິງການສຶກສານອກໂຮງຮຽນ ຫຼາຍຂຶ້ນ;
4) ສະໜອງການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ຄຽງຄູ່ກັບການຮຽນ ການສອນຕາມຫຼັກສູດການຮູ້ໜັງສື ແລະ ບໍາລຸງຍົກລະດັບການສຶກສາ ສໍາລັບຜູ້ໃຫຍ່ ແລະ ໄວໜຸ່ມ ໂດຍສະເພາະແມ່ນເຂດຫ່າງໄກສອກຫຼີກ;
5) ຊຸກຍູ້ ແລະ ສົ່ງເສີມ ໃຫ້ມີການຈັດຕັ້ງປະຕິບັດວຽກງານ ການຮຽນຮູ້ຕະຫຼອດຊີວິດ ທົ່ວສັງຄົມ.

### 4.4. ດ້ານຄຸນນະພາບ ແລະ ຄວາມສອດຄ່ອງ

1) ສ້າງ ແລະ ພັດທະນາຫຼັກສູດການຝຶກອົບຮົມໄລຍະສັ້ນ ທີ່ມີເນື້ອໃນກ່ຽວກັບການຮຽນຮູ້ໜັງສື ແລະ ວິຊາຊີບຂັ້ນພື້ນຖານໃນສາຂາຕ່າງໆ ໂດຍຮູບແບບອອນລາຍ ໂດຍອີງໃສ່ສະພາບເງື່ອນໄຂຂອງທ້ອງຖິ່ນ ແລະ ສະພາບຄວາມຕ້ອງການຂອງຕະຫຼາດແຮງງານ ໃນແຕ່ລະໄລຍະ;
2) ພັດທະນາສື່ການຮຽນການສອນກ່ຽວກັບການຮຽນຮູ້ໜັງສື, ບໍາລຸງຍົກລະດັບການສຶກສາ, ການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ແລະ ທັກສະອາຊີບ ໃຫ້ແທດເໝາະກັບທ້ອງຖິ່ນ (ພັດທະນາຫຼັກສູດທ້ອງຖິ່ນ);
3) ໂຄສະນາ ແລະ ເຜີຍແຜ່ ຫຼັກສູດການຮຽນຮູ້ໜັງສື, ບໍາລຸງຍົກລະດັບການສຶກສາ, ການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ແລະ ທັກສະອາຊີບ ຜ່ານສື່ຕ່າງໆ ທັງແບບອອນໄລນ໌ (Online) ແລະ ແບບສື່ສິ່ງພິມ (Offline) ໃນຮູບແບບທີ່ເໝາະສົມກັບກຸ່ມເປົ້າໝາຍ ແລະ ເງື່ອນໄຂຂອງທ້ອງຖິ່ນ;
4) ສ້າງຄວາມເຂັ້ມແຂງ ໃນດ້ານການບໍລິຫານ ຄຸ້ມຄອງ ແລະ ການບໍລິການ ໃຫ້ບຸກຄະລາກອນການສຶກສານອກ ໂຮງຮຽນ;
5) ສ້າງນະໂຍບາຍ, ລະບຽບການ ແລະ ມາດຕະຖານ ໃນພັດທະນາສູນການສຶກສານອກໂຮງຮຽນ ໃຫ້ເປັນສູນແຫ່ງການຮຽນຮູ້;
6) ພັດທະນາລະບຽບການ ແລະ ກົນໄກ ກ່ຽວກັບການສ້າງສູນ ເປັນແຫຼ່ງຝຶກອົບຮົມທັກສະວິຊາຊີບ ແລະ ສະໜອງສີມືແຮງງານທີ່ມີປະສິດທິພາບ ໃຫ້ກັບຕະຫຼາດແຮງງານ;
7) ສ້າງສິ່ງອໍານວຍຄວາມສະດວກ ແລະ ສະໜອງອຸປະກອນຮັບໃຊ້ ໃນການຈັດການຮຽນ ການສອນ, ການຝຶກອົບຮົມວິຊາຊີບ ແລະ ລວມທັງປັບປຸງສະພາບແວດລ້ອມຂອງສູນການສຶກສານອກໂຮງຮຽນ;
8) ສ້າງ ແລະ ພັດທະນາຫຼັກສູດໄລຍະສັ້ນ ແລະ ໄລຍະຍາວ ລະດັບ1 ລະດັບ2 ວິຊາຊີບຂັ້ນພື້ນຖານ ການສຶກສານອກໂຮງຮຽນ ໃຫ້ມີຫຼາກຫຼາຍ;
9) ສ້າງ ແລະ ພັດທະນາແຜນປະຕິບັດງານການຮຽນຮູ້ຕະຫຼອດຊີວິດ ຂະແໜງການສຶກສາທິການ, ວິທະຍາສາດ ແລະ ກິລາ;
10) ກອງປະຊຸມປຶກສາຫາຫລືຄວາມເປັນໄປໄດ້ໃນການສ້າງເມືອງແຫ່ງການຮຽນຮູ້.

### 4.5. ດ້ານບໍລິຫານ ແລະ ການຄຸ້ມຄອງ

1) ປັບປຸງລະບຽບການຄຸ້ມຄອງວຽກງານບໍາລຸງຍົກລະດັບການສຶກສາ;
2) ພັດທະນາ ແລະ ສົ່ງເສີມການຝຶກອົບຮົມວິຊາຊີບ ໃຫ້ມີຄວາມຫຼາກຫຼາຍທາງດ້ານສາຂາວິຊາຊີບ ແລະ ມີວິທີການຝຶກອົບຮົມຫຼາຍຮູບ, ຫຼາຍແບບ ໂດຍສາມາດປັບປ່ຽນໄດ້ຕາມຄວາມຕ້ອງການ;
3) ພັດທະນາລະບົບການຄຸ້ມຄອງສະຖິຕິຂໍ້ມູນຂ່າວສານ ການສຶກສານອກໂຮງຮຽນ ແບບອອນໄລ ເພື່ອເຊື່ອມໂຍງກັບລະບົບຖານຂໍ້ມູນຂອງກະຊວງສຶກສາທິການ ແລະ ກິລາ ໂດຍການປະສານສົມທົບກັບສູນສະຖິຕິສຶກສາ ແລະ ກິລາ;
4) ສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນທີ່ຮັບຜິດຊອບວຽກງານກວດກາ, ຕິດຕາມ ແລະ ປະເມີນຜົນສໍາລັບວຽກງານການສຶກສານອກໂຮງຮຽນ ຂັ້ນສູນກາງ ແລະ ທ້ອງຖິ່ນ;

5) ພັດທະນາລະບົບການເກັບກຳຂໍ້ມູນໂດຍນຳໃຊ້ໄອຊີທີ ໃຫ້ສາມາດເຊື່ອມໂຍງກັບລະບົບການກວດກາ, ການຕິດຕາມ ແລະ ປະເມີນຜົນ ເພື່ອຕີລາຄາຜົນໄດ້ຮັບການຈັດຕັ້ງປະຕິບັດກິດຈະກຳການສຶກສານອກໂຮງຮຽນ ໃຫ້ເຂົ້າກັບລະບົບການລາຍງານສະຖິຕິຂໍ້ມູນຂ່າວສານການສຶກສາ ປະຈຳປີ (EMIS);
6) ຕິດຕາມ, ລາຍງານແຜນຍຸດທະສາດ ແລະ ວຽກງານຈຸດສຸມຂອງຂະແໜງການຍ່ອຍການສຶກສານອກໂຮງຮຽນ ໃຫ້ກົມກວດກາຢ່າງເປັນປົກກະຕິ;
7) ສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນທີ່ຮັບຜິດຊອບວຽກງານກວດກາ, ຕິດຕາມ ແລະ ປະເມີນຜົນສຳລັບວຽກງານການສຶກສານອກໂຮງຮຽນ ຂັ້ນສູນກາງ ແລະ ທ້ອງຖິ່ນ;
8) ສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນທີ່ຮັບຜິດຊອບວຽກງານສະຖິຕິການສຶກສານອກໂຮງຮຽນກ່ຽວກັບການເກັບກຳຂໍ້ມູນ, ການປ້ອນຂໍ້ມູນ, ການນຳໃຊ້ ແລະ ການບຳລຸງຮັກສາລະບົບຖານຂໍ້ມູນ.

❖ **ຄາດຄະເນງົບປະມານ ແລະ ມາດຕະການຈັດຕັ້ງປະຕິບັດ**

ໃນສົກປີ 2025 - 2026 ຄາດຄະເນງົບປະມານ ສຳລັບແຜນພັດທະນາການສຶກສານອກໂຮງຮຽນ ປະມານ 3,350,000,000 ກີບ ( ສະເພາະງົບປະມານພາກ 63 ) ເພື່ອເຮັດໃຫ້ ແຜນພັດທະນາຂະແໜງການຍ່ອຍການສຶກສານອກໂຮງຮຽນ ປະຈຳປີ ທີ່ວາງໄວ້ ໄດ້ຖືກຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ ແລະ ມີຄຸນນະພາບ; ຕ້ອງໄດ້ແບ່ງຄວາມຮັບຜິດຊອບ ລະຫວ່າງສູນກາງ ( ກົມ ກສນ ) ແລະ ທ້ອງຖິ່ນ ດັ່ງນີ້ : ກົມການສຶກສານອກໂຮງຮຽນ ຄົ້ນຄວ້າ, ສ້າງນິຕິກຳ, ນະໂຍບາຍ, ລະບຽບການ ແລະ ແຜນພັດທະ ນາຂະແໜງການຍ່ອຍການສຶກສານອກໂຮງຮຽນ ເພື່ອເປັນບ່ອນອີງໃຫ້ແກ່ທ້ອງຖິ່ນໃນການສ້າງແຜນ ການ, ແຜນງົບປະມານ ແລະ ການຈັດຕັ້ງປະຕິບັດຕົວຈິງ; ສູ້ຊົນ, ຍາດແຍ່ງການລົງທຶນ ແລະ ຈັດສັນອຸ ປະກອນທີ່ຈຳເປັນ ເຊັ່ນ: ສື່ການຮຽນ-ການສອນ, ສິ່ງອຳນວຍຄວາມສະດວກ ແລະ ສ້າງຄວາມເຂັ້ມແຂງໃຫ້ກັບບຸກຄະລາກອນທີ່ມີຄວາມຮູ້ ຄວາມສາມາດ ເພື່ອສະໜອງໃຫ້ທ້ອງຖິ່ນ ໄດ້ໝູນໃຊ້ເຂົ້າໃນການພັດທະນາວຽກງານການສຶກສານອກໂຮງຮຽນ.

# VI. ຂະແໜງການຍ່ອຍການສຶກສາຄູ

## 1. ສະພາບລວມ

ການຈັດປະຕິບັດວຽກງານຕາມແຜນພັດທະນາຂະແໜງການການສຶກສາ ແລະ ກິລາ (2021-2025) ໄດ້ ກຳນົດຄາດໝາຍ ແລະ ຜົນໄດ້ຮັບທີ່ຕ້ອງບັນລຸຜົນຢ່າງຊັດເຈນ. ພ້ອມທັງກຳນົດຍຸດທະສາດ ແລະ ວຽກຈຸດສຸມ ທີ່ຕິດພັນກັບຂະແໜງການຍ່ອຍການສຶກສາຄູ ແລະ ການພັດວິຊາຊີບຄູແບບຕໍ່ເນື່ອງ ຍັງເປັນບຸລິມະສິດຫຼັກຂອງການຊຸກຍູ້ຊ່ວຍເຫຼືອ ແລະ ສະໜັບສະໜູນຄູການພັດທະນາວິຊາຊີບຄູ, ການພັດທະນາຄູ່ມື ແລະ ຝຶກອົບຮົມຄູປະຈຳການ (ສາຍສາມັນສຶກສາ ແລະ ສະຖານການສ້າງຄູ), ວຽກງານສຶກສານິເທດສາຍສາມັນສຶກສາ, ການປັບປຸງຫຼັກສູດກໍ່ສ້າງຄູໃຫ້ສອດຄ່ອງກັບຫຼັກສູດສາຍສາມັນ, ການປັບປຸງລະບົບການປະກັນຄຸນນະພາບ ເພື່ອຕອບສະໜອງແຜນພັດທະນາຂະແໜງການສຶກສາ 5 ປີ ຄັ້ງທີ IX (2021-2025).

### 1.1. ຜົນສຳເລັດຂອງຄາດໝາຍ

1) ມາດຕະຖານການສອນສຳລັບຄູໃນສະຖານການສ້າງຄູ ແລະ ຄູຊັ້ນມັດທະຍົມສຶກ ໄດ້ຮັບການຈັດຕັ້ງປະຕິບັດ ແລະ ປະເມີນ;
2) ປັບປຸງຫຼັກສູດສ້າງຄູການສຶກສາກ່ອນໄວຮຽນ, ປະຖົມສຶກສາ, ມັດທະຍົມສຶກສາ ແລະ ຄູ່ມືຝຶກຫັດວິຊາຊີບຄູ;
3) ນະໂຍບາຍຄູແຫ່ງຊາດໄດ້ຮັບການພັດທະນາ ແລະ ຖືກຮັບຮອງນຳໃຊ້ຢ່າງເປັນທາງການ;
4) ໂມດູນການສອນວິຊາ ICT (ພື້ນຖານ ICT; ICT ສຳລັບການຮຽນການສອນ ແລະ ICT ສຳລັບການພັດທະນາວິຊາຊີບຄູ) ໄດ້ຮັບການພັດທະນາ, ພ້ອມທັງຈັດຝຶກອົບຮົມໃຫ້ຄູສອນໃນສະຖານການສ້າງຄູທົ່ວປະເທດ;
5) ການເສີມສ້າງຂີດຄວາມສາມາດຂອງຄູສຳລັບການສຶກສາທີ່ມີການຫັນປ່ຽນດ້ານຄວາມສະເໝີພາບທາງເພດ: ການຝຶກອົບຮົມວິທີສິດສອນທີ່ຄຳນຶງເຖິງຄວາມສະເໝີພາບທາງເພດ;
6) ເຄື່ອງມືປະເມີນຜົນສຳເລັດການຮຽນຮູ້ຂອງນັກສຶກສາຄູປີສຸດທ້າຍ ສາຍສ້າງຄູມັດທະຍົມສຶກສາ ໄດ້ຮັບການພັດທະນາ;
7) ຄູ່ມືການຝຶກອົບຮົມວຽກງານສຶກສານິເທດ ການສຶກສາກ່ອນໄວຮຽນ ໄດ້ຮັບການພັດທະນາ ແລະ ສາມາດນຳໃຊ້ເຂົ້າໃນການຝຶກອົບຮົມສ້າງຄວາມເຂັ້ມແຂງວຽກງານສຶກສານິເທດ ໃຫ້ຜູ້ຮັບຜິດຊອບຢູ່ຂັ້ນເມືອງໃນທົ່ວປະເທດ;
8) ຜູ້ເຮັດວຽກສຶກສານິເທດ ການສຶກສາກ່ອນໄວຮຽນໃນແຕ່ລະເມືອງ ໄດ້ຮັບການຝຶກອົບຮົມໃຫ້ມີຄວາມພ້ອມໃນການ ໃຫ້ການຊ່ວຍເຫຼືອ, ແນະນຳ ແລະ ສະໜັບສະໜູນຄູ ການສຶກສາກ່ອນໄວຮຽນ ໃຫ້ໄດ້ຮັບການພັດທະນາວິຊາຊີບຢ່າງຕໍ່ເນື່ອງ;
9) ຄູສອນຫ້ອງຄວບໃນຊັ້ນປະຖົມສຶກສາ ຈະໄດ້ຮັບການແນະນຳດ້ານທັກສະ ແລະ ວິທີການສອນຫ້ອງຄວບໃຫ້ມີຄວາມຊຳນານ ໃນການຈັດການຮຽນການສອນ ແລະຈະເຮັດໃຫ້ຜົນການຮຽນຂອງ ນັກຮຽນມີຄຸນນະພາບທີ່ດີຂຶ້ນ ລວມທັງຄູສອນ ກໍຈະໄດ້ຮັບຄວາມຮູ້ໃໝ່ທ ຈາກການຝຶກອົບຮົມໃນຄັ້ງນີ້ທີ່ສອດຄ່ອງກັບຫຼັກສູດຊັ້ນປະຖົມສຶກສາ ສະບັບປັບປຸງໃໝ່;
10) ເປີເຊັນຂອງຄູປະຈຳການທີ່ໄດ້ຮັບການຝຶກອົບຮົມ ສະເລ່ຍ 20% ໃນແຕ່ລະຊັ້ນການສຶກສາ;
11) ສຳເລັດການພັດທະນາລະບົບຕິດຕາມ ແລະ ປະເມີນທາງດ້ານຄຸນນະພາບ ພ້ອມທັງສ້າງຄວາມເຂັ້ມແຂງໃຫ້ທີມງານຮັບຜິດຊອບ ແລະ ພາກສ່ວນທີ່ກ່ຽວຂ້ອງ.

2. **ຜົນສຳເລັດຜົນໄດ້ຮັບລະດັບສູງ**

2.1. **ຈຳນວນນັກຮຽນທີ່ຈົບຈາກການສຶກສາກ່ອນໄວຮຽນ ຈົນຮອດມັດທະຍົມຕອນປາຍ ລວມທັງການສຶກສານອກໂຮງຮຽນເພີ່ມຂຶ້ນ ພ້ອມດ້ວຍຜົນການຮຽນຮູ້ທີ່ດີຂຶ້ນ ໂດຍສະເພາະແມ່ນທັກສະການອ່ານ, ການຂຽນ ແລະ ການຄິດໄລ່ ລວມທັງທັກສະອື່ນໆໃນສັດຕະວັດທີ 21 ໂດຍເນັ້ນໃສ່ຜູ້ທີ່ດ້ອຍໂອກາດ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ.**

1) ສຳເລັດການຝຶກອົບຮົມການນຳໃຊ້ຄູ່ມື ຊັ້ນມັດທະຍົມສຶກສາ ຂັ້ນ ມ.3 ແລະ ມ.6 ຈຳນວນ 15 ແຂວງ (ສາລະວັນ, ຄຳມ່ວນ, ໄຊຍະບູລີ, ສະວັນນະເຂດ, ໄຊສົມບູນ, ເຊກອງ, ຫຼວງນ້ຳທາ, ຜົ້ງສາລີ, ບໍ່ແກ້ວ, ຫົວພັນ, ແຂວງວຽງຈັນ ອຸດົມໄຊ, ຊຽງຂວງ, ຫຼວງພະບາງ, ອັດຕະປື ) ຈຳນວນ ຜູ້ເຂົ້າຮ່ວມທັງໝົດ 3,738 ຄົນ;
2) ສຳເລັດການປຶກສາຫາລື ແລະ ວາງແຜນຮ່ວມກັບທີມງານຄູຝຶກແຕ່ລະຂັ້ນ ໃນການຝຶກອົບຮົມ ວິທີການຈັດການຮຽນການສອນຫ້ອງຄວບ, ລວມທັງໝົດ 42 ຄົນ, ຍິງ 22 ຄົນ;
3) ສຳເລັດການແນະນຳວິທີການຈັດການຮຽນການສອນຫ້ອງຄວບໃຫ້ຄູສອນຫ້ອງຄວບ ຊັ້ນປະຖົມສຶກສາລວມທັງໝົດ 68 ຄົນ, ຍິງ 28 ຄົນ;
4) ສຳເລັດຝຶກອົບຮົມ ກ່ຽວກັບ ວິທີການຈັດການຮຽນການສອນຫ້ອງຄວບ ຊັ້ນປະຖົມສຶກສາ ໃນທົ່ວປະເທດ ນະຄອນຫຼວງວຽງຈັນ ແຂວງ ວຽງຈັນ, ຊຽງຂວາງ, ໄຊສົມບູນ, ແລະ ບໍລິຄຳໄຊ. ລວມທັງໝົດ 234 ຄົນ, ຍິງ 90 ຄົນ;
5) ສຳເລັດການຝຶກອົບຮົມ ກ່ຽວກັບ ວິທີການຈັດການຮຽນການສອນຫ້ອງຄວບ ຊັ້ນປະຖົມສຶກສາ ໃນທົ່ວປະເທດ ແຂວງ ສະຫວັນນະເຂດ, ຄຳມ່ວນ, ສາລະວັນ, ເຊກອງ, ອັດຕະປື ແລະ ຈຳປາສັກ ລວມທັງໝົດ 234 ຄົນ, ຍິງ 90 ຄົນ;
6) ສຳເລັດການຝຶກອົບຮົມ ກ່ຽວກັບ ວິທີການຈັດການຮຽນການສອນຫ້ອງຄວບ ຊັ້ນປະຖົມສຶກສາ ໃນທົ່ວປະເທດແຂວງ ຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ, ຫຼວງພະບາງ, ໄຊຍະບູລີ ແລະ ຫົວພັນ ຈຳນວນທັງໝົດ 351 ຄົນ, ຍິງ 100 ຄົນ;
7) ສຳເລັດການດຳເນີນການສຶກສາວິໄຈການສຶກສາຮຽນຮ່ວມປີທີ 2 ຢູ່ໂຮງຮຽນນອນໃນ 30 ເມືອງເປົ້າໝາຍຂອງແຜນງານບີຄວາ;

2.2. **ຈຳນວນຄູສອນ ແລະ ຜູ້ອຳນວຍການໂຮງຮຽນທີ່ມີຄວາມຮູ້ຄວາມສາມາດເພີ່ມຂຶ້ນ ເພື່ອຕອບສະໜອງ ກັບມາດຕະຖານການສິດສອນ ພ້ອມທັງຖືກນຳໃຊ້ເພື່ອເປັນບ່ອນອີງໃນການພັດທະນາວິຊາຊີບຂອງພວກເຂົາພ້ອມດ້ວຍການປະເມີນຜົນຢ່າງເປັນປົກກະຕິ**

1) ສຳເລັດການ ພັດທະນາ ລະບົບຕິດຕາມໃນການຈັດຕັ້ງປະຕິບັດ ຝຶກອົບຮົມໃຫ້ຄູສອນ ໃນຊັ້ນປະຖົມສຶກສາປີທີ 1-3;
2) ສຳເລັດການ ການທົດສອບດ້ານຄະນິດສາດ ນັກຮຽນ ແລະ ຄູ ຂັ້ນ ປ3 ແລະ ປ.5 ໃນ 7 ເມືອງເປົ້າໝາຍຂອງໂຄງການ;
3) ສຳເລັດການເຝິກອົບຮົມເຂັ້ມການນຳໃຊ້ຄູ່ມືແນະນຳເພີ່ມ ວິທີການສອນວິຊາ ພາສາລາວ ແລະ ຄະນິດສາດຊັ້ນປະຖົມສຶກສາ ປີທີ 1 ສຳລັບ ວິຊາ ຄະນິດສາດ ແລະ ພາສາລາວ ປີທີ 1 ໃຫ້ຄູສອນ ປ.1 ໃນ 40 ເມືອງບຸລິມະສິດ ມີຄູ ເຂົ້າຮ່ວມທັງໝົດ 1,491 ຄົນ, ຍິງ 1,310 ຄົນ;
4) ສຳເລັດການເຝິກອົບຮົມເຂັ້ມການນຳໃຊ້ຄູ່ມືແນະນຳເພີ່ມ ວິທີການສອນວິຊາ ພາສາລາວ ແລະ ຄະນິດສາດຊັ້ນປະຖົມສຶກສາ ປີທີ 2 ສຳລັບ ວິຊາ ຄະນິດສາດ ແລະ ພາສາລາວ ປີທີ 2 ໃຫ້ຄູສອນ ປ.2 ໃນ 40 ເມືອງບຸລິມະສິດ ມີຄູ ເຂົ້າຮ່ວມທັງໝົດ 2,747 ຄົນ, ຍິງ 1,229 ຄົນ;

5) ສຳເລັດການເຝິກອົບຮົມເຂັ້ມການນຳໃຊ້ຄູ່ມືແນະນຳເພີ່ມ ວິທີການສອນວິຊາ ພາສາລາວ ແລະ ຄະນິດສາດ ຊັ້ນປະຖົມສຶກສາ ປີທີ 3 ສຳລັບ ວິຊາ ຄະນິດສາດ ແລະ ພາສາລາວ ປີທີ 3 ໃຫ້ຄູສອນ ປ.3 ໃນ 40 ເມືອງບຸລິມະສິດ ມີຄູ ເຂົ້າຮ່ວມທັງໝົດ 2,753 ຄົນ, ຍິງ 1,120 ຄົນ (ຍັງ ຫົວພັນ, ສາລະວັນ, ອຸດົມໄຊ);
6) ສຳເລັດການລົງຕິດຕາມ ການຈັດຕັ້ງປະຕິບັດການນຳໃຊ້ ຫຼັກສູດສະບັບປັບປຸງໃໝ່ ປ.1 - ປ.3 ໃນ 40 ເມືອງເປົ້າໝາຍ;
7) ສຳເລັດການຝຶກອົບຮົມຄູປະຈຳການ ກ່ຽວກັບການນຳໃຊ້ຫຼັກສູດສະບັບປັບປຸງໃໝ່ ຊັ້ນປະຖົມສຶກສາ ວິຊາ ພາສາລາວ, ຄະນິດສາດ, ສັງຄົມສຶກສາ, ຄຸນສົມບັດສຶກສາ, ພະລະສຶກສາ, ສິລະປະສຶກສາ, ສິລະປະກຳ ແລະ ຫັດຖະກຳ ຊັ້ນປະຖົມສຶກສາປີທີ 4 ຈຳນວນ 239 ຄົນ; ໃນແຂວງ ຫົວພັນ ແລະ ແຂວງຫຼວງພະບາງ;
8) ສຳເລັດການຝຶກອົບຮົມການນຳໃຊ້ຄູ່ມືແນະນຳ ວິທີການສອນວິຊາ ພາສາລາວ ແລະ ຄະນິດສາດ ຊັ້ນປະຖົມສຶກສາ ປີທີ 1 ສຳລັບ ວິຊາ ຄະນິດສາດ ແລະ ພາສາລາວ ປີທີ 1 ໃຫ້ຄູສອນ ປ.1 ໃນເມືອງທີ່ບໍ່ຢູ່ໃນແຜນງານບີຄວາ ແລະ GPEIII ນະຄອນຫຼວງວຽງຈັນ (ເມືອງນາຊາຍທອງ, ສີໂຄດຕະບອງ), ແຂວງບໍລິຄຳໄຊ (ເມືອງປາກກະດິງ), ແຂວງວຽງຈັນ (ເມືອງແກ້ວອຸດົມ, ວຽງຄຳ, ຫີນເຫີບ), ແຂວງໄຊຍະບູລີ (ເມືອງໄຊຍະບູລີ) ແຂວງອຸດົມໄຊ (ເມືອງໄຊ) ຈຳນວນຄູສອນ ທັງໝົດ 382 ທ່ານ;
9) ສຳເລັດກອງປະຊຸມຖອດຖອນບົດຮຽນ ກ່ຽວກັບການຈັດຕັ້ງປະຕິບັດ ການຝຶກອົບຮົມ ການນຳໃຊ້ຄູ່ມືແນະນຳເພີ່ມ ວິຊາພາສາລາວ ແລະ ຄະນິດສາດ ຊັ້ນປະຖົມສຶກສາ ໃນ 40 ເມືອງເປົ້າໝາຍ, ມີຜູ້ເຂົ້າຮ່ວມທັງ ໝົດ 88 ທ່ານ ຈາກກະຊວງ, ແຂວງ, ວິທະຍາໄລຄູ ແລະ ເມືອງເປົ້າໝາຍ;
10) ສຳເລັດການຝຶກອົບຮົມຝຶກເວົ້າພາສາລາວ ໃຫ້ແກ່ຄູປະຈຳການ ຊັ້ນປະຖົມສຶກສາ ຂັ້ນ ປ1 ທົ່ວປະເທດ ຈຳນວນ 16,140 ຄົນ;
11) ສຳເລັດການເຝິກອົບຮົມວິຊາຄູ ຊັ້ນປະຖົມສຶກສາ ໃຫ້ພະນັກງານ-ນັກຮົບ ຊຸດທີ I ເພື່ອໄປຊ່ວຍສອນໃນເຂດຫ່າງໄກສອກຫຼີກ ທີ່ ວິທະຍາໄລ ຄູສະຫວັນນະເຂດ ໃນ 5 ແຂວງຄື: ແຂວງຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ເຊກອງ ແລະ ອັດຕະປື ຈຳນວນ 86 ທ່ານ ແລະ ຊຸດທີ II ທີ່ ວິທະຍາໄລຄູ ຫຼວງພະບາງ ໃນ 6 ແຂວງຄື: ແຂວງໄຊຍະບູລີ, ຫຼວງພະບາງ, ອຸດົມໄຊ, ຫຼວງນ້ຳທາ, ຜົ້ງສາລີ ແລະ ບໍ່ແກ້ວ ຈຳນວນ 93 ສຳເລັດການພັດທະນາຄູ່ມືການຝຶກອົບຮົມສ້າງຂີດຄວາມສາມາດໃຫ້ແກ່ຜູ້ເຮັດວຽກສຶກສານິເທດພາຍໃນຊັ້ນປະຖົມສຶກສາ ໂມດູນ 1-2;
12) ພັດທະນາຄູ່ມື ແນະນຳການຈັດຕັ້ງ ການພັດທະນາວິຊາຊີບຄູແບບຕໍ່ເນື່ອງສຳລັບຄູປະຖົມສຶກສາ CPD Guideline; ສຳເລັດກອງປະຊຸມ ທວນທວນເອກະ ສານ, ຄູ່ມື ແລະ ອອກແບບ ຄູ່ມື ການສ້າງຄວາມເຂັ້ມແຂງວຽກງານສຶກສານິເທດ ການສຶກສາກ່ອນໄວຮຽນ ລວມທັງໝົດ 46 ຄົນ, ຍິງ 38 ຄົນ; ສຳເລັດກອງປະຊຸມ ຂຽນເນື້ອໃນ ຄູ່ມື ການສ້າງ ຄວາມເຂັ້ມແຂງວຽກງານການສຶກສານິເທດ ການສຶກສາກ່ອນໄວຮຽນ ຜູ້ເຂົ້າຮ່ວມທັງໝົດ 51 ຄົນ ຍິງ 45 ຄົນ; ສຳເລັດກອງປະຊຸມ ຜ່ານ ແລະ ຮັບຮອງ ເນື້ອໃນຄູ່ມື ການສ້າງຄວາມສ້າງຄວາມເຂັ້ມແຂງວຽກງານການສຶກສານິເທດການສຶກສາກ່ອນໄວຮຽນ ລວມທັງໝົດ 54 ຄົນ, ຍິງ 37 ຄົນ;
13) ສຳເລັດກອງປະຊຸມ ແນະນຳການນຳໃຊ້ເຄື່ອງມືສັງເກດການສອນ ໃນຫ້ອງຮຽນໃຫ້ແກ່ຜູ້ເຮັດວຽກສຶກສານິເທດ 40 ເມືອງເປົ້າໝາຍ (15 ພຶດຕິກຳ) ມີຜູ້ເຂົ້າຮ່ວມທັງໝົດ 160 ທ່ານ; ສຳເລັດການລົງຕິດຕາມການນຳໃຊ້ເຄື່ອງມືສັງເກດການສອນໃນຫ້ອງຮຽນ ຊັ້ນປະຖົມສຶກສາ ຮ່ວມກັບຜູ້ອຳນວຍການ ໂຮງຮຽນຊັ້ນ

ປະຖົມສຶກສາ ໃນ 40 ເມືອງເປົ້າໝາຍ ແລະ ສັງລວມຜົນການຕິດຕາມ ການລົງຕິດຕາມ ແລະ ຖອດຖອນບົດຮຽນ ໃນການນຳໃຊ້ເຄື່ອງມືສັງເກດການສອນໃນຊັ້ນປະຖົມສຶກສາ ຂອງຜູ້ອຳນວຍການໂຮງຮຽນ;

14) ສ້າງຂີດຄວາມສາມາດດ້ານການຈັດການຮຽນການສອນ ໃຫ້ແກ່ ຄູ ແລະ ພະນັກງານບໍລິຫານ ພາຍໃຕ້ໂຄງການຮ່ວມມືລາວຈີນ ທີ່ໄດ້ຈັດຂຶ້ນ ໃນ ສປປລາວ ແລະ ສປ ຈີນ ແຕ່ເລີ່ມຕົ້ນມາຮອດປັດຈຸບັນມີທັງໝົດ 270 ທ່ານ;
15) ສຳເລັດກອງປະຊຸມ ທວນທວນເອກະສານ, ຄູ່ມື ແລະ ອອກແບບ ຄູ່ມື ການສ້າງຄວາມເຂັ້ມແຂງວຽກງານສຶກສານິເທດ ການສຶກສາກ່ອນໄວຮຽນ ລວມທັງໝົດ 46 ຄົນ, ຍິງ 38 ຄົນ; ສຳເລັດກອງປະຊຸມ ຂຽນເນື້ອໃນ ຄູ່ມື ການສ້າງຄວາມເຂັ້ມແຂງວຽກງານການສຶກສານິເທດການສຶກສາກ່ອນໄວຮຽນ ຜູ້ເຂົ້າຮ່ວມທັງໝົດ 51 ຄົນ ຍິງ 45 ຄົນ; ສຳເລັດກອງປະຊຸມ ຜ່ານ ແລະ ຮັບຮອງ ເນື້ອໃນຄູ່ມື ການສ້າງຄວາມສ້າງຄວາມເຂັ້ມແຂງວຽກງານການສຶກສານິເທດການສຶກສາກ່ອນໄວຮຽນ ລວມທັງໝົດ 54 ຄົນ, ຍິງ 37 ຄົນ;
16) ສຳເລັດກອງປະຊຸມ ແນະນຳຄູ່ມື ການສ້າງຄວາມເຂັ້ມແຂງ ວຽກງານການສຶກສານິເທດ ຊັ້ນການສຶກສາກ່ອນໄວຮຽນ ໃຫ້ແກ່ຄູຝຶກຂັ້ນສູນກາງ, ແຂວງ ແລະ ວິທະຍາໄລຄູ; ສຳເລັດກອງປະຊຸມ ແນະນຳຄູ່ມືການສ້າງຄວາມເຂັ້ມແຂງວຽກງານການສຶກສານິເທດ ຊັ້ນການສຶກສາກ່ອນໄວຮຽນ ໂມດູນ 1 ຂັ້ນເມືອງ 18 ແຂວງທົ່ວປະເທດ ມີຜູ້ເຂົ້າຮ່ວມທັງໝົດ 322 ຄົນ, ຍິງ 301 ຄົນ;
17) ສຳເລັດການລົງຕິດຕາມ ນິເທດການສຶກສາກ່ອນໄວຮຽນ ແຂວງ ອຸດົມໄຊ, ຫຼວງພະບາງ ແລະ ໄຊຍະບູລີ, ແຂວງວຽງຈັນ, ນະຄອນຫຼວງ ແລະ ບໍລິຄຳໄຊ, ສະຫວັນນະເຂດ ຈຳປາສັກ ແລະ ສາລະວັນ, ມີ 36 ໂຮງຮຽນ ໃນ 18 ເມືອງ (ກຳລັງດຳເນີນ);
18) ສຳເລັດກອງປະຊຸມ ຖອດຖອນບົດຮຽນ ແລະ ທົບທວນ ຄືນຜົນການຈັດຕັ້ງປະຕິບັດກ່ຽວກັບ ການສ້າງຄວາມເຂັ້ມແຂງໃນວຽກງານສຶກສານິເທດພາຍໃນ ຢູ່ວິທະນາໄລຄູ 3 ແຫ່ງ ຮ່ວມກັບແຜນງານບີຄວາ ຜູ້ເຂົ້າຮ່ວມທັງໝົດ 60 ທ່ານ;
19) ສຳເລັດກອງປະຊຸມ ປຶກສາຫາລື ແລະ ອອກແບບການຜັນຂະຫຍາຍຈັດຕັ້ງປະຕິບັດກ່ຽວກັບ ການສ້າງຄວາມເຂັ້ມແຂງໃນວຽກງານສຶກສານິເທດພາຍໃນ ໃຫ້ແກ່ວິທະຍາໄລຄູ 5 ແຫ່ງ ຜູ້ເຂົ້າຮ່ວມທັງໝົດ 73 ທ່ານ; ສຳເລັດກອງປະຊຸມວາງແຜນຈັດຕັ້ງປະຕິບັດກ່ຽວກັບການສ້າງຄວາມເຂັ້ມແຂງໃນວຽກງານສຶກສານິເທດພາຍໃນ ໃຫ້ແກ່ວິທະຍາໄລຄູ 5 ແຫ່ງ ຜູ້ເຂົ້າຮ່ວມທັງໝົດ 72 ທ່ານ; ສຳເລັດກອງປະຊຸມ ແນະນຳການນຳໃຊ້ເຄື່ອງມືສັງເກດການສອນ ໃນຫ້ອງຮຽນໃຫ້ແກ່ຜູ້ເຮັດວຽກສຶກສານິເທດ 40 ເມືອງເປົ້າໝາຍ (15 ພຶດຕິກາ) ມີຜູ້ເຂົ້າຮ່ວມທັງໝົດ 160 ທ່ານ;
20) ສຳເລັດລົງຕິດຕາມການນຳໃຊ້ເຄື່ອງມືສັງເກດການສອນໃນຫ້ອງຮຽນ ຂອງຜູ້ເຮັດວຽກສຶກສານິເທດ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 50 ທ່ານ; ສຳເລັດກອງປະຊຸມ ສັງລວມ ຜົນການລົງຕິດຕາມ ການນຳໃຊ້ເຄື່ອງມືສັງເກດການສອນ ໃນຫ້ອງຮຽນ; ເຊິ່ງມີຜູ້ເຂົ້າຮ່ວມທັງໝົດຈຳນວນ 68 ທ່ານ, ຍິງ 31 ທ່ານ; ສຳເລັດການສ້າງຄວາມເຂັ້ມວຽກງານການສຶກສານິເທດພາຍໃນຂັ້ນເມືອງໂມດູນ 1, 2 ໃນ 8 ແຂວງ 20 ເມືອງເປົ້າໝາຍຈຳນວນທັງໝົດ 120 ທ່ານ;
21) ສຳເລັດການຝຶກອົບຮົມແນະນຳຄູ່ມືລະບົບການຕິດຕາມ ແລະ ປະເມີນຄູສອນທີ່ໄດ້ຝຶກອົບຮົມການສອນວິຊາຄະນິດ ສາດ ແລະ ພາສາລາວ ຊັ້ນປະຖົມສຶກສາປີທີ1-3 ໃຫ້ຜູ້ເຮັດວຽກສຶກສານິເທດໃນ 40 ເມືອງເປົ້າໝາຍ;ຈຳນວນຜູ້ເຂົ້າຮ່ວມ 210 ທ່ານ ຍິງ 79 ທ່ານ; ສາເລັດການ ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ເຮັດວຽກສຶກສານິເທດພາຍໃນ ໃນ 30 ເມືອງເປົ້າໝາຍຂອງແຜນງານບີຄວາ ຈຳນວນທັງໝົດ 1,123 ຄົນ;

22) ສຳເລັດການປັບປຸງຫຼັກສູດສ້າງຄູມັດທະຍົມສຶກສາ ໃນ 6 ສາຂາ (ຄະນິດສາດ, ຟີຊິກສາດ, ເຄມີສາດ, ຊີວະວິທະຍາ, ພາສາລາວ ແລະ ພາສາອັງກິດ) ທັງພາກປົກກະຕິ ແລະ ຕໍ່ເນື່ອງລະດັບປະລິນຍາຕີ;
23) ສຳເລັດການພັດ ເຄື່ອງມືປະເມີນຜົນສຳເລັດການຮຽນຮູ້ຂອງນັກສຶກສາຄູປີສຸດທ້າຍ ສາຍສ້າງຄູມັດທະຍົມສຶກສາ; ເຜີຍແຜ່ ແລະ ຕິດຕາມການນຳໃຊ້ມາດຕະຖານການສອນຂອງຄູ ໃນສະຖານການສ້າງຄູ; ສຳເລັດການສຶກສາຄວາມຕ້ອງການພັດທະນາວິຊາຊີບຄູແບບຕໍ່ເນື່ອງສຳລັບສາຍສ້າງຄູປະຖົມ (ສູນພັດທະ ນາຄູ);
24) ສຳເລັດການພັດທະນາຄູ່ມືແນະນຳວິທີສອນໃນຮູບແບບທີ່ເນັ້ນຜົນການຮຽນຂອງຜູ້ຮຽນເປັນຫຼັກ (LCA) ສຳລັບສາຍສ້າງຄູມັດທະຍົມສຶກສາ; ໂມດູນການສອນວິຊາ ICT (ພື້ນຖານ ICT; ICT ສຳລັບການຮຽນການສອນ ແລະ ICT ສຳລັບການພັດທະນາວິຊາຊີບຄູ) ໄດ້ຮັບການພັດທະນາ, ພ້ອມທັງຈັດຝຶກອົບຮົມໃຫ້ຄູສອນໃນສະຖານການສ້າງຄູທົ່ວປະເທດ;
25) ການເສີມສ້າງຂີດຄວາມສາມາດຂອງຄູສຳລັບການສຶກສາທີ່ມີການຫັນປ່ຽນດ້ານຄວາມສະເໝີພາບທາງເພດ: ການຝຶກອົບຮົມວິທີສິດສອນທີ່ຄຳນຶງເຖິງຄວາມສະເໝີພາບທາງເພດ;
26) ນະໂຍບາຍຄູແຫ່ງຊາດໄດ້ຮັບການພັດທະນາ ແລະ ຖືກຮັບຮອງນຳໃຊ້ຢ່າງເປັນທາງການ;
27) ສຳເລັດຈັດຕັ້ງເຜີຍແຜ່ ແລະ ແນະນຳມາດຕະຖານການສອນຊັ້ນປະຖົມສຶກສາ ໃຫ້ພາກສ່ວນທີ່ກ່ຽວຂ້ອງໄດ້ຮັບການຈັດຕັ້ງປະຕິບັດ; ສຳເລັດມາດຕະຖານການສອນສຳລັບຄູ ໃນຊັ້ນມັດທະຍົມສຶກສາ ໄດ້ຮັບການພັດທະນາ ແລະ ທົດລອງນຳໃຊ້ ໃນໂຮງຮຽນມັດທະຍົມສຶກສາ 5 ແຫ່ງ ໃນນະຄອນຫຼວງວຽງຈັນ;
28) ເຄື່ອງມືປະເມີນຕົນເອງຂອງຄູຊັ້ນປະຖົມສຶກສາທີ່ຕິດພັນກັບມາດຕະຖານການສອນໄດ້ຮັບການອະນຸມັດທົດລອງນຳໃຊ້; ສຳເລັດການທົດລອງນຳໃຊ້ເຄື່ອງມືປະເມີນຕົນເອງຂອງຄູ ທີ່ຕິດພັນກັບມາດຕະຖານການສອນຊັ້ນປະຖົມສຶກສາຮ່ວມກັບຜູ້ເຮັດວຽກສຶກສານິເທດພາຍໃນ, ຜູ້ອຳນວຍການໂຮງຮຽນ ແລະ ຄູສອນຊັ້ນປະຖົມ ໃນເມືອງ ນ້ຳທາ, ເມືອງຄູນ ແລະ ເມືອງອຸທຸມພອນ ທີ່ນອນໃນເປົ້າໝາຍຂອງແຜນງານບີຄວາ;
29) ສຳເລັດການເຜີຍແຜ່ ແລະ ຈັດຕັ້ງປະຕິບັດນະໂຍບາຍຄູ ແຫ່ງຊາດ;
30) ຊຸກຍູ້ ແລະ ຕິດຕາມວິທະຍາໄລຄູ ເພື່ອດຳເນີນການປະເມີນຄຸນນະພາບພາຍໃນປະຈຳປີ;
31) ຖອດຖອນບົດຮຽນການຈັດຕັ້ງປະຕິບັດການສ້າງສູນແຫ່ງການພັດທະນາ ແລະ ສູນແຫ່ງຄວາມເປັນເລີດສຳລັບສາຍສ້າງຄູຮ່ວມກັບວິທະຍາໄລຄູ 8 ແຫ່ງ;
32) ຝຶກອົບຮົມການນຳໃຊ້ຄູ່ມືແນະນຳເພີ່ມວິທີການສິດສອນວິຊາພາສາລາວ ແລະ ຄະນິດສາດໃຫ້ຄູສອນສາຍປະຖົມ ໃນວິທະຍາໄລຄູ; ຝຶກອົບຮົມຄູສອນໃນສະຖານການສ້າງຄູ ໃນການຈັດການຮຽນການສອນ ທຸກຊັ້ນທຸກສາຍ; ສ້າງຄວາມເຂັ້ມແຂງໃຫ້ແກ່ ຜູ້ເຮັດວຽກສຶກສານິດເທດ ໃນສະຖານການສ້າງຄູ;
33) ສຳເລັດພິທີມອບ-ຮັບ ອາຄານຮຽນ, ຫ້ອງຮຽນ ແລະ ອຸປະກອນ, ສື່ການຮຽນການສອນໂຮງຮຽນສາທິດວິທະຍາໄລຄູ 8 ແຫ່ງ; ສຳເລັດການກໍ່ສ້າງອາຄານຮຽນ 2 ຊັ້ນ ວິທະຍາໄລຄູ ຄັງໄຂ, ເມືອງ ແປກ, ແຂວງຊຽງຂວາງ;
34) ສຳເລັດການຝຶກອົບຮົມແນະນຳການນຳໃຊ້ອຸປະກອນ, ສື່ການຮຽນການສອນໃຫ້ຄະນະຮັບຜິດຊອບ ແລະ ຄູສອນ ໃນວິທະຍາໄລຄູ ແລະ ໂຮງຮຽນສາທິດ ວິທະຍາໄລຄູ 04 ແຫ່ງ ພາຍໃຕ້ໂຄງການ ປັບປຸງວິທະຍາໄລຄູ ໃນ ສປປ ລາວ (ວິທະຍາໄລຄູ ບ້ານເກີນ, ສະຫວັນນະເຂດ, ປາກເຊ ແລະ ສາລະວັນ);
35) ຝຶກອົບຮົມແນະນຳຄູ່ມືລະບົບການຕິດຕາມ ແລະ ປະເມີນຄູສອນທີ່ໄດ້ຝຶກອົບຮົມການສອນວິຊາຄະນິດສາດ ແລະ ພາສາລາວ ຊັ້ນປະຖົມສຶກສາປີທີ1-3 ໃຫ້ຜູ້ອຳນວຍການໂຮງຮຽນ 40 ເມືອງເປົ້າໝາຍ; ຈຳນວນຜູ້ເຂົ້າຮ່ວມ 146 ທ່ານ ຍິງ 68 ທ່ານ;

36) ຝຶກອົບຮົມ ແນະນຳຄູ່ມື ລະບົບການຕິດຕາມ ແລະ ເກັບກຳຂໍ້ມູນ ການນຳໃຊ້ຫຼັກສູດຊັ້ນປະຖົມສຶກສາ ໃຫ້ຜູ້ອຳນວຍການໂຮງຮຽນ 40 ເມືອງເປົ້າໝາຍ; ຝຶກອົບຮົມການນຳໃຊ້ຫຼັກສູດຊັ້ນປະຖົມສຶກສາ ປີທີ 1-3 ສະບັບປັບປຸງໃໝ່ ໃຫ້ຜູ້ອຳນວຍການໂຮງຮຽນປະຖົມສຶກສາ ສຳລັບ 40 ເມືອງເປົ້າໝາຍ; ຝຶກອົບຮົມ ແນະນຳການນຳໃຊ້ເຄື່ອງມືສັງເກດການສອນ ໃຫ້ຜູ້ອຳນວຍການໂຮງຮຽນ 40 ເມືອງເປົ້າໝາຍ; ສຳເລັດການຝຶກອົບຮົມການຮຽນການສອນຄວບອາຍຸ 3-5 ປີ ໃຫ້ຜູ້ອຳນວຍການ ແລະ ຄູສອນໃນບ້ານເປົ້າຂອງໂຄງການ ໃນ 10 ແຂວງ, 22 ເມືອງ.

### 2.3. ຄຸນນະພາບ ແລະ ຈຳນວນນັກຮຽນທີ່ຈົບຈາກການສຶກສາຂັ້ນພື້ນຖານ ແລະ ການສຶກສາຫຼັງຂັ້ນພື້ນຖານເຂົ້າສູ່ຕະຫຼາດແຮງງານ ທັງພາຍໃນ ແລະ ຕ່າງປະເທດສອດຄ່ອງກັບຄວາມຕ້ອງ ການຂອງແຜນພັດທະນາເສດ

1) ວິທະຍາໄລຄູທົ່ວປະເທດສຳເລັດການດຳເນີນການໂຄສະນາເຊີນຊວນ ແລະ ສ້າງແຮງຈູງໃຈໃຫ້ກັບນັກຮຽນຈົບໃໝ່ ທີ່ມີຄວາມສົນໃຈມາເຂົ້າຮຽນໃນສາຍສ້າງຄູວິທະຍາສາດທຳມະຊາດ ໂດຍການລົງແນະແນວໃນໂຮງຮຽນມັດທະຍົມສຶກສາ, ສ້າງປັດສະເຕີ ແລະ ແຈ້ງການລົງຫາທ້ອງຖິ່ນ.

## 3. ບັນຫາ ແລະ ສິ່ງທ້າທາຍ

1) ການຈັດຕັ້ງປະຕິບັດແຜນ ບາງກິດຈະກຳຍັງບໍ່ບັນລຸຕາມຈຸດສິງເທົ່າທີ່ຄວນ ເນື່ອງຈາກມີ ຫຼາຍປັດໄຈ ທີ່ສົ່ງຜົນກະທົບຕໍ່ ການຈັດຕັ້ງປະຕິບັດໂດຍສະເພາະແມ່ນດ້ານການອະນຸມັດງົບປະມານ ບາງຄັ້ງບໍ່ທັນກັບ ໄລຍະເວລາທີ່ຈະຈັດຕັ້ງປະຕິບັດຕົວຈິງ, ການຈັດຝຶກອົບຮົມບາງຫົວຂໍ້ ແມ່ນໄດ້ຈັດຂຶ້ນໃນຊ່ວງເຂົ້າຮຽນ ເຮັດໃຫ້ແຕະຕ້ອງເຖິງການຈັດການຮຽນການສອນຂອງຄູ;
2) ການຕິດຕາມ ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ຂອງ ຄູ, ຜູ້ອຳນວຍການ ແລະ ຜູ້ເຮັດວຽກສຶກສານິເທດ ຍັງບໍ່ທັນມີລະບົບທີ່ຊັດເຈນ ໂດຍສະເພາະ ການປັບປຸງໂຄງປະກອບການຈັດຕັ້ງຂັ້ນເມືອງ ໄດ້ເປັນຜົນໃນການສັບຊ້ອນ ຜູ້ເຮັດວຽກສຶກສານິເທດ ບໍ່ຖືກສັບຊ້ອນຕາມການເຮັດວຽກຕົວຈິງ;
3) ການຝຶກອົບຮົມຄູ ຍັງບໍ່ທັນບັນລຸດ້ານຄຸນນະພາບເທົ່າທີ່ຄວນ ເນື່ອງຈາກ ໄລຍະເວລາການຝຶກອົບຮົມບໍ່ຖືກຕາມແຜນ, ຄູສອນຈຳນວນຫຼາຍສອນບໍ່ຖືກຊັ້ນ, ວິຊາທີ່ຈົບມາ (ມັດທະຍົມ ແລະ ການສຶກສາກ່ອນໄວຮຽນ ແຕ່ສອນ ປະຖົມ), ຄູມີການສັບປ່ຽນຊັ້ນ/ຂັ້ນສອນ, ສອນຫ້ອງຄວບຫຼາຍຂັ້ນຮຽນ ແລະ ສອນຄວບຫ້ອງ ຈຶ່ງເຮັດໃຫ້ ຜົນການສອນຂອງຄູ ແລະ ຜົນການຮຽນຂອງນັກຮຽນ ບໍ່ທັນບັນລຸຕາມຄາດໝາຍທີ່ວາງໄວ້;
4) ກົນໄກການຕິດຕາມ ແລະ ລາຍງານຄວາມຄືບໜ້າການປະຕິບັດແຜນພັດທະນາຂະແໜງການຍ່ອຍການສຶກສາຄູ ຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດຢ່າງເຕັມສ່ວນ, ເຮັດໃຫ້ການສັງລວມ, ລາຍງານ ແລະ ຕີລາຄາຜົນໄດ້ຮັບມີຄວາມຫຍຸ້ງຍາກ ແລະ ຊັກຊ້າໃນການລາຍງານ.

## 4. ບຸລິມະສິດສຳລັບສົກຮຽນ 2025-2026

### 4.1. ຈຸດປະສົງ

1) ເພື່ອຂະຫຍາຍໂອກາດການເຂົ້າເຖິງ ການເຂົ້າຮຽນໃນສາຍສ້າງຄູ ໃຫ້ສາມາດບັນລຸຕາມຄາດໝາຍແຜນການກໍ່ສ້າງນັກສຶກສາຄູ ແລະ ແຜນຄວາມຕ້ອງການຄູໃນຕໍ່ໜ້າ;
2) ເພື່ອທົບທວນ ແລະ ພັດທະນາ ກົນໄກການພັດທະນາວິຊາຊີບຄູ ທີ່ສາມາດຕອບສະໜອງໃຫ້ແກ່ການບຳລຸງຍົກລະດັບຄວາມຮູ້ ແລະ ທັກສະດ້ານເນື້ອໃນຫຼັກສູດການສອນຂອງຄູ ແລະ ຜູ້ເຮັດວຽກສຶກສານິເທດ ນັບແຕ່ການສຶກສາກ່ອນໄວຮຽນຈົນຮອດສາຍສາມັນສຶກສາ ແລະ ສະຖານການສ້າງຄູໃຫ້ໄດ້ຕາມມາດຕະຖານການສອນທຸກຊັ້ນ ແລະ ບັນລຸທາງດ້ານຄຸນນະພາບທີ່ດີຂຶ້ນ;

3) ເພື່ອຄຸ້ມຄອງການຈັດຕັ້ງປະຕິບັດວຽກງານການກໍ່ສ້າງ ແລະ ພັດທະນາວິຊີບຄູໃຫ້ເປັນລະບົບ ໃນການທັນເປັນທັນສະໄໝ ແລະ ຕິດຕາມລາຍງານການຈັດຕັ້ງປະຕິບັດໄດ້ຢ່າງຊັດເຈນ.

### 4.2. ຄາດໝາຍ

1) ສຳເລັດການພັດທະນາ ແລະ ປະຕິບັດນິຕິກຳກົນໄກການກໍ່ສ້າງຄູ ໂດຍການສົ່ງເສີມນັກຮຽນທີ່ຈົບສາມັນສຶກສາ ເຂົ້າຮຽນໃນ ສະຖານການສ້າງຄູ ເພີ່ມຂຶ້ນຢ່າງໜ້ອຍ 10%;
2) ເປີເຊັນຂອງຄູປະຈຳການ ທຸກຂັ້ນ ໄດ້ຮັບການຝຶກອົບຮົມ ສ້າງຂີດຄວາມສາມາດ ສະເລ່ຍ 20% ແລະ ເປີເຊັນຂອງ ຜູ້ເຮັດສຶກສານິເທດພາຍໃນທຸກຂັ້ນໄດ້ຮັບການຝຶກອົບຮົມ ສ້າງຂີດຄວາມສາມາດ ສະເລ່ຍ 10%;
3) ຫຼັກສູດສາຍສ້າງຄູ ແລະ ຫຼັກສູດການຝຶກອົບຮົມຄູ ກຽມປະຈຳການທຸກລະດັບ ໄດ້ຮັບການທົບທວນ, ປັບປຸງ ແລະ ຈັດຕັ້ງປະຕິບັດ;
4) ຄູ່ມືການຈັດຕັ້ງປະຕິບັດ ການພັດທະນາວິຊາຊີບແບບຕໍ່ເນື່ອງ ທຸກຂັ້ນ ໄດ້ຮັບການພັດທະນາ, ປັບປຸງ ແລະ ຈັດຕັ້ງປະຕິບັດ;
5) ຄູ່ມືກ່ຽວກັບລະບົບການເກັບກຳໜ່ອຍກິດ ສຳລັບ ການຝຶກອົບຮົມຕ່າງໆພາຍໃຕ້ ການພັດທະນາວິຊາຊີບແບບຕໍ່ເນື່ອງ ທຸກຂັ້ນ ທຸກສາຍໄດ້ຮັບການທົບທວນ ແລະ ພັດທະນາ;
6) ມາດຕະຖານການສອນສຳລັບຄູການສຶກສາກ່ອນໄວຮຽນໄດ້ຮັບການພັດທະນາ;
7) ສະໜອງການພັດນະນາວິຊາຊີບສຳລັບ ຜູ້ເຮັດວຽກສຶກສານິເທດ ເພື່ອສະໜັບສະໜູນການພັດທະນາວິຊາຊີບຄູແບບຕໍ່ເນື່ອງ;
8) ລະບົບການຄຸ້ມຄອງ ວຽກງານຝຶກຫັດວິຊາຊີບຄູ ແລະ ວຽກງານຕຳແໜ່ງວິຊາການໃນ ສະຖານການສ້າງຄູ ໄດ້ຮັບການພັດທະນາ;
9) ລະບົບຄຸ້ມຄອງສື່ການຮຽນການສອນໃນສະຖານການສ້າງຄູ ແລະ ລະບົບການລາຍງານຂໍ້ມູນ-ຂ່າວສານ ທີ່ທັນສະໄໝ ໄດ້ຮັບການພັດທະນາ ແລະ ນຳໃຊ້ໄດ້;
10) ລະບົບການລາຍງານ ການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາຄູ ໄດ້ຮັບການພັດທະນາ ແລະ ນຳໃຊ້.

**ຍຸດທະສາດ 1:** ພັດທະນາກົນໄກ ການກໍ່ສ້າງຄູ ໃຫ້ສອດຄ່ອງກັບແຜນຄວາມຕ້ອງການຄູ.

**ວຽກຈຸດສຸມ:**

1) ພັດທະນາ ນິຕິກຳ ທີ່ຮັບໃຊ້ການສ້າງແຜນກໍ່ສ້າງຄູ;
   - ປຶກສາຫາລື ແລະ ກຳນົດຮ່າງເນື້ອໃນກົນໄກການກໍ່ສ້າງຄູ ໃຫ້ສ່ອດຂ້ອງກັບຄວາມຕ້ອງການຄູ.
   - ພັດທະນາກົນໄກການກໍ່ສ້າງຄູ ໃຫ້ສ່ອດຂ້ອງກັບຄວາມຕ້ອງການຄູ.
2) ສ້າງຖານຂໍ້ມູນ ກ່ຽວກັບ ການກຳນົດຕົວເລກການກໍ່ສ້າງຄູ ຕາມແຜນຄວາມຕ້ອງການຄູ;
3) ແນະແນວຄວາມຮູ້ກ່ຽວກັບ ອາຊີບຄູ ໃຫ້ກັບ ນັກຮຽນທີ່ຈົບ ຊັ້ນມັດທະ ຍົມສຶກສາ;
4) ລະດົມ ຊຸກຍູ້ ອຳນາດການປົກຄອງທ້ອງຖິ່ນ, ຄະນະພັດ ທະນາການສຶກສາຂັ້ນບ້ານ, ພໍ່ແມ່ ຜູ້ປົກຄອງ ໃຫ້ມີສ່ວນຮ່ວມ ໃນການສົ່ງເສີມ ນັກຮຽນມາຮຽນວິຊາຊີບຄູ.

**ຍຸດທະສາດ 2:** ທົບທວນ ແລະ ປັບປຸງຫຼັກສູດສ້າງຄູ ທຸກຂັ້ນທຸກສາຍໃຫ້ສ່ອດຄ່ອງກັບຫຼັກສູດການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ ຖືກຮັບຮອງ.

**ວຽກຈຸດສຸມ:**

1) ປັບປຸງຫຼັກສູດປະລິນຍາຕີ ສາຍການສຶກສາກ່ອນໄວຮຽນ, ປະຖົມ ແລະ ມັດທະຍົມໃຫ້ສອດຄ່ອງກັບຫຼັກສູດການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ;

2) ທົບທວນ ແລະ ປັບປຸງຫຼັກສູດ ການຍົກລະດັບ ຄູ ລະບົບຕໍ່ເນື່ອງ ສາຍການສຶກສາກ່ອນໄວຮຽນ ແລະ ປະຖົມ ໃຫ້ສອດຄ່ອງກັບຫຼັກສູດ ການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ.

**ຍຸດທະສາດ 3:** ທົບທວນ ແລະ ປັບປຸງນິຕິກຳການຍົກຖານະເປັນສະຖານການສ້າງຄູ ແລະ ຖານະເປັນມະຫາວິທະຍາໄລສ້າງຄູແຫ່ງຊາດ.

**ວຽກຈຸດສຸມ:**

1) ທົບທວນຄືນ ການກຳນົດຂອບເຂດ, ພາລະບົດບາດ ແລະ ແຜນປະຕິບັດວຽກ ຍົກຖານະວິທະຍາໄລຄູ ເປັນສະຖາບັນສ້າງຄູ;
2) ສຳຫຼວດ ແລະ ວິເຄາະຂໍ້ມູນຄວາມເປັນໄປໄດ້ ພາກສ່ວນຕ່າງໆທີ່ກ່ຽວຂ້ອງໃນການໂຮມ ສະຖາບັນສ້າງຄູ ແລະ ຄະນະສຶກສາສາດ ເປັນ ມະຫາວິທະຍາໄລສ້າງຄູແຫ່ງຊາດ;
3) ພັດທະນາ, ເຜີຍແຜ່ ແລະ ຈັດຕັ້ງຜັນຂະຫຍາຍ ບັນດານິຕິກຳ ແລະ ຂະບວນການ ກ່ຽວກັບ ການສ້າງຕັ້ງມະຫາວິທະຍາໄລສ້າງຄູແຫ່ງຊາດ.

**ຍຸດທະສາດ 4:** ສ້າງຄວາມເຂັ້ມແຂງວຽກງານ ການພັດທະນາວິຊາຊີບແບບຕໍ່ເນື່ອງ (CPD) ຕາມຂັ້ນຄຸ້ມຄອງນັບຕ່ສູນກາງຮອດທ້ອງຖິ່ນ.

**ວຽກຈຸດສຸມ:**

1) ທົບທວນ ນິຕິກຳກ່ຽວກັບການພັດທະນາວິຊາຊີບແບບຕໍ່ເນື່ອງ.
   - ພັດທະນາຄູ່ມືແນະນຳການພັດທະນາວິຊາຊີບຄູແບບຕໍ່ເນື່ອງຂັ້ນປະຖົມສຶກສາ;
   - ແນະນຳ ແລະ ເຜີຍແຜ່ ນິຕິກຳການພັດທະນາວິຊາອາຊີບຄູແບບຕໍ່ເນື່ອງ ແລະ ການຂໍຕຳແໜ່ງວິຊາການ
2) ພັດທະນາຄູ່ມືການພັດທະນາວິຊາຊີບຄູແບບຕໍ່ເນື່ອງທຸກຂັ້ນ ໃນສະຖານການສ້າງຄູ;
3) ພັດທະນາຄູ່ມືການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ການສຶກສາ ກ່ອນໄວຮຽນ ແລະ ສາມັນສຶກສາ;
4) ທົບທວນ ການຈັດຕັ້ງປະຕິບັດ ນິຕິກຳກ່ຽວກັບການຄິດໄລ່ ໜ່ວຍກິດ ສຳລັບການຝຶກອົບຮົມຕ່າງໆ ພາຍໃຕ້ການພັດທະນາວິຊາຊີບແບບຕໍ່ເນື່ອງ ທຸກຂັ້ນ ທຸກສາຍ ໃຫ້ສອດຄ່ອງກັບ ຫຼັກສູດການສ້າງຄູ ທຸກລະດັບ;
5) ທົບທວນ ແລະ ພັດທະນາ ການອອກໃບອະນຸຍາດການສອນຂອງຄູ ໃນສະຖານການສ້າງຄູ, ການສຶກສາກ່ອນໄວຮຽນ, ສາມັນສຶກສາ ທັງພາກລັດ ແລະ ເອກະຊົນ.

**ຍຸດທະສາດ 5:** ທົບທວນ ແລະ ປັບປຸງລະບົບການສະໜັບສະໜູນການພັດທະນາວິຊາຊີບສຳລັບວຽກງານສຶກສານິເທດ ທຸກຂັ້ນ.

**ວຽກຈຸດສຸມ:**

1) ພັດທະນາ ລະບົບການຕິດຕາມການປະຕິບັດໜ້າທີ່ຂອງຜູ້ເຮັດວຽກສຶກສານິເທດ ທຸກຂັ້ນ;
   - ພັດທະນາ ຄູ່ມື ລະບົບການຕິດຕາມ ແລະ ລາຍງານການປະຕິບັດວຽກ ຂອງ ຜູ້ເຮັດວຽກສຶກສານິເທດພາຍໃນ ໃຫ້ແກ່ຂັ້ນແຂວງ, ເມືອງ ແລະ ວິທະຍາໄລຄູ.
2) ປະເມີນຄວາມຕ້ອງການໃນການພັດທະນາວິຊາຊີບຂອງຜູ້ເຮັດວຽກສຶກສານິເທດ ທຸກຂັ້ນ;
3) ສ້າງຄວາມເຂັ້ມແຂງໃນການສະໜັບສະໜູນຊ່ວຍເຫຼືອຄູໃຫ້ແກ່ຜູ້ເຮັດວຽກສຶກສານິເທດ ພາຍໃນ ແລະ ພາຍນອກ.
   - ສ້າງຂີດຄວາມສາມາດ ວຽກງານການສຶກສານິເທດ ການສຶກສາກ່ອນໄວຮຽນ ໃຫ້ຜູ້ເຮັດວຽກສຶກສານິເທດໃນຂັ້ນ ວິທະຍາໄລຄູ, ແຂວງ ແລະ ເມືອງ;
   - ສ້າງຄວາມເຂັ້ມແຂງ ວຽກງານນິເທດພາຍໃນ ຊັ້ນປະຖົມສຶກສາ ໃຫ້ແກ່ ຂັ້ນສູນກາງ, ແຂວງ, ວິທະຍາໄລຄູ, ເມືອງ ຜູ້ອຳນວຍການ, ຫົວໜ້າກຸ່ມ ແລະ ຄູວິຊາການກຸ່ມ;

- ຕິດຕາມ ແລະ ສ້າງຄວາມເຂັ້ມແຂງທາງດ້ານ ICT ໃຫ້ແກ່ຜູ້ເຮັດວຽກສຶກສານິເທດ ຊັ້ນມັດທະຍົມສຶກສາ ໃນ 8 ແຂວງ ແລະ 20 ເມືອງເປົ້າໝາຍ.

**ຍຸດທະສາດ 6:** ສ້າງຄວາມເຂັ້ມແຂງໃຫ້ແກ່ ສູນພັດທະນາຄູຂັ້ນແຂວງໃນການເປັນເຄືອຂ່າຍຮ່ວມກັບສະຖານການສ້າງຄູ ເພື່ອສະໜອງການພັດທະນາວິຊາຊີບຂອງຄູ.

**ວຽກຈຸດສຸມ:**

1) ທົບທວນ ແລະ ປັບປຸງ ຄູ່ມື ເຮັດວຽກ ຂອງ ສູນພັດທະນາຄູ (ທີ່ບໍ່ມີສະຖາບັນສ້າງຄູຕັ້ງຢູ່);
2) ສ້າງຄວາມເຂັ້ມແຂງ ດ້ານການບໍລິຫານ, ຄຸ້ມຄອງ ແລະ ວິຊາການ ໃຫ້ແກ່ ຄະນະ ແລະ ພະນັກງານ ສູນພັດທະນາ;
3) ສ້າງຄວາມເຂັ້ມແຂງດ້ານການພັດທະນາວິຊາຊີບ ທີ່ເຊື່ອມໂຍງລະຫວ່າງ ສະຖາບັນສ້າງຄູ ແລະ ສູນພັດທະນາຄູ ໃນການເປັນເຄືອຂ່າຍໃຫ້ແກ່ວຽກງານພັດທະນາວິຊາຊີບຄູ.

**ຍຸດທະສາດ 7:** ສ້າງຄວາມເຂັ້ມແຂງ ວິທີການສອນຫ້ອງຄວບ ໃນຊັ້ນປະຖົມສຶກສາ.

**ວຽກຈຸດສຸມ:**

1) ແນະນຳທັກສະ ແລະ ເຕັກນິກການຈັດການຮຽນການສອນຫ້ອງຄວບໃຫ້ແກ່ຄູ ຊັ້ນປະຖົມສຶກສາ;
   - ສ້າງຂີດຄວາມຄວາມສາມາດ ດ້ານຄວາມຮູ້, ທັກສະ ແລະ ວິທີການຈັດການຮຽນການສອນ ກ່ຽວກັບການສອນຫ້ອງຄວບ ໃຫ້ແກ່ຄູສອນ ຊັ້ນປະຖົມສຶກສາ.
2) ສ້າງລະບົບ ການຕິດຕາມການຮຽນການສອນຫ້ອງຄວບ ໃນໂຮງຮຽນປະຖົມສຶກສາ;
3) ທົບທວນນິຕິກຳ ກ່ຽວກັບ ນະໂຍບາຍການສອນຫ້ອງຄວບ ຊັ້ນປະຖົມສຶກສາ.

**ຍຸດທະສາດ 8:** ສ້າງຄວາມເຂັ້ມແຂງໃຫ້ ສະຖານການສ້າງຄູ ໃຫ້ກາຍເປັນ ສູນກາງແຫ່ງການພັດທະນາວິຊາຊີບຄູ ໂດຍຫັນເປັນທັນສະໄໝ.

**ວຽກຈຸດສຸມ:**

1) ສ້າງຄວາມເຂັ້ມແຂງໃນການຜັນຂະຫຍາຍວຽກງານເຄື່ອງຂ່າຍການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ຮ່ວມກັບ ແຂວງ, ເມືອງ ແລະ ກຸ່ມໂຮງຮຽນ ຕາມຂັ້ນຄຸ້ມຄອງ;
2) ພັດທະນາ ຄູ່ມື ການຝຶກອົບຮົມ ສຳລັບ ຄູສອນໃນ ສະຖານການສ້າງຄູ ໂດຍອີງໃສ່ ຜົນການວິເຄາະຄວາມຕ້ອງການພັດທະນາວິຊາຊີບຂອງຄູໃຫ້ສອດຄ່ອງກັບ ມາດຕະຖານການສອນຂອງຄູ ແລະ ມາດຕະຖານສະມັດຖະພາບດ້ານ ICT;
3) ດຳເນີນການຝຶກອົບຮົມ ຍົກລະດັບຄວາມຮູ້ຄວາມສາມາດຂອງຄູໃນ ສະຖານການສ້າງຄູໃຫ້ໄດ້ ໄດ້ຕາມມາດຕະຖານການສອນ;
4) ທົບທວນ ແລະ ພັດທະນາ ຄູ່ມືການສ້າງຄວາມເຂັ້ມແຂງໃຫ້ ຄູ-ອາຈານ ໃນສະຖານການສ້າງຄູ ໃນການຫັນເປັນດີຈິຕອນລ໌ ເຂົ້າໃນການພັດທະນາວິຊາຊີບ ແລະ ການສອນ ໃນສະຖານການສ້າງຄູ;
5) ເສີມສ້າງຂີດຄວາມສາມາດ ໃນການສຶກສາຄົ້ນຄວ້າວິທະຍາສາດ, ການພັດທະນາສື່ການຮຽນການສອນແບບດີຈິຕອນລ໌ ແລະ ໃນການນຳໃຊ້ອຸປະກອນໃນຫ້ອງທົດລອງ ໃຫ້ແກ່ພາກສ່ວນກ່ຽວຂ້ອງຂອງ ສະຖານການສ້າງຄູ;
6) ສ້າງຕັ້ງເວທີສົນທະນາ ການສຶກສາຄູ ແລະ ທົບທວນຄືນການຈັດຕັ້ງປະຕິບັດສະພາການສຶກສາຄູ.

**ຍຸດທະສາດ 9:** ສ້າງຂີດຄວາມສາມາດ ໃຫ້ຜູ້ອຳນວຍການ ແລະ ຄູປະຈຳການ ທຸກຊັ້ນ ທຸກສາຍ ໃນການຈັດຕັ້ງປະຕິບັດຫຼັກສູດ ແລະ ທັກສະການສອນຕ່າງໆ ໂດຍເນັ້ນເຖິງຄວາມສະເໝີພາບລະຫວ່າງ ຍິງ-ຊາຍ.

**ວຽກຈຸດສຸມ:**

1) ສ້າງຄວາມເຂັ້ມແຂງໃນການນຳໃຊ້ຫຼັກສູດ ສະບັບປັບປຸງໃໝ່ ທຸກຊັ້ນ ທຸກສາຍ;

- ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ອໍານວຍການ ແລະ ຄູສອນ ໃນການສອນຄວບອາຍຸ 3-5 ປີ ໃນບ້ານເປົ້າຂອງໂຄງການ;
- ສ້າງຄວາມເຂັ້ມແຂງໃຫ້ແກ່ຄູປະຈໍາການ ກ່ຽວກັບ ການນໍາໃຊ້ຫຼັກສູດ ການສຶກສາກ່ອນໄວຮຽນ;

2) ສ້າງຄວາມເຂັ້ມແຂງທັກສະດ້ານການຈັດການຮຽນການສອນ ພະລະສຶກສາ ແລະ ສິລະປະສຶກສາ;
   - ສ້າງຄວາມເຂັ້ມແຂງ ການນໍາໃຊ້ຫຼັກສູດ ຊັ້ນປະຖົມສຶກສາ ໃຫ້ແກ່ ຄູປະຈໍາການ ຂັ້ນ ປ.4 ວິຊາ ສັງຄົມສຶກສາ, ຄຸນສົມບັດສຶກສາ, ພາລະສຶກສາ, ສິລະປະສຶກສາ, ສິລະປະກໍາ ແລະ ຫັດຖະກໍາ;
   - ສ້າງຄວາມເຂັ້ມແຂງໃຫ້ແກ່ຄູ ໃນ ການນໍາໃຊ້ ຄູ່ມື ແນະນໍາເພີ່ມ ວິຊາ ພາສາລາວ ແລະ ຄະນິດສາດ ຊັ້ນປະຖົມສຶກສາ ໃຫ້ແກ່ ຄູສອນ ປ.2 ໃນ 40 ເມືອງເປົ້າໝາຍ;
   - ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ອໍານວຍການໂຮງຮຽນໃນການນໍາໃຊ້ ເຄື່ອງມືສັງເກດການສອນ (COT)
   - ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ອໍານວຍການໃນການການນໍາໃຊ້ ຫຼັກສູດ ຊັ້ນປະຖົມສຶກສາ ຂັ້ນ ປ1-ປ.3 ໃນເມືອງເປົ້າໝາຍ;
   - ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານນັກຮົບໃນການນໍາໃຊ້ຫຼັກສູດ ຊັ້ນປະຖົມສຶກສາ ໄປສອນໃນເຂດຫ່າງໄກສອກຫຼີກ.
3) ສ້າງຄວາມເຂັ້ມແຂງ ທັກສະການນໍາໃຊ້ ໄອຊີທີ (ICT) ເຂົ້າໃນການຈັດການຮຽນການສອນ;
4) ສ້າງຄວາມເຂັ້ມແຂງ ການຈັດການຮຽນການສອນວິທະຍາສາດທໍາມະຊາດ (STEM) ທີ່ຄໍານຶງເຖິງບົດບາດຍິງ-ຊາຍ;
5) ສ້າງຄວາມເຂັ້ມແຂງດ້ານການປະເມີນຜົນ ເພື່ອປັບປຸງຜົນການຮຽນແບບຕໍ່ເນື່ອງ ຊັ້ນປະຖົມສຶກສາ;
6) ທົບທວນ ແລະ ພັດທະນາໂມດູນ ການຝຶກອົບຮົມຍົກຂີດຄວາມສາມາດ ຄູປະຈໍາການ ໃຫ້ສອດຄ່ອງກັບຄວາມຕ້ອງການໃນການພັດທະນາວິຊາຊີບ, ສອດຄ່ອງກັບຫຼັກສູດ ການສຶກສາກ່ອນໄວຮຽນ, ຫ້ອງກຽມປະຖົມ, ຊັ້ນປະຖົມສຶກສາ ແລະ ມັດທະຍົມສຶກສາ;
7) ສ້າງຄວາມເຂັ້ມແຂງທັກສະການສອນພາສາລາວໃຫ້ຄູສອນ ນັກຮຽນທີ່ບໍ່ໄດ້ພາສາລາວ;
8) ສ້າງຄວາມເຂັ້ມແຂງດ້ານການສຶກສາຮຽນຮ່ວມ.

**ຍຸດທະສາດ 10:** ສົ່ງເສີມການຈັດຕັ້ງປະຕິບັດ ຄຸນສົມບັດ ແລະ ຈັນຍາບັນຄູ ແລະ ນະໂຍບາຍຄູແຫ່ງຊາດ.

**ວຽກຈຸດສຸມ:**

1) ເຜີຍແຜ່ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດບັນດາຂໍ້ເຂດ ແລະ ຂໍ້ສະເໜີ ແນະ ດ້ານນະໂຍບາຍທີ່ເປັນບຸລິມະສິດຕ່າງໆ ໃນນະໂຍບາຍຄູແຫ່ງຊາດ;
2) ທົບທວນ, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ກ່ຽວກັບ ການດໍາເນີນງານທາງນະໂຍບາຍທີ່ເປັນບູລິມະສິດຕ່າງໆ;
3) ທົບທວນ ແລະ ພັດທະນາ ຄູ່ມື ກ່ຽວກັບຄຸນສົມບັດ, ຈັນຍາບັນຄູ ແລະ ສ້າງຂີດຄວາມສາມາດໃຫ້ ຜູ້ອໍານວຍການ, ຄູປະຈໍາການ ແລະ ນັກສຶກສາຄູກ່ອນປະຈໍາການ;
4) ສ້າງຄວາມເຂັ້ມແຂງການຈັດຕັ້ງປະຕິບັດ ຄຸນສົມບັດ ແລະ ຈັນຍາບັນຄູ ໃຫ້ແກ່ ຜູ້ອໍານວຍການ, ຄູປະຈໍາການ ແລະ ນັກສຶກສາຄູກ່ອນປະຈໍາການ;
5) ສົ່ງເສີມການຈັດຕັ້ງປະຕິບັດມາດຕະຖານການສອນຂອງຄູທຸກຂັ້ນທຸກສາຍໃຫ້ສອດຄ່ອງມາດຕະຖານຄູລາວ.

**ຍຸດທະສາດ 11:** ສົ່ງເສີມການຈັດຕັ້ງປະຕິບັດມາດຕະຖານການສອນຂອງຄູ ທຸກຂັ້ນທຸກສາຍ ໃຫ້ສອດຄ່ອງມາດຕະຖານຄູລາວ.

**ວຽກຈຸດສຸມ:**

1) ທົບທວນ ແລະ ປັບປຸງ ມາດຕະຖານຄູລາວໃຫ້ສ່ອດຄ່ອງກັບສະພາບການຫັນປ່ຽນໃນໄລຍະໃໝ່;

2) ພັດທະນາ ມາດຕະຖານການສອນຂອງຄູ ການສຶກສາກ່ອນໄວຮຽນ;

3) ປັບປຸງ ມາດຕະຖານການສອນ ສໍາລັບຄູ ຊັ້ນປະຖົມສຶກສາ, ມັດທະຍົມສຶກສາ ແລະ ໃນສະຖານການສ້າງຄູ.

**ຍຸດທະສາດ 12:** ສ້າງຄວາມເຂັ້ມແຂງລະບົບຕິດຕາມ, ປະເມີນຜົນ ແລະ ການປະກັນຄຸນນະພາບພາຍໃນໃຫ້ສອດຄ່ອງກັບຄວາມຕ້ອງການພັດທະນາວິຊາຊີບຄູແຕ່ລະໄລຍະ.

**ວຽກຈຸດສຸມ:**

1) ທົບທວນຂະບວນການປະເມີນຄຸນນະພາບ ໃນສະຖານການສ້າງຄູ ເພື່ອກ້າວໄປສູ່ການເປັນສູນແຫ່ງຄວາມເປັນເລີດສໍາລັບສາຍວິຊາໃດໜຶ່ງ;
   - ລົງຕິດຕາມ ແລະ ຊຸກຍູ້ ໃນການປະເມີນຄຸນນະພາບພາຍໃນປະຈໍາປີ 2025 ຢູ່ວິທະຍາໄລຄູ 8 ແຫ່ງ ແລະ ວິທະຍາໄລສົງ 2 ແຫ່ງ;
   - ລົງຕິດຕາມ ແລະ ຊຸກຍູ້ ໃນການປະເມີນສູນແຫ່ງຄວາມເປັນເລີດສໍາລັບສາຍວິຊາໃດໜຶ່ງຢູ່ສະຖານການສຶກສາຄູ;

2) ຄົ້ນຄວ້າ ສ້າງເຄື່ອງມື ແລະ ບົດທົດສອບ ຜົນການຮຽນຮູ້ຂອງນັກສຶກສາຄູ ຕາມສະມັດຖະພາບຂອງຫຼັກສູດສ້າງຄູ ໃນທຸກຊັ້ນທຸກສາຍ;

3) ທົບທວນ ແລະ ພັດທະນາຂອບຕິດຕາມ ແລະ ປະເມີນການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ແຕ່ກ່ອນໄວຮຽນ, ສາມັນສຶກສາ ແລະ ສະຖານການສ້າງຄູ;
   - ກອງປະຊຸມປຶກສາຫາລື ແລະ ກໍານົດກອບການ ຕິດຕາມການປະຕິບັດວຽກງານການພັດທະນາວິຊາຊີບແບບຕໍ່ເນື່ອງ ພາຍໃນສະຖານການສຶກສາຄູ;
   - ລົງຕິດຕາມການທົດລອງນໍາໃຊ້ເຄື່ອງມືລະບົບຕິດຕາມ ແລະ ເກັບກໍາການພັດທະນາວິຊາຊີບຄູແບບຕໍ່ເນື່ອງໃນສະຖານການສ້າງຄູໃນ ວຄ 8 ແຫ່ງ;
   - ກອງປະຊຸມປັບປຸງເຄື່ອງມື ລະບົບຕິດຕາມ ແລະ ເກັບກໍາຂໍ້ມູນການພັດທະນາວິຊາຊີບຄູແບບຕໍ່ເນື່ອງພາຍໃນສະຖານການສຶກສາຄູ;
   - ກອງປະຊຸມເຜີຍແຜ່ ແລະ ແນະນໍາການນໍາໃຊ້ ເຄື່ອງມືລະບົບຕິດຕາມ ແລະ ເກັບກໍາຂໍ້ມູນການພັດທະນາວິຊາຊີບຄູແບບຕໍ່ເນື່ອງໃນສະຖານການສຶກສາຄູ 4 ແຫ່ງ;
   - ກອງປະຊຸມເຜີຍແຜ່ ແລະ ແນະນໍາການນໍາໃຊ້ ເຄື່ອງມືລະບົບຕິດຕາມ ແລະ ເກັບກໍາຂໍ້ມູນການພັດທະນາວິຊາຊີບຄູແບບຕໍ່ເນື່ອງໃນສະຖານການສຶກສາຄູ 4 ແຫ່ງ;
   - ກອງປະຊຸມສັງລວມ ແລະ ວິເຄາະຂໍ້ມູນ ອີງໃສ່ຜົນການລົງຕິດຕາມການປະຕິບັດວຽກງານການພັດທະນາວິຊາຊີບຄູໃນສະຖານການສຶກສາຄູ.

4) ສ້າງຂີດຄວາມສາມາດ ແລະ ສະໜອງສິ່ງອໍານວຍຄວາມສະດວກ ທີ່ຈໍາເປັນໃຫ້ແກ່ພະນັກງານທີ່ຮັບຜິດຊອບວຽກງານຕິດຕາມ, ກວດກາ ແລະ ປະເມີນຜົນໃນ ສະຖານການສ້າງຄູ.

**ຍຸດທະສາດ 13:** ສ້າງຄວາມເຂັ້ມແຂງວຽກງານຂໍ້ມູນຂ່າວສານສໍາລັບການບໍລິຫານຄຸ້ມຄອງສະຖານການສຶກສາຄູ (TEMIS) ໃຫ້ເຊື່ອມໂຍງກັບລະບົບ (LESMIS) ແລະ ແຫຼ່ງການຮຽນຮູ້ຂມູນຂ່າວສານ ໃນຮູບແບບທີ່ທັນສະໄໝ ສໍາລັບຂະແໜງການສຶກສາຄູ.

**ວຽກຈຸດສຸມ:**

1) ທົບທວນ ແລະ ພັດທະນາລະບົບຖານຂໍ້ມູນການຝຶກອົບຮົມຄູໃນສະຖານການສ້າງຄູ, ຄູປະຈໍາການ ແລະ ຜູ້ເຮັດວຽກສຶກສານິເທດ ທຸກຊັ້ນທຸກສາຍ.
   - ກອງປະຊຸມປຶກສາຫາລືການພັດທະນາລະບົບຖານຂໍ້ມູນການຝຶກອົບຮົມຄູປະຈໍາການທຸກຊັ້ນທຸກສາຍ.

2) ພັດທະນາລະບົບຖານຄຸ້ມຄອງ ແລະ ຕິດຕາມນັກສຶກສາຄູ ໃນການປະກອບອາຊີບ ພາຍຫຼັງທີ່ຮຽນຈົບຈາກ ສະຖານການສຶກສາຄູ;
3) ພັດທະນາແຫຼ່ງຂໍ້ມູນຂ່າວສານການຮຽນຮູ້ແບບເອເລັກໂຕນິກ ແລະ ປັບປຸງກົນໄກການ ຈັດຕັ້ງປະຕິບັດຮັບ ໃຊ້ວຽກງານການສຶກສາຄູ;
4) ສະໜອງສິ່ງອຳນວຍຄວາມສະດວກທີ່ທັນສະໄໝ ໃນການຈັດການຮຽນການສອນ;
5) ປັບປຸງຖານຂໍ້ມູນພະນັກງານ ແລະ ນັກ ສຶກສາຄູໃນແຕ່ລະສາຍຮຽນ ໃຫ້ສອດຄ່ອງກັບສະພາບຕົວຈິງ, ທັນ ສະໄໝ ແລະ ລາຍງານວ່ອງໄວ;
6) ສ້າງຄວາມເຂັ້ມແຂງດ້ານການຄຸ້ມຄອງ ແລະ ນຳໃຊ້ ລະບົບຖານຂໍ້ມູນໃຫ້ພາກສ່ວນທີ່ຮັບຜິດຊອບ;
7) ສະໜອງຊັບພະຍາກອນຕ່າງໆທີ່ຈຳເປັນ (ສິ່ງອຳນວຍຄວາມສະດວກຕ່າງໆ, ດ້ານວິຊາການ) ໃຫ້ແກ່ ສະຖານ ການສ້າງຄູ ເພື່ອປັບປຸງລະບົບການບໍລິຫານ ແລະ ຄຸ້ມຄອງການສຶກສາຄູ (TEMIS).

**ຍຸດທະສາດ 14:** ສ້າງຄວາມເຂັ້ມແຂງໃນສະຖານການສ້າງຄູ ໃນການຕິດຕາມ ແລະ ລາຍງານການຈັດຕັ້ງປະຕິບັດ ວຽກຈຸດສຸມຂອງຂະແໜງການ ແລະ ວຽກງານການບໍລິຫານ-ຄຸ້ມຄອງ ໂດຍການຫັນເປັນທັນສະໄໝ.

**ວຽກຈຸດສຸມ:**

1) ທົບທວນ, ອອກແບບ ແລະ ພັດທະນາ ລະບົບການຕິດຕາມ, ປະເມີນ ແລະ ລາຍງານ ຜົນການປະຕິບັດໜ້າທີ່ຂອງພະນັກງານທີ່ຮັບຜິດຊອບວຽກງານບໍລິຫານ ແລະ ຄຸ້ມຄອງໃນສະຖານການສ້າງຄູ ໂດຍການຫັນ ເປັນຮູບແບບທີ່ທັນສະໄໝ;
2) ສ້າງຂີດຄວາມສາມາດດ້ານການບໍລິຫານ ແລະ ຄຸ້ມຄອງ ການຈັດຕັ້ງປະຕິບັດວຽກງານພາຍໃນສະຖາບັນ ໃຫ້ພະນັກງານຫຼັກແຫຼງ ແຕ່ລະຂັ້ນ;
3) ສ້າງຂີດຄວາມສາມາດ ດ້ານການເກັບກຳ, ສັງລວມ, ວິເຄາະ ແລະ ລາຍງານຜົນ ການຈັດຕັ້ງປະຕິບັດ ດ້ານ ການບໍລິຫານ-ຄຸ້ມຄອງ ໃຫ້ສອດຄ່ອງກັບ ລະບົບການຄຸ້ມຄອງທີ່ເປັນທັນສະໄໝ;
4) ພັດທະນາກົນໄກການຕິດຕາມ, ປະເມີນ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກຈຸດສຸມຂອງຂະແໜງ ການຍ່ອຍການສຶກສາຄູ ແຕ່ລະໄລຍະ;

# VII. ຂະແໜງການຍ່ອຍອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ

## 1. ສະພາບລວມ

ກົມອາຊີວະສຶກສາຈັດຕັ້ງປະຕິບັດແຜນວຽກບູລິມະສິດປະຈຳສົກຮຽນ 2024-2025 ໄດ້ມີຜົນສຳເລັດຫຼາຍດ້ານ ຕາມຕົວຊີ້ວັດຂອງແຕ່ລະກິດຈະກຳ ຊຶ່ງຢູ່ໃນໄລຍະທ້າຍສະໄໝຂອງການຈັດຕັ້ງປະຕິບັດແຜນຍຸດທະສາດພັດທະນາ ວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ 05 ປີ (2021-2025) ແລະ ຜັນຂະຫຍາຍບັນດາຄາດໝາຍຕາມມະຕິ ກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ທົ່ວປະເທດ, ເປັນຕົ້ນແມ່ນໃຫ້ສະຖານອາຊີວະສຶກສາສືບຕໍ່ຂະຫຍາຍ ການຮ່ວມມືກັບສະຖານປະກອບການ ເພື່ອພັດທະນາຄຸນນະພາບການຮຽນການສອນ ໂດຍເນັ້ນໃສ່ຝຶກພາກປະຕິບັດ ຕົວຈິງໃຫ້ແກ່ນັກຮຽນ-ນັກສຶກສາ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອສຶກສາຄວາມຕ້ອງການຂອງຕະຫຼາດ ແຮງງານ ແລະ ຮ່ວມກັນຈັດຕັ້ງຝຶກອົບຮົມວິຊາຊີບໄລຍະສັ້ນ ໃຫ້ແກ່ກຸ່ມເປົ້າໝາຍທີ່ຢູ່ເຂດຫ່າງໄກສອກຫຼີກ, ຊາວໜຸ່ມ ຜູ້ຕົກຫຼົ່ນ ແລະ ຜູ້ດ້ອຍໂອກາດໄດ້ເຂົ້າເຖິງອາຊີວະສຶກສາຫຼາຍຂຶ້ນ. ພ້ອມນັ້ນ, ໄດ້ສົມທົບກັບພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງວຽງຈັນ, ຫ້ອງການສຶກສາທິການ ແລະ ກິລາ ເມືອງ/ນະຄອນຫຼວງວຽງຈັນ ເພື່ອແນະ ນຳວິຊາຊີບໃຫ້ແກ່ນັກຮຽນຊັ້ນມັດທະຍົມຕອນຕົ້ນ ແລະ ມັດທະຍົມຕອນປາຍ, ເອົາໃຈໃສ່ຄຸ້ມຄອງສະຖານອາຊີວະ ສຶກສາທີ່ຂຶ້ນກັບການຄຸ້ມຄອງຂອງຕົນ, ແນໃສ່ສ້າງກຳລັງແຮງງານໃຫ້ມີຄຸນນະພາບ ເພື່ອຕອບສະໜອງຄວາມຕ້ອງການ ຂອງຜູ້ຊົມໃຊ້ແຮງງານ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ.

ໃນສົກຮຽນ 2024-2025 ມີສະຖານອາຊີວະສຶກສາພາກລັດ ແລະ ເອກະຊົນ ທີ່ຂຶ້ນກັບການຄຸ້ມຄອງດ້ານ ວິຊາການຂອງກົມອາຊີວະສຶກສາ ທັງໝົດ 85 ແຫ່ງ, ມີພະນັກງານ-ຄູອາຈານ ທັງໝົດ 2,417 ຄົນ, ຍິງ 976 ຄົນ ແລະ ນັກຮຽນ-ນັກສຶກສາ ທັງໝົດ 19,885 ຄົນ, ຍິງ 7,246 ຄົນ (ນັກຮຽນຊັ້ນມັດທະຍົມຕອນຕົ້ນ ເຂົ້າຮຽນອາຊີວະສຶກສາ 3,05% ແລະ ນັກຮຽນຊັ້ນມັດທະຍົມຕອນປາຍ ເຂົ້າຮຽນອາຊີວະສຶກສາ 10,61%).

**ສະຖານອາຊີວະສຶກສາພາກລັດ** ທີ່ຂຶ້ນກັບການຄຸ້ມຄອງດ້ານວິຊາການຂອງກົມອາຊີວະສຶກສາ ທັງໝົດ 26 ແຫ່ງ, ພະນັກງານ-ຄູອາຈານ ແລະ ອາສາສະໝັກ ທັງໝົດ 2,012 ຄົນ, ຍິງ 794 ຄົນ, ໃນນັ້ນມີພະນັກງານອາສາສະໝັກ 06 ຄົນ ຍິງ 01 ຄົນ ແລະ ມີຈຳນວນນັກຮຽນ-ນັກສຶກສາ ທັງໝົດ 16,708 ຄົນ, ຍິງ 5,437 ຄົນ (ຖ້າທຽບໃສ່ ສົກຮຽນ 2023-2024 ແມ່ນມີຈຳນວນນັກຮຽນເພີ່ມຂຶ້ນ 759 ຄົນ ເທົ່າກັບ 4,75%) ຊຶ່ງແບ່ງຕາມຂະແໜງການດັ່ງນີ້:

- ວິຊາຊີບຊັ້ນຕົ້ນ (C1) ມີນັກສຶກສາທັງໝົດ 3,078 ຄົນ, ຍິງ 1,470 ຄົນ;
- ວິຊາຊີບຊັ້ນຕົ້ນ (C2) ມີນັກສຶກສາທັງໝົດ 29 ຄົນ, ຍິງ 22 ຄົນ;
- ວິຊາຊີບຊັ້ນຕົ້ນ (C3) ມີນັກສຶກສາທັງໝົດ 903 ຄົນ, ຍິງ 458 ຄົນ;
- ຊັ້ນກາງ ມີນັກສຶກສາທັງໝົດ 5,034 ຄົນ, ຍິງ 1,419 ຄົນ (ຊັ້ນກາງ (9+3) ມີນັກສຶກສາທັງໝົດ 2,347 ຄົນ, ຍິງ 698 ຄົນ ແລະ ຊັ້ນກາງ (12+2) ມີນັກສຶກສາທັງໝົດ 2,687 ຄົນ, ຍິງ 721 ຄົນ);
- ຊັ້ນສູງ ມີນັກສຶກສາທັງໝົດ 7,430 ຄົນ, ຍິງ 2,037 ຄົນ;
- ປະລິນຍາຕີ ມີນັກສຶກສາທັງໝົດ 234 ຄົນ, ຍິງ 31 ຄົນ.

ຕາຕະລາງທີ 18: **ຈຳນວນນັກຮຽນຂອງສະຖານອາຊີວະສຶກສາພາກລັດ ແຍກຕາມຂົງເຂດອາຊີບ**

| ລ/ດ | ຂົງເຂດອາຊີບ | ຈຳນວນນັກຮຽນ (ຄົນ) | | | ຄິດເປັນເປີເຊັນ | | ໝາຍເຫດ |
|---|---|---|---|---|---|---|---|
| | | ລວມ | ຊາຍ | ຍິງ | ຊາຍ | ຍິງ | |
| 1 | ກະສິກຳ (Agriculture) | 1622 | 758 | 864 | 45.25% | 54.75% | |
| 2 | ອຸດສາຫະກຳ (Industry) | 9376 | 8545 | 831 | 83.41% | 16.59% | |
| 3 | ບໍລິການ (Service) | 5710 | 1968 | 3742 | 28.72% | 71.28% | |
| **ລວມຈຳນວນນັກຮຽນທັງໝົດ** | | 16708 | 11271 | 5437 | 57.04% | 42.96% | |

ຈາກຕາຕະລາງທີ 1 ສະແດງໃຫ້ເຫັນວ່າ: ຜູ້ເຂົ້າຮຽນອາຊີວະສຶກສາໃນຂົງເຂດອາຊີບອຸດສາຫະກຳ ມີຈຳນວນຫຼາຍກວ່າໝູ່ ເທົ່າກັບ 56%, ຮອງລົງມາແມ່ນຜູ້ເຂົ້າຮຽນໃນຂົງເຂດອາຊີບບໍລິການ ເທົ່າກັບ 34% ແລະ ສຸດທ້າຍແມ່ນຂົງເຂດອາຊີບກະສິກຳ ເທົ່າກັບ 10%.

**ສະຖານອາຊີວະສຶກສາພາກເອກະຊົນ** ທີ່ຂຶ້ນກັບການຄຸ້ມຄອງດ້ານວິຊາການຂອງກົມອາຊີວະສຶກສາ ທັງໝົດ 59 ແຫ່ງ, ມີພະນັກງານ-ຄູອາຈານ ທັງໝົດ 405 ຄົນ, ຍິງ 182 ຄົນ ແລະ ມີນັກຮຽນ-ນັກສຶກສາ ທັງໝົດ 3,177 ຄົນ , ຍິງ 1,809 ຄົນ (ຖ້າທຽບໃສ່ສົກຮຽນ 2023-2024 ນັກຮຽນ-ນັກສຶກສາເພີ່ມຂຶ້ນ 773 ຄົນ ເທົ່າກັບ 32,15%) ຊຶ່ງແບ່ງຕາມຂະແໜງການດັ່ງນີ້:

- ຝຶກອົບຮົມໄລຍະສັ້ນ ມີນັກສຶກສາທັງໝົດ 533 ຄົນ, ຍິງ 332 ຄົນ;
- ຊັ້ນກາງ ມີນັກສຶກສາທັງໝົດ 24 ຄົນ, ຍິງ 0 ຄົນ;
- ຊັ້ນສູງ ມີນັກສຶກສາທັງໝົດ 2,620 ຄົນ, ຍິງ 1,477 ຄົນ.

ຕາຕະລາງທີ 19: **ຈຳນວນນັກຮຽນຂອງສະຖານອາຊີວະສຶກສາພາກເອກະຊົນ ແຍກຕາມຂົງເຂດອາຊີບ**

| ລ/ດ | ຂົງເຂດອາຊີບ | ຈຳນວນນັກຮຽນ (ຄົນ) | | | ຄິດເປັນເປີເຊັນ | | ໝາຍເຫດ |
|---|---|---|---|---|---|---|---|
| | | ລວມ | ຊາຍ | ຍິງ | ຊາຍ | ຍິງ | ລວມ |
| 1 | ກະສິກຳ (Agriculture) | 0 | 0 | 0 | | | |
| 2 | ອຸດສາຫະກຳ (Industry) | 50 | 50 | 0 | 100% | 0% | |
| 3 | ບໍລິການ (Service) | 3,127 | 1318 | 1,809 | 42% | 58% | |
| **ລວມຈຳນວນນັກຮຽນທັງໝົດ** | | 3,177 | 1368 | 1,809 | 43% | 57% | |

ຈາກຕາຕະລາງທີ 2 ສະແດງໃຫ້ເຫັນວ່າ: ຜູ້ເຂົ້າຮຽນອາຊີວະສຶກສາໃນຂົງເຂດອາຊີບບໍລິການ ມີຈຳນວນຫຼາຍກວ່າໝູ່ ເທົ່າກັບ 98%, ຮອງລົງມາແມ່ນຜູ້ເຂົ້າຮຽນໃນຂົງເຂດອາຊີບອຸດສາຫະກຳ ເທົ່າກັບ 02%, ແລະ ສຸດທ້າຍແມ່ນຂົງເຂດອາຊີບກະສິກຳ ເທົ່າກັບ 0%.

## 2. ຜົນສຳເລັດຜົນໄດ້ຮັບລະດັບສູງ

### 2.1. ຄຸນນະພາບ ແລະ ຈຳນວນນັກຮຽນທີ່ຈົບຈາກອາຊີວະສຶກສາ ທີ່ເຂົ້າສູ່ຕະຫຼາດແຮງງານທັງພາຍໃນ ແລະ ຕ່າງປະເທດ ສອດຄ່ອງກັບຄວາມຕ້ອງການຂອງແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ IX ແລະ ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ

ເພື່ອເປັນການສົ່ງເສີມໃຫ້ນັກຮຽນທີ່ຮຽນຈົບຊັ້ນມັດທະຍົມສຶກສາ ໄດ້ເຂົ້າຮຽນໃນສາຍອາຊີວະສຶກສາໃຫ້ຫຼາຍຂຶ້ນ ໃນສົກຮຽນ 2024-2025 ກະຊວງສຶກສາທິການ ແລະ ກິລາ ໂດຍການສະໜັບສະໜູນຈາກບັນດາຜູ້ໃຫ້ທຶນຕ່າງໆ ໄດ້ປັບປຸງການເຂົ້າຮຽນ ແລະ ຄຸນນະພາບຂອງການສຶກສາສາຍອາຊີວະສຶກສາ ໂດຍໄດ້ປັບປຸງພື້ນຖານໂຄງລ່າງ ແລະ ສະໜອງສິ່ງອຳນວຍຄວາມສະດວກຕ່າງໆ, ພ້ອມທັງສະໜອງອຸປະກອນຮັບໃຊ້ການຮຽນ ການສອນຕ່າງໆ ດັ່ງມີລາຍລະອຽດລຸ່ມນີ້:

- **ການປັບປຸງການເຂົ້າເຖິງການສຶກສາສາຍອາຊີວະສຶກສາ**
  1) ສຳເລັດການກໍ່ສ້າງ ແລະ ສ້ອມແປງອາຄານຮຽນ, ໂຮງຝຶກງານ ຢູ່ສະຖານອາຊີວະສຶກສາ 13 ແຫ່ງ;
  2) ສຳເລັດການສ້າງຫ້ອງໃຫ້ຄຳປຶກສາ ແລະ ຄຸ້ມຄອງການຮຽນທາງໄກ ຢູ່ສະຖານອາຊີວະສຶກສາ 14 ແຫ່ງ ພ້ອມທັງສະໜອງຊຸດອຸປະກອນເຕັກນິກ;
  3) ສຳເລັດການສະໜອງອຸປະກອນຫ້ອງຮຽນທັນສະໄໝ (Smart classroom) ໃຫ້ແກ່ສະຖານອາຊີວະສຶກສາ 05 ແຫ່ງ;
  4) ສຳເລັດການສະໜອງອຸປະກອນເຕັກນິກ ສຳລັບການຮຽນ ການສອນ ໃຫ້ແກ່ 26 ສະຖານອາຊີວະສຶກສາ;
  5) ສຳເລັດການການຊຸກຍູ້ ແລະ ສົ່ງເສີມສາມັນວິຊາຊີບ ໃນຮູບແບບການຈັດການຮຽນການສອນ ແບບຄວບຄູ່ ມີສະຖານອາຊີວະສຶກສາ 18 ແຫ່ງ ເປີດການຮຽນການສອນ, ລວມມີນັກຮຽນທັງໝົດ ຈຳນວນ 4,558 ຄົນ, ຍິງ 1,893 ຄົນ ໃນນັ້ນ, ມີນັກຮຽນ ມ.5 (C1) ຈຳນວນ 2,943 ຄົນ, ຍິງ 1,199 ຄົນ; ມ.6 (C2) ຈຳນວນ 1,085 ຄົນ, ຍິງ 475 ຄົນ; ມ.7 (C3) ຈຳນວນ 530 ຄົນ, ຍິງ 219 ຄົນ;
  6) ສຳເລັດການເກັບກຳສັງລວມຂໍ້ມູນຂ່າວສານ ຜ່ານລະບົບຖານຂໍ້ມູນ ຂ່າວສານອາຊີວະສຶກສາ www.emis.tved.edu.la ປະຈຳສົກຮຽນ 2024-2025;
  7) ສຳເລັດການປັບປຸງຄູ່ມື ການໃຫ້ຄຳແນະນຳອາຊີບ ແລະ ໃຫ້ຄຳປຶກສາດ້ານອາຊີບ ແລະ ຝຶກອົບຮົມເຜີຍແຜ່ຄູ່ມືດັ່ງກ່າວ;
  8) ສຳເລັດກອງປະຊຸມປຶກສາຫາລື ກ່ຽວກັບແຜນຮັບນັກສຶກສາ ແລະ ສັງລວມແຜນຮັບນັກສຶກສາ ຂອງ 26 ສະຖານອາຊີວະສຶກສາ ສົກຮຽນ 2025-2026;
  9) ສຳເລັດການລົງທະບຽນຮຽນ ຜ່ານລະບົບອອນລາຍ (Coursera Platfrom) ຈຳນວນ 500 ລາຍເຊັນ ໃນ 14 ສະຖານອາຊີວະສຶກສາ, ຈຳນວນເຂົ້າຮຽນ 1,484 ຫຼັກສູດ ແລະ ໄດ້ຮັບໃບຢັ້ງຢືນ ຈຳນວນ 492 ໃບ (ໃນໄລຍະ 6 ເດືອນ ຕົ້ນປີ 2025);
  10) ສຳເລັດບົດລາຍງານ ຜົນການຕິດຕາມຄວາມຄືບໜ້າການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ 05 ປີ 2021-2024 ຂອງ ກົມອາຊີວະສຶກສາ;
  11) ສຳເລັດບົດລາຍງານ ຜົນການຕິດຕາມການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ທົ່ວປະເທດ ປະຈຳສົກຮຽນ 2023-2024 ຂອງ ກົມອາຊີວະສຶກສາ;

12) ສຳເລັດການຝຶກອົບຮົມການນຳໃຊ້ປຶ້ມຄູ່ມື ປະກັນຄຸນນະພາບການສຶກສາ ສຳລັບສະຖານອາຊີວະສຶກສາ ໃຫ້ແກ່ເຄືອຂ່າຍສະຖານອາຊີວະສຶກສາ 3 ພາກ ທົ່ວປະເທດ;
13) ສຳເລັດການຈັດຈ້າງຊ່ຽວຊານ ເພື່ອຊ່ວຍໃນການປັບປຸງລະບົບຖານຂໍ້ມູນຂ່າວສານອາຊີວະສຶກສາ ໃຫ້ທັນສະໄໝ ແລະ ສາມາດເຊື່ອມໂຍງແລກປ່ຽນຂໍ້ມູນຂ່າວສານ ກັບ ລະບົບຂໍ້ມູນຂ່າວສານຕະຫຼາດແຮງງານ;
14) ສຳເລັດການຈັດຊື້ຈັດຈ້າງບໍລິສັດ ເພື່ອພັດທະນາລະບົບການຮຽນ ການສອນ ທາງໄກ ໃນສາຍອາຊີວະສຶກສາ (TVET E-Learning Platform);
15) ສຳເລັດການຈັດຈ້າງຊ່ຽວຊານ ໃນການຊ່ວຍພັດທະນາເນື້ອໃນໂມດູນຂອງຫຼັກສູດການຮຽນ ການສອນທາງໄກ ຢູ່ສະຖາບັນພັດທະນາອາຊີວະສຶກສາ;
16) ສຳເລັດການຈັດຈ້າງຊ່ຽວຊານ ເພື່ອຄົ້ນຄວ້າ ແລະ ປັບປຸງ ພາລະບົດບາດ, ໜ້າທີ່ ແລະ ໂຄງປະກອບການຈັດຕັ້ງຂອງສະພາທີ່ປຶກສາອາຊີວະສຶກສາ;
17) ສຳເລັດການສຳຫຼວດເກັບກຳຂໍ້ມູນເບື້ອງຕົ້ນ ກ່ຽວກັບລະບົບຖານຂໍ້ມູນຂ່າວສານອາຊີວະສຶກສາ ແລະ ລະບົບຖານຂໍ້ມູນຂ່າວສານຕະຫຼາດແຮງງານ ເພື່ອປັບປຸງ ແລະ ເຊື່ອມໂຍງຂໍ້ມູນຂ່າວສານ.

➢ **ການປັບປຸງຄຸນນະພາບການຮຽນ ການສອນ**

1) ສຳເລັດການປັບປຸງ ແລະ ພັດທະນາຫຼັກສູດອາຊີວະສຶກສາ ທັງໝົດ 40 ຫຼັກສູດ ໃນຈຳນວນ 12 ສາຂາອາຊີບ;
2) ສຳເລັດການສ້າງ ແລະ ພັດທະນາມາດຕະຖານອາຊີບ 21 ມາດຕະຖານອາຊີບ ໃນຂົງເຂດບໍລິການອາຫານ-ໂຮງແຮມ, ກະສິກຳ, ອຸດສາຫະກຳຍານພາຫະນະ, ຂໍ້ມູນຂ່າວສານ-ການສື່ສານ ແລະ ເຕັກໂນໂລຊີ ແລະ ການຂົນສົ່ງ;
3) ສຳເລັດການປັບປຸງ ແລະ ພັດທະນາຫຼັກສູດຄູອາຊີວະສຶກສາ ລະດັບປະລິນຍາຕີ ຈຳນວນ 28 ສາຂາອາຊີບ;
4) ສຳເລັດການພັດທະນາເຄື່ອງມື ການປະເມີນຄວາມເພິ່ງພໍໃຈຂອງຜູ້ຮຽນ, ຜູ້ໃຊ້ແຮງງານ, ຄູທີ່ໄດ້ຮັບການຝຶກອົບຮົມ ແລະ ການຕິດຕາມນັກສຶກສາຮຽນຈົບ;
5) ໄດ້ຈັດຕັ້ງປະຕິບັດການຮຽນ ການສອນ ຮູບແບບອາຊີວະສຶກສາແບບຄວບຄູ່ (DCT) ໃນ 16 ສະຖານອາຊີວະສຶກສາ, ມີນັກຮຽນ-ນັກສຶກສາ ສົກຮຽນ 2024-2025 ທັງໝົດ 4,058 ຄົນ, ຍິງ 470 ຄົນ;
6) ສຳເລັດການຈັດການຮຽນ ການສອນ ແບບເນັ້ນສະມັດຖະພາບ (CBT) ລະດັບຊັ້ນກາງ ແລະ ຊັ້ນສູງ ໃນ 113 ສາຂາອາຊີບ ລວມມີ 402 ຫຼັກສູດ;
7) ສຳເລັດກອງປະຊຸມປະຈຳປີ 2024 ຂອງໜ່ວຍງານກຸ່ມອາຊີບ 14 ກຸ່ມ;
8) ສຳເລັດກອງປະຊຸມສະໄໝສາມັນຂອງສະພາທີ່ປຶກສາອາຊີວະສຶກສາ ປະຈຳປີ 2024;
9) ສຳເລັດການສະເໜີຂໍອະນຸມັດແຕ່ງຕັ້ງຕຳແໜ່ງບໍລິຫານຂັ້ນ ຜູ້ອຳນວຍການ, ຮອງຜູ້ອຳນວຍການ, ຫົວໜ້າ/ຮອງຫົວໜ້າພະແນກ, ຫົວໜ້າ/ຮອງຫົວໜ້າພາກວິຊາ ຈຳນວນ 06 ແຫ່ງ: ວິທະຍາໄລເຕັກນິກສັບພະວິຊາ, ວິທະຍາໄລເຕັກນິກ-ວິຊາຊີບ ແຂວງຈຳປາສັກ, ວິທະຍາໄລເຕັກນິກ-ວິຊາຊີບ ຫຼວງພະບາງ, ວິທະຍາໄລເຕັກນິກລາວ-ເຢຍລະມັນ, ວິທະຍາໄລເຕັກນິກ-ວິຊາຊີບ ການລົດໄຟ, ວິທະຍາໄລເຕັກນິກ ແຂວງວຽງຈັນ;
10) ສຳເລັດການສ້າງ ແລະ ຍົກລະດັບຄູອາຊີວະສຶກສາ ພາຍໃນ ແລະ ຕ່າງປະເທດ ຈຳນວນ 58 ຄົນ, ຍິງ 23 ຄົນ ໃນນັ້ນ, ຈົບພາຍໃນປະເທດ ລະດັບຊັ້ນສູງ ຈຳນວນ 02 ຄົນ, ປະລິນຍາຕີ ຈຳນວນ 33 ຄົນ, ປະລິນຍາໂທ ຈຳນວນ 14 ຄົນ ແລະ ຈົບຈາກຕ່າງປະເທດ ປະລິນຍາເອກ 01 ຄົນ ແລະ ປະລິນຍາໂທ ຈຳນວນ 08 ຄົນ;
11) ບຸກຄະລາກອນອາຊີວະສຶກສາ ໄດ້ຜ່ານການຝຶກອົບຮົມ ຈຳນວນ 770 ເທື່ອຄົນ ໃນນັ້ນ, ຍົກລະດັບວິຊາສະເພາະ ຈຳນວນ 561 ເທື່ອຄົນ ແລະ ຝຶກອົບຮົມວິຊາຄູ ຈຳນວນ 309 ເທື່ອຄົນ (ພາຍໃນ 486 ເທື່ອຄົນ ແລະ ຕ່າງປະເທດ ຈຳນວນ 284 ເທື່ອຄົນ);
12) ສະຖານອາຊີວະສຶກສາ ໄດ້ຮ່ວມມືກັບສະຖານປະກອບການ ທັງໝົດ 452 ແຫ່ງ;

- ປັບປຸງຄຸນນະພາບຂອງການບໍລິຫານ ແລະ ຄຸ້ມຄອງວຽກງານອາຊີວະສຶກສາ
    1) ສໍາເລັດການສ້າງແຜນພັດທະນາວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ 2026-2030;
    2) ສໍາເລັດການສ້າງຄູ່ມືຈັດຕັ້ງປະຕິບັດກອງທຶນພັດທະນາອາຊີວະສຶກສາ;
    3) ສໍາເລັດການສ້າງນິຕິກໍາ ການຈັດຕັ້ງປະຕິບັດກອງທຶນພັດທະນາອາຊີວະສຶກສາ ຈໍານວນ 04 ນິຕິກໍາ ໃນນັ້ນ ມີ 01 ດໍາລັດ ແລະ 03 ຂໍ້ຕົກລົງ;
    4) ສໍາເລັດການຄົ້ນຄ້ວາປັບປຸງ ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງການຮຽນ ການສອນ ຜ່ານສື່ເອເລັກໂຕນິກໃນສາຍອາຊີວະສຶກສາ;
    5) ສໍາເລັດການຄົ້ນຄ້ວາຄູ່ມືລະຫັດອາຊີວະສຶກສາ (ລະຫັດສະຖານອາຊີວະສຶກສາ, ລະຫັດໝວດຫຼັກສູດ, ລະຫັດຫຼັກສູດ ແລະ ລະຫັດນັກສຶກສາ);
    6) ສໍາເລັດຂໍ້ຕົກລົງຮັບຮອງນັກຮຽນ-ນັກສຶກສາໃໝ່ ຂອງ 26 ສະຖານອາຊີວະສຶກສາ ປະຈໍາສົກຮຽນ 2024-2025.

## 3. ບັນຫາ ແລະ ສິ່ງທ້າທາຍ

1) ສະພາບການເຂົ້າຮຽນໃນສາຍອາຊີວະສຶກສາຍັງຕໍ່າ ຖ້າທຽບໃສ່ແຜນຮັບນັກສຶກສາ ຍ້ອນເສດຖະກິດຄອບຄົວຂອງຜູ້ປົກຄອງຍັງມີຄວາມຫຍຸ້ງຍາກ, ການຮັບສະໝັກແຮງງານທີ່ບໍ່ມີໃບຢັ້ງຢືນທາງດ້ານສີມືແຮງງານຍັງມີກວ້າງຂວາງທັງພາຍໃນ ແລະ ຕ່າງປະເທດ;
2) ຄູ ແລະ ຜູ້ບໍລິຫານສະຖານອາຊີວະສຶກສາຈໍານວນໜຶ່ງ ຍັງມີຂໍ້ຈໍາກັດໃນການຜັນຂະຫຍາຍຄວາມຮູ້, ຄວາມສາມາດ, ປະສົບການ ໃນການຈັດຕັ້ງການຮຽນ ການສອນຕົວຈິງ ແລະ ການປະເມີນຜົນຜູ້ຮຽນຈົບ ຍັງບໍ່ຄົບຖ້ວນຕາມມາດຕະຖານ ແລະ ເງື່ອນໄຂ ທີ່ກໍານົດໄວ້ໃນຫຼັກສູດ;
3) ພື້ນຖານໂຄງລ່າງ ແລະ ການນໍາໃຊ້ລະບົບໄອຊີທີ ເຂົ້າໃນການຮຽນການສອນທາງໄກຂອງສະຖານອາຊີວະສຶກສາຍັງຈໍາກັດ ແລະ ການນໍາໃຊ້ຊັບພະຍາກອນ ແລະ ສິ່ງອໍານວຍຄວາມສະດວກທີ່ມີຢູ່ ຍັງບໍ່ມີປະສິດທິພາບ ແລະ ປະສິດທິຜົນເທົ່າທີ່ຄວນ;
4) ການປະສານງານ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຍັງມີຂໍ້ຈໍາກັດ ແລະ ປະຕິບັດບໍ່ໄດ້ດີເທົ່າທີ່ຄວນ;
5) ການຮ່ວມມືທາງດ້ານວິຊາການ ກັບສະຖານປະກອບການ ແລະ ສະຖານການສຶກສາ ທັງພາຍໃນ ແລະ ຕ່າງປະເທດ ຍັງມີລັກສະນະກະແຈກກະຈາຍ, ບໍ່ລວມສູນ ແລະ ບໍ່ໄດ້ຮັບການຈັດຕັ້ງປະຕິບັດຢ່າງຄົບຖ້ວນ;
6) ການຈັດຕັ້ງປະຕິບັດການລົງທຶນຂອງພາກລັດ ບາງກິດຈະກໍາຍັງຊັກຊ້າ;
7) ການຈັດຕັ້ງປະຕິບັດບາງໂຄງການ ໂດຍສະເພາະການເບີກຈ່າຍເງິນເບ້ຍລ້ຽງນັກສຶກສາ, ເງິນຈັດຊື້ວັດຖຸສິ້ນເປືອງສໍາລັບຮັບໃຊ້ການຮຽນ ການສອນ ບາງຄັ້ງຍັງມີການຊັກຊ້າ.

## 4. ບູລິມະສິດສໍາລັບສົກຮຽນ 2025-2026

### 4.1. ຈຸດປະສົງ

1) ເພື່ອພັດທະນາລະບົບອາຊີວະສຶກສາ ໃນການສ້າງກໍາລັງແຮງງານໃຫ້ມີຄວາມຮູ້ຄວາມສາມາດ, ມີຄຸນສົມບັດສິນທໍາປະຕິວັດ ແລະ ມີຄ່ານິຍົມທີ່ຖືກຕ້ອງ, ມີນໍ້າໃຈຮັກປະເທດຊາດ, ຊື່ສັດບໍລິສຸດ, ມີລະບຽບວິໄນ, ມີສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈທີ່ດີ, ມີຄວາມຮັກຕໍ່ການຮຽນຮູ້ຕະຫຼອດຊີວິດ, ມີຄ່ານິຍົມຕໍ່ຮີດຄອງປະເພນີອັນດີງາມຂອງຊາດ, ຮັກຄວາມກ້າວໜ້າ ແລະ ມີວິທະຍາສາດ ເພື່ອໃຫ້ກາຍເປັນກໍາລັງແຮງງານທີ່ມີຄຸນນະພາບ, ສອດຄ່ອງ ແລະ ສາມາດຕອບສະໜອງໄດ້ກັບຄວາມຕ້ອງການຂອງຕະຫຼາດແຮງງານ ກໍ່ຄືຄວາມຮຽກຮ້ອງຕ້ອງການໃນການຂະຫຍາຍຕົວທາງດ້ານເສດຖະກິດຂອງຊາດ, ມີຄວາມພ້ອມທີ່ຈະຮ່ວມມື ແລະ ແຂ່ງຂັນກັບບັນດາປະເທດໃນພາກພື້ນ;
2) ເພື່ອພັດທະນາ ແລະ ປັບປຸງຫຼັກສູດອາຊີວະສຶກສາ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມຂອງປະເທດ ໂດຍສຸມໃສ່ຂະແໜງການທີ່ມີຄວາມຕ້ອງການສູງ ເຊັ່ນ: ການກໍ່ສ້າງ, ກະສິກໍາ,

ການສ້ອມແປງເຄື່ອງຈັກ, ການສ້າງຜະລິດຕະພັນ, ການທ່ອງທ່ຽວ ແລະ ການຕ້ອນຮັບ, ໄຟຟ້າ, ເຟີນີເຈີ ແລະ ລົດຍົນ. ລວມທັງບັນດາທັກສະຊີວິດທີ່ຈຳເປັນ ທີ່ສະໜັບສະໜູນວິຊາສະເພາະໃຫ້ມີຄວາມຄ່ອງຕົວໃນການປະກອບອາຊີບພາຍຫຼັງຮຽນຈົບ ເຊັ່ນ: ຄວາມຮູ້ກ່ຽວກັບເພດສຶກສາ, ທັກສະພື້ນຖານດ້ານການເງິນ, ການເປັນຜູ້ປະກອບການກິດຈະການ, ຄວາມຮູ້ກ່ຽວກັບການຕ້ານ ແລະ ສະກັດກັ້ນຢາເສບຕິດ, ການຕ້ານການສໍ້ລາດບັງຫຼວງ ແລະ ອື່ນໆ;

3) ເພື່ອເສີມຂະຫຍາຍຜົນການຮຽນ ແລະ ຫຼຸດຜ່ອນຄວາມແຕກໂຕນກັນ ໂດຍຜ່ານການຄຸ້ມຄອງຊັບພະຍາກອນທີ່ມີຢູ່ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
4) ເພື່ອເພີ່ມການເຂົ້າຮຽນ ແລະ ດັດສົມສັດສ່ວນການເຂົ້າຮຽນໃນສາຍອາຊີວະສຶກສາ ໂດຍເອົາໃຈໃສ່ເພດຍິງ ແລະ ກຸ່ມຜູ້ທີ່ດ້ອຍໂອກາດ ຫຼາຍຂຶ້ນ.

## 4.2. ຄາດໝາຍ

1) ມີນັກສຶກສາຫຼາຍກວ່າ 10,000 ຄົນ ທີ່ມີຜົນການຮຽນດີ ຮຽນຈົບຈາກສະຖານອາຊີວະສຶກສາ (ທັງພາກລັດ ແລະ ເອກະຊົນ) ຕາມຫຼັກສູດອາຊີວະສຶກສາ;
2) ຢ່າງໜ້ອຍ 80% ຂອງຈຳນວນຜູ້ຮຽນຈົບທັງໝົດ ມີວຽກເຮັດງານທຳທີ່ແທດເໝາະກັບຄວາມຕ້ອງການຂອງຂະແໜງການຕ່າງໆ ທັງເປັນທີ່ຍອມຮັບຂອງຜູ້ໃຊ້ແຮງງານ;
3) ມີຄູອາຊີວະສຶກສາໃໝ່ ຈຳນວນ 30 ຄົນ ຮຽນຈົບຈາກ ສະຖາບັນພັດທະນາອາຊີວະສຶກສາ;
4) ຢ່າງໜ້ອຍ 300 ຄົນ ໄດ້ຮັບການຍົກລະດັບ ທາງດ້ານວິຊາຄູ ແລະ ວິຊາສະເພາະ;
5) ຫຼັກສູດລະດັບຕ່າງໆ ຂອງອາຊີບໃໝ່ ຢ່າງໜ້ອຍ 06 ຫຼັກສູດໄດ້ຮັບການພັດທະນາ ແລະ ຮັບຮອງ;
6) ຄຸນນະພາບຂອງວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ມີຄວາມເຂັ້ມແຂງ, ສະຖານອາຊີວະສຶກສາທຸກແຫ່ງໄດ້ຮັບການປະເມີນຕົນເອງ ໃນແຕ່ລະປີ, ການປະເມີນພາຍໃນ ຢ່າງໜ້ອຍ 03 ແຫ່ງ ແລະ ການປະເມີນພາຍນອກ ຢ່າງໜ້ອຍ 03 ແຫ່ງ;
7) ມີການຮ່ວມມືລະຫວ່າງສະຖານອາຊີວະສຶກສາ ແລະ ສະຖານປະກອບການ ຢ່າງໜ້ອຍ 05 ແຫ່ງ ໃນການຊຸກຍູ້ວຽກງານອາຊີວະສຶກສາ, ໃນນັ້ນ ຈັດຕັ້ງປະຕິບັດຫຼັກສູດ ຢ່າງໜ້ອຍ 3 ສະຖານປະກອບການ ຕໍ່ຫຼັກສູດ;
8) ກົດໝາຍ ວ່າດ້ວຍອາຊີວະສຶກສາ ໄດ້ຮັບການປັບປຸງ;
9) ສະຖານອາຊີວະສຶກສາ ຢ່າງໜ້ອຍ 01 ແຫ່ງ ໄດ້ຮັບການພັດທະນາຂີດຄວາມສາມາດທາງດ້ານການເງິນ ແລະ ລາຍຮັບວິຊາການ
10) ອັດຕາຄູຝຶກທີ່ໄດ້ຮັບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ 75 ຄົນ ຕໍ່ປີ.

## 4.3. ຄຸນນະພາບ ແລະ ຈຳນວນນັກສຶກສາທີ່ສຳເລັດການສຶກສາໃນສາຍອາຊີວະສຶກສາ ທີ່ເຂົ້າສູ່ຕະຫຼາດແຮງງານທັງພາຍໃນ ແລະ ຂົງເຂດພາກພື້ນ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງແຜນພັດທະນາເສດຖະກິດສັງຄົມ ຄັ້ງທີ IX ແລະ ການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ

➢ **ການປັບປຸງການເຂົ້າເຖິງການສຶກສາສາຍອາຊີວະສຶກສາ**

1) ສືບຕໍ່ຈັດຕັ້ງປະຕິບັດໂຄງການກໍ່ສ້າງຫໍສະໝຸດ ຂອງ ວິທະຍາໄລເຕັກນິກກະສິກຳດົງຄຳຊ້າງ ແລະ ໂຄງການສ້ອມແປງຫໍພັກນັກສຶກສາ (7A) ຂອງ ວິທະຍາໄລເຕັກນິກສັບພະວິຊາ;
2) ສືບຕໍ່ຈັດຕັ້ງປະຕິບັດໂຄງການກໍ່ສ້າງ (ອາຄານຮຽນ, ຫ້ອງການບໍລິຫານ, ຫ້ອງສະໝຸດ, ຫໍພັກ, ສະໂມສອນ ແລະ ຫ້ອງອາຫານ) ຂອງ ວິທະຍາໄລເຕັກນິກ-ວິຊາຊີບ ສະຫວັນນະເຂດ (ວິທະຍາເຂດເຊໂປນ) ໂດຍນຳໃຊ້ງົບປະມານລັດຖະບານ ສສ. ຫວຽດນາມ;
3) ສືບຕໍ່ສຶກສາຄວາມເປັນໄປໄດ້ໃນການຍົກສະຖານະ ວິທະຍາເຂດເຊໂປນ, ວິທະຍາໄລເຕັກນິກ-ວິຊາຊີບ ສະຫວັນນະເຂດ ໃຫ້ເປັນ ໂຮງຮຽນເຕັກນິກ-ວິຊາຊີບ ເມືອງເຊໂປນ;

4) ສືບຕໍ່ປັບປຸງລະບົບ ແລະ ເກັບກຳຂໍ້ມູນສະຖິຕິ ແບບລວມສູນ ດ້ວຍລະບົບຖານຂໍ້ມູນຂ່າວສານ ຂອງສະຖານອາຊີວະສຶກສາ ພາກລັດ ແລະ ພາກເອກະຊົນ;
5) ສືບຕໍ່ຝຶກອົບຮົມການນຳໃຊ້ລະບົບຖານຂໍ້ມູນຂ່າວສານອາຊີວະສຶກສາ ໃຫ້ແກ່ສະຖານອາຊີວະສຶກສາ;
6) ສືບຕໍ່ຈັດກອງປະຊຸມວາງແຜນຮັບນັກຮຽນ-ນັກສຶກສາ ຂອງ 26 ສະຖານອາຊີວະສຶກສາ ສົກຮຽນ 2026-2027;
7) ສືບຕໍ່ຈັດການຮຽນ ການສອນ ຜ່ານລະບົບອອນລາຍ Coursera Platfrom ຈຳນວນ 500 ລາຍເຊັນ ໃນ 14 ສະຖານອາຊີວະສຶກສາ;
8) ພັດທະນາລະບົບການຮຽນ ການສອນ ທາງໄກ ໃນສາຍອາຊີວະສຶກສາ TVET E-Learning Platform ໃຫ້ໄດ້ຢ່າງໜ້ອຍ 10 ໂມດູນ.

➢ **ການປັບປຸງຄຸນນະພາບການຮຽນການສອນ**

1) ສືບຕໍ່ກະກຽມເຜີຍແຜ່ດຳລັດ ວ່າດ້ວຍກອງທຶນພັດທະນາອາຊີວະສຶກສາ ແລະ ຈັດຕັ້ງປະຕິບັດ ພ້ອມທັງມີບົດລາຍງານການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດກອງທຶນ ປະຈຳປີ;
2) ສືບຕໍ່ເຊື່ອມໂຍງລະບົບຂໍ້ມູນຂ່າວສານອາຊີວະສຶກສາ ແລະ ຂໍ້ມູນຂ່າວສານ ຕະຫຼາດແຮງງານ ຮ່ວມກັບກົມຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
3) ສືບຕໍ່ເຜີຍແຜ່ການນຳໃຊ້ລະຫັດອາຊີວະສຶກສາ (ລະຫັດສະຖານອາຊີວະສຶກສາ, ລະຫັດໝວດຫຼັກສູດ, ລະຫັດຫຼັກສູດ ແລະ ລະຫັດນັກສຶກສາ) ເພື່ອເກັບກຳຂໍ້ມູນແບບລວມສູນ ແລະ ເຊື່ອມໂຍງຂໍ້ມູນຂ່າວສານກັບພາຍນອກ;
4) ສືບຕໍ່ສຳຫຼວດຕິດຕາມ, ລາຍງານ ແລະ ເຜີຍແຜ່ ຜົນການຕິດຕາມນັກຮຽນ-ນັກສຶກສາຮຽນຈົບ ໃນສາຍອາຊີວະສຶກສາ ສົກຮຽນ 2023-2025;
5) ສືບຕໍ່ລົງໂຄສະນາເຜີຍແຜ່ແນະແນວວິຊາຊີບ ແລະ ໃຫ້ຄຳປຶກສາດ້ານອາຊີບ ຂອງສະຖານອາຊີວະສຶກສາ ສົກຮຽນ 2025 - 2026;
6) ຕິດຕາມຊຸກຍູ້ການບໍລິຫານນຳໃຊ້ຫ້ອງໃຫ້ຄຳປຶກສາດ້ານອາຊີບ ແລະ ຄຸ້ມຄອງການຮຽນທາງໄກ;
7) ສືບຕໍ່ຕິດຕາມການພັດທະນາ, ຈັດຝຶກອົບຮົມ ແລະ ທົດລອງການນຳໃຊ້ລະບົບ TVET E-Learning platform ໃນສາຍອາຊີວະສຶກສາ;
8) ສືບຕໍ່ຕິດຕາມການນຳໃຊ້ປຶ້ມຄູ່ມືປະກັນຄຸນນະພາບການສຶກສາ ສຳລັບສະຖານອາຊີວະສຶກສາ ໃນການຂຽນບົດປະເມີນຕົນເອງ ສຳພາກກາງ, ພາກໃຕ້ ແລະ ພາກເໜືອ;
9) ສືບຕໍ່ຈັດຕັ້ງປະຕິບັດຂະບວນການສະເໜີຂໍຕຳແໜ່ງວິຊາການຄູ ໃຫ້ໄດ້ 01% ຂອງຈຳນວນຄູສອນອາຊີວະສຶກສາພາກລັດ ໃນຂອບເຂດທົ່ວປະເທດ;
10) ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງ-ບໍລິຫານວຽກງານອາຊີວະສຶກສາໃຫ້ແກ່ຜູ້ບໍລິຫານສະຖານອາຊີວະສຶກສາ ແລະ ຄູສອນທາງດ້ານວິຊາສະເພາະ ແລະ ວິຊາຄູໃນສາຍອາຊີວະສຶກສາຢ່າງໜ້ອຍ 300 ຄົນ;
11) ສືບຕໍ່ສ້າງ ແລະ ບຳລຸງຄູອາຊີວະສຶກສາ ຢ່າງໜ້ອຍໃຫ້ໄດ້ 30 ຄົນ ຕາມ 05 ພາກວິຊາ ໃນສະຖາບັນພັດທະນາອາຊີວະສຶກສາ;
12) ສືບຕໍ່ສົ່ງເສີມການຮຽນຮູ້ວິຊາສະເພາະອັນໃໝ່ ເຊັ່ນ: ທັກສະໄອຊີທີ, ເຕັກໂນໂລຊີ, ເພື່ອຮັບໃຊ້ໃນການຈັດການຮຽນ ການສອນ ຂອງພະນັກງານຄູອາຈານ ແລະ ນັກສຶກສາ;
13) ສືບຕໍ່ສົ່ງເສີມການຝຶກອົບຮົມຍົກລະດັບວິຊາສະເພາະຄູ ຜ່ານທາງອອນລາຍ Coursera platform;
14) ສືບຕໍ່ຍົກຖານະໂຮງຮຽນເຕັກນິກ-ວິຊາຊີບ ຂຶ້ນເປັນ ວິທະຍາໄລເຕັກນິກ-ວິຊາຊີບ ໃຫ້ໄດ້ 01 ແຫ່ງ;
15) ສືບຕໍ່ຮ່ວມມືກັບພາກເອກະຊົນໃນການເຮັດກິດຈະກຳສົ່ງເສີມການມີວຽກເຮັດງານທຳ ໃຫ້ແກ່ນັກສຶກສາທີ່ຈະຮຽນຈົບ;

16) ສືບຕໍ່ຈັດກອງປະຊຸມແລກປ່ຽນປະສົບການຂອງຜູ້ປະກອບການທີ່ປະສົບຜົນສຳເລັດ ໃຫ້ແກ່ນັກສຶກສາປີສຸດທ້າຍໃນສະຖານອາຊີວະສຶກສາ 02 ຄັ້ງຕໍ່ປີ;
17) ສືບຕໍ່ປັບປຸງເນື້ອໃນຄວາມຮູ້ພື້ນຖານກ່ຽວກັບການປະກອບກິດຈະການ ສອດແຊກເຂົ້າໃນຫຼັກສູດອາຊີວະສຶກສາ ລະດັບຊັ້ນກາງ ແລະ ຊັ້ນສູງ, ແຕ່ລະສະຖານອາຊີວະສຶກສາມີຄູໄດ້ຮັບການຝຶກອົບຮົມກ່ຽວກັບການປະກອບກິດຈະການ ຢ່າງໜ້ອຍ 01 ຄົນ.

➢ **ການປັບປຸງຄຸນນະພາບຂອງການບໍລິຫານ ແລະ ຄຸ້ມຄອງວຽກງານອາຊີວະສຶກສາ**

1) ປັບປຸງ ກົດໝາຍ ວ່າດ້ວຍອາຊີວະສຶກສາ (ສະບັບປັບປຸງ ປີ 2019);
2) ສືບຕໍ່ຄົ້ນຄວ້າ ແລະ ປັບປຸງນິຕິກຳ ວ່າດ້ວຍມາດຕະຖານຫຼັກສູດອາຊີວະສຶກສາແຫ່ງຊາດ;
3) ສືບຕໍ່ຄົ້ນຄວ້າ ແລະ ປັບປຸງນິຕິກຳ ວ່າດ້ວຍການສອບເສັງ, ການທົດສອບ, ການອອກໃບປະກາສະນິຍະບັດ ແລະ ໃບຢັ້ງຢືນ (ສະບັບປັບປຸງ);
4) ສືບຕໍ່ສ້າງຄູ່ມື ແລະ ມາດຕະຖານ ຜູ້ບໍລິຫານອາຊີວະສຶກສາ;
5) ສືບຕໍ່ພັດທະນາ ນິຕິກຳຄຸ້ມຄອງ (Concept) ການຮຽນການສອນ ສາມັນວິຊາຊີບ;
6) ສືບຕໍ່ປັບປຸງກົງຈັກການຈັດຕັ້ງ ແລະ ຕຳແໜ່ງງານຂອງກົມອາຊີວະສຶກສາ ແລະ ສະຖານອາຊີວະສຶກສາ;
7) ສືບຕໍ່ຄົ້ນຄວ້າ ແລະ ປັບປຸງນິຕິກຳ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາທີ່ປຶກສາອາຊີວະສຶກສາ (ສະບັບປັບປຸງ) ໂດຍສະເພາະພາລະບົດບາດ ແລະ ໜ້າທີ່ ໃຫ້ສອດຄ່ອງຕາມກົດໝາຍອາຊີວະສຶກສາ (ສະບັບປັບປຸງ);
8) ສືບຕໍ່ປັບປຸງພາລະບົດບາດ, ໜ້າທີ່ ແລະ ໂຄງປະກອບການຈັດຕັ້ງ ຂອງ ສະພາທີ່ປຶກສາອາຊີວະສຶກສາຂັ້ນແຂວງ 03 ແຂວງ ຄື: ແຂວງຫຼວງພະບາງ, ແຂວງສະຫວັນນະເຂດ ແລະ ແຂວງຈຳປາສັກ;
9) ສືບຕໍ່ຄົ້ນຄວ້າຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງໜ່ວຍງານກຸ່ມອາຊີບ (ສະບັບປັບປຸງ);
10) ສືບຕໍ່ຈັດກອງປະຊຸມສະໄໝສາມັນ ຂອງສະພາທີ່ປຶກສາອາຊີວະສຶກສາແຫ່ງຊາດ ຢ່າງໜ້ອຍ 01 ຄັ້ງ/ປີ;
11) ສືບຕໍ່ສ້າງຄວາມເຂັ້ມແຂງດ້ານການຄຸ້ມຄອງບໍລິຫານ, ICT ແລະ ພາສາຕ່າງປະເທດ ໃຫ້ແກ່ຜູ້ທີ່ມີຕຳແໜ່ງບໍລິຫານ ປະເພດ 04 ຫາ 07 ຢ່າງໜ້ອຍໃຫ້ໄດ້ 150 ຄົນ;
12) ສືບຕໍ່ຮ່ວມມື ລະຫວ່າງ ສະຖານອາຊີວະສຶກສາ ແລະ ສະຖານປະກອບການ ຢ່າງໜ້ອຍໃຫ້ໄດ້ 03 ສະຖານປະກອບການ ຕໍ່ 01 ສາຂາອາຊີບ/ສາຂາວິຊາ;
13) ສືບຕໍ່ຊຸກຍູ້ສົ່ງເສີມສະຖານອາຊີວະສຶກສາ ໃຫ້ມີການຮ່ວມມືກັບສະຖານການສຶກສາພາຍໃນ ໃຫ້ໄດ້ 01 ແຫ່ງ ແລະ ສະຖານການສຶກສາຕ່າງປະເທດ ໃຫ້ໄດ້ 01 ແຫ່ງ, ພ້ອມທັງມີແຜນປະຕິບັດງານຮ່ວມກັນ;
14) ສືບຕໍ່ສຶກສາຄວາມເປັນໄປໄດ້ ໃນການພັດທະນາຂີດຄວາມສາມາດດ້ານການເງິນ ຂອງສະຖານອາຊີວະສຶກສາ ໃຫ້ໄດ້ຢ່າງໜ້ອຍ 01 ແຫ່ງ.

## XIII. ຂະແໜງການຍ່ອຍການສຶກສາຊັ້ນສູງ

### 1. ສະພາບລວມ

ໃນສົກສຶກສາ 2024-2025 ມີສະຖານການສຶກສາຊັ້ນສູງ ພາກລັດ ແລະ ເອກະຊົນ ທັງໝົດ 27 ແຫ່ງ, ເຊິ່ງລວມມີ ມະຫາວິທະຍາໄລ 06 ແຫ່ງ (ຕ່າງປະເທດລົງທຶນ 01 ແຫ່ງ), ວິທະຍາຄານ 08 ແຫ່ງ (ປກສ 03 ແຫ່ງ ແລະ ປກຊ 05 ແຫ່ງ), ສະຖາບັນການສຶກສາຊັ້ນສູງພາກລັດ 05 ແຫ່ງ ແລະ ສະຖານການສຶກສາຊັ້ນສູງ ພາກເອກະຊົນ 08 ແຫ່ງ, ໃນສົກສຶກສາ 2024-2025 ມີນັກສຶກສາທີ່ຈົບທັງໝົດມີຈຳນວນ 38,841 ຄົນ, ຍິງ 20,097 ຄົນ, ທຽບໃສ່ປີຜ່ານມາ ມີຈຳນວນຫຼຸດລົງ 9,037 ຄົນ (19%). ສະເພາະນັກສຶກສາມາລົງທະບຽນເຂົ້າຮຽນ ປີທີ 1 ມີທັງໝົດ 10.797 ຄົນ, ຍິງ 5,089 ຄົນ (47%), ທຽບກັບປີຜ່ານມາ ເພີ່ມຂຶ້ນ 991 ຄົນ (12%). ສ່ວນນັກສຶກສາ ທີ່ຮຽນຈົບທັງໝົດ ໃນປີ 2024 (ສົກສຶກສາ 2023-2024) ມີຈຳນວນ 10,816 ຄົນ, ຍິງ 5,749 ຄົນ (53%).

ສະເພາະນັກສຶກສາຈົບ ໃນສົກປີ 2023-2024 ຈາກມະຫາວິທະຍາໄລ 04 ແຫ່ງ ທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ ມີຈຳນວນ 7.956 ຄົນ, ຍິງ 4,033 ຄົນ, ສະຖາບັນການສຶກສາທີ່ຂຶ້ນກັບກະຊວງອື່ນ ມີຈຳນວນ 2.270 ຄົນ, ຍິງ 1.418 ຄົນ ແລະ ນັກສຶກສາພາກເອກະຊົນມີຈຳນວນ 509 ຄົນ, ຍິງ 298 ຄົນ (ບໍ່ລວມນັກສຶກສາຂອງບັນດາວິທະຍາຄານຂອງກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ, ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ແລະ ວິທະຍາໄລຄູທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ).

**ຕາຕະລາງທີ 20: ຕົວຊີ້ບອກການສຶກສາຊັ້ນສູງ (ແຜນ 2021-2025 ແລະ ບົດປະເມີນກາງສະໄໝ)**

| ຕົວຊີ້ບອກ | ປີຖານ (2020/21) | ປະຕິບັດໄດ້ (2024/25) |
|---|---|---|
| ຈຳນວນນັກຮຽນທັງໝົດທີ່ເຂົ້າຮຽນໃນການສຶກສາຊັ້ນສູງ<br>1. ພາຍໃນ<br>2. ຕ່າງປະເທດ | <br>50,103<br>2,959 | <br>38,841<br>4,653 |
| ຈຳນວນນັກສຶກສາສາຍ STEM ທີ່ຈົບຈາກສະຖານການສຶກສາຊັ້ນສູງ (4 ມະຫາວິທະຍາໄລ) | 5,436 | 3,847<br>(ສົກ 2023-2024) |
| ຈຳນວນນັກສຶກສາຈົບການສຶກສາກ່ຽວກັບວິຊາ STEM (ປະລິນຍາຕີ ຫຼື ສູງກວ່າ) ຈາກມະຫາ-ວິທະຍາໄລຂອງລັດພາຍໃນປະເທດ ບັນລຸ 20,000 ຄົນ | 12,418<br>(5 ປີ 2015-2020) | 18,267<br>(4 ປີ 2021-2024) |
| ດັດຊະນີຄວາມສະເໝີພາບຍິງ-ຊາຍສໍາລັບຈໍາ-ນວນນັກຮຽນ ຮຽນຈົບຈາກມະຫາວິທະຍາໄລຂອງລັດພາຍໃນປະເທດ ບັນລຸສູງກວ່າ 0.90 | ດັດສະນີ 0.89<br>(47.23%) | ດັດສະນີ 1.08<br>(52%) |
| ໄດ້ມີການສຶກສາຄວາມເປັນໄປໄດ້ໃນການສ້າງຕັ້ງສະຖາບັນເຕັກໂນໂລຊີ | ມີບົດສຶກສາຄວາມເປັນໄປໄດ້ໃນການສ້າງສະຖາບັນເຕັກໂນໂລຊີ | ສືບຕໍ່ສ້າງຄວາມເຂັ້ມແຂງ ພື້ນຖານໂຄງລ່າງ, ສິ່ງອານວຍຄວາມສະດວກ, ການຮຽນການສອນ, |

| ຕົວຊີ້ບອກ | ປີຖານ (2020/21) | ປະຕິບັດໄດ້ (2024/25) |
|---|---|---|
| | | ປັບປຸງຫຼັກສູດ ຂອງພາກວິຊາ ແລະ ຍົກລະດັບ ວິຊາສະເພາະ (ປະລິນຍາໂທ, ປະລິນຍາເອກ) |
| ນັກສຶກສາໃນສາຍວິທະຍາສາດທຳມະຊາດ, ເຕັກໂນໂລຊີ ແລະ ວິສະວະກຳ ເພີ່ມຂຶ້ນ 50% ທຽບໃສ່ນັກຮຽນສາຍອື່ນໆ ແລະ ຄຸນນະພາບການຮຽນການສອນໄດ້ຮັບການປັບປຸງ | 4,189 (21.30%) ຈຳນວນນັກສຶກສາເຂົ້າຮຽນໃໝ່ທັງໝົດທຸກສະຖາບັນ 19.661 ຄົນ | 3,147 (29.14%) ຈຳນວນນັກສຶກສາເຂົ້າຮຽນໃໝ່ທັງໝົດທຸກສະຖາບັນ 10.797 ຄົນ |
| ສູນແຫ່ງຄວາມເປັນເລີດທັງ 4 ແຫ່ງ ຢູ່ມະຫາວິ-ທະຍາໄລ ໄດ້ຮັບການປະເມີນ | ໄດ້ສຳເລັດການສ້າງສູນຄວາມເປັນເລີດ | 4 ມລ ກຳລັງປະເມີນ ສູນຄວາມເປັນເລີດ |
| ທີມງານຕິດຕາມການຈ້າງງານໃນແຕ່ລະຄະນະວິຊາຖືກສ້າງຕັ້ງຂຶ້ນ | ເຄື່ອງມືຕິດຕາມຜູ້ສຳເລັດການສຶກສາ ຕາມຄະນະວິຊາ | ມະຫາວິທະຍາໄລໄດ້ມີການຕິດຕາມ ການຈ້າງງານ ຕາມສາຂາວິຊາ ແລະ ປັບປຸງຫຼັກສູດ ໃຫ້ສອດຄ່ອງກັບຕະຫຼາດແຮງງານ |
| ການປະເມີນຄຸນນະພາບພາຍໃນດຳເນີນ ປີ ລະຄັ້ງ | ສະຖານການສຶກສາຊັ້ນສູງໄດ້ມີການປະກັນຄຸນນະພາບພາຍໃນ ປີ ລະຄັ້ງ | ສືບຕໍ່ ການປະກັນຄຸນນະພາບພາຍໃນ ສະຖານການສຶກສາຊັ້ນສູງ |
| ດຳເນີນການທົດລອງຄວາມເປັນເຈົ້າຕົນເອງທາງດ້ານການເງິນຂອງສະຖານການສຶກສາຊັ້ນສູງ ໂດຍລິເລີ່ມຢູ່ມະຫາວິທະຍາໄລແຫ່ງຊາດ | ບໍ່ມີຂໍ້ມູນ | ສືບຕໍ່ດຳເນີນການທົດລອງຄວາມເປັນເຈົ້າຕົນເອງທາງດ້ານການເງິນ |
| ຕຳແໜ່ງວິຊາການຂອງອາຈານສອນໃນສະຖາບັນການສຶກສາຊັ້ນສູງ ແມ່ນໄດ້ຖືກຮັບຮອງໂດຍອີງໃສ່ຕາມຄຸນນະພາບ ແລະ ມາດຕະຖານທີ່ໄດ້ກຳນົດໄວ້ໃນດຳລັດວ່າດ້ວຍຕຳແໜ່ງວິຊາການຂອງອາຈານສອນ ສະບັບເລກທີ 03 | ໄດ້ປັບປຸງດຳລັດວ່າດ້ວຍຕຳແໜ່ງວິຊາການຄູ; ຈຳນວນຄູທີ່ໄດ້ຮັບການແຕ່ງຕັ້ງຕຳແໜ່ງວິຊາການຄູໃນປີ 2021 ມີ:<br>ຊອ: 24<br>ອຈ: 35<br>ຣສ: 17<br>ສຈ: 05 | ຈຳນວນຄູທີ່ໄດ້ຮັບການແຕ່ງຕັ້ງຕຳແໜ່ງວິຊາການຄູ ໃນສົກ 2024-2025 ມີ:<br>ຊອ: 87<br>ອຈ: 59<br>ຣສ: 37<br>ສຈ: 04 |

**2. ຜົນສຳເລັດຜົນໄດ້ຮັບລະດັບສູງ**

**2.1 ຄຸນນະພາບ ແລະ ຈຳນວນນັກສຶກສາ ທີ່ສຳເລັດການສຶກສາໃນສາຍການສຶກສາຊັ້ນສູງ ທີ່ເຂົ້າສູ່ຕະຫຼາດແຮງງານທັງພາຍໃນ ແລະ ຂົງເຂດພາກພື້ນ ໃຫ້ສອດຄ່ອງກັບຄວາມຕ້ອງການ ຂອງແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ IX ແລະ ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ**

1) ໃນສົກສຶກສາ 2024-2025, ກະຊວງສຶກສາທິການ ແລະ ກິລາ ໄດ້ສືບຕໍ່ນະໂຍບາຍໃຫ້ທຶນ ການສຶກສາ ແກ່ນັກຮຽນເກັ່ງ, ຜູ້ດ້ອຍໂອກາດ ແລະ ຊົນເຜົ່າ ໃນລະດັບ ອະນຸປະລິນຍາ ແລະ ປະລິນຍາຕີ ເຂົ້າຮຽນ ໃນມະຫາວິທະຍາໄລ 04 ແຫ່ງ ທີ່ຂຶ້ນກັບ ກະຊວງສຶກສາທິການ ແລະ ກິລາ. ຜ່ານການລົງທະບຽນເຂົ້າຮຽນ ຕົວຈິງ

ມີນັກສຶກສາປີທີ 1 ຢູ່ ມະຫາວິທະຍາໄລ 04 ແຫ່ງ ທີ່ໄດ້ຮັບທຶນລັດຖະບານ ຈຳນວນ 525 ຄົນ, ຍິງ 226 ຄົນ, ສອບເສັງ ແລະ ຈ່າຍຄ່າຮຽນດ້ວຍຕົນເອງ ຈຳນວນ 4.572 ຄົນ, ຍິງ 2.201 ຄົນ, ຊຶ່ງຕົວເລກດັ່ງກ່າວແມ່ນ ຄິດໄລ່ເປັນອັດຕາສ່ວນ 10% ແມ່ນໄດ້ຮັບທຶນການສຶກສາ ແລະ 90% ສອບເສັງ-ຈ່າຍຄ່າຮຽນດ້ວຍຕົນເອງ;

2) ສືບຕໍ່ປະຕິບັດນະໂຍບາຍສົ່ງເສີມຄວາມສະເໝີພາບຍິງ-ຊາຍ ໃນການເຂົ້າຮຽນຢູ່ສະຖາບັນການສຶກສາຊັ້ນສູງ ຊຶ່ງ ສາມາດປະຕິບັດໄດ້ຕາມຄາດໝາຍທີ່ວາງໄວ້ ໃນອັດຕາສ່ວນ ນັກສຶກສາເພດຍິງ 48% ຂອງນັກສຶກສາທັງໝົດ ໃນມະຫາວິທະຍາໄລ 04 ແຫ່ງ ທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ;
3) ໄດ້ສືບຕໍ່ຊຸກຍູ້ການເຂົ້າຮຽນໃນສາຍວິທະຍາສາດ, ເຕັກໂນໂລຊີ, ວິສະວະກຳສາດ ແລະ ຄະນິດສາດ (STEM) ເຊິ່ງບັນລຸໄດ້ 3.147 ຄົນ ໃນສະຖາບັນການສຶກສາຊັ້ນສູງແຫ່ງຕ່າງໆ ທັງພາກລັດ ແລະ ເອກະຊົນ, ສູງກວ່າ ຄາດໝາຍທີ່ກຳນົດໄວ້ 26% (ຄາດໝາຍ 2.500 ຄົນ ຕໍ່ປີຕາມມະຕິຂອງສະພາແຫ່ງຊາດ);
4) ໄດ້ສຳເລັດການຊຸກຍູ້ໃຫ້ສະຖາບັນການສຶກສາຊັ້ນສູງເອົາໃຈໃສ່ຄົ້ນຄວ້າວິທີການແກ້ໄຂບັນຫາການຫຼຸດລົງຂອງນັກ ສຶກສາທີ່ສະໝັກເຂົ້າຮຽນໃນແຕ່ລະປີ. ຜ່ານການຈັດຕັ້ງປະຕິບັດ ຂອງສະຖາບັນການສຶກສາຊັ້ນສູງ ເພື່ອແກ້ໄຂ ບັນຫາດັ່ງກ່າວ, ເຮັດໃຫ້ໃນສົກສຶກສາ 2024-2025 ມີນັກສຶກສາມາລົງທະບຽນເຂົ້າຮຽນ ປີທີ 1 ເພີ່ມຂຶ້ນ 12% ທຽບໃສ່ປີຜ່ານມາ;
5) ສຳເລັດລົງຕິດຕາມຊຸກຍູ້ສົ່ງເສີມໃນການຈັດຕັ້ງການຮຽນການສອນຂອງສະຖາບັນການສຶກສາຊັ້ນສູງ ທັງພາກລັດ ແລະ ເອກະຊົນ;
6) ສຳເລັດລົງຕິດຕາມຊຸກຍູ້ສົ່ງເສີມໃນການຈັດຕັ້ງການຮຽນການສອນຂອງສະຖາບັນການສຶກສາຊັ້ນສູງພາກເອກະ ຊົນ;
7) ໄດ້ສຳເລັດຊຸກຍູ້ໃຫ້ສະຖາບັນການສຶກສາຊັ້ນສູງສືບຕໍ່ປັບປຸງຫຼັກສູດຕາມມາດຕະຖານຫຼັກສູດແຫ່ງຊາດສະບັບປີ 2020 ແຕ່ລະດັບອະນຸປະລິນຍາ ເຖິງ ປະລິນຍາເອກ ພ້ອມທັງສົ່ງເສີມການສ້າງຫຼັກສູດໃໝ່ທີ່ສອດຄ່ອງກັບ ຄວາມຕ້ອງການຂອງສັງຄົມ. ຜ່ານການ ຈັດຕັ້ງປະຕິບັດຕົວຈິງ ໃນສົກຮຽນ 2024-2025, ມີຫຼັກສູດສ້າງໃໝ່ ຈຳ ນວນ 28 ຫຼັກສູດ (ລະດັບປະລິນຍາຕີ ຈຳນວນ 06 ຫຼັກສູດ, ຊ່ຽວຊານຂັ້ນ II ຈຳນວນ 04 ຫຼັກສູດ, ຊ່ຽວຊານ ຂັ້ນ I ຈຳນວນ 01 ຫຼັກສູດ ແລະ ລົງເລິກຂະແໜງວິຊາ ຈຳນວນ 01 ຫຼັກສູດ) ແລະ ຫຼັກສູດທີ່ໄດ້ຮັບການປັບ ປຸງ ຈຳນວນ 14 ຫຼັກສູດ (ລະດັບປະລິນຍາຕີ ຈຳນວນ 06 ຫຼັກສູດ, ຕໍ່ເນື່ອງລະດັບປະລິນຍາຕີ ຈຳນວນ 03 ຫຼັກສູດ, ລະດັບປະລິນຍາໂທ ຈຳນວນ 04 ຫຼັກສູດ, ຊ່ຽວຊານຂັ້ນ I ຈຳນວນ 01 ຫຼັກສູດ);
8) ໄດ້ສຳເລັດສົ່ງເສີມແຜນງານສຸຂະພາບຈະເລີນພັນ, ບົດບາດຍິງ-ຊາຍ ແລະ ເພດສຶກສາ ເຂົ້າໃນແຜນຈັດຕັ້ງ ປະຕິບັດ 5 ປີ ພາຍໃຕ້ອົງການຈັດຕັ້ງສາກົນ UNFPA ແລະ ອົງການ UNESCO ໂດຍການເຊື່ອມສານ ຫຼັກສູດເພດສຶກສາ ຢູ່ສະຖາບັນການສຶກສາຊັ້ນສູງ ໂດຍຫັນເອົາສາຍວິຊາ ກ່ຽວກັບເພດສຶກສາສອດແຊກ ເຂົ້າໃນ ຫຼັກສູດຂອງມະຫາວິທະຍາໄລ;
9) ໄດ້ສຳເລັດການຊຸກຍູ້ໃຫ້ສະຖາບັນການສຶກສາຊັ້ນສູງເອົາໃຈໃສ່ຄົ້ນຄວ້າວິທີການແກ້ໄຂບັນຫາການຫຼຸດລົງຂອງ ນັກສຶກສາທີ່ສະໝັກເຂົ້າຮຽນໃນແຕ່ລະປີ;
10) ໄດ້ປັບປຸງວຽກງານຂໍ້ມູນຂ່າວສານ, ເວັບໄຊ ແລະ ການເກັບມ້ຽນເອກະສານແບບເອເລັກໂຕຣນິກຂອງກົມ ໃຫ້ສຳເລັດທັນກັບສະພາບ ແລະ ແທດເໝາະກັບວຽກງານຕົວຈິງ;
11) ກົມການສຶກສາຊັ້ນສູງສົມທົບກັບພາກສ່ວນທີ່ກ່ຽວຂ້ອງໄດ້ສຳເລັດການຄົ້ນຄວ້າສ້າງບັນດານິຕິກຳເພື່ອສ້າງ ເງື່ອນໄຂອຳນວຍຄວາມສະດວກຊຸກຍູ້ສະຖາບັນການສຶກສາຊັ້ນສູງໃຫ້ເອົາໃຈໃສ່ດຳເນີນການຄົ້ນຄວ້າ ວິທະຍາ ສາດໄປຄຽງຄູ່ກັບການຮຽນການສອນ;
12) ໄດ້ຍົກຖານະ ສະຖາບັນການສຶກສາຊັ້ນສູງ ຈາກວິທະຍາໄລຂຶ້ນເປັນສະຖາບັນໃນຂັ້ນທົດລອງ 01 ແຫ່ງ ແລະ ຈາກສະຖາບັນໃນຂັ້ນທົດລອງ ຂຶ້ນເປັນສະຖາບັນສົມບູນ 02 ແຫ່ງ;

13) ໄດ້ປັບປຸງກົງຈັກການຈັດຕັ້ງ, ສັບຊ້ອນບຸກຄະລາກອນຂອງກົມ ແລະ ມະຫາວິທະຍາໄລ ພ້ອມທັງ ສຳເລັດການຄົ້ນຄວ້າຂໍອະນຸມັດດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງມະຫາວິທະຍາໄລ 04 ແຫ່ງ;
14) ໄດ້ຄົ້ນຄວ້າການສະເໜີຂໍອະນຸມັດຕຳແໜ່ງວິຊາການຄູ ຂອງສະຖານການສຶກສາຊັ້ນສູງ ຈຳນວນ 187 ທ່ານ, ຍິງ 70 ທ່ານ. ໃນນັ້ນ, ຂັ້ນສາດສະດາຈານ 04 ທ່ານ, ຂັ້ນຮອງສາດສະດາຈານ 37 ທ່ານ (ຍິງ 13 ທ່ານ), ຂັ້ນອາຈານ 59 ທ່ານ (ຍິງ 18 ທ່ານ) ແລະ ຂັ້ນຜູ້ຊ່ວຍອາຈານ 87 ທ່ານ (ຍິງ 39 ທ່ານ);
15) ໄດ້ສຳເລັດກອງປະຊຸມສະໄໝສາມັນ ແລະ ວິສາມັນ ປະຈຳປີ ຂອງສະພາການສຶກສາຊັ້ນສູງແຫ່ງຊາດ ເພື່ອພິຈາລະນາ ແລະ ຮັບຮອງຕຳແໜ່ງວິຊາການຄູຂັ້ນສາດສະດາ ຈານ ແລະ ຮອງສາດສະດາຈານ, ການຍົກຖານະສະຖາບັນການສຶກສາຊັ້ນສູງ ແລະ ວຽກງານການພັດທະນາການສຶກສາຊັ້ນສູງທີ່ຈຳເປັນ ແລະ ຮີບດ່ວນ;
16) ສ້າງຄູ່ມືແນະນຳການຂຽນບົດຄົ້ນຄວ້າວິທະຍາສາດໃນສະຖານການສຶກສາຊັ້ນສູງໃຫ້ສຳເລັດ;
17) ໄດ້ສຳເລັດການລົງປະເມີນຄວາມພ້ອມຂອງວິທະຍາໄລທີ່ສະເໜີຂໍຍົກຖານະຂຶ້ນເປັນສະຖາບັນ ແລະ ຍົກສະຖາບັນທົດລອງເປັນສະຖາບັນສົມບູນ;
18) ໄດ້ສຳເລັດສ້າງບົດວິພາກ ແລະ ຮ່າງນິຕິກຳຄຸ້ມຄອງ ເພື່ອຂໍອະນຸມັດສ້າງຕັ້ງສູນດັດຊະນີອ້າງອີງວາລະສານວິຊາການລາວ (LCI) ເພື່ອເປັນການຍົກສູງຄຸນນະພາບຂອງວາລະສານວິຊາການຂອງລາວ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ;
19) ສ້າງຄູ່ມືແນະນຳການຂຽນບົດຄົ້ນຄວ້າວິທະຍາສາດໃນສະຖານການສຶກສາຊັ້ນສູງໃຫ້ສຳເລັດ;
20) ໄດ້ສຳເລັດນຳສົ່ງພະນັກງານເຂົ້າຮ່ວມ ແລະ ຮ່ວມມືກັບ TICA ໃນການຈັດຕັ້ງປະຕິບັດໂຄງການ Research Management and Capacity Building ໃຫ້ສຳເລັດຕາມແຜນການ;
21) ໄດ້ສຳເລັດການຮ່ວມກັບກົມປະກັນຄຸນນະພາບການສຶກສາ ເພື່ອຕິດຕາມຄຸນນະພາບ ການຮຽນການສອນ ຢູ່ສະຖານການສຶກສາຊັ້ນສູງ ທັງພາກລັດ ແລະ ເອກະຊົນ ເພື່ອໃຫ້ສະຖານການສຶກສາຊັ້ນສູງ ໄດ້ມີຄູນນະພາບ ແລະ ເປັນທີ່ຍອມຮັບຂອງສັງຄົມ;
22) ໄດ້ສຳເລັດຂໍ້ຕົກລົງວ່າດ້ວຍການນຳໃຊ້ຊື່ວຸດທິການສຶກສາຊັ້ນສູງຂອງສະຖານການສຶກສາຊັ້ນສູງ;
23) ສຳເລັດການອອກຂໍ້ຕົກລົງວ່າດ້ວຍການຮັບຮູ້ວຸດທິການສຶກສາຊັ້ນສູງ ຂອງສະຖານ ການສຶກສາຊັ້ນສູງ ສະບັບເລກທີ 5539/ສສກ, ລົງວັນທີ 15 ສິງຫາ 2024 ແລະ ຂໍ້ຕົກລົງ ວ່າດ້ວຍການໂອນໜ່ວຍກິດ ຂອງສະຖານການສຶກສາຊັ້ນສູງ ສະບັບເລກທີ 5538/ສສກ, ລົງວັນທີ 15 ສິງຫາ 2024;
24) ຊຸກຍູ້ຕິດຕາມລະບົບຄຸ້ມຄອງມະຫາວິທະຍາໄລລາວ LUMS ໃຫ້ໄດ້ນຳໃຊ້ຢູ່ມະຫາວິທະຍາໄລ 04 ແຫ່ງ ເພື່ອຊ່ວຍໃນການບໍລິຫານຄຸ້ມຄອງລະບົບຖານຂໍ້ມູນໃຫ້ເປັນເອກະພາບຂອງ 4 ມະຫາວິທະຍາໄລ;
25) ໄດ້ສ້າງຄວາມເຂັ້ມແຂງຂອບການຮ່ວມມືກັບອົງການຕ່າງໆ ເຊັ່ນ : ASEM Education, ອົງການ UNESCO, EU ແລະ ອົງການອື່ນໆ ທີ່ກ່ຽວຂ້ອງ ;
26) ສຶກສາຄວາມເປັນໄປໄດ້ໃນການສ້າງ MOU ຮ່ວມກັບ LAO SAT ແລະ ຫ້ອງການຄຸ້ມຄອງ ເຂດເສດຖະກິດພິເສດໄຊເສດຖາ ເພື່ອສ້າງໂຄງການພັດທະນາ Platform ການຕິດຕາມ ແລະ ສະໜອງ ຂໍ້ມູນຕະຫຼາດແຮງງານໃຫ້ແກ່ນັກສຶກສາລາວທີ່ຈົບຈາກຕ່າງ ປະເທດ;
27) ໄດ້ຈັດຕັ້ງປະຕິບັດແຜນກິດຈະກຳວຽກງານຂອບການຮ່ວມມືຂໍ້ລິເລີ່ມການເຊື່ອມໂຍງອາຊຽນ (IAI) Intiative for ASEAN Integration work plan IV (2021-2025);
28) ສ້າງເຄືອຄ່າຍ ແລະ ຮ່ວມມືກັບບັນດາອົງການຈັດຕັ້ງສາກົນອື່ນໆ ໂດຍສະເພາະ ອົງ ການ ADB, ອົງການ JICA, KOICA, TICA, World Bank, SEMEO RIHED ແລະ ອື່ນໆ;
29) ສຳເລັດການຈັດຕັ້ງກອງປະຊຸມອາຊຽນ ກ່ຽວກັບນະໂຍບາຍການສຶກສາຊັ້ນສູງ ປະຈຳປີ 2024 ພາຍໃຕ້ຫົວຂໍ້: “ການມີສ່ວນຮ່ວມໃນການຂັບເຄື່ອນການສຶກສາຊັ້ນສູງ: ການສ້າງຄວາມຍືນຍົງ ແລະ ຄວາມຫຼາກຫຼາຍ ໂດຍຜ່ານ

ການເຊື່ອມໂຍງ ແລະ ການມີສ່ວນຮ່ວມຂອງທຸກພາກສ່ວນ" ໃນລະຫວ່າງວັນທີ 11-12 ພະຈິກ 2024 ທີ່ ໂຮງແຮມ ຄຣາວພລາຊາ, ນະຄອນຫຼວງວຽງຈັນ;

30) ກົມການສຶກສາຊັ້ນສູງໄດ້ເຂົ້າເປັນຄູ່ຮ່ວມໂຄງການ "ປັບປຸງການປະກັນຄຸນນະພາບພາຍໃນ ຂອງຫຼັກສູດ ຢູ່ໃນ ການສຶກສາຊັ້ນສູງ ເພື່ອສົ່ງເສີມການຮຽນການສອນ ໂດຍເນັ້ນໃສ່ຜົນການຮຽນ" ພາຍໃຕ້ແຜນງານ Erasmus+ Programme ຈາກສະຫະພາບເອີຣົບ;

31) ໄດ້ສຳເລັດການພັດທະນາສູນບໍລິການນັກສຶກສາ ໃຫ້ເປັນສູນລວມແຫຼ່ງຂໍ້ມູນຂ່າວສານການສຶກສາ ເປັນຕົ້ນ ແມ່ນຂໍ້ມູນກ່ຽວກັບທຶນ ແລະ ແຫຼ່ງທຶນການສຶກສາ, ຫຼັກສູດ ແລະ ສະຖານການສຶກສາທີ່ມີຢູ່ພາຍໃນ ແລະ ຕ່າງປະເທດ ພ້ອມທັງເງື່ອນໄຂເພື່ອເຂົ້າຮຽນໃນສະຖານການສຶກສາເຫຼົ່ານັ້ນ, ການສະໝັກເອົາທຶນການສຶກສາ ໄປຮຽນຢູ່ຕ່າງປະເທດ ການຕິດຕໍ່ພົວພັນເພື່ອໄປຮຽນຕ່າງປະເທດ, ການປະກອບເອກະສານຕ່າງໆ ທີ່ ກ່ຽວຂ້ອງ ແລະ ອື່ນໆ;

32) ໄດ້ສຳເລັ**ດການ**ປະຖົມນິເທດໃຫ້ນັກສຶກສາ ທີ່ໄດ້ຮັບທຶນການສຶກສາຂອງລັດຖະບານປະເທດຕ່າງໆ ກ່ອນ ເດີນທາງໄປສຶກສາຕໍ່ຕ່າງປະເທດ;

33) ໄດ້ສຳເລັດການຂຶ້ນແຜນຂໍເງິນນະໂຍບາຍບຸກຄົນ ແລະ ຊື້ປີ້ຍົນໃຫ້ນັກສຶກສາ ທີ່ໄດ້ຮັບທຶນການສຶກສາຂອງ ລັດຖະບານໃຫ້ນັກສຶກສາ ທີ່ໄດ້ຮັບທຶນລັດຖະບານປະເທດຕ່າງໆ ປະຈຳປີ 2024-2025 ທີ່ມີສັນຍາຮ່ວມມື ສອງຝ່າຍ;

34) ໄດ້ເຂົ້າຮ່ວມເຜີຍແຜ່ ແລະ ນຳໃຊ້ລະບົບການຕິດຕາມການໄດ້ມີວຽກເຮັດງານທຳຂອງນັກສຶກສາຈົບໃໝ່ທັງ ພາຍ ແລະ ຕ່າງປະເທດ (ຮ່ວມກັບກະຊວງແຮງງານ ແລະ ສະຫວັດດີການ ແລະ ສັງຄົມ);

35) ໄດ້ສຳເລັດກອງປະຊຸມລະດົມແນວຄວາມຄິດ, ສຶກສາ, ຄົ້ນຄ້ວາເພື່ອສ້າງຮ່າງລະບົບຖານຂໍ້ມູນຄຸ້ມຄອງ ນັກສຶກສາຕ່າງປະເທດມາຮຽນຢູ່ລາວ ແລະ ປະເມີນຜົນໄດ້ຮັບການນຳໃຊ້ລະບົບຖານຂໍ້ມູນຄຸ້ມຄອງນັກສຶກ ສາລາວໄປຮຽນຕ່າງປະເທດ;

36) ຕິດຕາມວຽກງານຄຸ້ມຄອງນັກສຶກສາຢູ່ຕ່າງປະເທດຢ່າງໃກ້ຊິດ ໂດຍປະສານສົມທົບກັບສະຖານທູດ, ສະຖານ ກົງສຸນ ແລະ ການຈັດຕັ້ງນັກສຶກສາຢູ່ຕ່າງປະເທດ;

37) ໄດ້ສຳເລັດຈັດກອງປະຊຸມແລກປ່ຽນບົດຮຽນກ່ຽວກັບວຽກງານການຈັດສົ່ງພະນັກງານ ແລະ ນັກສຶກສາໄປ ຮຽນຕ່າງປະເທດກັບບັນດາແຂວງຕ່າງໆ 18 ແຂວງ (ກອງປະຊຸມປະຈຳປີຂອງກົມ) 2024;

38) ໄດ້ສຳເລັດຄຳແນະນຳ ການນຳໃຊ້ສະຖິຕິນັກຮຽນນັກສຶກສາໄປຮຽນ ແລະ ກັບມາຈາກຕ່າງປະເທດ;

39) ຈັດຕັ້ງການເຜີຍແຜ່ດຳລັດວ່າດ້ວຍທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ແລະ ເຜີຍແຜ່ວຽກງານ ກິດຈະການນັກສຶກສາ 4 ແຂວງ (ບໍ່ແກ້ວ, ຫຼວງນ້ຳທາ, ວຽງຈັນ ແລະ ນະຄອນຫຼວງວຽງຈັນ);

40) ສ້າງຄຳແນະນຳ ເພື່ອຈັດຕັ້ງປະຕິບັດດຳລັດວ່າດ້ວຍການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ແລະ ລົງໂຄສະນາເຜີຍແຜ່ດຳລັດ ໃຫ້ສັງຄົມ ແລະ ພາກສ່ວນກ່ຽວຂ້ອງ ຢ່າງຕໍ່ເນື່ອງ ແລະ ທົ່ວເຖິງ;

41) ກອງປະຊຸມລະດົມແນວຄວາມຄິດໃນການສ້າງເຄື່ອງມືປະເມີນ ວຽກງານຂົງເຂດລະຫັດວິຊາຮຽນ ແລະ ບຸລິມະສິດນັກສຶກສາ (ສຳລັບພະນັກງານລັດຖະກອນ) ໄປຮຽນຕ່າງປະເທດ;

42) ກົມການສຶກສາຊັ້ນສູງຮ່ວມກັບກົມປະກັນຄຸນນະພາບການສຶກສາ ຈະໄດ້ສືບຕໍ່ລົງຈັດຝຶກອົບຮົມ ໃຫ້ໜ່ວຍ ງານການປະກັນຄຸນນະພາບຂອງສະຖານການສຶກສາຊັ້ນສູງໃຫ້ມີຄວາມເຂັ້ມແຂງ ໂດຍສະເພາະແມ່ນການ ຂຽນບົດປະເມີນຕົນເອງ.

## 3. ບັນຫາ ແລະ ສິ່ງທ້າທາຍ

1) ການອະນຸມັດງົບປະມານພາກລັດ ແມ່ນຍັງຊັກຊ້າ;
2) ການຮັບຂໍ້ມູນຈາກກົມກ່ຽວຂ້ອງ ແລະ ມະຫາວິທະຍາໄລຍັງບໍ່ແທດເໝາະກັບແຜນທີ່ກຳນົດສົ່ງ;

3) ເຖິງແມ່ນວ່າກະຊວງສຶກສາທິການ ແລະ ກິລາ ແລະ ບັນດາສະຖາບັນການສຶກສາຊັ້ນສູງ ຈະມີຄວາມພະຍາຍາມໃນການແກ້ໄຂບັນຫານັກສຶກສາຫຼຸດລົງ ແລະ ການປະລະການຮຽນ, ແຕ່ຕົວເລກກໍຍັງສືບຕໍ່ຫຼຸດລົງ;
4) ຫຼັກສູດຂອງສະຖາບັນການສຶກສາຊັ້ນສູງ ຍັງບໍ່ທັນກັບສະພາບການທີ່ປ່ຽນແປງໄວທາງດ້ານເຕັກໂນໂລຊີ ເປັນຕົ້ນແມ່ນ ການເພີ່ມຂຶ້ນຂອງການນໍາໃຊ້ດິຈິຕອນ ແລະ ປັນຍາປະດິດ ເຂົ້າໃນວຽກງານຕ່າງໆ;
5) ການຮຽນການສອນ ຍັງບໍ່ແທດເໝາະກັບສະພາບການປ່ຽນແປງໃໝ່ ເພື່ອດຶງດູດໃຫ້ນັກສຶກສາມີຄວາມສົນໃຈຕໍ່ການຮຽນ ພ້ອມທັງຮັບປະກັນໃຫ້ການກໍ່ສ້າງກໍາລັງແຮງງານ ມີຄຸນນະພາບ ແລະ ຄວາມສອດຄ່ອງ;
6) ການປັບປຸງກົງຈັກການຈັດຕັ້ງ, ການສັບຊ້ອນບຸກຄະລາກອນ ມີຄວາມຫຍຸ້ງຍາກ, ສັບຊ້ອນ ແລະ ມີຄວາມລະອຽດອ່ອນ ເຮັດໃຫ້ແກ່ຍາວເວລາໃນການຈັດຕັ້ງປະຕິບັດ.

## 4. ບູລິມະສິດສໍາລັບສົກຮຽນ 2025-2026

### 4.1. ຈຸດປະສົງ

ສົກຮຽນ 2024-2025 ແມ່ນປີສຸດທ້າຍ ຂອງການຈັດຕັ້ງປະຕິບັດ ແຜນພັດທະນາຂະແໜງການສຶກສາທິການ ແລະ ກິລາ 5 ປີ ຄັ້ງທີ IX (2021-2025). ສະນັ້ນ, ແຜນວຽກຈຸດສຸມ ຂອງການພັດທະນາວຽກງານການສຶກສາຊັ້ນສູງ ປະຈໍາປີ 2025 ຈະໄດ້ສຸມໃສ່ການຈັດຕັ້ງປະຕິບັດບັນດາວຽກຈຸດສຸມທີ່ຍັງຄົງຄ້າງ ເພື່ອໃຫ້ບັນລຸຕາມຄາດໝາຍ ຂອງ 12 ຜົນໄດ້ຮັບລະດັບກາງ ແລະ 17 ຍຸດທະສາດ ທີ່ກໍານົດໃນແຜນພັດທະນາຂະແໜງການຍ່ອຍການສຶກສາຊັ້ນສູງ 5 ປີ (2021-2025). ນອກນັ້ນ, ຍັງຈະໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ບໍລິຫານການສຶກສາ, ກິລາ ແລະ ວິທະຍາສາດ ປະຈາປີ 2024 ແລະ ມະຕິອື່ນໆ ທີ່ກ່ຽວຂ້ອງ. ຈຸດປະສົງຂອງແຜນວຽກຈຸດສຸມປະຈໍາປີ 2025 ມີດັ່ງນີ້:

1) ພັດທະນາການສຶກສາຊັ້ນສູງ ໃຫ້ຂະຫຍາຍຕົວ ທັງດ້ານປະລິມານ ແລະ ຄຸນນະພາບ;
2) ສົ່ງເສີມການນໍາໃຊ້ດິຈິຕອນ ແລະ ເຊື່ອມສານວຽກງານປັນຍາປະດິດ ເຂົ້າໃນການສຶກສາຊັ້ນສູງ ລວມທັງສືບຕໍ່ສົ່ງເສີມການເຂົ້າຮຽນໃນສາຍ STEM;
3) ສົ່ງເສີມຄວາມເປັນເລີດໃຫ້ແກ່ມະຫາວິທະຍາໄລ ແລະ ສະຖາບັນການສຶກສາຊັ້ນສູງ ໃນດ້ານທີ່ມີຄວາມເຂັ້ມແຂງ;
4) ສົ່ງເສີມການຄົ້ນຄວ້າວິທະຍາສາດໃຫ້ເຂັ້ມແຂງ ແລະ ມີຄຸນນະພາບ, ສາມາດນໍາໃຊ້ເຂົ້າໃນການກໍານົດນະໂຍບາຍ, ການແກ້ໄຂບັນຫາຕົວຈິງ, ການພັດທະນາເຕັກໂນໂລຊີ, ນະວັດຕະກໍາ ແລະ ການຮັບໃຊ້ສັງຄົມ;
5) ສົ່ງເສີມການຄຸ້ມຄອງ ບໍລິຫານທີ່ດີ ພ້ອມທັງສົ່ງເສີມການສ້າງລາຍຮັບ ເພື່ອຫັນເປັນກຸ້ມຕົນເອງຂອງມະຫາວິທະຍາໄລ ທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ.

### 4.2. ຄາດໝາຍ

1) ນັກສຶກສາເຂົ້າຮຽນໃນການສຶກສາຊັ້ນສູງ ໃຫ້ໄດ້ຈໍານວນ 40.000[3] ຄົນ, ໃນນັ້ນ ໃຫ້ມີແມ່ຍິງ 50%;
2) ນັກສຶກສາເຂົ້າຮຽນໃນສາຍ STEM ຢູ່ໃນທຸກສະຖາບັນການສຶກສາຊັ້ນສູງ ໃຫ້ໄດ້ 3.000 ຄົນຂຶ້ນໄປ ຕໍ່ປີ;
3) ມະຫາວິທະຍາໄລທັງ 4 ແຫ່ງ ທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ ໄດ້ຮັບການປະເມີນພາຍໃນ ແລະ ໄດ້ຮັບການປະເມີນພາຍນອກ ຢ່າງໜ້ອຍ 2 ແຫ່ງ;
4) ມະຫາວິທະຍາໄລ ທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ ສາມາດສ້າງເງື່ອນໄຂພື້ນຖານ ໃນການຫັນເປັນກຸ້ມຕົນເອງທາງດ້ານການເງິນ ຢ່າງໜ້ອຍ 2 ແຫ່ງ.

### 4.3. ການເຂົ້າເຖິງ ແລະ ເທົ່າທຽມ

---

[3] ບໍ່ລວມນັກສຶກສາຈາກວິທະຍາຄານ ທີ່ຂຶ້ນກັບກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ແລະ ສະຖາບັນການເມືອງການປົກຄອງແຫ່ງຊາດ

### 4.3.1. ຕົວຊີ້ບອກ:

1) ຈຳນວນນັກສຶກສາທີ່ຮຽນໃນສາຍ STEM ຢູ່ພາຍໃນປະເທດ ບັນລຸ 27% ຂອງນັກສຶກສາທັງໝົດໃນນັ້ນ, ມີເພດຍິງ ເທົ່າກັບ 47%;
2) ອັດຕາສ່ວນນັກຮຽນທີ່ຈົບຊັ້ນມັດທະຍົມຕອນປາຍໄດ້ເຂົ້າຮຽນຕໍ່ໃນການສຶກສາຊັ້ນສູງເພີ່ມຂຶ້ນ. ໃນນັ້ນ, ມີເພດຍິງຫຼາຍຂຶ້ນ ແລະ ມີນະໂຍບາຍໃຫ້ແກ່ຜູ້ທຸກຍາກ, ຜູ້ດ້ອຍໂອກາດ, ຊົນເຜົ່າ ແລະ ຄົນພິການເຂົ້າເຖິງການສຶກສາຊັ້ນສູງ;
3) ອັດຕາສ່ວນຜູ້ຮຽນໄປຮຽນ, ສຶກສາ, ຄົ້ນຄວ້າ ແລະ ຝຶກອົບຮົມ ຢູ່ຕ່າງປະເທດ ເຂົ້າຮຽນສາຍ STEM ເພີ່ມຂຶ້ນ ທຽບໃສ່ນັກສຶກສາທັງໝົດທີ່ໄປສຶກສາຕ່າງປະເທດ.

### 4.3.2. ຍຸດທະສາດ

**ຍຸດທະສາດ 1:** ຂະຫຍາຍໂອກາດເຂົ້າຮຽນໃນສາຍການສຶກສາຊັ້ນສູງ;

**ຍຸດທະສາດ 2:** ສົ່ງເສີມການເຂົ້າເຖິງການສຶກສາຊັ້ນສູງຢ່າງສະເໝີພາບ ແລະ ທົ່ວເຖິງ.

**ວຽກຈຸດສຸມ:**

1) ກຳນົດນະໂຍບາຍໂດຍການສົ່ງເສີມ ໃຫ້ນັກສຶກສາເຂົ້າຮຽນໃນສາຍການສຶກສາຊັ້ນສູງ ໂດຍສະເພາະໃນສາຍ STEM;
2) ສ້າງ ແລະ ພັດທະນານິຕິກຳ ເພື່ອຄຸ້ມຄອງພົນລະເມືອງລາວໄປຮຽນ, ສຶກສາ, ຄົ້ນຄວ້າ ແລະ ຝຶກອົບຮົມ ຢູ່ຕ່າງປະເທດ;
3) ສ້າງຄວາມເຂັ້ມແຂງດ້ານວຽກງານການບໍລິການ ການສຶກສາຕ່າງປະເທດ;
4) ສົ່ງເສີມນະໂຍບາຍການເຂົ້າຮຽນໃຫ້ແກ່ຜູ້ທຸກຍາກ, ຜູ້ດ້ອຍໂອກາດ, ແມ່ຍິງ, ຊົນເຜົ່າ ແລະ ຄົນພິການ ຢ່າງສະເໝີພາບ ແລະ ເປັນທຳ;
5) ສົ່ງເສີມວຽກງານຄວາມສະເໝີພາບຍິງ-ຊາຍ ແລະ ວຽກງານແມ່-ເດັກ, ວຽກງານຕ້ານການສໍ້ລາດບັງຫຼວງ, ວຽກງານເພດສຶກສາ ແລະ ຫຼຸດຜ່ອນການຈຳແນກ-ລັງກຽດຜູ້ຕິດເຊື້ອເອັສໄອວີ, ວຽກງານການປ່ຽນແປງດິນຟ້າອາກາດໄພພິບັດ ໃນສະຖານການສຶກສາຊັ້ນສູງ.

## 4.4. ຄຸນນະພາບ ແລະ ຄວາມສອດຄ່ອງ

### 4.4.1. ຕົວຊີ້ບອກ

1) ຫຼັກສູດການຮຽນການສອນ ໄດ້ຕອບສະໜອງກັບການພັດທະນາເສດຖະກິດ-ສັງຄົມ ຫຼາຍຂຶ້ນ, ມີການນຳໃຊ້ລະບົບດິຈິຕອນ ເຂົ້າໃນການຮຽນການສອນ ໃນສະຖານການສຶກສາຊັ້ນສູງເພີ່ມຂຶ້ນ, ຫຼັກສູດການຮຽນການສອນ ທີ່ເປັນຫລັກສູດສາກົນມີຈຳນວນເພີ່ມຂຶ້ນ ເພື່ອເຊື່ອມໂຍງກັບພາກພື້ນ ແລະ ສາກົນ;
2) ລະບົບການຄຸ້ມຄອງວາລະສານວິຊາການ ແລະ ນັກຄົ້ນຄວ້າວິທະຍາສາດ ດີຂຶ້ນ;
3) ຄູ່ມື ແລະ ມາດຕະຖານປະກັນຄຸນນະພາບສະຖານການສຶກສາຊັ້ນສູງ ເພື່ອການຈັດຕັ້ງປະຕິບັດ ແລະ ວາງແຜນຄຸນນະພາບພາຍໃນໄດ້ຖືກປັບປຸງ;
4) ພັດທະນາມາດຕະຖານການປະກັນຄຸນນະພາບໃນລະດັບຫຼັກສູດ ສະຖານການສຶກສາຊັ້ນສູງ ເພື່ອການຈັດຕັ້ງປະຕິບັດ ແລະ ວາງແຜນຄຸນນະພາບພາຍໃນ;
5) ສະຖານການສຶກສາຊັ້ນສູງສຳເລັດການປະເມີນຕົນເອງໃນສະຖານການສຶກສາ ແລະ ລະດັບຫຼັກສູດ;
6) ສ້າງຄວາມເຂັ້ມແຂງວຽກງານປະກັນຄຸນນະພາບການສຶກສາໃຫ້ຜູ້ປະສານງານປະກັນຄຸນນະພາບ ແລະ ພະນັກງານທີ່ກ່ຽວຂ້ອງ ໃນສະຖາບັນການສຶກສາຊັ້ນສູງ;
7) ສ້າງຜູ້ປະເມີນພາຍນອກ ເພື່ອປະເມີນຄຸນນະພາບຂອງສະຖາບັນການສຶກສາຊັ້ນສູງ;
8) ລົງຊຸກຍູ້ວຽກງານປະກັນຄຸນນະພາບ ແລະ ການປັບປຸງຄຸນນະພາບຂອງສະຖາບັນການສຶກສາຊັ້ນສູງ;

9) ສະຖານການສຶກສາຊັ້ນສູງໄດ້ຮັບການຮັບຮອງຄຸນນະພາບ;
10) ສ້າງຖານຂໍ້ມູນໃຫ້ເປັນລະບົບທັນສະໄໝໃນການຈັດຕັ້ງປະຕິບັດ ການປະເມີນຕົນເອງ ແລະ ການຕິດຕາມຊຸກຍູ້ວຽກງານປະກັນຄຸນນະພາບ;
11) ອັດຕາສ່ວນຂອງຜູ້ຮຽນທີ່ມີວຽກເຮັດງານທຳພາຍຫຼັງທີ່ກັບຈາກຕ່າງປະເທດ;
12) ລະບົບຖານຂໍ້ມູນຄຸ້ມຄອງຜູ້ໄປຮຽນ ແລະ ກັບຈາກຕ່າງປະເທດ ໃຫ້ທັນສະໄໝ ໄດ້ຮັບການພັດທະນາຖານ ແລະ ມີເວັບໄຊທີ່ທັນສະໄໝກວ່າເກົ່າ.

### 4.4.2. ຍຸດທະສາດ

**ຍຸດທະສາດ** 1: ສ້າງການຫັນປ່ຽນໃນສະຖານການສຶກສາຊັ້ນສູງໃຫ້ເຂັ້ມແຂງ ແລະ ທັນສະໄໝ;

**ຍຸດທະສາດ** 2: ສ້າງຄວາມເຂັ້ມແຂງລະບົບປະກັນຄຸນນະພາບຂອງການສຶກສາຊັ້ນສູງ;

**ຍຸດທະສາດ** 3: ປັບປຸງລະບົບຕິດຕາມການມີວຽກເຮັດງານທຳຂອງຜູ້ຮຽນກັບຈາກຕ່າງປະເທດ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ;

**ຍຸດທະສາດ** 4: ຄົ້ນຄວ້າ, ສຶກສາຄວາມຕ້ອງການຂອງສັງຄົມ ກ່ຽວກັບການກໍ່ສ້າງ, ພັດທະນາຊັບພະກອນມະນຸດຢູ່ຕ່າງປະເທດ ແລະ ນຳໃຊ້ຂໍ້ມູນເພື່ອວາງແຜນການພັດທະນາ.

**ວຽກຈຸດສຸມ:**

1) ສ້າງນິຕິກຳກ່ຽວກັບການຮັບຮູ້/ຮັບຮອງຄຸນນະພາບຂອງ Micro Credential ໂດຍອີງໃສ່ຂອບວຸດທິການສຶກສາ ແຫ່ງຊາດ ແລະ ຄະນະກຳມະການຮັບຮອງຄຸນນະພາບການສຶກສາ;
2) ປັບປຸງເຄື່ອງມືປະກັນຄຸນນະພາບພາຍໃນ ແລະ ພາຍນອກ ໃນລະດັບ ສະຖາບັນການສຶກສາ ຊັ້ນສູງ ແລະ ໃນລະດັບຫຼັກສູດການສຶກສາ;
3) ສ້າງຖານຂໍ້ມູນໃຫ້ເປັນລະບົບທັນສະໄໝໃນການຈັດຕັ້ງປະຕິບັດ ການປະເມີນຕົນເອງ ແລະ ການຕິດຕາມຊຸກຍູ້ວຽກງານປະກັນຄຸນນະພາບ;
4) ພັດທະນາເຄື່ອງມືຕິດຕາມການມີວຽກເຮັດງານທຳຂອງຜູ້ຮຽນກັບຈາກຕ່າງປະເທດ;
5) ພັດທະນາຫຼັກສູດ ໃນສາຍການສຶກສາຊັ້ນສູງ ໃຫ້ມີຄຸນນະພາບ, ທັນສະໄໝ, ສອດຄ່ອງກັບຕະຫຼາດແຮງງານ ແລະ ສາມາດເຊື່ອມກັບພາກພື້ນ ແລະ ສາກົນ;
6) ສົ່ງເສີມການນຳໃຊ້ດິຈິຕອນ ເຂົ້າໃນການຮຽນການສອນ;
7) ປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງຂອງການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ ພ້ອມທັງສົ່ງເສີມການສ້າງນະວັດຕະກຳ ແລະ ການນຳໃຊ້ຜົນການຄົ້ນຄວ້າວິທະຍາ ສາດ;
8) ສ້າງຄວາມເຂັ້ມແຂງວຽກງານປະກັນຄຸນນະພາບການສຶກສາ ໃຫ້ຜູ້ປະສານງານປະກັນຄຸນນະພາບ ແລະ ພະນັກງານທີ່ກ່ຽວຂ້ອງ ໃນສະຖາບັນການສຶກສາຊັ້ນສູງ;
9) ສ້າງຜູ້ປະເມີນພາຍນອກ ເພື່ອປະເມີນຄຸນນະພາບຂອງສະຖາບັນການສຶກສາຊັ້ນສູງ;
10) ສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລາກອນ ນຳໃຊ້ເຄື່ອງມື ຕິດຕາມການມີວຽກເຮັດງານທຳຂອງຜູ້ຮຽນກັບຈາກຕ່າງປະເທດ;
11) ຕິດຕາມຊຸກຍູ້ວຽກງານປະກັນຄຸນນະພາບ ແລະ ການປັບປຸງຄຸນນະພາບຂອງສະຖາບັນການສຶກສາຊັ້ນສູງ;
12) ດຳເນີນການຄົ້ນຄວ້າ, ສຶກສາຄວາມຕ້ອງການຂອງສັງຄົມ ແລະ ນຳໃຊ້ຂໍ້ມູນເພື່ອວາງແຜນການພັດທະນາຊັບພະກອນມະນຸດຢູ່ຕ່າງປະເທດ;
13) ເຜີຍແຜ່ຜົນການຄົ້ນຄວ້າ, ສຶກສາຄວາມຕ້ອງການຂອງສັງຄົມ ແລະ ນຳໃຊ້ຂໍ້ມູນເພື່ອວາງແຜນການພັດທະນາຊັບພະກອນມະນຸດຢູ່ຕ່າງປະເທດ.

### 4.5. ບໍລິຫານ ແລະ ຄຸ້ມຄອງ

#### 4.5.1. ຕົວຊີ້ບອກ

1) ກົງຈັກການຈັດຕັ້ງ ໄດ້ຮັບການປັບປຸງໃຫ້ມີຄວາມສອດຄ່ອງ ແລະ ໂຄງປະກອບບຸກຄະລາກອນ ໄດ້ຮັບການສັບຊ້ອນໃຫ້ຄົບຖ້ວນຕາມຕໍາແໜ່ງງານທີ່ໄດ້ຮັບອະນຸມັດ;
2) ນິຕິກໍາ ກ່ຽວກັບ ການຄຸ້ມຄອງຂອງກົມການສຶກສາຊັ້ນສູງ ແລະ ສະຖານການສຶກສາຊັ້ນສູງ ໄດ້ຮັບການສ້າງ ແລະ ປັບປຸງ;
3) ປັບປຸງນິຕິກໍາ ກ່ຽວກັບ ການຄົ້ນຄວ້າ ແລະ ຄັດເລືອກຜູ້ສະໝັກທຶນການສຶກສາຕ່າງປະເທດ ທີ່ສອດຄ່ອງກັບຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ;
4) ສ້າງຖານຂໍ້ມູນໃຫ້ມີຄວາມເຊື່ອມໂຍງກັບລະບົບຖານຂໍ້ມູນລວມ;
5) ສິ່ງອໍານວຍຄວາມສະດວກ ພາຍໃນສະຖານການສຶກສາຊັ້ນສູງ ໄດ້ຮັບການສ້າງ ແລະ ປັບປຸງ.

#### 4.5.2. ຍຸດທະສາດ

**ຍຸດທະສາດ 1:** ປັບປຸງການຈັດຕັ້ງ, ການຄຸ້ມຄອງ ແລະ ການບໍລິຫານ ໃນສະຖານການສຶກສາຊັ້ນສູງ;

**ຍຸດທະສາດ 2:** ປັບປຸງນິຕິກໍາກ່ຽວກັບການຄົ້ນຄວ້າ ແລະ ຄັດເລືອກຜູ້ສະໝັກທຶນການສຶກສາຕ່າງປະເທດສອດຄ່ອງກັບ ຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ.

**ວຽກຈຸດສຸມ:**

1) ປັບປຸງກົງຈັກ ໃຫ້ກະທັດຮັດ, ສອດຄ່ອງ ແລະ ມີປະສິດທິພາບ;
2) ຄຸ້ມຄອງຂໍ້ມູນຂ່າວສານການສຶກສາຊັ້ນສູງ ໃຫ້ເປັນລະບົບ;
3) ສ້າງຄວາມເຂັ້ມແຂງດ້ານການບໍລິຫານ, ຄຸ້ມຄອງ ແລະ ບຸກຄະລາກອນ;
4) ສ້າງ, ປັບປຸງ, ນໍາໃຊ້ ແລະ ຄຸ້ມຄອງ ຊັບສິນ ແລະ ສິ່ງອໍານວຍຄວາມສະດວກ ພາຍໃນສະຖານການສຶກສາຊັ້ນສູງ ໃຫ້ມີປະສິດທິພາບ;
5) ທົບທວນຄືນ ແລະ ປັບປຸງຂໍ້ຕົກລົງວ່າດ້ວຍການຄົ້ນຄ້ວາ ແລະ ຄັດເລືອກ ຜູ້ຮຽນ ໄປຮຽນ, ສຶກສາ, ຄົ້ນຄວ້າ ແລະ ຝຶກອົບຮົມ ຢູ່ຕ່າງປະເທດ;
6) ເຜີຍແຜ່ ຂໍ້ຕົກລົງວ່າດວ້ຍການຄົ້ນຄ້ວາ ແລະ ຄັດເລືອກ ຜູ້ຮຽນ ໄປຮຽນ, ສຶກສາ, ຄົ້ນຄວ້າ ແລະ ຝຶກອົບຮົມຢູ່ຕ່າງປະເທດ.

# IX. ຂະແໜງການຍ່ອຍວິທະຍາສາດ

## 1. ວຽກງານຫ້ອງການສະພາວິທະຍາສາດແຫ່ງຊາດ

### 1.1. ຜົນສຳເລັດສົກຮຽນ 2024-2025

ຫ້ອງການສະພາວິທະຍາສາດແຫ່ງຊາດ ເປັນກົງຈັກບໍລິຫານ-ວິຊາການ ໃນໂຄງປະກອບການຈັດຕັ້ງ ຂອງກະຊວງສຶກສາທິການ ແລະ ກິລາ ມີພາລະບົດບາດເປັນເສນາທິການ ໃຫ້ແກ່ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ປະທານສະພາວິທະຍາສາດແຫ່ງຊາດ ແລະ ປະທານສະພາບໍລິຫານກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ກ່ຽວກັບການຄຸ້ມຄອງ ແລະ ຊຸກຍູ້, ສົ່ງເສີມການຄົ້ນຄວ້າວິທະຍາສາດ, ການພັດທະນາ ແລະ ນຳໃຊ້ວິທະຍາ ສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ໃຫ້ມີປະສິດທິຜົນສູງ.

1) ສຳເລັດປັບປຸງດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາວິທະຍາສາດແຫ່ງຊາດ; ສາເລັດສ້າງດຳລັດວ່າດ້ວຍນັກຄົ້ນຄວ້າວິທະຍາສາດ;
2) ສຳເລັດສ້າງຂໍ້ຕົກລົງວ່າດ້ວຍມາດຖານເງື່ອນໄຂຜູ້ຊົງຄຸນວຸດທິ ຂອງສະພາວິທະຍາສາດແຫ່ງຊາດ; ສາເລັດສ້າງຂໍ້ຕົກລົງວ່າດ້ວຍການສະໜັບສະໜູນທຶນສ້າງຄວາມເຂັ້ມແຂງດ້ານວິທະຍາສາດ ເຕັກໂນໂລຊີ ແລະ ນະວັດຕະກຳ;
3) ສຳເລັດສ້າງ (ຮ່າງ) ຂໍ້ຕົກລົງວ່າດ້ວຍຄະນະກຳມະການວິທະຍາສາດທຳມະຊາດ; ສຳເລັດສ້າງ (ຮ່າງ) ຂໍ້ຕົກລົງວ່າດ້ວຍຄະນະກຳມະການວິທະຍາສາດສັງຄົມ; ສາເລັດສ້າງ (ຮ່າງ) ຂໍ້ຕົກລົງວ່າດ້ວຍຈັນຍາບັນນັກຄົ້ນຄວ້າ ແລະ ຈັນຍາທຳການຄົ້ນຄວ້າວິທະຍາສາດ; ສຳເລັດສ້າງ (ຮ່າງ) ບົດແນະນຳກ່ຽວກັບການສ້າງຕັ້ງ ແລະ ການເຄື່ອນໄຫວສະພາວິທະຍາສາດຂອງຂະແໜງການ;
4) ຄຳແນະນຳວ່າດ້ວຍການຈັດຕັ້ງປະຕິບັດການສະໜັບສະໜູນທຶນສ້າງຄວາມເຂັ້ມແຂງດ້ານວິທະຍາສາດ ເຕັກໂນໂລຊີ ແລະ ນະວັດຕະກຳ;
5) ສັນຍາ, ແບບພິມ ສຳລັບການນຳສະເໜີຫົວຂໍ້ຄົ້ນຄວ້າວິທະຍາສາດ ແລະ ການຕິດຕາມ, ກວດກາ, ປະເມີນຜົນ ຫົວຂໍ້ຄົ້ນຄວ້າ ແລະ ອື່ນໆ, ລວມ 68 ສະບັບ;
6) ສຳເລັດສຶກສາ, ຄົ້ນຄວ້າ ແລະ (ຮ່າງ) ແຜນດຳເນີນງານ ປີ 2023-2025 ຂອງສະພາວິທະຍາສາດແຫ່ງຊາດ;
7) ສຳເລັດການຄົ້ນຄວ້າຄະນະປະຈຳ ແລະ ໜ່ວຍງານວິຊາການຂອງ ສະພາວິທະຍາສາດແຫ່ງຊາດ;
8) ສຳເລັດກອງປະຊຸມນັກຄົ້ນຄວ້າວິທະຍາສາດ ພົບປະການນຳຂັ້ນສູງ ແລະ ລະດົມແນວຄວາມຄິດ ເພື່ອວາງແຜນງານການຄົ້ນຄວ້າ ແລະ ການກຳນົດຫົວຂໍ້ຄົ້ນຄວ້າວິທະຍາສາດ ທີ່ເປັນບູລິມະສິດຂອງຂະແໜງການ ຈຳນວນ 2 ຄັ້ງ, ມີນັກຄົ້ນຄວ້າເຂົ້າຮ່ວມຫຼາຍກວ່າ 500 ເທື່ອຄົນ;
9) ສຳເລັດກອງປະຊຸມຄັ້ງປະຖົມມະລຶກ ສະພາວິທະຍາສາດແຫ່ງຊາດ ໃນການຮັບຮອງ ຫຼັກການພື້ນຖານການນຳໃຊ້ພາສາລາວ, ພ້ອມທັງນຳສະເໜີນາຍົກອອກດຳລັດ ແລະ ປະກາດໃຊ້ ຢ່າງເປັນທາງການ;
10) ສ້າງ, ພັດທະນາເວັບໄຊ, ເຄື່ອງໝາຍສັນຍາລັກ (Logo) ຂອງ ກພວຕ, ພ້ອມທັງ, ປ້ອນຂໍ້ມູນ ແລະ ອັບເດດຂໍ້ມູນ ເປັນປົກກະຕິ, ຕໍ່ເນື່ອງ;
11) ສ້າງຖານຂໍ້ມູນ ສຳລັບການລົງທະບຽນນັກຄົ້ນຄວ້າ, ເກັບກຳສະຖິຕິ ແລະ ຊຸກຍູ້ສົ່ງເສີມ ການລົງທະບຽນຂອງນັກຄົ້ນຄວ້າວິທະຍາສາດ ລະດັບປະລິນຍາໂທ, ປະລິນຍາເອກ, ທີ່ມີຜົນງານຕີພິມຜົນການຄົ້ນຄວ້າໃນວາລະສານພາຍໃນ ແລະ ສາກົນ ໄດ້ຫຼາຍກວ່າ 655 ຄົນ;
12) ປະກາດຮັບສະໝັກຫົວຂໍ້ຄົ້ນຄວ້າວິທະຍາສາດ ປະຈຳປີ 2024 ຈຳນວນ 01 ຄັ້ງ, ເກັບກຳສັງລວມຫົວຂໍ້ຄົ້ນຄວ້າໄດ້ຈຳນວນ 201 ຫົວຂໍ້ ພ້ອມກັນນີ້, ໄດ້ກຳນົດເລກລະຫັດຂອງຫົວຂໍ້ຄົ້ນຄວ້າສອດຄ່ອງຕາມ

ລະບຽບການຂອງກະຊວງແຜນການ ແລະ ການລົງທຶນອາງອອກ ແລະ ສຳເລັດ ເຊັນສັນຍາ ຈັດຕັ້ງປະຕິບັດຫົວຂໍ້ຄົ້ນຄວ້າ ປີ 2024 ຈຳນວນ 37 ຫົວຂໍ້;

13) ສຳເລັດຈັດສຳມະນາ, ຝຶກອົບຮົມ ແລະ ເຜີຍແຜ່ ກ່ຽວກັບລະບຽບການ ການຄຸ້ມຄອງກອງທຶນ ໃຫ້ແກ່ຄະນະຮັບຜິດຊອບຫົວໜ້າຫົວຄົ້ນຄວ້າ; ຄະນະກຳມະການວິຊາການພິຈາລະນາ, ຄັດເລືອກຫົວຂໍ້ຄົ້ນຄວ້າ; ແລະ ຄະນະກຳມະການວິຊາການ ຕິດຕາມ ກວດກາ ປະເມີນຜົນຫົວຂໍ້ຄົ້ນຄວ້າ ລວມ ຈຳນວນ 08 ຄັ້ງ, ມີຜູ້ເຂົ້າຮ່ວມ 580 ເທື່ອຄົນ. ພ້ອມກັນນີ້, ສຳເລັດການຕິດຕາມ ກວດກາ ຄວາມຄືບໜ້າ ປະຕິບັດຫົວຂໍ້ຄົ້ນຄວ້າ ປີ 2023, ໄດ້ຈຳນວນ 23 ຫົວຂໍ້;
14) ສຳເລັດຈັດປະຊຸມ, ເຜີຍແຜ່ລະບຽບການກອງທຶນໃຫ້ແກ່ສະຖານການຄົ້ນຄວ້າວິທະຍາສາດຂອງຂະແໜງການ ແລະ ມະຫາວິທະຍາໄລ ຢູ່ຂັ້ນສູງການ, ທ້ອງຖິ່ນ ຈຳນວນ 18 ຄັ້ງ, ມີນັກຄົ້ນຄວ້າ, ຄູ-ອາຈານ ເຂົ້າຮ່ວມຫຼາຍກວ່າ 1.260 ເທື່ອຄົນ;
15) ສຳເລັດການສຶກສາ, ຄົ້ນຄວ້າ ບັນດາເອກະສານ, ໜັງສືສະເໜີ ຂອງຂະແໜງການ ແລະ ລາຍງານການນຳ ໃນການອະນຸມັດງົບປະມານ ກພວຕ ເຊັ່ນ: ສ້າງຍຸດທະສາດ ແລະ ແຜນດຳເນີນງານແຫ່ງຊາດ ດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ປີ 2026-2040, ຈັດກິດຈະກຳສະເຫຼີມສະຫຼອງວັນວິທະຍາສາດແຫ່ງຊາດ ປີ 2023 ແລະ 2024, ງານວາງສະແດງ, ເຜີຍແຜ່ຜົນງານການຄົ້ນຄວ້າວິທະຍາສາດ ຂອງບັນດາຂະແໜງການ, ກອງປະຊຸມນັກວິທະຍາສາດ, ວັນຄາລະວານວິທະຍາສາດ ຈຳນວນ 16 ຄັ້ງ.

## 1.2. ບັນຫາ ແລະ ສິ່ງທ້າທາຍ

1) ບັນດານິຕິກຳ, ບຸກຄະລາກອນທີ່ກ່ຽວຂ້ອງກັບການຈັດຕັ້ງເຄື່ອນໄຫວຂອງສະພາວິທະຍາສາດ ແຫ່ງຊາດ ຍັງບໍ່ທັນເປັນລະບົບຄົບຊຸດ ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ກໍ່ຄືການສົ່ງເສີມວຽກງານວິທະຍາສາດ ແລະ ເຕັກໂນໂລຊີ ຍັງບໍ່ທັນມີປະສິດທິຜົນເທົ່າທີ່ຄວນ;
2) ຄວາມຮູ້, ຄວາມສາມາດຂອງພະນັກງານຫ້ອງການສະພາວິທະຍາສາດແຫ່ງຊາດ ຈຳນວນໜຶ່ງຕໍ່າກັບວຽກງານຄຸ້ມຄອງສົ່ງເສີມການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ ຍັງມີຈຳກັດ;
3) ການຈັດຕັ້ງປະຕິບັດວຽກງານຕົວຈິງ ບໍ່ໄປຕາມເວລາ ແລະ ບໍ່ໄດ້ຮັບຜົນຕາມແຜນການທີ່ຄາດໄວ້ເທົ່າທີ່ຄວນ.

## 1.3. ບູລິມະສິດສາລັບສົກຮຽນ 2025-2026

### 1.3.1. ຈຸດປະສົງ

1) ເພື່ອຈັດຕັ້ງຜັນຂະຫຍາຍຍຸດທະສາດ ຂອງກະຊວງສຶກສາທິການ ແລະ ກິລາ, ເວົ້າສະເພາະແຜນການເຄື່ອນໄຫວວຽກງານ 5 ປີ ຂອງຫ້ອງການສະພາວິທະຍາສາດແຫ່ງຊາດ ແລະ ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ໃຫ້ສຳເລັດຕາມລະດັບຄາດໝາຍ;
2) ເພື່ອສ້າງຄວາມເຂັ້ມແຂງ ໃຫ້ແກ່ວຽກງານຄຸ້ມຄອງ, ສົ່ງເສີມ, ການຕິດຕາມ ກວດກາ ແລະ ການສະໜອງທຶນ ໃຫ້ແກ່ການຄົ້ນຄວ້າວິທະຍາສາດ ໃຫ້ຕ້ອງສອດຄ່ອງຕາມຄວາມຮຽກຮ້ອງຕ້ອງການ ຂອງການພັດທະນາເສດຖະກິດ-ສັງຄົມ ໃຫ້ມີປະສິດທິຜົນສູງ.

### 1.3.2. ຄາດໝາຍ

1) ຄຸ້ມຄອງສົ່ງເສີມການຄົ້ນຄວ້າ, ພັດທະນາວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ໃຫ້ເປັນລະບົບ, ເຂັ້ມແຂງ ແລະ ມີກົນໄກໃນການຈັດຕັ້ງເຄື່ອນໄຫວທີ່ສອດຄ່ອງ;
2) ຄົ້ນຄວ້າບັນດານິຕິກຳທີ່ມີຢູ່ ແລະ ປັບປຸງຄືນ ທີ່ເປັນບ່ອນອີງໃນການຈັດຕັ້ງປະຕິບັດ ເພື່ອຄຸ້ມຄອງ ແລະ ສົ່ງເສີມການຄົ້ນຄວ້າຈຳນວນ 08 ສະບັບ;
3) ສະໜັບສະໜູນທຶນ ໃນການຊຸກຍູ້ສົ່ງເສີມການຄົ້ນຄວ້າພັດທະນາວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ຂອງຂະແໜງການ ເປັນຕົ້ນເຊັ່ນ: ປູກຈິດສຳນຶກໃຫ້ແກ່ໄວໜຸ່ມ, ການຄົ້ນຄວ້າໃນສະຖານການ

ສຶກສາຊັ້ນສູງ ແລະ ໃນສະຖານການຄົ້ນຄວ້າຂອງຂະແໜງການ ໂດຍການມີສ່ວນຮ່ວມຂອງຊຸມຊົນກັບຜູ້ປະກອບການ.

### 1.3.3. ຕົວຊີ້ບອກ

1) ສ້າງຄວາມເຂັ້ມແຂງ ລະບົບການ ບໍລິຫານ ແລະ ການຄຸ້ມຄອງ ສົ່ງເສີມວຽກງານການຄົ້ນຄວ້າວິທະຍາສາດ ເຕັກໂນໂລຊີ ແລະ ນະວັດຕະກໍາ;
2) ພັດທະນາຊັບພະຍາກອນມະນຸດດ້ານການຄຸ້ມຄອງ ແລະ ການຄົ້ນຄວ້າວິທະຍາສາດ ເຕັກໂນໂລຊີ ແລະ ນະວັດຕະກໍາ;
3) ສ້າງຄວາມເຂັ້ມແຂງດ້ານຄວາມອາດສາມາດດ້ານວຽກງານການຄົ້ນຄວ້າວິທະຍາສາດ ເຕັກໂນໂລຊີ ແລະ ນະວັດຕະກໍາ;

### 1.3.4. ຍຸດທະສາດ

**ຍຸດທະສາດ 1:** ສ້າງຄວາມເຂັ້ມແຂງລະບົບການບໍລິຫານ ແລະ ການຄຸ້ມຄອງວຽກວິທະຍາສາດ ເຕັກໂນໂລຊີ ແລະ ນະວັດຕະກໍາ

**ວຽກຈຸດສຸມ:**

1) ສ້າງນະໂຍບາຍ, ແຜນງານ ແລະ ນິຕິກໍາການຄຸ້ມຄອງ ແລະ ຊຸກຍູ້ສົ່ງເສີມການຄົ້ນຄວ້າພັດທະນາ ວິທະຍາສາດ ເຕັກໂນໂລຊີ ແລະ ນະວັດຕະກໍາ;
2) ສ້າງດໍາລັດວ່າດ້ວຍການຄົ້ນຄວ້າວິທະຍາສາດ;
3) ປັບປຸງດໍາລັດວ່າດ້ວຍກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ;
4) ສ້າງ ຂໍ້ຕົກລົງວ່າດ້ວຍການຍ້ອງຍໍ ແລະ ນະໂຍບາຍການຄົ້ນຄວ້າວິທະຍາສາດ;
5) ປັບປຸງດໍາລັດວ່າດ້ວຍສະພາວິທະຍາສາດແຫ່ງຊາດ;
6) ປັບປຸງຂໍ້ຕົກລົງວ່າດ້ວຍກໍານົດກົດໝາຍງົບປະມານ ກພວຕ;
7) ສ້າງຂໍ້ຕົກລົງວ່າດ້ວຍຄ່າບໍລິການຂອງ ກພວຕ;
8) ປັບປຸງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການຄົ້ນຄວ້າວິທະຍາສາດ ຂອງ ກພວຕ;

**ຍຸດທະສາດທີ 2**: ພັດທະນາຊັບພະຍາກອນມະນຸດດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກໍາ

**ວຽກຈຸດສຸມ:**

1) ສ້າງ, ພັດທະນາຊັບພະຍາກອນມະນຸດຜູ້ບໍລິຫານການຄຸ້ມຄອງການຄົ້ນຄວ້າ;
2) ສ້າງ, ພັດທະນາຊັບພະຍາກອນມະນຸດຜູ້ເຮັດຄົ້ນຄວ້າພັດທະນາວິທະຍາສາດເຕັກໂນໂລຊີ ແລະ ນະວັດຕະກໍາ ແລະ ຜະລິດຕະພັນພູມປັນຍາທ້ອງຖິ່ນ;
3) ປູກຈິດສໍານຶກສ້າງຄວາມອາດສາມາດດ້ານການຄົ້ນຄວ້າວິທະຍາສາດເຕັກໂນໂລຊີ ແລະ ນະວັດຕະກໍາ;
4) ສ້າງຄວາມເຂັ້ມແຂງທາງດ້ານບຸກຄະລາກອນ, ນັກຄົ້ນຄວ້າໃນການສ້າງຜະລິດຕະພັນ;
5) ສ້າງແຜນງານວ່າດ້ວຍການຄົ້ນຄວ້າວິທະຍາສາດ 2026-2030 ຂອງກອງທຶນພັດທະນາວິທະຍາ ສາດ ແລະ ເຕັກໂນໂລຊີ;
6) ເຜີຍແຜ່, ຖ່າຍທອດຜົນການຄົ້ນຄວ້າວິທະຍາສາດ;
7) ກອງປະຊຸມປະຈໍາປີຂອງສະພາວິທະຍາສາດແຫ່ງຊາດ; ກອງປະຊຸມນັກຄົ້ນຄວ້າວິທະຍາສາດຮ່ວມກັບຜູ້ປະກອບການ.

**ຍຸດທະສາດທີ 3**: ສ້າງຄວາມເຂັ້ມແຂງດ້ານຄວາມອາດສາມາດ ແລະ ພື້ນຖານໂຄງລ່າງການຄົ້ນຄວ້າວິທະ ຍາສາດ

**ວຽກຈຸດສຸມ:**

1) ສ້າງ, ປັບປຸງ ແລະ ພັດທະນາ ລະບົບຖານຂໍ້ມູນເຄືອຂ່າຍການຄຸ້ມຄອງ ແລະ ການຄົ້ນຄວ້າວິທະຍາ ສາດ ຂອງ ສະພາວິທະຍາສາດແຫ່ງຊາດ ແລະ ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ;
2) ສ້າງ, ພັດທະນາເວັບໄຊຂອງ ສະພາວິທະຍາສາດແຫ່ງຊາດ ແລະ ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ; ສ້າງ, ສະໜັບສະໜູນວາລະສານການຄົ້ນຄວ້າວິທະຍາສາດ; ສ້າງ, ສະໜັບສະໜູນພື້ນຖານໂຄງລ່າງການຄົ້ນຄວ້າວິທະຍາສາດ;
3) ຝຶກອົບຮົມສ້າງຄວາມເຂັ້ມແຂງທາງດ້ານການຄົ້ນຄວ້າວິທະຍາສາດ.

**ຍຸດທະສາດ 4:** ຄົ້ນຄວ້າ ແລະ ພັດທະນາວິທະຍາສາດ ເຕັກໂນໂລຊີ ແລະ ນະວັດຕະກໍາ ໃນການພັດທະນາເສດຖະກິດສັງຄົມ ແລະ ສິ່ງແວດລ້ອມ

**ວຽກຈຸມສຸມ:**

1) ສະໜັບສະໜູນສົ່ງເສີມການຄົ້ນຄວ້າວິທະຍາສາດຂອງຂະແໜງການ ຕາມແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ X;
2) ສົ່ງເສີມການນໍາໃຊ້ຜົນການຄົ້ນຄວ້າວິທະຍາສາດ ເຂົ້າໃນການຜະລິດເປັນສິນຄ້າ;
3) ຈັດສັນງົບປະມານການຄົ້ນຄວ້າວິທະຍາສາດ;
4) ຄຸ້ມຄອງ ແລະ ສົ່ງເສີມການຄົ້ນຄວ້າວິທະຍາສາດ.

**ຍຸດທະສາດ 5:** ເພີ່ມທະວີສ້າງເຄືອຂ່າຍການຮ່ວມມື ແລະ ມີສ່ວນຮ່ວມຂອງຂະແໜງການທີ່ກ່ຽວຂ້ອງດ້ານວິທະຍາສາດ ເຕັກໂນໂລຊີ ແລະ ນະວັດຕະກໍາ

**ວຽກຈຸມສຸມ:**

1) ຮ່ວມມືກັບກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ສສ ຫວຽດນາມ ໃນການສ້າງຄວາມອາດສາມາດໃນການຄຸ້ມຄອງກອງທຶນ;
2) ຮ່ວມມືກັບ ສ ເກົາຫຼີ ໂຄງການຄົ້ນຄວ້າ ແລະ ພັດທະນາຜະລິດຕະພັນຊີງດໍາ ແບບຍືນຍົງ ໃນ ສປປ ລາວ
3) ແລກປ່ຽນບົດຮຽນກັບກອງທຶນ, ສະຖາບັນຄົ້ນຄວ້າ, ມະຫາວິທະຍາໄລ ແລະ ຫົວໜ່ວຍທີ່ເຮັດການຄົ້ນຄວ້າ ແລະ ບັນດາຜູ້ປະກອບການ ທີ່ເຮັດການນໍາໃຊ້ຜົນການຄົ້ນຄວ້າວິທະຍາສາດ.

## 2. ວຽກງານກົມຄຸ້ມຄອງວິທະຍາສາດ

### 2.1. ຜົນສໍາເລັດປະຈໍາສົກປີ 2024-2025

1) ສໍາເລັດ ການສະຫຼຸບແຜນພັດທະນາວຽກງານວິທະຍາສາດ ຂອງຂະແໜງການຍ່ອຍວິທະຍາສາດ 5 ປີ (2021-2025) ແລະ ສ້າງແຜນວຽກຈຸດສຸມ 5 ປີ (2026-2030);
2) ສໍາເລັດ ການຈັດພິມ ແລະ ເຜີຍແຜ່ກົດໝາຍ ວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ ສະບັບປັບປຸງ ທີ່ຖືກຮັບຮອງ ແລະ ປະກາດໃຊ້ ຂອງປະທານປະເທດ ສະບັບເລກທີ 022/ປປທ, ລົງວັນທີ 10 ກຸມພາ 2023 ຢູ່ຂັ້ນສູງກາງ;
3) ສໍາເລັດ ການຮ່າງຍຸດທະສາດ ແລະ ແຜນພັດທະນາວິທະຍາສາດ ເຕັກໂນໂລຊີ ແລະ ນະວັດຕະກໍາ ແຫ່ງຊາດ 2026-2040 (ປະຈຸບັນ ລໍຖ້າການຮັບຮອງຈາກລັດຖະບານ);
4) ສໍາເລັດ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງແຫຼ່ງກໍາເນີດລັງສີ ຂອງທ່ານ ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ສະບັບເລກທີ 1958/ສສກ, ລົງວັນທີ 26 ເມສາ 2024;
5) ສໍາເລັດ ການປັບປຸງ ຮ່າງດໍາລັດ ວ່າດ້ວຍການສະເຫຼີມສະຫຼອງສັບປະດາວິທະຍາສາດ ແຫ່ງຊາດ ມາເປັນ ຂໍ້ຕົກລົງຂັ້ນກະຊວງ ຕາມຄໍາເຫັນຂອງກະຊວງຍຸຕິທໍາ, ເຊິ່ງປະຈຸບັນກໍາລັງລໍຖ້າສະເໜີເຂົ້າຜ່ານກອງປະຊຸມສາມັນຂອງສະພາວິທະຍາສາດແຫ່ງຊາດ;

6) ສຳເລັດ ການຈັດສຳມະນາ ເຜີຍແຜ່ວຽກງານວິທະຍາສາດ ຮ່ວມກັບ ຫ້ອງການສະພາວິທະຍາສາດແຫ່ງຊາດ ແລະ ສະຖາບັນຄົ້ນຄວ້າວິທະຍາສາດ ແລະ ນະວັດຕະກຳ ໃຫ້ແກ່ພະແນກສຶກສາທິການ ແລະ ກິລາ ທົ່ວປະເທດ ໃນຄັ້ງວັນທີ 23-25 ມິຖຸນາ 2025;
7) ສຳເລັດການຈັດພິທີສະເຫຼີມສະຫຼອງວັນວິທະຍາສາດແຫ່ງຊາດ 12 ຕຸລາ 2024 ຮ່ວມກັບມະຫາວິທະຍາໄລແຫ່ງຊາດ, ໂດຍໄດ້ຈັດກິດຈະກຳຫຼັກຄື: 1. ຖະແຫຼງຂ່າວຄວາມສຳຄັນຂອງວັນວິທະຍາ ສາດ, ຕິດຕັ້ງປ້າຍໂຄສະນາ ຕາມສາຍທາງຫຼັກໃນນະຄອນຫຼວງວຽງຈັນ; 2. ສຳມະນາວິທະຍາສາດ ແລະ ຈັດເວທີສົນທະນາແລກປ່ຽນບົດຮຽນກ່ຽວກັບການສະໜອງທຶນການຄົ້ນຄວ້າ; 3. ວາງສະແດງຜົນງານການຄົ້ນຄວ້າວິທະຍາສາດ ແລະ ສາທິດທົດລອງວິທະຍາສາດ; 4. ແຂ່ງຂັນຂຽນບົດຄວາມ ແລະ ຖາມ-ຕອບ ວິທະຍາສາດ;
8) ສຳເລັດການສ້າງສຳນວນຂໍ້ມູນວຽກງານວິທະຍາສາດຂອງຂະແໜງວິທະຍາສາດ ເພື່ອເຊື່ອມຍົງເຂົ້າກັບລະບົບ LESMIS ຂອງກະຊວງ;
9) ສຳເລັດການລົງຕິດຕາມ-ກວດສອບຄວາມປອດໄພ ແລະ ຄວາມໝັ້ນຄົງຂອງການນຳໃຊ້ແຫຼ່ງກຳເນີດລັງສີທັງພາກລັດ ແລະ ເອກະຊົນຈຳນວນ: 08 ຄັ້ງ ໃນປີ 2024 ໂດຍສົມທົບກັບກົມເຄມີສາດ, ກະຊວງ ປ້ອງກັນປະເທດ ແລະ ກົມຕຳຫຼວດສືບ ສວນ-ສອບສວນ, ກະຊວງປ້ອງກັນຄວາມສະຫງົບ;
10) ສຳເລັດການເປັນເຈົ້າພາບຈັດກອງປະຊຸມປະຈຳປີຄັ້ງທີ 11 ຂອງໜ່ວຍງານເຄືອຂ່າຍອົງກອນຄຸ້ມຄອງພະລັງງານປະລຳມະນູອາຊຽນ (ASEANTOM), ທີ່ແຂວງຫຼວງພະບາງ ລະຫວ່າງວັນທີ 15-16 ສິງຫາ 2024;
11) ສຳເລັດ ການສະໜອງເຄື່ອງວັດແທກຄ່າປະລິມານລັງສີສ່ວນບຸກຄົນ (OSL Dosimeter) ໃຫ້ກົມເຄມີສາດ, ກະຊວງປ້ອງກັນປະເທດ, ໂຮງໝໍມະໂຫສົດ ແລະ ໂຮງໝໍກະເສມລາດ ລວມທັງໝົດ 65 ເຄື່ອງ;
12) ສຳເລັດ ການອອກໃບຢັ້ງຢືນການນຳໃຊ້ແຫຼ່ງກຳເນີດລັງສີ Cs-137 ຈຳນວນ 06 ຫົວໜ່ວຍ ໃຫ້ແກ່ບໍລິສັດເອກະຊົນ ທີ່ມີການນຳໃຊ້ແຫຼ່ງກຳເນີດລັງສີ;
13) ສຳເລັດ ການສອບທຽບເຄື່ອງວັດແທກຄ່າປະລິມານລັງສີສ່ວນບຸກຄົນ ໃຫ້ແກ່ໂຮງໝໍມິດຕະພາບຈຳນວນ 19 ເຄື່ອງ ແລະ ການອອກໃບຢັ້ງຢືນການອ່ານຄ່າປະລິມານລັງສີທີ່ໄດ້ຮັບ ຂອງພະນັກງານເຮັດວຽກກ່ຽວລັງສີ (ພະແນກລັງສີ-ຮູບພາບການແພດ ແລະ ການສູນເສຍ);
14) ສຳເລັດການຈັດຝຶກອົບຮົມວິຊາການ ໃຫ້ກັບພະນັກງານຂະແໜງຫຼັກການອ້ອມຂ້າງ (ກົມເຄມີສາດກະຊວງປ້ອງກັນປະເທດ, ໂຮງໝໍມິດຕະພາບ ແລະ ຄະນະວິທະຍາສາດທຳມະຊາດ ມຊ) ກ່ຽວກັບການປ້ອງກັນຄວາມປອດໄພຂອງພະນັກງານທີ່ເຮັດວຽກກັບລັງສີ ແລະ ຈັດຝຶກອົບຮົມວິຊາການກ່ຽວກັບວິທີຕອບໂຕ້, ຊອກຄົ້ນ, ກຳນົດ ແລະ ປ້ອງກັນແຫຼ່ງເນີດລັງສີໃຫ້ແກ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງຂອງພາກລັດໃນຂັ້ນສູນກາງ;
15) ສຳເລັດການລົງນາມບົດບັນທຶກຮ່ວມມືດ້ານວິຊາການລະຫວ່າງກົມຄຸ້ມຄອງວິທະຍາສາດ ສສກ ແລະ ຄະນະວິທະຍາສາດທຳມະຊາດ ມະຫາວິທະຍາໄລແຫ່ງຊາດ, ເພື່ອການສ້າງຄວາມອາດສາມາດໃຫ້ແກ່ຄູ-ອາຈານ, ພະນັກງານ ແລະ ນັກສຶກສາ ດ້ານວຽກງານຄຸ້ມຄອງລັງສີ-ນິວເຄຍ ດຳເນີນການຄົ້ນຄ້ວາ ວິທະຍາສາດ ແລະ ແລກປ່ຽນທາງດ້ານວິຊາການ ໃນການສ້າງຫຼັກສູດຟີຊິກນິວເຄຍ;
16) ສຳເລັດກອງປະຊຸມປຶກສາຫາລືຂອງຈຸດປະສານງານແຫ່ງຊາດວ່າດ້ວຍການຫຼຸດຜ່ອນຄວາມສ່ຽງດ້ານເຄມີ, ຊີວະພາບ, ກຳມັນຕະພາບລັງສີ ແລະ ນິວເຄຍ ຂອງ ສປປ ລາວ ແລະ ກອງປະຊຸມປຶກສາຫາລືກ່ຽວກັບການສ້າງຮ່າງດຳລັດການຄຸ້ມຄອງການເຂົ້າເຖິງ ແລະ ແບ່ງປັນຜົນປະໂຫຍດຈາກການນຳໃຊ້ຊັບພະຍາກອນພັນທຸກຳ;

17) ສຳເລັດການລົງຕິດຕັ້ງສະຖານີວັດແທກຄ່າປະລິມານລັງສີໃນສິ່ງແວດລ້ອມ ຢູ່ 04 ມະຫາວິທະຍາໄລທົ່ວປະເທດ (ມະວິທະຍາໄລແຫ່ງຊາດ, ມະຫາວິທະຍາໄລສຸພານຸວົງ, ມະຫາວິທະຍາໄລສະຫັວນນະເຂດ ແລະ ມະຫາວິທະຍາ ໄລຈຳປາສັກ);

## 2.2. ບັນຫາ ແລະ ສິ່ງທ້າທາຍ

1) ການຈັດຕັ້ງປະຕິບັດ ແຜນການ ແລະ ການສະຫຼຸບວຽກງານຂອງກົມກໍຄືຂະແໜງ ການຍ່ອຍວິທະຍາສາດ ຍັງບໍ່ທັນໄດ້ດີ ຍ້ອນແຜນການຍັງບໍ່ທັນໄດ້ບັນຈຸ ແລະ ຮັບຮອງເຂົ້າໃນແຜນການ ຂອງກະຊວງ;
2) ແຜນການເຄື່ອນໄຫວວຽກຈຸດສຸມທີ່ເປັນບຸລິມະສິດ ຂອງກົມຍັງຂາດຄູ່ຮ່ວມພັດທະນາສະໜັບສະໜູນ. ສະນັ້ນ, ຈຶ່ງເຮັດໃຫ້ການເຄື່ອນໄຫວບາງວຽກງານຂອງກົມ ບໍ່ສາມາດຈັດຕັ້ງປະຕິບັດສຳເລັດຕາມແຜນທີ່ວາງໄວ້.

## 2.3. ບຸລິມະສິດສຳລັບສົກຮຽນ 2025-2026

1) ສືບຕໍ່ເຜີຍແຜ່ກົດໝາຍ ວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ (ສະບັບປັບປຸງໃໝ່) ສະບັບເລກທີ 022/ປປທ, ລົງວັນທີ 10 ກຸມພາ 2023 ທັງສູນກາງ ແລະ ທ້ອງຖິ່ນ;
2) ສືບຕໍ່ຕິດຕາມການຮັບຮອງ ແລະ ປະກາດໃຊ້ ຍຸດທະສາດ ແລະ ແຜນພັດທະນາວິທະຍາສາດ ເຕັກໂນໂລຊີ ແລະ ນະວັດຕະກຳ ແຫ່ງຊາດ 2026-2040 ຈາກລັດຖະບານ ເພື່ອນຳມາຈັດພິມ ແລະ ເຜີຍແຜ່;
3) ສືບຕໍ່ພັດທະນາຖານຂໍ້ມູນສະຖິຕິ-ຂໍ້ມູນ ຂົງເຂດວິທະຍາສາດ (ຂອງຂະແໜງວິທະຍາສາດ) ໃຫ້ສາມາດເຊື່ອມໂຍງເຂົ້າໃນລະບົບ LESMIS ຂອງກະຊວງ;
4) ສືບຕໍ່ປັບປຸງການຮ່າງຂໍ້ຕົກລົງ ວ່າດ້ວຍມາດຕະຖານສະຖາບັນຄົ້ນຄວ້າວິທະຍາສາດ; ສືບຕໍ່ຜ່ານຮ່າງຂໍ້ຕົກລົງວ່າດ້ວຍການສະເຫຼີມສະຫຼອງສັບປະດາວິທະຍາສາດ ໃນກອງປະຊຸມສາມັນຂອງສະພາວິທະຍາສາດແຫ່ງຊາດ;
5) ສືບຕໍ່ກະກຽມການຈັດກິດຈະກຳໃນງານສະເຫຼີມສະຫຼອງສັບປະດາວິທະຍາສາດ ໃນວັນວິທະຍາສາດ ແຫ່ງຊາດ 12 ຕຸລາ ປະຈຳປີ 2025;
6) ສືບຕໍ່ສ້າງຄູ່ມື ຂອງ ທ່ານ ລັດຖະມົນຕີ ສສກ ວ່າດ້ວຍແຜນງານການກຽມຄວາມພ້ອມ ແລະ ຕອບໂຕ້ເຫດການສຸກເສີນທາງລັງສີ ແລະ ນິວເຄຣຍ;
7) ສືບຕໍ່ສ້າງຮ່າງດຳລັດວ່າດ້ວຍການຄຸ້ມຄອງ ແລະ ການແບ່ງປັນຜົນປະໂຫຍດຈາກການນຳໃຊ້ຊັບພະຍາກອນພັນທຸກຳ;
8) ສືບຕໍ່ປັບປຸງຂອບແຜນງານແຫ່ງຊາດ ເພື່ອການຮ່ວມມືເຕັກນິກ-ວິຊາການ ກັບອົງການພະລັງງານປະລຳມະໂນສາກົນ (CPF) 2026-2030.

# 3. ວຽກງານສະຖາບັນຄົ້ນຄວ້າວິທະຍາສາດ ແລະ ນະວັດຕະກຳ

## 3.1. ຜົນສຳເລັດສົກຮຽນ 2024-2025

1) ສະຖາບັນຄົ້ນຄວ້າວິທະຍາສາດ ແລະ ນະວັດຕະກຳ ມີພະນັກງານທັງໝົດ **33** ຄົນ (ຍິງ 14) ກາລັງຮຽນຕໍ່ຕ່າງປະເທດ 3 ຄົນ;
2) ສຳເລັດສະເໜີແຕ່ງຕັ້ງ ຕຳແໜ່ງບໍລິຫານ ປະເພດ 2 ແລະ ປະເພດ 3 ຂອງສະຖາບັນ**,** ການບັນຈຸຊັບຊ້ອນບຸກຄະລະກອນ ທີ່ຮຽນຈົບຈາກຕ່າງປະເທດ ຈຳນວນ 2 ທ່ານ;
3) ສຳເລັດການຈັດຝຶກອົບຮົມການນຳໃຊ້ເຄື່ອງຫ້ອງທົດລອງ(Atomic Absorption Spectrometer);
4) ສຳເລັດການປັບປຸງເວັບໄຊ໌ ສະຖາບັນ; ຈັດທຳວາລະສານ ວິທະຍາສາດ ເຕັກນິກ ປະຈຳໄຕມາດ;

5) ສໍາເລັດເຜີຍແຜ່ຜົນງານການຄົ້ນຄ້ວາ ຂໍ້ມູນວິທະຍາສາດ ແລະ ນະວັດຕະກໍາ ທີ່ແຂວງ ສະຫວັນນະເຂດ;
6) ສໍາເລັດການຄົ້ນຄວ້າຜະລິດຕະພັນສະບູ, ນ້ຳຢາລ້າງຈານ, ສະບູແຫຼວ 3 ສູດ, ສະບູກ້ອນ 5 ສູດ, ນ້ຳຢາລ້າງຈານ 4 ສູດ ແລະ ສາມາດຜະລິດ ຜະລິດຕະພັນຕົວແບບໄດ້ ຈໍານວນ 200 ອັນ, ທູບ ແລະ ສະເປໄລ່ຍຸງ ເພື່ອສ້າງເປັນຜະລິດຕະພັນ;
7) ປູກຈິດສໍານຶກວິທະຍາສາດຂັ້ນພື້ນຖານໃຫ້ນັກຮຽນຊັ້ນມັດທະຍົມຕອນຕົ້ນ ແລະ ຕອນປາຍເມືອງໄຊທານີ ປະຈໍາປີ 2024. ນອກຈາກນີ້ຍັງໄດ້ຮ່ວມມືກັບນັກຄົ້ນຄວ້າ-ວິໄຈວິທະຍາສາດ ແລະ ນະວັດຕະກໍາ ແລະ ໄດ້ຄົ້ນຄວ້າ ສ້າງຄູ່ມື ແລະ ບົດແນະນໍາການນໍາໃຊ້ເຄື່ອງທົດລອງທໍລະນີວິທະຍາ.

### 3.2. ບັນຫາ ແລະ ສິ່ງທ້າທາຍ

1) ການຈັດຕັ້ງປະຕິບັດແຜນການ 5 ປີ ຂອງສະຖາບັນຄົ້ນຄວ້າວິທະຍາສາດ ແລະ ນະວັດຕະກໍາ ບໍ່ຖືກບັນຈຸຢູ່ໃນແຜນພັດທະນາການສຶກສາ ແລະ ກິລາ ຄັ້ງທີ 9 ປີ 2021-2025 ການຈັດຕັ້ງປະຕິບັດແຜນແມ່ນດໍາເນີນໄປຕາມແຜນກິດຈະກໍາຂອງແຕ່ລະປີ;
2) ການປະຕິບັດໜ້າທີ່ຂອງກົມຄຸ້ມຄອງວິທະຍາສາດ, ຫ້ອງການສະພາວິທະຍາສາດແຫ່ງຊາດ ແລະ ສະຖາບັນຄົ້ນຄວ້າວິທະຍາສາດ ແລະ ນະວັດຕະກໍາ ຍັງມີບາງໜ້າທີ່ຊໍ້າຊ້ອນກັນ ເປັນຕົ້ນ ໃຫ້ບໍລິການທາງດ້ານວິຊາການ ແລະ ສະໜອງຂໍ້ມູນຂ່າວສານ ກ່ຽວກັບວຽກງານວິທະຍາສາດ ແລະ ນະວັດຕະກໍາ;
3) ແບບແຜນວິທີເຮັດວຽກ ແລະ ຄວາມເປັນເຈົ້າການ ບວກກັບຄວາມຮູ້ຄວາມສາມາດວິຊາການສະເພາະດ້ານ, ຄວາມຊໍານິຊໍານານງານ ຂອງພະນັກງານໂດຍສະເພາະດ້ານການຄົ້ນຄວ້າ-ວິໄຈ ລົງເລິກວິຊາການ ແລະ ການບໍລິການວິຊາການ ນັບຈໍາກັດ ເຮັດໃຫ້ການປະຕິບັດວຽກງານ ຕົວຈິງ ມີີຜົນສໍາເລັດ ແຕ່ບໍ່ທັນພົ້ນເດັ່ນ;
4) ສະພາບແວດລ້ອມດ້ານສະຖານທີ່ເຮັດວຽກ ເປັນຕົ້ນແມ່ນ ການແກ້ໄຂໄຟຟ້າຫ້ອງທົດລອງກ່ຽວກັບການວິໄຈງົບປະມານຍັງຈໍາກັດ.

### 3.3. ບູລິມະສິດສໍາລັບສົກຮຽນ 2025-2026

1) ສຶກສາຄົ້ນຄວ້າ ແລະ ທົບທວນການຄົ້ນຄວ້າ (ປະຫັວດຄວາມເປັນມາ)ຜ່ານມາກ່ຽວກັບສິ່ງທີ່ມີຊີວິດ ແລະ ທໍລະນີວິທະຍາ ຢູ່ ສປປ ລາວ (ໜ້າວຽກຄົງຄ້າງ)
2) ສ້າງລະບຽບການຄຸ້ມຄອງ ການນໍາໃຊ້ ແລະ ບໍລິການຫ້ອງທົດລອງຊີວະ, ເຄມີ ແລະ ຫ້ອງທົດລອງທໍລະນີວິທະຍາ (ເຄື່ອງບົດຫີນ, ເຄື່ອງອັດເມັດ, ເຄື່ອງຕັດຕົວຢ່າງຫຍາບ, ເຄື່ອງຂັດເງົາຕົວຢ່າງ, ເຄື່ອງອົບແຫ້ງ)
3) ສຶກສາຄວາມຫຼາກຫຼາຍຂອງພືດ ແລະ ເຊື້ອຈຸລະຊີບໃນເຂດນ້ຳອອນ-ພູອາກ, ອຸທະຍານແຫ່ງຊາດນາຍກາຍນ້ຳເທີນ;
4) ສ້າງແຜນຍົກລະດັບທາງດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກໍາ ຂະແໜງການຍ່ອຍວິທະຍາສາດ ຮອດ ປີ 2030;
5) ສ້າງຮ່າງບົດລາຍງານການຄົ້ນຄວ້າ ແລະ ລະດົມແນວຄວາມຄິດຄົ້ນຄວ້າ ແລະ ພັດທະນາລະບົບຖານຂໍ້ມູນການຄົ້ນຄວ້າ, ກອງປະຊຸມທົບທວນບົດລາຍງານສໍາຫຼວດທ່າແຮງວິທະຍາສາດ ແລະ ເຕັກໂນໂລຊີ;
6) ກະກຽມສ້າງ ແລະ ພັດທະນາລະບົບຖານຂໍ້ມູນການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກໍາ; ກະກຽມຈັດງານວາງສະແດງຜົນງານການຄົ້ນຄວ້າ ປະຈໍາປີ 2026; ສືບຕໍ່ຈັດຕັ້ງປະຕິບັດບົດບັນທຶກຄວາມເຂົ້າໃຈການຮ່ວມມື 4 ສະບັບ.

# X. ຂະແໜງການຍ່ອຍກິລາ-ກາຍຍະກຳ

## 1. ວຽກງານກິລາ-ກາຍຍະກຳມວນຊົນ, ພະລະ ແລະ ສິລະປະສຶກສາ

### 1.1. ສະພາບລວມ

ກິລາ-ກາຍຍະກຳມວນຊົນ, ພະລະ ແລະ ສິລະປະສຶກສາ ແມ່ນວຽກງານໜຶ່ງທີ່ໄດ້ກຳນົດຢູ່ໃນຍຸດທະສາດການພັດທະນາຊັບພະຍາກອນມະນຸດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ທີ່ລັດຖະບານ ກຳນົດໃນແຕ່ລະປີ "ສົ່ງເສີມໃຫ້ມວນຊົນ ທຸກເພດທຸກໄວ ເຂົ້າຮ່ວມການຫັດກາຍຍະບໍລິຫານ, ການອອກກຳລັງກາຍ, ການຫຼິ້ນກິລາ ແລະ ເຂົ້າຮ່ວມການສ້າງຂະບວນການເຄື່ອນໄຫວ ຈັດກິດຈະກຳ ການແຂ່ງຂັນກິລາ-ກາຍຍະກຳມວນຊົນປະຈຳປີ, ແຂ່ງຂັນກິລາວັນບຸນປະເພນີ ແລະ ແຂ່ງຂັນກິລາ-ກາຍຍະກຳມວນຊົນ ສະເຫຼີມສະຫຼອງວັນສຳຄັນຕ່າງໆຂອງຊາດ-ສາກົນ ແລະ ປະຕິບັດຫຼັກສູດການສຶກສາແນໃສ່ເຮັດໃຫ້ຜູ້ຮຽນມີຄວາມຮູ້, ຄວາມສາມາດພື້ນຖານກ່ຽວກັບກິລາ-ກາຍຍະກຳ, ສຶກສາປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ສິລະປະສຶກສາ ໂດຍຜ່ານບົດຮຽນ, ການເຄື່ອນໄຫວກິດຈະກຳ, ການແຂ່ງຂັນກິລາ-ສິລະປະວັນນະຄະດີ ແລະ ຂະບວນການຕ້ານສິ່ງເສບຕິດໃນສະຖານການສຶກສາ" ເພື່ອຍົກສູງຄຸນນະພາບທາງດ້ານວຽກງານກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ໃຫ້ມີຂະບວນການເຄື່ອນ ໄຫວຝຶກແອບ, ແຂ່ງຂັນ ຖືກຕ້ອງຕາມລະບຽບຫຼັກການ, ເຮັດໃຫ້ເຍົາວະຊົນ, ຊາວໜຸ່ມ ມີຄວາມມັກໃນການອອກກຳລັງກາຍ, ຫຼິ້ນກິລາ, ມີສຸຂະພາບສົມບູນແຂງແຮງ, ມີຄວາມສີວິໄລທາງດ້ານຈິດໃຈ, ສະຫງວນຄວາມງາມ, ຮັກສາມູນເຊື້ອສິລະປະວັດທະນະທຳອັນດີງາມຂອງທ້ອງຖິ່ນ-ຂອງຊາດ ເປັນການພັດທະນາຊັບພະຍາກອນມະນຸດ ຕາມ 3 ລັກສະນະ ແລະ 5 ຫຼັກມູນ ຂອງການສຶກສາແຫ່ງຊາດ. ຜ່ານການຈັດຕັ້ງປະຕິບັດເຮັດໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້, ດັ່ງມີລາຍລະອຽດລຸ່ມນີ້:

1) ຊຸກຍູ້, ສົ່ງເສີມ ມວນຊົນທຸກເພດ, ທຸກໄວ ເຂົ້າຮ່ວມການຫັດກາຍຍະບໍລິຫານ, ອອກກຳລັງກາຍ ການຫຼິ້ນກິລາ-ກາຍຍະກຳ, ແຂ່ງຂັນກິລາ-ກາຍຍະກຳມວນຊົນ ປະຈຳປີ, ແຂ່ງຂັນກິລາປະເພນີ ແລະ ຈັດການແຂ່ງຂັນກິລາສະເຫຼີມສະຫຼອງວັນສຳຄັນຕ່າງໆຂອງຊາດ-ສາກົນ ປະຈຳສົກຮຽນ 2024-2025 ມີຈຳນວນພົນທັງໝົດ 106,837 ຄົນ, ຍິງ 40,854 ຄົນ, ຄິດເປັນເປີເຊັນ 1,50%;

### 1.2. ຜົນສຳເລັດສົກຮຽນ 2024-2025

1) ສຳເລັດການຈັດງານມະຫາກຳກິລານັກຮຽນມັດທະຍົມສຶກສາທົ່ວປະເທດ ຄັ້ງທີ VII ທີ່ ແຂວງສາລະວັນ ລະຫວ່າງ ວັນທີ 13-22 ທັນວາ 2024;
2) ສຳເລັດລົງຊຸກຍູ້ ສົ່ງເສີມ ການສ້າງຕັ້ງສະໂມສອນກິລາກາຍຍະກຳມວນຊົນ ປະເພດຕ່າງໆ ໃນຂັ້ນບ້ານ, ເມືອງ, ແຂວງ/ນະຄອນຫຼວງ ທີ່ແຂວງບໍ່ແກ້ວ ແລະ ແຂວງຫຼວງນ້ຳທາ;
3) ສຳເລັດການປັບປຸງຮ່າງ ນິຕິກຳ ຂໍ້ຕົກລົງ ວ່າດ້ວຍການສ້າງເມືອງ ເທດສະບານ, ນະຄອນຕົວແບບດ້ານກິລາ-ກາຍຍະກຳມວນຊົນ
4) ສຳເລັດການປັບປຸງຮ່າງ ນິຕິກຳ ຂໍ້ຕົກລົງ ວ່າດ້ວຍການຈັດການແຂ່ງຂັນກິລາຄົນພິການ;
5) ສຳເລັດການສ້າງ ແລະ ປັບປຸງ ປຶ້ມຄູ່ມື ກະຕິກາ 14 ປະເພດກິລາຄື: ກິລາເຕັ້ນບາງພື້ນເມືອງລາວ, ກິລາແລ່ນກະໂປະໝາກພ້າວ, ກິລາຂີ່ມ້າເສົາ, ກິລາທຳມ້າ, ຄູ່ມື ກະຕິກາ ກິລາ-ກາຍຍະກຳມວນຊົນ, ຄູ່ມື ກະຕິກາ ກິລາໂຍຄະ, ຄູ່ມື ກະຕິກາ ກິລາໝາກແລ້, ຄູ່ມື ກະຕິກາ ກິລາໝາກຂ່າງບໍ່ມີຫົວ, ຄູ່ມື ກະຕິກາ ກິລາຂີ່ໄມ້ໂປກເປກ, ຄູ່ມື ກະຕິກາ ກິລາດຶງເຊືອກ, ຄູ່ມື ກະຕິກາການແຂ່ງຂັນກິລາເຕັ້ນເຊືອກພື້ນເມືອງລາວ ກະຕິກາກິລາຕີມວຍກາງນ້ຳ, ກິລາເຕັ້ນເຊືອກພື້ນເມືອງລາວ ແລະ ກະຕິກາກິລາຕີມວຍກາງນ້ຳ;

6) ສໍາເລັດເຂົ້າຮ່ວມການແຂ່ງຂັນກິລານັກຮຽນອາຊຽນ ຄັ້ງທີ XIII ທີ່ ດານັງປະເທດ ສສ.ຫວຽດນາມ ປີ 2024 ສາມາດຍາດໄດ້ 1 ຫຼຽນເງິນ ແລະ 3 ຫຼຽນທອງ; ສໍາເລັດ ພິທີສະຫຼຸບຍ້ອງຍໍຜົນງານການເຂົ້າຮ່ວມແຂ່ງຂັນ ກິລານັກຮຽນອາຊຽນ ຄັ້ງທີ 13 ທີ່ນະຄອນດານັງ ສສ ຫວຽດນາມ;
7) ສໍາເລັດການອອກແຈ້ງການ ສະຫຼຸບລາຍງານການຈັດການຮຽນການສອນ ສຶກສາວິຊາພື້ນຖານປ້ອງກັນຕົວໃນຊັ້ນມັດທະຍົມສຶກສາຕອນປາຍ ແລະ ວິຊາສຶກສາປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ;
8) ສໍາເລັດ ການສ້າງຄວາມເຂັ້ມແຂງໃຫ້ຜູ້ບໍລິຫານຢູ່ຕ່າງປະເທດມີ: ກໍາມະການຕັດສິນ 1 ຄົນ, ແພດ 2 ຄົນ, ຄູຝຶກ 10 ຄົນ, ຍິງ 4 ຄົນ, ນັກກິລາ 36 ຄົນ, ຍິງ 25 ຄົນ, ລວມທັງໝົດ 56 ຄົນ, ຄິດເປັນ 0.03%;
9) ສໍາເລັດເຂົ້າຮ່ວມງານແຂ່ງຂັນກິລາພາຣາແລມປິກເກມ ຄັ້ງທີ XVII ທີ່ ນະຄອນຫຼວງປາຣີ, ປະເທດຝຣັ່ງ ວັນທີ 28 ສິງຫາ ຫາ 8 ກັນຍາ 2024;
ສໍາເລັດການເຂົ້າຮ່ວມແຂ່ງຂັນກິລາລົດຖີບຄົນພິການເພື່ອສະສົມຄະແນນຊິງແຊ້ມອາຊີ ຄັ້ງທີ 44 ໄລຍະວັນທີ 5-8 ກຸມພາ 2025 ທີ່ ແຂວງ ພິດສະນຸໂລກ ຣາຊະອານາຈັກໄທ ຈໍານວນ ເຂົ້າຮ່ວມທັງໝົດ 3 ທ່ານ. ລາຍການຈັບເວລາ ຍາດໄດ້ອັນດັບທີ 13 ແລະ ອັນດັບທີ 6 ແລະ ລາຍການທົ່ວໄປ ອັນດັບທີ 10 ແລະ ອັນດັບທີ 5;
10) ກະກຽມຈັດງານມະຫາກໍາກິລາຄົນພິການແຫ່ງຊາດ ຄັ້ງທີ 4 ໄລຍະວັນທີ 13-19 ທັນວາ 2025 ທີ່ ນະຄອນຫຼວງວຽງ ເປັນເຈົ້າພາບ ເປັນຕົ້ນແມ່ນ ກະກຽມຈັດກອງປະຊຸມລະດັບຊາດ ຄັ້ງທີ 1, ຂໍ້ ຕົກລົງຂອງປະທານຈັດງານວ່າດ້ວຍແຕ່ງຕັ້ງກໍາມະການຝ່າຍຕ່າງໆ;
11) ຊຸກຍູ້, ສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງວຽກງານການຈັດການຮຽນການສອນວິຊາສິລະປະສຶກສາໃນວິທະຍາໄລຄູບ້ານເກິນ ແລະ ໂຮງຮຽນປະຖົມສາທິດວິທະຍາໄລຄູບ້ານເກິນ
12) ສໍາເລັດອອກເນື້ອໃນຂໍ້ແຂ່ງຂັນສ້າງຂະບວນການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດປີ 2024-2025 ຂອງ ຂະແໜງການສຶກສາທິການ ແລະ ກິລາ ສະບັບເລກທີ 450/ສສກ, ລົງວັນທີ 9 ເມສາ 2024; ແຈ້ງການໃຫ້ຈັດຕັ້ງປະຕິບັດ ສະບັບເລກທີ 2930/ຫກ, ລົງວັນທີ 20 ພຶດສະພາ 2024;
13) ສໍາເລັດສ້າງຂະບວນເປີດບັ້ນແຂ່ງຂັນສ້າງຂະບວນການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ປີ 2024-2025 ໃນຂະແໜງການສຶກສາທິການ ແລະ ກິລາ;
14) ສໍາເລັດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ 6 ເດືອນທ້າຍປີ2024;
15) ສໍາເລັດຈັດກອງປະຊຸມຮັບຮອງມາດຕະຖານ, ເງື່ອນໄຂການສ້າງໂຮງຮຽນເຕັກນິກວິຊາຊີບປອດຢາເສບຕິດ ແລະ ສໍາເລັດແຜນແຂ່ງຂັນ-ຍ້ອງຍໍສ້າງສະຖານການສຶກສາເຕັກນິກວິຊາຊີບຕົວແບບປອດຢາເສບຕິດ ແລະ ແຈ້ງການ, ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຮັບຮອງສະຖານການສຶກສາເຕັກນິກວິຊາຊີບປອດຢາເສບຕິດຂັ້ນກະຊວງ, ສະບັບເລກທີ 1721 ສສກ, ລົງວັນທີ 22 ເມສາ 2025;
16) ການຈັດຕັ້ງປະຕິບັດແຜນຮັບນັກສຶກສາວິທະຍາໄລສິລະປະສຶກສາໃນສົກຮຽນ 2024-2025 ມີນັກສຶກສາຈໍານວນທັງໝົດ 61 ຄົນ, ຍິງ 45 ຄົນມີ: ລະບົບ 12+2 (ອະນຸປະລິນຍາ: ປີທີ I ມີຈໍານວນ 02 ຄົນ, ຍິງ 01 ຄົນ, ປີທີ II ມີຈໍານວນ 04 ຄົນ, ຍິງ 03 ຄົນ), ລະບົບ 12+4 (ປະລິນຍາຕີ: ປີທີ I ມີຈໍານວນ 02 ຄົນ , ຍິງ 0 ຄົນ, ປີທີ II ມີຈໍານວນ 0 ຄົນ, ຍິງ 0 ຄົນ, ປີທີ III ມີຈໍານວນ 06 ຄົນ, ຍິງ 05 ຄົນ, ປີທີ IV ມີຈໍານວນ 11 ຄົນ, ຍິງ 07 ຄົນ), ລະບົບຕໍ່ເນື່ອງ 2 ປີ (ປະລິນຍາຕີ: ປີທີ I ມີຈໍານວນ 0 ຄົນ, ຍິງ 0 ຄົນ, ປີທີ II ມີຈໍານວນ 0 ຄົນ, ຍິງ 0 ຄົນ), ລະບົບຕໍ່ເນື່ອງພັກສັ້ນປີຮຽນ: ປີທີ II ມີຈໍານວນ 36 ຄົນ, ຍິງ 29 ຄົນ;

17) ການຈັດຕັ້ງປະຕິບັດແຜນຮັບນັກສຶກສາວິທະຍາໄລພະລະສຶກສາ ສົກຮຽນ 2024-2025 ມີນັກສຶກສາ ຈຳນວນທັງໝົດ 82 ຄົນ, ຍິງ 16 ຄົນ ມີ 2 ລະບົບຄື: ລະບົບ 12+4 (ປະລິນຍາຕີ: ປີທີ I ມີຈຳນວນ 04 ຄົນ, ຍິງ 1 ຄົນ, ປີທີ II ມີຈຳນວນ 6 ຄົນ, ຍິງ 0 ຄົນ, ປີທີ III ມີຈຳນວນ 03 ຄົນ, ຍິງ 0 ຄົນ, ປີທີ IV ມີ ຈຳນວນ 05 ຄົນ, ຍິງ 04 ຄົນ), ລະບົບຕໍ່ເນື່ອງພັກສິ້ນປີຮຽນ: ປີທີ I ມີຈຳນວນ 05 ຄົນ, ຍິງ 0 ຄົນ; ປີ II ຈຳນວນ 09 ຄົນ ຍິງ 0 ຄົນ; ປີ III ຈຳນວນ 65 ຄົນ ຍິງ 11 ຄົນ.

### 1.3. ບັນຫາ ແລະ ສິ່ງທ້າທາຍ

1) ການຈັດຕັ້ງຜັນຂະຫຍາຍ ບັນດານິຕິກຳໄຕ້ກົດໝາຍຕ່າງໆ ແລະ ການຈັດຕັ້ງປະຕິບັດ ຍັງເຮັດບໍ່ທັນໄດ້ດີ ເທົ່າຄວນ ແລະ ບໍ່ທັນທົ່ວເຖິງ ເປັນຕົ້ນວຽກງານການໂຄສະນາເຜີຍແຜ່ ແຜນພັດທະນາວຽກງານກິລາມວນ ຊົນ, ພະລະ ແລະ ສິລະປະສຶກສາ ຢູ່ຂັ້ນບ້ານ, ເມືອງ, ເຂດຫ່າງໄກສອກຫຼີກ ຍັງບໍ່ທັນກວ້າງຂວາງ;
2) ການຊຸກຍູ້ ສົ່ງເສີມ ວຽກງານກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ຢູ່ພາຍໃນ ແລະ ຕ່າງປະເທດ ຍັງບໍ່ເປັນຂະບວນການຟົດຟື້ນ;
3) ຊຸກຍູ້ການສ້າງສວນສາທາລະນະສຳລັບອອກກຳລັງກາຍເພື່ອສຸຂະພາບ, ສະຖານທີ່ ຫຼິ້ນກິລາ, ການຈັດການ ແຂ່ງຂັນ ແລະ ການຈັດການຮຽນການສອນ ໃນຂັ້ນບ້ານ, ເມືອງແຂວງ/ນະຄອນຫຼວງ ຍັງບໍ່ຫຼາຍ;
4) ຜູ້ບໍລິຫານ, ຄຸ້ມຄອງ, ວິຊາການ, ວິທະຍາສາດການແພດກິລາ, ກຳມະການຕັດສິນ, ຄູຝຶກມີຈຳນວນບໍ່ຫຼາຍ;
5) ການສ້າງນັກກິລານັກຮຽນ, ກິລາຄົນພິການລຸ້ນສືບທອດ ຢູ່ລະດັບແຂວງ, ນະຄອນ ຫຼວງ ຍັງມີຂອບເຂດ ຈຳກັດ;
6) ການຈັດຕັ້ງການຮຽນການສອນ ວິຊາພະລະສຶກສາ, ວິຊາສິລະປະສຶກສາ ແລະ ສຶກສາວິຊາພື້ນຖານປ້ອງ ກັນຕົວ, ວິຊາສຶກສາປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນສະຖານການສຶກສາ ທຸກຊັ້ນ, ທຸກສາຍ ທັງ ພາກລັດ ແລະ ເອກະຊົນ ຍັງບໍ່ທັນເປັນລະບົບ;
7) ດ້ານງົບປະມານຮັບໃຊ້ ຍັງບໍ່ທັນຕອບສະໜອງ ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າວຽກ.

### 1.4. ບຸລິມະສິດສຳລັບສົກຮຽນ 2025-2026

#### 1.4.1. ຈຸດປະສົງ

ເພື່ອສົ່ງເສີມໃຫ້ມວນຊົນ ທຸກເພດທຸກໄວ ເຂົ້າຮ່ວມການຫັດກາຍຍະບໍລິຫານ, ການອອກກຳລັງກາຍ, ການ ຫຼິ້ນກິລາ ແລະ ເຂົ້າຮ່ວມການສ້າງຂະບວນການເຄື່ອນໄຫວ ຈັດກິດຈະກຳ ຈັດຕັ້ງປະຕິບັດຢ່າງກ້ວາງຂວາງ ແຕ່ສູນ ກາງລົງຮອດທ້ອງຖິ່ນ, ຈັດການແຂ່ງຂັນ ແລະ ເຂົ້າຮ່ວມການແຂ່ງຂັນກິລາ-ກາຍຍະກຳຄົນພິການ, ກິລານັກຮຽນ ສາມັນສຶກສາ, ປັບປຸງ-ຍົກລະດັບການສ້າງຄູ ແລະ ການຈັດຕັ້ງປະຕິບັດຫຼັກສູດການຮຽນການສອນ ວິຊາ ພະລະສຶກສາ ແລະ ສິລະປະສຶກສາ, ຕ້ານ, ສະກັດກັ້ນຢາເສບຕິດ ແລະ ປະກົດການຫຍໍ້ທໍ້ໃນສະຖານການສຶກສາ ແລະ ຈັດຕັ້ງປະຕິບັດຫຼັກສູດການຮຽນການສອນ ສຶກສາວິຊາພື້ນຖານປ້ອງກັນຕົວໃນຊັ້ນມັດທະຍົມສຶກສາຕອນ ປາຍ ແລະ ວິຊາສຶກສາປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ໃນສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ.

#### 1.4.2. ຄາດໝາຍ

1) ອັດຕາມວນຊົນທຸກເພດ, ທຸກໄວເຂົ້າຮ່ວມຫັດກາຍຍະບໍລິຫານ, ອອກກຳລັງກາຍ ແລະ ຫຼິ້ນກິລາ-ກາຍ ຍະກຳ ຢ່າງສະໝໍ່າສະເໝີໃຫ້ບັນລຸ 5% ຕໍ່ປີ ຂອງປະຊາກອນທົ່ວປະເທດທີ່ມີເກນອາຍຸ 3 ປີຂຶ້ນໄປ.

**ຍຸດທະສາດ 1:** ຂະຫຍາຍການສ້າງສະໂມສອນ, ສວນສາທາລະນະ ກິລາກາຍຍະກຳມວນຊົນ

**ວຽກຈຸດສຸມ:**

1) ຊຸກຍູ້, ສົ່ງເສີມມວນຊົນທຸກເພດ-ໄວ ເຂົ້າຮ່ວມຫັດກາຍະບໍລິຫານ, ການອອກກຳລັງກາຍ ແລະ ການຫຼິ້ນກິລາ-ກາຍຍະກຳມວນຊົນ ໃຫ້ບັນລຸຄາດໝາຍ 04% ຂອງພົນລະເມືອງທົ່ວປະເທດ;
2) ຕິດຕາມ, ຊຸກຍູ້, ສົ່ງເສີມ ການສ້າງຕັ້ງສະໂມສອນກິລາກາຍຍະກຳປະເພດຕ່າງໆ ໃນຂັ້ນບ້ານ, ເມືອງ, ແຂວງ/ນະຄອນຫຼວງ, ບັນດາສານັກງານ, ບໍລິສັດ, ໂຮງຈັກ-ໂຮງງານ ແລະ ອົງການຈັດຕັ້ງທາງພາກລັດ-ເອກະຊົນ;
3) ຊຸກຍູ້ ສ້າງສະຖານທີ່ອອກກຳລັງກາຍ ແລະ ສວນສາທາລະນະໃນຂັ້ນບ້ານ, ເມືອງ/ນະຄອນ, ແຂວງ/ນະຄອນຫຼວງ.

**ຍຸດທະສາດ 2:** ວຽກງານກິລາກາຍຍະກຳມວນຊົນ ໄດ້ຮັບການຈັດຕັ້ງປະຕິບັດຢ່າງ ກ້ວາງຂວາງ ແຕ່ສູນກາງລົງຮອດທ້ອງຖິ່ນ

**ວຽກຈຸດສຸມ:**

1) ຕິດຕາມ, ຊຸກຍູ້, ສົ່ງເສີມ ສ້າງຕັ້ງສະໂມສອນ, ຈັດການແຂ່ງຂັນ, ເຂົ້າຮ່ວມການແຂ່ງຂັນກິລາກາຍຍະກຳປະເພດຕ່າງໆ ໃນຂັ້ນບ້ານ, ເມືອງ, ແຂວງ/ນະຄອນຫຼວງ, ບັນດາສຳນັກງານ, ອົງການ, ບໍລິສັດ, ໂຮງຈັກ-ໂຮງງານ ແລະ ອົງການຈັດຕັ້ງທາງພາກລັດ-ເອກະຊົນ; ແຂ່ງຂັນກິລາ ມິດຕະພາບ ກັບບັນດາແຂວງ, ເມືອງ, ຂອງບັນດາປະເທດ ທີ່ມີຊາຍແດນຕິດຈອດກັນ;
2) ຊຸກຍູ້ ສ້າງສະຖານທີ່ ແລະ ສວນສາທາລະນະໃນຂັ້ນບ້ານ, ເມືອງ/ນະຄອນ, ແຂວງ/ນະຄອນຫຼວງ.

**ຍຸດທະສາດ 3:** ການບໍລິຫານ, ຄຸ້ມຄອງວຽກງານກິລາກາຍຍະກາມວນຊົນໃຫ້ມີຄວາມເຂັ້ມແຂງແຕ່ສູນກາງລົງຮອດທ້ອງຖິ່ນ

**ວຽກຈຸດສຸມ:**

1) ສ້າງ ແລະ ປັບປຸງ ນິຕິກຳໄຕ້ກົດໝາຍ ແລະ ປຶ້ມຄູ່ມືກິລາ-ກາຍຍະກຳມວນຊົນ ຈັດກອງປະຊຸມຜ່ານ ແລະ ຮັບຮອງການຂໍອະນຸມັດນຳໃຊ້ ຂໍ້ຕົກລົງ ວ່າດ້ວຍການສ້າງເມືອງ ເທດສະບານ, ນະຄອນຕົວແບບດ້ານກິລາ-ກາຍຍະກຳມວນຊົນ;
2) ຊຸກຍູ້, ສົ່ງເສີມ ຍົກລະດັບຜູ້ບໍລິຫານ-ຄຸ້ມຄອງ, ກຳມະການຕັດສິນ, ຄູຝຶກກິລາ-ກາຍຍະກຳມວນຊົນ ຂັ້ນແຂວງ/ນະຄອນຫຼວງ;

**ຍຸດທະສາດ 4:** ຈັດການແຂ່ງຂັນ ແລະ ເຂົ້າຮ່ວມການແຂ່ງຂັນກິລາກາຍຍະກຳຄົນພິການ

**ວຽກຈຸດສຸມ:**

1) ສືບຕໍ່ ຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດວຽກງານກິລາ-ກາຍຍະກຳຄົນພິການ ປະຈຳປີ 2025; ສືບຕໍ່ສ້າງຕັ້ງໜ່ວຍສະໂມສອນກິລາ-ກາຍຍະກຳຄົນພິການຂັ້ນບ້ານ, ຂັ້ນເມືອງ ແລະ ຂັ້ນແຂວງ/ນະຄອນຫຼວງ; ສົ່ງເສີມຄົນພິການລາວ ອອກກຳລັງກາຍ, ຫຼິ້ນກິລາ ແລະ ເຂົ້າຮ່ວມງານແຂ່ງຂັນກິລາຄົນພິການ ເພື່ອສະເຫຼີມສະຫຼອງ ວັນສຳຄັນຕ່າງໆຂອງຊາດ, ຂອງສາກົນຢູ່ພາຍໃນປະເທດ ແລະ ກິລາ-ກາຍຍະກຳຄົນພິການສາກົນ;
2) ຍາດແຍ່ງການຊ່ວຍເຫລືອຈາກອົງການຈັດຕັ້ງສາກົນ, ອົງການຈັດ ຕັ້ງສັງຄົມເພື່ອພັດທະນາວຽກງານກິລາ-ກາຍຍະກຳຄົນພິການ;
3) ຊຸກຍູ້, ສົ່ງເສີມ ປະສານງານກັບ ຄະນະກຳມະການພາຣາແລມປິກແຫ່ງຊາດລາວ ແລະ ບັນດາສະຫະພັນກິລາຄົນພິການລາວ ໄດ້ມີການເຄື່ອນໄຫວ ຢ່າງເປັນປົກກະຕິ;

4) ເຂົ້າຮ່ວມການແຂ່ງຂັນກິລາຄົນພິການໃນລະດັບຊິງແຊມທະວີບ, ຊິງແຊມໂລກ ແລະ ການແຂ່ງຂັນລາຍການເກັບຄະແນນຕ່າງໆ (Qualification Event) ຕາມຂໍ້ກຳນົດຂອງ ຄະນະກຳມະການພາຣາແລມປິກສາກົນ (IPC) ຈຳນວນ 04 ປະເພດກິລາ ປີລະ 01 ຄັ້ງ;
5) ສືບຕໍ່ຍົກລະດັບຜູ້ບໍລິຫານ-ຄຸ້ມຄອງ ກິລາ-ກາຍຍະກຳຄົນພິການ, ກຳມະການຕັດສິນ, ຄູຝຶກ, ແພດກິລາຄົນພິການ (Medical Classification), ແພດກາຍຍະບຳບັດຄົນພິການ ແລະ ນັກກິລາຄົນພິການປະເພດຕ່າງໆ ໃຫ້ບັນດາແຂວງ, ນະຄອນຫຼວງ, ນະຄອນ, ເມືອງ;
6) ເຂົ້າຮ່ວມການແຂ່ງຂັນກິລາຄົນພິການຊິງແຊ້ມລາຍການຕ່າງໆໃນລະດັບອານຸພາກພື້ນ, ພາກພື້ນ ແລະ ສາກົນປະຈຳປີ 2025;
7) ສືບຕໍ່ ເກັບກຳຂໍ້ມູນ-ສະຖິຕິ ກຳມະການຕັດສິນ, ຄູຝຶກ, ນັກກິລາຄົນພິການ, ຫັດກາຍຍະບໍລິຫານ, ອອກກຳລັງກາຍ ຫຼິ້ນກິລາຄົນພິການ ແລະ ເຂົ້າຮ່ວມງານແຂ່ງຂັນກິລາຄົນພິການຢູ່ພາຍໃນ ແລະ ຕ່າງປະເທດ.

**ຍຸດທະສາດ 5:** ຈັດງານມະຫາກຳກິລານັກຮຽນມັດທະຍົມສຶກສາທົ່ວປະເທດ, ເຂົ້າຮ່ວມການແຂ່ງຂັນ ແລະ ເປັນເຈົ້າພາບຈັດງານແຂ່ງຂັນກິລານັກຮຽນອາຊຽນ

**ວຽກຈຸດສຸມ:**

1) ເຂົ້າຮ່ວມແຂ່ງຂັນກິລາອາຊຽນ ຄັ້ງທີ 14 ທີ່ ປະເທດບຣູໄນໃຫ້ປະເທດເຈົ້າພາບ;
2) ຕິດຕາມ-ຊຸກຍູ້ ແຂວງ ເຊກອງ ໃນການກະກຽມຄວາມພ້ອມການເປັນເຈົ້າພາບງານມະຫາກຳກິລານັກຮຽນມັດທະຍົມສຶກສາທົ່ວປະເທດ ຄັ້ງທີ VIII ເປັນປົກກະຕິ.

**ຍຸດທະສາດ 6:** ປັບປຸງ ແລະ ຍົກລະດັບການສ້າງຄູພະລະສຶກສາ ແລະ ສິລະປະສຶກສາ

**ວຽກຈຸດສຸມ:**

1) ສ້າງ, ປັບປຸງ ແລະ ພັດທະນາຫຼັກສູດທຸກລະບົບ ເອກະສານ, ຕຳລາ, ຄູ່ມື ແລະ ສື່ ການຮຽນການສອນເພື່ອຊຸກຍູ້ສົ່ງເສີມການຮຽນການສອນໃຫ້ມີຄຸນນະພາບສູງຂຶ້ນ;

**ຍຸດທະສາດ 7:** ຈັດຕັ້ງປະຕິບັດຫຼັກສູດການຮຽນການສອນພະລະສຶກສາ ແລະ ສິລະປະສຶກສາໃນສະຖານການສຶກສາໃຫ້ທົ່ວເຖິງ

**ວຽກຈຸດສຸມ:**

1) ວິໄຈ ຫົວຂໍ້: ປັດໃຈທີ່ສົ່ງຜົນກະທົບຕໍ່ການສະໝັກເຂົ້າຮຽນວິຊາຊີບຄູພະລະສຶກສາ ທີ່ບ້ານທົ່ງປົ່ງ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ໃນ 3 ແຂວງພາກໃຕ້ ແລະ 2 ແຂວງພາກເໜືອ;
2) ຝຶກອົບຮົມແນະນຳທັກສະການສອນໃຫ້ຄູສອນຊ່ວຍວິຊາພະລະສຶກສາໃນໂຮງຮຽນທີ່ບໍ່ມີຄູພະລະສຶກສາ (ຕິດພັນກັບວຽກງານ 3 ສ້າງ);
3) ຊຸກຍູ້, ສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງວຽກງານການຈັດການຮຽນການສອນວິຊາສິລະປະສຶກສາໃນວິທະຍາໄລຄູ ແລະ ຕິດຕາມການສ້າງໂຮງຮຽນມັດທະຍົມສຶກສາ, ວິທະຍາໄລເຕັກນິກວິຊາຊີບ ແລະ ວິທະຍາໄລຄູປອດຢາເສບຕິດ (ໄລຍະ 2);
4) ຊຸກຍູ້ສົ່ງເສີມ, ສ້າງຄວາມເຂັ້ມແຂງວຽກງານສິລະປະສຶກສາ ທີ່ແຂວງ ບໍລິຄຳໄຊ

**ຍຸດທະສາດ 8:** ຈັດຕັ້ງປະຕິບັດຫຼັກສູດການຮຽນການສອນສຶກສາວິຊາພື້ນຖານປ້ອງກັນຕົວໃນຊັ້ນມັດທະຍົມສຶກສາຕອນປາຍ ແລະ ວິຊາສຶກສາປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ໃນສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ

**ວຽກຈຸດສຸມ:**

1) ອອກແຈ້ງການວ່າດ້ວຍການສະຫຼຸບລາຍງານການຈັດການຮຽນການສອນສຶກສາວິຊາພື້ນຖານປ້ອງກັນຕົວ ຊັ້ນມັດທະຍົມສຶກສາຕອນປາຍ ແລະ ວິຊາສຶກສາປ້ອງກັນຊາດ-ປ້ອງກັນຄວາສະຫງົບ ໃນສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ;
2) ສືບຕໍ່ ປັບປຸງຂໍ້ຕົກລົງວາດ້ວຍການປະຕິບັດຫຼັກສູດການຮຽນການສອນ ສຶກສາວິຊາພື້ນຖານປ້ອງກັນຕົວ ໃນຊັ້ນມັດທະຍົມສຶກສາຕອນປາຍ ແລະ ວິຊາສຶກສາປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ;

**ຍຸດທະສາດ 9:** ຕ້ານ, ສະກັດກັ້ນຢາເສບຕິດ ແລະ ປະກົດການຫຍໍ້ທໍ້ໃນສະຖານການສຶກສາ

**ວຽກຈຸດສຸມ:**

1) ຊຸກຍູ້, ສົ່ງເສີມ ແລະ ຕິດຕາມການສ້າງໂຮງຮຽນມັດທະຍົມສຶກສາ, ວິທະຍາເຕັກນິກວິຊາຊີບ ແຂວງ ບໍລິຄໍາໄຊ;
2) ປິດບັ້ນຈັບມີແຂ່ງຂັນສ້າງຂະບວນການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ປີ 2024-2025 ຂອງຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ ເດືອນ ກຸມພາ 2026;
3) ສັງລວມຜົນການຮັບຮອງໂຮງຮຽນປອດຢາເສບຕິດຊັ້ນປະຖົມສຶກສາ ແລະ ມັດທະຍົມສຶກສາ ປະຈໍາສົກຮຽນ 2024-2025 ແລະ ຕິດຕາມການຈັດຕັ້ງປະຕິບັດການສ້າງໂຮງຮຽນປອດ ປະຈໍາສົກຮຽນ 2025-2026.

**ຍຸດທະສາດ 10:** ປັບປຸງການບໍລິຫານ, ການຄຸ້ມຄອງວຽກງານພະລະ ແລະ ສິລະປະສຶກສາ ແລະ ພົວພັນຮ່ວມມືພາຍໃນ ແລະ ຕ່າງປະເທດ

**ວຽກຈຸດສຸມ:**

1) ຈັດກອງປະຊຸມສະຫຼຸບຖອດຖອນບົດຮຽນວຽກງານກິລາມວນຊົນ, ພະລະ ແລະ ສິລະປະສຶກສາ;
2) ຈັດກອງປະຊຸມຜ່ານນິຕິກໍາຂໍ້ຕົກລົງ "ຄຸ້ມຄອງຫົວໜ່ວຍທຸລະກິດກິລາ-ກາຍຍະກໍາ"

## 2. ວຽກງານກິລາລະດັບສູງ

### 2.1. ຜົນສໍາເລັດສໍາລັບສົກຮຽນ 2024-2025

ຜົນລະເມືອງລາວມີສຸຂະພາບແຂງແຮງດ້ານຮ່າງກາຍ ແລະ ຈິດໃຈ, ບຸກຄະລາກອນການກິລາ, ນັກກິລາສະໝັກຫຼິ້ນ ແລະ ນັກກິລາອາຊີບ ໄດ້ມາດຕະຖານຄຸນນະພາບດ້ານກິລາ-ກາຍຍະກໍາ ປະກອບສ່ວນເຂົ້າໃນການເຊີດຊູຖານະບົດບາດຂອງຊາດໃນເວທີສາກົນ ສ້າງຄວາມພາກພູມໃຈໃຫ້ປະຊາຊົນລາວ.

➢ **ວຽກບໍລິຫານ ແລະ ຄົ້ນຄວ້າສັງລວມ:**

1) ສໍາເລັດການສ້າງຮ່າງແຜນຍຸດທະສາດການພັດທະນາກິລາ-ກາຍຍະກໍາ ແຕ່ນີ້ຮອດປີ 2035 ແລະ ວິໄສທັດຮອດປີ 2050 ແລະ ສະເໜີເຂົ້າກອງປະຊຸມຄະນະບໍລິຫານລັດຖະຊວງ ສສກ ປະຈໍາເດືອນ ມິຖຸນາ 2025;
2) ສໍາເລັດການສ້າງຮ່າງປັບປຸງດໍາລັດວ່າດ້ວຍລະບອບນະໂຍບາຍຕໍ່ຄະນະກິລາທີມຊາດ ແລະ ເຂົ້າຜ່ານກອງປະຊຸມລັດຖະບານ ປະຈໍາເດືອນພຶດສະພາ 2025 (ປະຈຸບັນກໍາລັງຈະຈັດກອງປະຊຸມປັບປຸງຮ່າງດໍາລັດ ຕາມຄໍາເຫັນຂອງກອງປະຊຸມລັດຖະບານ);
3) ສໍາເລັດການສ້າງຂໍ້ຕົກລົງວ່າດ້ວຍການຈັດການແຂ່ງຂັນກິລາລະດັບສູງ ສະບັບເລກທີ 3150/ສສກ, ລົງວັນທີ 16 ມິຖຸນາ 2025;

4) ສຳເລັດການສ້າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງສະຫະພັນ ແລະ ສະໂມສອນກິລາ ສະບັບເລກທີ 3061/ສສກ , ລົງວັນທີ 12 ມິຖຸນາ 2025 ໂດຍປ່ຽນແທນຂໍ້ກຳນົດວ່າດ້ວຍການຈັດຕັ້ງຄຸ້ມຄອງສະຫະພັນ ແລະ ສະໂມສອນ ສະບັບເລກທີ 868/ສສກ, ລົງວັນທີ 6 ມິຖຸນາ 2013;
5) ສຳເລັດການສ້າງຮ່າງຂໍ້ຕົກລົງວ່າດ້ວຍເຄື່ອງແບບກິລາລາວ ແລະ ສະເໜີເຂົ້າກອງປະຊຸມຄະນະບໍລິຫານລັດ ກະຊວງ ສສກ ປະຈຳເດືອນ ມິຖຸນາ 2025;
6) ສະໜາມກິລາແຫ່ງຊາດ (ຫຼັກ 16) ສຳເລັດການກະກຽມໂຄງການສ້າງກຳແພງຮື້ອເຂດດິນ S1 ຄວາມຍາວ 1,221 ແມັດ;
7) ສຳເລັດ ການຂຽນ ແລະ ຮຽບຮຽງປຶ້ມຄູ່ມືຕົ້ນສະບັບ 7 ລາຍວິຊາ: ວິຊານວດທາງການການກິລາ, ພາສາ ແລະ ວັດທະນະທຳລາວ, ສະລິລະວິທະຍາການອອກກຳລັງກາຍ ແລະ ກິລາ, ກົນໄກການຮຽນຮູ້ທັກສະການເຄື່ອນ ໄຫວ, ການສອນກິລາ, ກິລາເປຕັງ ແລະ ກິລາເທັນນິດ ລະດັບປະລິນຍາຕີ ຂອງສະຖາບັນກິລາ-ກາຍຍະກຳ.

➢ **ການສ້າງຕັ້ງ, ປັບປຸງສະຫະພັນກິລາແຫ່ງຊາດ ແລະ ສະໂມສອນ:**

ບັນດາສະຫະພັນກິລາແຫ່ງຊາດ ທີ່ມີການສ້າງຕັ້ງ ແລະ ປັບປຸງຄະນະບໍລິຫານງານສະຫະພັນຄືນໃໝ່ ຕາມ ວາລະຂອງການເຄື່ອນໄຫວ ມີ 12 ສະຫະພັນກິລາ ແລະ 1 ສະໂມສອນ ຄື: ສະຫະພັນກິລາບິລຽດ-ສະນຸກເກີ້ແຫ່ງ ຊາດ, ສະຫະພັນກິລາຍິງປືນແຫ່ງຊາດ, ສະຫະພັນກິລາມວຍສາກົນແຫ່ງຊາດ, ສະຫະພັນກິລາໝາກລ້ອມແຫ່ງຊາດ, ສະຫະພັນກິລາລອຍນ້ຳແຫ່ງຊາດ, ສະຫະພັນກິລາຄິກບ໋ອກຊິງແຫ່ງຊາດ, ສະຫະພັນກິລາຣັກບີ້ແຫ່ງຊາດ, ສະຫະພັນກິລາຂີ່ມ້າແຫ່ງຊາດ, ສະຫະພັນກິລາວູຊູແຫ່ງຊາດ, ສະຫະພັນກິລາເຄື່ອງບິນເບົາແຫ່ງຊາດ, ສະຫະພັນ ກິລາບານບ້ວງແຫ່ງຊາດ, ສະຫະພັນກິລາຟຣໍບອນແຫ່ງຊາດ ແລະ ສະໂມສອນກິລາເຄນໂດ້.

➢ **ການຈັດການແຂ່ງຂັນພາຍໃນປະເທດ :**

1) ສົມທົບກັບສະຫະພັນກິລາແລ່ນ-ລານແຫ່ງຊາດລາວ ສຳເລັດການຈັດການແຂ່ງຂັນກິລາແລ່ນທາງຽດເທວ ມາຣາທອນ 2024 ຄັ້ງທີ 1 (The 1st Viettel Marathong 2024) ໃນວັນທີ 03 ພະຈິກ 2024 ທີ່ ແຂວງ ຫຼວງພະບາງ;
2) ສົມທົບກັບສະຫະພັນກິລາບານເຕະແຫ່ງຊາດລາວ ສຳເລັດການເປັນເຈົ້າພາບຈັດການແຂ່ງຂັນບານເຕະ FIFA World Cup 2026, AFC Asian Qualifiers-Road to 26, ນັດແຂ່ງຂັນລະຫວ່າງທີມຊາດ ສປປ ເກົາຫຼີ ພົບກັບທີມຊາດ ອີຣ່ານ ແລະ ທີມຊາດ ສປປ ເກົາຫຼີ ພົບກັບທີມຊາດ ອຸດສະເບກິສຖານ ທີ່ ສປປ ລາວ ໄດ້ຮັບເລືອກເປັນເຈົ້າພາບ ຈາກ ສະຫະພັນກິລາບານເຕະອາຊີ ລະຫວ່າງວັນທີ 11-20 ພະຈິກ 2024 ທີ່ ນະຄອນຫຼວງວຽງຈັນ;
3) ສົມທົບກັບສະຫະພັນກິລາບານເຕະແຫ່ງຊາດລາວ ສຳເລັດການເປັນເຈົ້າພາບຈັດການແຂ່ງຂັນບານເຕະ AFF Women's Cup 2024 ທີ່ ສປປ ລາວ ໄດ້ຮັບເລືອກເປັນເຈົ້າພາບ ຈາກ ສະຫະພັນກິລາບານເຕະອາຊຽນ ລະຫວ່າງວັນທີ 23 ພະຈິກ ຫາ 5 ທັນວາ 2024 ທີ່ ນະຄອນຫຼວງວຽງຈັນ;
4) ສົມທົບກັບສະຫະພັນກິລາບານສົ່ງແຫ່ງຊາດລາວ ສຳເລັດຈັດການແຂ່ງຂັນກິລາບານສົ່ງລາວລີກ ( Beerlao Volleyball Lao League ) ປະຈຳປີ 2024 ເຊິ່ງຈະຈັດຂຶ້ນ ໃນວັນທີ 01 ກັນຍາ ຫາ 31 ພະຈິກ 2024 ທີ່ ເດີ່ນກິລາໃນຮົ່ມກອງກິລາກອງທັບ ຫຼັກ 5 ນະຄອນຫຼວງວຽງຈັນ;
5) ສົມທົບກັບສະຫະພັນມວຍລາວແຫ່ງຊາດລາວ ສຳເລັດຈັດການແຂ່ງຂັນມວຍລາວ ຮອບຊິງຊະນະເລີດ ຊິງ ຂັນພະນະທ່ານ ນາຍົກລັດຖະມົນຕີແຫ່ງ ສປປ ລາວ ຄັ້ງທີ I ແຕ່ວັນທີ 13-14 ພະຈິກ 2024 ທີ່ໂຮງກະຍາ ສິນແຫ່ງຊາດ ນະຄອນຫຼວງວຽງຈັນ;

6) ສົມທົບກັບສະຫະພັນເປຕັງແຫ່ງຊາດລາວ ສຳເລັດຈັດການແຂ່ງຂັນເປຕັງ ຊິງຂັນລະດັບຊາດ ຄັ້ງທີ I ທີ່ແຂວງຈຳປາສັກ ເຊິ່ງຈັດຂຶ້ນໃນລະຫວ່າງວັນທີ 27-30 ພະຈິກ 2024;
7) ສົມທົບກັບສະຖາບັນກິລາ-ກາຍຍະກຳ ແລະ ບໍລິສັດລາວ ໂຄຄາ-ໂຄລາ ບ໊ອຕຕລິງ ຈຳກັດ ສຳເລັດຈັດການແຂ່ງຂັນກິລາບານເຕະໂຄປາ ໂຄຄາ-ໂຄລາລາວ ຊິງຂັນ ກະຊວງສຶກສາທິການ ແລະ ກິລາ ນັກຮຽນມັດທະຍົມທົ່ວປະເທດ ປະຈຳປີ 2024 ແຕ່ວັນທີ 21 ຕຸລາ ຫາ 29 ພະຈິກ 2024;
8) ສົມທົບກັບ ສະຫະພັນກິລາບານເຕະແຫ່ງຊາດລາວ ສຳເລັດການເປັນເຈົ້າພາບຈັດການແຂ່ງຂັນກິລາບານເຕະ ASEAN Mitsubishi Electric CPU 2024 ນັດແຂ່ງຂັນລະຫວ່າງ ທີມຊາດລາວ ພົບກັບທີມຊາດ ສສ. ຫວຽດນາມ ແລະ ທີມຊາດຟີລິບປິນ ໃນລະຫວ່າງ ວັນທີ 09-16 ທັນວາ 2024 ທີ່ ນະຄອນຫຼວງວຽງຈັນ;
9) ສົມທົບກັບສະຫະພັນກິລາແລ່ນ-ລານແຫ່ງຊາດລາວ ສຳເລັດການຈັດການແຂ່ງຂັນກິລາແລ່ນມາຣາທອນນາໆຊາດ ຄັ້ງທີ IV " The 4th Vientiane International Marathon " ໃນວັນທີ 15 ທັນວາ 2024 ທີ່ນະຄອນຫຼວງວຽງຈັນ;
10) ສົມທົບກັບສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ສຳເລັດການຈັດການແຂ່ງຂັນກິລາບານເຕະຊິງຂັນສະຫາຍເລຂາຄະນະບໍລິຫານງານສູນກາງຊາວໜຸ່ມ ປະຊາຊົນປະຕິວັດລາວ ປະຈຳປີ 2024 ໃນລະຫວ່າງວັນທີ 13 ມັງກອນ 2025 ຫາ 21 ກຸມພາ 2025 ທີ່ ສະໜາມລ້ານຊ້າງສະເຕດ້ຽມ;
11) ສົມທົບກັບສະຫະພັນກິລາກອຟແຫ່ງຊາດລາວ ສຳເລັດການຈັດການແຂ່ງຂັນກິລາກ໊ອຟ ໃນລາຍການ Kapok Cup Golf 2025 ດອກງິ້ວຄຳ ຄັ້ງທີ 2 ປະຈຳປີ 2025 ໃນວັນທີ 31 ມັງກອນ 2025 ທີ່ ແຂວງບໍ່ແກ້ວ;
12) ສົມທົບກັບສະຫະພັນກິລາຣັກບີ້ແຫ່ງຊາດລາວ ສຳເລັດການຈັດການແຂ່ງຂັນກິລາຣັກບີ້ແທັກເຍົາວະຊົນປະຈຳປີ 2024 ໃນໂຮງຮຽນເປົ້າໝາຍ ຢູ່ນະຄອນຫຼວງວຽງຈັນ, ແຂວງຊຽງຂວາງ ແລະ ແຂວງວຽງຈັນ ແຕ່ວັນທີ 27 ເມສາ 2024 ຫາ ມັງກອນ 2025;
13) ສົມທົບກັບສະຫະພັນກິລາດຶງເຊືອກແຫ່ງຊາດລາວ ເປັນເຈົ້າພາບຈັດການແຂ່ງຂັນກິລາດຶງເຊືອກອາຊຽນບວກ 3 ປະເທດປະຈຳປີ 2025 ທີ່ສູນການຄ້າພາກຊັນ ນະຄອນຫຼວງວຽງຈັນ ໃນລະຫວ່າງວັນທີ 20-21 ກຸມພາ 2025;
14) ສົມທົບກັບສະຫະພັນກິລາເທຄວັນໂດແຫ່ງຊາດ ສຳເລັດການຈັດການແຂ່ງຂັນກິລາເທຄວັນໂດ ຊິງຂັນທ່ານເອອັກຄະລັດຖະທູດ ສ ເກົາຫຼີ ປະຈຳ ສປປ ລາວ ຄັ້ງທີ IX ທີ່ສູນການຄ້າວຽງຈັນເຊັນເຕີ້ ແຕ່ວັນທີ 14-15 ມິຖຸນາ 2025.

➢ **ການແຂ່ງຂັນຢູ່ຕ່າງປະເທດ :**

ສົມທົບກັບຄະນະກຳມະການໂອແລມປິກແຫ່ງຊາດລາວ ແລະ ສະຫະພັນກິລາແຫ່ງຊາດ, ແຂວງ, ນະຄອນຫຼວງ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ພັດທະນານັກກິລາ ແລະ ເຂົ້າຮ່ວມແຂ່ງຂັນກິລາໃນລະດັບອະນຸພາກພື້ນ, ພາກພື້ນ ແລະ ສາກົນ ໄດ້ຮັບຜົນສຳເລັດຫຼາຍບັ້ນ ອັນເປັນໄຊຊະນະທີ່ສ້າງກຽດ ແລະ ຊື່ສຽງໃຫ້ແກ່ປະເທດຊາດ ດັ່ງມີລາຍລະອຽດລຸ່ມນີ້

1) ຫົວໜ້າຄະນະ, ຄູຝຶກ ແລະ ນັກກິລາເພາະກາຍທີມຊາດ ສຳເລັດການເຂົ້າຮ່ວມແຂ່ງຂັນກິລາເພາະກາຍຊິງແຊ້ມໂລກ ຄັ້ງທີ 15 ລະຫວ່າງວັນທີ 05-11 ພະຈິກ 2024 ທີ່ ປະເທດເມົາດີບ ສາມາດຍາດໄດ້ 2 ຫຼຽນຄຳ, 2 ຫຼຽນເງິນ ແລະ 1 ຫຼຽນທອງ;

2) ທີມໜ້າຄະນະ, ຄູຝຶກ ແລະ ນັກກິລາຈູຈິດຊູທີມຊາດລາວ ສຳເລັດເຂົ້າຮ່ວມແຂ່ງຂັນ Chonburi Jujitsu Open 2024 ແລະ The Rookie Jujitsu Championship 2024, ທີ່ ແຂວງຊົນບູຣີ, ປະເທດໄທ ວັນທີ 19-23 ທັນວາ 2024 ສາມາດຍາດໄດ້ 6 ຫຼຽນຄຳ, 3 ຫຼຽນເງິນ ແລະ 1 ຫຼຽນທອງ;
3) ທີມໜ້າຄະນະ, ຄູຝຶກ ແລະ ນັກກິລາຈູຈິດຊູ ສຳເລັດການເຂົ້າຮ່ວມການແຂ່ງຂັນກິລາຈູຈິດຊູຊິງແຊ້ມເຢົາວະຊົນອາຊຽນຄັ້ງທີ2 ທີ່ແຂວງປະທຸມທານີ ປະເທດໄທ ແຕ່ວັນທີ 10-17 ກຸມພາ 2025 ສາມາດຍາດໄດ້ 2 ຫຼຽນທອງ;
4) ທີມໜ້າຄະນະ, ຄູຝຶກ ແລະ ນັກກິລາກະຕໍ້ ສຳເລັດການເຂົ້າຮ່ວມແຂ່ງຂັນ The 2025 China-ASEAN Sepaktakraw Tournament ລະຫວ່າງວັນທີ 31 ພຶດສະພາ ຫາ 03 ມິຖຸນາ 2025 ທີ່ ສປ ຈີນ ສາມາດຍາດໄດ້ 04 ຫຼຽນທອງ;ທີມໜ້າຄະນະ, ຄູຝຶກ ແລະ ນັກກິລາກາລາເຕໂດ ເຂົ້າຮ່ວມການແຂ່ງຂັນຊິງແຊ້ມອາຊຽນ ຄັ້ງທີ 12 " 12Th South Eant Asian Karate Federation Championships " ໃນລະຫວ່າງວັນທີ 17-19 ມິຖຸນາ 2025 ທີ່ ປະເທດບຣູໄນ ສາມາດຍາດໄດ້ 2 ຫຼຽນທອງ.

➢ **ການພັດທະນາບຸກຄະລາກອນກິລາ ຢູ່ພາຍໃນ ແລະ ຕ່າງປະເທດ:**

1) ຄະນະບໍລິຫານງານສະຫະພັນກິລາຍິງປືນແຫ່ງຊາດລາວ ສຳເລັດເຂົ້າຮ່ວມກອງປະຊຸມໃຫ່ຍຂອງ ສະຫະ ພັນກິລາຍິງປືນສາກົນ (ISSF) ວັນທີ 27 ພະຈິກ ຫາ 01 ທັນວາ 2024 ທີ່ ນະຄອນຫຼວງໂຣມ, ປະເທດອີຕາລີ;
2) ຄະນະບໍລິຫານງານສະຫະພັນກິລາມວຍສາກົນແຫ່ງຊາດລາວ ສຳເລັດເຂົ້າຮ່ວມກອງປະຊຸມປະຈຳປີ 2024 ຂອງສະມາຄົມກິລາມວຍສາກົນນາໆຊາດ ລະຫວ່າງວັນທີ 06-08 ທັນວາ 2024 ທີ່ ປະເທດອາຣັບເອມີເຣດ;
3) ສຳເລັດການຈັດກອງປະຊຸມສຳມະນາວຽກແມ່ຍິງ ແລະ ກິລາ, ວິທະຍາກອນຈາກຜູ້ຊ່ຽວຊານ 02 ທ່ານ ເປັນວິທະຍາກອນໂອແລມປິກແຫ່ງປະເທດໄທ ມີຜູ້ເຂົ້າຮ່ວມ 12 ພາກສ່ວນ, ຈຳນວນ 18 ທ່ານ ແຕ່ວັນທີ 23-25 ທັນວາ 2024;
4) ສຳເລັດກອງປະຊຸມສ້າງຄວາມເຂັ້ມແຂງ ດ້ານວຽກງານການສ້າງແຜນຕິດຕາມ ແລະ ປະເມີນຜົນວຽກງານແມ່ຍິງ ແລະ ກິລາ, ມີຜູ້ເຂົ້າຮ່ວມ ຈາກ 04 ພາກສ່ວນ, ຈຳນວນ 30 ທ່ານ ໃນວັນທີ 25 ທັນວາ 2024;
5) ສຳເລັດການຈັດກອງປະຊຸມສຳມະນາວຽກການແພດ, ຫົວຂໍ້: ການຄຸ້ມຄອງບໍລິຫານການບາດເຈັບໃນກິລາ, ວິທະຍາກອນຈາກຜູ້ຊ່ຽວຊານຄະນະກຳມະການໂອແລມປິກແຫ່ງປະເທດໄທ, ມີຜູ້ເຂົ້າຮ່ວມຈາກ 24 ພາກສ່ວນ, ຈຳນວນ 30 ທ່ານ ແຕ່ວັນທີ 23-25 ທັນວາ 2024;
6) ຄະນະບໍລິຫານງານສະຫະພັນ ແລະ ຄູຝຶກກິລາແລ່ນ-ລານ ສຳເລັດເຂົ້າຮ່ວມສຳມະນາການຈັດການຄວາມສາມາດນັກກິລາ: ຍຸດທະສາດການປ້ອງກັນການບາດເຈັບໃຫ້ນັກກິລາ ( PERFORMANCE MANAGEMENT: INJURY PREVENTION STRATEGY IN ATHLETICS ) ລະຫວ່າງວັນທີ 06-10 ກຸມພາ 2025 ທີ່ ບາງກອກ, ປະເທດໄທ;
7) ກຳມະການຕັດສິນເທຄວັນໂດ ສຳເລັດການເຂົ້າຮ່ວມຝຶກອົບຮົມກຳມະການຕັດສິນເທຄວັນໂດນາໆຊາດ ແຕ່ວັນທີ 11-14 ເມສາ 2025 ທີ່ບຣູກແຊນ ປະເທດແບນຊິກ;
8) ຄູຝຶກ ແລະ ນັກກິລາຍິງທະນູ ສຳເລັດການເຂົ້າຮ່ວມຝຶກອົບຮົມກຳມະການຕັດສິນ Level 2 ປະຈຳປີ 2025 ທີ່ແຂວງຊຽງໃໝ່ ຣາຊອານາຈັກໄທ ແຕ່ວັນທີ 21/04/-1/05/2025;
9) ພະນັກງານກິລາກະຊວງສຶກສາທິການ ແລະ ກິລາ ເຂົ້າຮ່ວມສຳມະນາໃນຫົວຂໍ້ "ການບໍລິຫານການແຂ່ງຂັນກິດຈະກຳກິລາຂະໜາດໃຫຍ່ ແລະ ການບຳລຸງຮັກສາ ແລະ ການຄຸ້ມຄອງສະຖານທີ່ກິລາ" ສຳລັບບັນດາປະເທດທີ່ກຳລັງພັດທະນາ ທີ່ນະຄອນປັກກິ່ງ ສປ ຈີນ ແຕ່ວັນທີ 7-20 ພຶດສະພາ 2025.

## 2.2. ບັນຫາ ແລະ ສິ່ງທ້າທາຍ

1) ການເຂົ້າຮ່ວມແຂ່ງຂັນກິລາ ແລະ ຈັດການແຂ່ງຂັນກິລາລະດັບຊາດ, ອານຸພາກພື້ນ, ພາກພື້ນ ແລະ ສາກົນ ແມ່ນໄດ້ມີການດຳເນີນຢ່າງເປັນປົກກະຕິ ແຕ່ກໍ່ຍັງມີບາງລາຍການ ຖືກຕັດຮອນດ້ານງົບປະມານຮັບໃຊ້ ກໍ່ເປັນບັນຫາໜຶ່ງທີ່ເຮັດໃຫ້ການເຂົ້າຮ່ວມແຂ່ງຂັນຍັງບໍ່ສາມາດບັນລຸໄດ້ຕາມເປົ້າໝາຍທີ່ກຳນົດໄວ້;
2) ການນຳໃຊ້ວິທະຍາສາດການກິລາເຂົ້າໃນການພັດທະນານັກກິລາຍັງເຮັດບໍ່ໄດ້ດີເທົ່າທີ່ຄວນ ຍ້ອນປັດໄຈຫຼາຍດ້ານໂດຍສະເພາະແມ່ນການຕອບສະໜອງເຄື່ອງມືທີ່ທັນສະໄໝ ໃນການນຳໃຊ້ຍັງບໍ່ພຽງພໍ;
3) ການສະໜອງງົບປະມານທີ່ກຳນົດໄວ້ໃນແຜນຈັດຕັ້ງປະຕິບັດວຽກຈຸດສຸມປະຈຳປີ ແລະ ບັນດາກິດຈະກຳຍັງບໍ່ທ່ວງທັນຕາມເວລາທີ່ກຳນົດ ເຮັດໃຫ້ບາງວຽກຈຸດສຸມຕ້ອງເລື່ອນໄປຈັດຕັ້ງປະຕິບັດ;
4) ຍັງຂາດໜ່ວຍງານການຄຸ້ມຄອງ ແລະ ນຳໃຊ້ສະໜາມກິລາລະດັບຊາດ ແລະ ບຸກຄະລາກອນຮັບຜິດຊອບສະເພາະ, ເນື່ອງຈາກ ການດາເນີນສ້າງນິຕິກຳໃນການຄຸ້ມຄອງຍັງບໍ່ສຳເລັດ;
5) ງົບປະມານຊ່ວຍຊຸກຍູ້ ແລະ ສະໜັບສະໜູນໃຫ້ກັບບັນດາສະຫະພັນກິລາແຫ່ງຊາດ ຜູ້ຈັດຕັ້ງປະຕິບັດໜ້າວຽກຕົວຈິງເພື່ອຮັບໃຊ້ເຂົ້າໃນວຽກງານບໍລິຫານຂອງສະຫະພັນ ແລະ ພັດທະນາກິດຈະກຳການກິລາຍັງມີຈຳນວນຈຳກັດ;
6) ບັນດາປະເທດເພື່ອນມິດໄດ້ມີການລົງທຶນໃສ່ວຽກງານກິລາລະດັບສູງຢ່າງມະຫາສານໃນດ້ານການພັດທະນາບຸກຄະລາກອນ, ນັກກິລາ,ເສດຖະກິດການກິລາ ແລະ ອາຊີບທາງການກິລາຢ່າງເປັນລະບົບຄົບຊຸດຊຶ່ງເປັນສິ່ງທ້າທາຍໃນການແຂ່ງຂັນຍາດໄຊຊະນະໃນອານາຄົດ.

## 2.3. ບູລິມະສິດສຳລັບສົກຮຽນ 2025-2026

### 2.3.1. ຈຸດປະສົງ

1) ປັບປຸງ, ພັດທະນາຄຸນນະພາບວຽກງານກິລາລະດັບສູງ ໃຫ້ມີຄວາມເຂັ້ມແຂງ ສາມາດ ຍາດໄດ້ຫຼຽນລາງວັນໃນການແຂ່ງຂັນກິລາ ໃນລະດັບສາກົນ ນຳກຽດ ແລະ ຊື່ສຽງມາໃຫ້ປະເທດຊາດ;
2) ຍົກລະດັບຄວາມຮູ້ຄວາມສາມາດຂອງ ຜູ້ບໍລິຫານ, ນັກວິຊາການ, ກຳມະການຕັດສິນ, ຄູຝຶກ, ນັກວິທະຍາສາດການກິລາ ແລະ ນັກກິລາທີ່ມີພອນສະຫວັນ ໄດ້ຮັບການພັດທະນາຄວາມຮູ້ສະເພາະດ້ານ ກ້າວສູ່ມືອາຊີບຕາມມາດຕະຖານລະດັບສາກົນ;
3) ພັດທະນາລະບົບບໍລິການ-ຄຸ້ມຄອງວຽກງານກິລາລະດັບສູງ ໃຫ້ມີຄວາມເຂັ້ມແຂງໃນຂອບເຂດທົ່ວປະເທດ;
4) ຊຸກຍູ້, ສົ່ງເສີມການກໍ່ສ້າງ, ປັບປຸງພັດທະນາພື້ນຖານໂຄງລ່າງ, ສະໜອງອຸປະກອນກິລາ ແລະ ອຸປະກອນການຮຽນການສອນກິລາ;
5) ຊຸກຍູ້, ສົ່ງເສີມ ອົງການຈັດຕັ້ງພາກລັດ, ເອກະຊົນ ແລະ ປະຊາຊົນ ໄດ້ປະກອບສ່ວນໃນການພັດທະນາກິລາລະດັບສູງ.

### 2.3.2. ຄາດໝາຍ

ບຸກຄະລາກອນການກິລາ ເປັນຕົ້ນແມ່ນ ຜູ້ບໍລິຫານ, ຄູຝຶກ ແລະ ກຳມະການຕັດສິນ ຈະໄດ້ຖືກຍົກລະດັບຄວາມຮູ້ຄວາມສາມາດ ໄດ້ຮັບໃບຢັ້ງຢືນ ຕາມມາດຕະຖານລະດັບຊາດ ແລະ ສາກົນ ດັ່ງນີ້:

1) ການຢັ້ງຢືນໃນລະດັບຊາດ :
   - ຜູ້ບໍລິຫານກິລາ ຈຳນວນ 64 ຄົນ;
   - ຄູຝຶກກິລາ ຈຳນວນ 320 ຄົນ;
   - ກຳມະການຕັດສິນກິລາ ຈຳນວນ 320 ຄົນ;

- ນັກຄົ້ນຄວ້າວິທະຍາສາດການກິລາ ຈຳນວນ 50 ຄົນ.

2) ການຍັ້ງຢືນໃນລະດັບສາກົນ:
   - ຄູຝຶກກິລາ ຈຳນວນ 28 ຄົນ;
   - ກຳມະການຕັດສິນກິລາ ຈຳນວນ 9 ຄົນ;
3) ນັກກິລາພອນສະຫວັນ ແລະ ນັກກິລາທີມຊາດ ໄດ້ຮັບການພັດທະນາຢ່າງເປັນລະບົບ ແລະ ຕໍ່ເນື່ອງ ມີຂີດຄວາມສາມາດທຽບເທົ່າມາດຕະຖານສາກົນ:
   - ນັກກິລາພອນສະຫວັນ ຈຳນວນ 168 ຄົນ;
   - ນັກກິລາທີມຊາດ ຈຳນວນ 112 ຄົນ.
4) ສປປ ລາວ ຈະຖືກຈັດອັນດັບ ແລະ ຍາດໄດ້ຫຼຽນ ໃນການເຂົ້າຮ່ວມແຂ່ງຂັນກິລາໃນລະດັບສາກົນ:
   - ກິລາຊີເກມ ຈັດຢູ່ໃນອັນດັບທີ 8-9 ໃນ 11 ປະເທດ ເຂົ້າຮ່ວມ, ສູ້ຊົນໃຫ້ຍາດໄດ້ 5 ຫຼຽນຄຳ ໃນການເຂົ້າຮ່ວມຄັ້ງນີ້;
   - ນັກກິລາລາວສາມາດຜ່ານການຄັດເລືອກເຂົ້າຮ່ວມແຂ່ງຂັນກິລາໂອແລມປິກ 3 ປະເພດກິລາຂຶ້ນໄປ.
5) ສ້າງບັນດານິຕິກຳລຸ່ມກົດໝາຍວ່າດ້ວຍກິລາ-ກາຍຍະກຳ ໃຫ້ສຳເລັດ ຈຳນວນ 04 ສະບັບ;
6) ສະຫະພັນກິລາແຫ່ງຊາດ 10 ສະຫະພັນ ມີລະບົບການບໍລິຫານ ທີ່ໄດ້ມາດຕະຖານ ແລະ ສະໂມສອນກິລາໃນລະດັບຕ່າງໆ ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວຕາມມາດຕະຖານທີ່ໄດ້ກຳນົດໄວ້ໃນລະບຽບການ.
7) **ບຸກຄະລາກອນການກິລາ, ນັກກິລາສະໝັກຫຼິ້ນ ແລະ ນັກກິລາອາຊີບ ໄດ້ມາດຕະຖານຄຸນນະພາບດ້ານກິລາ-ກາຍຍະກຳ ປະກອບສ່ວນເຂົ້າໃນການເຊີດຊູຖານະບົດບາດຂອງຊາດຢູ່ໃນເວທີສາກົນ ສ້າງຄວາມພາກ-ພູມໃຈໃຫ້ປະຊາຊົນລາວ.**
   - ຊຸກຍູ້ ແລະ ສົມທົບກັບສະຫະພັນກິລາແຫ່ງຊາດ ຈັດການຝຶກຊ້ອມ ແລະ ພັດທະນານັກກິລາພອນສະຫວັນ ແລະ ນັກກິລາຮຸ່ນສືບທອດ ໃຫ້ເປັນລະບົບ ແລະ ໄດ້ມາດຕະຖານທຽບເທົ່າສາກົນ ເພື່ອສາມາດເຂົ້າຮ່ວມແຂ່ງຂັນໃນງານຕ່າງໆໃນລະດັບພາກພື້ນ ແລະ ສາກົນໄດ້.
   - ຊຸກຍູ້ ແລະ ສົມທົບກັບສະຫະພັນກິລາແຫ່ງຊາດ ຈັດການແຂ່ງຂັນກິລາພາຍໃນ ປະຈຳປີ ຊີງຂັນທ່ານຜູ້ນຳພັກ-ລັດ, ວັນສຳຄັນຕ່າງໆຂອງຊາດ ແລະ ເປັນເຈົ້າພາບຈັດການແຂ່ງຂັນລະດັບນານາຊາດໃຫ້ເປັນລະບົບ ແລະ ໄດ້ມາດຕະຖານທຽບເທົ່າສາກົນ;
   - ພັດທະນາບຸກຄະລາກອນການກິລາລະດັບສູງ ຄູຝຶກ ແລະ ກຳມະການຕັດສິນໃນໄລຍະສັ້ນ ແລະ ໄລຍະຍາວ ທັງຢູ່ພາຍໃນ ແລະ ຕ່າງປະເທດ;
   - ເພີ່ມທະວີການພົວພັນຮ່ວມມືກັບປະເທດເພື່ອນມິດສາກົນ, ອົງການຈັດຕັ້ງກິລາສາກົນ ເພື່ອຍາດແຍ່ງການຊ່ວຍເຫຼືອ ໂດຍສະເພາະ ການຮ່ວມມືກັບ TICA ພັດທະນາບຸກຄະລາກອນການກິລາລະດັບສູງ ນັກວິທະຍາສາດການກິລາ, ຄູຝຶກ ແລະ ກຳມະການຕັດສິນ (ໃນໄລຍະສັ້ນ ແລະ ໄລຍະຍາວ);
   - ສືບຕໍ່ຈັດຕັ້ງປະຕິບັດບັນດາກິດຈະກຳທີ່ໄດ້ຮັບງົບປະມານສະໜັບສະໜູນ ພາກ 63 ໃຫ້ສຳເລັດ.

## XI. ຂະແໜງການຍ່ອຍບໍລິຫານ ແລະ ຄຸ້ມຄອງ

### 1. ສະພາບລວມ

ວຽກງານບໍລິຫານ ແລະ ຄຸ້ມຄອງການສຶກສາ ແລະ ກິລາ ເປັນປັດໄຈຕັດສິນ ເພື່ອເຮັດໃຫ້ລະບົບການສຶກສາໄດ້ຮັບການປັບປຸງດີຂຶ້ນ ບໍ່ວ່າຈະເປັນການຄຸ້ມຄອງການຮຽນການສອນ, ຄຸ້ມຄອງຄູສອນ ແລະ ພະນັກງານ, ຄຸ້ມຄອງການເງິນ ກໍຄືຄຸ້ມຄອງການຈັດຕັ້ງປະຕິບັດແຜນນະໂຍບາຍໃນການພັດທະນາການສຶກສາ ແລະ ກິລາ. ໃນສົກຮຽນຜ່ານມາ ໄດ້ມີຫຼາຍກິດຈະກໍາທີ່ໄດ້ຈັດຕັ້ງປະຕິບັດ ເພື່ອປັບປຸງລະບົບການບໍລິຫານ ແລະ ຄຸ້ມຄອງການສຶກສາແຕ່ສູນກາງຮອດທ້ອງຖິ່ນ ຊຶ່ງມີບາງຜົນສໍາເລັດທີ່ພົ້ນເດັ່ນດັ່ງນີ້: ໄດ້ມີການສັບຊ້ອນ, ປັບປຸງກົງຈັກການຈັດຕັ້ງ, ຂຽນຕໍາແໜ່ງງານ ແລະ ປະກອບບຸກຄະລາກອນເຂົ້າໃນຕໍາແໜ່ງງານຕ່າງໆ ເພື່ອໃຫ້ສອດຄ່ອງກັບສະພາບການປ່ຽນແປງໃໝ່ທີ່ເກີດຂຶ້ນໃນປັດຈຸບັນຕາມທິດກະທັດຮັດ; ໄດ້ຮັບການສະໜອງງົບປະມານເພີ່ມຕື່ມໃນບ້ວງເງິນເກີນແຜນຈາກລັດຖະບານ ເພື່ອແກ້ໄຂໃຫ້ແກ່ວຽກງານຕ່າງໆ ແລະ ຈັດສັນບຸລິມະສິດກິດຈະກໍາທີ່ຈໍາເປັນ ເພື່ອເຮັດໃຫ້ການສຶກສາສາມາດດໍາເນີນໄປໄດ້ ເປັນຕົ້ນແມ່ນ ການເພີ່ມເງິນອຸດໜູນເບ້ຍລ້ຽງໃຫ້ແກ່ນັກຮຽນລົງຝຶກງານ, ເບ້ຍລ້ຽງນັກຮຽນສາມັນຜູ້ທຸກຍາກ, ການຄິດໄລ່ເພີ່ມງົບປະມານບໍລິຫານສະຖານການສຶກສາ, ການສະໜອງເງິນນະໂຍບາຍອຸດໜູນໃຫ້ແກ່ຄູອາສາສະໝັກໃນທົ່ວປະເທດ ແລະ ອື່ນໆ; ໄດ້ມີການຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ບໍລິຫານຢູ່ໃນແຕ່ລະຂັ້ນ ຂອງວຽກງານຕ່າງໆ ໃນຂອບເຂດທົ່ວປະເທດໄດ້ຈໍານວນບໍ່ໜ້ອຍ; ໄດ້ມີການປັບປຸງລະບົບຂໍ້ມູນຂ່າວສານການສຶກສາ, ພັດທະນາຍຸດທະສາດໄອຊີທີສໍາລັບຂະແໜງການສຶກສາ ເພື່ອການຫັນເປັນດີຈິຕອນຂອງຂະແໜງການສຶກສາ ແລະ ໄດ້ມີການຍາດແຍ່ງທຶນຮອນການຊ່ວຍເຫຼືອຈາກຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນ ເພື່ອພັດທະນາເຂົ້າໃນວຽກງານຕ່າງໆ. ພ້ອມດຽວກັນນີ້, ກໍໄດ້ມີຄວາມພະຍາຍາມໃນການປັບປຸງວຽກງານບໍລິຫານ-ຄຸ້ມຄອງ ແລະ ແກ້ໄຂປາກົດການຫຍໍ້ທໍ້ຕ່າງໆ ໃນຂົງເຂດການສຶກສາ, ໂດຍການພັດທະນາ ແລະ ປັບປຸງບັນດານິຕິກໍາຈໍານວນໜຶ່ງ ເປັນຕົ້ນແມ່ນ ມະຕິຕົກລົງ, ແຈ້ງການ ແລະ ຄໍາແນະນໍາຕ່າງໆ, ພ້ອມທັງ ໄດ້ມີການຈັດຕັ້ງ ແລະ ຕິດຕາມການຜັນຂະຫຍາຍມະຕິ, ນະໂຍບາຍ, ຄໍາສັ່ງ ຂອງຂັ້ນເທິງໃນແຕ່ລະໄລຍະ.

### 2. ຜົນສໍາເລັດຜົນໄດ້ຮັບລະດັບສູງ

### 2.1. ຈໍານວນນັກຮຽນທີ່ຈົບຈາກອະນຸບານ ຈົນຮອດມັດທະຍົມສຶກສາຕອນປາຍ ລວມທັງການສຶກສານອກໂຮງຮຽນເພີ່ມຂຶ້ນ ພ້ອມທັງມີຜົນໄດ້ຮັບດ້ານການຮຽນຮູ້ທີ່ດີຂຶ້ນ ໂດຍສະເພາະແມ່ນການຮູ້ໜັງສື ແລະ ທັກສະການຄິດໄລ່ເລກ, ທັກສະ ສະຕະວັດທີ 21 ໂດຍສຸມໃສ່ເປັນພິເສດຕໍ່ຜູ້ດ້ອຍໂອກາດ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ

1) ຄົ້ນຄວ້າສ້າງ ຂໍ້ຕົກລົງວ່າດ້ວຍການທົດແທນຄູ ຕາມການສູນເສຍໃນຮູບການຕ່າງ ພ້ອມທັງໄດ້ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າສ້າງ ຮ່າງຄໍາສັ່ງກ່ຽວກັບການທົດແທນລັດຖະກອນຄູປະຈຸບັນສະເໜີນາຍົກ ລັດຖະມົນຕີອະນຸມັດ;
2) ໄດ້ຄົ້ນຄວ້າສ້າງນິຕິກໍາກ່ຽວກັບການປະຕິບັດນະໂຍບາຍຄູ ອາສາສະໝັກ, ທະຫານຊາຍແດນ, ພະນັກງານ ບໍານານ ແລະ ການທົດແທນຄູ ສູນເສຍໃນຮູບການຕ່າງໆ;
3) ຄົ້ນຄວ້າ ພະນັກງານ-ນັກຮົບ ແລະ ພົນທະຫານ ຊາຍແດນ ໄດ້ປະຕິບັດໜ້າທີ່ໃນການສິດສອນ ໃນສົກຮຽນ 2024-2025 ຈານວນ 9 ສະຫາຍ;
4) ຄົ້ນຄວ້າ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແຜນແບ່ງປັນຕົວເລກທະຫານໃໝ່ ຈໍານວນ 2,000 ຕົວເລກ ພ້ອມທັງສ້າງແຜນ ຄົ້ນຄວ້າສ້າງນິຕິກາ ໃຫ້ຊັດເຈນກ່ຽວກັບການຄຸ້ມຄອງ ແລະ ຄັດເລືອກບັນຈຸເຂົ້າເປັນພະລາກອນໃໝ່ຂອງກະຊວງປ້ອງກັນຊາດ;

5) ກະຊວງປ້ອງກັນປະເທດ ຍັງໄດ້ ປະສານສົມທົບ ກະຊວງສຶກສາທິການ ແລະ ກິລາ ເກັບກຳສັງລວມຈຳນວນ ພະນັກງານ-ນັກຮົບ ແລະ ພົນທະຫານ ຊາຍແດນ ເພື່ອໄປຊ່ວຍສອນໂຮງຮຽນທີ່ຂາດຄູ ໃນເຂດຫ່າງໄກ ສອກຫຼີກ ພ້ອມທັງໄດ້ຈັດຝຶກອົບຮົມວິຊາຄູ ຂັ້ນປະຖົມ ໃຫ້ກຳລັງພົນດັ່ງກ່າວ ໃນຊຸດທີ 1 ຈຳນວນ 86 ສະຫາຍ ຈາກກອງບັນຊາການທະຫານ 5 ແຂວງ ຄື: ສະຫວັນນະເຂດ 40 ສະຫາຍ, ຄຳມ່ວນ 13 ສະຫາຍ , ສາລະວັນ 09 ສະຫາຍ, ເຊກອງ 19 ສະຫາຍ ແລະ ອັດຕະປື 05 ສະຫາຍ ແລະ ຊຸດທີ 2 ດຳເນີນວັນທີ 26 ມິຖຸນາ ຫາ 05 ກໍລະກົດ 2025 ຈານວນ 106 ສະຫາຍ ຈາກກອງບັນຊາການທະຫານ 5 ແຂວງຄື: ຫຼວງພະບາງ 27 ສະຫາຍ, ໄຊຍະບຸລີ 15 ສະຫາຍ, ອຸດົມໄຊ 26 ສະຫາຍ, ບໍ່ແກ້ວ 21 ສະຫາຍ ແລະ ຜົ້ງສາລີ 17 ສະຫາຍ;
6) ແຜນຈັດຕັ້ງປະຕິບັດການຈັດສັນຄູທີ່ເປັນບູລິມະສິດ 10 ປີ ໄດ້ຖືກຮັບຮອງອະນຸມັດ;
7) ສຳເລັດ (ຮ່າງ) ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງປຶ້ມ, ສື່ການຮຽນການສອນ ແລະ ອຸປະກອນການສຶກສາ ແລະ ກິລາ, ສາງ ແລະ ຂົນສົ່ງ ພາຍໃນຂະແໜງການສຶກສາທິການ ວິທະຍາສາດ ແລະ ກິລາ;
8) ຈຳນວນຄູ ແລະ ຜູ້ອຳນວຍການໂຮງຮຽນ ໃນສະຖານການສຶກສາກ່ອນໄວຮຽນ ທີ່ມີຄວາມຮູ້ຄວາມສາມາດ ສອດຄ່ອງກັບມາດຕະຖານການສິດສອນທີ່ໄດ້ກຳນົດຜ່ານມາເພີ່ມຂຶ້ນໂດຍໃຫ້ມີການປະເມີນຜົນການ ປະຕິບັດໜ້າທີ່ຂອງເຂົາເຈົ້າຢ່າງເປັນປົກກະຕິ;
9) ຫຼັກສູດສ້າງຄູອະນຸບານ ແລະ ຫຼັກສູດຝຶກອົບຮົມຄູປະຈຳການຊັ້ນອະນຸບານໄດ້ຮັບການທົບທວນຄືນເພື່ອ ໃຫ້ສອດຄ່ອງກັບຫຼັກສູດການຮຽນການສອນ ເຊັ່ນ ສຳເລັດການຝຶກອົບຮົມຄູຝຶກຂັ້ນສູນກາງໃນການນຳໃຊ້ ປຶ້ມຄູ່ມືແນະນຳຄູ, ກິດຈະກຳການຮຽນການສອນ ແລະ ປຶ້ມຕິດຕາມການຈັດການຮຽນການສອນຜ່ານການ ຫຼິ້ນ ໂດຍໄດ້ຮັບການສະໜັບສະໜູນຈາກໂຄງການກອງທຶນຮ່ວມມືເພື່ອການສຶກສາໄລຍະສາມ (GPE III);
10) ຈຳນວນນັກຮຽນທີ່ຈົບຈາກມັດທະຍົມຕອນຕົ້ນເພີ່ມຂຶ້ນລວມທັງມີຜົນໄດ້ຮັບດ້ານການຮຽນທີ່ດີຂຶ້ນໂດຍ ສະເພາະທັກສະຕະວັດທີ21, ໂດຍສຸມໃສ່ເປັນພິເສດຕໍ່ຜູ້ດ້ອຍໂອກາດ ແລະ ຄວາມສະເໝີພາບລະຫວ່າງ ຍິງ-ຊາຍ;
11) ຈຳນວນນັກຮຽນທີ່ຈົບຊັ້ນມັດທະຍົມຕອນປາຍມີຜົນໄດ້ຮັບດ້ານການຮຽນຮູ້ທີ່ດີຂຶ້ນ, ໂດຍສະເພາະທັກ ສະຊີວິດ, ທັກສະດ້ານໄອຊີທີ ແລະ ທັກສະດ້ານວິຊາຊີບຂັ້ນພື້ນຖານ, ໂດຍສຸມໃສ່ເປັນພິເສດຕໍ່ຜູ້ດ້ອຍໂອ ກາດ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ;
12) ຈຳນວນນັກຮຽນທີ່ຈົບຈາກການສຶກສາກ່ອນໄວຮຽນຈົນຮອດມັດທະຍົມຕອນປາຍລວມທັງການສຶກສາ ນອກໂຮງຮຽນເພີ່ມຂຶ້ນພ້ອມດ້ວຍຜົນການຮຽນຮູ້ທີ່ດີຂຶ້ນໂດຍສະເພາະແມ່ນທັກສະການອ່ານ, ການຂຽນ ແລະ ການຄິດໄລ່ລວມທັງທັກສະອື່ນໆໃນສະຕະວັດທີ 21 ໂດຍເນັ້ນໃສ່ຜູ້ທີ່ດ້ອຍໂອກາດ ແລະ ຄວາມສະເ ໝີພາບລະຫວ່າງຍິງ-ຊາຍໂດຍສະເພາະຜົນການຮຽນຂອງນັກຮຽນ ປ.3, ປ.5, ມ.4 ແລະ ມ.6 ແມ່ນດີຂຶ້ນ;
13) ສຳເລັດການຈັດຝຶກອົບຮົມຄວາມເປັນຜູ້ນຳຂອງຊຸມຊົນເພື່ອການປັບປຸງໂພຊະນາການໄປສູ່ໂຮງຮຽນເຂດ ເມືອງສັງທອງ ນະຄອນຫຼວງວຽງຈັນ ຮ່ວມກັບ SEAMEO RECFON ແລະ ສູນໂພຊະນາການ, ກະຊວງ ສາທາລະນະສຸກ ໂດຍໄດ້ມີການຈັດຝຶກອົບຮົມເປັນເວລາ 3 ວັນ ໃຫ້ ແກ່ຜູ້ນຳຊຸມຊົນ, ຜູ້ອຳນວຍການ ແລະ ຄູ-ອາຈານ ບ້ານນາຫອຍ, ບ້ານແກ້ງໜໍ່ ແລະ ບ້ານໄຮໃຕ້ ໂດຍມີຜູ້ເຂົ້າຮ່ວມທັງໝົດ 32 ຄົນ;
14) ສຳເລັດການຈັດກອງກອງປະຊຸມຝຶກອົບຮົມເພື່ອເປັນຄູຝຶກກ່ຽວກັບການສຶກສາພົນລະເມືອງໂລກໃຫ້ຄູຝຶກ ໃນຂະແໜງການສຶກສາຢູ່ວິທະຍາໄລຄູ 8 ແຫ່ງຄື: ວິທະຍາໄລຄູຄັງໄຂ, ວິທະຍາໄລຄູຫຼວງນ້ຳທາ, ວິທະຍາ

ໄລຄູຫຼວງພະບາງ, ວິທະຍາໄລຄູດົງຄຳຊ້າງ, ວິທະຍາໄລຄູບ້ານເກິນ, ວິທະຍາໄລຄູສະຫວັນນະເຂດ, ວິທະຍາໄລຄູປາກເຊ ແລະ ວິທະຍາໄລຄູສາລະວັນ ໂດຍມີຜູ້ເຂົ້າຮ່ວມທັງໝົດ ຫຼາຍກວ່າ 240 ເທື່ອຄົນ;

15) ທຸກໂຮງຮຽນມີຊັບພະຍາກອນທາງດ້ານການເງິນ ແລະ ຊັບພະຍາກອນມະນຸດເພື່ອເຮັດວຽກຢ່າງມີປະສິດທິຜົນ, ຄຽງຄູ່ກັບຄວາມສາມາດ ໃນການຄຸ້ມຄອງໂຮງຮຽນ ເພື່ອເຮັດໃຫ້ຜົນໄດ້ຮັບການຮຽນຂອງນັກຮຽນດີຂຶ້ນ.
16) ສຳເລັດການຝຶກອົບຮົມເຂັ້ມໃຫ້ຄູຝຶກຂັ້ນສູນກາງໃນການນຳໃຊ້ໃນການນຳໃຊ້ປຶ້ມບົດສອນການກຽມຄວາມ ພ້ອມດ້ານການອ່ານ ສຳລັບເດັກອາຍຸ 5 ປີ ສະບັບປັບປຸງ 18 ແຂວງ ຈານວນ 137 ທ່ານ ໂດຍໄດ້ຮັບການສະໜັບສະໜູນຈາກໂຄງການກອງທຶນຮ່ວມມືເພື່ອການສຶກສາໄລຍະສາມ (GPE III);
17) ສຳເລັດກອງປະຊຸມຝຶກອົບຮົມສ້າງຄວາມເຂັ້ມແຂງ ໃຫ້ພະນັກງານຂັ້ນແຂວງ ນຳໃຊ້ລະບົບຄຸ້ມຄອງຕິດຕາມບັນທຶກການເກັບ ກຳສະໜອງປຶ້ມແຕ່ລະສົກຮຽນ ໃຫ້ແກ່ 5 ແຂວງ ເປົ້າໝາຍຄື: ແຂວງ ບໍ່ແກ້ວ, ຫຼວງນ້ຳທາ, ໄຊສົມບູນ, ເຊ ກອງ ແລະ ແຂວງອັດຕະປື ເຂົ້າຮ່ວມ 41 ທ່ານ, ຍິງ 10 ທ່ານ;
18) ສຳເລັດການຂຽນປຶ້ມອ່ານເສີມໃຫ້ແກ່ພະນັກງານສຳນັກພິມສຶກສາ ແລະ ກິລາ, ໂຮງພິມສຶກສາ ແລະ ກິລາອຸປະກອນການສຶກສາ ຈຳນວນ 3 ຄັ້ງ ເຂົ້າຮ່ວມ 10 ທ່ານ, ຍິງ 5 ທ່ານ;
19) ສຳເລັດການຢ້ຽມຢາມລາຍງານຜົນສຳເລັດຮ່ວມເຮັດວຽກ ແລະ ເຊັນສັນຍາຊ່ວຍຈຳ (2025-2027) ລະຫວ່າງ ສຳນັກພິມສຶກສາ ແລະ ກິລາ ແລະ ສຳນັກພິມສຶກສາ ສສ ຫວຽດນາມ;
20) ສຳເລັດການມອບໃບຫຼຽນນາມມະຍົດພັດທະນາດີເດັ່ນ ແລະ ໃບຍ້ອງຍໍກະຊວງສຶກສາທິການ ແລະ ກິລາເນື່ອງໃນໂອກາດວັນຄູແຫ່ງຊາດ ຄົບຮອບ 30 ປີ ຈຳນວນ 22 ທ່ານ, ຍິງ 9 ທ່ານ;
21) ສ້າງໂປຼແກຼມຄຸ້ມຄອງຖານຂໍ້ມູນປຶ້ມແບບຮຽນ ແລະ ຄູ່ມືຄູ ໃຫ້ພະນັກງານຮັບຜິດຊອບ ຂັ້ນແຂວງ ຮູ້ນຳໃຊ້ລະບົບການເກັບກຳຂໍ້ມູນປຶ້ມ ຕາມຊັ້ນສາຍລາຍວິຊາ ທີ່ກະຊວງສຶກສາທິການ ແລະ ກິລາ ສະເໜີແຈກຢາຍໃຫ້ຈຳນວນ 5 ແຂວງ ມີ 24 ເມືອງ;
22) ມອບ-ຮັບ ສາງສຳນັກພິມສຶກສາ ແລະ ກິລາ ກະຊວງສຶກສາທິການ ແລະ ກິລາ ທີ່ໄດ້ຮັບການຊ່ວຍເຫຼືອຈາກອົງການມະນຸດສະທຳກອງທັບບົກສະຫະລັດອາເມຣິກາ;
23) ສຳເລັດການຂົນສົ່ງປຶ້ມແບບຮຽນ, ສື່ການຮຽນການສອນ ໃຫ້ບັນດາໂຮງຮຽນ 148 ເມືອງ ໃນຂອບເຂດທົ່ວປະເທດ ກ່ອນໄຂສົກຮຽນ 2026;
24) ສຳເລັດການຈັດຊື້-ຈັດຈ້າງ ປະຈຳປີ 2025 ເຊັ່ນ: ຈັດພິມປຶ້ມ, ອຸປະກອນການຮຽນການສອນ ນຳໃຊ້ງົບປະມານ 35,000,000,000 ກີບ;
25) ນະໂຍບາຍດ້ານການຄຸ້ມຄອງທີ່ອີງໃສ່ໂຮງຮຽນເປັນຫຼັກ ທີ່ໄດ້ກຳນົດພາລະບົດບາດ ແລະ ຄວາມຮັບຜິດຊອບໃນລະດັບໂຮງຮຽນ, ກຸ່ມໂຮງຮຽນ, ສຶກສາເມືອງ ແລະ ສຶກສາແຂວງ ໄດ້ຮັບການຮັບຮອງ;
26) ສູດການຄິດໄລ່ການສະໜອງເງິນບໍລິຫານໂຮງຮຽນ ທີ່ປັບປຸງໃໝ່ ແລະ ຄຳແນະນຳກ່ຽວກັບເງື່ອນໄຂການໃຊ້ຈ່າຍ ໄດ້ຖືກອະນຸມັດ;
27) ສ້າງຄວາມສາມາດໃຫ້ແກ່ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ເພື່ອນຳໃຊ້ຂໍ້ມູນຮ່ວມກັນ;
28) ສ້າງຄວາມສາມາດໃຫ້ແກ່ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນເພື່ອນຳໃຊ້ຂໍ້ມູນຮ່ວມກັນ;
29) ຂະແໜງການສຶກສາ ແລະ ໄດ້ຮັບການຈັດຕັ້ງ, ຄຸ້ມຄອງ, ການກວດກາ ແລະ ປະເມີນຜົນໃນທຸກລະດັບຢ່າງເໝາະສົມ ເພື່ອຍົກສູງປະສິດທິພາບຂອງຂະແໜງການ.

30) ສຳເລັດການພັດທະນາຕົ້ນສະບັບ, ການຕິດຕາມ ແລະ ຖອດຖອນບົດຮຽນໃນການນຳໃຊ້, ການປັບປຸງ, ຈັດພິມ ແລະ ແຈກຢາຍປຶ້ມບົດສອນການກຽມຄວາມພ້ອມດ້ານການອ່ານສຳລັບເດັກອາຍຸ 5 ປີ ໃຫ້ແກ່ໂຮງຮຽນເປົ້າໝາຍຂອງໂຄງການ GPEIII ຈຳນວນ 775 ແຫ່ງໃນຂອບເຂດທົ່ວປະ ເທດໂດຍໄດ້ຮັບການສະໜັບສະ ໜູນຈາກໂຄງການກອງທຶນຮ່ວມມືເພື່ອການສຶກສາໄລຍະສາມ (GPEIII);
31) ສຳເລັດການຜະລິດວິດີໂອການຈັດການຮຽນການສອນແບບປະສົມປະສານສຳລັບຫ້ອງກຽມປະຖົມ ຈຳນວນ 13 ວິດີໂອ ພ້ອມຝຶກອົບຮົມການນຳໃຊ້ວິດີໂອດັ່ງກ່າວໃຫ້ແກ່ໂຮງຮຽນ, ເມືອງ ແລະ ແຂວງເປົ້າໝາຍຂອງໂຄງການ ຄື: ແຂວງຊຽງຂວາງ, ວຽງຈັນ, ສະຫວັນນະເຂດ, ສາລະວັນ ແລະ ອັດຕະປື ໂດຍໄດ້ຮັບການສະໜັບສະໜູນຈາກອົງການອຸຍນີເຊັບ;
32) ສຳເລັດການເຂົ້າຮ່ວມກອງປະຊຸມປະຈຳປີຂອງຜູ້ບໍລິຫານສູນປະສານງານວຽກງານການສຶກສາພົນລະເມືອງ;
33) ສຳເລັດການເຂົ້າຮ່ວມເຂົ້າຮ່ວມກອງປະຊຸມສຸດຍອດເຄືອຄ່າຍການຄົ້ນຄວ້ານະໂຍບາຍຂອງສູນຊີເມວ (SEAMEO CENTER POLICY RESEARCH NETWORK; CPRN) SUMMIT ໃນປີ 2024 ທີ່ ປະເທດບຣູໄນ ໃນກອງປະຊຸມສສພຊ ໄດ້ລາຍງານການຈັດຕັ້ງປະຕິບັດວຽກງານ ແລະ ນະໂຍບາຍຂອງສູນ ພ້ອມທັງສະເໜີຜົນງານການຄົ້ນຄວ້າຂອງຕົນເອງໃນໄລຍະຜ່ານມາໃຫ້ບັນດາສູນຕ່າງໆຮັບຮູ້ຜົນງານດັ່ງກ່າວ;
34) ສຳເລັດການເຂົ້າຮ່ວມກອງປະຊຸມຜູ້ບໍລິຫານສູນຊີເມວ (Center Director Meeting) ຢູ່ບາງກອກ, ປະເທດໄທ, ກອງປະຊຸມເຈົ້າໜ້າທີ່ອາວຸໂສ HOM ທີ່ບາງກອກ ປະເທດໄທ, ກອງປະຊຸມດັ່ງກ່າວບັນດາຜູ້ອຳນວຍການຊີເມວ ໄດ້ປຶກສາຫາລືກັນ ແລະ ຮັບຮອງເອົາແຜນການຈັດຕັ້ງປະຕິບັດວຽກງານຂອງ ສສພຊ ປະຈຳສົກປີ 2025 ໃນກອງປະຊຸມດັ່ງກ່າວ ສສພຊ ກໍ່ໄດ້ເຊັນ MOA ຮ່ວມກັບ SEAMEO RECFON ກ່ຽວກັບການຈັດຝຶກອົບຮົມວຽກງານໂພຊະນາການ ໃຫ້ແກ່ຜູ້ນຳຊຸມຊົນ ແລະ ຄູອາຈານຂອງໂຮງຮຽນ ຢູ່ເມືອງສັງທອງ, ນະຄອນຫຼວງວຽງຈັນ;
35) ສຳເລັດການເຂົ້າຮ່ວມກອງປະຊຸມສຳມະນາພາຍໃຕ້ຫົວຂໍ້ຍຸດທະສາດຂອງຊີເມວກ່ຽວກັບການຕິດຕາມ, ການປະເມີນຜົນ ແລະ ການຮຽນຮູ້ຄັ້ງທີ 3 ທີ່ ບາງກອກ ປະເທດໄທ;
36) ສຳເລັດການເຂົ້າຮ່ວມຄົ້ນຄວ້າ ໃນໂຄງການ Rapid Scoping Study on Out-of-School Children and Youth (OOSCY) in Southeast Asia;
37) ສຳເລັດການຈັດກອງປະຊຸມຜູ້ບໍລິຫານຂອງສູນຊີເມວຊີອີດີ (SEAMEO CED Governing Board Meeting) ຄັ້ງທີ 7 ແລະ ກອງປະຊຸມສຳມະນາສາກົນ ຄັ້ງທີ 6 ໃນປີ 2024 ແລະ ກອງປະຊຸມ ທີ່ກ່ຽວຂ້ອງກັບວຽກງານປະຊາກອນໂລກໃນສົກປີ 2024 ໃນຫົວຂໍ້ ການສຶກສາເພື່ອພັດທະນາຊຸມຊົນໃນຂົງເຂດອາຊີຕາເວັນອອກສ່ຽງໃຕ້;
38) ສຳເລັດການຈັດຕັ້ງປະຕິບັດການປະເມີນກ່ຽວກັບການມີສ່ວນຮ່ວມຂອງຊຸມຊົນ ໃນວຽກງານລະເບີດບໍ່ທັນແຕກ ພາຍໃຕ້ໂຄງການ Project on Local Perspective on Humanitarian Mine Action in Lao PDR;
39) ສ້າງເຄືອຂ່າຍພັດທະນາຄົ້ນຄວ້າວິໄຈ ແລະ ຄຸ້ມຄອງ ຄັງຜົນການປະເມີນຜົນການຮຽນ ແລະ ຄັງຂໍ້ສອບທີ່ເປັນມາດຕະຖານ;
40) ລະບົບ EMIS, TEMIS, TVETMIS ແລະ LUMS ແມ່ນເຊື່ອມຕໍ່ ແລະ ເຊື່ອມໂຍງເຂົ້າກັນ;

41) 20% ຂອງຜູ້ບໍລິຫານການສຶກສາທຸກຂັ້ນ ໄດ້ຮັບການຝຶກອົບຮົມໃນຫົວຂໍ້ຕ່າງໆ ທີ່ກ່ຽວຂ້ອງກັບການບໍລິຫານ ແລະ ຄຸ້ມຄອງການສຶກສາ;
42) ຖານຂໍ້ມູນ EMIS ສາມາດເບິ່ງລາຍຊື່ເມືອງເປົ້າໝາຍ 40 ເມືອງ; ມີລາຍຊື່ຂໍ້ມູນຈາກຖານLESMIS ແລະ EMIS-Forms ເພື່ອລາຍງານອັດຕະໂນມັດ;
43) ຕ້ອນຮັບຄະນະຜູ້ແທນຈາກກະຊວງສຶກສາແລະກໍ່ສ້າງ ສສ. ຫວຽດນາມມາເຊັນສັນຍາປະຈໍາປີ 2024;
44) ຈັດກອງປະຊຸມຖອດຖອນບົດຮຽນເພື່ອຊຸກຍູ້ສົ່ງເສີມວຽກງານການຮ່ວມມືລາວ-ຝຣັ່ງ;
45) ຈັດຝຶກອົບຮົມ ICT ໃຫ້ແກ່ຄູອາຈານລາວປະຈໍາປີ 2023 ຮ່ວມກັບພະແນກສຶກສາແຂວງຈຸງຈອງນາມໂດ ແລະ ສະຖາບັນການຮ່ວມມືດ້ານການສຶກສາອາຊີປາຊີຟິກ ສ.ເກົາຫຼີ;
46) ລົງຕິດຕາມການຈັດຕັ້ງປະຕິບັດສັນຍາ ແລະ ການປະຕິບັດໂຄງການຂອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານປະຈໍາປີ 2024;
47) ກະກຽມບັນດາຂໍ້ມູນດ້ານຕ່າງໆທີ່ຕິດພັນກັບການຕອບຄໍາຖາມກ່ຽວກັບການຈັດຕັ້ງປະຕິບັດກົດລະບຽບຂອງການເຂົ້າຮ່ວມສັນຍາສາກົນຕໍ່ກັບອົງການຕ້ານສານຕ້ອງຫ້າມໂລກ ແລະ ຕໍ່ກັບອົງການອຸຍແນສໂກ;
48) ຄົ້ນຄວ້າສັນຍາຮ່ວມມືໂຄງການແລກປ່ຽນຄູໃນບັນດາປະເທດອາຊີ-ປາຊີຟິກໄລຍະ 5ປີ (2023-2027);
49) ຈັດຕັ້ງປະຕິບັດ ແລະ ປະສານກັບກົມສ້າງຄູ ແລະ ສູນ APCEIU ສ. ເກົາຫຼີ ພາຍໃຕ້ໂຄງການແລກປ່ຽນຄູລາວ-ເກົາຫຼີ ໃນການຕ້ອນຮັບ ແລະ ນໍາສົ່ງຄູເພື່ອແລກປ່ຽນການຮຽນການສອນ.

### 2.4. ຄວາມແຕກໂຕນກັນຫຼຸດລົງ ໂດຍຜ່ານແຜນການເງິນຂອງແຜນພັດທະນາການສຶກສາ ແລະ ກິລາ ທີ່ຕອບສະໜອງໂດຍກົງຕໍ່ເປົ້າໝາຍຜົນໄດ້ຮັບ, ພ້ອມທັງພິຈາລະນາສະພາບການຂອງຂໍ້ຈໍາກັດດ້ານຊັບພະຍາກອນ ແລະ ຄວາມອາດສາມາດ.

1) ຄະນະກໍາມະການຈັດສັນຄູ ແລະ ຄະນະກໍາມະການແຜນການ ແລະ ການເງິນ ຂອງກະຊວງສຶກສາທິການ ແລະ ກິລາ ໃນລະດັບສູນກາງ ແລະ ລະດັບທ້ອງຖິ່ນມີຄວາມເຂັ້ມແຂງຂຶ້ນໃນການນໍາໃຊ້ຫຼັກຖານຈາກແຜນປະຈໍາປີທີ່ມີການຄິດໄລ່ຄ່າໃຊ້ຈ່າຍ ACSEPs, ຜົນການປະເມີນຜົນການຮຽນ ແລະ ຖານຂໍ້ມູນ EMIS ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດທຸກນະໂຍບາຍ ແລະ ຍຸດທະສາດຂອງແຜນ 5 ປີ;
2) ສໍາເລັດການຂຶ້ນແຜນທີ່ມີການຄິດໄລ່ມູນຄ່າ ປີ 2025 (ACSEP 2025) ສໍາລັບຂັ້ນສູນກາງ, ຂັ້ນແຂວງ ແລະ ມະຫາວິທະຍາໄລ;
3) ສໍາເລັດການເຊັນສັນຍາຈັດຕັ້ງປະຕິບັດໂຄງການກອງທຶນການຫັນປ່ຽນລະບົບການສຶກສາ (STG) ແລະ ກອງທຶນສ້າງຂີດຄວາມສາມາດໃຫ້ລະບົບການສຶກສາ (SCG), ທຶນຊ່ວຍເຫຼືອລ້າຂອງກອງທຶນຮ່ວມມືສາກົນເພື່ອການສຶກສາ (GPE);
4) ສໍາເລັດການລາຍງານກ່ຽວກັບ ການສືບຕໍ່ແຜນງານສະໜັບສະໜູນງົບປະມານຂອງສະຫະພາບເອີຣົບໃຫ້ແກ່ຂະແໜງການສຶກສາ (EU Budget Support) ໄລຍະໃໝ່ 2025-2027;
5) ແຜນປະຕິບັດງານປະຈໍາປີ ຂອງຂະແໜງການຍ່ອຍໄດ້ນໍາສະເໜີໃນກອງປະຊຸມໜ່ວຍງານວິຊາການຂະແໜງການຍ່ອຍການບໍລິຫານ ແລະ ຄຸ້ມຄອງການສຶກສາ;
6) ຖານຂໍ້ມູນ ODAMIS ໄດ້ຮັບການປັບປຸງ;
7) ສໍາເລັດການສ້າງ ແຜນຄວາມຕ້ອງການຄູ ແລະ ແຜນກໍ່ສ້າງຄູ ການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາໄລຍະ 10 ປີ (2026-2035)ໄລຍະ 10 ປີ (2026 ຫາ 2035).

## 3. ບັນຫາ ແລະ ສິ່ງທ້າທາຍ

1) ງົບປະມານສົມທົບທີ່ໃຊ້ໃນວຽກງານຄົ້ນຄວ້າ ແລະ ຝຶກອົບຮົມຍັງບໍ່ທັນພຽງພໍ ການຈັດຕັ້ງປະຕິບັດວຽກງານສ່ວນຫຼາຍແມ່ນຂຶ້ນກັບໂຄງການຜູ້ໃຫ້ທຶນ ເຮັດໃຫ້ບາງແຜນກິດຈະກຳບໍ່ໄດ້ຈັດຕັ້ງປະຕິບັດ;
2) ອຸປະກອນຮັບໃຊ້ໃນດ້ານບໍລິຫານ ແລະ ວິຊາການບໍ່ພຽງພໍ; ການປະຕິບັດວຽກງານຍັງປະຕິບັດບໍ່ໄດ້ຕາມພາລະບົດບາດເທົ່າທີ່ຄວນ ເນື່ອງຈາກບຸກຄະລາກອນບໍ່ພຽງພໍ;
3) ການສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານລັດຖະກອນ ເຖິງຈະເອົາໃຈໃສ່ເປັນປົກກະຕິກໍ່ຕາມ ແຕ່ຍັງມີພະນັກງານ-ລັດຖະກອນ ຈຳນວນໜຶ່ງຍັງຖືເບົາຕໍ່ໜ້າທີ່ວຽກງານ, ຂາດຄວາມກະຕືລືລົ້ນ, ມີແນວຄິດປຽບທຽບຊິ່ງຊາ, ແບບແຜນວິທີເຮັດວຽກຍັງບໍ່ທັນໄດ້ດີ ແລະ ການປະຕິບັດວຽກງານບາງດ້ານຍັງຊັກຊ້າບໍ່ໄປຕາມກຳນົດເວລາທີ່ວາງໄວ້;
4) ຄວາມຮູ້, ຄວາມສາມາດ ຂອງພະນັກງານຈຳນວນໜຶ່ງ ຍັງຈຳກັດ, ພະຫະນະ ແລະ ອຸປະກອນ, ງົບປະມານຮັບໃຊ້ທາງດ້ານວິຊາການຍັງບໍ່ພຽງພໍ, ຂາດພະນັກງານລັດຖະກອນ ແລະ ຜູ້ທີ່ມີຄວາມຮູ້ສະເພາະດ້ານ ເພື່ອບັນຈຸໃນຕຳແໜ່ງງານ;
5) ຂອດການປະສານງານລະຫວ່າງພາກລັດໃນຂັ້ນແຂວງ ແລະ ທ້ອງຖິ່ນ ຈຳນວນໜຶ່ງ ກັບ ອສບລ, ສະມາຄົມ ແລະ ມູນນິທິ ຍັງບໍ່ທັນເປັນລະບົບ ແລະ ບໍ່ທັນກົມກຽວກັນດີ ເທົ່າທີ່ຄວນ;
6) ການປະສານງານ ເພື່ອຂໍຄຳເຫັນຈາກພາກສ່ວນກ່ຽວຂ້ອງ ໃນການເຂົ້າຮ່ວມກອງປະຊຸມທີ່ເປັນພັນທະ ໃນລະດັບພາກພື້ນ ແລະ ສາກົນ ຂອງອົງການອຸຍແນສໂກ ເຫັນວ່າຍັງຊັກຊ້າ ນັບທັງການປະສານງານເອົາຂໍ້ມູນ ແລະ ຕິດຕາມຄວາມຄືບໜ້າຂອງບາງວຽກງານກໍມີຄວາມຫຍຸ້ງຍາກ ຍ້ອນມີການສັບຊ້ອນວຽກໃໝ່ຂອງພະນັກງານໃນພາກສ່ວນກ່ຽວຂ້ອງຕ່າງໆ;
7) ການປະສານງານເອົາຂໍ້ມູນ ແລະ ຕິດຕາມຄວາມຄືບໜ້າຂອງບາງວຽກງານກໍມີຄວາມຫຍຸ້ງຍາກ ຍ້ອນມີການສັບຊ້ອນວຽກໃໝ່ຂອງພະນັກງານໃນພາກສ່ວນກ່ຽວຂ້ອງຕ່າງໆ. ບາງວຽກງານກໍ່ຕິດພັນກັບຫຼາຍພາກສ່ວນເປັນສາເຫດບາງຄັ້ງຍັງຊັກຊ້າ ຍ້ອນການສະໜອງຂໍ້ມູນໃນການເອົາມາສ້າງເປັນນິຕິກາເພື່ອໃຫ້ສອດຄອງ ແລະ ຮັດກຸມ.

## 4. ບຸລິມະສິດສຳລັບສົກຮຽນ 2025-2026

### 4.1. ຈຸດປະສົງ

1) ສ້າງຄວາມເຂັ້ມແຂງວຽກງານສື່ໂຄສະນາຂ່າວສານການສຶກສາ ແລະ ກິລາ ເປັນກະບອກສຽງ ແລະ ເຄື່ອງມືອັນແຫຼມຄົມໃນການເຜີຍແຜ່ຜົນງານດ້ານການສຶກສາ ແລະ ກິລາ ພ້ອມທັງໂຕ້ຕອບປາກົດການຫຍໍ້ທໍ້ຕໍ່ຂົງເຂດການສຶກສາ ແລະ ກິລາ ໃຫ້ກວ້າງຂວາງ;
2) ເພື່ອສົ່ງເສີມການສຶກສາຮຽນຮ່ວມ, ລວມທັງການສະໜັບສະໜູນນັກຮຽນພິການ;
3) ເພື່ອປະສານສົມທົບກັບແຫຼ່ງເງິນຊ່ວຍເຫຼືອຈາກພາຍນອກ ແລະ ຮັບປະກັນຄວາມສອດຄ່ອງຂອງການຊ່ວຍເຫຼືອທາງດ້ານການເງິນຈາກພາຍນອກ ກັບບັນດາຂົງເຂດບູລິມະສິດຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025;
4) ເພື່ອພັດທະນາ ແລະ ສະໜອງກົນໄກການຮັບປະກັນຄຸນນະພາບທີ່ມີປະສິດທິພາບ ແລະ ເໝາະສົມ ໃນທຸກລະດັບ;
5) ເພື່ອຮັບປະກັນໃຫ້ຂະແໜງການສຶກສາ ແລະ ກິລາ ມີຫຼັກຖານອ້າງອີງທີ່ຊັດເຈນໃນການກຳນົດນະໂຍບາຍ;
6) ເພື່ອປັບປຸງ ແລະ ພັດທະນາຄວາມຮູ້, ຄວາມສາມາດ ແລະ ປະສົບການກ່ຽວກັບການຄຸ້ມຄອງການສຶກສາໃຫ້ມີຄຸນນະພາບ ສຳລັບຜູ້ບໍລິຫານການສຶກສາທຸກຄົນ.

### 4.2. ຈຸດປະສົງສະເພາະ

1) ໂຮງຮຽນທຸກແຫ່ງໄດ້ຮັບງົບປະມານຫຼາຍຂຶ້ນເຮັດໃຫ້ໂຮງຮຽນສາມາດ ມີງົບປະມານນຳໃຊ້ເຂົ້າໃນການປັບປຸງຜົນການຮຽນ-ການສອນໃຫ້ມີຄຸນນະພາບດີຂຶ້ນພ້ອມກັນນັ້ນໂຮງຮຽນຍັງມີງົບປະມານໃນການຮັບໃຊ້ບໍລິຫານໂຮງຮຽນເພີ່ມຂຶ້ນ;
2) ຍົກສູງຄວາມເປັນເຈົ້າການໃນການປະຕິບັດວິໄນແຜນການການເງິນ-ງົບປະມານໃຫ້ເຂັ້ມງວດ, ສ້າງຄວາມເຂັ້ມແຂງ ດ້ານຄວາມຮັບຜິດຊອບໃນການຄຸ້ມຄອງວຽກງານການເງິນ, ການບັນຊີ, ການຄຸ້ມຄອງຊັບສິນ, ການຈັດຊື້ຈັດຈ້າງ, ການກໍ່ສ້າງ-ສ້ອມແປງ ໃຫ້ແກ່ພະນັກງານການເງິນຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ;
3) ເພື່ອສະໜອງງົບປະມານ, ພາຫານະ, ອຸປະກອນຮັບໃຊ້ວຽກງານການສຶກສາໃຫ້ມີຄວາມເໝາະສົມຕາມຄວາມຕ້ອງການທີ່ຈຳເປັນໃນແຕ່ລະຂັ້ນຄຸ້ມຄອງການສຶກສາໃຫ້ດີຂຶ້ນ;
4) ເພື່ອປັບປຸງຜົນການຮຽນຂອງນັກຮຽນ ແລະ ຫຼຸດຜ່ອນຄວາມແຕກໂຕນ ໂດຍຜ່ານການຄຸ້ມຄອງຊັບພະຍາກອນທີ່ມີປະສິດທິພາບ ແລະ ປະສິດທິຜົນ ໂດຍເລັ່ງໃສ່ການປັບປຸງໃຫ້ວຽກງານການສຶກສາໄດ້ຮັບການພັດທະນາດີຂຶ້ນ.

### 4.3. ວຽກຈຸດສຸມ

#### 4.3.1. ການສະໜອງ ແລະ ການຄຸ້ມຄອງຊັບພະຍາກອນດ້ານການເງິນ

1) ເພີ່ມຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດງົບປະມານຂອງລັດ, ໂຄງການການເງິນກູ້ຢືມ, ຊ່ວຍເຫຼືອລ້າ ແລະ ທຶນອື່ນໆ ຕາມກົດໝາຍ ແລະ ນິຕິກຳ ຕ່າງໆທີ່ໄດ້ກຳນົດໃຫ້ມີຄວາມປະຢັດມັດທະຍັດ, ສາມາດປະເມີນຜົນໄດ້ຮັບ ແລະ ຕົວຊີ້ວັດທີ່ກຳນົດ;
2) ຄົ້ນຄວ້າຈັດສັນ ແລະ ແຈ້ງຂອບເພດານແຜນງົບປະມານ ໃຫ້ບັນດາຫົວໜ່ວຍການເງິນຂັ້ນໜຶ່ງ ເພື່ອກະກຽມສ້າງແຜນໄລຍະກາງ ປະຈຳປີ 2026+2ປີ (2027,2028), ພາຍຫຼັງແຜນງົບປະມານໄດ້ຮັບການຮັບຮອງຈາກສະພາແຫ່ງຊາດ ແຈ້ງແຜນງົບປະມານປະຈຳປີ 2026 ໃຫ້ຫົວໜ່ວຍງົບປະມານຂັ້ນສອງທີ່ຂຶ້ນກັບ ເພື່ອຈັດສັນຕາມສາລະບານງົບປະມານ;
3) ກະກຽມໃຫ້ການຝຶກອົບຮົມ ແນະນຳການໃຊ້ລະຫັດສາລະບານໃໝ່ໃຫ້ແກ່ຫົວໜ່ວຍການເງິນທີ່ຂຶ້ນກັບ 34 ຫົວໜ່ວຍ ແລະ ບັນດາກົມ, ສູນ ສະຖາບັນ ທີ່ຂຶ້ນກັບຫ້ອງ ການກະຊວງ ສສກ ໃນການກະກຽມສ້າງແຜນຄາດຄະເນງົບປະມານ ປະຈຳປີ 2026+2 ປີຕໍ່ໄປ ຕາມສາລະບານໃໝ່ທີ່ໄດ້ປະກາດນຳໃຊ້;
4) ສະເໜີກະຊວງການເງິນ ຝຶກອົບຮົມລະບົບຂໍ້ມູນຂ່າວສານການເງິນພາກລັດ ສປປ ລາວ (LIFMIS) ໃຫ້ຫົວໜ່ວຍການເງິນຂັ້ນໜຶ່ງ ແລະ ຂັ້ນສອງ ເພື່ອນຳໃຊ້ລະບົບໃຫ້ມີປະສິດທິພາບ ແລະ ນຳໃຊ້ຄວບຄູ່ກັບລະບົບ GFIS.4;
5) ປັບປຸງລະບົບຄຸ້ມຄອງການຂຶ້ນແຜນງົບປະມານ ແລະ ລາຍຮັບ-ລາຍຈ່າຍງົບປະມານລັດ (RBMIS) ເພື່ອຈັດຕັ້ງປະຕິບັດຕາມສາລະບານໃໝ່ທີ່ປະກາດນຳໃຊ້;

#### 4.3.2. ບຸກຄະລາກອນ

1) ຄົ້ນຄວ້າ ແລະ ປັບປຸງກົງຈັກການຈັດຕັ້ງ ຂັ້ນກະຊວງ, ຂັ້ນແຂວງ, ຂັ້ນເມືອງ ແລະ ສະຖານການສຶກສາ ໃຫ້ມີຄວາມສອດຄ່ອງ ແຕ່ຂັ້ນສູນກາງຮອດທ້ອງຖິ່ນຢ່າງມີຄວາມຕ້ອງ ແລະ ເໝາະສົມ ຮັບປະກັນກົງຈັກກະທັດທັດ ໜ້ອຍລົງ ແລະ ວຽກງານບໍ່ຊໍ້າຊ້ອນກັນ;
2) ຄົ້ນຄວ້າ ແລະ ສ້າງ ນະໂຍບາຍ, ກົດໝາຍ ແລະ ນິຕິກຳ ການຄຸ້ມຄອງ, ຊຸກຍູ້ ສົ່ງເສີມ ລັດຖະກອນຄູ ແລະ ບຸກຄະລາກອນ ຂະແໜງການສຶກສາທິການ ແລະ ກິລາ;

3) ສ້າງ, ທົບທວນ ແລະ ປະເມີນ ການສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ຂັ້ນສູນກາງຄຸ້ມຄອງ, ຂັ້ນກະຊວງ, ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນສະຖານການສຶກສາ;
4) ການບັນຈຸ, ສັບຊ້ອນ ແລະ ຈັດສັນ ຄູ ໃນແຕ່ຊັ້ນ, ສາຍ ແລະ ລາຍວິຊາ;
5) ເພີ່ມຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດງົບປະມານຂອງລັດ, ໂຄງການການເງິນກູ້ຢືມ, ຊ່ວຍເຫຼືອລ້າ ແລະ ທຶນອື່ນໆ ຕາມກົດໝາຍ ແລະ ນິຕິກຳ ຕ່າງໆທີ່ໄດ້ກຳນົດໃຫ້ມີຄວາມປະຢັດມັດທະຍັດ, ສາມາດປະເມີນຜົນໄດ້ຮັບ ແລະ ຕົວຊີ້ວັດທີ່ກຳນົດ;
6) ສົ່ງເສີມບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃນການພັດທະນາວຽກງານການສຶກສາກ່ອນໄວຮຽນ;
7) ປະສານສົມທົບຢ່າງມີປະສິດທິພາບໃນການພັດທະນາຫຼັກສູດສ້າງຄູ ແລະ ຫຼັກສູດຝຶກອົບຮົມຄູປະຈຳການໃນທຸກຊັ້ນຮຽນ ເພື່ອໃຫ້ມີຄວາມສອດຄ່ອງກັນ;
8) ການສ້າງຄວາມເຂັ້ມແຂງໃຫ້ຄູໃນການນຳໃຊ້ຫຼັກສູດ ແລະ ສື່ການຮຽນການສອນສຳລັບຄູກ່ອນໄວຮຽນ ແລະ ປະຖົມສຶກສາ; ສ້າງຄວາມເຂັ້ມແຂງໃຫ້ຄູກ່ຽວກັບການນຳໃຊ້ຫຼັກສູດ ແລະ ສື່ການຮຽນການສອນ;
9) ສ້າງຂີດຄວາມສາມາດໃຫ້ແກ່ບຸກຄະລາກອນທາງການສຶກສາ ແລະ ກິລາ ມີຄວາມຮູ້ ແລະ ຄວາມສາມາດໃນການດຳເນີນການຄົ້ນຄວ້າວິໄຈ ແລະ ປະເມີນຜົນຢ່າງມີຄຸນນະພາບ ແລະ ມີປະສິດທິພາບ; ສ້າງຂີດຄວາມສາມາດໃຫ້ພະນັກງານສູນຄົ້ນຄວ້າ ແລະ ປະເມີນຜົນການສຶກສາກ່ຽວກັບການຄົ້ນຄວ້າ-ວິໄຈ;
10) ຍົກລະດັບພະນັກງານວິຊາການມີຄວາມຊ່ຽວຊານດ້ານສື່ມວນຊົນຂອງຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ;
11) ຮັບປະກັນໃຫ້ກົງຈັກການຈັດຕັ້ງແຕ່ສູນກາງລົງຮອດທ້ອງຖິ່ນ ມີຄວາມສອດຄ່ອງກັບພາລະບົດບາດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະຂະແໜງການຍ່ອຍ;
12) ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານຂອງຫ້ອງການຕ້ານສານຕ້ອງຫ້າມໃນກິລາແຫ່ງຊາດລາວ ໃນດ້ານຕ່າງໆ ໂດຍສົມທົບກັບອົງການຕ້ານສານຕ້ອງຫ້າມ ລະດັບພາກພື້ນອາຊີຕາເວັນອອກສ່ຽງໃຕ້ ແລະ ຍາດແຍ່ງການຊ່ວຍເຫຼືອຈາກ ອົງການຕ້ານສານຕ້ອງຫ້າມແຫ່ງຊາດຕ່າງໆ ແລະ ສາກົນ;
13) ປັບປຸງກົງຈັກການຈັດຕັ້ງ ແລະ ການກຳນົດຕຳແໜ່ງງານ, ການບັນຈຸ, ສັບຊ້ອນ ແລະ ຈັດສັນຄູ;
14) ສ້າງ ແລະ ປັບປຸງ ນິຕິກຳກ່ຽວກັບການຄຸ້ມຄອງຄູ, ພັດທະນາຖານຂໍ້ມູນຄຸ້ມຄອງຄູ ແລະ ບຸກຄະລາກອນຂະແໜງການສຶກສາທິການ ແລະ ກິລາ;
15) ສ້າງແຜນກຳນົດພະນັກງານນຳພາຄຸ້ມຄອງ ແລະ ການພັດທະນາຄູ-ບຸກຄະລາກອນ ຂະແໜງການສຶກສາທິການ ແລະ ກິລາ;
16) ລົງຄັດເລືອກຄູດີເດັ່ນຜູ້ໃໝ່ ແລະ ລົງຕິດຕາມການເຮັດວຽກຂອງຄູດີເດັ່ນຂອງ ສປປ ລາວ ທີ່ໄດ້ຮັບລາງວັນເຈົ້າຟ້າມະຫາຈັກກີ ຄັ້ງທີ 5 ປະຈຳປີ 2025 ທີ່ແຂວງ ເຊກອງ ແລະ ວຽກກະກຽມການຄັດເລືອກຄູດີເດັ່ນໃນຄັ້ງຕໍ່ໄປ.

**4.3.3. ການຄຸ້ມຄອງ-ບໍລິຫານລະບົບອື່ນໆ**

1) ສ້າງຄວາມເຂັ້ມແຂງດ້ານການບໍລິຫານ ແລະ ຄົ້ນຄວ້າ-ສັງລວມໃຫ້ແກ່ສະຖາບັນໃຫ້ມີຄຸນນະພາບ ແລະ ມາດຕະຖານທີ່ແນ່ນອນ;
2) ຮັບປະກັນລະບົບຖານຂໍ້ມູນການຈັດພິມ ແລະ ຄຸ້ມຄອງຕົ້ນສະບັບສື່ການຮຽນການສອນ ກ່ອນໄວຮຽນ ແລະ ສາມັນສຶກສາ ທີ່ ສວສ ສ້າງຂຶ້ນ ໃຫ້ມີຄວາມທັນສະໄໝໄດ້ມາດຕະຖານ;
3) ດຳເນີນການຄົ້ນຄ້ວາວິໄຈ ແລະ ປະເມີນຜົນໃນປະເດັນທີ່ກ່ຽວຂ້ອງກັບຍຸດທະສາດ ແລະ ນະໂຍບາຍທາງການສຶກສາ ແລະ ກິລາ;

4) ກະຊວງການຮ່ວມມືກ່ຽວກັບ ສູນ SEAMEO BIOTROP ຝຶກອົບຮົມກ່ຽວກັບການປູກພືດໃຫ້ແກ່ໂຮງຮຽນປະຖົມສົມບູນພາຍໃຕ້ໂຄງການອາຫານທ່ຽງ;
5) ຈັດຕັ້ງກອງປະຊຸມຜູ້ບໍລິຫານສູນຊີເມວຊີອີດີ (GBM) ຄັ້ງທີ 8 ແລະ ກອງປະຊຸມສຳມະນາສາກົນຄັ້ງທີ 7 ກ່ຽວກັບການສຶກສາພົນລະເມືອງໂລກໃນລະຫວ່າງເດືອນ ກັນຍາ 2025;
6) ສືບຕໍ່ຈັດກອງປະຊຸມຝຶກອົບຮົມຄູຝຶກກ່ຽວກັບການສຶກສາພົນລະເມືອງໂລກໃຫ້ຄູຝຶກ ໃນຂະແໜງການສຶກສາ ຢູ່ວິທະຍາໄລຄູ 8 ແຫ່ງ (ວິທະຍາໄລຄູຄັງໄຂ, ວິທະຍາໄລຄູຫຼວງນ້ຳທາ, ວິທະຍາໄລຄູຫຼວງພະບາງ, ວິທະຍາໄລຄູດົງຄຳຊ້າງ, ວິທະຍາໄລຄູບ້ານເກີນ, ວິທະຍາໄລຄູສະຫວັນນະເຂດ, ວິທະຍາໄລຄູປາກເຊ ແລະ ວິທະຍາໄລຄູສາລະວັນ), ມັດທະຍົມສົມບູນ 4 ແຫ່ງ (ມສ ສາທິດ, ມສ ນ້ຳສັງ, ມສ ວຽງຈັນ, ມສ ພອນສະຫວັນແຫ່ງຊາດ) ແລະ 4 ສູນຮຽນຮູ້ຊຸມຊົນ;
7) ກະຊວງເຂົ້າຮ່ວມກອງປະຊຸມ ອົງການສະພາລັດຖະມົນຕີສຶກສາອາຊີຕາເວັນອອກສ່ຽງໃຕ້ ຄັ້ງທີ 53 ແລະ ກອງປະຊຸມສຸດຍອດເຄືອຂ່າຍການຄົ້ນຄວ້ານະໂຍບາຍຂອງສູນ (SEAMEO Centre Policy Research Network) ທີ່ປະເທດ ບູໄນ ດາຣູຊາລາມ;
8) ກະຊວງເຂົ້າຮ່ວມກອງປະຊຸມປະຈຳປີຂອງສູນປະສານງານການສຶກສາພົນລະເມືອງໂລກສົກປີ 2025 ທີ່ ສ. ເກົາຫຼີໃຕ້;
9) ສ້າງເຄືອຂ່າຍການປະສານງານໃນການຄົ້ນຄວ້າວິໄຈ ແລະ ປະເມີນຜົນພາຍໃນປະເທດ ແລະ ພາກພື້ນ;
10) ສົ່ງເສີມການເຜີຍແຜ່ຜົນງານການຄົ້ນຄວ້າວິໄຈ ແລະ ປະເມີນຜົນການສຶກສາ ແລະ ກິລາ ໃຫ້ທົ່ວເຖິງລະຫວ່າງສູນກາງ ແລະ ທ້ອງຖິ່ນ;
11) ຍົກລະດັບວາລະສານວິທະຍາສາດການສຶກສາໃຫ້ໄດ້ມາດຕະຖານສາກົນ;
12) ສືບຕໍ່ປັບປຸງເນື້ອໃນຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ 10 (2026-2030) ຂັ້ນສູນກາງ ແລະ ທ້ອງຖິ່ນ;
13) ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດໂຄງການກອງທຶນການຫັນປ່ຽນລະບົບການສຶກສາ (STG) ແລະ ກອງທຶນສ້າງຂີດຄວາມສາມາດໃຫ້ລະບົບການສຶກສາ (SCG), ທຶນຊ່ວຍເຫຼືອລ້າຂອງກອງທຶນຮ່ວມມືສາກົນເພື່ອການສຶກສາ (GPE);
14) ສ້າງຍຸດທະສາດພັດທະນາຊັບພະຍາກອນມະນຸດແຫ່ງຊາດ ປີ 2026-2035;
15) ປັບປຸງລະບົບຖານຂໍ້ມູນ ODA ແລະ ສ້າງຄູ່ມືການນຳໃຊ້ ພ້ອມສ້າງຄວາມເຂັ້ມແຂງໃຫ້ແກ່ພາກສ່ວນຕ່າງໆໃນການນຳໃຊ້ຖານຂໍ້ມູນດັ່ງກ່າວ;
16) ດຳເນີນເອກະສານໃຫ້ຄະນະຄູຫວຽດນາມທີ່ມາສອນພາສາຫວຽດ ຢູ່ສະຖານການສຶກສາ, ອົງການ ແລະ ກະ ຊວງຕ່າງໆ ຂອງ ສປປ ລາວ ປະຈຳປີ 2025 ແລະ ປີ 2026;
17) ກະຊວງແຜນຕ້ອນຮັບຄະນະຜູ້ແທນຈາກພະແນກສຶກສາແຂວງຈຸງຈອງນາມໂດ ສ. ເກົາຫຼີ ເດີນທາງມາຢ້ຽມ ຢາມ ແລະ ຝຶກອົບຮົມການນຳໃຊ້ ICT ໃຫ້ແກ່ຄູສອນ ໄອຊີທີ ຂອງ ສປປ ລາວ ປະຈຳປີ 2025 ແລະ ປີ 2026;
18) ກະຊວງຈັດກອງປະຊຸມທົບທວນການຮ່ວມມື ລະຫວ່າງ 10 ແຂວງພາກເໜືອ ຂອງ ສປປ ລາວ ກັບ ພະແນກສຶກສາ ແຂວງ ຢຸນໜານ ສປ ຈີນ ປະຈຳປີ 2025 ແລະ ປີ 2026;
19) ກະຊວງຈັດກິດຈະກຳສະເຫຼີມສະຫຼອງວັນສ້າງຕັ້ງສາຍພົວການທູດ ລາວ-ໄທ ຄົບຮອບ 75, ທີ່ ແຂວງ ຄຳມ່ວນ;
20) ເຂົ້າຮ່ວມກອງປະຊຸມເຈົ້າໜ້າທີ່ອາວຸໂສສຶກສາອາຊີຕາເວັນອອກສ່ຽງໃຕ້ ໃນລະຫວ່າງເດືອນ ພະຈິກ 2025 ທີ່ ປະເທດ ໄທ (SEAMEO HOM);

21) ກອງປະຊຸມສະຫຼຸບຜົນການຈັດຕັ້ງປະຕິບັດວຽກງານອາຊຽນ-ຊີແມວ; ວິທະຍາສາດ ແລະ ຂອບການຮ່ວມມືຕ່າງໆ ປະຈຳປີ 2025;
22) ສືບຕໍ່ແຜນວຽກຕິດຕາມການຈັດຕັ້ງປະຕິບັດໂຄງການຂອງ ອສບລ, ສະມາຄົມ ແລະ ມູນນິທິ ທີ່ໃຫ້ການຊ່ວຍເຫຼືອໃນຂະແໜງການສຶກສາ ແລະ ກິລາ ຕາມງົບປະມານຂອງລັດແບ່ງປັນໃຫ້ ແລະ ກົນໄກການຈັດຕັ້ງປະຕິບັດໂຄງການກັບ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ, ສະມາຄົມ, ມູນນິທິ;
23) ສືບຕໍ່ຕິດຕາມ ແລະ ປະກອບຄຳເຫັນຮ່ວມກັບພາກສ່ວນກ່ຽວຂ້ອງ ໃນການນຳສະເໜີເອົາສະຖານທີ່ມໍລະດົກວັດທະນະທຳ ແລະ ທຳມະຊາດ ຂອງ ສປປ ລາວ ເຂົ້າເປັນມໍຣະດົກໂລກທີ່ເປັນຮູບປະທຳ ແລະ ນາມມະທຳ ເຊັ່ນ: ລາບ, ບາສີສູ່ຂວັນ ແລະ ອື່ນໆ;
24) ຄົ້ນຄວ້າເອກະສານໃນຂົງເຂດວຽກວັດທະນະທຳ ເພື່ອລາຍງານ ແລະ ຂໍທິດຊີ້ນຳ ໃນການຈັດຕັ້ງປະຕິບັດຈາກລັດຖະມົນຕີ, ປະທານຄະນະກຳມາທິການແຫ່ງຊາດລາວ ເພື່ອອຸຍແນສໂກ;
25) ສືບຕໍ່ຄຸ້ມຄອງ, ຕິດຕາມ ແລະ ຈັດກິດຈະກຳທີ່ກ່ຽວຂ້ອງເພື່ອຮັບປະກັນການຈັດຕັ້ງປະຕິບັດສົ່ງເສີມເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍທີ 4-Bridge Laos Project ໄລຍະ 2 ໃຫ້ແກ່ຄະນະຮັບຜິດຊອບໂຄງການໃນຂັ້ນສູນກາງ ແລະ ທ້ອງຖິ່ນ;
26) ສືບຕໍ່ການຈັດຕັ້ງປະຕິບັດໂຄງການແລກປ່ຽນຄູລາວ-ເກົາຫຼີ ປະຈຳປີ 2025 ໂດຍຮັບຄູເກົາຫຼີ ຈຳນວນ 4 ທ່ານ ມາສອນແລກປ່ຽນທີ່ໂຮງຮຽນມັດທະຍົມ ແລະ ປະຖົມສຶກສາ ຈຳນວນ 2 ແຫ່ງ ໃນນະຄອນຫຼວງວຽງຈັນ;
27) ສ້າງຄວາມເຂົ້າໃຈກ່ຽວກັບບັນດາຂໍ້ກຳນົດ ແລະ ວິທີການຕ້ອງຫ້າມໃນກິລາໃຫ້ແກ່ຄະນະນຳທີມນັກກິລາແພດກິລາ ,ຄູຝຶກ ,ນັກກິລາທີມຊາດ ປະເພດຕ່າງໆ ທີ່ເຂົ້າຮ່ວມການແຂ່ງຂັນໃນພາກພື້ນ ແລະ ສາກົນ (ຊີເກມ, ເອຊຽນເກມ ແລະ ໂອແລມປິກ) ແລະ ສ້າງແຜນປະເມີນຄວາມສ່ຽງໃນກຸ່ມເປົ້າໝາຍນັກກິລາທີ່ມີຄວາມສ່ຽງໃນການໃຊ້ສານຕ້ອງຫ້າມເພື່ອເກັບຕົວຢ່າງປະຈຳປີ ກ່ອນເຂົ້າຮ່ວມການແຂ່ງຂັນລະດັບຕ່າງໆ;
28) ເຂົ້າຮ່ວມກອງປະຊຸມລະດັບລັດຖະມົນຕີຂັ້ນລັດຖະບານ ດ້ານວຽກງານຕ້ານສານຕ້ອງຫ້າມ ແລະ ກອງປະຊຸມຄະນະບໍລິຫານງານອົງການຕ້ານສານຕ້ອງຫ້າມໃນກິລາ ຂົງເຂດພາກພື້ນອາຊີຕາເວັນອອກສ່ຽງໃຕ້, ການປະຕິບັດພັນທະ ແລະ ເພີ່ມທະວີການຮ່ວມມືກັບອົງການຈັດຕັ້ງສາກົນເຊັ່ນ: UNESCO, WADA, RADO, SERADO ແລະ NADO ກ່ຽວກັບວຽກງານຕ້ານສານຕ້ອງຫ້າມໃນກິລາ;
29) ສົມທົບກັບກົມຈັດຕັ້ງ ແລະ ພະນັກງານ ໃນການປັບປຸງໂຄງຮ່າງການຈັດຕັ້ງຂອງຫ້ອງການຕ້ານສານຕ້ອງຫ້າມໃນກິລາແຫ່ງຊາດລາວ ໃຫ້ຄົບຖ້ວນຕາມຫຼັກການຂອງສາກົນ;
30) ສ້າງບັນດານິຕິກຳລຸ່ມກົດໝາຍກິລາ-ກາຍຍະກຳ ວ່າດ້ວຍຄຸ້ມຄອງ ແລະ ການຄວບຄຸມການໃຊ້ສານຕ້ອງຫ້າມໃນກິລາລາວ;
31) ສ້າງຄວາມເຂັ້ມແຂງໃຫ້ແກ່ຂັ້ນສູນກາງ ແລະ ທ້ອງຖິ່ນໃນການນຳໃຊ້ເຄື່ອງມືໄອຊີທີ ທີ່ທັນສະໄໝເຂົ້າໃນວຽກງານຄຸ້ມຄອງບໍລິຫານການສຶກສາ ແລະ ກິລາ ແລະ ການຮຽນ-ການສອນ;
32) ປັບປຸງໂຄງສ້າງ ແລະ ເນື້ອໃນຫຼັກສູດຊັ້ນປະຖົມສຶກສາ ໂດຍເນັ້ນທັກສະການອ່ານ, ການຂຽນ ແລະ ການຄິດໄລ່ເປັນ ຂອງທຸກຂັ້ນຮຽນ ແລະ ປະສົມປະສານເຂົ້າໃນຫຼັກສູດຂອງທຸກວິຊາຮຽນ;
33) ສ້າງມາດຕະຖານການປະເມີນການຮຽນຮູ້ຂອງນັກຮຽນ ປ.3 ແລະ ປ.5. ໃຫ້ສອດຄ່ອງກັບເປົ້າໝາຍການພັດທະນາແບບຍືນຍົງ;
34) ສົ່ງເສີມການອ່ານຂອງນັກຮຽນ ໂດຍການສະໜອງປຶ້ມອ່ານທີ່ເໝາະສົມກັບອາຍຸ; ຫຼັກສູດ ແລະ ສື່ການຮຽນການສອນສຳລັບຊັ້ນມັດທະຍົມສຶກສາຕອນຕົ້ນໄດ້ຮັບການທົບທວນ ແລະ ປັບປຸງໃຫ້ມີປະສິດທິພາບ , ປະສິດທິຜົນ ສາມາດຕອບສະໜອງໄດ້ຕໍ່ແຜນພັດທະນາເສດຖະກິດ-ສັງຄົມຂອງຊາດໃນໄລຍະໃໝ່;

35) ສົ່ງເສີມການຮຽນການສອນພາສາຕ່າງປະເທດທີສອງເຂົ້າໃນຊັ້ນມັດທະຍົມສຶກສາຕອນຕົ້ນ; ປະເມີນຜົນການຮຽນຂອງນັກຮຽນຊັ້ນມັດທະຍົມສຶກສາຕອນຕົ້ນໃຫ້ສອດຄ່ອງກັບການປັບປຸງຫຼັກສູດ;
36) ທົບທວນ ແລະ ປັບປຸງຫຼັກສູດ ແລະ ສື່ການຮຽນການສອນຊັ້ນມັດທະຍົມສຶກສາຕອນປາຍເນັ້ນການເອົາເນື້ອໃນຄວາມຮູ້ວິທະຍາສາດ, ເຕັກໂນໂລຊີ, ວິສາວະກຳ, ສິລະປະກຳ, ຄະນິດສາດ, ການສື່ສານ ແລະ ການດຳເນີນທຸລະກິດເຂົ້າໃສ່ຫຼັກສູດລວມ;
37) ສົ່ງເສີມການຮຽນການສອນພາສາຕ່າງປະເທດທີສອງເຂົ້າໃນຊັ້ນມັດທະຍົມສຶກສາຕອນປາຍ; ປະເມີນຜົນການຮຽນຂອງນັກຮຽນຊັ້ນມັດທະຍົມສຶກສາຕອນປາຍໃຫ້ສອດຄ່ອງກັບການປັບປຸງຫຼັດສູດ;
38) ສືບຕໍ່ຮ່ວມເຮັດວຽກການອອກແບບກະດານຂໍ້ມູນໃນລະບົບ LESMIS ເພື່ອແຈ້ງບອກເຫດການທີ່ເກີດຂຶ້ນສຸກເສີນທາງດ້ານໄພພິບັດໃນໂຮງຮຽນ.

# ພາກທີ III: ການເງິນຂອງຂະແໜງການສຶກສາ ແລະ ກິລາ

## I. ສະພາບການເງິນຂອງຂະແໜງການສຶກສາ ແລະ ກິລາ

ໃນປີ 2025 ຂະແໜງການສຶກສາ ແລະ ກິລາ ໄດ້ຮັບແຜນງົບປະມານແຫ່ງລັດເບື້ອງຕົ້ນທັງໝົດ ຈຳນວນ 6,025,280.84 ລ້ານກີບ, ເທົ່າກັບ 10.40% ທຽບໃສ່ແຜນລາຍຈ່າຍທັງໝົດຂອງລັດຖະບານ ແລະ ເທົ່າກັບ 1.61% ຂອງລວມຍອດຜະລິດຕະພັນແຫ່ງຊາດ (GDP), ໃນນີ້ງົບປະມານປົກກະຕິ ມີທັງໝົດ 4,682,880.30 ລ້ານກີບ ແລະ ສະເພາະງົບປະມານລົງທຶນທັງໝົດ: 1,342,400.54 ລ້ານກີບ, ໃນນີ້ມີເງິນລົງທຶນພາຍໃນ: 193,989.89 ລ້ານກີບ ແລະ ລົງທຶນຕ່າງປະເທດ: 1,148,430.65 ລ້ານກີບ.

### ຕາຕະລາງທີ 21: ສົມທຽບງົບປະມານແຕ່ລະພາກງົບປະມານ ປີ 2025[4]

(ຫົວໜ່ວຍ: ລ້ານກີບ)

| ລ/ດ | ຊື່ພາກສ່ວນ | ແຜນງົບປະມານ ປະຈຳປີ 2025 | ງົບປະມານປົກກະຕິ | | | | | | | |
|---|---|---|---|---|---|---|---|---|---|---|
| | | | ເງິນເດືອນ ແລະ ເງິນອຸດໜູນຂອງ ພະນັກງານ-ລັດຖະກອນ | ເງິນນະໂຍບາຍ ແລະ ເງິນ ຊ່ວຍໜູນຕ່າງໆ | ລາຍຈ່າຍ ບໍລິຫານ ປົກກະຕິ | ລາຍຈ່າຍ ດັດສົມ,ສົ່ງເສີມ ແລະ ບຳລຸງ | ລາຍ ຈ່າຍອື່ນໆ | ຊົດເຊີຍສົມບັດ ຄົງທີ່ຮັບໃຊ້ ບໍລິຫານ | ລົງທຶນພາຍໃນ | ລົງທຶນຕ່າງປະເທດ |
| | | | 60 | 61 | 62 | 63 | 65 | 66 | 67.1 | 67.2 |
| 1 | 2 | 5 | 6 | 7 | 8 | 9 | 10 | 11 | 12 | 12 |
| | **ລວມທັງໝົດ** | **6,025,280.84** | **3,293,453.00** | **813,845.30** | **350,945.00** | **218,680.00** | **0.00** | **5,957.00** | **193,969.89** | **1,148,430.65** |
| | ສູນກາງຄຸ້ມຄອງ | 2,169,128.85 | 259,215.00 | 238,056.00 | 188,395.00 | 189,120.00 | 0.00 | 2,847.00 | 143,065.20 | 1,148,430.65 |
| 19 | ກະຊວງສຶກສາທິການ ແລະ ກິລາ | 1,954,618.85 | 166,990.00 | 179,231.00 | 154,741.00 | 179,385.00 | 0.00 | 1,276.00 | 124,565.20 | 1,148,430.65 |
| 20 | ມະຫາວິທະຍາໄລແຫ່ງຊາດ | 214,510.00 | 92,225.00 | 58,825.00 | 33,654.00 | 9,735.00 | 0.00 | 1,571.00 | 18,500.00 | 0.00 |
| | **ທ້ອງຖິ່ນຄຸ້ມຄອງ** | **3,856,151.99** | **3,034,238.00** | **575,789.30** | **162,550.00** | **29,560.00** | **0.00** | **3,110.00** | **50,904.69** | **0.00** |
| 1 | ພະແນກສຶກສາທິການ ແລະ ກິລາ ນະຄອນຫລວງວຽງຈັນ | 240,617.60 | 203,850.00 | 22,807.40 | 10,480.00 | 1,570.00 | 0.00 | 260.00 | 1,650.20 | 0.00 |
| 2 | ພະແນກສຶກສາທິການ ແລະ ກິລາ ແຂວງ ຜົ້ງສາລີ | 153,387.41 | 111,727.00 | 33,447.80 | 6,460.00 | 1,190.00 | 0.00 | 180.00 | 382.61 | 0.00 |
| 3 | ພະແນກສຶກສາທິການ ແລະ ກິລາ ແຂວງ ຫລວງນ້ຳທາ | 182,164.91 | 118,493.00 | 39,005.70 | 6,710.00 | 1,440.00 | 0.00 | 180.00 | 16,336.21 | 0.00 |
| 4 | ພະແນກສຶກສາທິການ ແລະ ກິລາ ແຂວງ ອຸດົມໄຊ | 244,311.16 | 172,131.00 | 63,562.80 | 6,660.00 | 1,230.00 | 0.00 | 140.00 | 587.36 | 0.00 |
| 5 | ພະແນກສຶກສາທິການ ແລະ ກິລາ ແຂວງ ບໍ່ແກ້ວ | 118,771.00 | 94,237.00 | 13,263.00 | 4,630.00 | 1,350.00 | 0.00 | 400.00 | 4,891.00 | 0.00 |
| 6 | ຂະແໜງສຶກສາ ແລະ ກິລາ ແຂວງ ຫລວງພະບາງ | **323,099.80** | **232,490.00** | **71,119.80** | **17,000.00** | **2,070.00** | **0.00** | **180.00** | **240.00** | **0.00** |
| | ພະແນກສຶກສາທິການ ແລະ ກິລາ ແຂວງ ຫລວງພະບາງ | 281,717.35 | 212,681.00 | 57,080.86 | 10,259.49 | 1,276.00 | 0.00 | 180.00 | 240.00 | 0.00 |
| | ມະຫາວິທະຍາໄລສຸພານຸວົງ | 41,382.45 | 19,809.00 | 14,038.94 | 6,740.51 | 794.00 | 0.00 | 0.00 | 0.00 | 0.00 |
| 7 | ພະແນກສຶກສາທິການ ແລະ ກິລາ ແຂວງ ຫົວພັນ | 249,167.46 | 214,641.00 | 15,669.00 | 9,030.00 | 1,710.00 | 0.00 | 180.00 | 7,937.46 | 0.00 |
| 8 | ພະແນກສຶກສາທິການ ແລະ ກິລາ ແຂວງ ໄຊຍະບູລີ | 246,271.45 | 202,115.00 | 30,780.00 | 9,490.00 | 1,710.00 | 0.00 | 160.00 | 2,016.45 | 0.00 |
| 9 | ພະແນກສຶກສາທິການ ແລະ ກິລາ ແຂວງ ຊຽງຂວາງ | 203,672.61 | 172,176.00 | 21,810.00 | 7,510.00 | 1,290.00 | 0.00 | 130.00 | 756.61 | 0.00 |
| 10 | ພະແນກສຶກສາທິການ ແລະ ກິລາ ແຂວງ ວຽງຈັນ | 243,106.25 | 211,706.00 | 20,135.40 | 8,530.00 | 1,490.00 | 0.00 | 140.00 | 1,104.85 | 0.00 |
| 11 | ພະແນກສຶກສາທິການ ແລະ ກິລາ ແຂວງ ບໍລິຄຳໄຊ | 156,260.55 | 131,233.00 | 15,153.80 | 7,280.00 | 1,280.00 | 0.00 | 130.00 | 1,183.75 | 0.00 |
| 12 | ພະແນກສຶກສາທິການ ແລະ ກິລາ ແຂວງ ຄຳມ່ວນ | 213,557.51 | 174,987.00 | 24,509.90 | 9,810.00 | 1,810.00 | 0.00 | 160.00 | 2,280.61 | 0.00 |
| 13 | ຂະແໜງສຶກສາ ແລະ ກິລາ ແຂວງ ສະຫວັນນະເຂດ | **432,944.81** | **333,477.00** | **75,679.00** | **17,000.00** | **2,370.00** | **0.00** | **150.00** | **4,268.81** | **0.00** |
| | ພະແນກສຶກສາທິການ ແລະ ກິລາ ແຂວງ ສະຫວັນນະເຂດ | 408,760.15 | 320,357.64 | 68,520.80 | 13,492.90 | 2,120.00 | 0.00 | 0.00 | 4,268.81 | 0.00 |
| | ມະຫາວິທະຍາໄລແຂວງສະຫວັນນະເຂດ | 24,184.66 | 13,119.36 | 7,158.20 | 3,507.10 | 250.00 | 0.00 | 150.00 | 0.00 | 0.00 |
| 14 | ພະແນກສຶກສາທິການ ແລະ ກິລາ ແຂວງ ສາລະວັນ | 191,217.20 | 152,329.00 | 29,318.20 | 6,760.00 | 1,180.00 | 0.00 | 160.00 | 1,470.00 | 0.00 |
| 15 | ພະແນກສຶກສາທິການ ແລະ ກິລາ ແຂວງ ເຊກອງ | 115,670.51 | 85,839.00 | 22,419.50 | 4,790.00 | 1,140.00 | 0.00 | 130.00 | 1,352.01 | 0.00 |
| 16 | ຂະແໜງສຶກສາ ແລະ ກິລາ ແຂວງ ຈຳປາສັກ | **334,231.00** | **274,367.00** | **35,264.00** | **19,690.00** | **3,940.00** | **0.00** | **160.00** | **810.00** | **0.00** |
| | ພະແນກສຶກສາທິການ ແລະ ກິລາ ແຂວງ ຈຳປາສັກ | 292,673.76 | 257,880.75 | 20,744.44 | 10,388.57 | 2,690.00 | 0.00 | 160.00 | 810.00 | 0.00 |
| | ມະຫາວິທະຍາໄລແຂວງຈຳປາສັກ | 41,557.24 | 16,486.25 | 14,519.56 | 9,301.43 | 1,250.00 | 0.00 | 0.00 | 0.00 | 0.00 |
| 17 | ພະແນກສຶກສາທິການ ແລະ ກິລາ ແຂວງ ອັດຕະປື | 126,546.10 | 85,505.00 | 31,192.60 | 6,000.00 | 1,390.00 | 0.00 | 160.00 | 2,298.50 | 0.00 |
| 18 | ພະແນກສຶກສາທິການ ແລະ ກິລາ ແຂວງ ໄຊສົມບູນ | 81,154.66 | 62,935.00 | 10,651.40 | 4,720.00 | 1,400.00 | 0.00 | 110.00 | 1,338.26 | 0.00 |
| | GDP | **374,921,000.00** | | | | | | | | |
| | ງົບປະມານລັດຖະບານທັງໝົດ | **71,850,000.00** | | | | | | | | |
| | - ໜີ້ສິນລັດຖະບານ | 13,900,000.00 | | | | | | | | |
| | - ເງິນແຮ ແລະ ເງິນສະສົມລັດຖະບານ | | | | | | | | | |
| | ງົບປະມານຕົວຈິງຂອງລັດຖະບານ | **57,950,000.00** | | | | | | | | |
| | % ຂອງສຶກສາ ແລະ ກິລາທຽບໃສ່ GDP | 1.61% | | | | | | | | |
| | % ຂອງສຶກສາ ແລະ ກິລາທຽບໃສ່ ງົບປະມານຕົວຈິງຂອງລັດຖະບານ | 10.40% | | | | | | | | |

[4] ແຜນງົບປະມານດັ່ງກ່າວ ອາດຈະມີການດັດແກ້ໃນໄຕມາດ 4 ປີ 2025

## II. ຄວາມຕ້ອງການດ້ານການເງິນສຳລັບປີ 2026

ອີງໃສ່ນະໂຍບາຍ ແລະ ຍຸດທະສາດບຸລິມະສິດ ທີ່ໄດ້ກຳນົດໄວ້ໃນ (ຮ່າງ) ແຜນພັດທະນາຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ 5 ປີ ຄັ້ງທີ X (2026-2030). ໃນປີງົບປະມານ 2026, ທົ່ວຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ ມີຄວາມຕ້ອງການງົບປະມານທັງໝົດ 6,411,366[5] ລ້ານກີບ ເຊິ່ງມີລາຍລະອຽດດັ່ງນີ້:

**ຕາຕະລາງທີ 22: ແຜນຄາດຄະເນງົບປະມານງົບປະມານ ປີ 2026**

(ຫົວໜ່ວຍ: ລ້ານກີບ)

| ປະເພດລາຍຈ່າຍ | ແຜນຄາດຄະເນ 2026 |
|---|---|
| **ງົບປະມານທັງໝົດ** | **6,411,366** |
| ເງິນເດືອນ (ພາກ 60) | 3,320,869 |
| ເງິນອຸດໜູນ (ພາກ 61) | 1,084,524 |
| ເງິນບໍລິຫານ (ພາກ 62) | 373,036 |
| ເງິນດັດສົມ-ສົ່ງເສີມ (ພາກ 63) | 282,401 |
| ຊື້ຊັບສົມບັດຄົງທີ່ຮັບໃຊ້ບໍລິຫານ (ພາກ 66) | 23,790 |
| ງົບປະມານລົງທຶນ (ພາກ 67) | 1,326,747 |

[5] ງົບປະມານດັ່ງກ່າວ ແມ່ນໄດ້ອີງໃສ່ ການຄາດຄະເນງົບປະມານໃນສົມມຸດຖານໄດ້ຮັບງົບປະມານໃນລະດັບເທົ່າເດີມ ທີ່ຄາດຄະເນໄວ້ໃນ (ຮ່າງທີ 3) ແຜນພັດທະນາຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ 5 ປີ ຄັ້ງທີ X ເຊິ່ງເມື່ອແຜນ 5 ປີ ດັ່ງກ່າວໄດ້ຮັບການຮັບຮອງ, ຕົວເລກຄາດຄະເນອາດມີການປ່ຽນແປງໄປຈາກບົດສະຫຼຸບສະບັບນີ້.

## ພາກທີ IV: ກົນໄກການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ປະເມີນຜົນ

### I. ມາດຕະການໃນການຈັດຕັ້ງປະຕິບັດ

1) ໃຫ້ແຕ່ລະພາກສ່ວນ/ແຕ່ລະຂະແໜງການຍ່ອຍນໍາເອົາວຽກງານຈຸດສຸມນີ້ ໄປຜັນຂະຫຍາຍເປັນແຜນປະຕິບັດງານລະອຽດໂດຍກໍານົດກິດຈະກໍາ, ຜົນໄດ້ຮັບ, ໄລຍະຈັດຕັ້ງປະຕິບັດ, ຜູ້ຮັບຜິດຊອບ ແລະ ງົບປະມານຮັບໃຊ້;
2) ໃຫ້ແຕ່ລະກົມ/ຂະແໜງການຍ່ອຍ ຈັດກອງປະຊຸມພາຍໃນທຸກໆ ເດືອນ ແລະ ທຸກໆ ສາມເດືອນ, ຫົກເດືອນ ເພື່ອຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນກິດຈະກໍາຂອງຕົນ;
3) ໃຫ້ບັນດາກົມ/ຂະແໜງການຍ່ອຍເອົາໃຈໃສ່ຊີ້ນໍາພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນ ຫຼວງ ເພື່ອແນະນໍາບັນດາເມືອງ ແລະ ໂຮງຮຽນໃນການຫັນເອົາກິດຈະກໍາໄປຈັດຕັ້ງປະຕິບັດ;
4) ໃຫ້ບັນດາບັນດາກົມ/ຂະແໜງການຍ່ອຍ ເອົາໃຈໃສ່ຈັດຕັ້ງປະຕິບັດມະຕິຂອງກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ປະຈໍາສົກຮຽນ 2024-2025 ດ້ວຍຄວາມຮັບຜິດຊອບສູງ;
5) ໃຫ້ກົມແຜນການ ແລະ ກົມກວດກາ ເອົາໃຈໃສ່ຊຸກຍູ້ ແລະ ຕິດຕາມ ການຈັດຕັ້ງປະຕິບັດມະຕິສະພາແຫ່ງຊາດ ແລະ ຄາດໝາຍສູ້ຊົນຂອງແຕ່ລະແຂວງ ໂດຍອີງໃສ່ມະຕິສະພາປະຊາຊົນຂັ້ນແຂວງ.

### II. ການຕິດຕາມ ແລະ ປະເມີນ

1) ໃຫ້ແຕ່ລະຂະແໜງການຍ່ອຍ, ແຕ່ລະກົມ, ຫ້ອງການ, ສູນ, ສະຖາບັນ ແລະ ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ລາຍງານຜົນການຈັດຕັ້ງປະຕິບັດແຜນພັດທະນາຂອງຕົນ ໃນທຸກໆ 3 ເດືອນ ໃຫ້ແກ່ຫ້ອງການກະຊວງ, ກົມແຜນການ ແລະ ກົມກວດກາ. ພ້ອມດຽວກັນນັ້ນ, ໃຫ້ກົມກວດກາ ສົມທົບກັບເຄືອຄ່າຍຕິດຕາມ ແລະ ປະເມີນຜົນໃນແຕ່ລະຂັ້ນ ເປັນຜູ້ຮັບຜິດຊອບການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນປະຕິບັດງານປະຈໍາປີ, ພ້ອມທັງຕິດຕາມຜົນການຈັດຕັ້ງປະຕິບັດ ມະຕິກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ປະຈໍາສົກຮຽນ 2024-2025 ແລະ ລາຍງານໃຫ້ແກ່ການນໍາກະຊວງສຶກສາທິການ ແລະ ກິລາ ທຸກໆ 6 ເດືອນ;
2) ໃຫ້ກົມແຜນການສັງລວມຜົນການຈັດຕັ້ງປະຕິບັດແຜນຂອງແຕ່ລະພາກສ່ວນ ເພື່ອລາຍງານໃຫ້ແກ່ການນໍາຂອງກະຊວງຮັບຊາບ ພ້ອມທັງລາຍງານໃຫ້ແກ່ກະຊວງແຜນການ ແລະ ການລົງທຶນ ແລະ ສະພາແຫ່ງຊາດຮັບຊາບເປັນແຕ່ລະໄລຍະ;
3) ໃຫ້ກົມແຜນການສົມທົບກັບກົມກວດກາ ກະກຽມສະຫຼຸບ ແລະ ຕີລາຄາຜົນການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ປະຈໍາສົກຮຽນ 2025-2026 ເພື່ອລາຍງານຢູ່ກອງປະຊຸມຜູ້ບໍລິຫານການສຶກສາປະຈໍາປີ.

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ ເລກທີ 1597 /ສສກ

ນະຄອນຫຼວງວຽງຈັນ, ວັນທີ 21 ສິງຫາ 2025

# ມະຕິກອງປະຊຸມຜູ້ບໍລິຫານການສຶກສາ, ວິທະຍາສາດ ແລະ ກິລາ ປະຈຳສົກຮຽນ 2024-2025 ວັນທີ 11-12 ສິງຫາ 2025

ກອງປະຊຸມຜູ້ບໍລິຫານການສຶກສາ ວິທະຍາສາດ ແລະ ກິລາ ປະຈຳສົກຮຽນ 2024-2025 ຂຶ້ນໃນລະຫວ່າງ ວັນທີ 11-12 ສິງຫາ 2025 ພາຍໃຕ້ການເປັນປະທານຂອງ ທ່ານ ຮສ. ປອ. ທອງສະລິດ ມັງໜໍ່ເມກ ເລຂາທິການສູນກາງພັກ, ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ໂດຍມີຜູ້ຕາງໜ້າຈາກສະພາແຫ່ງຊາດ, ສະພານະຄອນຫຼວງວຽງຈັນ, ບັນດາທ່ານ ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ, ຜູ້ຕາງໜ້າຈາກຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ບັນດາກະຊວງອ້ອມຂ້າງ; ຜູ້ບໍລິຫານການສຶກສາ, ວິທະຍາສາດ ແລະ ກິລາ ຂັ້ນສູນກາງ ແລະ ທ້ອງຖິ່ນໃນຂອບເຂດທົ່ວປະເທດ ເຂົ້າຮ່ວມແບບເຊິ່ງໜ້າ ແລະ ຜ່ານລະບົບທາງໄກ. ກອງປະຊຸມໄດ້ຄົ້ນຄວ້າປຶກສາຫາລື ເນື້ອໃນຕ່າງໆ ດັ່ງນີ້:

1. ລາຍງານຜົນສຳເລັດການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ ປະຈຳສົກຮຽນ 2024-2025 ແລະ ທິດທາງແຜນສົກຮຽນ 2025-2026;
2. ທິດທາງ ແລະ ມາດຕະການແກ້ໄຂການປະລະການຮຽນຊັ້ນປະຖົມ ແລະ ມັດທະຍົມສຶກສາ;
3. ທິດທາງ ແລະ ມາດຕະການປັບປຸງຄຸນນະພາບໃນຊັ້ນປະຖົມສຶກສາ;
4. ວິທີການຄຸ້ມຄອງ ແລະ ການຈັດການຮຽນການສອນຂອງໂຮງຮຽນປາດຖະໜາ;
5. ທິດທາງການກະຈາຍອຳນາດໃນການຝຶກອົບຮົມຄູສອນ;
6. ວຽກງານບູລິມະສິດຂົງເຂດວິທະຍາສາດ
7. ວຽກງານບູລິມະສິດຂົງເຂດວິທະຍາສາດກິລາ-ກາຍຍະກຳ

ຜ່ານການຄົ້ນຄວ້າປະກອບຄຳເຫັນ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ຂອງຜູ້ບໍລິຫານການສຶກສາ, ວິທະຍາສາດ ແລະ ກິລາ ແລະ ການປະກອບຄຳເຫັນຂອງ ຜູ້ຕາງໜ້າຈາກສະພາແຫ່ງຊາດ ແລະ ສະພາປະຊາຊົນນະຄອນຫຼວງ, ກອງປະຊຸມ ໄດ້ມີຄວາມເປັນເອກະພາບ ແລະ ຕົກລົງ ເອົາເປັນມະຕິກອງປະຊຸມດັ່ງນີ້:

## I. ຂົງເຂດວຽກງານສຶກສາ

**1. ຜົນການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ, ວິທະຍາສາດ ແລະ ກິລາ ປະຈຳສົກຮຽນ 2024-2025 ດັ່ງນີ້:**

ສົກຮຽນ 2024-2025 ເປັນອີກສົກປີໜຶ່ງ ທີ່ສະພາບແວດລ້ອມທັງພາຍໃນ ແລະຕ່າງປະເທດ ມີການຜັນແປໄປຢ່າງໄວວາ ແລະສະຫຼັບຊັບຊ້ອນ ໂດຍສະເພາະແມ່ນພາຍໃນຂະແໜງສຶກສາທິການ ແມ່ນໄດ້ປະເຊີນໜ້າກັບສະພາບການເຂົ້າຮຽນທີ່ຫຼຸດລົງ, ການປະລະເພີ່ມຂຶ້ນ, ບັນຫາການຂາດແຄນຄູ, ລວມທັງງົບປະມານທີ່ໄດ້ຮັບມີຈໍາກັດ. ແຕ່ດ້ວຍຄວາມອົດທົນ, ບຸກບືນສູ້ຊົນພະຍາຍາມ ຂອງຜູ້ບໍລິຫານການສຶກສາ, ວິທະຍາສາດ ແລະ ກິລາ ໃນແຕ່ລະຂັ້ນ ລວມທັງບັນດາບຸກຄະລາກອນທາງການສຶກສາ ໃນການຈັດຕັ້ງປະຕິບັດໜ້າທີ່ ແລະ ພາລະບົດບາດຂອງຕົນດ້ວຍຄວາມຮັບຜິດຊອບສູງ ຈິ່ງເຮັດໃຫ້ບັນຫາຕ່າງໆໄດ້ຮັບການແກ້ໄຂເທື່ອລະກ້າວ ແລະມີທ່າອ່ຽງດີຂຶ້ນເປັນແຕ່ລະລໍາດັບ. ຜ່ານການລາຍງານ ກອງປະຊຸມເຫັນດີຮັບຮອງເອົາບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາຂະແໜງ ການສຶກສາ, ວິທະຍາສາດ ແລະ ກິລາ, ຜົນສໍາເລັດ ແລະ ຄາດໝາຍສູ້ຊົນ ປະຈໍາສົກຮຽນ 2024-2025[6]. ພ້ອມນັ້ນ ກອງປະຊຸມມອບໃຫ້ ຜູ້ບໍລິຫານການສຶກສາໃນແຕ່ລະຂັ້ນ ໂດຍສະເພາະພາກສ່ວນທີ່ກ່ຽວຂ້ອງ ສືບຕໍ່ສຸມໃສ່ຈັດຕັ້ງປະຕິບັດຄາດໝາຍທີ່ບໍ່ທັນສາມາດບັນລຸໄດ້ ຊຶ່ງເປັນຕົວຊີ້ບອກທີ່ຕິດພັນກັບການເຂົ້າຮຽນ ແລະ ການປະລະການຮຽນໃນການສຶກສາຂັ້ນພື້ນຖານ.

ກອງປະຊຸມເຫັນດີເປັນເອກະພາບຕໍ່ບັນດາເນື້ອໃນທີ່ໄດ້ກໍານົດໄວ້ຢູ່ໃນ ທິດທາງລວມ, ຄາດໝາຍ ແລະ ວຽກງານຈຸດສຸມ ຂອງແຜນພັດທະນາຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ ປະຈໍາສົກຮຽນ 2025-2026, ພ້ອມທັງຮັບຮອງເອົາ ບັນດາຄາດໝາຍສູ້ຊົນປະຈໍາສົກຮຽນ 2025-2026 ດັ່ງນີ້:

1) ອັດຕາການເຂົ້າຮຽນຂອງເດັກ 5 ປີໃນຊັ້ນການສຶກສາກ່ອນໄວຮຽນໃຫ້ບັນລຸໄດ້ 85.8%;
2) ອັດຕາເຂົ້າໃໝ່ສຸດທິຂັ້ນ ປ.1 ໃນຊັ້ນປະຖົມສຶກສາ ໃຫ້ບັນລຸໄດ້ 99.4%;
3) ອັດຕາປະລະຂອງນັກຮຽນຊັ້ນປະຖົມສຶກສາ ບໍ່ໃຫ້ເກີນ 4%;
4) ອັດຕາເລື່ອນຊັ້ນຂອງນັກຮຽນຈົບ ປ 5 ຂຶ້ນ ມ 1 ໃຫ້ບັນລຸໄດ້ 89.5%;
5) ອັດຕາເຂົ້າຮຽນລວມ ຊັ້ນມັດທະຍົມຕອນຕົ້ນ ໃຫ້ບັນລຸໄດ້ 72.9%;
6) ອັດຕາປະລະຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນ ບໍ່ໃຫ້ເກີນ 11.7%;
7) ຄູປະຈໍາການ ແລະ ຜູ້ເຮັດວຽກສຶກສານິເທດ ທຸກຂັ້ນ ໄດ້ຮັບການພັດທະນາວິຊາຊີບແບບຕໍ່ເນື່ອງ ສະເລ່ຍ 20% ຕໍ່ປີ;
8) ປະຊາກອນໜຸ່ມ ແລະ ຜູ້ປະລະການຮຽນ ໃຫ້ໄດ້ບໍາລຸງຜ່ານການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບ (ກສນ) ບໍ່ໃຫ້ຫຼຸດ 30,000 ຄົນ ໃນແຕ່ລະປີ;
9) ຈໍານວນນັກສຶກສາທີ່ຈົບອາຊີວະສຶກສາ ແລະ ອົບຮົມວິຊາຊີບ ຕາມຫຼັກສູດທາງການ ໃນແຕ່ລະປີ ບໍ່ໃຫ້ຫຼຸດ 10,000 ຄົນ (ທັງໝົດ 50,000 ຄົນ ພາຍໃນປີ 2030);
10) ຫຼັກສູດການຮຽນ-ການສອນ ທີ່ເປັນຫຼັກສູດສາກົນ ໃນຊັ້ນການສຶກສາຊັ້ນສູງ ເພື່ອເຊື່ອມໂຍງກັບພາກພື້ນ ແລະ ສາກົນ ໃຫ້ມີ 10 ຫຼັກສູດ;
11) ຈໍານວນຫົວຂໍ້ຄົ້ນຄວ້າວິທະຍາສາດທີ່ນໍາໃຊ້ເງິນກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ຕາມ 24 ຂົງເຂດບູລິມະສິດເພື່ອຮັບໃຊ້ ແຜນພັດທະນາເສດຖະກິດ-ສັງຄົມ 2026-2030 ໃຫ້ໄດ້ຢ່າງໜ້ອຍ 45 ຫົວຂໍ້ ໃນແຕ່ລະປີ;
12) ຈໍານວນກໍາມະການຕັດສິນໃນລະດັບອາຊຽນ, ອາຊີ ແລະ ລະດັບສາກົນ ແຕ່ລະປີໃຫ້ບັນລຸໄດ້ 6 ຄົນ.

**2. ທິດທາງ ແລະ ມາດຕະການໃນການແກ້ໄຂບັນຫາການປະລະການຮຽນຊັ້ນປະຖົມ ແລະ ມັດທະຍົມ:**

[6] ເອກະສານຊ້ອນທ້າຍ

1) ມອບໃຫ້ ບັນດາພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ຊີ້ນໍາຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ແລະ ບັນດາໂຮງຮຽນ ກະກຽມຄວາມພ້ອມທາງດ້ານຕ່າງໆ ຢ່າງເປັນຂະບວນການ ກ່ອນເປີດສົກຮຽນ ເປັນຕົ້ນແມ່ນ ການອະນາໄມອາຄານສະຖານທີ່, ຫ້ອງຮຽນ ແລະ ເດີ່ນໂຮງຮຽນ, ກະກຽມຄູສອນ, ອຸປະກອນຮັບໃຊ້ການຮຽນການສອນ ແລະ ການລົງທະບຽນຮຽນຂອງນັກຮຽນ ;
2) ໃນໄລຍະກ່ອນເປີດສົກຮຽນໃໝ່, ມອບໃຫ້ຜູ້ອໍານວຍການໂຮງຮຽນ ສົມທົບກັບອົງການປົກຄອງຂັ້ນບ້ານ/ນາຍບ້ານ ເພື່ອໃຫ້ໂຄສະນາ ແລະ ປຸກລະດົມໃຫ້ນັກຮຽນເຂົ້າຮຽນ ໂດຍຜ່ານໂທລະໂຄ່ງຂອງບ້ານ ຫຼື ໂຄສະນາໂດຍຜ່ານຮູບການອື່ນໆ ຕາມຄວາມ ເໝາະສົມ;
3) ໃຫ້ບັນດາພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ປະສານສົມທົບກັບອົງການປົກຄອງຂັ້ນແຂວງ ແລະ ຂັ້ນເມືອງ ເພື່ອອອກຂໍ້ແນະນໍາ ຫຼື ຄໍາສັ່ງໃຫ້ພໍ່ແມ່ຜູ້ປົກຄອງນັກຮຽນ ໃນການສົ່ງເສີມໃຫ້ລູກໄດ້ເຂົ້າຮຽນຕາມເກນອາຍຸ;
4) ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ເກັບກໍາຂໍ້ມູນໂຮງຮຽນທີ່ມີຈໍານວນນັກຮຽນໜ້ອຍ ແລະ ຈໍານວນໂຮງຮຽນທີ່ຂາດເຂີນຄູ ເພື່ອສ້າງແຜນທີ່ການສຶກສາຄືນໃໝ່ ເພື່ອເປັນແນວທາງໃນການໂຮມໂຮງຮຽນຈໍານວນໜຶ່ງ ທີ່ເຫັນວ່າບໍ່ມີປະສິດທິພາບ (ບໍ່ມີນັກຮຽນ ຫຼື ນັກຮຽນໜ້ອຍ) ດັ່ງກ່າວເຂົ້າກັບໂຮງຮຽນທີ່ໃກ້ຄຽງແນໃສ່ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການບໍລິຫານ ແລະ ຄຸ້ມຄອງການຮຽນການສອນ ຕາມທິດການສ້າງຕັ້ງຕາແສງຄືນໃໝ່, ສະນັ້ນ ການວາງແຜນ ແຜນທີ່ການສຶກສາ ຕ້ອງຄໍານຶງເຖິງລະບົບການປົກຄອງຂອງລັດຖະບານໃນການຍຸບໂຮມໂຮງຮຽນ ແລະ ສຸມໃສ່ພັດທະນາໂຮງຮຽງລະດັບຂັ້ນຕາແສງ ໃຫ້ກາຍເປັນສູນຮຽນຮູ້ ທີ່ເປັນລະບົບ ແລະ ຄົບຊຸດ;
5) ເອົາໃຈໃສ່ແກ້ໄຂບັນຫາການປະລະການຮຽນຂອງນັກຮຽນ ດ້ວຍການສ້າງໂຄງການນໍານ້ອງກັບຄືນສູ່ໂຮງຮຽນ, ໃຫ້ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ເກັບກໍາລາຍລະອຽດຂອງນັກຮຽນທີ່ປະລະການຮຽນ ເພື່ອນໍາກັບຄືນສູ່ໂຮງຮຽນ, ໃຫ້ການຊ່ວຍເຫຼືອດ້ານການຮຽນ ຫຼື ສົ່ງຕໍ່ໃຫ້ ການສຶກສານອກໂຮງຮຽນ ເພື່ອສະໜອງການບໍາລຸງ ແລະ ຍົກລະດັບໃຫ້ພວກກ່ຽວ ດ້ວຍຫຼາຍຊ່ອງທາງ (ຮຽນເປັນໂມດູນ, ຮຽນດ້ວຍຕົນເອງ, ຮຽນແບບທາງໄກ, ແບບເຊິ່ງໜ້າເຕັມເວລາ ແລະ ບໍ່ເຕັມເວລາ ລວມທັງການນໍາໃຊ້ດີຈິຕອນເຂົ້າໃນການຈັດການຮຽນການສອນໃຫ້ຫຼາກຫຼາຍ) ;

**3. ທິດທາງໃນການປັບປຸງຄຸນນະພາບການສຶກສາຊັ້ນປະຖົມສຶກສາ:**

1) ກົມສາມັນສຶກສາ ອອກຂໍ້ແນະນໍາກ່ຽວກັບການປັບປຸງຄຸນນະພາບການສິດສອນ ໃນຊັ້ນປະຖົມຂັ້ນຕົ້ນ ໂດຍເນັ້ນໃສ່ການສອນທັກສະການເວົ້າ, ການອ່ານ, ການຂຽນພາສາລາວ, ທັກສະການຄິດໄລ່ເລກຂັ້ນພື້ນຖານ ແລະ ການຮູ້ຄົ້ນຄິດ-ການຮູ້ຕັ້ງຄໍາຖາມ; ຫັນເອົາການສິດສອນວິຊາອື່ນໆ ເປັນກິດຈະກໍານອກຫ້ອງຮຽນ ແລະ ການຮຽນຮູ້ຜ່ານການປະຕິບັດຕົວຈິງ;
2) ກົມປະກັນຄຸນນະພາບການສຶກສາ ຂະຫຍາຍການຈັດຕັ້ງປະຕິບັດ ມາດຕະຖານຄຸນນະພາບຂັ້ນພື້ນຖານ (ມຄພ) ສໍາລັບ ຊັ້ນປະຖົມສຶກສາ ໃຫ້ເປັນເຄື່ອງມືໃນການປະເມີນການຮຽນຂອງນັກຮຽນປະຈໍາປີ;

**4. ທິດທາງການກະຈາຍອໍານາດໃນການຝຶກອົບຮົມຄູສອນ:**

1) ກົມສ້າງຄູ ຫັນປ່ຽນຈາກການຝຶກອົບຮົມຄູ ແບບເຊິ່ງໜ້າເປັນກຸ່ມໃຫຍ່ ມາເປັນການໃຫ້ ການຝຶກອົບຮົມສະເພາະໃນເມືອງໃຜລາວ, ເນັ້ນໃສ່ການໜັບສະໜູນຄູ ຢູ່ຂັ້ນກຸ່ມໂຮງຮຽນ/ໂຮງຮຽນ ຈາກ ຄູຝຶກ, ນິເທດພາຍນອກ ແລະ ພາຍໃນ ໂດຍຈັດເປັນຮອບວຽນໃນການໃຫ້ການຊ່ວຍເຫຼືອຄູ ຜ່ານການລົງສັງເກດການສອນ, ຖອດຖອນບົດຮຽນ, ການຊ່ວຍເຫຼືອທາງໄກ, ການຮຽນຮູ້ດ້ວຍຕົນເອງ ຈາກອໍານວຍການ, ຄູສອນດ້ວຍກັນ ຫຼື ຮຽນຮູ້ຜ່ານ ຊ່ອງທາງອອນລາຍຕ່າງໆ;

2) ກົມສ້າງຄູ ກຳນົດແນວທາງ, ກົນໄກ, ຮູບແບບ ແລະ ວິທີການຈັດຕັ້ງປະຕິບັດການພັດທະນາວິຊາຊີບຄູແບບຕໍ່ເນື່ອງໃຫ້ເປັນລະບົບ ລວມທັງ ພັດທະນາລະບົບເກັບກຳຂໍ້ມູນການພັດທະນາວິຊາຊີບບຸກຄະລາກອນສຶກສາ. ທົບທວນຄືນກ່ຽວກັບລະບົບການຮຽນການສອນໃນວິທະຍາໄລຄູ ເຊັ່ນ ຫຼັກສູດ, ການສິດສອນ, ຈຳນວນວິທະຍາໄລຄູ, ເພື່ອວາງແຜນດຳເນີນການໃຫ້ມີຄວາມຍືນຍົງ;

**5. ການສົ່ງເສີມການສຶກສາພາກເອກະຊົນ:**

ມອບໃຫ້ຫ້ອງການກະຊວງ ແລະ ກົມສາມັນສຶກສາ ສົມທົບກັບ ສະມາຄົມການສຶກສາພາກເອກະຊົນ ຄົ້ນຄວ້ານິຕິກຳ ໂດຍກຳນົດຈະແຈ້ງບົດບາດ ໜ້າທີ່ ແລະ ຄວາມຮັບຜິດຊອບພາກສ່ວນທີ່ຄຸ້ມຄອງ, ອະນຸມັດ, ຕິດຕາມຄຸ້ມຄອງໂຮງຮຽນເອກະຊົນ, ດັ່ງນັ້ນ ຕ້ອງກຳນົດໃຫ້ຈະແຈ້ງກ່ຽວກັບພາກສ່ວນທີ່ຈະຄຸ້ມຄອງ ແລະ ອະນຸມັດໃຫ້ເປີດໂຮງຮຽນເອກະຊົນ, ລວມທັງຕິດຕາມ ແລະ ໃຫ້ການສະໜັບສະໜູນໃນການຈັດການຮຽນການສອນ, ເພື່ອຮັບປະກັນດ້ານຄຸນນະພາບຂອງການຮຽນການສອນ. ພ້ອມກັນນັ້ນ ກໍໃຫ້ມີກົນໄກໃນການປະສານສົມທົບກັນລະຫວ່າງໂຮງຮຽນພາກລັດ ແລະ ພາກເອກະຊົນ.

## II. ຂົງເຂດການສົ່ງເສີມ ແລະ ຄົ້ນຄວ້າວິທະຍາສາດ ແລະ ນະວັດຕະກຳ:

1. ປະກາດໃຊ້ ຍຸດທະສາດ ແລະ ແຜນພັດທະນາວິທະຍາສາດ ເຕັກໂນໂລຊີ ແລະ ນະວັດຕະກຳ ແຫ່ງຊາດ 2026-2040 ແລະ ສ້າງແຜນຍົກລະດັບທາງດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ຂະແໜງການຍ່ອຍວິທະຍາສາດ ຮອດ ປີ 2030;
2. ສ້າງ ແລະ ປັບປຸງນິຕິກຳຕ່າງໆ ການໂຄສະນາເຜີຍແຜ່, ສ້າງຄວາມຮັບຮູ້ເຂົ້າໃຈ ແລະ ສະໜັບສະໜູນນັກຄົ້ນຄວ້າ ທັງຢູ່ສູນກາງ ແລະ ທ້ອງຖິ່ນ ໃຫ້ສາມາດປະກອບສ່ວນເຂົ້າໃນວຽກງານຄົ້ນຄວ້າວິທະຍາສາດ, ພັດທະນາຜະລິດຕະພັນຂອງຄົນລາວໃຫ້ນັບມື້ນັບຫຼາຍຂຶ້ນ, ພ້ອມທັງມີການຄຸ້ມຄອງຄັງແຫ່ງສະຕິປັນຍາຂອງປະເທດຊາດ ແລະ ເພີ່ມຈຳນວນການຕີພິມການຄົ້ນຄວ້າວິທະຍາສາດໃນວາລະສານຕ່າງປະເທດ;
3. ສ້າງ ແລະ ພັດທະນາລະບົບຖານຂໍ້ມູນການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ໃຫ້ເປັນລະບົບຄົບຊຸດ ພ້ອມທັງ ໃຫ້ສາມາດເຊື່ອມໂຍງເຂົ້າໃນລະບົບ LESMIS ຂອງກະຊວງ; ສົມທົບກັບບັນດາກະຊວງ ແລະພາກສ່ວນຕ່າງໆ ເກັບກຳສະພາບ, ວິເຄາະ, ວິໄຈສະພາບ ແລະວາງທິດທາງພັດທະນາ ການຄົ້ນຄວ້າວິທະຍາສາດທຳມະຊາດ ແລະສັງຄົມ ໃນແຕ່ລະໄລຍະ ເພື່ອລາຍງານຂໍທິດຈາກລັດຖະບານ.
4. ປັບປຸງກົນໄກກອງທຶນການຄົ້ນຄ້ວາວິທະຍາສາດ ລວມເຖິງການພິຈາລະນາຫົວຂໍ້ ແລະ ການຕິດຕາມກວດກາການຄົ້ນຄວ້າວິທະຍາສາດ; ທົບທວນ ແລະ ປັບປຸງ ການຈັດສັນງົບປະມານຕາມກິດຈະກຳ ການຄົ້ນຄ້ວາ, ພ້ອມທັງ ສ້າງຄູມືແນະນຳວິທີສະໝັກ ແລະ ເຮັດບົດສະຫຼຸບການເງິນໃນການຂໍອະນຸມັດທຶນ ແນ່ໃສ່ໃຫ້ຂັ້ນຕອນມີຄວາມສະດວກ ແລະ ວ່ອງໄວຂຶ້ນຕື່ມ;
5. ຮ່ວມກັບພາກສ່ວນກ່ຽວຂ້ອງ ເປີດກອງປະຊຸມນັກຄົ້ນຄ້ວາວິທະຍາສາດ ຮ່ວມກັບຜູ້ປະກອບການ ເພື່ອຄົ້ນຄ້ວາບັນດາຄວາມສາມາດບົ່ມຊ້ອນ ແລະ ປຶກສາຫາລືກ່ຽວກັບການປະກອບສ່ວນຂອງແຕ່ລະພາກສ່ວນ ຕໍ່ການພັດທະນາປະເທດຊາດໃນໄລຍະໃໝ່; ຊຸກຍູ້ການຮ່ວມມືແລກປ່ຽນບົດຮຽນໃນການຄົ້ນຄວ້າວິທະຍາສາດຢູ່ພາຍໃນ ແລະ ຕ່າງປະເທດ ແລະ ພົບປະການນຳຂັ້ນສູງ;
6. ສືບຕໍ່ປັບປຸງຂອບແຜນງານແຫ່ງຊາດ ເພື່ອການຮ່ວມມື ດ້ານເຕັກນິກ-ວິຊາການ ກັບອົງການພະລັງງານປະລຳມະນູສາກົນ (CPF) 2026-2030.
7. ມອບໃຫ້ພາກສ່ວນກ່ຽວຂ້ອງ ຮີບຮ້ອນກະກຽມຄວາມພ້ອມຢ່າງຮອບດ້ານ ໃນການເປັນເຈົ້າພາບຈັດກອງປະຊຸມວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳອາຊຽນ ຄັ້ງທີ 22 (AMMSTI-22) ທີ່ຈະຈັດຂຶ້ນ

ໃນເດືອນມິຖຸນາ 2026, ສະນັ້ນ, ຈຶ່ງສະເໜີໃຫ້ກະກຽມຄວາມພ້ອມດ້ານຕ່າງໆ ເປັນຕົ້ນດ້ານເນື້ອໃນ, ສະຖານທີ່ ແລະ ດ້ານງົບປະມານ;

8. ສົ່ງເສີມການຍ້ອງຍໍຊົມເຊີຍນັກຄົ້ນຄວ້າ ແລະ ນັກວິທະຍາສາດທີ່ດີເດັ່ນ ທີ່ໄດ້ປະກອບສ່ວນໃຫ້ແກ່ການພັດທະນາປະເທດຊາດ.

## III. ຂົງເຂດວຽກງານກິລາ-ກາຍຍະກໍາ:

1. ສຸມໃສ່ເສີມຂະຫຍາຍການສົ່ງເສີມວຽກງານກິລາມວນຊົນ, ພະລະ ແລະ ສິລະປະສຶກສາຢ່າງກວ້າງຂວາງແຕ່ຂັ້ນສູນກາງຮອດທ້ອງຖິ່ນ ຄຽງຄູ່ກັບການຈັດການຮຽນການສອນວິຊາພະລະສຶກສາ, ສິລະປະສຶກສາ, ສຶກສາປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຂະບວນການສະກັດກັ້ນ, ຕ້ານສິ່ງເສບຕິດໃນຂະແໜງການສຶກສາທິການ ແລະ ກິລາ;
2. ຄົ້ນຄວ້າປັບປຸງຫຼັກສູດການສ້າງຄູ ແລະ ນັກວິຊາການ ດ້ານພະລະສຶກສາ ແລະ ສິລະປະສຶກສາ ໃຫ້ມີຫຼາຍລະບົບ, ໂຄສະນາ ແນະແນວໃຫ້ນັກຮຽນສາມັນທັນມາສົນໃຈເຂົ້າຮຽນ ແລະ ສ້າງຫຼັກສູດຝຶກອົບຮົມໄລຍະສັ້ນໃຫ້ຄູປະຈໍາການ ແລະ ວິຊາການ ທີ່ກ່ຽວຂ້ອງ;
3. ຄົ້ນຄວ້າຄືນການປະຕິບັດພາລະບົດບາດໃນການສ້າງຄູພະລະສຶກສາ ແລະ ກິລາ ຂອງວິທະຍາໄລພະລະສຶກສາຄະນະວິທະຍາສາດການກິລາ ແລະ ສະຖາບັນກິລາ-ກາຍຍະກໍາສີເກີດ ເພື່ອບໍ່ໃຫ້ເກີດຄວາມຊໍ້າຊ້ອນ;
4. ສ້າງຕັ້ງໜ່ວຍງານການຄຸ້ມຄອງສະໜາມກິລາລະດັບຊາດ ແລະ ປະກອບບຸກຄະລາກອນຮັບຜິດຊອບສະເພາະໃຫ້ສໍາເລັດ; ພ້ອມທັງ ສ້າງກົນໄກ, ວິທີການ, ມາດຕະການໃນການຄຸ້ມຄອງສະຖານທີ່ເດີ່ນກິລາຂອງລັດ ໃຫ້ເກີດປະໂຫຍດສູງສຸດ;
5. ນໍາໃຊ້ວິທະຍາສາດການກິລາ ເຂົ້າໃນການພັດທະນານັກກິລາ ຢ່າງເປັນລະບົບ ພ້ອມທັງສະໜອງເຄື່ອງມືແລະ ອຸປະກອນທີ່ທັນສະໄໝເຂົ້າໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ;
6. ສະໜັບສະໜູນ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາສະຫະພັນກິລາແຫ່ງຊາດໃນການຈັດການແຂ່ງຂັນແລະ ການບໍລິຫານພາຍໃນສະຫະພັນກິລາແຫ່ງຊາດໃຫ້ເຂັ້ມແຂງຂຶ້ນ;
7. ສ້າງຂໍ້ຕົກລົງວ່າດ້ວຍການນໍາໃຊ້ ດໍາລັດວ່າດ້ວຍກອງທຶນກິລາ-ກາຍຍະກໍາ;
8. ປັບປຸງຂອດປະສານງານການຮ່ວມມືລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມກົມກຽວ ແລະຖືກຕ້ອງຕາມພາລະບົດບາດ ສິດ ແລະ ໜ້າທີ່ຂອງແຕ່ລະພາກສ່ວນ ພ້ອມທັງ ເພີ່ມທະວີການຮ່ວມມື, ຍາດແຍ່ງການຊ່ວຍເຫລືອ ແລະ ແລກປ່ຽນບົດຮຽນກັບບັນດາປະເທດເພື່ອນມິດ ແລະ ສາກົນ ໃຫ້ຫຼາຍຂຶ້ນ.
9. ມອບໃຫ້ພາກສ່ວນກ່ຽວຂ້ອງ ປະສານສົມທົບກັບ ນະຄອນຫຼວງວຽງຈັນ ຮັບຮ້ອນກະກຽມງານມະຫະກໍາກິລາແຫ່ງຊາດ ຄັ້ງທີ XII ແລະ ກິລາຄົນພິການແຫ່ງຊາດ ຄັ້ງທີ IV ທີ່ນະຄອນຫຼວງວຽງຈັນຈະເປັນເຈົ້າພາບ ໃນເດືອນ ພະຈິກ 2025 ໃຫ້ສໍາເລັດຜົນຕາມຈຸດປະສົງ ແລະ ຄາດໝາຍທີ່ວາງໄວ້;
10. ເອົາໃຈໃສ່ກະກຽມຄວາມພ້ອມເຂົ້າຮ່ວມແຂ່ງຂັນກິລາອາຊຽນ ຢູ່ປະເທດໄທໃນທ້າຍປີ 2025 ໃນດ້ານຕ່າງໆ ລວມເຖິງການສ້າງແຜນ ແລະ ການປຶກສາຫາລືຮ່ວມມືກັບທຸກພາກສ່ວນກ່ຽວຂ້ອງ;
11. ທົບທວນຄືນກົນໄກ ການຍ້ອງຍໍຊົມເຊີຍນັກກິລາ, ທີມກິລາ ທີ່ໂດດເດັ່ນ ແລະ ທີ່ໄດ້ສ້າງຊື່ສຽງໃຫ້ແກ່ປະເທດຊາດ.

## IV. ວຽກງານປິ່ນອ້ອມອື່ນໆ:

1. ເອົາໃຈໃສ່ກະກຽມກອງປະຊຸມໃຫຍ່ອົງຄະນະພັກກະຊວງສຶກສາທິການ ແລະກິລາ ສະໄໝທີ X ໃຫ້ກາຍເປັນກອງປະຊຸມແຫ່ງການຫັນປ່ຽນໃໝ່ວຽກງານການສຶກສາ, ວິທະຍາສາດ ແລະ ກິລາ ທີ່ແທ້ຈິງ;

2. ການປ່ຽນຊື່ເອີ້ນ ຕຳແໜ່ງບໍລິຫານຢູ່ມະຫາວິທະຍາໄລ ຈາກ ຄະນະບໍດີ ແລະ ອະທິການບໍດີ ເປັນ ຜູ້ອຳນວຍການ ແລະ ຜູ້ອຳນວຍການໃຫຍ່ ເພື່ອໃຫ້ສອດຄ່ອງກັບລະບົບການປົກຄອງ ແລະ ສ່ອງແສງໃຫ້ເຫັນເຖິງ ລັກສະນະຊາດ ແລະ ລັກສະນະຮັບໃຊ້ປະຊາຊົນ;
3. ເອົາໃຈໃສ່ປັບປຸງກົນໄກການຮ່ວມມືກັບຕ່າງປະເທດ ໃຫ້ມີລັກສະນະລວມສູນ ແລະ ກະທັດຮັດຂຶ້ນ ເພື່ອເອື້ອອຳນວຍໃຫເລ້ແກ່ການຮ່ວມມືກັບບັນດາຄູ່ຮ່ວມພັດທະນາໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ;
4. ເອົາໃຈໃສ່ວຽກງານເກັບກຳຂ່າວ, ກັ່ນກອງຂ່າວ, ສະໜອງຂ່າວໃນສື່ຂອງກະຊວງ ແລະ ສື່ຂອງພັກ-ລັດໃຫ້ທັນການ, ພ້ອມກັນນັ້ນ ກໍ່ສົມທົບກັບໜ່ວຍງານຄຸ້ມຄອງອິນເຕີແນັດແຫ່ງຊາດ ອອກແຮງສະກັດກັ້ນ ແລະ ຕອບແກ້ສື່ທີ່ບິດເບືອນຄວາມຈິງກ່ຽວກັບວຽກງານສຶກສາ, ວິທະຍາສາດ ແລະ ກິລາ ຢ່າງເດັດຂາດ;
5. ກົມແຜນການ ສົມທົບກັບກົມວິຊາການທີ່ກ່ຽວຂ້ອງ ດຳເນີນ ການຄົ້ນຄວ້າຢ່າງມີວິທະຍາສາດ ກ່ຽວກັບການປັບປຸງລະບົບການສຶກສາຈາກ 5+4+3 ເປັນ 6+3+3 ເພື່ອສຶກສາເຖິງຂໍ້ໄດ້, ຂໍ້ເສຍ, ພ້ອມທັງຜັນຂະຫຍາຍເປັນແຜນງານ, ໂຄງການກ່ຽວກັບການປັບປຸງຫຼັກສູດ, ປັບປຸງພື້ນຖານໂຄງລ່າງ ແລະ ການຝຶກອົບຮົມຄູສອນ, ແລ້ວລາຍງານຂໍທິດຊີ້ນຳຈາກລັດຖະບານ ແລະ ສະພາແຫ່ງຊາດ;
6. ສະຖາບັນພັດທະນາການບໍລິຫານການສຶກສາ ສົມທົບກັບພາກສ່ວນກ່ຽວຂ້ອງ ສ້າງຂີດຄວາມສາມາດ ແລະ ຍົກລະດັບໃຫ້ຜູ້ບໍລິຫານການສຶກສາ, ວິທະຍາສາດ ແລະ ກິລາ ໃນຫົວຂໍ້ຕ່າງໆເຊັ່ນ: ທິດສະດີການເມືອງ, ການບໍລິຫານ ແລະ ຄຸ້ມຄອງ, ພາວະຜູ້ນຳ, ການນຳໃຊ້ ເຕັກໂນໂລຊີ ທີ່ທັນສະໄໝ ລວມທັງ AI ເຂົ້າໃນການບໍລິຫານ ແລະ ຄຸ້ມຄອງວຽກງານທີ່ຕົນຮັບຜິດຊອບ;
7. ກົມຈັດຕັ້ງ ແລະ ພະນັກງານ ຮີບຮ້ອນປັບປຸງກົງຈັກການຈັດຕັ້ງຂອງກະຊວງ ແລະ ທ້ອງຖິ່ນ ເພື່ອໃຫ້ສອດຄ່ອງກັບກົງຈັກຂອງລັດຖະບານ, ພ້ອມທັງເອົາໃຈໃສ່ສ້າງບຸກຄະລາກອນໃຫ້ມີຄວາມຊຳນານງານສະເພາະດ້ານ ຕາມພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງແຕ່ລະຕຳແໜ່ງງານ;
8. ໃຫ້ທຸກພາກສ່ວນ ເພີ່ມທະວີການໂຄສະນາວຽກງານສຶກສາ, ວິທະຍາສາດ ແລະ ກິລາ, ການຈັດຕັ້ງປະຕິບັດກົດໝາຍການສຶກສາ (ສະບັບປັບປຸງ), ກົດໝາຍວ່າດ້ວຍສາມັນສຶກສາ ແລະ ນິຕິກຳຕ່າງໆ ໃຫ້ມີຫຼາຍຮູບແບບ ໃຫ້ທົ່ວເຖິງທຸກກຸ່ມເປົ້າໝາຍ ລວມທັງການປັບປຸງ ແລະ ນຳໃຊ້ເວັບໄຊ້ຂອງກະຊວງສຶກສາທິການ ແລະ ກິລາ;
9. ຮີບຮ້ອນຈັດຕັ້ງປະຕິບັດສະຫຼຸບຖອດຖອນບົດຮຽນການປະຕິຮູບການສຶກສາໄລຍະຜ່ານມາ ເພື່ອຮ່າງມະຕິຂອງພັກ ກ່ຽວກັບການພັດທະນາຊັບພະຍາກອນມະນຸດ ເພື່ອເປັນບ່ອນອີງອັນສຳຄັນໃຫ້ແກ່ການພັດທະນາຍຸດທະສາດການສຶກສາ, ຍຸດທະສາດດ້ານການຄົ້ນຄວ້າວິທະຍາສາດ ແລະ ຍຸດທະສາດການກິລາ ໃນຊຸມປີຕໍ່ໜ້າ;
10. ມອບໃຫ້ກົມຈັດຕັ້ງ ແລະ ພະນັກງານ ຈັດຕັ້ງປະຕິບັດນະໂຍບາຍການຮັບເອົາຄູອາສາສະໝັກ ໃນຮ່ອງນະໂຍບາຍຂອງກະຊວງປ້ອງກັນປະເທດ ຈຳນວນ 2,000 ໂກຕາ ເພື່ອແກ້ໄຂບັນຫາ ຄູອາສາສະໝັກທີ່ມີໃນປັດຈຸບັນຈຳນວນ 4,234 ຄົນ, ສ່ວນທີ່ຍັງເຫຼືອ ກໍໃຫ້ສືບຕໍ່ຄົ້ນຄວ້າວິທີການແກ້ໄຂທີ່ສອດຄ່ອງ ແລະ ຍືນຍົງກວ່າເກົ່າ ແນໃສ່ແກ້ໄຂຄູອາສາສະມັກ ສຳເລັດພາຍໃນປີ 2026 ນີ້;
11. ມອບໃຫ້ກົມຈັດຕັ້ງ ແລະ ພະນັກງານ ຄົ້ນຄວ້າຜັນຂະຫຍາຍ ຄຳສັ່ງວ່າດ້ວຍການທົດແທນລັດຖະກອນຄູ ສະບັບເລກທີ 24/ນຍ, ລົງວັນທີ 04 ສິງຫາ 2025 ໃຫ້ເປັນອັນລະອຽດ ໂດຍມີການສົມທົບກັບທ້ອງຖິ່ນ ແລະ ກະຊວງກ່ຽວຂ້ອງ ເພື່ອອອກນິຕິກຳ, ນະໂຍບາຍທີ່ສອດຄ່ອງ ແລະ ເໝາະສົມ. ພ້ອມກັນນັ້ນ, ກໍຕ້ອງມີການຄຸ້ມຄອງ, ຕິດຕາມ, ກວດກາ, ປະເມີນຜົນ ແລະ ບຳລຸງຄູຢ່າງເປັນລະບົບ ເພື່ອສ້າງໃຫ້ຄູສອນ ແລະ

ພະນັກງານໃນຂົງເຂດສຶກສາມີຄຸນນະພາບ, ຮັບປະກັນທາງດ້ານຄຸນທາດການເມືອງ, ມີຈັນຍາບັນທີ່ດີ ແລະ ເປັນແບບຢ່າງໃຫ້ແກ່ນັກຮຽນ ແລະ ສັງຄົມ;

## V. ມາດຕະການຈັດຕັ້ງປະຕິບັດ

1. ມອບໃຫ້ຫ້ອງການ, ກົມ, ສະຖາບັນ, ສູນ ຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ ແລະ ສະຖານການສຶກສາໃນທຸກຂັ້ນ ຈົ່ງພ້ອມກັນ ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມຜູ້ບໍລິຫານການສຶກສາ ທົ່ວປະເທດ ປະຈຳສົກຮຽນ 2024-2025 ນີ້ ໃຫ້ເປັນແຜນປະຕິບັດງານອັນລະອຽດ ແລະ ຈັດຕັ້ງປະຕິບັດໄປຕາມແຜນໃຫ້ໄດ້ຮັບຜົນດີ;
2. ມອບໃຫ້ ກົມກວດກາ ສົມທົບກັບຄະນະເຄືອຂ່າຍຕິດຕາມ ແລະ ປະເມີນຜົນ ໃນແຕ່ລະຂັ້ນ ເປັນຜູ້ຮັບຜິດຊອບການຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດແຜນປະຕິບັດງານປະຈຳປີ ພ້ອມທັງຕິດຕາມຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ບໍລິຫານການສຶກສາ ປະຈຳສົກຮຽນ 2024-2025 ແລະ ລາຍງານໃຫ້ແກ່ການນຳກະຊວງສຶກສາທິການ ແລະ ກິລາ ທຸກໆ 6 ເດືອນ.

ລັດຖະມົນຕີ

ທອງສະລິດ ມັງໜໍ່ເມກ

**ບ່ອນສົ່ງ:**

| | |
|---|---|
| - ເລຂາທິການສະພາແຫ່ງຊາດ | 01 ສະບັບ. |
| - ຫ້ອງວ່າການສູນກາງພັກ | 01 ສະບັບ. |
| - ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ | 01 ສະບັບ. |
| - ລັດຖະມົນຕີ, ຮອງລັດຖະມົນຕີ ສສກ ທ່ານລະ | 01 ສະບັບ. |
| - ບັນດາມະຫາວິທະຍາໄລ, ວິທະຍາໄລ ພາກສ່ວນລະ | 01 ສະບັບ. |
| - ບັນດາກົມ, ທຽບເທົ່າກົມ ພາຍໃນກະຊວງ ສສກ ພາກສ່ວນລະ | 01 ສະບັບ. |
| - ບັນດາພະແນກສຶກສາທິການ ແລະກິລາ ແຂວງ ພາກສ່ວນລະ | 01 ສະບັບ. |
| - ເກັບສຳເນົາ | 01 ສະບັບ. |

**ເອກະສານຊ້ອນທ້າຍ - ການຈັດຕັ້ງປະຕິບັດຄາດໝາຍ ປະຈຳສົກຮຽນ 2024-2025**

➢ **ຄາດໝາຍທີ່ສາມາດບັນລຸໄດ້**

1) ອັດຕາເຂົ້າຮຽນຂອງເດັກ 5 ປີ ເພີ່ມຈາກ 83.8% ເປັນ 84.7% (ຄາດໝາຍແມ່ນ 83%);
2) ອັດຕານັກຮຽນເຂົ້າໃໝ່ ປ. 1 ທຽບໃສ່ເດັກ 6 ປີ (ອັດຕາເຂົ້າຮຽນໃໝ່ສຸດທິ) ເພີ່ມຈາກ 99.1% ເປັນ 99.3% (ຄາດໝາຍ 98%);
3) ອັດຕາປະລະ ຂັ້ນ ປ. 1 ຫຼຸດລົງຈາກ 6% ເປັນ 5.9% (ຄາດໝາຍ 6%);
4) ອັດຕາເລື່ອນຊັ້ນ ປ. 5 ຂຶ້ນ ມ. 1 ເພີ່ມຈາກ 84.9% ເປັນ 85.6% (ຄາດໝາຍ 85%);
5) ດັດສະນີຄວາມສະເໝີພາບຍິງ-ຊາຍ ອັດຕາເລື່ອນຊັ້ນ ປ. 5 ຂຶ້ນ ມ. 1 ບັນລຸ 0.99 (ຄາດໝາຍ ລະຫວ່າງ 0.97-1.03);
6) ອັດຕາປະລະ ຊັ້ນມັດທະຍົມຕອນຕົ້ນ ປະຕິບັດໄດ້ເທົ່າເດີມ 12.4% (ຄາດໝາຍ 13%);
7) ປະຊາກອນໜຸ່ມ ແລະ ຜູ້ປະລະການຮຽນ ທີ່ໄດ້ບຳລຸງຜ່ານການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບ ຈຳນວນ 30,093 ຄົນ (ຄາດໝາຍ 25,000 ຄົນ);
8) ຄູຊັ້ນປະຖົມ ແລະ ມັດທະຍົມສຶກສາ ໃຫ້ໄດ້ຮັບການຝຶກອົບຮົມ ສະເລ່ຍບັນລຸໄດ້ 22.67% ຂອງຈຳນວນຄູສອນທັງໝົດ (ຄາດໝາຍບໍ່ໃຫ້ຫຼຸດ 10%);
9) ນັກຮຽນທີ່ຈົບຊັ້ນມັດທະຍົມຕອນຕົ້ນ ໄດ້ເຂົ້າຮຽນຕໍ່ໃນສາຍ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ ບັນລຸໄດ້ 5.7% (ຄາດໝາຍ 3%);
10) ນັກສຶກສາທີ່ສະໝັກເຂົ້າຮຽນ ຢູ່ສະຖາບັນການສຶກສາຊັ້ນສູງ ໄດ້ເຂົ້າຮຽນໃນສາຍວິທະຍາສາດທຳມະຊາດ, ເຕັກໂນໂລຊີ, ວິສະວະກຳ ແລະ ຄະນິດສາດ ຈຳນວນ 3,147 ຄົນ (ຄາດໝາຍ 2,500 ຄົນ);
11) ໄດ້ຊຸກຍູ້ ແລະ ສົ່ງເສີມການຄົ້ນຄວ້າວິທະຍາສາດ ຈຳນວນ 41 ຫົວຂໍ້;
12) ມອບຊິບທຸກເພດທຸກໄວ ເຂົ້າຮ່ວມການທັດກາຍຍະບໍລິຫານ, ການອອກກຳລັງກາຍ ແລະ ການຫຼິ້ນກິລາກາຍຍະກຳ ປະຕິບັດໄດ້ 50%.

➢ **ຄາດໝາຍທີ່ສາມາດບັນລຸໄດ້**

1) ອັດຕາເຂົ້າຮຽນໃໝ່ລວມ ປ.5 ໄດ້ 95.5% ຊຶ່ງຫຼຸດຄາດໝາຍ 1.5% (ຄາດໝາຍ 97%);
2) ອັດຕາປະລະການຮຽນຂອງນັກຮຽນຊັ້ນປະຖົມແມ່ນ 4.6% ເກີນຄາດໝາຍ 2.6% (ຄາດໝາຍ 2%);
3) ອັດຕາຈົບຊັ້ນປະຖົມສຶກສາບັນລຸພຽງແຕ່ 93.3% ຊຶ່ງຫຼຸດຄາດໝາຍ 0.7% (ຄາດໝາຍ 94%);
4) ອັດຕາເຂົ້າຮຽນໃໝ່ລວມຂັ້ນ ມ.4 ບັນລຸພຽງແຕ່ 61.4% ຊຶ່ງຫຼຸດຄາດໝາຍ 2.6% (ຄາດໝາຍ 64%).